


# ແຜນການວິເຄາະ ແລະ ການດຳເນີນວຽກງານ ບົດບາດຍິງ-ຊາຍ

## ສຳລັບ ລັດຖະບານ ແລະ ແຜນງານເກັບກູ້ລະເບີດ ບໍ່ທັນແຕກຂອງ ອົງການ ສປຊ ເພື່ອການ ພັດທະນາ ປະຈຳ ສປປ ລາວ

KOICA
Korea International
Cooperation Agncy

ອົງການ ສະຫະປະຊາຊາດ ເພື່ອການພັດທະນາ (UNDP)ແມ່ນອົງການທີ່ນຳໜ້າດ້ານການຕໍ່ສູ້ ເພື່ອຢຸດຕິຄວາມທຸກຍາກ, ຄວາມບໍ່ສະເໝີພາບ,ແລະ ການປ່ຽນແປງຂອງດິນຟ້າອາກາດ. ໂດຍການເຮັດວຽກຮ່ວມກັບເຄືອຂ່າຍຜູ້ຊ່ຽວຊານ ແລະ ຄູ່ຮ່ວມງານທີ່ກວ້າງຂວາງຂອງພວກເຮົາໃນ 170 ປະເທດ, ພວກເຮົາຊ່ວຍປະເທດຕ່າງໆໃນການສ້າງວິທີແກ້ໄຂແບບປະສົມປະສານ, ຢ່າງມີຄວາມຍືນຍົງສໍາລັບປະຊາຊົນ ແລະ ໂລກຂອງພວກເຮົາ.

**ສຶກສາເພີ່ມເຕີມໄດ້ທີ່ undp.org ຫຼື ຕິດຕາມ @UNDP.**



**ຜູ້ຂຽນບົດລາຍງານ**
ດຣ ຊູເຊັດ ມິດເຊລ
ນາງ ນ້ອຍມະນີພອນ ລໍເບຍຢາວ

**ອົງການ ສປຊ ເພື່ອການພັດທະນາ**
ມາຕິນ ເທເລີ
ແຄທລີນ ເຟືອງ
ມິນຢອງ ຄິມ
ສົມພິດ ບໍລະແສງ
ຈີຊັນ ພາກ
ແຄທຣິນ ໂອບຣຽນ
ເພັດສະໝອນ ສຸດທະລັກ
ຣູເພີດ ເລຕັນ
ສຸກພະຣິນຍາ ດວງມາລາ
ອາດີ ນຸກຣາຣາ
ອັກສອນທິບ ສົມວໍລະຈິດ
ຊໍຣາບ ທະພາ

**ກະຊວງແຮງງານ ແລະ ສະຫວັດດີການສັງຄົມ**
ມະນີວັນ ກິດຕິລາດ

**ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ**
ຈອມແຍງ ແພງທອງສະຫວັດ
ດວງສີ ທຳມະວົງ
ຄຳມຸງຄູນ ສຸດທິວົງ
ເມກຂະຫລາ ສີຫາລາດ
ບົວຄຳ ທຳມະວົງ
ຄະນະກຳມະການຄຸ້ມຄອງເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກຂັ້ນແຂວງ ແລະ ເມືອງ

**ໂຄງການເກັບກູ້ລະເບີດແຫ່ງຊາດ**
ອານຸສັກ ພົງສາ

ເສົາມະນີ ມະນີວົງ
ມະໄລວັນ ພັນທະວົງສາ
ໂອລີລັກ ສົມວິໄລ
ໂຄງການເກັບກູ້ລະເບີດຂັ້ນແຂວງ

**ສະພັນແມ່ຍິງລາວ**
ດຣ ນິນປະເສີດ ໄຊຍະພອນສີ
ວັດຊະນະ ຫລວງອາໄພ
ບຸນທັນ ຊົວເຊດ?

**ຮູບໜ້າປົກ**
ອົງການ ສປຊ ເພື່ອການພັດທະນາ/ຊູເຊັດ ມິດເຊລ

**ດ້ວຍການສະໜັບສະໜຸນຈາກຄູ່ຮ່ວມງານຂອງພວກເຮົາ**

**ດ້ວຍການປະກອບສ່ວນຈາກຜູ້ໃຫ້ທຶນຂອງພວກເຮົາ**



© UNDP / Pongpat Sensouphone

## ຂໍຂອບໃຈ

ການຄົ້ນຄວ້ານີ້ຈະບໍ່ສາມາດເກີດຂຶ້ນໄດ້ ຖ້າປາສະຈາກການເສຍສະຫຼະເວລາຂອງຜູ້ເຂົ້າຮ່ວມສໍາພາດໃນບ້ານທອງແສງ ແລະ ບ້ານໂພນສະອາດ, ເມືອງຄໍາເກີດ, ແຂວງບໍລິຄໍາໄຊ, ແລະ ບ້ານປຸ່ງໝັ້ນ ແລະ ບ້ານປົວ, ເມືອງພູກູດ, ແຂວງຊຽງຂວາງ. ພວກເຮົາຂໍຂອບໃຈຄວາມກາລຸນາຂອງພວກເຂົາໃນການຕອບຄໍາຖາມ ແລະ ໂອ້ລົມກັບພວກເຮົາກ່ຽວກັບຊີວິດ ແລະ ປະສົບການຂອງພວກເຂົາໃນການດໍາລົງຊີວິດພາຍໃຕ້ຄວາມສ່ຽງຈາກ ລບຕ.

ພວກເຮົາຂໍສະແດງຄວາມຂອບໃຈມາຍັງ ອົງການ ສປຊ ເພື່ອການພັດທະນາ (UNDP); ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງຢູ່ ສປປ ລາວ (NRA), ໂດຍສະເພາະທ່ານ ຈອມແຍງ ແພງທອງສະຫວັດ ແລະ ບັນດາຫ້ອງການຂັ້ນແຂວງ ແລະ ຂັ້ນເມືອງ; ທີມເກັບກູ້ ລບຕເພື່ອມະນຸດຊະທໍາ ປະຈໍາ ກອງທັບປະຊາຊົນລາວ (ກອງຮ້ອຍ 58) ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ (UXO Lao) ສໍາລັບການສະໜັບສະໜູນຕໍ່ການຄົ້ນຄວ້າຄັ້ງນີ້ ແລະ ການຊ່ວຍເຫຼືອອໍານວຍຄວາມສະດວກໃນພາກສະໜາມ. ພວກເຮົາຍັງຢາກສະແດງຄວາມຂອບໃຈໄປຍັງຕົວແທນຂອງບັນດາອົງການຈັດຕັ້ງ ທີ່ໄດ້ພົບປະກັນໃນ ນະຄອນຫຼວງວຽງຈັນ ສໍາລັບຄວາມຮ່ວມມື ແລະ ການຊ່ວຍເຫຼືອຂອງພວກເຂົາ.

ຜູ້ຂຽນຢາກຂໍສະແດງຄວາມຂອບໃຈມາຍັງ ຂະແໜງ ລບຕ, ລວມທັງບັນດາຕົວແທນຈາກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຄະນະກໍາມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ(NRA), ອົງການ ສປຊ ເພື່ອການພັດທະນາ(UNDP) ແລະ ສູນກາງສະຫະພັນແມ່ຍິງລາວ (LWU), ໂດຍສະເພາະ ທ່ານ ດຣ ນ. ນິນປະເສີດ ໄຊຍະພອນສີ. ພວກເຂົາໄດ້ຊ່ວຍໃຫ້ຂໍ້ມູນອັນເລິກເຊິ່ງເຂົ້າໃນບົດລາຍງານເບື້ອງຕົ້ນ, ຂັ້ນຕອນການວາງແຜນປະຕິບັດງານພາກສະໜາມ ແລະ ບົດລາຍງານຂັ້ນສຸດທ້າຍ. ນອກນັ້ນ, ພວກເຮົາຍັງໄດ້ຮັບການສະໜັບສະໜຸນ ແລະ ທິດຊີ້ນໍາອັນກວ້າງຂວາງຈາກ ພະແນກເກັບກູ້ ລບຕ ປະຈໍາ ອົງການ ສປຊ ເພື່ອການພັດທະນາ (UNDP), ໂດຍສະເພາະ, ທ່ານ ນາງ Minyoung Kim, ທ່ານ ນາງ Jisun Park ແລະ ທ່ານ ນາງ ສົມພິດ ນໍລະແສງ.

ສຸດທ້າຍ, ພວກເຮົາຂໍສະແດງຄວາມຂອບໃຈເປັນພິເສດມາຍັງພະນັກງານພາກລັດ ທີ່ໄດ້ເຂົ້າຮ່ວມກັບທີມປະຕິບັດງານພາກສະໜາມໃນ ແຂວງຊຽງຂວາງ ແລະ ບໍລິຄໍາໄຊ - ທ່ານ ນາງ ບົວຄໍາ ທໍາມະວົງ ຈາກ NRA, ທ່ານ ນາງ ມະນີວັນ ກິດຕິລາດ ຈາກ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ແລະ ທ່ານ ວາດສະໜາ ຫຼວງອາໄພ ແລະ ທ່ານ ບຸນທັນ ສົວແສ ຈາກ LWU.



© UNDP / Pongpat Sensouphone

# ບົດຄັດຫຍໍ້

ການຄົ້ນຄວ້າຄັ້ງນີ້ແມ່ນການປະເມີນບົດບາດຍິງ-ຊາຍ ແລະ ວຽກງານ ລບຕ ຄັ້ງທີ 4 ທີ່ຖືກດຳເນີນການໃນ ສປປ ລາວ. ເມື່ອສົມທຽບກັບການປະເມີນຜົນຄັ້ງທີ່ຜ່ານໆມາ, ການຄົ້ນຄວ້າຄັ້ງນີ້ແນໃສ່ຊີ້ໃຫ້ເຫັນເຖິງຄວາມກ່ຽວພັນກັນໃນຫຼາຍຂົງເຂດ: ໂດຍສະເພາະ, ຄວາມກ່ຽວພັນກັນລະຫວ່າງຄວາມທຸກຍາກ, ຊົນເຜົ່າ ແລະ ຄວາມພິການ. ລັກສະນະອັນສະເພາະທີ່ກ່າວມາແຕ່ລະອັນນີ້ ໄດ້ເຮັດໃຫ້ປະຊາຊົນມີຄວາມສ່ຽງສູງຂຶ້ນ ທີ່ຈະຕ້ອງພົບພໍ້ກັບອຸບັດເຫດຈາກ ລບຕ, ບໍ່ໄດ້ຮັບຂໍ້ມູນທີ່ຈຳເປັນ, ບໍ່ມີສິດມີສຽງໃນກອງປະຊຸມປຶກສາຫາລື ແລະ ບໍ່ສາມາດເຂົ້າເຖິງວຽກງານເກັບກູ້ລະເບີດ ເພື່ອເກັບກູ້ເນື້ອທີ່ດິນປູກຝັງຂອງຕົນ, ທີ່ເປັນແຫຼ່ງສະໜອງອາຫານໃຫ້ແກ່ພວກເຂົາເອງ. ສິ່ງນີ້ອາດພາໃຫ້ພວກເຂົາໄດ້ຮັບການພັດທະນາທີ່ຊັກຊ້າຫຼ້າຫຼັງກວ່າກຸ່ມອື່ນໆ. ນອກນັ້ນຍັງຈະເຮັດໃຫ້ຂະແໜງການເກັບກູ້ ລບຕ ຂາດປະສິດທິພາບໃນການດຳເນີນວຽກງານຂອງພວກເຂົານຳອີກ ຍ້ອນຂາດຂໍ້ມູນອັນສະເພາະ ແລະ ຫຼາກຫຼາຍໃນທ້ອງຖິ່ນທີ່ສຳຄັນ ແລະ ຈຳເປັນ.

ການຄົ້ນຄວ້າຄັ້ງນີ້ໄດ້ນຳໃຊ້ແນວທາງອັນຫຼາກຫຼາຍ ເຂົ້າໃນການຄົ້ນຫາຂໍ້ມູນຂ່າວສານຈາກປະຊາຊົນໃນຂັ້ນບ້ານ. ກິດຈະກຳສົ່ງເສີມການມີສ່ວນຮ່ວມຕ່າງໆເອງ ກໍ່ບໍ່ຈຳເປັນຕ້ອງອາໄສຄວາມຮູ້ໜັງສື, ແລະ ຍັງມີການນຳໃຊ້ພາສາມົ້ງເຂົ້າໃນການສົນທະນາກັນນຳອີກ. ໄດ້ມີການເກັບກຳຂໍ້ມູນຈາກກຸ່ມຕ່າງໆທີ່ຫຼາກຫຼາຍທັງຍິງ ແລະ ຊາຍໃນສອງບ້ານຂອງ ແຂວງຊຽງຂວາງ ແລະ ສອງບ້ານຂອງ ແຂວງບໍລິຄຳໄຊ ເພື່ອຊ່ວຍໃຫ້ເຂົ້າໃຈເຖິງການດຳລົງຊີວິດປະຈຳວັນຂອງພວກເຂົາ. ນອກນັ້ນຍັງລວມມີການບັນທຶກຈຳນວນເວລາທີ່ບັນດາລູກບ້ານນຳໃຊ້ ເຂົ້າໃນການດຳເນີນວຽກການຕ່າງໆໃນແຕ່ລະວັນ ແລະ ການກຳນົດແຜນທີ່ທີ່ຍັງມີ ລບຕ ຕົກຄ້າງຢູ່ ແລະ ທີ່ໄດ້ຮັບການເກັບກູ້ແລ້ວພາຍໃນກຸ່ມບ້ານດັ່ງກ່າວ. ກຸ່ມລູກບ້ານເຫຼົ່ານີ້ປະກອບມີປະຊາຊົນທີ່ມາຈາກຊົນເຜົ່າຕ່າງໆ, ທີ່ມີລາຍຮັບ, ອາຍຸ ແລະ ລະດັບການສຶກສາທີ່ແຕກຕ່າງກັນ ລວມທັງກຸ່ມຜູ້ຊາຍທີ່ພິການຈາກອຸບັດເຫດ ລບຕ (ບໍ່ພົບແມ່ຍິງທີ່ພິການຈາກອຸບັດເຫດ ລບຕ ໃນກຸ່ມບ້ານດັ່ງກ່າວ). ນອກນັ້ນຍັງໄດ້ດຳເນີນການສຳພາດຄົວເຮືອນ, ລວມທັງປະຊາຊົນຈາກສີ່ຊົນເຜົ່າ, ເພື່ອນຳໃຊ້ໄວ້ເປັນຂໍ້ມູນເສີມ, ໂດຍໃນນັ້ນປະກອບມີຜູ້ຊາຍສາມຄົນທີ່ແຕ່ງດອງແລ້ວ ແລະ ພິການຈາກອຸບັດເຫດ ລບຕ, ແລະ ແມ່ໝ້າຍຜູ້ໜຶ່ງທີ່ຜົວຂອງລາວເສຍຊີວິດຈາກ ລບຕ.

ຂໍ້ມູນພາກສະໜາມນີ້ແມ່ນໄດ້ຖືກນຳໄປວິເຄາະ ຮ່ວມກັບຜົນໄດ້ຮັບຈາກການສຳພາດເພື່ອນຮ່ວມງານໃນຂະແໜງການ ລບຕ ແບບເຈາະເລິກ. ພະນັກງານເຫຼົ່ານີ້ປະກອບມີພະນັກງານຈາກ NRA, ທີມເກັບກູ້ລະເບີດເພື່ອມະນຸດຊະທຳ ປະຈຳ ກອງທັບປະຊາຊົນລາວ (ກອງຮ້າຍ 58) ແລະ ໂຄງການ UXO Lao, ລວມໄປເຖິງບຸກຄະລາກອນທີ່ດຳເນີນວຽກງານຄຸ້ມຄອງ, ການສຳຫຼວດທີ່ບໍ່ແມ່ນວິຊາການ, ການສຳຫຼວດທາງດ້ານວິຊາການ, ການເກັບກູ້ລະເບີດ ແລະ ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ. ນອກນັ້ນຍັງໄດ້ມີການສຳພາດຄູ່ຮ່ວມງານຈາກພາກລັດ ແລະ ສາກົນ ລວມໄປເຖິງຜູ້ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍທັງໃນລະດັບຊາດ ແລະ ລະດັບຊຸມຊົນ. ການສຳພາດເຫຼົ່ານີ້ແມ່ນຖືກດຳເນີນການໃນລັກສະນະທີ່ຄ້າຍຄືກັນກັບການປະເມີນບົດບາດຍິງ-ຊາຍ ແລະ ວຽກງານ ລບຕ ທີ່ດຳເນີນການໂດຍ ອົງການແມັກ ໃນປີ 2008, ແຜນງານ GMAP ຂອງ ສູນເກັບກູ້ລະເບີດເພື່ອມະນຸດຊະທຳສາກົນແຫ່ງເຊີແນວ (GICHD) ໃນປີ 2014, ແລະ ອົງການ ສປຊ ເພື່ອແມ່ຍິງ, LWU ແລະ NRA ໃນປີ 2018. ຍ້ອນ ສປປ ລາວ ມີຂໍ້ມູນອັນກວ້າງຂວາງທີ່ກວມເອົາໄລຍະກວ່າ 15 ປີ ໄວ້ພ້ອມສະໜອງໃຫ້, ບັນດາທີ່ປຶກສາຈຶ່ງໄດ້ລວມເອົາຊຸດຄຳຖາມທີ່ຖືກນຳໃຊ້ໃນການຄົ້ນຄວ້າທີ່ຜ່ານມາ ແລະ ເນັ້ນໜັກໃສ່ຂໍ້ແນະນຳຕ່າງໆຈາກການຄົ້ນຄວ້າເຫຼົ່ານັ້ນ ເພື່ອມາປະເມີນຄວາມຄືບໜ້າໃນຂະແໜງການໃນແຕ່ລະໄລຍະ. ຂັ້ນຕອນນີ້ແມ່ນສອດຄ່ອງກັບມາດຕະຖານຂອງ ອົງການ ສປຊ ແລະ ມາດຕະຖານສາກົນ ທັງຍັງເປັນການຕໍ່ຍອດມາຈາກຜົນໄດ້ຮັບຂອງ ຂັ້ນຕອນການທົບທວນຄືນບົດຄວາມທີ່ມີຄວາມສຳຄັນ ໃນຊ່ວງຕົ້ນຂອງການຄົ້ນຄວ້າ.

ເຖິງແມ່ນວ່າໃນສາກົນຈະມີການສ້າງຄວາມຄືບໜ້າໃນວຽກງານບົດບາດຍິງ-ຊາຍ ແລະ ລບຕ ໄດ້ຢ່າງໃຫຍ່ຫຼວງແລ້ວກໍ່ຕາມ, ບົດສະຫຼຸບຂອງການຄົ້ນຄວ້າຄັ້ງນີ້ ແມ່ນຈະສະທ້ອນໃຫ້ເຫັນເຖິງຜົນໄດ້ຮັບ ຈາກການປະເມີນຜົນທີ່ຜ່ານໆມາເທົ່ານັ້ນ. ທີ່ຜ່ານມາ, ສປປ ລາວ ສາມາດສ້າງຄວາມຄືບໜ້າ ດ້ານການລວມເອົາບັນຫາບົດບາດຍິງ-ຊາຍເຂົ້າໄວ້ໃນນະໂຍບາຍ ແລະ ການກຳນົດແຜນງານ ລບຕ ໄດ້ພຽງເລັກນ້ອຍເທົ່ານັ້ນ. ຂໍ້ແນະນຳສ່ວນໃຫຍ່ທີ່ສ້າງຂຶ້ນຜ່ານໆມາ ຍັງບໍ່ທັນໄດ້ຖືກນຳໄປຈັດຕັ້ງປະຕິບັດເທື່ອ ເຊິ່ງຍັງລ້ວນແລ້ວແຕ່ຍັງຄົງມີຄວາມສຳຄັນຢູ່. ຍ້ອນແນວນັ້ນ, ຂໍ້ແນະນຳເຫຼົ່ານັ້ນຈຶ່ງມັກຖືກອ້າງອີງເຖິງໃນທົ່ວທັງບົດລາຍງານສະບັບນີ້, ໂດຍໄດ້ຖືກປັບປຸງໃຫ້ກາຍມາເປັນຊຸດຂໍ້ແນະນຳ 25 ຂໍ້ ແລະ ຖືກສັງລວມອອກມາເປັນສີ່ຂົງເຂດຕົ້ນຕໍທີ່ຈຳເປັນໃນການສ້າງ ແຜນການດຳເນີນງານດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ. ແຜນການນີ້ ແລະ ຂອບວຽກດ້ານການຕິດຕາມກວດກາ ແລະ ການປະເມີນຜົນທີ່ກ່ຽວຂ້ອງ ແມ່ນຈະກວມເອົາໄລຍະເວລາສີ່ປີນັບຕັ້ງແຕ່ປີ 2023 ຫາປີ 2026 ເພື່ອໃຫ້ສອດຄ່ອງກັບແຜນງານຂອງ ອົງການ UNDP, ທີ່ແນໃສ່ຍົກສູງປະສິດທິພາບ ແລະ ປະສິດທິຜົນໃຫ້ແກ່ຂະແໜງການ ລບຕ ເພື່ອປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ 18 ແລະ ເສັ້ນທາງກ້າວສູ່ຄວາມປອດໄພ III (SPF III). ແຜນງານດັ່ງກ່າວຊ່ວຍສະໜັບສະໜູນເງິນທຶນເຂົ້າໃນການເຮັດບົດລາຍງານສະບັບນີ້, ທີ່ຖືກອອກແບບມາເພື່ອ

ແນະນຳວຽກງານຕ່າງໆທີ່ຕ້ອງເຮັດໂດຍອີງໃສ່ຜົນໄດ້ຮັບຕົ້ນຕໍ.

ຫ້າຂອບເຂດລຸ່ມນີ້ແມ່ນໄດ້ຖືກນຳໃຊ້ເພື່ອວິເຄາະຜົນໄດ້ຮັບ:

- ສິດທິ ແລະ ສະຖານະທາງກົດໝາຍຂອງແມ່ຍິງ, ກຸ່ມຊົນເຜົ່າ ແລະ ຜູ້ພິການ
- ຂອບເຂດຂອງຫຼັກປະຕິບັດແບບກວມລວມ, ການມີສ່ວນຮ່ວມ, ອຳນາດ ແລະ ການຕັດສິນໃຈສຳລັບກຸ່ມເຫຼົ່ານີ້ ພາຍໃຕ້ສະພາບການໂດຍລວມຂອງ ສປປ ລາວ ແລະ ພາຍໃຕ້ສະພາບການຂອງການກຳນົດແຜນງານ ລບຕ ໂດຍສະເພາະ
- ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ, ຂໍ້ມູນຂ່າວສານ ແລະ ບໍລິການສຳລັບກຸ່ມເຫຼົ່ານີ້
- ເວລາທີ່ມີ ແລະ ຈັດສັນໄດ້
- ລະດັບຄວາມຮູ້, ຄວາມເຊື່ອ ແລະ ຄວາມເຂົ້າໃຈໃນຊຸມຊົນໂດຍທົ່ວໄປ ທີ່ສອດຄ່ອງກັບບັນຖັດຖານຂອງສັງຄົມ

ແຕ່ລະຂອບເຂດເຫຼົ່ານີ້ຊ່ວຍອະທິບາຍສາເຫດຕົ້ນຕໍ ທີ່ພາໃຫ້ເກີດຄວາມບໍ່ສະເໝີພາບສຳລັບແມ່ຍິງ, ກຸ່ມຊົນເຜົ່າຕ່າງໆ ແລະ ຜູ້ພິການ, ໂດຍສະເພາະຜູ້ທີ່ມີຄວາມທຸກຍາກ ແລະ ອາໄສຢູ່ເຂດຊົນນະບົດທີ່ຫ່າງໄກສອກຫຼີກ, ແລະ ຈາກລະດັບຊາດໄປຈົນເຖິງຂັ້ນບ້ານ. ບົດລາຍງານສະບັບນີ້ຈະຊີ້ໃຫ້ເຫັນວ່າ ຄວາມບໍ່ສະເໝີພາບດັ່ງກ່າວສົ່ງຜົນກະທົບແນວໃດ ຕໍ່ການມີສ່ວນຮ່ວມຂອງກຸ່ມຄົນເຫຼົ່ານີ້ ພາຍໃຕ້ສະພາບການທີ່ກ່ຽວຂ້ອງກັບ ລບຕ ລວມໄປເຖິງຂັ້ນຕອນການກຳນົດແຜນງານ ທີ່ຖືກສ້າງຂຶ້ນເພື່ອແກ້ໄຂບັນຫາດັ່ງກ່າວ.

ການຄົ້ນຄວ້າຄັ້ງນີ້ຍັງຄົ້ນພົບຈຸດອ່ອນໃນຂົງເຂດຕົ້ນຕໍທັງສີ່ທີ່ບັນດາໜ່ວຍງານຈັດຕັ້ງປະຕິບັດແຜນງານຂອງ ອົງການ UNDP ແລະ ຂະແໜງການ ລບຕ ໂດຍລວມຕ້ອງໄດ້ແກ້ໄຂ. ຈຸດອ່ອນດັ່ງກ່າວປະກອບມີການຂາດກົນໄກການປະສານງານ ແລະ ຍຸດທະສາດອັນຊັດເຈນໃນການແກ້ໄຂຊ່ອງຫວ່າງນີ້; ຂາດຄວາມຮູ້ ແລະ ຂີດຄວາມສາມາດດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ ຍ້ອນພວກມັນມີຄວາມກ່ຽວພັນກັບກັບຂັ້ນຕອນຕ່າງໆຂອງວຽກງານ ລບຕ; ຂາດແນວທາງອັນຕໍ່ເນື່ອງ ແລະ ທີ່ຖືກອອກແບບມາສະເພາະເພື່ອແກ້ໄຂບັນຫາເຫຼົ່ານີ້ ໃນນະໂຍບາຍ ແລະ ຂັ້ນຕອນການກຳນົດແຜນງານຂອງຂະແໜງການ ລບຕ; ແລະ ບັນຫາທີ່ສ້າງຂໍ້ຫຍຸ້ງຍາກໃຫ້ພະນັກງານຍິງ ໃນເວລາດຳເນີນວຽກງານພາກສະໜາມ ລວມໄປເຖິງບັນຫາທີ່ກ່ຽວຂ້ອງກັບອັດຕາສ່ວນຂອງແຮງງານຍິງ ແລະ ຄວາມອາວຸໂສໃນທົ່ວທັງຂະແໜງການ. ບັນຫາໂດຍລວມທີ່ກ່ຽວຂ້ອງກັບການຈ້າງງານ ລວມມີການຂາດຄວາມຫຼາກຫຼາຍດ້ານອັດຕາສ່ວນການຈ້າງງານ, ຍົກຕົວຢ່າງ: ກຸ່ມຊົນເຜົ່າທີ່ຫຼາກຫຼາຍ ແລະ ຄົນພິການ, ໂດຍສະເພາະທີ່ເປັນຜູ້ລອດຊີວິດຈາກອຸບັດເຫດ ລບຕ ນັ້ນ, ແມ່ນກວມອັດຕາສ່ວນແຮງງານຕ່ຳໃນຂະແໜງການ.

ແຜນການດຳເນີນງານດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ ແມ່ນຈະຖືກນຳສະເໜີໃນຊ່ວງທ້າຍຂອງບົດລາຍງານ ເພື່ອຊ່ວຍໃຫ້ເຫັນພາບລວມອັນຊັດເຈນ ກ່ຽວກັບທິດທາງການເຄື່ອນໄຫວວຽກຕໍ່ໜ້າຂອງ ລັດຖະບານ ສປປ ລາວ ແລະ ອົງການ UNDP, ລວມໄປເຖິງທິດຊີ້ນຳກ່ຽວກັບວິທີແກ້ໄຂບັນຫາດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍໃນທົ່ວທັງຂະແໜງການ ລບຕ ໃນໄລຍະສີ່ປີຕໍ່ໜ້ານີ້. ສິ່ງນີ້ຈະຊ່ວຍໃຫ້ສາມາດບັນລຸໄດ້ບຸລິມະສິດຍຸດທະສາດຂອງລັດຖະບານ ແລະ ແຜນງານຂອງ ອົງການ UNDP:

> ພາຍໃນປີ 2026, ປະຊາຊົນ, ໂດຍສະເພາະຜູ້ທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດກວ່າໝູ່ນັ້ນ, ຈະໄດ້ຮັບປະໂຫຍດຈາກໂອກາດດ້ານເສດຖະກິດ-ສັງຄົມ ແລະ ດ້ານປະຊາກອນທີ່ມີຄວາມກວມລວມ, ທົນທານ, ສົ່ງເສີມການປ່ຽນແປງ, ແລະ ຍືນຍົງເພື່ອຊ່ວຍຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບໃຫ້ແກ່ພວກເຂົາ.



© UNDP / Mailee Osten-Tan

# ສາລະບານ



© UNDP / Pongpat Sensouphone





© Sasha Popovic



© UNDP / Mailee Osten-Tan



© Sasha Popovic

## 1 ພາກແນະນຳ


1.1 ຄວາມເປັນມາ 18
1.2 ເປົ້າໝາຍ ແລະ ຂອບເຂດຂອງການຄົ້ນຄວ້າ 18
1.3 ຂໍ້ຈຳກັດ 18
1.4 ໂຄງຮ່າງບົດລາຍງານ 19
1.5 ວິທີການ 20


## 2 ສັງລວມບັນດາມາດຕະຖານ ແລະ ຂໍ້ຊີ້ນຳສາກົນຕົ້ນຕໍຈາກການທົບທວນຄືນບົດຄວາມ


2.1 ພັນທະສັນຍາ ແລະ ຂໍ້ຊີ້ນຳຂອງ ອົງການ ສປຊ ກ່ຽວກັບບົດບາດຍິງ-ຊາຍໃນຂະແໜງການ ລບຕ 24
2.2 ສູນເກັບກູ້ລະເບີດເພື່ອມະນຸດຊະທຳ, ບົດບາດຍິງ-ຊາຍ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກສາກົນແຫ່ງເຊີແນວ, ແລະ ກຸ່ມວິຊາການດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ 27


## 3 ນະໂຍບາຍຂອງ ສປປ ລາວ ວ່າດ້ວຍ ລບຕ ແລະ ການປະເມີນຜົນແຫ່ງຊາດດ້ານບົດບາດຍິງ-ຊາຍ


3.1 ນະໂຍບາຍແຫ່ງຊາດ ແລະ ເອກະສານຊີ້ນຳ 31
3.2ການສະໜັບສະໜຸນດ້ານບົດບາດຍິງ-ຊາຍທີ່ຜ່ານມາໃຫ້ແກ່ NRA 33
3.3 ການປະເມີນຜົນດ້ານບົດບາດຍິງ-ຊາຍ ແລະ ການປະເມີນຜົນທີ່ອີງໃສ່ປະຕິບັດການເກັບກູ້ ລບຕ ເພີ່ມເຕີມສຳລັບ ສປປ ລາວ 34


## 4 ໂຄງການຂອງ ອົງການ UNDP ເພື່ອຍົກສູງປະສິດທິພາບ ແລະ ປະສິດທິຜົນໃນຂະແໜງການ ລບຕ


4.1ຄວາມເປັນມາຂອງໂຄງການ 38
4.2 ແຜນງານຂອງ ອົງການ UNDP ໃນປັດຈຸບັນ 41



© UNDP / Mailee Osten-Tan



© Sasha Popovic



© UNDP / Mailee Osten-Tan

## 5

## ໂຄງຮ່າງ ແລະ ຜົນໄດ້ຮັບຈາກປະຕິບັດການພາກສະໜາມ


5.1 ການເກັບກຳຂໍ້ມູນຈາກຄູ່ຮ່ວມງານ 46
5.2 ຄູ່ຮ່ວມງານໃນ ນະຄອນຫຼວງວຽງຈັນ 46
5.3ການພົບປະກັບຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນ ນະຄອນຫຼວງວຽງຈັນ 49
5.4 ການພົບປະກັບຜູ້ສະໜອງ ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ຈາກ ລບຕ (EORE) ໃນ ນະຄອນຫຼວງວຽງຈັນ 50
5.5 ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນ ແຂວງຊຽງຂວາງ 51
5.6 ໂຄງການ UXO Lao ໃນ ແຂວງຊຽງຂວາງ 52
5.7 ພະນັກງານຂອງໂຄງການ UXO Lao ທີ່ດຳເນີນການສຳຫຼວດແບບບໍ່ແມ່ນວິຊາການ, ການສຳຫຼວດທາງດ້ານວິຊາການ, ການເກັບກູ້ລະເບີດ ແລະ ການໂຄສະນາສຶກສາຄວາມສ່ຽງ ຈາກ ລບຕ 53
5.8 ອຳນາດການປົກຄອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ, ແລະ ຜູ້ໃຫ້ບໍລິການໃນທ້ອງຖິ່ນ 59
5.9 ມຍິງຊາຍທ້ອງຖິ່ນເພື່ອເຄື່ອນໄຫວວຽກໂຕຈິງສະເພາະ 63
5.10 ການສຳພາດຄົວເຮືອນ 67


## 6

## ຜົນໄດ້ຮັບທີ່ສອດຄ່ອງກັບສະພາບເສດຖະກິດ-ສັງຄົມຂອງ ສປປ ລາວ, ແລະ ຂອບວຽກການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານ ລບຕ


6.1 ສິດທິ ແລະ ສະຖານະທາງກົດໝາຍ 72
6.2 ຫຼັກປະຕິບັດ, ການມີສ່ວນຮ່ວມ, ອຳນາດ ແລະ ການຕັດສິນໃຈ 76
6.3 ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນຕ່າງໆ 80
6.4 ເວລາ ແລະ ພື້ນທີ່ 84
6.5 ຄວາມຮູ້, ຄວາມເຊື່ອ ແລະ ຄວາມເຂົ້າໃຈ, ແລະ ບັນຖັດຖານ ແລະ ການເໝົາລວມໃນສັງຄົມ 88


## 7


## ຂໍ້ແນະນຳ 95




© UNDP / Mailee Osten-Tan



© Sasha Popovic



© UNDP / Mailee Osten-Tan

## 8

## ແຜນດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ 2023-2026


8.1 ນະໂຍບາຍ ແລະ ກົນໄກການປະສານງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານ ລບຕ 98
8.2 ການສ້າງຂີດຄວາມສາມາດ 100
8.3 ນະໂຍບາຍ ແລະ ການກຳນົດແຜນງານຂອງຂະແໜງານ ລບຕ 101
8.4 ນະໂຍບາຍ ແລະ ຂັ້ນຕອນດ້ານຊັບພະຍາກອນມະນຸດ 103


## 9


## ຂອບວຽກການຕິດຕາມກວດກາ ແລະ ການປະເມີນຜົນສຳລັບ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ 107


## 10

## ເອກະສານອ້າງອີງ


**ພາກເອກະສານຊ້ອນທ້າຍທີ 1:** ລາຍຊື່ຂອງບັນດາຄູ່ຮ່ວມງານທີ່ໄດ້ປຶກສາຫາລືນຳ 124
**ພາກເອກະສານຊ້ອນທ້າຍທີ 2:** ບົດບາດຍິງ-ຊາຍ ແລະ ການປະເມີນຜົນຕາມຫົວຂໍ້ຂອງຂະແໜງການ ລບຕ ໃນ ສປປ ລາວ 130
**ພາກເອກະສານຊ້ອນທ້າຍທີ 3:** ແຜນການດຳເນີນງານດ້ານບົດບາດຍິງ-ຊາຍຂອງ ສປປ ລາວ ປະຈຳປີ 2008 139
**ພາກເອກະສານຊ້ອນທ້າຍທີ 4:** ແຜນການດຳເນີນງານດ້ານບົດບາດຍິງ-ຊາຍສຳລັບ NRA, ສປປ ລາວ, ກັນຍາ 2014 (GMAP 2014) 141
**ພາກເອກະສານຊ້ອນທ້າຍທີ 5:** ຂໍ້ມູນອ້າງອີງຈາກ ມາດຕະຖານການເກັບກູ້ລະເບີດ (IMAS) ກ່ຽວກັບບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ 143
**ພາກເອກະສານຊ້ອນທ້າຍທີ 6:** ເຄື່ອງມືພາກສະໜາມ 149

**Endnotes** 167

## ຕາຕະລາງ

**ຕາຕະລາງທີ 1:** ຮູບແບບຕາຕະລາງເຄື່ອນໄຫວວຽກງານປະຈຳວັນ 64
**ຕາຕະລາງທີ 2:** ອັດຕາສ່ວນຂອງແມ່ຍິງ, ກຸ່ມຊົນເຜົ່າ ແລະ ຜູ້ພິການໃນຕຳແໜ່ງວຽກຂັ້ນນຳພາໃນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານໃນພື້ນທີ່ທີ່ທີມງານຄົ້ນຄວ້າລົງຢ້ຽມຢາມ 77
**ຕາຕະລາງທີ 3:** ພະນັກງານຈາກໜ່ວຍປະຕິບັດການເກັບກູ້ ລບຕ ໃນ ສປປ ລາວ, 2021 77
**ຕາຕະລາງທີ 4:** ການຈ້າງງານໃນອົງການທີ່ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ທີ່ທີມງານໄດ້ພົບປະໃນລະຫວ່າງດຳເນີນການລົງຢ້ຽມຢາມພາກສະໜາມ 78
**ຕາຕະລາງທີ 5:** ຂອບວຽກ Moser: ບົດບາດສາມດ້ານຂອງແມ່ຍິງ 85
**ຕາຕະລາງທີ 6:** ຕາຕະລາງປະຈຳວັນສຳລັບແມ່ຍິງໃນ ບ້ານໂພນສະອາດ, ທີ່ສະແດງໃຫ້ເຫັນເຖິງຈຳນວນຊົ່ວໂມງທີ່ຖືກນຳໃຊ້ເຂົ້າໃນວຽກງານຕ່າງໆ 86
**ຕາຕະລາງທີ 7:** ຕາຕະລາງປະຈຳວັນສຳລັບຜູ້ຊາຍໃນ ບ້ານໂພນສະອາດ, ທີ່ສະແດງໃຫ້ເຫັນເຖິງຈຳນວນຊົ່ວໂມງທີ່ຖືກນຳໃຊ້ເຂົ້າໃນວຽກງານຕ່າງໆ 86
**ຕາຕະລາງທີ 8:** ຈຳນວນຂອງຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ໃນ ສປປ ລາວ ຈາກປີ 2011 ເຖິງປີ 2020 88
**ຕາຕະລາງທີ 9:** ວຽກງານສ້າງຂີດຄວາມສາມາດໃຫ້ແກ່ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ ແລະ ຄູ່ຮ່ວມງານຂອງ ອົງການ UNDP 101
**ຕາຕະລາງທີ 10:** ແຜນການດຳເນີນງານດ້ານບົດບາດຍິງຊາຍສຳລັບ NRA ທີ່ຖືກສ້າງຂຶ້ນໂດຍ GMAP ໃນປີ 2014 104

## ຮູບພາບ

**ຮູບທີ 1:** ຍ້ອນຫຍັງບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍຈຶ່ງສຳຄັນ 22
**ຮູບທີ 2:** ຍຸດທະສາດການເກັບກູ້ລະເບີດຂອງ ອົງການ ສປຊ 2019–2023 26
**ຮູບທີ 3:** ແຜ່ນໂຄສະນາ EORE 62
**ຮູບທີ 4:** ສັນຍາລັກທີ່ນຳໃຊ້ໃນຕາຕະລາງປະຈຳວັນ 64
**ຮູບທີ 5:** ຜົນສະທ້ອນທີ່ເກີດຂຶ້ນຈາກການເຮັດວຽກຮ່ວມກັບເພື່ອນຮ່ວມງານທີ່ມາຈາກກຸ່ມຊົນເຜົ່າຕ່າງໆ 82





© UNDP / Pongpat Sensouphone

## ຄຳຫຍໍ້

| | |
|---|---|
| CEDAW | ສົນທິສັນຍາລຶບລ້າງການຈຳແນກຕໍ່ແມ່ຍິງທຸກຮູບແບບ |
| CMR | ສູນປິ່ນປົວ ແລະ ຟື້ນຟູໜ້າທີ່ການ |
| COPE | ອົງການອົງຄະທຽມ ແລະ ເຄື່ອງຄ້ຳຊູ |
| CRPD | ສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ |
| CSO | ອົງການຈັດຕັ້ງທາງສັງຄົມ |
| EORE | ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ |
| GICHD | ສູນເກັບກູ້ລະເບີດເພື່ອມະນຸດຊະທຳສາກົນແຫ່ງເຊີແນວ |
| GMAP | ແຜນງານດ້ານບົດບາດຍິງ-ຊາຍ ແລະ ການເກັບກູ້ລະເບີ⍰ |
| HI | ອົງການເພື່ອມະນຸດຊະທຳ ແລະ ການມີສ່ວນຮ່ວມ (ອະດີດ ອົງການຜູ້ພິການສາກົນ) |
| IASC | ຄະນະປະຈຳໜ່ວຍງານລະຫວ່າງປະເທດ |
| ICBL | ອົງການສາກົນເພື່ອລົນນະລົງການເກືອດຫ້າມລະເບີດຝັງດິນ |
| ILO | ອົງການແຮງງານສາກົນ |
| IMAS | ມາດຕະຖານການເກັບກູ້ລະເບີດສາກົນ |
| IMSMA | ລະບົບຄຸ້ມຄອງຂໍ້ມູນສຳລັບວຽກງານເກັບກູ້ລະເບີດ |
| KOICA | ອົງການຮ່ວມມືສາກົນແຫ່ງ ສ. ເກົາຫຼີ |
| Lao PDR | ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ |
| LDPA | ສະມາຄົມຄົນພິການແຫ່ງຊາດລາວ |
| LDWDC | ສູນພັດທະນາແມ່ຍິງຄົນພິການແຫ່ງຊາດລາວ |
| LWU | ສູນກາງສະຫະພັນແມ່ຍິງລາວ |
| LYU | ສູນກາງຊາວໜຸ່ມລາວ |
| MAG | ອົງການແມັກ |
| NGO | ອົງການຈັດຕັ້ງທີ່ບໍ່ສັງກັດລັດ |
| NMAA | ອົງການເກັບກູ້ລະເບີດແຫ່ງຊາດ |
| NPAGE | ແຜນການດຳເນີນງານແຫ່ງຊາດວ່າດ້ວຍຄວາມສະເໝີພາບຍິງ-ຊາຍ |
| NRA | ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງຢູ່ ສປປ ລາວ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| PDDA | ສະມາຄົມຟື້ນຟູຄົນພິການ |
| QLA | ສະມາຄົມສົ່ງເສີມຄຸນນະພາບຊີວິດ |
| SDG | ເປົ້າໝາຍການພັດທະນາແບບຍືນຍົງ |
| SPF III | ເສັ້ນທາງກ້າວສູ່ຄວາມປອດໄພ III |
| TVET | ອາຊີວະສຶກສາ ແລະ ການຝຶກອົບຮົມວິຊາຊີບ |
| UNDP | ອົງການ ສປຊ ເພື່ອການພັດທະນາ |
| Unit 58 | ທີມເກັບກູ້ ລບຕ ເພື່ອມະນຸດຊະທຳປະຈຳ ກອງທັບປະຊາຊົນລາວ |
| UNMAS | ໜ່ວຍບໍລິການເກັບກູ້ລະເບີດປະຈຳ ອົງການ ສປຊ |
| USAID | ອົງການພັດທະນາສາກົນ ແຫ່ງ ສ. ອາເມລິກາ |
| UXO | ລະເບີດບໍ່ທັນແຕກ |
| UXO Lao | ໂຄງການເກັບກູ້ລະເບີດແຫ່ງຊາດ |





# 1 ພາກແນະນຳ

© Sasha Popovic

## 1.1 ຄວາມເປັນມາ

ມາດຕະຖານການເກັບກູ້ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກແຫ່ງຊາດ ສະບັບປີ 2012 ໄດ້ກ່າວໄວ້ວ່າ:

> ສປປ ລາວ ຍັງຄົງເປັນໜຶ່ງໃນປະເທດທີ່ໄດ້ຮັບຜົນກະທົບຈາກ ລບຕ [ລະເບີດບໍ່ທັນແຕກ] ຫຼາຍທີ່ສຸດໃນໂລກ. ລັດຖະບານ ສປປ ລາວ ໄດ້ຮັບຮູ້ເຖິງຜົນກະທົບຂອງ ລບຕ ແລະ ໄດ້ເນັ້ນໜັກໃຫ້ເຫັນເຖິງຄວາມສຳຄັນຂອງແຜນງານເກັບກູ້ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກ ເພື່ອລຶບລ້າງ ລບຕ ທີ່ເປັນອຸປະສັກກີດຂວາງການພັດທະນາອອກຈາກເນື້ອທີ່ດິນຂອງປະຊາຊົນພາຍໃຕ້ ຍຸດທະສາດການຂະຫຍາຍໂຕ ແລະ ການລຶບລ້າງຄວາມທຸກຍາກແຫ່ງຊາດ.

ເພື່ອແກ້ໄຂບັນຫາເຫຼົ່ານີ້, ໂດຍພາຍໃຕ້ການສະໜັບສະໜຸນຂອງລັດຖະບານການາດາ, ອຽກລັງ, ລຸກຊຳບວກ, ນູແວນເຊລັງ ແລະ ສ. ເກົາຫຼີ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍຮ່ວມກັບ ອົງການ UNDP ກໍ່ໄດ້ລິເລີ່ມແຜນງານໜຶ່ງຂຶ້ນທີ່ມີຊື່ວ່າ: ແຜນງານຍົກສູງປະສິດທິພາບ ແລະ ປະສິດທິຜົນໃຫ້ແກ່ຂະແໜງການ ລບຕ ເພື່ອປະກອບສ່ວນເຂົ້າໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງທີ 18 ແລະ ເສັ້ນທາງກ້າວສູ່ຄວາມປອດໄພ III, ໃນເດືອນເມສາ 2022. ນີ້ແມ່ນບົດລາຍງານສະບັບສຸດທ້າຍຈາກການຄົ້ນຄວ້າ ແລະ ການວິເຄາະທີ່ແນໃສ່ສ້າງແຜນການດຳເນີນງານດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍໃຫ້ແກ່ແຜນງານນີ້. ການຄົ້ນຄວ້າດັ່ງກ່າວແມ່ນໄດ້ຮັບການສະໜັບສະໜຸນດ້ານເງິນທຶນຈາກ ອົງການ KOICA, ທີ່ໄດ້ຮັບການຄຸ້ມຄອງໂດຍ ອົງການ UNDP ແລະ ດຳເນີນງານໂດຍຮ່ວມມືກັນກັບ NRA.

## 1.2 ເປົ້າໝາຍ ແລະ ຂອບເຂດຂອງການຄົ້ນຄວ້າ

ເປົ້າໝາຍຂອງການຄົ້ນຄວ້າແມ່ນເພື່ອດຳເນີນການວິເຄາະບົດບາດຍິງ-ຊາຍ ໃຫ້ແກ່ທຸກພາກສ່ວນພາຍໃຕ້ຂະແໜງການ ລບຕ ໂດຍມີ ອົງການ UNDP ເປັນຜູ້ໃຫ້ການສະໜັບສະໜຸນເຂົ້າໃນຂະບວນການຕັດສິນໃຈ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກ ລບຕ, ການສຳຫຼວດ ແລະ ການເກັບກູ້ລະເບີດ, ແລະ ເພື່ອປະເມີນຜົນກະທົບ - ແລະ ອຸປະສັກທີ່ກີດຂວາງ - ການມີສ່ວນຮ່ວມຂອງແມ່ຍິງໃນຂະແໜງການ. ໄດ້ມີການສ້າງມາດຕະການແຊກແຊງທີ່ຄຳນຶງເຖິງບົດບາດຍິງ-ຊາຍ ແລະ ມີປະສິດທິພາບຂຶ້ນ ເພື່ອລຶບລ້າງຄວາມແຕກໂຕນດ້ານບົດບາດຍິງ-ຊາຍ, ລວມທັງຂໍ້ຊີ້ນຳກ່ຽວກັບການລວມເອົາທັດສະນະດ້ານບົດບາດຍິງ-ຊາຍເຂົ້າໃນແຜນງານ, ການແກ້ໄຂຄວາມບໍ່ສະເໝີພາບຍິງ-ຊາຍ ແລະ ການຕອບສະໜອງໄດ້ຕໍ່ຄວາມຕ້ອງການຕ່າງໆຂອງແມ່ຍິງ ແລະ ຜູ້ຊາຍ, ແລະ ການຮັບປະກັນໃຫ້ແມ່ຍິງມີສ່ວນຮ່ວມຫຼາຍຂຶ້ນ.

ການຄົ້ນຄວ້າຍັງລວມມີຂັ້ນຕອນການທົບທວນຄືນບົດຄວາມ ແລະ ເອກະສານວຽກຂອງສາກົນ, ພາກພື້ນ ແລະ ແຫ່ງຊາດທີ່ກ່ຽວຂ້ອງກັບບັນຫາຍິງຊາຍໃນຂະແໜງການ ລບຕ, ແລະ ການວິເຄາະບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍໃນນະໂຍບາຍ, ມາດຕະຖານ ແລະ ບົດລາຍງານວຽກງານ ລບຕ ແລະ ການພັດທະນາແຫ່ງຊາດນຳອີກ. ໄດ້ມີການລະບຸບັນດາແນວໂນ້ມດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍອັນສຳຄັນທັງໃນລະດັບສາກົນ ແລະ ພາຍໃນຂະແໜງການ ລບຕ ຂອງ ສປປ ລາວ. ນອກນັ້ນກໍ່ມີການລະບຸບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ, ແລະ ດຳເນີນການປະຕິບັດງານພາກສະໜາມໃນສອງບ້ານຂອງ ແຂວງບໍລິຄຳໄຊ (ທອງແສງ ແລະ ໂພນສະອາດ) ແລະ ສອງບ້ານຂອງ ແຂວງຊຽງຂວາງ (ປຸ່ງໝັ້ນ ແລະ ປົວ).

ການວິເຄາະບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍແມ່ນໄດ້ຖືກດຳເນີນການ ໂດຍສອດຄ່ອງກັບມາດຕະຖານສາກົນ ແລະ ຍັງລວມມີການກວດສອບຜົນກະທົບຂອງຄວາມບໍ່ສະເໝີພາບທີ່ປະຊາຊົນຜູ້ທຸກຍາກ, ຜູ້ພິການ ແລະ ກຸ່ມຊົນເຜົ່າທີ່ຫຼາກຫຼາຍຕ້ອງໄດ້ພົບພໍ້ (ທີ່ກ່ຽວຂ້ອງກັບຜູ້ທີ່ປຶກສາຫາລືນຳໃນລະຫວ່າງປະຕິບັດການພາກສະໜາມ).

ຜົນໄດ້ຮັບສູງສຸດຂອງການຄົ້ນຄວ້າຄັ້ງນີ້ແມ່ນການສ້າງແຜນການດຳເນີນງານ 4 ປີດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ (2023-2026) ໃຫ້ແກ່ຂະແໜງການ ລບຕ.

## 1.3 ຂໍ້ຈຳກັດ

ເນື່ອງຈາກມີເວລາ, ຊັບພະຍາກອນ ແລະ ລະບົບໂລຊິດສະຕິກທີ່ຈຳກັດ, ຈຶ່ງເຮັດໃຫ້ບໍ່ສາມາດດຳເນີນການສຳຫຼວດໃນບັນດາບ້ານເປົ້າໝາຍໄດ້, ເຊິ່ງເປັນການເກັບກຳຄຳຕອບແບບບໍ່ລະບຸໂຕຕົນ (ການເກັບກຳຂໍ້ມູນສ່ວນໃຫຍ່ແມ່ນຜ່ານການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ, ການສົນທະນາກຸ່ມສະເພາະ ແລະ ການສຳພາດຄົວເຮືອນ). ນອກນັ້ນຍັງບໍ່ຈຳເປັນຕ້ອງໄດ້ດຳເນີນການສຳຫຼວດພະນັກງານຂອງ NRA ຍ້ອນວ່າ ອົງການແມັກ ກຳລັງດຳເນີນວຽກງານນີ້ຢູ່.

ເຖິງແມ່ນວ່າຈະພະຍາຍາມໂອ້ລົມກັບພະນັກງານຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ, ແລະ ພະນັກງານຂອງ ໂຄງການ UXO Lao ແລະ ກອງຮ້ອຍ 58 ແລ້ວກໍ່ຕາມ, ແຕ່ກໍ່ບໍ່ສາມາດກວມເອົາໄດ້ໝົດທຸກຄົນ. ໃນບາງກໍລະນີ, ເຖິງຄູ່ຮ່ວມງານຈະສົ່ງອີເມວຂໍຂໍ້ມູນເພີ່ມໄປຫຼາຍຄັ້ງໃນພາຍຫຼັງກໍ່ຕາມ, ແຕ່ກໍ່ບໍ່ໄດ້ຮັບການຕອບສະໜອງ. ເຊັ່ນດຽວກັນກັບການປະຕິບັດວຽກງານພາກສະໜາມໃນທົ່ວໂລກ ແລະ ໃນພາກພື້ນ, ລູກບ້ານທີ່ທຸກຍາກ ແລະ ດ້ອຍໂອກາດກວ່າໝູ່ນັ້ນ ມັກຈະເປັນກຸ່ມທີ່ບໍ່ສາມາດເຂົ້າຮ່ວມການສົນທະນາກຸ່ມສະເພາະໄດ້ ຍ້ອນບັນຫາດ້ານໄລຍະທາງ, ການຂາດລະບົບຂົນສົ່ງ, ພາລະວຽກ ແລະ ການຂາດຄວາມສາມາດໃນການສື່ສານພາສາລາວ. ຍ້ອນວ່າທີ່ປຶກສາທ້ອງຖິ່ນຂອງພວກເຮົານັ້ນສາມາດເວົ້າພາສາມົ້ງໄດ້ຢ່າງລ່ຽນໄຫຼ, ຈຶ່ງເຮັດໃຫ້ກຸ່ມຊາຍຍິງເຜົ່າມົ້ງບໍ່ມີຂໍ້ຈຳກັດໃນການເຂົ້າຮ່ວມກຸ່ມສົນທະນາ. ເຖິງແມ່ນວ່າຈະມີລູກບ້ານຈາກຊົນເຜົ່າທີ່ຫຼາກຫຼາຍ, ເຊັ່ນ: ເຜົ່າມົ້ງ, ຂະມຸ, ເມີຍ ແລະ ຄ່າເຂົ້າຮ່ວມກຸ່ມສົນທະນາທັງໃນແຂວງບໍລິຄຳໄຊ ແລະ ແຂວງຊຽງຂວາງ ກໍ່ຕາມ, ບົດຄົ້ນຄວ້ານີ້ກໍ່ບໍ່ສາມາດຕາງໜ້າໃຫ້ປະຊາຊົນລາວທຸກຊົນເຜົ່າໃນຂອບເຂດທົ່ວປະເທດໄດ້.

ໃນລະຫວ່າງການສຳພາດຄົວເຮືອນ ແລະ ບາງການສົນທະນາກຸ່ມສະເພາະ, ການເຂົ້າຮ່ວມຂອງທີມປະຕິບັດງານພາກສະໜາມ (ແມ່ຍິງສີ່ຄົນ ແລະ ຜູ້ຊາຍສອງຄົນ) ແລະ ພະນັກງານຂອງລັດ (ພະນັກງານຊາຍສູງສຸດສີ່ຄົນ) ໄດ້ສົ່ງຜົນອຕໍ່ການຕອບຄຳຖາມຂອງຜູ້ເຂົ້າຮ່ວມ. ໃນຫຼາຍໆກໍລະນີ, ພະນັກງານເອງພັດເປັນຜູ້ຕອບຄຳຖາມທີ່ແນໃສ່ສອບຖາມລູກບ້ານ. ເຖິງແມ່ນວ່ານີ້ອາດບໍ່ແມ່ນປາກົດການທີ່ແປກໃໝ່ສຳລັບການປະຕິບັດງານພາກສະໜາມ ຫຼື ໃນສະພາບການຂອງ ສປປ ລາວ ກໍ່ຕາມ, ແຕ່ກໍ່ອາດເຮັດໃຫ້ທີມສຳຫຼວດບໍ່ໄດ້ຮັບມຸມມອງທີ່ແຕກຕ່າງອັນແທ້ຈິງຈາກລູກບ້ານ.

ໃນເວລາພົບປະກັບພະນັກງານ ລບຕ ຈາກ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao, ການມີໜ້າເຂົ້າຮ່ວມຂອງພະນັກງານອາວຸໂສ ກໍ່ອາດສົ່ງຜົນຕໍ່ທິດທາງຂອງການສົນທະນາ, ໂດຍທີ່ພະນັກງານອາວຸໂສຈະເປັນຜູ້ຕອບຄຳຖາມສ່ວນໃຫຍ່ ຫຼື ພະນັກງານຊັ້ນຜູ້ນ້ອຍກວ່າຕ້ອງໄດ້ຂໍອານຸຍາດຈາກພະນັກງານຂັ້ນອາວຸໂສກ່ອນ ຈຶ່ງຈະສາມາດແບ່ງປັນມຸມມອງຂອງພວກເຂົາໄດ້. ນີ້ແມ່ນປາກົດການທົ່ວໄປທີ່ພວກເຮົາສາມາດຄາດການໄດ້ໃນເວລາດຳເນີນການສົນທະນາກຸ່ມ ຮ່ວມກັບພະນັກງານທີ່ມີລະດັບຄວາມອາວຸໂສທີ່ແຕກຕ່າງກັນ.

ຂໍ້ຈຳກັດຂໍ້ສຸດທ້າຍແມ່ນການທີ່ບໍ່ສາມາດສຳພາດຜູ້ປະສົບເຄາະຮ້າຍແມ່ຍິງຈາກອຸບັດເຫດ ລບຕ ໄດ້. ປະຕິບັດການພາກສະໜາມດັ່ງກ່າວໄດ້ຄາດຫວັງທີ່ຈະພົບປະກັບແມ່ຍິງພິການ ເພື່ອປະເມີນຜົນກະທົບຈາກຄວາມພິການຂອງພວກເຂົາ ຕໍ່ສະພາບເສດຖະກິດ, ສັງຄົມ ແລະ ຄອບຄົວຂອງຜູ້ກ່ຽວ. ແຕ່ພັດບໍ່ພົບວ່າມີຂໍ້ມູນ ຫຼື ໄດ້ຍິນວ່າມີແມ່ຍິງທີ່ພິການຈາກອຸບັດເຫດ ລບຕ ໃນກຸ່ມບ້ານທີ່ຖືກສຳຫຼວດດັ່ງກ່າວ. ສິ່ງນີ້ແມ່ນສອດຄ່ອງກັບສະຖິຕິແຫ່ງຊາດທີ່ສະແດງໃຫ້ເຫັນວ່າ ແມ່ຍິງມີອັດຕາພົບພໍ້ກັບອຸບັດເຫດໜ້ອຍກວ່າໝູ່.

ບັນດາຂໍ້ຈຳກັດທີ່ກ່າວມາຂ້າງເທິງນີ້ ບໍ່ຖືເປັນບັນຫາທີ່ແປກໃໝ່ສຳລັບປະຕິບັດການພາກສະໜາມເລີຍ. ຜູ້ຂຽນເຊື່ອວ່າຜົນໄດ້ຮັບຕ່າງໆຂອງປະຕິບັດການດັ່ງກ່າວນັ້ນ ແມ່ນອີງໃສ່ແຫຼ່ງຂໍ້ມູນຫຼັກຖານທີ່ຖືກຕ້ອງ ອັນເປັນພື້ນຖານສຳຄັນໃຫ້ແກ່ການວິເຄາະ ແລະ ການສ້າງຂໍ້ແນະນຳໃນພາຍຫຼັງໄວ້ໃນບົດລາຍງານສະບັບນີ້.



## 1.4 ໂຄງຮ່າງບົດລາຍງານ

ບົດລາຍງານສະບັບນີ້ສັງລວມການທົບທວນຄືນບົດຄວາມ ແລະ ເອກະສານທີ່ສຳຄັນຂອງສາກົນຈາກ ອົງການ ສປຊ ແລະ GICHD ທີ່ຊ່ວຍສະໜອງຂໍ້ຊີ້ນຳກ່ຽວກັບມາດຕະຖານ ແລະ ເຄື່ອງມືຕ່າງໆ. ພາກສ່ວນຕໍ່ໄປນີ້ຈະອະທິບາຍກ່ຽວກັບນະໂຍບາບຂອງ ສປປ ລາວ ວ່າດ້ວຍ ລບຕ ແລະ ບົດບາດຍິງ-ຊາຍ ລວມທັງການທົບທວນຄືນເອກະສານຕ່າງໆຈາກຂະແໜງການ ລບຕ ຂອງ ສປປ ລາວ ແລະ ການວິເຄາະຂໍ້ແນະນຳທີ່ຜ່ານມາຈາກບັນດາບົດຄົ້ນຄວ້າດ້ານບົດບາດຍິງ-ຊາຍ ແລະ ລບຕ ກ່ອນໜ້ານີ້. ຂໍ້ມູນອ້າງອີງເພີ່ມເຕີມຈາກການທົບທວນຄືນບົດຄວາມກໍ່ໄດ້ຖືກລວມເຂົ້າໄວ້ ໃນຈຸດທີ່ຊ່ວຍສົ່ງເສີມຜົນໄດ້ຮັບຈາກປະຕິບັດການພາກສະໜາມ.

ການວິເຄາະສະພາບເສດຖະກິດ-ສັງຄົມຂອງ ສປປ ລາວ ໂດຍຫຍໍ້ກໍ່ໄດ້ຖືກລວມເຂົ້ານຳ ເພື່ອໃຊ້ໄວ້ລະບຸເສັ້ນທຽບຖານດ້ານສະຖານະຂອງແມ່ຍິງ, ຄົນພິການ ແລະ ກຸ່ມຊົນເຜົ່າທີ່ທຸກຍາກ. ຫຼັງຈາກນັ້ນກໍ່ມີການວິເຄາະຂອງຂະແໜງການ ລບຕ ທີ່ອີງໃສ່ຜົນໄດ້ຮັບຂອງປະຕິບັດການພາກສະໜາມທີ່ສອດຄ່ອງກັບບັນດາຂອບເຂດດັ່ງຕໍ່ໄປນີ້: ສິດທິ ແລະ ສະຖານະທາງກົດໝາຍ; ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ; ເວລາ ແລະ ພື້ນທີ່; ການມີສ່ວນຮ່ວມ, ອຳນາດ ແລະ ການຕັດສິນໃຈ; ແລະ ຄວາມຮູ້, ຄວາມເຊື່ອ ແລະ ຄວາມເຂົ້າໃຈ (ບັນຖັດຖານ ແລະ ການເໝົາລວມຂອງສັງຄົມ, ເຊິ່ງຖືເປັນສາເຫດຕົ້ນຕໍທົ່ວໄປທີ່ກໍ່ໃຫ້ເກີດຄວາມບໍ່ສະເໝີພາບ).

ການວິເຄາະຂອບເຂດເຫຼົ່ານີ້ຈະຊ່ວຍໃຫ້ສາມາດບັນລຸໄດ້ຄວາມແຕກໂຕນ ແລະ ຄວາມບໍ່ສະເໝີພາບທີ່ກ່ຽວຂ້ອງກັບບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ, ນັບຕັ້ງແຕ່ລະດັບຊາດໄປຈົນເຖິງຂັ້ນບ້ານ, ອັນເປັນບາດກ້າວໜຶ່ງໃນການແກ້ໄຂສາເຫດຕົ້ນຕໍ ທີ່ຖືກກຳນົດຂຶ້ນພາຍໃຕ້ປະຕິບັດການພາກສະໜາມ ແລະ ການທົບທວນຄືນບົດຄວາມ. ພາກເອກະສານຊ້ອນທ້າຍທີ 6 ໄດ້ຈັດລຽງຂັ້ນຕອນ ແລະ ເຄື່ອງມືຕ່າງໆທີ່ຖືກນຳໃຊ້ໃນຕະຫຼອດໄລຍະຂອງປະຕິບັດການພາກສະໜາມ; ສິ່ງເຫຼົ່ານີ້ແມ່ນໄດ້ຖືກສັງລວມໂດຍຫຍໍ້ໄວ້ໃນບົດລາຍງານຕົ້ນຕໍ.

ບົດລາຍງານສະບັບນີ້ໄດ້ສ້າງຂໍ້ແນະນຳ ທີ່ກ່ຽວຂ້ອງກັບບັນຫາດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍອັນສະເພາະໃຫ້ແກ່ ລັດຖະບານ ສປປ ລາວ ແລະ ແຜນງານຂອງ ອົງການ UNDP ວ່າດ້ວຍຂະແໜງການ ລບຕ. ຂໍ້ແນະນຳເຫຼົ່ານີ້ຊ່ວຍສະໜອງຫຼັກເຫດຜົນ ແລະ ຄວາມຈຳເປັນໃນການທີ່ຕ້ອງມີມາດຕະການແຊກແຊງກ່ຽວກັບບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍທີ່ມີປະສິດທິພາບ




© Sasha Popovic

ແລະ ບັນລຸໄດ້ພາຍໃຕ້ສະພາບການຂອງ ສປປ ລາວ. ຂໍ້ແນະນຳເຫຼົ່ານີ້ແມ່ນມີຄວາມສອດຄ່ອງກັບບຸລິມະສິດຂອງລັດຖະບານ ແລະ ແຜນງານຂອງ ອົງການ UNDP, ທັງຍັງສອດຄ່ອງກັບມາດຕະຖານຕົ້ນຕໍຂອງ ອົງການ ສປຊ ແລະ ຂອງສາກົນ.

ບົດລາຍງານສະບັບນີ້ລວມມີ ແຜນການດຳເນີນງານດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ ພ້ອມດ້ວຍມາດຕະການອັນເຂັ້ມແຂງ ແລະ ເປົ້າໝາຍທີ່ກຳນົດໄວ້ແລ້ວ. ເພື່ອໃຫ້ຈັດຕັ້ງປະຕິບັດແຜນການດັ່ງກ່າວໄດ້, ບົດລາຍງານສະບັບນີ້ຈຶ່ງໄດ້ລະບຸກົນໄກການປະສານງານຂຶ້ນ ໂດຍກຳນົດໃຫ້ພາຍໃນແຕ່ລະໜ່ວຍງານຂອງຄູ່ຮ່ວມງານ ມີຈຸດປະສານງານດ້ານວຽກງານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍນຳ.

ພາກເອກະສານຊ້ອນທ້າຍທີ 1 ເຖິງ 6 ຊ່ວຍສະໜອງເອກະສານສະໜັບສະໜູນເພີ່ມເຕີມໃຫ້. ເອກະສານເຫຼົ່ານີ້ປະກອບມີລາຍຊື່ຂອງຜູ້ທີ່ໄດ້ຮັບການປຶກສາຫາລືນຳ ໃນລະຫວ່າງປະຕິບັດການພາກສະໜາມ, ບັນດາຂໍ້ແນະນຳທີ່ໂຮມລວມກັນຈາກບົດຄົ້ນຄວ້າ ແລະ ບົດປະເມີນຜົນຄັ້ງກ່ອນໆ, ບັນຫາດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍພາຍໃຕ້ IMAS, ຂໍ້ຊີ້ນຳ ແລະ ເຄື່ອງມືພາກສະໜາມ.

## 1.5 ວິທີການ

### ຂັ້ນຕອນ

ໄລຍະທຳອິດຂອງການຄົ້ນຄວ້າຄັ້ງນີ້ລວມມີການທົບທວນຄືນບົດຄວາມໂດຍລະອຽດ ເຊິ່ງໄດ້ຖືກນຳສະເໜີໄວ້ໃນບົດລາຍງານເບື້ອງຕົ້ນທີ່ມີຄວາມຍາວ 52 ໜ້າ, ໂຄງຮ່າງຂອງວິທີການເກັບກຳຂໍ້ມູນ ແລະ ການພັດທະນາຂອບວຽກການວິເຄາະບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ.

ມັນຍັງໄດ້ສະເໜີລາຍຊື່ຂອງບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ ເພື່ອດຳເນີນການສຳພາດແບບເຈາະເລິກໃນນະຄອນຫຼວງວຽງຈັນ ລວມທັງອະທິບາຍຮ່າງແຜນການປະຕິບັດວຽກງານພາກສະໜາມໃນ ແຂວງບໍລິຄຳໄຊ ແລະ ແຂວງຊຽງຂວາງ ທີ່ລວມມີການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ ແລະ ການສົນທະນາກຸ່ມສະເພາະກັບອຳນາດການປົກຄອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ, ຜູ້ໃຫ້ບໍລິການ EORE ແລະ ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນທ້ອງຖິ່ນ, ລວມໄປເຖິງທີມງານສຳຫຼວດແບບບໍ່ແມ່ນວິຊາການ ແລະ ທາງດ້ານວິຊາການຈາກ ກອງຮ້ອຍ 58 ແລະ ໂຄງການ UXO Lao ທີ່ເຄື່ອນໄຫວວຽກຢູ່ໃນຂັ້ນບ້ານ. ການສົນທະນາເຫຼົ່ານີ້ໄດ້ຊ່ວຍສະໜອງຂໍ້ມູນເລິກກ່ຽວກັບວ່າພະນັກງານຂອງຂະແໜງການ ລບຕ ນັ້ນ (ໂດຍສະເພາະທີ່ມາຈາກ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao) ພ້ອມທັງອຳນາດການປົກຄອງທ້ອງຖິ່ນ ມີການແກ້ໄຂບັນຫາດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍໃນຂັ້ນຕອນການກຳນົດແຜນງານ ລບຕ ຄືແນວໃດ. ລາຍຊື່ເຕັມຂອງຜູ້ທີ່ໄດ້ຮັບການປຶກສາຫາລືນຳແມ່ນຖືກສະແດງໄວ້ໃນ ພາກເອກະສານຊ້ອນທ້າຍທີ 1, ສ່ວນຊຸດຄຳຖາມຊີ້ນຳສຳລັບການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ ແລະ ການສົນທະນາກຸ່ມສະເພາະນັ້ນແມ່ນຖືກສະແດງໄວ້ໃນ ພາກເອກະສານຊ້ອນທ້າຍທີ 6.

ລັດຖະບານ ແລະ ອົງການ UNDP ໃນແຜນງານ ລບຕ ຂອງພວກເຂົາ ມີເປົ້າໝາຍແນໃສ່ຍົກສູງຊີວິດການເປັນຢູ່ໃຫ້ແກ່ຊຸມຊົນທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບຈາກ ລບຕ ເພື່ອຊ່ວຍໃຫ້ພວກເຂົາສາມາດເພີ່ມທະວີຄວາມປອດໄພ ແລະ ຄວາມສາມາດໃນການເຂົ້າເຖິງເນື້ອທີ່ດິນທີ່ປອດໄພໄດ້. ການປຶກສາຫາລືກັບປະຊາຊົນໃນທ້ອງຖິ່ນຖືເປັນວຽກງານຈຳເປັນ ເພື່ອສືບຄົ້ນໃຫ້ຮູ້ວ່າບັນຫາດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ ແລະ ຄວາມບໍ່ສະເໝີພາບນັ້ນປາກົດໂຕຂຶ້ນແນວໃດ ໃນຂັ້ນຕອນການກຳນົດແຜນງານ ລບຕ ໃນຂັ້ນທ້ອງຖິ່ນ, ແລະ ເພື່ອໃຫ້ເຂົ້າໃຈຜົນສະທ້ອນຕ່າງໆທີ່ກ່ຽວຂ້ອງກັບ ລບຕ ທີ່ຍັງຕົກຄ້າງຢູ່ ແລະ ວຽກງານເກັບກູ້ລະເບີດໄດ້ຢ່າງຄົບຖ້ວນ.

ຂັ້ນຕອນການເກັບກຳຂໍ້ມູນນີ້ປະກອບມີວຽກກຸ່ມທີ່ສົ່ງເສີມການມີສ່ວນຮ່ວມຂອງທຸກຄົນ ທີ່ຖືກດຳເນີນການໂດຍແຍກຕ່າງຫາກລະຫວ່າງຍິງ ແລະ ຊາຍ. ຂັ້ນຕອນນີ້ໄດ້ຄຳນຶງເຖິງຄວາມຕ້ອງການຂອງຜູ້ທີ່ບໍ່ຮູ້ໜັງສື ແລະ ຜູ້ທີ່ເວົ້າໄດ້ພຽງແຕ່ພາສາມົ້ງເທົ່ານັ້ນເຂົ້ານຳ. ນອກຈາກຂັ້ນຕອນນີ້ແລ້ວ, ຍັງມີການດຳເນີນການສຳພາດອີກເຈັດຄັ້ງກັບຄົວເຮືອນຕ່າງໆໃນທ້ອງຖິ່ນ.

ຂອບວຽກການວິເຄາະບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ

ເຄື່ອງມືການຄົ້ນຄວ້າທັງໝົດແມ່ນໄດ້ຖືກອອກແບບມາເພື່ອເກັບກຳຂໍ້ມູນພາຍໃຕ້ສະພາບການອັນສະເພາະໃດໜຶ່ງເພື່ອຊ່ວຍແກ້ໄຂບັນຫາພາຍໃຕ້ຫ້າຂອບເຂດຕົ້ນຕໍລຸ່ມນີ້, ອັນຈະຖືກນຳໃຊ້ເປັນຂອບວຽກການວິເຄາະ ເພື່ອແກ້ໄຂບັນຫາດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍໃນຂັ້ນຕໍ່ໄປ:

- ສິດທິ ແລະ ສະຖານະທາງກົດໝາຍ
- ຫຼັກປະຕິບັດ, ການມີສ່ວນຮ່ວມ, ອຳນາດ ແລະ ການຕັດສິນໃຈ
- ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ
- ເວລາ ແລະ ພື້ນທີ່, ບົດບາດທັງສາມຢ່າງຂອງແມ່ຍິງ ແລະ ສະພາບແວດລ້ອມເອື້ອອຳນວຍ
- ຄວາມຮູ້, ຄວາມເຊື່ອ ແລະ ຄວາມເຂົ້າໃຈ, ລວມທັງບັນຖັດຖານ ແລະ ການເໝົາລວມຂອງສັງຄົມ

ຜົນໄດ້ຮັບຈາກປະຕິບັດການພາກສະໜາມ ແມ່ນມີຄວາມສອດຄ່ອງກັບຂອບເຂດເຫຼົ່ານີ້ ແລະ ຖືກອະທິບາຍເພີ່ມເຕີມໄວ້ໃນ ພາກທີ 5. GMAP ຂອງ GICHD ໄດ້ສ້າງໂຕແບບອັນສະເພາະຂຶ້ນ ທີ່ຖືກອອກແບບມາເພື່ອຂະແໜງການ ລບຕ ທີ່ລວມເອົາມຸມມອງດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍເຂົ້ານຳດັ່ງທີ່ເຫັນໄດ້ໃນ ຮູບທີ 1.

**ຮູບທີ 1: ຍ້ອນຫຍັງບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍຈຶ່ງສຳຄັນ**
ແຫຼ່ງຂໍ້ມູນ: GICHD, ເບິ່ງໄດ້ທີ່: www.gmap.ch/gender-diversity-matter/.




ບົດບາດທາງສັງຄົມຂອງກຸ່ມແມ່ຍິງ, ຜູ້ຊາຍ, ເດັກຊາຍ ແລະ ເດັກຍິງທີ່ມີຄວາມຫຼາກຫຼາຍນັ້ນ ແມ່ນມີຄວາມແຕກຕ່າງກັນ ແລະ ມັກຈະໄດ້ຮັບຜົນກະທົບຈາກບັນຖັດຖານທາງສັງຄົມ ທີ່ເປັນໂຕຊີ້ນຳບົດບາດ ແລະ ໜ້າທີ່ຮັບຜິດຊອບໃນຄອບຄົວ ແລະ ຊຸມຊົນ. ຂັ້ນຕອນນີ້ເປັນໂຕກຳນົດວ່າພວກເຂົາຈະມີຄວາມສ່ຽງພົບພໍ້ກັບ ລບຕ, ມີສ່ວນຮ່ວມເຂົ້າໃນຂະບວນການຕັດສິນໃຈ ແລະ ສາມາດເຂົ້າເຖິງບໍລິການ ແລະ ຊັບພະຍາກອນຕ່າງໆໄດ້ຫຼາຍໜ້ອຍຊ່ຳໃດ. ດ້ວຍເຫດນີ້, GICHD ຈຶ່ງໄດ້ນິຍາມຄຳວ່າ ບົດບາດຍິງ-ຊາຍ ເພີ່ມເຕີມອີກດັ່ງຕໍ່ໄປນີ້:

> ...ບົດບາດ ແລະ ໂອກາດທີ່ຖືກກຳນົດຂຶ້ນໂດຍສັງຄົມ ທີ່ກ່ຽວຂ້ອງກັບແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍ. ຄຸນລັກສະນະ, ໂອກາດ ແລະ ສາຍພົວພັນເຫຼົ່ານີ້ແມ່ນ 'ຖືກກຳນົດຂຶ້ນໂດຍສັງຄົມ' (ເຊິ່ງຈະກົງກັນຂ້າມກັບສິ່ງທີ່ຖືກກຳນົດທາງຊີວະສາດ), ມີການຮຽນຮູ້ປັບໂຕໄປຕາມບັນຖັດຖານຂອງສັງຄົມ, ແລະ ມີຄວາມສອດຄ່ອງກັບສະພາບການ/ເວລາອັນສະເພາະ ແລະ ສາມາດປ່ຽນແປງໄດ້.

ມຸມມອງດ້ານຄວາມຫຼາກຫຼາຍຍັງໄດ້ຖືກອະທິບາຍເພີ່ມເຕີມໄວ້ໃນ ຂໍ້ຊີ້ນຳດ້ານບົດບາດຍິງ-ຊາຍຂອງ ອົງການ ສປຊ ສຳລັບ ແຜນງານເກັບກູ້ລະເບີດ ໃນປີ 2019, ທີ່ຊ່ວຍລະບຸຄວາມຫຼາກຫຼາຍໃນແງ່ມຸມຕ່າງໆໃນຂະແໜງການ ລບຕ ດັ່ງຕໍ່ໄປນີ້ເຊັ່ນ: ເພດ, ອາຍຸ, ຄວາມພິການ, ກຸ່ມຊົນເຜົ່າ, ລະດັບການສຶກສາ, ພາສາ, ສາສະໜາ, ສະຖານະທາງສັງຄົມ, ຄວາມຮັ່ງມີ ແລະ ການເຄື່ອນໄຫວທາງເສດຖະກິດ, ແລະ ສິດທິຂອງກຸ່ມຄົນຫຼາກຫຼາຍທາງເພດ.

ຈັນຍາບັນ

ກ່ອນລິເລີ່ມການສົນທະນາກຸ່ມສະເພາະ ແລະ ການສຳພາດຄົວເຮືອນໃນແຕ່ລະຄັ້ງ, ຈຸດປະສົງຂອງການຄົ້ນຄວ້າແມ່ນຈະໄດ້ຮັບການອະທິບາຍ. ຜູ້ຖືກສຳພາດທຸກຄົນຈະໄດ້ຮັບແຈ້ງກ່ຽວກັບສິດຂອງພວກເຂົາ ທີ່ສາມາດຖອນໂຕອອກຈາກການສົນທະນາ ຫຼື ການສຳພາດໄດ້ທຸກເວລາ. ນອກນັ້ນຍັງມີການຂໍອານຸຍາດແບບເປັນລາຍລັກອັກສອນ ໃນການນຳເອົາຮູບພາບ ແລະ ຊື່ຂອງຜູ້ສົນທະນາ ຫຼື ຜູ້ຖືກສຳພາດໄປໃຊ້ໃນພາຍຫຼັງ.

### ໝາຍເຫດ

⇨ ປະຕິບັດການພາກສະໜາມໄດ້ລະບຸບັນຫາທີ່ສຳຄັນ ແລະ ຫຼາກຫຼາຍພາຍໃນຂະແໜງການ ລບຕ, ໂດຍອີງຕາມເພດ, ອາຍຸ, ຄວາມພິການ, ກຸ່ມຊົນເຜົ່າ, ລະດັບການສຶກສາ, ພາສາ ແລະ ຄວາມທຸກຍາກ. ໃນທົ່ວທັງບົດລາຍງານສະບັບນີ້, ຄວາມຫຼາກຫຼາຍໃນແຕ່ລະປະເພດຕົ້ນຕໍທີ່ກ່າວມານັ້ນ ຈະຖືກພິຈາລະນາໃຫ້ເປັນພາກສ່ວນໜຶ່ງຂອງແນວທາງດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍຕໍ່ຂະແໜງການ ລບຕ ໃນ ສປປ ລາວ.




© UNDP / Mailee Osten-Tan

# 2

# ສັງລວມບັນດາມາດຕະຖານ ແລະ ຂໍ້ຊີ້ນຳສາກົນຕົ້ນຕໍຈາກ ຂັ້ນຕອນການທົບທວນຄືນບົດຄວາມ

ຂັ້ນຕອນການທົບທວນຄືນບົດຄວາມ ແມ່ນຂັ້ນຕອນທີ່ແນໃສ່ທົບທວນຄືນບັນດາບົດຄວາມຕົ້ນຕໍ ທີ່ກ່ຽວຂ້ອງກັບບັນຫາດ້ານບົດບາດຍິງຊາຍຈາກມຸມມອງໃນລະດັບຊາດ, ພາກພື້ນ ແລະ ສາກົນ ເພື່ອໃຫ້ເຂົ້າໃຈຂໍ້ມູນຫຼັກຖານ, ມາດຕະຖານ ແລະ ບັນຫາທີ່ເປັນແກນກາງໃນຂະແໜງການ ລບຕ. ພາກສ່ວນນີ້ແນໃສ່ຊີ້ໃຫ້ເຫັນເຖິງແຫຼ່ງຂໍ້ມູນເຫຼົ່ານີ້. ບາງແຫຼ່ງຂໍ້ມູນກໍ່ບໍ່ໄດ້ຖືກນຳມາໂອ້ລົມກັນ ເນື່ອງຈາກເປັນບັນຫາທີ່ທັບຊ້ອນກັນ, ແຕ່ອາດເຂົ້າເຖິງໄດ້ໃນ ພາກເອກະສານຊ້ອນທ້າຍທີ 2, 3, 4 ແລະ 5.

ພາກສ່ວນນີ້ປະກອບມີແຫຼ່ງຂໍ້ມູນເພີ່ມເຕີມທີ່ຊ່ວຍກຳນົດມາດຕະຖານ ຫຼື ສະໜອງຂໍ້ຊີ້ນຳໃນການໂຮມເອົາບັນຫາດ້ານບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍເຂົ້າໃນທົ່ວທັງຂະແໜງການ ລບຕ ໃນ ສປປ ລາວ. ດ້ວຍເຫດນີ້, ຈຶ່ງໄດ້ມີການເນັ້ນໜັກໃສ່ການລະບຸມາດຕະຖານ ແລະ ຂໍ້ຊີ້ນຳຂອງອົງການ ສປຊ, ແລະ ວຽກງານອັນສະເພາະຂອງ GICHD ແລະ GMAP, ຍ້ອນສິ່ງເຫຼົ່ານີ້ແມ່ນມີຄວາມກ່ຽວພັນໂດຍກົງກັບໂຄງການນີ້. ບົດສັງລວມນີ້ໃຫ້ບຸລິມະສິດຕໍ່ບົດຄົ້ນຄວ້າດ້ານບົດບາດຍິງ-ຊາຍ ແລະ ລບຕ ທີ່ຖືກດຳເນີນການໄປແລ້ວໃນ ສປປ ລາວ ພ້ອມທັງນະໂຍບາຍແຫ່ງຊາດ ແລະ ມາດຕະຖານສຳລັບຂະແໜງການ ລບຕ.

## 2.1 ພັນທະສັນຍາ ແລະ ຂໍ້ຊີ້ນຳຂອງອົງການ ສປຊ ກ່ຽວກັບບົດບາດຍິງ-ຊາຍໃນຂະແໜງການ ລບຕ

ໃນແຜນການດຳເນີນງານ Cartagena 2010-2014:

ການລົບລ້າງຄວາມທຸກທໍລະມານທີ່ເກີດຈາກລະເບີດຝັງດິນຕໍ່ຕ້ານບຸກຄົນ, ມາດຕາທີ 7 ໄດ້ຮຽກຮ້ອງໃຫ້ມີການນຳໃຊ້ແນວທາງທີ່ຄຳນຶງເຖິງບົດບາດຍິງ-ຊາຍ, ອາຍຸທີ່ເໝາະສົມ, ທີ່ກວມລວມ, ກົມກຽວ ແລະ ສອດຄ່ອງເຂົ້າໃນການພັດທະນາ ແລະ ການຈັດຕັ້ງປະຕິບັດບັນດານະໂຍບາຍ, ແຜນການ, ຂອບວຽກກົດໝາຍ ແລະ ນິຕິກຳທັງແຫ່ງຊາດ ແລະ ສາກົນທີ່ກ່ຽວຂ້ອງ. ມັນຍັງຮຽກຮ້ອງໃຫ້ມີການສະໜອງຂໍ້ມູນກ່ຽວກັບຂັ້ນຕອນການຈັດຕັ້ງປະຕິບັດ ແລະ ການລະດົມຊັບພະຍາກອນ, ລວມທັງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ມາດຕະການທີ່ນຳໃຊ້ ເພື່ອຮັບປະກັນຄວາມອ່ອນໄຫວຕໍ່ບັນຫາຍິງ-ຊາຍ ໃນທຸກແງ່ມຸມຂອງວຽກງານເກັບກູ້ລະເບີດ.

ແຜນການດຳເນີນງານ Maputo ໃນປີ 2014 ໄດ້ຮຽກຮ້ອງໃຫ້ມີການຈັດຕັ້ງປະຕິບັດໃນຮູບແບບທີ່ຮ່ວມມືກັນ, ມີຄວາມກວມລວມ, ທີ່ຄຳນຶງເຖິງອາຍຸທີ່ເໝາະສົມ ແລະ ບົດບາດຍິງ-ຊາຍ: "ການສະໜອງຄວາມຊ່ວຍເຫຼືອຈະຊ່ວຍສະໜັບສະໜູນແຜນການ ແລະ ແຜນງານ ທີ່ປະກອບມີຂໍ້ມູນທີ່ກ່ຽວຂ້ອງ ແລະ ຖືກຕ້ອງກ່ຽວກັບການຕົກຄ້າງ ແລະ ຜົນກະທົບທາງດ້ານເສດຖະກິດ-ສັງຄົມຈາກລະເບີດຝັງດິນຕໍ່ຕ້ານບຸກຄົນ - ລວມທັງຂໍ້ມູນທີ່ເກັບກຳໄດ້ຈາກແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍທີ່ໄດ້ຮັບຜົນກະທົບ, ແລະ ໄດ້ຮັບການວິເຄາະຈາກມຸມມອງດ້ານບົດບາດຍິງ-ຊາຍ - ແລະ ທີ່ສົ່ງເສີມ ແລະ ຊຸກຍູ້ການເຊື່ອມສານວຽກງານບົດບາດຍິງ-ຊາຍ."

ກຸ່ມອ້າງອີງຂໍ້ມູນວ່າດ້ວຍບົດບາດຍິງ-ຊາຍ ແລະ ການດຳເນີນງານເພື່ອມະນຸດຊະທຳ ຂອງ ຄະນະປະຈຳໜ່ວຍງານລະຫວ່າງປະເທດ (IASC) ໄດ້ເປີດໂຕ ປຶ້ມຄູ່ມືດ້ານບົດບາດຍິງຊາຍຂອງ IASC ກ່ຽວກັບການດຳເນີນງານເພື່ອມະນຸດຊະທຳ ປະຈຳປີ 2018; ມັນໄດ້ຊ່ວຍກຳນົດບຸລິມະສິດໃຫ້ແກ່ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ. ປຶ້ມຄູ່ມືດັ່ງກ່າວລວມມີພາກສ່ວນສັ້ນໆກ່ຽວກັບຫຼັກປະຕິບັດທີ່ດີສຳລັບວຽກງານເກັບກູ້ລະເບີດ: "ສົ່ງເສີມຄວາມເປັນຜູ້ນຳຂອງແມ່ຍິງໃນວຽກງານເກັບກູ້ລະເບີດ ແລະ ເດັກຍິງໄວໜຸ່ມໃນບັນດາຄະນະກຳມະການປົກປ້ອງເດັກ. ເຫັນດີກັນກ່ຽວກັບໂຄຕ້າຕຳແໜ່ງວຽກສຳລັບແມ່ຍິງໃນການມີສ່ວນຮ່ວມກັບຊຸມຊົນ ກ່ອນລິເລີ່ມຂັ້ນຕອນການເລືອກຕັ້ງໃນແຕ່ລະຄັ້ງ."

ໃນປີ 2002, IASC ໄດ້ສ້າງ "ເອກະສານໃຫ້ຄະແນນດ້ານບົດບາດຍິງ-ຊາຍໃນວຽກງານເກັບກູ້ລະເບີດ," ພ້ອມດ້ວຍຂໍ້ຊີ້ນຳອັນສະເພາະ ເພື່ອແກ້ໄຂບັນຫາດ້ານບົດບາດຍິງ-ຊາຍໃນໂຄງການເກັບກູ້ລະເບີດ ໂດຍຜ່ານການປະເມີນຄວາມຕ້ອງການ, ກິດຈະກຳ ແລະ ຜົນໄດ້ຮັບຂອງໂຄງການ. ມັນຍັງຊ່ວຍສະໜອງຄຳໝັ້ນສັນຍາຂັ້ນຕໍ່າກ່ຽວກັບບົດບາດຍິງ-ຊາຍ ໃນວຽກງານເກັບກູ້ລະເບີດ ໃນຂັ້ນຕອນການອານຸຍາດນຳໃຊ້ທີ່ດິນ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ, ການຊ່ວຍເຫຼືອ ແລະ ການສະໜັບສະໜູນຜູ້ປະສົບເຄາະຮ້າຍ. ຕໍ່ມາກໍ່ມີການອອກ ຂໍ້ຊີ້ນຳ: ການລວມເອົາຜູ້ພິການເຂົ້າໃນການດຳເນີນງານເພື່ອມະນຸດຊະທຳ (2019), ທີ່ອະທິບາຍວິທີໃນການພິຈາລະນາຄວາມແຕກຕ່າງໃນຄວາມສ່ຽງ ແລະ ອຸປະສັກຕ່າງໆ ເພື່ອຊ່ວຍຈັດການກັບຄວາມແຕກໂຕນດ້ານອາຍຸ, ບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍອື່ນໆ, ໂດຍສະເພາະສຳລັບກຸ່ມຄົນທີ່ພິການ, ລວມທັງປະເພດຄວາມພິການຂອງພວກເຂົານຳອີກ.

ໃນປີ 2019, ແຜນການດຳເນີນງານ Oslo ໄດ້ລະບຸຫຼັກປະຕິບັດທີ່ດີທີ່ສຸດວ່າເປັນ "ການໂຮມເອົາ ແລະ ການເຊື່ອມສານຂໍ້ພິຈາລະນາດ້ານບົດບາດຍິງຊາຍ ພ້ອມທັງການຄຳນຶງເຖິງຄວາມຕ້ອງການ ແລະ ປະສົບການອັນຫຼາກຫຼາຍຂອງບຸກຄົນທີ່ໄດ້ຮັບຜົນກະທົບ ເຂົ້າໃນຂັ້ນຕອນການກຳນົດແຜນງານເກັບກູ້ລະເບີດ." ແຜນການດຳເນີນງານ Oslo ໄດ້ກຳນົດໃຫ້ລັດພາຄີມີພັນທະໃນການ:

> ຮັບປະກັນໃຫ້ຄວາມຕ້ອງການ ແລະ ມຸມມອງຕ່າງໆຂອງແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍໄດ້ຮັບການພິຈາລະນາ ແລະ ໂຮມເຂົ້າໃນຂັ້ນຕອນການຈັດຕັ້ງປະຕິບັດ ສົນທິສັນຍາ ແລະ ການກຳນົດແຜນງານເກັບກູ້ລະເບີດ, ເພື່ອໃຫ້ສາມາດບັນລຸໄດ້ແນວທາງທີ່ມີຄວາມກວມລວມ. ພະຍາຍາມລຶບລ້າງທຸກອຸປະສັກທີ່ກີດຂວາງການມີສ່ວນຮ່ວມຢ່າງຄົບຖ້ວນ, ເທົ່າທຽມ ແລະ ດຸ່ນດ່ຽງລະຫວ່າງຍິງຊາຍໃນວຽກງານເກັບກູ້ລະເບີດ ແລະ ໃນການພົບປະໂອ້ລົມກັນກ່ຽວກັບ ສົນທິສັນຍາ.



ແຜນການດຳເນີນງານ Oslo ໄດ້ຮຽກຮ້ອງໃຫ້ມີການຈັດການກັບຄວາມຕ້ອງການ ແລະ ປະສົບການຂອງປະຊາຊົນໃນຊຸມຊົນຕ່າງໆ ທີ່ໄດ້ຮັບຜົນກະທົບຈາກລະເບີດຝັງດິນຕໍ່ຕ້ານບຸກຄົນ, ໂດຍເນັ້ນໜັກເປັນພິເສດໃສ່ກຸ່ມບົດບາດຍິງຊາຍ, ອາຍຸ, ຄວາມພິການ ແລະ ກຸ່ມຄົນທີ່ມີຄວາມຫຼາກຫຼາຍ ແລະ ດ້ອຍໂອກາດທາງສັງຄົມອື່ນໆ. ເອກະສານທີ່ຖືກນຳສະເໜີຕໍ່ກອງປະຊຸມທົບທວນຄືນຂອງ Oslo ໄດ້ສະໜອງຂໍ້ແນະນຳການປະຕິບັດໂຕຈິງ ໃນການເຊື່ອມສານວຽກງານດ້ານບົດບາດຍິງຊາຍ ໃນລະດັບຍຸດທະສາດ ແລະ ລະດັບປະຕິບັດການ. ຂໍ້ແນະນຳເຫຼົ່ານັ້ນແມ່ນມີຈຳນວນຫຼາຍເກີນກວ່າທີ່ຈະສະແດງໄວ້ໃນເອກະສານນີ້. ພວກມັນຄອບຄຸມທຸກພາກສ່ວນຂອງວຽກງານເກັບກູ້ລະເບີດຢ່າງຮອບດ້ານ, ລວມມີ: IMAS, ການສຳຫຼວດ, ການເກັບກູ້ລະເບີດ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ແລະ ເນັ້ນໜັກໃສ່ການວິເຄາະຂໍ້ມູນດ້ານເພດ, ບົດບາດຍິງຊາຍ, ຄວາມພິການ ແລະ ຄວາມຫຼາກຫຼາຍຢ່າງລະອຽດ. ເອກະສານດັ່ງກ່າວຍັງໄດ້ຮຽກຮ້ອງໃຫ້ບັນດາປະເທດທີ່ໄດ້ຮັບຜົນກະທົບຈາກ ລບຕ ລຶບລ້າງທຸກອຸປະສັກທີ່ກີດຂວາງການຈ້າງງານ ແລະ ການສ້າງຄວາມກ້າວໜ້າໃຫ້ແກ່ແມ່ຍິງ ໃນທຸກລະດັບຂອງວຽກງານເກັບກູ້ລະເບີດ. ສິ່ງນີ້ລວມມີການບັນລຸໄດ້ຄວາມດຸ່ນດ່ຽງລະຫວ່າງຍິງຊາຍ ພາຍໃຕ້ໂຄງຮ່າງວຽກງານເກັບກູ້ລະເບີດຂອງພວກເຂົາເອງ ແລະ ການຊຸກຍູ້ໃຫ້ຄູ່ຮ່ວມຈັດຕັ້ງປະຕິບັດໂຄງການ ເຮັດແບບດຽວກັນນັ້ນໃນທົ່ວທຸກປະຕິບັດການຂອງພວກເຂົາ.

ກອງປະຊຸມທົບທວນຄືນຄັ້ງທີສອງຂອງລັດພາຄີຕໍ່ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ ໃນເດືອນກັນຍາ 2021 ໄດ້ຮັບຮອງເອົາ ແຜນການດຳເນີນງານ Lausanne. ແຜນການດຳເນີນງານດັ່ງກ່າວໄດ້ສ້າງພັນທະສັນຍາທີ່ຄ້າຍຄືກັນກັບຄຳໝັ້ນສັນຍາພາຍໃຕ້ແຜນການດຳເນີນງານ Oslo. ການດຳເນີນງານທີ 4 ໄດ້ກ່າວໄວ້ວ່າ:

> ຮັບປະກັນໃຫ້ຄວາມຕ້ອງການ, ຄວາມອ່ອນໄຫວ ແລະ ມຸມມອງຕ່າງໆຂອງແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍຈາກກຸ່ມປະຊາກອນທີ່ຫຼາກຫຼາຍ ແລະ ທຸກກຸ່ມອາຍຸ ໄດ້ຮັບການພິຈາລະນາ ແລະ ໂຮມເຂົ້າໄວ້ໃນຂັ້ນຕອນການຈັດຕັ້ງປະຕິບັດສົນທິສັນຍາ ເພື່ອໃຫ້ສາມາດບັນລຸໄດ້ແນວທາງທີ່ມີຄວາມກວມລວມ, ພ້ອມທັງພະຍາຍາມລຶບລ້າງທຸກອຸປະສັກທີ່ກີດຂວາງການມີສ່ວນຮ່ວມຢ່າງຄົບຖ້ວນ, ເທົ່າທຽມ ແລະ ດຸ່ນດ່ຽງລະຫວ່າງຍິງຊາຍ ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆທັງໃນລະດັບຊາດ ແລະ ພາຍໃຕ້ກົນໄກຂອງສົນທິສັນຍາ, ລວມທັງກອງປະຊຸມຕ່າງໆພາຍໃຕ້ຂອບຂອງສົນທິສັນຍາດັ່ງກ່າວ.

ໜ່ວຍບໍລິການເກັບກູ້ລະເບີດຂອງ ອົງການ ສປຊ (UNMAS), ພາຍໃຕ້ ຍຸດທະສາດການເກັບກູ້ລະເບີດຂອງອົງການ ສປຊ 2019-2023, ໄດ້ກ່າວເຖິງບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍພາຍໃຕ້ ຜົນໄດ້ຮັບຍຸດທະສາດທີ 2 ວ່າດ້ວຍແຜນງານການເກັບກູ້ລະເບີດ ທີ່ແນໃສ່ຮັບມືກັບຄວາມຕ້ອງການອັນສະເພາະຂອງແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍຈາກກຸ່ມທີ່ມີຄວາມຫຼາກຫຼາຍ, ໃນຂະນະດຽວກັນກໍ່ຊ່ວຍອຳນວຍຄວາມສະດວກຕໍ່ການຍົກສູງບົດບາດ ແລະ ການສົ່ງເສີມຄວາມກວມລວມໃຫ້ແກ່ພວກເຂົາ. ຜົນໄດ້ຮັບດັ່ງກ່າວແມ່ນຖືກສະແດງໄວ້ຢ່າງຄົບຖ້ວນໃນ ຮູບທີ 2 ພ້ອມທັງທິດຊີ້ນຳອັນຊັດເຈນກ່ຽວກັບແນວທາງແຫ່ງຊາດ ຕໍ່ບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ. ມັນໄດ້ຖືກນຳໃຊ້ເປັນມາດຕະການໜຶ່ງໃນການຮັບປະກັນຄວາມສອດຄ່ອງໃຫ້ແກ່ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ໃນບົດລາຍງານສະບັບນີ້.

**ຮູບທີ 2: ຍຸດທະສາດການເກັບກູ້ລະເບີດຂອງ ອົງການ ສປຊ 2019-2023**

ແຫຼ່ງຂໍ້ມູນ: UNMAS 2019b, ໜ້າທີ 23.

## CROSS-CUTTING STRATEGIC OUTCOME 2

Mine action programmes address the specific needs of women, girls, men and boys, from diverse groups, while facilitating their empowerment and inclusion.

### CONTRIBUTING OUTCOME AREAS

**(1)** Protecting individuals and communities from explosive ordnance.

**(2)** Assistance to victims of explosive ordnance.

**(3)** Strengthening national capacities for mine action.

### UNITED NATIONS OUTPUTS

**1.1** Ensuring gender and age sensitive approaches to the surveying, prioritization and procedures for handover of cleared land.

**1.2** Ensuring that risk education programmes target the specific behavior of at-risk women, grils, boys and men.

**1.3** Facilitating incorporation of geneder, age and other social, economic, cultural and religious considerations in risk education programmes.

**1.4** Ensuring that institutional risk mitigation capacities cater to the specific needs of women, girls, men and boys, while specifically recognizing the role and capacity of womne as agents of change in households and within affected communities.

**2.1** Ensuring that assistance is gender responsive, addresses specific gender and age needs and requirements, and is inclusive of all members of the affected population.

**2.2** Supporting participatory, consultative and age and geneder disaggregated approaches to data collection, analysis and montoring in support of multi-sector assistance strategies.

**2.3** Advocating for and supporting gender parity, among health, rehabilitation and social-support workers to ensure that the specific needs of women, girls, boys and men are addressed.

**2.4** Taking into consideration the principle of “do no harm” so that inclusive and empowering assistance does no exacerbate the exposure of risks to Gender Based Violence (GBV).

**3.1** Promoting a gender and diversity focu in development of national mine action capacities, including NGOs and civil society, in order to ensure that the different needs and priorities of women, girls, boys and men from diverse groups are effectively addressed.

**3.2** Advocating for a geneder an socially inclusive approach in the development of national policies, legal frameworks and plans for mine action.

**3.3** Advocating for gender equality and non-discrimination in employment and decision making opportunities in mine action programming.



UNMAS ຂໍ້ຊີ້ນຳດ້ານບົດບາດຍິງຊາຍສຳລັບແຜນງານເກັບກູ້ລະເບີດ ສະບັບທຳອິດ (2005) ແມ່ນໄດ້ຖືກແປມາເປັນພາສາລາວ. ສະບັບປັດຈຸບັນ ແລະ ສະບັບທີສາມ (2019) ແມ່ນມີຄວາມສອດຄ່ອງກັບຍຸດທະສາດການເກັບກູ້ລະເບີດຂອງ ອົງການ ສປຊ 2019-2023. ຂໍ່ຊີ້ນຳເຫຼົ່ານີ້ໄດ້ຮັບຮອງເອົາມຸມມອງດ້ານຄວາມຫຼາກຫຼາຍ ພ້ອມທັງເພີ່ມທະວີຄວາມເອົາໃຈໃສ່ຕໍ່ຂັ້ນຕອນການຄຸ້ມຄອງ ແລະ ເປົ້າໝາຍທີ່ກ່ຽວຂ້ອງກັບການຈ້າງງານ, ອົງປະກອບຂອງທີມ ແລະ ທີມງານທີ່ປະສົມປະສານກັນລະຫວ່າງຍິງຊາຍ, ຫຼັກປະຕິບັດ, ນະໂຍບາຍ ແລະ ຫຼັກການດຳເນີນວຽກພາຍໃນ, ແລະ ສິ່ງອຳນວຍຄວາມສະດວກ ແລະ ສະພາບແວດລ້ອມຂອງສະຖານທີ່ເຮັດວຽກ.

ຂໍ້ຊີ້ນຳເຫຼົ່ານີ້ຍັງລວມມີຄຳນຳທີ່ໄດ້ມາຈາກ ຮອງເລຂາທິການໃຫຍ່ຂອງ ອົງການ ສປຊ ທີ່ຮັບຜິດຊອບ ກົມສັນຕິພາບ ແລະ ປະຕິບັດການ ໂດຍມີເນື້ອໃນດັ່ງຕໍ່ໄປນີ້:

> ໜຶ່ງໃນຫ້າຜົນໄດ້ຮັບຍຸດທະສາດ ໄດ້ຮຽກຮ້ອງໃຫ້ມີການເຊື່ອມສານຄາມຕ້ອງການອັນສະເພາະຂອງແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍຈາກກຸ່ມທີ່ມີຄວາມຫຼາກຫຼາຍ, ໃນຂະນະດຽວກັນກໍ່ອຳນວຍຄວາມສະດວກຕໍ່ການຍົກສູງບົດບາດ ແລະ ຄວາມກວມລວມ, ໃນລັກສະນະທີ່ມີຄວາມເກາະກ່າຍກັນກັບທຸກພາກສ່ວນຂອງແຜນງານເກັບກູ້ລະເບີດ. ຂ້າພະເຈົ້າເຊື່ອໝັ້ນວ່າຂໍ້ຊີ້ນຳເຫຼົ່ານີ້ ຈະຊ່ວຍສະໜອງທິດຊີ້ນຳອັນສອດຄ່ອງ, ທີ່ປະຕິບັດໄດ້ຈິງບໍ່ພຽງໃຫ້ແກ່ ອົງການ ສປຊ ນຳໄປຊ່ວຍເຂົ້າໃນການຈັດຕັ້ງປະຕິບັດຍຸດທະສາດຂອງພວກເຂົາເທົ່ານັ້ນ, ແຕ່ຍັງລວມໄປເຖິງ ທົ່ວທັງຂະແໜງການທີ່ມີເປົ້າໝາຍແນໃສ່ສ້າງໂລກຂອງພວກເຮົາ ໃຫ້ປາສະຈາກໄພຄຸກຄາມອັນຕະລາຍຕໍ່ຊີວິດເຫຼົ່ານີ້ໄດ້.

**ຜົນໄດ້ຮັບ**

- ⇨ ປະຕິບັດການພາກສະໜາມຄັ້ງທີສາມບໍ່ພົບຂໍ້ມູນຫຼັກຖານອັນໃດເລີຍ ທີ່ປາກົດວ່າມີການນຳເອົາພັນທະສັນຍາຂອງ ອົງການ ສປຊ ກ່ຽວກັບບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໄປຈັດຕັ້ງປະຕິບັດໃນຂະແໜງການ ລບຕ ຂອງ ສປປ ລາວ ຫຼື ມີການນຳໃຊ້ຂໍ້ຊີ້ນຳດັ່ງກ່າວ. ບໍ່ມີລັດຖະກອນ ຫຼື ພະນັກງານ ລບຕ ຄົນໃດທີ່ຊີ້ໃຫ້ເຫັນວ່າພວກເຂົາຮູ້ຈັກກ່ຽວກັບ ພັນທະສັນຍາດັ່ງກ່າວ ຫຼື ຂໍ້ຊີ້ນຳຕ່າງໆທີ່ກ່ຽວຂ້ອງ, ເຖິງແມ່ນວ່າ ຂໍ້ຊີ້ນຳດ້ານບົດບາດຍິງຊາຍສຳລັບແຜນງານເກັບກູ້ລະເບີດ ສະບັບທີ 2005 ຈະໄດ້ຮັບການແປເປັນພາສາລາວມາແລ້ວກໍ່ຕາມ.

**ໝາຍເຫດ**

- ⇨ ຍ້ອນມາດຕະຖານສາກົນທີ່ອະທິບາຍໄວ້ໃນ ຍຸດທະສາດການເກັບກູ້ລະເບີດຂອງ ອົງການ ສປຊ 2019-2023 ແລະ ຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ ອົງການ ສປຊ ສຳລັບແຜນງານການເກັບກູ້ລະເບີດ (2019) ແມ່ນເພື່ອແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ, ໂດຍສອດຄ່ອງກັບຂໍ້ຕົກລົງຮ່ວມກັບ ອົງການ UNDP, ບົດລາຍງານສະບັບນີ້ຈຶ່ງໄດ້ຮັບຮອງເອົາມຸມມອງດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍສຳລັບໂຄງການນີ້ ລວມໄປເຖິງແຜນການດຳເນີນງານທີ່ກ່ຽວຂ້ອງ.

**ຂໍ້ແນະນຳທີ 1**

- ⇨ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ຈະຕ້ອງສອດຄ່ອງກັບມາດຕະຖານສາກົນຂອງ ອົງການ ສປຊ ທີ່ ສປປ ລາວ, ໃນຖານະຂອງລັດສະມາຊິກ, ເຫັນດີນຳ.
- ⇨ ເອກະສານຊີ້ນຳທີ່ຖືກສ້າງຂຶ້ນໂດຍ UNMAS ຈະຕ້ອງຖືກນຳໃຊ້ເພື່ອເຊື່ອມສານບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້າໃນຂະແໜງການ ລບຕ, ພ້ອມໃຫ້ມີການດັດແກ້ຕາມຄວາມຈຳເປັນ ໂດຍອີງຕາມສະພາບການອັນສະເພາະຂອງ ສປປ ລາວ.

## 2.2 ສູນເກັບກູ້ລະເບີດເພື່ອມະນຸດຊະທຳ, ບົດບາດຍິງຊາຍ ແລະ ແກ້ໄຂບັນຫາລະເບີດບໍ່ທັນແຕກສາກົນແຫ່ງເຊີແນວ, ແລະ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ

GICHD, GMAP ແລະ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ມີບົດບາດການເປັນຜູ້ນຳພາທີ່ສຳຄັນດ້ານວຽກງານບົດບາດຍິງຊາຍໃນຂະແໜງການ ລບຕ. ເອກະສານສ່ວນໃຫຍ່ທີ່ລະບຸໄດ້ ຜ່ານຂັ້ນຕອນການທົບທວນຄືນບົດຄວາມ ແມ່ນລ້ວນແລ້ວແຕ່ມາຈາກ GICHD ແລະ GMAP (GMAP ຕອນນີ້ໄດ້ກາຍມາເປັນຫົວໜ່ວຍອັນໜຶ່ງພາຍໃຕ້ GICHD ແລ້ວ) ຫຼື ເປັນບົດຄວາມທີ່ພະນັກງານຂອງ GICHD ແລະ GMAP ເປັນຜູ້ຂຽນຂຶ້ນ. ເອກະສານເຫຼົ່ານີ້ຊ່ວຍສະໜອງບົດຄົ້ນຄວ້າທີ່ອີງໃສ່ຫຼັກຖານ, ບົດວິເຄາະ ແລະ ຂໍ້ຊີ້ນຳດ້ານຫຼັກປະຕິບັດທີ່ດີທີ່ສຸດ ໃຫ້ບັນດາລັດຖະບານແຫ່ງຊາດ ແລະ ຄູ່ຮ່ວມມືໃນຂະແໜງການ ລບຕ ນຳເອົາໄປໃຊ້. ພວກມັນສາມາດ

ຊ່ວຍເຂົ້າໃນການຈັດຕັ້ງປະຕິບັດ ແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ.

ໃນປີ 2021, GICHD ໄດ້ເປີດໂຕ ນະໂຍບາຍຄວາມສະເໝີພາບ ແລະ ຄວາມກວມລວມລະຫວ່າງຍິງຊາຍ ພ້ອມທັງ ແຜນການດໍາເນີນງານດ້ານຄວາມສະເໝີພາບ ແລະ ຄວາມກວມລວມລະຫວ່າງຍິງຊາຍ ເພື່ອຜັນຂະຫຍາຍພັນທະສັນຕ່າງໆຈາກນະໂຍບາຍ ໃຫ້ກາຍມາເປັນການດໍາເນີນງານທີ່ສາມາດວັດຜົນໄດ້, ເປັນເປົ້າໝາຍທີ່ບັນລຸໄດ້ແທ້ຈິງ ແລະ ເປັນຮູບປະທໍາ. ເປົ້າໝາຍຂອງນະໂຍບາຍ ແລະ ແຜນການດັ່ງກ່າວ ແມ່ນເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງກັບ ຂອບວຽກສະຖາບັນຂອງ GICHD. ພວກມັນຊ່ວຍປະກອບສ່ວນເຂົ້າໃນການສົ່ງເສີມຄວາມສະເໝີພາບ ແລະ ຄວາມກວມລວມລະຫວ່າງຍິງຊາຍ; ຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍທີ່ມີພູມຫຼັງທີ່ແຕກຕ່າງກັນນັ້ນ ສາມາດມີສ່ວນຮ່ວມ ແລະ ໄດ້ຮັບປະໂຫຍດຈາກວຽກງານ ແລະ ບໍລິການຕ່າງໆໄດ້ຢ່າງຄົບຖ້ວນ ແລະ ເທົ່າທຽມ; ຮັບປະກັນໃຫ້ວັດທະນະທໍາອົງກອນມີຄວາມກວມລວມ, ເອື້ອອໍານວຍ ແລະ ປາສະຈາກຄວາມລໍາອຽງ ຫຼື ການຈໍາແນກ; ແລະ ສະໜອງຄວາມສາມາດໃນການເຂົ້າເຖິງໂອກາດ ແລະ ສິດທິປະໂຫຍດດ້ານການຈ້າງງານຢ່າງເປັນທໍາ, ເທົ່າທຽມ ແລະ ໂປ່ງໃສ. ເປົ້າໝາຍແຕ່ລະອັນເຫຼົ່ານີ້ປະກອບມີໂຕຊີ້ວັດຕ່າງໆ ພ້ອມດ້ວຍຂໍ້ມູນທຽບຖານທີ່ກ່ຽວຂ້ອງ, ເປົ້າໝາຍສໍາລັບແຕ່ລະປີ ແລະ ຜົນໄດ້ຮັບປະຈໍາປີ. ເອກະສານເຫຼົ່ານີ້ຊ່ວຍສະໜອງຫຼັກປະຕິບັດທີ່ດີໃຫ້ແກ່ຂະແໜງການ.

## ເຄື່ອງມືຊີ້ນໍາຂອງ GICHD/GMAP

ຊັບພະຍາກອນຕົ້ນຕໍທີ່ຖືກສ້າງຂຶ້ນໂດຍ GICHD/GMAP ທີ່ຊ່ວຍສະໜອງຂໍ້ຊີ້ນໍາດ້ານການປະຕິບັດໂຕຈິງໃນຂະແໜງການລວມມີ:

- ບົດບາດຍິງຊາຍ ແລະ ການກໍານົດບຸລິມະສິດໃນຂະແໜງການເກັບກູ້ລະເບີດ (2012)
- ຂັ້ນຕອນການຈ້າງງານ ແລະ ການຝຶກອົບຮົມທີ່ຄໍານຶງເຖິງບົດບາດຍິງຊາຍໃນຂະແໜງການເກັບກູ້ລະເບີດ - ຂໍ້ຊີ້ນໍາ (2013)
- ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານຄຸ້ມຄອງຄຸນນະພາບໃນຂະແໜງການເກັບກູ້ລະເບີດ (2014)
- ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານຄຸ້ມຄອງສັນຍາ ແລະ ທຶນໃນຂະແໜງການເກັບກູ້ລະເບີດ (2014)
- ການຊ່ວຍເຫຼືອຜູ້ປະສົບໄພທີ່ຕອບສະໜອງໄດ້ຕໍ່ມຸມມອງດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ (2018)

ບົດບາດຍິງຊາຍ ແລະ ການກໍານົດບຸລິມະສິດໃນຂະແໜງການເກັບກູ້ລະເບີດ ຊ່ວຍລະບຸຂັ້ນຕອນຕ່າງໆໃນການລວບລວມຂໍ້ມູນ ແລະ ຄວາມຕ້ອງການສໍາລັບບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ (ຕາມແນວທາງແຕ່ລຸ່ມຂຶ້ນເທິງ) ຫຼາຍກວ່າການຈັດສັນຊັບພະຍາກອນຂອງລັດຕາມແນວທາງແຕ່ເທິງລົງລຸ່ມ. ມັນຍັງຊ່ວຍສະໜອງຂໍ້ຊີ້ນໍາດ່ຽວກັບຂັ້ນຕອນຕ່າງໆ ໃນການປຶກສາຫາລືກັບປະຊາຊົນໃນທ້ອງຖິ່ນທີ່ມີເພດ, ອາຍຸ ແລະ ສະຖານະທາງເສດຖະກິດ-ສັງຄົມທີ່ແຕກຕ່າງກັນ ເພື່ອຮັບປະກັນໃຫ້ການເຄື່ອນໄຫວ ແລະ ຊັບພະຍາກອນທີ່ມີນັ້ນ ຊ່ວຍໃຫ້ບັນລຸໄດ້ຜົນສະທ້ອນທີ່ຫາໃຍ່ຫຼວງທີ່ສຸດ. ມັນຍັງລວມມີຂັ້ນຕອນການປະຕິບັດໂຕຈິງສໍາລັບການວິເຄາະບົດບາດຍິງຊາຍ ໄປພ້ອມໆກັບການສະໜອງເຄື່ອງມືພາກສະໜາມ.

ຂັ້ນຕອນການຈ້າງງານ ແລະ ການຝຶກອົບຮົມທີ່ຄໍານຶງເຖິງບົດບາດຍິງຊາຍໃນຂະແໜງການເກັບກູ້ລະເບີດ - ຂໍ້ຊີ້ນໍາ (2013) ຊ່ວຍຊີ້ໃຫ້ເຫັນເຖິງຂັ້ນຕອນຕ່າງໆ ເພື່ອແກ້ໄຂບັນຫາດ້ານບົດບາດຍິງຊາຍ ໃນຂັ້ນຕອນການຈ້າງງານ ແລະ ການຝຶກອົບຮົມພະນັກງານໃນທຸກຂົງເຂດ ແລະ ທຸກລະດັບຂອງວຽກງານເກັບກູ້ລະເບີດ ແລະ ການອານຸຍາດນໍາໃຊ້ເນື້ອທີ່ດິນ, ລວມໄປເຖິງການສໍາຫຼວດແບບບໍ່ແມ່ນວິຊາການ ແລະ ການສໍາຫຼວດທາງດ້ານວິຊາການ, ການກໍານົດແຜນທີ່, ການເກັບກູ້ລະເບີດ, ການໝາຍຈຸດ, ການປະສານວຽກງານກັບຊຸມຊົນ ແລະ ການສົ່ງມອບເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວ. ກໍລະນີສຶກສາກ່ຽວກັບຫຼັກປະຕິບັດທີ່ດີ ແມ່ນໄດ້ຖືກສະໜອງໄວ້ໃຫ້ແກ່ຫຼາຍປະເທດ, ເຮັດໃຫ້ເຄື່ອງມືດັ່ງກ່າວນັ້ນ ມີຄວາມສອດຄ່ອງກັບຫຼາກຫຼາຍອົງການຈັດຕັ້ງ.

ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານຄຸ້ມຄອງຄຸນນະພາບໃນຂະແໜງການເກັບກູ້ລະເບີດ (2014) ແມ່ນຊຸດຂໍ້ຊີ້ນໍາອັນກວ້າງຂວາງທີ່ຖືກອອກແບບມາເພື່ອຊ່ວຍຄູ່ຮ່ວມງານໃນຂະແໜງການເກັບກູ້ລະເບີດໃຫ້ສາມາດເຊື່ອມສານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້າໃນວຽກງານຄຸ້ມຄອງຄຸນນະພາບ ແລະ ວຽກງານດ້ານເອກະສານໄດ້. ມັນລວມມີລາຍການກວດສອບສໍາລັບວຽກງານການເຊື່ອມສານ, ເຊັ່ນ: ມາດຕະຖານການເກັບກູ້ລະເບີດແຫ່ງຊາດ, ມາດຕະຖານ ແລະ ຂໍ້ຊີ້ນໍາດ້ານວິຊາການແຫ່ງຊາດ, ມາດຕະຖານລະບຽບການປະຕິບັດງານ, ແລະ ການວາງແຜນ, ການຮັບປະກັນ ແລະ ການຄວບຄຸມຄຸນນະພາບ. ຂໍ້ຊີ້ນໍາດັ່ງກ່າວຍັງປະກອບມີຂໍ້ແນະນໍາຕ່າງໆໃນການແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂັ້ນຕອນການຢັ້ງຢືນຮັບຮອງ ລວມທັງໃນກົນໄກການຕິດຕາມກວດກາ ແລະ ປະເມີນຜົນນໍາອີກ.

ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານຄຸ້ມຄອງສັນຍາ ແລະ ທຶນໃນຂະແໜງການເກັບກູ້ລະເບີດ (2014) ຂອງ GMAP ແລະ GICHD ຊ່ວຍສະໜອງລາຍການກວດສອບ ເພື່ອຮັບປະກັນໃຫ້ຂໍ້ພິຈາລະນາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຖືກເຊື່ອມສານເຂົ້າໃນວຽກງານການດໍາເນີນເອກະສານສັນຍາ ແລະ ການຄຸ້ມຄອງທຶນ, ລວມທັງຄໍາຮ້ອງຂໍຂໍ້ສະເໜີ, ການເຊີນເຂົ້າຮ່ວມປະມູນ, ການປະກາດຫາຄູ່ຮ່ວມງານທີ່ສົນໃຈ, ແບບຟອມຍື່ນຂໍທຶນ, ແຈ້ງການກ່ຽວກັບວຽກງານ, ສັນຍາ ແລະ ຂໍ້ຕົກລົງກ່ຽວກັບທຶນ. ຊັບພະຍາກອນນີ້ຍັງໄດ້ສະໜອງຂໍ້ແນະນໍາກ່ຽວກັບວິທີໃນການໂຮມເອົາ ຂໍ້ພິຈາລະນາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້າໃນກົນໄກການພິຈາລະນາ, ການຕິດຕາມກວດກາ ແລະ ການປະເມີນຜົນ. ຊຸດເຄື່ອງມືດັ່ງກ່າວແມ່ນມີຄວາມຮອບດ້ານ ແລະ ສາມາດນໍາໄປປະຕິບັດໄດ້ຈິງໂດຍຄູ່ຮ່ວມງານໃນຂະແໜງການ.

### ຜົນໄດ້ຮັບ

- ຜົນໄດ້ຮັບຂອງບົດລາຍງານ ແລະ ຂໍ້ແນະນໍາຈາກການປະເມີນຜົນແມ່ນຍັງບໍ່ທັນໄດ້ຖືກນໍາໄປຈັດຕັ້ງປະຕິບັດ.

### ຂໍ້ແນະນໍາທີ 2

- ຍ້ອນວ່າ GICHD ແລະ GMAP ໄດ້ສ້າງຂໍ້ຊີ້ນໍາອັນສໍາຄັນກ່ຽວກັບບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານການກໍານົດບຸລິມະສິດ, ການຈ້າງງານ ແລະ ການຝຶກອົບຮົມ, ການຄຸ້ມຄອງຄຸນນະພາບ, ການຄຸ້ມຄອງສັນຍາ ແລະ ການຄຸ້ມຄອງທຶນ, ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ດັ່ງນັ້ນຊັບພະຍາກອນທີ່ເປັນແກນກາງເຫຼົ່ານີ້ ກໍ່ຈະຊ່ວຍສະໜອງການສະໜັບສະໜຸນອັນສໍາຄັນເຂົ້າໃນການຈັດຕັ້ງປະຕິບັດ ແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ.




© Sasha Popovic



© Sasha Popovic

# 3 ນະໂຍບາຍຂອງ ສປປ ລາວ ວ່າດ້ວຍ ລບຕ ແລະ ການປະເມີນຜົນແຫ່ງຊາດ ດ້ານບົດບາດຍິງ-ຊາຍ



ລາວ. ພາກສ່ວນທຳອິດແມ່ນການວິເຄາະນະໂຍບາຍແຫ່ງຊາດ ແລະ ເອກະສານຊີ້ນຳຕົ້ນຕໍໃນການເຊື່ອມສານບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ຍ້ອນພວກມັນມີຄວາມກ່ຽວພັນກັບຂະແໜງການ ລບຕ. ພາກສ່ວນທີສອງແມ່ນການພິຈາລະນາການຊ່ວຍເຫຼືອທີ່ NRA ສະໜອງໃຫ້ໂດຍສະເພາະ. ພາກສ່ວນທີສາມແມ່ນເນັ້ນໜັກໃສ່ການປະເມີນບັນຫາດ້ານບົດບາດຍິງຊາຍທີ່ສຳຄັນ ທີ່ໄດ້ຮັບການດຳເນີນງານໃນຂະແໜງການ ລບຕ ໃນ ສປປ ລາວ.

## 3.1 ນະໂຍບາຍແຫ່ງຊາດ ແລະ ເອກະສານຊີ້ນຳ

ພາກສ່ວນນີ້ແນໃສ່ກວດສອບນະໂຍບາຍແຫ່ງຊາດ ແລະ ເອກະສານຊີ້ນຳ ທີ່ກ່ຽວຂ້ອງກັບຂະແໜງການ ລບຕ ໂດຍສະເພາະ. ສ່ວນນະໂຍບາຍແຫ່ງຊາດອື່ນໆທີ່ກ່ຽວຂ້ອງກັບແມ່ຍິງ, ຄົນພິການ ແລະ ກຸ່ມຊົນເຜົ່າຕ່າງໆແມ່ນຈະຖືກອະທິບາຍໄວ້ໃນ ພາກທີ 8. ຂະບວນການທົບທວນຄືນແຫ່ງຊາດແບບສະໝັກໃຈ ຂອງ ສປປ ລາວ ໃນປີ 2021 ວ່າດ້ວຍການຈັດຕັ້ງປະຕິບັດ ວາລະ 2030 ເພື່ອການພັດທະນາແບບຍືນຍົງ ໄດ້ລາຍງານກ່ຽວກັບ ເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) 5 ວ່າດ້ວຍຄວາມສະເໝີພາບຍິງຊາຍ ແລະ ການຍົກສູງບົດບາດໃຫ້ແກ່ແມ່ຍິງ, ແຕ່ບໍ່ໄດ້ອ້າງອີງເຖິງບັນຫາທີ່ກ່ຽວຂ້ອງກັບ ລບຕ ເລີຍ. ໃນທາງກົງກັນຂ້າມ, ປພຍ ແຫ່ງຊາດລຳດັບທີ 18 ວ່າດ້ວຍຂະແໜງການ ລບຕ ພັດບໍ່ໄດ້ເວົ້າເຖິງບັນຫາດ້ານບົດບາດຍິງຊາຍເລີຍ, ມີແຕ່ອ້າງອີງເຖິງ “ຜູ້ລອດຊີວິດຈາກ ລບຕ ແລະ ຄອບຄົວຂອງພວກເຂົາ.” ເຖິງຢ່າງໃດກໍ່ຕາມ, ພາຍໃຕ້ຄາດໝາຍທີ 18.1, ໂຕຊີ້ວັດຕ່າງໆພາຍໃຕ້ຄາດໝາຍນີ້ ລວມມີຈຳນວນທີ່ໄດ້ຮັບແຈ້ງກ່ຽວກັບຜູ້ປະສົບໄພ ແລະ ຜູ້ເສຍຊີວິດຈາກ ລບຕ ໂດຍແບ່ງອອກເປັນກຸ່ມອາຍຸ ແລະ ເພດ (18.1.1) ແລະ ອັດຕາສ່ວນຮ້ອຍຂອງປະຊາກອນໃນເຂດບ້ານທີ່ມີ ລບຕ ຕົກຄ້າງຢູ່ ທີ່ມີຂໍ້ມູນກ່ຽວກັບພື້ນທີ່ຢັ້ງຢືນອັນຕະລາຍໃນເຂດບ້ານຂອງພວກເຂົາ (ແບ່ງຕາມກຸ່ມອາຍຸ, ເພດ ແລະ ຄວາມພິການ) (18.1.2), ໃນຂະນະດຽວກັນກໍ່ຊີ້ໃຫ້ເຫັນວ່າບໍ່ໄດ້ມີການລາຍງານຂໍ້ມູນຄວາມພິການພາຍໃຕ້ໂຕຊີ້ວັດນີ້.

ແຜນການດຳເນີນງານແຫ່ງຊາດ 5 ປີຄັ້ງທີ 4 ວ່າດ້ວຍຄວາມສະເໝີພາບຍິງຊາຍ (NPAGE) 2021-2025, ທີ່ຖືກເປີດໂຕໃນປີ 2021, ມີການອ້າງອີງເຖິງແມ່ຍິງຜູ້ພິການ, ແຕ່ບໍ່ໄດ້ກ່າວເຖິງ ລບຕ ເລີຍ. ເອກະສານດັ່ງກ່າວກຳນົດຄາດໝາຍໃຫ້ຂະແໜງການຕ່າງໆກວມ 80 ສ່ວນຮ້ອຍຕ້ອງເກັບກຳຂໍ້ມູນສະຖິຕິໂດຍແບ່ງອອກເປັນກຸ່ມເພດ, ອາຍຸ, ຄວາມພິການ, ກຸ່ມຊົນເຜົ່າ, ທີ່ພັກອາໄສ ແລະ ສະຖານະທາງເສດຖະກິດ-ສັງຄົມ.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 9 (NSEDP) 2021-2025, ທີ່ຖືກເປີດໂຕໃນປີ 2021, ປະກອບມີ 6 ເປົ້າໝາຍຈຸດສຸມຕົ້ນຕໍພ້ອມດ້ວຍໝາກຜົນຕ່າງໆ. ເປົ້າໝາຍຈຸດສຸມທີ 3, ວ່າດ້ວຍການສົ່ງເສີມ ແລະ ການພັດທະນາແມ່ຍິງ, ເຍົາວະຊົນ ແລະ ໄວໜຸ່ມ, ບໍ່ໄດ້ກ່າວເຖິງບັນຫາ ລບຕ ເລີຍ. ໝາກຜົນທີ 6, ວ່າດ້ວຍການເລັ່ງລັດການເກັບກູ້ ລບຕ ຢ່າງຕໍ່ເນື່ອງ ແລະ ເພີ່ມທະວີຄວາມປອດໄພຈາກ ລບຕ ໃຫ້ແກ່ທຸກຄົນ, ບໍ່ໄດ້ກ່າວເຖິງແມ່ຍິງ ຫຼື ເພດໃດໜຶ່ງໂດຍສະເພາະເລີຍ, ແຕ່ໄດ້ກ່າວວ່າ:

> ...ເຫັນໄດ້ຊັດເຈນແລ້ວວ່າຈຳນວນພື້ນທີ່ທີ່ເກັບກູ້ ລບຕ ມາຮອດປັດຈຸບັນນີ້ ແມ່ນຍັງບໍ່ພຽງພໍໃນການຕອບສະໜອງໄດ້ຕໍ່ຄວາມຮຽກຮ້ອງຕ້ອງການທີ່ເພີ່ມຂຶ້ນຂອງປະຊາຊົນ ແລະ ການພັດທະນາເສດຖະກິດ-ສັງຄົມ, ເນື່ອງຈາກມີຊັບພະຍາກອນ, ທຶນຮອນ ແລະ ຂີດຄວາມສາມາດດ້ານວິຊາການທີ່ຈຳກັດ.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 8 ໄດ້ຄິດໄລ່ອັດຕາການເສຍຊີວິດ ແລະ ການບາດເຈັບຈາກ ລບຕ ໂດຍໃຊ້ຫົວໜ່ວຍເປັນ “ຄົນ” - ໝາຍຄວາມວ່າບໍ່ມີການແບ່ງຂໍ້ມູນອອກເປັນກຸ່ມເພດ. ຂອບວຽກການຕິດຕາມກວດກາ ແລະ ການປະເມີນຜົນສຳລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ລວມມີໂຕຊີ້ວັດລຳດັບທີ 113, ວ່າດ້ວຍຈຳນວນຂອງຜູ້ປະສົບໄພຈາກ ລບຕ ໂດຍແບ່ງຕາມກຸ່ມອາຍຸ ແລະ ເພດ, ທີ່ຊ່ວຍໄຈ້ແຍກຈຳນວນຜູປະສົບໄພອອກໂດຍອີງຕາມເພດຂອງຜູ້ໃຫຍ່ ແລະ ເດັກນ້ອຍ. ໂຕຊີ້ວັດລຳດັບທີ 117 ເກັບກຳຈຳນວນຂອງຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍຈາກ ລບຕ ທີ່ໄດ້ຮັບການປິ່ນປົວທາງການແພດ, ການຟື້ນຟູສຸຂະພາບຈິດ, ການຟື້ນຟູໜ້າທີ່ການ, ການຝຶກອົບຮົມ ແລະ ການຈ້າງງານ, ແລະ ການສະໜັບສະໜຸນດ້ານສິດທິຂອງຄົນພິການ.

ບົດລາຍງານປະຈຳປີ 2021 ຂອງຂະແໜງການ ລບຕ ໄດ້ລາຍງານຂໍ້ມູນກ່ຽວກັບໂຕຊີ້ວັດ ປພຍ ແຫ່ງຊາດ ລຳດັບ 18.1.1, ກໍ່ຄືຈຳນວນຂອງຜູ້ປະສົບເຄາະຮ້າຍຈາກ ລບຕ ທີ່ໄດ້ຮັບແຈ້ງມາໂດຍແບ່ງເປັນກຸ່ມອາຍຸ ແລະ ເພດ. ສຳລັບປີ 2021, ຂໍ້ມູນນີ້ປະກອບມີຜູ້ເສຍຊີວິດທີ່ເປັນຜູ້ຊາຍ 8 ຄົນ ແລະ ເດັກຊາຍ 6 ຄົນ ພ້ອມທັງຜູ້ບາດເຈັບທີ່ເປັນຜູ້າຍ 15 ຄົນ ແລະ ເດັກຊາຍ 15 ຄົນ. ສຳລັບແມ່ຍິງ, ຂໍ້ມູນນີ້ໄດ້ຊີ້ໃຫ້ເຫັນວ່າບໍ່ມີຜູ້ເສຍຊີວິດທີ່ເປັນເດັກຍິງ, ແຕ່ມີຜູ້ເສຍຊີວິດທີ່ເປັນແມ່ຍິງ 2 ຄົນ, ພ້ອມທັງຜູ້ບາດເຈັບທີ່ເປັນແມ່ຍິງ 9 ຄົນ ແລະ ເດັກຍິງ 8 ຄົນ.

ແຜນຍຸດທະສາດແຫ່ງຊາດສຳລັບຂະແໜງການ ລບຕ ໃນ ສປປ ລາວ 2021-2030, ເສັ້ນທາງກ້າວສູ່ຄວາມປອດໄພ III, ກ່າວວ່າ:

- ການໂຮມໂຕກັນ ແລະ ການມີສ່ວນຮ່ວມຈາກຫຼາຍຂະແໜງການ ຖືເປັນກົນໄກທີ່ສຳຄັນໃນການບັນລຸໄດ້ວິໄສທັດພາຍໃຕ້ SPF III, ໂດຍສະເພາະໃນດ້ານການເຊື່ອມສານວຽກງານດ້ານບົດບາດຍິງຊາຍ ແລະ ການປົກປັກຮັກສາສິ່ງແວດລ້ອມ.
- ໃນອະດີດ, ວຽກງານດ້ານບົດບາດຍິງຊາຍ ກໍ່ໄດ້ຖືກໂຮມເຂົ້າໄວ້ໃນຂະແໜງການ ລບຕ ເຊັ່ນກັນ, ເຊັ່ນ: ໂດຍຜ່ານການໂຄສະນາສຶກສາຄວາມສ່ຽງຈາກ ລບຕ , ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ແລະ ການສຳຫຼວດ ແລະ ການເກັບກູ້ ລບຕ. ນອກຈາກນັ້ນ, ຂໍ້ມູນຈຳແນກເພດ ແລະ ອາຍຸຍັງໄດ້ຖືກເກັບກຳເຂົ້າໄວ້ໃນຖານຂໍ້ມູນ ລບຕ ນຳອີກ.
- ການເຊື່ອມສານວຽກງານບົດບາດຍິງຊາຍ ແມ່ນສິ່ງທີ່ສຳຄັນສຳລັບ ແຜນຍຸດທະສາດຂອງຂະແໜງການ ລບຕ / ລະເບີດຝັງດິນ ແລະ ແຜນວຽກຕ່າງໆ. ຂໍ້ມູນຈະຕ້ອງຖືກຈຳແນກອອກເປັນກຸ່ມເພດ ແລະ ອາຍຸ, ແລະ ແມ່ຍິງຈະຕ້ອງມີສ່ວນຮ່ວມເຂົ້າໃນການວາງແຜນວຽກ ແລະ ການຈັດຕັ້ງປະຕິບັດໂຄງການຕ່າງໆ.
- ຄວາມຕື່ນໂຕ ແລະ ຄວາມສະເໝີພາບລະຫວ່າງຍິງຊາຍ: ລະບົບການຕິດຕາມກວດກາ ແລະ ປະເມີນຜົນ ຈະຕ້ອງອີງໃສ່ການມີສ່ວນຮ່ວມຢ່າງຄົບຖ້ວນຂອງຜູ້ຊາຍ ແລະ ແມ່ຍິງ, ແລະ ຕ້ອງສົ່ງເສີມຄວາມສະເໝີພາບ.

SPF III ອ້າງອີງຂໍ້ມູນມາຈາກ ສົນທິສັນຍາຂອງ ອົງການ ສປຊ ວ່າດ້ວຍການລຶບລ້າງການຈຳແນກຕໍ່ແມ່ຍິງທຸກຮູບແບບ (CEDAW), ທີ່ ສປປ ລາວ ໃຫ້ສັດຕະຍະບັນໃນປີ 1980. ໃນດ້ານກຸ່ມຊົນເຜົ່າ, SPF III ໄດ້ກ່າວວ່າ:

- ຂັ້ນຕອນການແກ້ໄຂບັນຫາ ລບຕ ນີ້ຍັງລວມມີການສ້າງໂອກາດ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ການພັດທະນາ, ການປົກປ້ອງ ແລະ ການຊ່ວຍເຫຼືອກຸ່ມຊົນຜົນລາວ ທີ່ອາໄສໃນພື້ນທີ່ທີ່ມີຄວາມສ່ຽງສູງ ໄປພ້ອມໆກັນ.
- ໃນອະດີດ, ອຸບັດເຫດ ລບຕ ໄດ້ກໍ່ໃຫ້ເກີດຄວາມເສຍຫາຍໃຫຍ່ຫຼວງຕໍ່ທັງຊີວິດ ແລະ ຊັບສິນຂອງປະຊາຊົນລາວ, ໂດຍສະເພາະກຸ່ມຊົນເຜົ່າທີ່ອາໄສຢູ່ໃນເຂດຫ່າງໄກສອກຫຼີກ.
- ໃນຊ່ວງ 10 ປີທີ່ຜ່ານມາ (2011-2020), NRA, ໃນຖານະກອງເລຂາຂອງລັດຖະບານ, ໄດ້ດຳເນີນການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ຍົກສູງຄວາມຕື່ນໂຕໃຫ້ແກ່ປະຊາຊົນລາວບັນດາເຜົ່າ ກ່ຽວກັບຄວາມອັນຕະລາຍຂອງ ລບຕ.

ການອ້າງອີງເຖິງຄົນພິການ:

- ລບຕ (ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ) ແມ່ນພາກສ່ວນໜຶ່ງຂອງວຽກງານໃນຂະແໜງການສາທາລະນະສຸກ, ສຶກສາທິການ, ແຮງງານ ແລະ ສະຫວັດດີການສັງຄົມໃນລະດັບສູນກາງ, ທ້ອງຖິ່ນ ແລະ ຊຸມຊົນ. ເຊັ່ນດຽວກັນ, ການຊ່ວຍເຫຼືອຄົນພິການກໍ່ຕ້ອງໄດ້ອາໄສການປະສານງານ ແລະ ການໂຮມເອົາວຽກງານດັ່ງກ່າວເຂົ້າກັນຢ່າງເໝາະສົມ, ເຊິ່ງແມ່ນໜ້າທີ່ຮັບຜິດຊອບຂອງ NRA.
- (ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ) ແມ່ນພາກສ່ວນໜຶ່ງຂອງແນວທາງການເຄື່ອນໄຫວດ້ານສາທາລະນະສຸກ ທັງໃນລະດັບຊາດ ແລະ ຂັ້ນຊຸມຊົນ ເພື່ອໃຫ້ບັນລຸໄດ້ວຽກງານຊ່ວຍເຫຼືອຄົນພິການ ແລະ ການໂຮມໂຕເຂົ້າສັງຄົມ, ແລະ NRA ເອງກໍ່ມີໜ້າທີ່ຮັບຜິດຊອບຮ່ວມກັນໃນຂົງເຂດວຽກງານນີ້. ເຖິງຢ່າງໃດກໍ່ຕາມ, ການຊ່ວຍເຫຼືອແບບສຸກເສີນໃນກໍລະນີເກີດອຸບັດເຫດ ລບຕ ແມ່ນຍັງບໍ່ທັນໄດ້ຮັບການດຳເນີນງານຢ່າງເປັນລະບົບ ແລະ ມີເປົ້າໝາຍຊັດເຈນເທື່ອ, ແລະ ຖານຂໍ້ມູນຜູ້ປະສົບເຄາະຮ້າຍຈາກ ລບຕ ເອງກໍ່ຍັງບໍ່ທັນໄດ້ຮັບການປັບປຸງເທື່ອ. ສະຖິຕິອັນຮອບດ້ານ, ການເບິ່ງແຍງດູແລທາງການແພດ, ການຟື້ນຟູ, ການຊ່ວຍເຫຼືອທາງດ້ານວິຊາຊີບ, ແລະ ການຈ້າງງານຜູ້ປະສົບເຄາະຮ້າຍຈາກ ລບຕ ກໍ່ຍັງຄົງມີຢູ່ຢ່າງຈຳກັດ.

SPF III ຍັງອ້າງອີງເຖິງ ສົນທິສັນຍາຂອງ ອົງການ ສປຊ ວ່າດ້ວຍສິດທິຂອງຄົນພິການ, ທີ່ ສປປ ລາວ ໃຫ້ສັດຕະຍະບັນໃນປີ 2006, ແລະ ນະໂຍບາຍ, ຍຸດທະສາດ ແລະ ແຜນການດຳເນີນງານແຫ່ງຊາດວ່າດ້ວຍຄົນພິການ 2021-2030 ແລະ ກົດໝາຍວ່າດ້ວຍຄົນພິການ ເລກທີ 57/ສພຊ.

ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກ (ສະບັບພາສາລາວ, ລບ/210, ລົງວັນທີ 29 ກໍລະກົດ 2022) ບໍ່ໄດ້ກ່າວເຖິງບົດບາດຍິງຊາຍ ຫຼື ບັນຫາທີ່ກ່ຽວຂ້ອງກັບແມ່ຍິງໂດຍສະເພາະ, ແຕ່ໄດ້ມີການອ້າງອີງເຖິງຄົນພິການຫຼາຍຄັ້ງດັ່ງລາຍລະອຽດລຸ່ມນີ້:

- ການສົ່ງເສີມ ແລະ ການປົກປ້ອງສິດທິຂອງຄົນພິການຈາກລະເບີດບໍ່ທັນແຕກ ຍັງຄົງແມ່ນສິ່ງທີ່ຕ້ອງຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍຄົນພິການ.
- ມາດຕາທີ 25: ການກັບຄືນສູ່ໜ້າທີ່. ບຸກຄົນທີ່ເກີດຄວາມພິການຈາກອຸບັດເຫດ ລບຕ ຈະໄດ້ຮັບການຟື້ນຟູໂດຍອີງຕາມຫຼັກການດ້ານການແພດຜ່ານການສະໜອງອຸປະກອນຊ່ວຍເຫຼືອ ແລະ ການຊ່ວຍເຫຼືອດ້ານການດຳລົງຊີວິດພາຍຫຼັງໄດ້ຮັບການປິ່ນປົວແລ້ວ.
- ມາດຕາທີ 26: ການຟື້ນຟູທາງກາຍະພາບ. ບຸກຄົນທີ່ເກີດຄວາມພິການຈາກອຸບັດເຫດ ລບຕ ຈະໄດ້ຮັບການຟື້ນຟູທາງດ້ານຮ່າງກາຍ ແລະ ຈິດໃຈ, ເຂົ້າຮັບການຜ່າຕັດ, ການສັນຍະກຳ ແລະ ການຕົບແຕ່ງຮ່າງກາຍ, ການສະໜອງອຸປະກອນຊ່ວຍເຫຼືອ ແລະ ພະນັກງານຊ່ວຍເຫຼືອໂດຍອີງຕາມຫຼັກການດ້ານການແພດໃນໂຮງໝໍ, ສູນການແພດ, ສູນຟື້ນຟູໃນຊຸມຊົນ ແລະ ຄອບຄົວ.

ຜົນໄດ້ຮັບ

⇨ ບົດລາຍງານປະຈຳປີ 2021 ຂອງຂະແໜງການ ລບຕ ແມ່ນແຫຼ່ງຂໍ້ມູນທີ່ດີທີ່ສຸດສຳລັບຈຳນວນຜູ້ເສຍຊີວິດ ແລະ ບາດເຈັບຈາກ ລບຕ ລວມໄປເຖິງຂໍ້ມູນກ່ຽວກັບການຈ້າງງານໃນຂະແໜງການ ລບຕ ທີ່ແບ່ງຕາມກຸ່ມເພດ. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 ຊ່ວຍສະໜອງຂໍ້ມູນກ່ຽວກັບອັດຕາການເສຍຊີວິດ ແລະ ບາດເຈັບໃນກຸ່ມຜູ້ໃຫຍ່ ແລະ ເດັກໂດຍແຍກອອກເປັນກຸ່ມຍິງຊາຍ, ແຕ່ບໍ່ມີຂໍ້ມູນກ່ຽວກັບການຟື້ນຟູທາງການແພດ ແລະ ທາງດ້ານຈິດໃຈ ຫຼື ການຝຶກອົບຮົມວິຊາຊີບ.

⇨ SPF III ໄດ້ອ້າງອີງເຖິງບົດບາດຍິງຊາຍ, ກຸ່ມຊົນເຜົ່າ ແລະ ຄົນພິການຫຼາຍຄັ້ງ, ແລະ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການແກ້ໄຂບັນຫາລະເບີດບໍ່ທັນແຕກ ກໍ່ໄດ້ອ້າງອີງເຖິງຄົນພິການຫຼາຍຄັ້ງເຊັ່ນດຽວກັນ. ເອກະສານອື່ນໆໄດ້ແຍກບັນຫາດ້ານບົດບາດຍິງຊາຍ ແລະ ລບຕ ອອກຈາກກັນ, ໂດຍມີພຽງບາງເອກະສານເທົ່ານັ້ນທີ່ກ່າວເຖິງຜົນກະທົບທີ່ ລບຕ ມີຕໍ່ບົດບາດຍິງຊາຍ, ນອກນັ້ນກໍ່ຍັງຂາດການວິເຄາະບົດບາດຍິງຊາຍໃນເອກະສານທີ່ກ່ຽວຂ້ອງກັບ ລບຕ. ບັນຫານີ້ເຮັດໃຫ້ເກີດຄວາມບໍ່ສອດຄ່ອງກັບ NPAGE ຄັ້ງທີ 4 ທີ່ແນໃສ່ຮັບປະກັນໃຫ້ອົງການຈັດຕັ້ງຕ່າງໆກວມ 80 ສ່ວນຮ້ອຍໃນຂະແໜງການ ເກັບກຳຂໍ້ມູນໂດຍແບ່ງກຸ່ມອອກຕາມເພດ, ອາຍຸ, ຄວາມພິການ, ກຸ່ມຊົນເຜົ່າ, ສະຖານທີ່ພັກອາໄສ ແລະ ສະຖານະທາງເສດຖະກິດ-ສັງຄົມ.

ຂໍ້ແນະນຳທີ 3

⇨ ເພື່ອໃຫ້ສອດຄ່ອງກັບ NPAGE ຄັ້ງທີ 4, ຂໍ້ມູນທຸກອັນຈະຕ້ອງຖືກຈັດແບ່ງເປັນໝວດໝູ່ຕາມເພດ, ອາຍຸ, ຄວາມພິການ, ກຸ່ມຊົນເຜົ່າ, ສະຖານທີ່ພັກອາໄສ ແລະ ສະຖານະທາງເສດຖະກິດ-ສັງຄົມ, ໂດຍສະເພາະທີ່ກ່ຽວຂ້ອງກັບຂະແໜງການ ລບຕ.

## 3.2 ການສະໜັບສະໜູນດ້ານບົດບາດຍິງ-ຊາຍທີ່ຜ່ານມາໃຫ້ແກ່ NRA

ເອກະສານປີ 2009, UNMAS ແລະ ການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າຂະແໜງການເກັບກູ້ລະເບີດ, ໄດ້ຊີ້ໃຫ້ເຫັນວ່າບັນດາຜູ້ອຳນວຍການອົງການເກັບກູ້ລະເບີດແຫ່ງຊາດ ແລະ ທີ່ປຶກສາຂອງ ອົງການ ສປຊ ຈາກ ອັບການິດສະຖານ, ກຳປູເຈຍ, ສປປ ລາວ, ເນປານ, ສີລັງກາ ແລະ ໄທ ໄດ້ເຂົ້າຮ່ວມກອງປະຊຸມສຳມະນາທີ່ມີຊື່ວ່າ, "ມຸມມອງຈາກແຜນງານພາກສະໜາມໃນພາກພື້ນອາຊີ." ສຳມະນາດັ່ງກ່າວໄດ້ສະໜອງການສະໜັບສະໜູນໃຫ້ແກ່ແຜນງານແຫ່ງຊາດໃນການກະກຽມ, ປັບປຸງ, ປະເມີນຜົນ ແລະ ຕິດຕາມກວດກາປະສິດທິພາບໃຫ້ແກ່ບັນດາແຜນການດຳເນີນງານ ທີ່ຖືກອອກແບບມາສະເພາະໃຫ້ແກ່ບັນຫາດ້ານບົດບາດຍິງຊາຍ, ບັນຫາທ້າທາຍຮ່ວມກັນ ແລະ ເພື່ອສົ່ງເສີມຫຼັກປະຕິບັດທີ່ດີ, ແລະ ໄດ້ເຊື່ອມໂຍງທີ່ປຶກສາໃນວຽກງານດ້ານບົດບາດຍິງຊາຍເຂົ້າໃນແຜນງານແຫ່ງຊາດ ເພື່ອຮັບປະກັນໃຫ້ເກີດການສະໜັບສະໜູນໂຕຈິງ. ສຳມະນານີ້ແນໃສ່ເພີ່ມທະວີສິດອຳນາດ ແລະ ຄວາມເປັນເຈົ້າການແຫ່ງຊາດໃຫ້ແກ່ແຜນການດຳເນີນງານດັ່ງກ່າວ.

ໃນປີ 2014, GICHD ໄດ້ເຮັດວຽກຮ່ວມກັບ NRA ເພື່ອສ້າງບົດລາຍງານກ່ຽວກັບ ການວາງແຜນຍຸດທະສາດໃນແຜນງານການເກັບກູ້ລະເບີດຂອງ ສປປ ລາວ. ບົດລາຍງານນີ້ປະກອບມີພາກໜຶ່ງທີ່ກຳນົດໄວ້ ສຳລັບການເຊື່ອມສານວຽກງານດ້ານບົດບາດຍິງຊາຍໂດຍສະເພາະ:

> ໃນຂະນະທີ່ຜູ້ປະຕິບັດງານແຕ່ລະຝ່າຍ ພະຍາຍາມລວມເອົາຂໍ້ພິຈາລະນາດ້ານບົດບາດຍິງຊາຍ ເຂົ້າໃນວຽກງານຂອງຕົນນັ້ນ, ຍັງບໍ່ທັນປາກົດເຫັນເຖິງຂອບເຂດທີ່ຊັດເຈນ ໃນການເຊື່ອມສານວຽກງານດ້ານບົດບາດຍິງຊາຍ ເຂົ້າໃນຂັ້ນຕອນການວາງແຜນຍຸດທະສາດໂດຍລວມຂອງ ສປປ ລາວ ເທື່ອ. ໃນເປົ້າໝາຍຍຸດທະສາດລຳດັບທີສີ່: ຮັບປະກັນຄວາມເປັນຜູ້ນຳ, ການປະສານງານ ແລະ ການຈັດຕັ້ງປະຕິບັດແຜນງານແຫ່ງຊາດຢ່າງມີປະສິດທິພາບນັ້ນ, ເສັ້ນທາງກ້າວສູ່ຄວາມປອດໄພ II ລວມມີການດຳເນີນງານອັນສຳຄັນ ທີ່ກ່ຽວພັນກັບບົດບາດຍິງຊາຍໂດຍສະເພາະຄື: "ກຳນົດແຜນວຽກຂອງຂະແໜງການປະຈຳປີ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດຍຸດທະສາດນີ້ ລວມໄປເຖິງການຈັດຕັ້ງປະຕິບັດຂໍ້ແນະນຳຕ່າງໆ ຈາກການປະເມີນມຸມມອງດ້ານບົດບາດຍິງຊາຍໃນຂະແໜງການ ລບຕ ເມື່ອປີ 2008." ໂຕຊີ້ວັດຜົນສຳເລັດທີ່ກ່ຽວຂ້ອງກັບການດຳເນີນງານນີ້ ໝາຍເຖິງການທີ່ແຜນວຽກປະຈຳປີດັ່ງກ່າວໄດ້ລວມເອົາ "ຄາດໝາຍດ້ານບົດບາດຍິງຊາຍ" ເຂົ້າໃນແຜນ, ແລະ ຂໍ້ແນະນຳຈາກການປະເມີນຜົນນັ້ນກໍ່ໄດ້ຮັບການຈັດຕັ້ງປະຕິບັດແລ້ວ.

ບົດລາຍງານຍັງຊີ້ໃຫ້ເຫັນອີກວ່າ NRA ໄດ້ຮຽກຮ້ອງໃຫ້ GMAP ຈັດຕັ້ງສຳມະນາຝຶກອົບຮົມກ່ຽວກັບການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າໃນ ແຜນງານການເກັບກູ້ ລບຕ / ລະເບີດຝັງດິນຂອງ ສປປ ລາວ, ທີ່ໄດ້ຖືກຈັດຂຶ້ນໃນເດືອນພຶດສະພາ 2013. ຜູ້ເຂົ້າຮ່ວມໄດ້ດຳເນີນການປະເມີນຕົນເອງກ່ອນເຂົ້າຝຶກອົບຮົມ ເພື່ອລະບຸ

ລະດັບຄວາມເຂົ້າໃຂຂອງຕົນ ກ່ຽວກັບວິທີໃນການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ. ສາມາດເບິ່ງສັງລວມຜົນການປະເມີນຜູ້ເຂົ້າຮ່ວມໄດ້ທີ່ພາກເອກະສານຊ້ອນທ້າຍ. ເຖິງແມ່ນວ່າຫຼາຍກວ່າເຄິ່ງໜຶ່ງຂອງຜູ້ເຂົ້າຮ່ວມທັງໝົດ 27 ຄົນຈະຕອບວ່າພວກເຂົາບໍ່ເຄີຍເຂົ້າຮ່ວມ ການຝຶກອົບຮົມດ້ານບົດບາດຍິງຊາຍມາກ່ອນກໍ່ຕາມ, 88 ສ່ວນຮ້ອຍຖືເອົາການເຊື່ອມສານວຽກງານດ້ານບົດບາດຍິງຊາຍເປັນສິ່ງທີ່ມີຄວາມສຳຄັນຫຼາຍ, 55 ສ່ວນຮ້ອຍກ່າວວ່າພວກເຂົາບໍ່ໄດ້ຮັບໂອກາດຈາກອົງກອນ ໃນການເສີມສ້າງຄວາມຮູ້ດ້ານບົດບາດຍິງຊາຍ, 41 ສ່ວນຮ້ອຍບອກວ່າການສົ່ງເສີມຄວາມສະເໝີພາບຍິງຊາຍ ແລະ ການເຄົາລົບຄວາມຫຼາກຫຼາຍທີ່ມີໃນເວລານັ້ນແມ່ນຍັງບໍ່ທັນພຽງພໍ, ແລະ 95 ສ່ວນຮ້ອຍຄິດວ່າຄວນສ້າງກຸ່ມວິຊາການດ້ານບົດບາດຍິງຊາຍຂຶ້ນພາຍໃນທຸກສະຖານທີ່ເຮັດວຽກ.

ການປະເມີນບົດບາດຍິງຊາຍໃນແຜນງານການເກັບກູ້ລະເບີດຂອງ ສປປ ລາວ ປະຈຳປີ 2014 ຂອງ GMAP (ຕໍ່ໄປໃນເອກະສານຈະເອີ້ນສັ້ນໆວ່າ GMAP 2014) ແມ່ນໝາກຜົນຂອງການປະເມີນບົດບາດຍິງຊາຍອັນຮີບດ່ວນພາຍໃຕ້ແຜນງານ ລບຕ ທີ່ໄດ້ຮັບການສະໜັບສະໜູນດ້ານເງິນທຶນຈາກ ກົມຮ່ວມມືສາກົນ. ການປະເມີນຜົນດັ່ງກ່າວແນໃສ່ NRA ເປັນຫຼັກ, ໂດຍສະເພາະການລົງຢ້ຽມຢາມ ແລະ ປະຕິບັດການພາກສະໜາມຂອງ ໂຄງການ UXO Lao, ອົງການຊ່ວຍເຫຼືອລ້າຂອງປະຊາຊົນນອກແວ, ອົງການແມັກ ແລະ ອົງການ HI ເພື່ອໃຫ້ລະບຸໄດ້ວິທີໃນການເສີມສ້າງຂີດຄວາມສາມາດຂອງ NRA ໃນການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ. GMAP ໄດ້ນຳໃຊ້ບົດຮຽນທີ່ຖອດຖອນໄດ້ຈາກປະເທດອື່ນ ເຂົ້າມາສ້າງແຜນງານຂອງ ສປປ ລາວ ໃຫ້ກາຍມາເປັນຕົວຢ່າງຂອງການເຊື່ອມສານວຽກງານດ້ານບົດບາດຍິງຊາຍ. ການຄົ້ນຄວ້າດັ່ງກ່າວເນັ້ນໜັກໃສ່ຂັ້ນຕອນທັງພາຍໃນ ແລະ ພາຍນອກ, ໂດຍຜ່ານການປະເມີນຄວາມຕື່ນໂຕ ແລະ ຄວາມດຸ່ນດ່ຽງດ້ານບົດບາດຍິງຊາຍໃນລະຫວ່າງພະນັກງານ, ນະໂຍບາຍ ແລະ ລະບຽບຂັ້ນຕອນການຮັບພະນັກງານ, ພ້ອມທັງກວດສອບຜົນກະທົບທີ່ມີຕໍ່ບົດບາດຍິງຊາຍໃນທົ່ວທຸກຮອບວຽນຂອງໂຄງການ, ການຄຸ້ມຄອງຂໍ້ມູນຂ່າວສານ, ການປະເມີນຜົນກະທົບ, ແລະ ການເຂົ້າເຖິງສິດທິປະໂຫຍດຈາກວຽກງານເກັບກູ້ລະເບີດ.

ການປະເມີນຜົນດັ່ງກ່າວໄດ້ນຳສະເໜີຂໍ້ແນະນຳຕ່າງໆ ໃຫ້ມີການໂຮມເອົາວຽກງານການເຊື່ອມສານບົດບາດຍິງຊາຍນັບຕັ້ງແຕ່ໄລຍະເລີ່ມຕົ້ນຂອງຂັ້ນຕອນການກຳນົດແຜນງານ (ຫຼາຍກວ່າຈະໃຫ້ເປັນ 'ພາກສ່ວນເສີມ' ໃນພາຍຫຼັງ), ລວມທັງໂດຍຜ່ານການເກັບກຳຂໍ້ມູນຢ່າງເປັນລະບົບ ແລະ ການປຶກສາຫາລືກັບທ້ອງຖິ່ນທັງແມ່ຍິງ ແລະ ຜູ້ຊາຍ. ສາມາດເບິ່ງຂໍ້ແນະນຳ ແລະ ແຜນການດຳເນີນງານດ້ານບົດບາດຍິງຊາຍ ທີ່ກ່ຽວຂ້ອງໄດ້ໃນ ພາກເອກະສານຊ້ອນທ້າຍທີ 4. ໜຶ່ງໃນຂໍ້ແນະນຳລະດັບສູງແມ່ນ:

> NRA ພິຈາລະນາຮ່າງ ແລະ ຮັບຮອງເອົານະໂຍບາຍດ່ຽວກ່ຽວກັບ ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍສຳລັບຂະແໜງການ ລບຕ, ໃຫ້ເປັນເອກະສານໄວ້ອ້າງອີງພາຍໃຕ້ ມາດຕະຖານແຫ່ງຊາດ ແລະ ໄວ້ນຳໃຊ້ເພື່ອສື່ສານກັນລະຫວ່າງພະນັກງານພາຍໃນອົງກອນ ແລະ ຄູ່ຮ່ວມມືຈາກພາຍນອກ, ຄູ່ຮ່ວມງານ ແລະ ຜູ້ໃຫ້ທຶນຕ່າງໆ. ນອກນັ້ນຍັງພິຈາລະນາຮ່າງ ແລະ ຮັບຮອງເອົາວິໄສທັດ, ຄຸນຄ່າ ແລະ ຫຼັກປະຕິບັດທີ່ກ່ຽວຂ້ອງກັບຄາດໝາຍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ NRA ພະຍາຍາມບັນລຸໃຫ້ໄດ້.

ຜົນໄດ້ຮັບ

⇨ ນັບຕັ້ງແຕ່ປີ 2009 ເປັນຕົ້ນມາ, GICHD ແລະ GMAP ໄດ້ສະໜອງການຝຶກອົບຮົມ, ຄຳແນະນຳດ້ານວິຊາການ ແລະ ການປະເມີນຜົນແບບຮອບດ້ານຕໍ່ບັນຫາບົດບາດຍິງຊາຍ ທີ່ກ່ຽວຂ້ອງກັບວຽກງານຂອງ NRA. ບໍ່ປາກົດເຫັນຂໍ້ມູນຫຼັກຖານທີ່ຢັ້ງຢືນວ່າ ມີການນຳເອົາຂໍ້ແນະນຳເຫຼົ່ານີ້ໄປຈັດຕັ້ງປະຕິບັດ.

ຂໍ້ແນະນຳທີ 4

⇨ NRA ຈະຕ້ອງຈັດລຽງບຸລິມະສິດໃຫ້ແກ່ຂໍ້ແນະນຳຂອງ GMAP ເພື່ອຮ່າງ ແລະ ຮັບຮອງເອົານະໂຍບາຍດ່ຽວກ່ຽວກັບບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍສຳຫຼັບຂະແໜງການ ລບຕ. ສິ່ງນີ້ແມ່ນໝາກຜົນເບື້ອງຕົ້ນທີ່ມີຄວາມສຳຄັນຫຼາຍພາຍໃຕ້ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ.

## 3.3 ການປະເມີນຜົນດ້ານບົດບາດຍິງຊາຍ ແລະ ການປະເມີນຜົນທີ່ອີງໃສ່ປະຕິບັດການເກັບກູ້ ລບຕ ສຳລັບ ສປປ ລາວ

ການລົງທຶນອັນໃຫຍ່ຫຼວງເຂົ້າໃນການແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ລບຕ ໃນ ສປປ ລາວ ໃນຊ່ວງ 15 ປີທີ່ຜ່ານມາ ເລີ່ມຕົ້ນດ້ວຍການປະເມີນຜົນດ້ານບົດບາດຍິງຊາຍທີ່ສຳຄັນທີ່ດຳເນີນການໂດຍ ອົງການແມັກ ໃນປີ 2008.

ໃນປີ 2008, ອົງການ UNDP ໄດ້ມອບໝາຍໃຫ້ ອົງການແມັກ, ພ້ອມທຶນຊ່ວຍເຫຼືອລ້າຈາກອຽກລັງ, ສ້າງ ບົດປະເມີນມຸມມອງດ້ານບົດບາດຍິງຊາຍໃນວຽກງານເກັບກູ້ ລບຕ ໃນ ສປປ ລາວ ຄັ້ງປະຖົມມະລຶກຂຶ້ນ (ອົງການແມັກ 2008). ນີ້ແມ່ນບົດປະເມີນຜົນແຫ່ງຊາດສະບັບທຳອິດຂອງຂະແໜງການ ລບຕ ເພື່ອກວດສອບບັນຫາດ້ານບົດບາດຍິງຊາຍ. ໃນປີຕໍ່ມາກໍ່ໄດ້ມີການດຳເນີນການຄົ້ນຄວ້າຂະໜາດນ້ອຍຂຶ້ນ ໂດຍອີງໃສ່ການສົນທະນາກັນລະຫວ່າງ ອົງການແມັກ, ອົງການ UNDP, ໂຄງການ UXO Lao ແລະ NRA ທີ່ໄດ້ຊີ້ໃຫ້ເຫັນເຖິງການສະໜັບສະໜຸນໃຫ້ດຳເນີນການຄົ້ນຄວ້າໃນວົງກວ້າງອີກຕື່ມ, ເພື່ອໃຫ້ຄອບຄຸມປະຕິບັດການເກັບກູ້ລະເບີດເພື່ອມະນຸດຊະທຳຂອງໜ່ວຍງານອື່ນໆນຳອີກ. ການຄົ້ນຄວ້າດັ່ງກ່າວໄດ້ປະເມີນວ່າໄດ້ມີການໂຮມເອົາບັນຫາດ້ານບົດບາດຍິງຊາຍ ເຂົ້າໃນຂັ້ນຕອນຕ່າງໆຂອງວຽກງານ ລບຕ ໃນຂອບເຂດນ້ອຍໃຫຍ່ເທົ່າໃດ, ເຊັ່ນ: ການຄົ້ນຫາ ລບຕ ຕົກຄ້າງ, ການຈັດລຽງບຸລິມະສິດໃຫ້ແກ່ວຽກງານເກັບກູ້ລະເບີດ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ບຸກຄະລາກອນເກັບກູ້ລະເບີດ ແລະ ການຈ້າງງານ. ຜົນໄດ້ຮັບຕ່າງໆໄດ້ຊີ້ໃຫ້ເຫັນວ່າ ແມ່ຍິງມີອັດຕາການມີສ່ວນຮ່ວມທີ່ຕ່ຳກວ່າໃນທົ່ວທັງຂະແໜງການ ພ້ອມດ້ວຍຂໍ້ມູນລະອຽດທີ່ຊ່ວຍສະໜອງເສັ້ນທຽບຖານ ເພື່ອໄວ້ໃຊ້ເຂົ້າໃນການວັດແທກຄວາມປ່ຽນແປງທີ່ເກີດຈາກ ຜົນກະທົບຂອງມາດຕະການແຊກແຊງທີ່ເນັ້ນໜັກໃສ່ບົດບາດຍິງຊາຍ. ບົດລາຍງານດັ່ງກ່າວໄດ້ລວມເອົາທຸກເຄື່ອງມືການສຳຫຼວດເຂົ້ານຳ, ອັນຊ່ວຍໃຫ້ການຄົ້ນຄວ້ານັ້ນສາມາດນຳໄປເຮັດຊ້ຳໄດ້ ເພື່ອວິເຄາະແນວໂນ້ມໄດ້ຕະຫຼອດເວລາ. ການຄົ້ນຄວ້າໃນປັດຈຸບັນນີ້ໄດ້ນຳເອົາບາງຊຸດຄຳຖາມມານຳໃຊ້ຄືນ ເພື່ອທົດສອບຄວາມປ່ຽນແປງທີ່ເກີດຂຶ້ນຕະຫຼອດເວລາ.ຂໍ້ແນະນຳຕ່າງໆແມ່ນເນັ້ນໜັກໃສ່ຫ້າເສົາຄ້ຳສຳຄັນຂອງວຽກງານເກັບກູ້ລະເບີດ ແລະ ການຈ້າງງານແມ່ຍິງພາຍໃນຂະແໜງການ. ພວກມັນໄດ້ຖືກສ້າງຂຶ້ນເພື່ອຊ່ວຍ ອົງການ UNDP ໃນການຈັດຕັ້ງປະຕິບັດແຜນການດຳເນີນງານດ້ານບົດບາດຍິງຊາຍຂອງພວກເຂົາໃຫ້ແກ່ຂະແໜງການ ລບຕ ຂອງ ສປປ ລາວ, ແລະ ເພື່ອສະໜອງເວທີໃນການສ້າງນະໂຍບາຍ ແລະ ການທົບທວນຄືນຮ່າງມາດຕະຖານແຫ່ງຊາດ. ຂໍ້ແນະນຳເຫຼົ່ານັ້ນແມ່ນໄດ້ຖືກລວມເຂົ້າໄວ້ໃນ ພາກເອກະສານຊ້ອນທ້າຍທີ 2.

ຜົນໄດ້ຮັບ

⇨ ບໍ່ພົບຂໍ້ມູນຫຼັກຖານທີ່ຊີ້ໃຫ້ເຫັນວ່າ ມີການນຳເອົາຂໍ້ແນະນຳຈາກການປະເມີນຜົນດ້ານບົດບາດຍິງຊາຍຂອງ ອົງການແມັກ ໄປຈັດຕັ້ງປະຕິບັດ, ນອກເໜືອໄປຈາກການແປ ຂໍ້ຊີ້ນຳດ້ານບົດບາດຍິງຊາຍໃນຂະແໜງການເກັບກູ້ລະເບີດຂອງ UNMAS ມາເປັນພາສາລາວ.

⇨ ການນຳເອົາຊຸດຄຳຖາມຈາກການປະເມີນຜົນຂອງ ອົງການແມັກ ມານຳໃຊ້ຊ້ຳ ແລະ ສອບຖາມຄູ່ຮ່ວມງານກ່ຽວກັບການຈັດຕັ້ງປະຕິບັດຂໍ້ແນະນຳຕ່າງໆ ບໍ່ໄດ້ຊີ້ໃຫ້ເຫັນເຖິງຄວາມປ່ຽນແປງທີ່ສັງເກດເຫັນໄດ້ຈາກເສັ້ນທຽບຖານ ຫຼື ຄວາມຮູ້ໃໝ່ທີ່ໄດ້ຮັບຈາກການປະເມີນຜົນດັ່ງກ່າວ (ນອກເໜືອໄປຈາກຜູ້ຕາງໜ້າຂອງ ອົງການແມັກ ທີ່ເຂົ້າຮ່ວມກອງປະຊຸມ EORE).

⇨ ບົດລາຍງານ ແລະ ຂໍ້ມູນຄຸນນະພາບສູງ ເພື່ອແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ລບຕ ແມ່ນໄດ້ຖືກເບິ່ງຂ້າມເປັນສ່ວນໃຫຍ່.



ໃນປີ 2018, ອົງການ ສປຊ ເພື່ອແມ່ຍິງ ໄດ້ເປີດໂຕ ບົດລາຍງານການປະເມີນຜົນ: ການປັບປຸງຜົນໄດ້ຮັບໃຫ້ແກ່ແຜນງານ ລບຕ ໃນ ສປປ ລາວ ໂດຍຜ່ານການສົ່ງເສີມຄວາມສະເໝີພາບຍິງຊາຍ ແລະ ການຍົກສູງບົດບາດໃຫ້ແກ່ແມ່ຍິງ, ທີ່ຖືກສ້າງຂຶ້ນໂດຍຮ່ວມມືກັບ LWU ແລະ NRA. ມັນຊ່ວຍສະໜອງຂໍ້ມູນຄວາມເປັນມາກ່ຽວກັບວຽກງານດ້ານບົດບາດຍິງຊາຍ ແລະ ລບຕ ຈົນເຖິງປີ 2018. ການປະເມີນຜົນດັ່ງກ່າວໄດ້ແນໃສ່ລະບຸໃຫ້ໄດ້ຈຸດລິເລີ່ມຍຸດທະສາດ ແລະ ທີ່ສາມາດປະຕິບັດໄດ້ຈິງ ໃນການເຊື່ອມສານວຽກງານດ້ານບົດບາດຍິງຊາຍ ເຂົ້າໃນບັນດານະໂຍບາຍ ລບຕ, ປະຕິບັດການຕ່າງໆ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ໂດຍແນໃສ່ເຮັດວຽກຮ່ວມກັບ LWU ເພື່ອຍົກສູງຄວາມສະເໝີພາບຍິງຊາຍໃນຂະແໜງການ ລບຕ, ລວມທັງໂດຍຜ່ານມາດຕະຖານລະບຽບການປະຕິບັດງານສຳລັບວຽກງານເກັບກູ້ ລບຕ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

### ຜົນໄດ້ຮັບ

⇨ ມີຂໍ້ແນະນຳພຽງຫ້າຂໍ້ຈາກການປະເມີນຜົນເທົ່ານັ້ນທີ່ໄດ້ຖືກນຳມາຈັດຕັ້ງປະຕິບັດ.
ຂໍ້ໜຶ່ງສົ່ງຜົນເຮັດໃຫ້ມີການສ້າງ ຄູ່ມືການຝຶກອົບຮົມການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ ໃນ ສປປ ລາວ, ເຊິ່ງເປັນຄູ່ມືການຝຶກອົບຮົມອັນຮອບດ້ານທີ່ຖືກແປມາເປັນພາສາລາວ. ມັນໄດ້ລະບຸຜົນສຳເລັດ ແລະ ບັນຫາທ້າທາຍຕ່າງໆ ທີ່ກ່ຽວຂ້ອງກັບການແກ້ໄຂບັນຫາດ້ານບົດບາດຍິງຊາຍໃນຂະແໜງການ ລບຕ ແລະ ໄດ້ຊີ້ໃຫ້ເຫັນເຖິງວິທີໃນການວິເຄາະບົດບາດຍິງຊາຍ ແລະ ການກຳນົດແຜນທີ່ຄຳນຶງເຖິງບົດບາດຍິງຊາຍໃນຂະແໜງການ, ໂດຍສະເພາະຜ່ານການສຳຫຼວດແບບບໍ່ແມ່ນວິຊາການ, ການເກັບກູ້ ລບຕ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ, ການຊ່ວຍເຫຼືອ ແລະ ການສະໜັບສະໜູນຜູ້ປະສົບເຄາະຮ້າຍ. ຫຼາຍໆພາກສ່ວນທີ່ປະຕິບັດໄດ້ຈິງ ໄດ້ລວມເອົາການເຊື່ອມສານວຽກງານດ້ານບົດບາດຍິງຊາຍ ເຂົ້າໃນຮອບວຽນຂອງໂຄງການ ລບຕ, ນະໂຍບາຍຊັບພະຍາກອນມະນຸດທີ່ຄຳນຶງເຖິງບົດບາດຍິງຊາຍໃນຂະແໜງການ ແລະ ຜົນກະທົບຂອງການເຊື່ອມສານວຽກງານບົດບາດຍິງຊາຍ.

⇨ ຄູ່ຮ່ວມງານຕົ້ນຕໍໃນ ນະຄອນຫຼວງວຽງຈັນ ລວມທັງຄູ່ຮ່ວມງານອື່ນໆໃນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານໄດ້ຖືກຖາມວ່າພວກເຂົາໄດ້ເຄີຍເຂົ້າຮ່ວມການຝຶກອົບຮົມນີ້ມາກ່ອນ ຫຼື ບໍ່. ບໍ່ມີໃຜເຄີຍໄດ້ຮັບການຝຶກອົບຮົມ ຫຼື ແມ້ກະທັ້ງໄດ້ຍິນກ່ຽວກັບການຝຶກອົບຮົມດັ່ງກ່າວມາກ່ອນ ຍົກເວັ້ນເຈົ້າໜ້າທີ່ເກັບກູ້ລະເບີດລະດັບ 3+ ຜູ້ໜຶ່ງຈາກ ໂຄງການ UXO Lao ໃນ ແຂວງຊຽງຂວາງ ທີ່ລາຍງານວ່າຕົນເຄີຍໄດ້ເຂົ້າຮ່ວມ

ການຝຶກອົບຮົມຄູຝຶກມາກ່ອນ.  ໃນຕະຫຼອດການສົນທະນາ, ຄູ່ຮ່ວມງານທຸກຝ່າຍ (ທັງຜູ້ຊາຍ ແລະ ແມ່ຍິງ) ໄດ້ຮຽກຮ້ອງໃຫ້ມີການສະໜອງການຝຶກອົບຮົມດ້ານບົດບາດຍິງຊາຍແບບລະອຽດ.

### ຂໍ້ແນະນຳທີ 5

- ຄູ່ມືການຝຶກອົບຮົມການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ ໃນ ສປປ ລາວ ຈະຕ້ອງໄດ້ຮັບການທົບທວນຄືນ ແລະ ປັບປຸງໃນຈຸດທີ່ຈຳເປັນ ແລະ ລິເລີ່ມນຳໃຊ້ໂດຍຄູ່ຮ່ວມງານທຸກຄົນໃນຂະແໜງການ ລບຕ ລວມໄປເຖິງພະນັກງານຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານທີ່ເຮັດວຽກກ່ຽວກັບບັນຫາ ລບຕ



© Sasha Popovic





© UNDP / Mailee Osten-Tan

# 4

# ໂຄງການຂອງ ອົງການ UNDP ເພື່ອຍົກສູງ ປະສິດທິພາບ ແລະ ປະສິດທິຜົນໃນ ຂະແໜງການ ລບຕ

> ບໍ່ປາກົດວ່າເຫັນເຖິງຄວາມຄືບໜ້າດ້ານການສ້າງຄວາມສະເໝີພາບ ແລະ ການຊຸກຍູ້ບົດບາດຍິງຊາຍທີ່ຊັດເຈນ, ລວມໄປເຖິງວິທີໃນການສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງເຂົ້າໃນຂະບວນການຕັດສິນໃຈ. ຈຳເປັນຈະຕ້ອງໄດ້ມີການຄົ້ນຄວ້າເພີ່ມເຕີມ ເພື່ອໃຫ້ເຂົ້າໃຈຄວາມສະເມີພາບຍິງຊາຍໃນຂະແໜງການ ແລະ ຄວາມສະເໝີພາບຍິງຊາຍໃນກຸ່ມຂອງຜູ້ທີ່ໄດ້ຮັບຜົນປະໂຫຍດ... ພົບວ່າມີຄວາມຈຳເປັນອັນຊັດເຈນທີ່ອົງການ UNDP, ພ້ອມດ້ວຍ ອົງການ ສປຊ ເພື່ອແມ່ຍິງ ແລະ LWU, ຈະຕ້ອງໄດ້ໃຫ້ການຊ່ວຍເຫຼືອ NRA ແລະ ໂຄງການ UXO Lao ໃນການສ້າງ ແລະ ຈັດຕັ້ງປະຕິບັດນະໂຍບາຍດ້ານບົດບາດຍິງຊາຍພາຍໃນອົງກອນຂອງພວກເຂົາ, ລວມໄປເຖິງບັນຫາດ້ານຄວາມຮັບຜິດຊອບຂອງຜູ້ໃຊ້ແຮງງານ ຕໍ່ພະນັກງານຍິງໃນເວລາທີ່ພວກເຂົາຖືພາ, ແລະ ຫຼັງເກີດລູກແລ້ວ.

ຜົນໄດ້ຮັບຕົ້ນຕໍກ່ຽວກັບບົດບາດຍິງຊາຍ ແລະ ສິດທິມະນຸດໄດ້ຊີ້ໃຫ້ເຫັນວ່າ:

> ແຜນງານດັ່ງກ່າວຈະຕ້ອງສືບຕໍ່ນຳໃຊ້ແນວທາງທີ່ຄຳນຶງເຖິງບົດບາດຍິງຊາຍ, ສະໜັບສະໜຸນຄົນທຸກຍາກ ໃນເວລາດຳເນີນວຽກງານ ລບຕ, ໂດຍຍຶດໝັ້ນຕໍ່ຫຼັກການ "ບໍ່ສ້າງຄວາມເສຍຫາຍ" ເປັນບຸລິມະສິດຕົ້ນຕໍໃນເວລາປະຕິບັດວຽກ. ເອກະສານແຜນງານໃນປັດຈຸບັນແມ່ນຍັງບໍ່ທັນສອດຄ່ອງກັບຫຼັກການເຫຼົ່ານີ້.

ຂໍ້ແນະນຳຕົ້ນຕໍປະກອບມີ:

> ອົງການ UNDP ຈະຕ້ອງສະໜັບສະໜຸນ NRA ແລະ ໂຄງການ UXO Lao ໃນການຮັບປະກັບໃຫ້ພວກເຂົາເນັ້ນໜັກໃສ່ການສະໜັບສະໜຸນຄົນທຸກຍາກ, ຄຳນຶງເຖິງບົດບາດຍິງຊາຍເປັນຫຼັກ ລວມໄປເຖິງໃຫ້ມີໂຕຊີ້ວັດດ້ານບົດບາດຍິງຊາຍໃນລະດັບໝາກຜົນ ແລະ ລະດັບເປົ້າໝາຍຈຸດສຸມ ພ້ອມທັງຈັດຕັ້ງປະຕິບັດແຜນການດຳເນີນງານປະຈຳປີ 2014 ຂອງ GMAP ແລະ ຂໍ້ແນະນຳຕ່າງໆທີ່ກ່ຽວຂ້ອງກັບການປະເມີນຜົນດ້ານບົດບາດຍິງຊາຍໃນປີ 2008.

ກ້າວໄປສູ່ການບັນລຸ ປພຍ 18: ການລຶບລ້າງ ລບຕ ທີ່ເປັນອຸປະສັກກີດຂວາງການພັດທະນາໃນ ສປປ ລາວ: ບົດລາຍງານສະບັບສຸດທ້າຍ ໄດ້ຖືກສ້າງຂຶ້ນໃນປີ 2021. ບົດລາຍງານດັ່ງກ່າວໄດ້ຊີ້ໃຫ້ເຫັນວ່າ ອົງການ UNDP ແມ່ນແນໃສ່: "ສົ່ງເສີມ ແລະ ສະໜັບສະໜຸນການເຊື່ອມສານວຽກງານບົດບາດຍິງຊາຍ ແລະ ສິດທິມະນຸດ, ທັງທາງກົງ ແລະໂດຍຜ່ານການສ້າງຂີດຄວາມສາມາດແຫ່ງຊາດ, ເຂົ້າໃນນະໂຍບາຍ ແລະ ຫຼັກປະຕິບັດຕ່າງໆຂອງຂະແໜງການ ລບຕ." ບົດລາຍງານດັ່ງກ່າວຍັງໄດ້ຊີ້ໃຫ້ເຫັນອີກວ່າຍ້ອນຫ້ອງການຂອງ ອົງການ ສປຊ ເພື່ອແມ່ຍິງ ໄດ້ປິດໂຕລົງໄປແລ້ວ, ອົງການ UNDP ຈຶ່ງໄດ້ສຸມໃສ່ຄວາມພະຍາຍາມໃນການສົ່ງເສີມ ປື້ມຄູ່ມືສຳລັບຄູຝຶກກ່ຽວກັບການເຊື່ອມສານວຽກງານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ ແຕ່ບໍ່ປະສົບຜົນສຳເລັດໃນການຍື່ນຂໍທຶນ.

ບົດລາຍງານດັ່ງກ່າວບໍ່ສາມາດຢັ້ງຢືນໄດ້ວ່າແມ່ຍິງໃນພື້ນທີ່ທີ່ມີລະເບີດຕົກຄ້າງຢູ່ນັ້ນ ໄດ້ຮັບການປຶກສາຫາລືນຳຢ່າງເປັນລະບົບໃນຕະຫຼອດໄລຍະເວລາຂອງການປະຕິບັດງານແລ້ວ ຫຼື ບໍ່. ມັນໄດ້ພົບວ່າຂໍ້ມູນກ່ຽວກັບວຽກງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍນັ້ນ ບໍ່ໄດ້ຊ່ວຍໃຫ້ຮູ້ເຖິງວິທີໃນການພິຈາລະນາຄວາມຕ້ອງການດ້ານປະຊາກອນ ແລະ ເສດຖະກິດ-ສັງຄົມເລີຍ. ບົດລາຍງານດັ່ງກ່າວຍັງໄດ້ຕັ້ງຄຳຖາມເຖິງຄວາມຄືບໜ້າທີ່ສາມາດສ້າງໄດ້ ໃນຂັ້ນຕອນການເຊື່ອມສານວຽກງານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ. ມັນໄດ້ແນະນຳໃຫ້ບັນດາໂຄງການຕໍ່ຈາກນີ້ ຕ້ອງລວມເອົາກົນໄກການປຶກສາຫາລືເຂົ້າໃນຕະຫຼອດໄລຍະເວລາຂອງການປະຕິບັດງານ ເພື່ອເປັນຊ່ອງທາງໃນການວັດແທກ ແລະ ປະເມີນຜົນກະທົບຂອງຄວາມຄືບໜ້າ. ມັນບໍ່ພົບຂໍ້ມູນຫຼັກຖານທີ່ຊີ້ໃຫ້ເຫັນວ່າການສະໜັບສະໜຸນຂອງ ອົງການ UNDP ຕໍ່ຂະແໜງການ ລບຕ ນັ້ນໄດ້ຊ່ວຍປະກອບສ່ວນໃຫ້ສາມາດຕອບສະໜອງໄດ້ຄວາມຕ້ອງການຂອງຊົນກຸ່ມນ້ອຍ.

**ຜົນໄດ້ຮັບ**

- ⇨ ການທົບທວນຄືນແຜນງານ ລບຕ ຂອງລັດຖະບານ ແລະ ອົງການ UNDP ນັ້ນໄດ້ຊ່ວຍເຮັດໃຫ້ລະບຸໄດ້ຊ່ອງຫວ່າງທີ່ເກີດຂຶ້ນຢ່າງຕໍ່ເນື່ອງໃນຂັ້ນຕອນການກຳນົດແຜນງານທີ່ຜ່ານມາ ທີ່ຈຳເປັນຕ້ອງໄດ້ຮັບການແກ້ໄຂ, ຄວາມຈຳເປັນໃນການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາມາດຕະການແຊກແຊງດ້ານບົດບາດຍິງຊາຍຢ່າງມີປະສິດທິພາບ, ແລະ ຄວາມຈຳເປັນຕ້ອງໃນການຊຸກຍູ້ວຽກງານດ້ານບົດບາດຍິງຊາຍຢ່າງຕໍ່ເນື່ອງ, ລວມທັງຄວາມຈຳເປັນໃນການປະກອບສ່ວນ ເພື່ອຕອບສະໜອງຕໍ່ຄວາມຕ້ອງການຂອງກຸ່ມຊົນເຜົ່າ.
- ⇨ ອົງການ UNDP ໄດ້ສ້າງບົດສະເໜີຂໍຮັບທຶນ ເພື່ອນຳມາສືບຕໍ່ຈັດຕັ້ງປະຕິບັດປຶ້ມຄູ່ມືການຝຶກອົບຮົມຂອງ ອົງການ ສປຊ ເພື່ອແມ່ຍິງ/LWU.
- ⇨ ເອກະສານໂຄງການຂອງແຜນງານໃນປັດຈຸບັນແມ່ນຄອບຄຸມຂໍ້ແນະນຳຫຼາຍອັນ ເຊິ່ງສະທ້ອນໃຫ້ເຫັນຜ່ານການລວມເອົາກຸ່ມຊົນເຜົ່າຕ່າງໆເຂົ້ານຳ ແລະ ການເກັບກຳຂໍ້ມູນກ່ຽວກັບຊົນເຜົ່າ; ໂຕຊີ້ວັດດ້ານອັດຕາສ່ວນຂອງຕຳແໜ່ງວຽກຂັ້ນບໍລິຫານທີ່ຖືຄອບໂດຍແມ່ຍິງໃນ NRA ແລະ ໂຄງການ UXO Lao; ແມ່ຍິງ, ໄວໜຸ່ມ, ຄົນພິການ ແລະ ກຸ່ມຊົນເຜົ່າໃນບັນດາເມືອງທີ່ທຸກຍາກທີ່ສຸດ ມີຄວາມສາມາດໃນການເຂົ້າເຖິງການຝຶກອົບຮົມວິຊາຊີບ, ໂອກາດດ້ານການຈ້າງງານ ແລະ ການດຳເນີນທຸລະກິດຫຼາຍຂຶ້ນ; ການລະບຸໄດ້ວ່າວຽກງານການສຳຫຼວດ ແລະ ການເກັບກູ້ລະເບີດໃນຂັ້ນບ້ານນັ້ນ ລວມເອົາກຸ່ມຜູ້ທີ່ມີຄວາມສ່ຽງສູງເຂົ້ານຳແລ້ວ ຫຼື ບໍ່; ການລວມເອົາຂໍ້ມູນທີ່ແບ່ງຕາມກຸ່ມເພດ ແລະ ອາຍຸເຂົ້ານຳ; ແລະ ການເຊື່ອມສານວຽກງານດ້ານບົດບາດຍິງຊາຍໃຫ້ແກ່ຂະແໜງການ ລບຕ ໂດຍອີງຕາມປຶ້ມຄູ່ມືການຝຶກອົບຮົມຂອງ NRA, ອົງການ ສປຊ ເພື່ອແມ່ຍິງ ແລະ LWU.

ຂໍ້ແນະນຳດ້ານບົດບາດຍິງຊາຍຕົ້ນຕໍຈາກການທົບທວນຄືນຄັ້ງສຸດທ້າຍແມ່ນເພື່ອ "ສົ່ງເສີມການເຊື່ອມສານວຽກງານດ້ານບົດບາດຍິງຊາຍ ແລະ ການມີສ່ວນຮ່ວມຢ່າງມີຄວາມໝາຍຂອງແມ່ຍິງໃນຂະແໜງການ ລບຕ."

## 4.2 ແຜນງານຂອງ ອົງການ UNDP ໃນປັດຈຸບັນ

ແຜນງານຂອງ ອົງການ UNDP ໃນປັດຈຸບັນ, ການຍົກສູງປະສິດທິພາບ ແລະ ປະສິດທິຜົນໃຫ້ແກ່ຂະແໜງການ ລບຕ ເພື່ອປະກອບສ່ວນເຂົ້າໃນການບັນລຸ ປພຍ 18 ແລະ SPF III, ແມ່ນຢູ່ພາຍໃຕ້ຂອບເຂດຂອງ ເອກະສານແຜນງານຂອງ ອົງການ UNDP ສຳລັບ ສປປ ລາວ (2022-2026), ໂດຍສະເພາະພາຍໃຕ້ ເປົ້າໝາຍຈຸດສຸມທີ 1 ວ່າດ້ວຍຄວາມຈະເລີນຮຸ່ງເຮືອງແບບກວມລວມ, ແລະ ພາຍໃຕ້ຂອບເຂດຂອງ ຂອບການຮ່ວມມືເພື່ອການພັດທະນາແບບຍືນຍົງຂອງ ອົງການ ສປຊ 2022-2026, ໂດຍສະເພາະພາຍໃຕ້ ນະໂຍບາຍຍຸດທະສາດທີ 2 ວ່າດ້ວຍຄວາມຈະເລີນຮຸ່ງເຮືອງແບບກວມລວມ (ແລະ ໝາກຜົນຮ່ວມ 2.6 ວ່າດ້ວຍການພັດທະນາຊົນນະບົດ ແລະ ລບຕ). ສີ່ພື້ນທີ່ຕົ້ນຕໍແມ່ນໄດ້ຖືກລະບຸໄວ້ໃນເອກະສານໂຄງການດັ່ງນີ້:

- ການປັບປຸງການປະສານງານ, ຂີດຄວາມສາມາດ ແລະ ແນວທາງຮ່ວມມືຫຼາຍຂະແໜງການໂດຍລວມ ໃນການເຊື່ອມໂຍງເອົາຂັ້ນຕອນການອານຸຍາດນຳໃຊ້ເນື້ອທີ່ດິນ ເຂົ້າກັບບຸລິມະສິດດ້ານການພັດທະນາ (ການເກັບກູ້ລະເບີດ)
- ບຸກຄົນຕ່າງໆຍັງຄົງສືບຕໍ່ມີສ່ວນພົວພັນໃນພຶດຕິກຳທີ່ບໍ່ປອດໄພ (EORE)
- ສິດທິຂອງຜູ້ປະສົບເຄາະຮ້າຍຈາກ ລບຕ ຍັງບໍ່ທັນໄດ້ຮັບການບັນລຸເທື່ອ, ແລະ
- ຈຳເປັນຕ້ອງໄດ້ມີສະພາບແວດລ້ອມດ້ານນະໂຍບາຍ ແລະ ນິຕິກຳທີ່ເຂັ້ມແຂງຂຶ້ນກວ່ານີ້

ຍຸດທະສາດດັ່ງກ່າວໄດ້ເວົ້າເຖິງຂັ້ນຕອນການອານຸຍາດນຳໃຊ້ທີ່ດິນຢ່າງປອດໄພ, ການປັບປ່ຽນພຶດຕະກຳໃນກຸ່ມສ່ຽງ, ການຮັບຮູ້ເຖິງສິດທິຂອງຜູ້ປະສົບເຄາະຮ້າຍຈາກ ລບຕ, ສະພາບແວດລ້ອມເອື້ອອຳນວຍ, ການຊຸກຍູ້ (ຂໍ້ພິຈາລະນາດ້ານບົດບາດຍິງຊາຍ, ຄວາມພິການ ແລະ ກຸ່ມຊົນເຜົ່າ) ແລະ ນະວັດຕະກຳ.



ເອກະສານແຜນງານປະຈຳປະເທດ ໄດ້ຊ່ວຍອະທິບາຍສະພາບການອັນຊັດເຈນ ກ່ຽວກັບວຽກງານທີ່ກຳລັງດຳເນີນການຢູ່ດ້ານບັນຫາບົດບາດຍິງຊາຍ ແລະ ລບຕ ໄວ້ໃນວັກທີ 13 ແລະ ໝາກຜົນທີ 1.3. ພາກສ່ວນເຫຼົ່ານີ້ໄດ້ຖືກຕັດອອກມາເພື່ອໃຊ້ເປັນຂໍ້ມູນອ້າງອີງ:

> ວັກທີ 13: ອົງການ UNDP ຈະສະໜັບສະໜຸນກຸ່ມທີ່ມີຄວາມສ່ຽງສູງ - ແມ່ຍິງ, ໄວໜຸ່ມ, ຄົນພິການ, ກຸ່ມຊົນເປົ່າ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກ ລບຕ - ໃນບັນດາເມືອງທີ່ທຸກຍາກທີ່ສຸດ ເພື່ອໃຫ້ສາມາດເຂົ້າເຖິງການຝຶກອົບຮົມວິຊາຊີບ, ໂອກາດດ້ານການຈ້າງງານ ແລະ ການດຳເນີນທຸລະກິດໄດ້ຫຼາຍຂຶ້ນ, ໂດຍເນັ້ນໜັກເປັນພິເສດໃສ່ຂົງເຂດນະວັດຕະກຳ ແລະ ເຕັກໂນໂລຊີເປັນຫຼັກ. ອົງການ UNDP ຈະເຮັດວຽກຮ່ວມກັບບັນດາອົງການຈັດຕັ້ງມະຫາຊົນ, ທີ່ລວມມີ ສູນກາງແນວລາວສ້າງຊາດ, ສູນກາງສະຫະພັນແມ່ຍິງລາວ(LWU) ແລະ ສູນກາງຊາວໜຸ່ມລາວ (LYU). ຄວາມພະຍາຍາມນີ້ຈະໄດ້ຮັບການສະໜັບສະໜຸນຈາກ ລັດຖະບານ ເພື່ອໃຫ້ສາມາດສືບຕໍ່ລຶບລ້າງ ລບຕ ອອກຈາກເນື້ອທີ່ດິນກະສິກຳ ແລະ ພື້ນທີ່ການຜະລິດອື່ນໆໄດ້, ພາຍຫຼັງດຳເນີນວຽກງານການກຳນົດບຸລິມະສິດຢ່າງລະອຽດຮອບດ້ານແລ້ວ.
>
> ໝາກຜົນທີ 1.3: ກຸ່ມທີ່ມີຄວາມສ່ຽງ, ໂດຍສະເພາະແມ່ຍິງ, ໄວໜຸ່ມ, ຄົນພິການ, ກຸ່ມຊົນເຜົ່າ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກ ລບຕ, ມີຄວາມສາມາດໃນການເຂົ້າເຖິງການຝຶກອົບຮົມວິຊາຊີບ, ໂອກາດດ້ານການຈ້າງງານ ແລະ ການດຳເນີນທຸລະກິດຫຼາຍຂຶ້ນ.
>
> ໂຕຊີ້ວັດທີ 1.3.1. ອັດຕາສ່ວນຮ້ອຍຂອງຜູ້ເຂົ້າຮ່ວມການຝຶກອົບຮົມ ທີ່ມີລາຍຮັບສູງຂຶ້ນພາຍຫຼັງ 6 ເດືອນຂອງການເຂົ້າຮ່ວມການຝຶກອົບຮົມ (ແບ່ງຕາມກຸ່ມເພດ, ອາຍຸ ແລະ ຊົນເຜົ່າ).
>
> - ເສັ້ນທຽບຖານ: 0 ສ່ວນຮ້ອຍ(2021) ຄາດໝາຍ: 30 ສ່ວນຮ້ອຍ (2026)
> - ແຫຼ່ງຂໍ້ມູນ: LWU ແລະ LYU/ຄວາມຖີ່ໃນການລາຍງານຂໍ້ມູນອງໂຄງການ: ປະຈຳປີ

## ຜົນໄດ້ຮັບ

⇨ ຈາກການພົບປະກັບຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ໃນລະຫວ່າງປະຕິບັດການພາກສະໜາມໃນນະຄອນຫຼວງວຽງຈັນ ແລະ ແຂວງຊຽງຂວາງ ໄດ້ພົບວ່າການຝຶກອົບຮົມວິຊາຊີບນັ້ນ ສ່ວນໃຫຍ່ແມ່ນເນັ້ນໜັກໃສ່ຜູ້ພິການຊາຍເປັນຫຼັກ ໂດຍປາສະຈາກແນວທາງອັນສະເພາະທີ່ແນໃສ່ກຸ່ມໄວໜຸ່ມ ຫຼື ກຸ່ມຊົນເຜົ່າ. ປາກົດການນີ້ແມ່ນສາມາດເຂົ້າໃຈໄດ້ເນື່ອງຈາກວ່າຜູ້ຊາຍ ແລະ ເດັກຊາຍແມ່ນກຸ່ມທີ່ມີອັດຕາສ່ວນໄດ້ຮັບບາດເຈັບຈາກອຸບັດເຫດ ລບຕ ສູງກວ່າ; ເຖິງຢ່າງໃດກໍ່ຕາມ, ມີພຽງສູນພັດທະນາແມ່ຍິງຜູ້ພິການ ພຽງແຫ່ງດຽວເທົ່ານັ້ນທີ່ສະໜອງຫຼັກສູດຝຶກອົບຮົມ ແລະ ຫຼັກສູດວິຊາຊີບທີ່ຖືກອອກແບບມາສະເພາະແມ່ຍິງຜູ້ພິການ. ສູນດັ່ງກ່າວຍັງເນັ້ນໜັກໃສ່ການຮັບປະກັນໃຫ້ແມ່ຍິງຊົນເຜົ່າທີ່ພິການໃນພື້ນທີ່ຫ່າງໄກສອກຫຼີກ ໄດ້ຮັບສິດຖືກພິຈາລະນາເຂົ້າຮ່ວມການຝຶກອົບຮົມກ່ອນໝູ່ ຍ້ອນພວກເຂົາມີຄວາມສາມາດເຂົ້າເຖິງໂອກາດດັ່ງກ່າວໜ້ອຍກວ່າໝູ່ນັ້ນເອງ. ວຽກງານເຫຼົ່ານີ້ບໍ່ໄດ້ຮັບການສະໜັບສະໜູນດ້ານເງິນທຶນຈາກແຜນງານຂອງ ອົງການ UNDP.

ຂໍ້ມູນອ້າງອີງສະເພາະຕໍ່ບົດບາດຍິງຊາຍ, ຄວາມພິການ ແລະ ກຸ່ມຊົນເຜົ່າແມ່ນໄດ້ຖືກກ່າວໄວ້ເພີ່ມເຕີມໃນເອກະສານໂຄງການ:

- ການເຊື່ອມສານເອົາຄວາມກວມລວມ (ທີ່ລວມມີຂໍ້ພິຈາລະນາດ້ານບົດບາດຍິງຊາຍ, ຄວາມພິການ, ແລະ ກຸ່ມຊົນເຜົ່າ) ແລະ ສະພາບແວດລ້ອມທີ່ມີຄວາມກວມລວມເຂົ້າໃນຂັ້ນຕອນການກໍານົດແຜນງານ ລບຕ ຂອງລັດຖະບານ ແລະ ອົງການ UNDP ຈະຊ່ວຍໃຫ້ຂະແໜງການດັ່ງກ່າວສາມາດຂັບເຄື່ອນຄວາມສະເໝີພາບ, ຫຼຸດຜ່ອນຜົນກະທົບຈາກວຽກງານ ລບຕ ຕໍ່ສິ່ງແວດລ້ອມ ແລະ ສູ້ຊົນເພື່ອໃຫ້ສາມາດຍົກສູງກໍາລັງການຜະລິດໃນຂະແໜງການ ບ່ອນທີ່ຍັງຄົງມີບັນຫາທ້າທາຍສໍາຄັນ ທີ່ກີດຂວາງການຕອບສະໜອງຕໍ່ພັນທະສັນຍາພາຍໃຕ້ ສົນທິສັນຍາວ່າດ້ວຍລະເບີດລູກຫວ່ານ. ຈະມີການພິຈາລະນາຢ່າງຮອບຄອບເຖິງລັກສະນະດ້ານບົດບາດຍິງຊາຍ ຂອງການຕົກເປັນຜູ້ປະສົບເຄາະຮ້າຍຈາກ ລບຕ, ບົດບາດຂອງແມ່ຍິງ ແລະ ຜູ້ຊາຍໃນຂັ້ນຕອນການອານຸຍາດນໍາໃຊ້ເນື້ອທີ່ດິນ, ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.
- ການຍົກສູງຄວາມໂປ່ງໃສໃນຂັ້ນຕອນການກໍານົດບຸລິມະສິດໃຫ້ແກ່ວຽກງານໃນຂະແໜງການ ຈະຊ່ວຍຍົກສູງປະສິດທິພາບໃຫ້ແກ່ການຕິດຕາມກວດກາການນໍາໃຊ້ຊັບພະຍາກອນຂອງຂະແໜງການ ລບຕ ແລະ ຈະຊ່ວຍເຂົ້າໃນຂັ້ນຕອນການວິເຄາະກຸ່ມຜູ້ໄດ້ຮັບຜົນປະໂຫຍດ.
- ອົງການ UNDP ຈະສະໜັບສະໜູນ NRA ໃນການສ້າງແຜນການນີ້ (ການປະເມີນຜົນຫຼັງການເກັບກູ້ລະເບີດ) ແລະ ຈະໃຫ້ຄໍາແນະນໍາກ່ຽວກັບສິ່ງທີ່ຕ້ອງລວມເຂົ້າໄວ້ໃນແຜນການ ເພື່ອຮັບປະກັນໃຫ້ມັນສອດຄ່ອງກັບຫຼັກການຕ່າງໆທີ່ອີງໃສ່ແນວທາງດ້ານສິດທິມະນຸດ ແລະ ໃຫ້ສາມາດຢັ້ງຢືນໄດ້ວ່າກຸ່ມທີ່ມີຄວາມສ່ຽງສູງນັ້ນ ຖືກລວມເຂົ້າໄວ້ໃນຂະບວນການປຶກສາຫາລືດ້ານວຽກງານການສໍາຫຼວດ ແລະ ການເກັບກູ້ລະເບີດໃນຂັ້ນບ້ານແລ້ວ ຫຼື ບໍ່.

ໃນດ້ານການລະບຸວ່າໂຄງການດັ່ງກ່າວ ມີແນວໂນ້ມທີ່ຈະຊ່ວຍຍົກສູງຄວາມສະເໝີພາບ ແລະ ບົດບາດໃຫ້ແກ່ແມ່ຍິງໄດ້ຄືແນວໃດນັ້ນ, ເອກະສານໂຄງການໄດ້ກ່າວວ່າ:

> ໂຄງການນີ້ລວມມີອົງປະກອບຕ່າງໆທີ່ຖືກອອກແບບມາ ເພື່ອຊ່ວຍປັບປຸງໃຫ້ NRA ສາມາດຄຸ້ມຄອງ ແລະ ນໍາໃຊ້ຂໍ້ມູນໄດ້ດີຂຶ້ນ. ສິ່ງນີ້ລວມມີການສົ່ງເສີມໃຫ້ມີການເກັບກໍາ ແລະ ນໍາໃຊ້ຂໍ້ມູນທີ່ແບ່ງອອກເປັນກຸ່ມເພດ ແລະ ອາຍຸຫຼາຍຂຶ້ນ (ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ), ເທົ່າທີ່ສາມາດເຮັດໄດ້ຕໍ່ກຸ່ມຜູ້ໄດ້ຮັບຜົນປະໂຫຍດຕົ້ນຕໍ, ຜູ້ປະສົບເຄາະຮ້າຍຈາກອຸບັດເຫດ ແລະ ພະນັກງານຜູ້ທີ່ສາມາດເຂົ້າເຖິງສື່ການຮຽນຮູ້ທີ່ໂຄງການສະໜອງໃຫ້. ນອກຈາກນັ້ນ, NRA ຍັງໄດ້ຢືນຢັນເຖິງຄໍາໝັ້ນສັນຍາຂອງຕົນ ໃນການປັບປຸງຂັ້ນຕອນການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ ໃຫ້ດີຂຶ້ນ ອັນເປັນພາກສ່ວນໜຶ່ງຂອງແຜນຍຸດທະສາດກ້າວສູ່ຄວາມປອດໄພ III ຂອງຂະແໜງການ.

ຄໍາໝັ້ນສັນຍາດັ່ງກ່າວປະກອບມີ:

⇨ ໃນ 13 ທີມພາຍໃຕ້ ທີມງານເກັບກູ້ລະເບີດເພື່ອມະນຸດຊະທໍາ ຂອງ ກອງທັບປະຊາຊົນລາວ (ກອງຮ້ອຍ 58), ຈະມີໜຶ່ງ ຫຼື ສອງທີມທີ່ຈະຖືກຈັດໃຫ້ເປັນທີມງານແມ່ຍິງລ້ວນພາຍໃນປີ 2026 ເພື່ອໃຫ້ແມ່ຍິງມີໂອກາດໄດ້ຮັບການແຕ່ງຕັ້ງເປັນຫົວໜ້າທີມຫຼາຍຂຶ້ນ.

⇨ ກອງຮ້ອຍ 58 ຈະຮັກສາອັດຕາສ່ວນຂັ້ນຕໍ່າຂອງພະນັກງານຍິງໄວ້ທີ່ 15 ສ່ວນຮ້ອຍໄວ້ຈາກ 20 ທີມທີ່ຕົນມີ.

⇨ NRA ດ້ວຍການສະໜັບສະໜູນຈາກ ອົງການ UNDP ຈະສະໜອງການຝຶກອົບຮົມຄູຝຶກກ່ຽວກັບການເຊື່ອມສານວຽກງານດ້ານບົດບາດຍິງຊາຍ ໃຫ້ແກ່ໜ່ວຍງານຕ່າງໆທີ່ມີສ່ວນພົວພັນກັບຂະແໜງການ ລບຕ, ໂດຍອີງໃສ່ ປຶ້ມຄູ່ມືສໍາລັບຄູຝຶກກ່ຽວກັບການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ ໃນ ສປປ ລາວ.

ໃນພາກສ່ວນທີ່ເວົ້າເຖິງຄວາມຮັບຜິດຊອບຂອງຄູ່ຮ່ວມງານ, ເອກະສານໂຄງການໄດ້ກ່າວວ່າ:

> ໂຄງການນີ້ສົ່ງເສີມຄວາມຮັບຜິດຊອບໃຫ້ແກ່ຄູ່ຮ່ວມງານຂອງໂຄງການໂດຍຜ່ານ: (i) ການຊ່ວຍໃຫ້ຊຸມຊົນທ້ອງຖິ່ນທີ່ຫ້າວຫັນ ສາມາດມີສ່ວນພົວພັນ ແລະ ມີສ່ວນຮ່ວມເຂົ້າໃນຂະບວນການຕັດສິນໃຈ, ໂດຍສະເພາະຜູ້ທີ່ຢູ່ໃນສະພາບມີຄວາມສ່ຽງຖືກຖິ້ມໄວ້ທາງຫຼັງສູງກວ່າໝູ່; ແລະ (ii) ການຮັບປະກັນໃຫ້ຄູ່ຮ່ວມງານສາມາດແຈ້ງບອກຂໍ້ກັງວົນໃຈຂອງພວກເຂົາ ແລະ ສາມາດເຂົ້າເຖິງຂັ້ນຕອນ ແລະ ກົນໄກແກ້ໄຂຄໍາຮ້ອງທຸກທີ່ສອດຄ່ອງກັບສິດທິຂອງພວກເຂົາໄດ້.
>
> ໂຄງການນີ້ຍັງສະໜັບສະໜູນກົນໄກການສະແດງຄວາມຮັບຜິດຊອບ, ທີ່ເອີ້ນວ່າ: ສາຍດ່ວນຫຼຸດຜ່ອນຄວາມສ່ຽງຈາກວັດຖຸລະເບີດ ແລະ ລບຕ - ພາຍໃຕ້ຫົວໜ່ວຍ [ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ] ຂອງ NRA, ທີ່ຮັບປະກັນໃຫ້ບຸກຄົນ, ປະຊາຊົນ, ແລະ ຊຸມຊົນຕ່າງໆທີ່ໄດ້ຮັບຜົນກະທົບຈາກໂຄງການ ຫຼື ລບຕ ສາມາດເຂົ້າເຖິງລະບຽບຂັ້ນຕອນທີ່ເໝາະສົມໃນການຮັບຟັງ, ແບ່ງປັນຂໍ້ມູນ, ແລະ ຮ່ວມກັນແກ້ໄຂບັນຫາຕ່າງໆທີ່ກ່ຽວຂ້ອງກັບຜົນກະທົບທາງສັງຄົມ ແລະ/ຫຼື ທາງສິ່ງແວດລ້ອມທີ່ເກີດຈາກບັນດາໂຄງການ ທີ່ຢູ່ພາຍໃຕ້ການສະໜັບສະໜູນຂອງ ອົງການ UNDP.

## ຂໍ້ແນະນໍາທີ 6

⇨ ອົງການ UNDP ຈະຕ້ອງຮັບປະກັນໃຫ້ມີກົນໄກການຮ້ອງທຸກທີ່ສອດຄ່ອງກັບສິດທິຂອງປະຊາຊົນ ແລະ ທີ່ທຸກຄົນສາມາດເຂົ້າເຖິງໄດ້, ໂດຍສະເພາະຊົນກຸ່ມນ້ອຍທີ່ບໍ່ເວົ້າພາສາລາວ ແລະ ກຸ່ມຄົນທີ່ບໍ່ຮູ້ໜັງສື. ອົງປະກອບເຫຼົ່ານີ້ຈະຕ້ອງຖືກລວມເຂົ້າໄວ້ໃນພາກສ່ວນທີ່ເວົ້າເຖິງສາຍດ່ວນຮ້ອງຮຽນບັນຫາ ລບຕ ແລະ ວັດຖຸລະເບີດ.

ພາຍໃຕ້ແຜນງານດັ່ງກ່າວ, ອົງການ UNDP ຈະສະໜັບສະໜູນການສ້າງທີມງານ EORE ໃນ ແຂວງຊຽງຂວາງ, ບໍລິຄໍາໄຊ, ວຽງຈັນ ແລະ ໄຊສົມບູນ, ແລະ ຈະດໍາເນີນການສໍາຫຼວດຄວາມຮູ້, ທັກສະນະຄະຕິ ແລະ ຫຼັກປະຕິບັດຕ່າງໆ ເພື່ອວິເຄາະຄວາມຕື່ນໂຕກ່ຽວກັບບັນຫາ ລບຕ ຂອງປະຊາຊົນ. ອົງການດັ່ງກ່າວຍັງຈະຊ່ວຍສະໜັບສະໜູນການເຜີຍແຜ່ຂໍ້ຄວາມ EORE ໂດຍຜ່ານລະບົບວິທະຍຸກະຈາຍສຽງ, ອາສາສະໝັກໃນຊົນນະບົດ ແລະ ຫຼັກສູດຂອງໂຮງຮຽນ, ແນໃສ່ກຸ່ມປະຊາກອນທີ່ມີຄວາມສ່ຽງເປັນຫຼັກໂດຍຜ່ານບັນຫາກິດຈະກໍາດັ່ງຕໍ່ໄປນີ້:

- ສະໜັບສະໜູນການສ້າງແຜນຍຸດທະສາດ ແລະ ມາດຕະຖານລະບຽບການປະຕິບັດງານໃຫແກ່ EORE
- ວັດແທກການປັບປ່ຽນພຶດຕະກໍາຂອງກຸ່ມປະຊາກອນທີ່ມີຄວາມສ່ຽງ ໂດຍຜ່ານການສ້າງຂໍ້ມູນທຽບຖານ ແລະ ຂໍ້ມູນຄາດໝາຍ
- ສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ແກ່ຫຼັກປະຕິບັດໃນວຽກງານຫຼຸດຜ່ອນຄວາມສ່ຽງຈາກວັດຖຸລະເບີດ ທີ່ແນໃສ່ປັບປ່ຽນພຶດຕະກໍາໃຫ້ແກ່ປະຊາກອນກຸ່ມສ່ຽງ, ລວມທັງຫຼັກປະຕິບັດໃນສະຖານະການສຸກເສີນ.

## ຂໍ້ແນະນໍາທີ 7

⇨ ການສະໜັບສະໜູນຂອງ ອົງການ UNDP ສໍາລັບວຽກງານ EORE ຈະຕ້ອງໂຮມເອົາຜົນໄດ້ຮັບຂອງການຄົ້ນຄວ້າໃນປັດຈຸບັນນີ້ ເຂົ້າໃນການສໍາຫຼວດຄວາມຮູ້, ທັດສະນະຄະຕິ ແລະ ຫຼັກປະຕິບັດ, ແຜນຍຸດທະສາດ, ມາດຕະຖານລະບຽບການປະຕິບັດງານ, ຂໍ້ມູນທຽບຖານ ແລະ ຂໍ້ມູນຄາດໝາຍ, ແລະ ການສະໜັບສະໜູນສໍາລັບການຈັດຕັ້ງປະຕິບັດວຽກງານ EORE, ໂດຍເນັ້ນໜັກເປັນພິເສດໃສ່ບັນຫາທີ່ກ່ຽວຂ້ອງກັບພາສາ ແລະ ຄວາມຮູ້ໜັງສື, ແລະ ແນໃສ່ບັນດາກິດຈະກໍາຕໍ່ປະຊາກອນກຸ່ມສ່ຽງໂດຍອີງຕາມສະຖານທີ່ ແລະ ເວລາທີ່ພວກເຂົາສະດວກ, ແລະ ລວມທັງການສະໜອງແຮງຈູງໃຈໃຫ້ພວກເຂົາເຂົ້າຮ່ວມ.

ພາກສ່ວນຄຸ້ມຄອງຄວາມສ່ຽງໃນເອກະສານໂຄງການນີ້ກ່າວວ່າ:

> ວັກທີ 4: ຄູ່ຮ່ວມຈັດຕັ້ງປະຕິບັດຮັບຮູ້ ແລະ ເຫັນດີວ່າ ອົງການ UNDP ຈະບໍ່ຍອມຮັບທຸກການກະທໍາທີ່ຖືວ່າເປັນການລ່ວງລະເມີດທາງເພດ ແລະ ການກົດຂີ່ ລວມໄປເຖິງການຂູດຮີດທາງເພດຕໍ່ທຸກຄົນ ທີ່ກໍ່ຂຶ້ນໂດຍຄູ່ຮ່ວມຈັດຕັ້ງປະຕິບັດ, ແລະ ທຸກຝ່າຍທີ່ມີໜ້າທີ່ຮັບຜິດຊອບ, ພະນັກງານຂອງພວກເຂົາ ແລະ ໜ່ວຍງານອື່ນໆທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດໂຄງການ, ບໍ່ວ່າຈະໃນຖານະຂອງຄູ່ຮ່ວມສັນຍາຫຼັກ ຫຼື ຄູ່ຮ່ວມສັນຍາຍ່ອຍ ແລະ ພະນັກງານຂອງພວກເຂົາ, ແລະ ທຸກຄົນທີ່ສະໜອງບໍລິການໃຫ້ພວກເຂົາພາຍໃຕ້ເອກະສານໂຄງການສະບັບນີ້.
>
> (a) ໃນການຈັດຕັ້ງປະຕິບັດວຽກງານຕ່າງໆພາຍໃຕ້ເອກະສານໂຄງການນີ້, ຄູ່ຮ່ວມຈັດຕັ້ງປະຕິບັດ, ແລະ ທຸກໆຝ່າຍດັ່ງທີ່ກ່າວໄວ້ຂ້າງເທິງນີ້, ຈະຕ້ອງປະຕິບັດຕາມມາດຕະຖານການດໍາເນີນງານທີ່ກໍານົດໄວ້ໃນ ຖະແຫຼງການຂອງເລຂາທິການໃຫຍ່ ເລກທີ ST/SGB/2003/13 ລົງວັນທີ 9 ຕຸລາ 2003,

ກ່ຽວກັບ “ມາດຕະການພິເສດສຳລັບການປົກປ້ອງຈາກການລ່ວງລະເມີດ ແລະ ການຂູດຮີດທາງເພດ” (“SEA”).

(b) ນອກຈາກນັ້ນ, ແລະ ໂດຍປາສະຈາກຂໍ້ຈຳກັດຕໍ່ການນຳໃຊ້ລະບຽບການ, ກົດລະບຽບ, ນະໂຍບາຍ ແລະ ລະບຽບຂັ້ນຕອນອື່ນໆ ທີ່ເຮັດໜ້າທີ່ຄຸ້ມຄອງການດຳເນີນວຽກງານຕ່າງໆ ພາຍໃຕ້ເອກະສານໂຄງການສະບັບນີ້, ໃນລະຫວ່າງການຈັດຕັ້ງປະຕິບັດວຽກງານ, ຄູ່ຮ່ວມຈັດຕັ້ງປະຕິບັດ, ແລະ ຝ່າຍຕ່າງໆທີ່ກ່າວເຖິງຂ້າງເທິງນີ້, ຈະຕ້ອງຫຼີກເວັ້ນຈາກການລ່ວງລະເມີດທາງເພດທຸກຮູບແບບ (“SH”). ການລ່ວງລະເມີດທາງເພດ ໝາຍເຖິງທຸກການກະທຳທີ່ບໍ່ເປັນທີ່ຕ້ອງການທີ່ມີລັກສະນະທາງເພດ ແລະ ຖືວ່າ ຫຼື ເຂົ້າໃຈວ່າຈະກໍ່ໃຫ້ເກີດການດູໝິ່ນ ຫຼື ການເຮັດໃຫ້ອັບອາຍ. ເມື່ອການກະທຳດັ່ງກ່າວເກີດຂຶ້ນໃນສະຖານທີ່ເຮັດວຽກ, ກໍ່ຈະສົ່ງຜົນກະທົບຕໍ່ເງື່ອນໄຂການຈ້າງງານ ຫຼື ກໍ່ໃຫ້ເກີດສະພາບແວດລ້ອມການເຮັດວຽກທີ່ໜ້າຢ້ານ, ເປັນອັນຕະລາຍ ຫຼື ເປັນໄພຕໍ່ທຸກຄົນ.

### ຜົນໄດ້ຮັບ

- ⇨ ພະນັກງານ ລບຕ ແລະ ອຳນາດການປົກຄອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ໄດ້ຖືກສອບຖາມເຖິງຄວາມຮູ້ກ່ຽວກັບມາດຕະຖານ ແລະ ຫຼັກປະຕິບັດຕ່າງໆຂອງພວກເຂົາ ໃນການແກ້ໄຂບັນຫາການລ່ວງລະເມີດ ແລະ ການຂູດຮີດທາງເພດ, ແລະ ມາດຕະຖານດ້ານນະໂຍບາຍອື່ນໆທີ່ກ່ຽວຂ້ອງກັບແມ່ຍິງໃນຂະແໜງການ ລບຕ. ບໍ່ມີບຸກຄະລາກອນ ລບຕ ຫຼື ພະນັກງານລັດຄົນໃດ ທີ່ມີຄວາມຮູ້ກ່ຽວກັບມາດຕະການພິເສດຂອງ ເລຂາທິການໃຫຍ່ ສປຊ ກ່ຽວກັບການປົກປ້ອງຈາກການລ່ວງລະເມີດ ແລະ ການຂູດຮີດທາງເພດ, ຫຼື ແມ້ກະທັ້ງຄວາມຮູ້ກ່ຽວກັບນິຕິກຳແຫ່ງຊາດ ທີ່ແນໃສ່ແກ້ໄຂບັນຫາການລ່ວງລະເມີດທາງເພດ.

### ຂໍ້ແນະນຳທີ 8

- ⇨ ການທົບທວນຄືນນະໂຍບາຍສຳລັບພະນັກງານໃນ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao ພາຍໃຕ້ແຜນການດຳເນີນງານດ້ານຄວາມຫຼາກຫຼາຍ ຈະຕ້ອງແນໃສ່ແກ້ໄຂຊ່ອງຫວ່າງຕ່າງໆທີ່ມີໃນນະໂຍບາຍ ແລະ ລະບຽບຂັ້ນຕອນການປະຕິບັດວຽກງານປ້ອງກັນການລ່ວງລະເມີດ ແລະ ການຂູດຮີດທາງເພດ, ແລະ ຈະຕ້ອງແນໃສ່ຮັບປະກັນຄວາມສອດຄ່ອງຕໍ່ ກົດລະບຽບແຮງງານ, ໂດຍສະເພາະຫຼັກປະຕິບັດທີ່ແນໃສ່ຮັບປະກັນຄວາມປອດໄພໃຫ້ແກ່ແມ່ຍິງ, ໄປພ້ອມໆກັບການຮັບຮູ້ເຖິງບັນຫາທ້າທາຍ ໃນການແກ້ໄຂບັນຫາດ້ານນະໂຍບາຍຊັບພະຍາກອນມະນຸດໃຫ້ແກ່ກອງຮ້ອຍ 58 ຍ້ອນນີ້ແມ່ນໜ່ວຍງານຂອງກອງທັບພາຍໃຕ້ກະຊວງປ້ອງກັນປະເທດ.



© UNDP / Pongpat Sensouphone





# 5

# ໂຄງຮ່າງ ແລະ ຜົນໄດ້ຮັບ ຂອງປະຕິບັດງານພາກສະໜາມ

© Sasha Popovic

## 5.1 ການເກັບກຳຂໍ້ມູນຈາກຄູ່ຮ່ວມງານ

ພາກສ່ວນນີ້ຈະສະແດງໃຫ້ເຫັນເຖິງຄູ່ຮ່ວມງານທີ່ເປັນເປົ້າໝາຍຂອງການຄົ້ນຄວ້າຄັ້ງນີ້, ອະທິບາຍກ່ຽວກັບຮູບແບບການເກັບກຳຂໍ້ມູນ ແລະ ຈຸດເນັ້ນໜັກຂອງການສອບຖາມຂໍ້ມູນ. ມັນຍັງສະໜອງຜົນໄດ້ຮັບຂັ້ນສູງບາງອັນ; ພາກສ່ວນຕໍ່ໄປນີ້ຈະສະໜອງລາຍລະອຽດເພີ່ມເຕີມຂອງຜົນໄດ້ຮັບ ທີ່ກ່ຽວຂ້ອງກັບຂອບວຽກດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ.

ປະຕິບັດການພາກສະໜາມເລີ່ມຂຶ້ນໃນວັນທີ 22 ມັງກອນ ເຖິງ 8 ກຸມພາ 2023, ແລະ ປະກອບມີການສຳພາດຄູ່ຮ່ວມງານໃນ ນະຄອນຫຼວງວຽງຈັນ ຕາມມາດ້ວຍການເກັບກຳຂໍ້ມູນໃນ ແຂວງບໍລິຄຳໄຊ ແລະ ແຂວງຊຽງຂວາງ. ອົງການ UNDP ໄດ້ຄັດເລືອກເອົາແຂວງເຫຼົ່ານີ້ເປັນສະໜາມປະຕິບັດງານ ຍ້ອນເປັນບ່ອນທີ່ ອົງການ UNDP ໃຫ້ການສະໜັບສະໜູນດ້ານການເງິນແກ່ ກອງຮ້ອຍ 58 ແລະ ໂຄງການ UXO Lao ດຳເນີນວຽກງານສຳຫຼວດ ແລະ ເກັບກູ້ລະເບີດຢູ່ແລ້ວ. ໄດ້ມີການສຳພາດພະນັກງານທັງຊາຍ ແລະ ຍິງລວມໄປເຖິງການນຳໃນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ທີ່ຮັບຜິດຊອບວຽກງານການຄຸ້ມຄອງໃນລະດັບທ້ອງຖິ່ນ. ທີມປະຕິບັດງານພາກສະໜາມ ປະກອບມີ ບົວຄຳ ທຳມະວົງ (NRA), ມະນີວັນ ກິດຕິລາດ (ກະຊວງແຮງງານ ແລະ ສະຫວັດດີການສັງຄົມ) ແລະ ວາດສະໜາ ຫຼວງອາໄພ ແລະ ບຸນທັນ ສົວແສ (LWU).

ລາຍຊື່ເຕັມຂອງບັນດາເຄື່ອງມືພາກສະໜາມແມ່ນໄດ້ຖືກສະແດງໄວ້ໃນ ພາກເອກະສານຊ້ອນທ້າຍທີ 6, ເຊິ່ງປະກອບມີຊຸດຄຳຖາມເພື່ອດຳເນີນການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ, ການສົນທະນາກຸ່ມສະເພາະ ແລະ ການສຳພາດຄົວເຮືອນ, ລວມໄປເຖິງເຄື່ອງມືສົ່ງເສີມການມີສ່ວນຮ່ວມສຳລັບການສົນທະນາກຸ່ມສະເພາະ ຮ່ວມກັບກຸ່ມລູກບ້ານແມ່ຍິງ ແລະ ຜູ້ຊາຍໃນທ້ອງຖິ່ນ. ຄຳຖາມຫຼາຍຂໍ້ທີ່ນຳໃຊ້ໃນເຄື່ອງມືເຫຼົ່ານີ້ແມ່ນຊຸດຄຳຖາມແບບດຽວກັນ ທີ່ໄດ້ມາຈາກການປະເມີນຜົນຂອງ ອົງການແມັກ ໃນປີ 2008, GMAP ໃນປີ 2014 ແລະ ອົງການ ສປຊ ເພື່ອແມ່ຍິງ/LWU ໃນປີ 2018. ຄຳຖາມບາງຂໍ້ແມ່ນໄດ້ມາຈາກສື່ສິ່ງພິມຂອງ GMAP/GICHD ແລະ ຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງອົງການ ສປຊ ສຳລັບແຜນງານການເກັບກູ້ລະເບີດ. ຄຳຖາມເຫຼົ່ານີ້ແມ່ນໄດ້ຖືກລວມເຂົ້າໃນປະຕິບັດການພາກສະໜາມຄັ້ງນີ້ ເພື່ອຊ່ວຍຕິດຕາມການຈັດຕັ້ງປະຕິບັດບັນດາຂໍ້ແນະນຳ ທີ່ສ້າງຂຶ້ນຈາກການປະເມີນບົດບາດຍິງຊາຍ ແລະ ລບຕ ເມື່ອຄັ້ງທີ່ຜ່ານມາ, ແລະ ເພື່ອລະບຸລະດັບຂອງຄວາມສອດຄ່ອງກັບມາດຕະຖານຂອງ ອົງການ ສປຊ ແລະ ຂອງ GMAP/GICHD.

**ຜົນໄດ້ຮັບ**

- ⇨ ໃນເວລາດຳເນີນການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍ ເຮັດໃຫ້ຮູ້ໄດ້ຊັດເຈນວ່າຂໍ້ແນະນຳຈາກການປະເມີນບົດບາດຍິງຊາຍ ແລະ ລບຕ ໃນຄັ້ງກ່ອນແມ່ນບໍ່ໄດ້ຖືກນຳມາຈັດຕັ້ງປະຕິບັດເລີຍ. ຜູ້ຖືກສຳພາດມີຄວາມຮູ້ພຽງເລັກນ້ອຍເທົ່ານັ້ນ ກ່ຽວກັບມາດຕະຖານສາກົນວ່າດ້ວຍບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ. ຄຳຖາມສຳຫຼວດບາງຂໍ້ແມ່ນໄດ້ຖືກລຶບອອກ ເມື່ອນຳໄປສຳພາດພະນັກງານໃນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ. ຜູ້ຖືກສຳພາດປາກົດວ່າບໍ່ມີຄວາມຮູ້ເລີຍກ່ຽວກັບຫຼັກປະຕິບັດ ແລະ ມາດຕະຖານຂອງການບໍ່ຍອມຮັບຕໍ່ການລ່ວງລະເມີດ ແລະ ການຂູດຮີດທາງເພດຂອງອຳນາດການປົກຄອງ ນັບຕັ້ງແຕ່ຂັ້ນແຫ່ງຊາດໄປຈົນເຖິງຂັ້ນບ້ານ.

## 5.2 ຄູ່ຮ່ວມງານໃນ ນະຄອນຫຼວງວຽງຈັນ

ລາຍຊື່ຂອງຄູ່ຮ່ວມງານທີ່ຖືກສຳພາດໃນ ນະຄອນຫຼວງວຽງຈັນ ແມ່ນໄດ້ຖືກສະແດງໄວ້ໃນ ພາກເອກະສານຊ້ອນທ້າຍທີ 1. ຄູ່ຮ່ວມງານສ່ວນໃຫຍ່ແມ່ນມາຈາກ NRA ແລະ ກອງຮ້ອຍ 58 (ໃນຕອນທີ່ພະນັກງານພາກສະໜາມໄປປະຈຳຢູ່ພື້ນທີ່) ລວມໄປເຖິງຜູ້ສະໜອງ EORE ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນລະດັບຊາດ. ຊຸດຄຳຖາມສ່ວນໃຫຍ່ແມ່ນເນັ້ນໜັກໃສ່ນະໂຍບາຍ ແລະ ມາດຕະຖານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ລວມໄປເຖິງລະບຽບຂັ້ນຕອນການປະຕິບັດງານຂອງອົງກອນຕ່າງໆ, ແລະ ການໂຮມເອົາບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້າໃນບັນດານະໂຍບາຍທີ່ເປັນມາດຕະຖານ. ການສຳພາດທັງໝົດແມ່ນຖືກດຳເນີນການໂດຍທີ່ປຶກສາສາກົນ ແລະ ທ້ອງຖິ່ນໃນ ນະຄອນຫຼວງວຽງຈັນ.

ຄູ່ຮ່ວມງານຖືກຖາມກ່ຽວກັບການສັງເກດການຂອງພວກເຂົາ ຕໍ່ບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ, ລວມທັງແນວໂນ້ມດ້ານປະຊາກອນໃນກຸ່ມປະຊາກອນທີ່ທຸກຍາກ ແລະ ກຸ່ມຊົນເຜົ່າ, ລວມໄປເຖິງອັດຕາການເສຍຊີວິດ ແລະ ບາດເຈັບຈາກ ລບຕ ໂດຍແບ່ງຕາມກຸ່ມເພດ ແລະ ອາຍຸ, ຍຸດທະສາດ ແລະ ຂັ້ນຕອນການດຳເນີນວຽກງານ EORE, ແລະ ບໍລິການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍທີ່ມີຢູ່. ແຕ່ລະອົງກອນແມ່ນໄດ້ຖືກສອບຖາມຂໍ້ມູນກ່ຽວກັບເພດ, ຄວາມພິການ ແລະ ກຸ່ມຊົນເຜົ່າ ໃນຂັ້ນຕອນການບັນຈຸພະນັກງານພາຍໃນອົງກອນ, ລວມໄປເຖິງຄວາມສາມາດໃນການເຂົ້າເຖິງການຝຶກອົບຮົມດ້ານບົດບາດຍິງຊາຍຂອງພະນັກງານ. ຊຸດຄຳຖາມທີ່ນຳໃຊ້ໃນວຽກງານພາກສະໜາມ ແມ່ນເນັ້ນໜັກໃສ່ຂັ້ນຕອນການຈັດລຽງບຸລິມະສິດໃຫ້ແກ່ວຽກງານເກັບກູ້ເນື້ອທີ່ດິນ ແລະ ການປຶກສາຫາລືກັບຊຸມຊົນ (ຍົກຕົວຢ່າງ: ມີການເອີ້ນປະຊຸມຄືແນວໃດ, ຈັດປະຊຸມຢູ່ໃສ ແລະ ມີໃຜແດ່ເຂົ້າຮ່ວມປະຊຸມ). ບຸກຄະລາກອນ ລບຕ ແມ່ນໄດ້ຖືກຖາມໂດຍສະເພາະກ່ຽວກັບມາດຕະຖານ, ເງື່ອນໄຂ ແລະ ຄວາມເຂົ້າໃຈຂອງພວກເຂົາວ່າ ທີມງານແບບປະສົມປະສານນັ້ນເມື່ອສົມທຽບໃສ່ກັບທີມງານທີ່ມີແຕ່ຜູ້ຊາຍ ຫຼື ທີ່ມີແຕ່ຜູ້ຍິງ ມີຄວາມແຕກຕ່າງກັນຄືແນວໃດ.

**NRA ແລະ ກອງຮ້ອຍ 58**

ທີມງານຂອງ ກອງຮ້ອຍ 58 ແມ່ນປະຈຳຢູ່ນະຄອນຫຼວງວຽງຈັນ ທຸກເວລາທີ່ມີການປະຕິບັດງານພາກສະໜາມຢູ່. ເຖິງແມ່ນວ່າການສຳຫຼວດທີ່ບໍ່ແມ່ນວິຊາການ, ການສຳຫຼວດທາງດ້ານວິຊາການ ແລະ ການເກັບກູ້ລະເບີດນັ້ນຈະຖືກດຳເນີນການ ໃນຮູບແບບທີ່ສາມາດແຍກທີມປະຕິບັດງານໄດ້, ແຕ່ກອງປະຊຸມຂອງ ກອງຮ້ອຍ 58 ແມ່ນເຮັດລວມກັນເລີຍ, ໂດຍປະກອບມີຜູ້ເຂົ້າຮ່ວມທີ່ມາຈາກທີມຊາຍລ້ວນ ແລະ ທີມປະສົມ. ເຖິງຢ່າງໃດກໍ່ຕາມ, ກອງປະຊຸມດັ່ງກ່າວມີຜູ້ເຂົ້າຮ່ວມຍິງພຽງຄົນດຽວເທົ່ານັ້ນ, ນີ້ຈຶ່ງເປັນໜຶ່ງໃນສາເຫດທີ່ບໍ່ສາມາດຈັດກອງປະຊຸມສົນທະນາແບບແຍກທີມໄດ້, ໂດຍສະເພາະກັບທີມຍິງ.

ຈຸດເນັ້ນໜັກຂອງການສອບຖາມຂໍ້ມູນ ແມ່ນກ່ຽວຂ້ອງກັບຄວາມເຂົ້າໃຈຂອງຜູ້ຖືກຖາມຕໍ່ວຽກງານ, ກຳລັງການຜະລິດ, ການພັກເຊົາຮ່ວມກັນ ແລະ ຄວາມເຂົ້າໃຈຕໍ່ຊຸມຊົນຂອງທີມງານຊາຍລ້ວນ, ຍິງລ້ວຍ ແລະ ທີມປະສົມໃນບັນດາຊຸໃຊົນທ້ອງຖິ່ນ. ບັນຫາອື່ນໆລວມມີຫຼັກປະຕິບັດ, ນະໂຍບາຍອັນສະເພາະສຳລັບແມ່ຍິງ, ທ່າແຮງຂອງແມ່ຍິງໃນການດຳເນີນບົດບາດຂັ້ນບໍລິຫານ, ຂັ້ນຕອນໃນການປຶກສາຫາລືກັບຊຸມຊົນ ແລະ ການປະກາດ, ການພິມປະ ແລະ ສື່ການຮຽນການສອນໃນວຽກງານ EORE ທີ່ຖືກອອກແບບມາສະເພາະກຸ່ມທີ່ມີຄວາມສ່ຽງສູງ.

**ຜົນໄດ້ຮັບ**

- ⇨ NRA ບໍ່ມີນະໂຍບາຍດ້ານບົດບາດຍິງຊາຍ ຫຼື ແຜນການດຳເນີນງານດ້ານບົດບາດຍິງຊາຍ. ພະນັກງານຂອງພວກເຂົາບໍ່ມີຄວາມຮູ້ກ່ຽວກັບບັນຫາດ້ານບົດບາດຍິງຊາຍໃນຂະແໜງການ ລບຕ ແລະ ບໍ່ເຄີຍໄດ້ຮັບການຝຶກອົບຮົມໃນຂົງເຂດນີ້ເລີຍ.
- ⇨ ຈາກພະນັກງານທັງໝົດ 180 ຄົນ, ໃນນັ້ນ 28 ຄົນແມ່ນແມ່ຍິງ, 2 ຄົນແມ່ນຊົນເຜົ່າຂະມຸ ແລະ ບໍ່ມີໃຜທີ່ພິການ.
- ⇨ ແມ່ຍິງຈຳນວນ 28 ຄົນນັ້ນ, ເຖິງແມ່ນວ່າຈະເຮັດວຽກໃນພື້ນທີ່ທີ່ແຕກຕ່າງກັນກໍ່ຕາມ, ພວກເຂົາລ້ວນແລ້ວແຕ່ເປັນພາກສ່ວນໜຶ່ງຂອງຫົວໜ່ວຍແມ່ຍິງ. ໃນທີມງານນີ້ປະກອບມີຫົວໜ້າທີມ 5 ຄົນທີ່ມີຄວາມເຊື່ອມໂຍງກັບ LWU ແລະ ດັ່ງນັ້ນຈຶ່ງຕ້ອງແບກຮັບຄວາມຮັບຜິດຊອບ 2 ເທົ່າພາຍໃນກອງທັບ. ຖ້າຫົວໜ້າທີມທັງ 5 ຄົນເຂົ້າຮ່ວມການຝຶກອົບຮົມ ຫຼື ໄດ້ຮັບຂໍ້ມູນ, ພວກເຂົາກໍ່ຈະມີໜ້າທີ່ຮັບຜິດຊອບໃນການແບ່ງປັນຄວາມຮູ້ໃໝ່ທີ່ໄດ້ຮັບນັ້ນ ກັບແມ່ຍິງທຸກຄົນໃນທີມ. ແມ່ຍິງພຽງຄົນດຽວທີ່ເຂົ້າຮ່ວມກອງປະຊຸມຂອງກອງຮ້ອຍ 58 ນັ້ນລາຍງານວ່າຜູ້ກ່ຽ%ໄດ້ຮັບຂໍ້ມູນກ່ຽວກັບສິດທິຂອງແມ່ຍິງ, ບົດບາດລະຫວ່າງຍິງຊາຍ ນະໂຍບາບດ້ານບົດບາດຍິງຊາຍ, ແຕ່ບໍ່ມີຂໍ້ມູນໃດທີ່ເຊື່ອມໂຍງໂດຍສະເພາະກັບວຽກງານ ລບຕ ເລີຍ.

**ທີມງານ EORE**

- ⇨ ທີມງານ EORE ໃນປັດຈຸບັນປະກອບມີສະມາຊິກ 4 ຄົນ ແລະ ບໍ່ມີແມ່ຍິງເລີຍ. ທີ່ປຶກສາໄດ້ຖືກຮັບແຈ້ງວ່າຄ້າຍພັກເຊົາພາກສະໜາມນັ້ນ "ແມ່ນບໍ່ເໝາະສົມກັບແມ່ຍິງ." ຄູ່ຮ່ວມງານໄດ້ແນະນຳວ່າແມ່ຍິງນັ້ນ ບໍ່ສາມາດເຮັດວຽກໜັກໄດ້, ໂດຍສະເພາະການເດີນທາງໄປຍັງສະຖານທີ່ຫ່າງໄກສອກຫຼີກ ບ່ອນທີ່ຈຳເປັນຈະຕ້ອງໄດ້ຍ່າງຜ່ານປ່າ, ຂີ່ລົດຈັກ ແລະ ນອນໃນພື້ນທີ່ກາງແຈ້ງ, ໂດຍສ່ວນໃຫຍ່ແລ້ວຈະບໍ່ມີການກາງເຕັ້ນ ຫຼື ມີບ່ອນຮອງນອນ.
- ⇨ ທີມງານ EORE ເກັບກຳເອົາຂໍ້ມູນໂດຍແບ່ງຕາມກຸ່ມເພດຈາກຜູ້ໃຫຍ່ ແຕ່ບໍ່ເກັບກຳຂໍ້ມູນຈາກເດັກນ້ອຍ, ແລະ ບໍ່ໄດ້ເກັບກຳຂໍ້ມູນໂດຍແບ່ງເປັນກຸ່ມອາຍຸ, ຄວາມພິການ ຫຼື ກຸ່ມຊົນເຜົ່າ. ໂຕແທນຂອງທີມງານໄດ້ກ່າວວ່າຖ້າມີການເຊີນສະມາຊິກຂອງຊຸມຊົນເຂົ້າຮ່ວມກອງປະຊຸມ, ພວກເຂົາມັກຈະສົ່ງຫົວໜ້າຄອບຄົວມາແທນ. ໂຕແທນດັ່ງກ່າວໄດ້ແນະນຳວ່າ ການມີຜູ້ເຂົ້າຮ່ວມກອງປະຊຸມຈາກກຸ່ມຊົນເຜົ່າໜ້ອຍນັ້ນ ອາດມີສາເຫດມາຈາກຄວາມເປັນໄປໄດ້ທີ່ວ່າພວກເຂົາບໍ່ໄດ້ຮັບການລົງທະບຽນ ແລະ ອາດຈະແລນໜີຂຶ້ນພູຖ້າມີກອງທັບເຂົ້າມາໃນເມືອງ.
- ⇨ ມີລາຍງານວ່າເດັກຍິງເຂົ້າຮ່ວມ EORE ໃນໂຮງຮຽນຫຼາຍກວ່າເດັກຊາບ ຍ້ອນເດັກຊາຍມີອັດຕາການປະລະຮຽນທີ່ສູງກວ່າ. ເມື່ອສອບຖາມວ່າຈະເຮັດແນວໃດໃຫ້ EORE ເຂົ້າເຖິງກຸ່ມເດັກຊາຍທີ່ປະລະຮຽນນັ້ນ, ໂຕແທນໄດ້ກ່າວວ່າພວກເຂົາໄດ້ສະໜອງແຜນປ້າຍ ແລະ ປຶ້ມຮຽນໃຫ້ກຸ່ມເດັກຊາຍດັ່ງກ່າວແລ້ວ ຫຼື ຮ້ອງຂໍໃຫ້ເອື້ອຍນ້ອງຂອງກຸ່ມເດັກຊາຍນັ້ນນຳເອົາສື່ການຮຽນໄປໃຫ້ແທນ.
- ⇨ ບໍ່ມີສື່ການຮຽນການສອນ EORE ອັນໃດທີ່ເນັ້ນໜັກໃສ່ກຸ່ມປະຊາກອນອັນສະເພາະໃນຊຸມຊົນ (ຍົກຕົວຢ່າງ: ສື່ການຮຽນທີ່ຖືກອອກແບບມາສະເພາະສຳລັບເດັກຊາຍທີ່ມີຄວາມສ່ຽງສູງນອກໂຮງຮຽນ).

**ທີມສຳຫຼວດແບບບໍ່ແມ່ນວິຊາການ**

- ⇨ ກອງຮ້ອຍ 58 ເຮັດວຽກຢູ່ ແຂວງບໍລິຄຳໄຊ ບ່ອນທີ່ມີກຸ່ມຊົນເຜົ່າກວມອັດຕາສ່ວນຮ້ອຍສູງກວ່າໝູ່.

- ກອງປະຊຸມພົບປະທົ່ວບ້ານໄດ້ຖືກຈັດຂຶ້ນ; ສະມາຊິກໃນທຸກຄອບຄົວສາມາດຖາມຄຳຖາມໄດ້. ກອງປະຊຸມດັ່ງກ່າວມັກຈະຖືກຈັດຂຶ້ນໃນສຳນັກບ້ານ ຫຼື ວັດ.
- ພະນັກງານໄດ້ກ່າວວ່າແມ່ຍິງມີແນວໂນ້ມທີ່ຈະແບ່ງປັນຂໍ້ມູນໜ້ອຍກວ່າຜູ້ຊາຍ ໂດຍສະເພາະໃນກໍລະນີທີ່ຂໍ້ມູນທີ່ຕົນມີນັ້ນ ຂັດແຍ່ງກັບສິ່ງທີ່ຜູ້ຊາຍໄດ້ເວົ້າໄປແລ້ວໃນກອງປະຊຸມ.
- ພວກເຂົາຍັງໃຫ້ຮູ້ອີກວ່າແມ່ຍິງເຜົ່າມົ້ງນັ້ນ ມີແນວໂນ້ມທີ່ຈະບໍ່ເຂົ້າຮ່ວມກອງປະຊຸມ ຍ້ອນບົດບາດທາງດ້ານເພດຕາມວັດທະນະທຳຂອງພວກເຂົາ ທີ່ສ່ວນໃຫຍ່ມັກຈະບໍ່ຄ່ອຍອອກບ້ານ. ຜູ້ຖືກສຳພາດສ່ວນໃຫຍ່ກ່າວວ່າພວກເຂົາບໍ່ມີ "ຂໍ້ມູນທີ່ເປັນປະໂຫຍດ."
- ຊົນເຜົ່າມົ້ງມີແນວໂນ້ມທີ່ຈະລາຍງານບັນຫາ ລບຕ ໜ້ອຍກວ່າໝູ່ ຍ້ອນພວກເຂົາສາມາດສ້າງລາຍຮັບຈາກການມ້າງເອົາເສດໂລຫະຈາກ ລບຕ ໄປຂາຍ.

**ທີມສຳຫຼວດທາງດ້ານວິຊາການ**

- ຈາກສະມາຊິກຂອງທີມທັງໝົດ 7 ຄົນ, ບໍ່ມີແມ່ຍິງ, ກຸ່ມຊົນເຜົ່າ ຫຼື ຄົນພິການເລີຍ.
- ອຸປະສັກສຳລັບກຸ່ມຊົນເຜົ່າໃນກອງທັບອາດລວມມີພາສາ ແລະ/ຫຼື ການຂາດຄວາມສົນໃຈ. ມາດຕະຖານດ້ານການແພດອາດເປັນສິ່ງກີດຂວາງບໍ່ໃຫ້ຄົນພິການ ສາມາດເຂົ້າຮ່ວມກອງທັບໄດ້; ເຖິງຢ່າງໃດກໍ່ຕາມ, ຖ້າມີໃຜຄົນໜຶ່ງບາດເຈັບໃນຂະນະທີ່ເຮັດວຽກໃຫ້ກອງທັບນັ້ນ, ຜູ້ກ່ຽວກໍ່ຈະຖືກຍົກຍ້າຍໄປຕຳແໜ່ງວຽກຫ້ອງການແທນ.
- ອຸປະສັກສຳລັບແມ່ຍິງແມ່ນຖືກອ້າງວ່າລວມມີຂໍ້ຫຍຸ້ງຍາກດ້ານການເດີນທາງ ແລະ ການພັກເຊົາໃນປ່າ ລວມໄປເຖິງຈຳນວນແມ່ຍິງທີ່ໜ້ອຍກວ່າໃນກອງທັບ.
- ທີມສຳຫຼວດແບບບໍ່ແມ່ນວິຊາການ, ທີມສຳຫຼວດທາງດ້ານວິຊາການ, ທີມງານເກັບກູ້ລະເບີດ ອາດເດີນທາງພ້ອມກັນໄປຍັງກຸ່ມບ້ານເປົ້າໝາຍ ໃນກໍລະນີທີ່ມີທີມພຽງພໍ.
- ພະນັກງານທົ່ວໄປເຂົ້າໃຈວ່າມີພຽງນະໂຍບາຍແຫ່ງຊາດຂໍ້ດຽວເທົ່ານັ້ນ ທີ່ແນໃສ່ແກ້ບັນຫາໃຫ້ແກ່ແມ່ຍິງ ນັ້ນກໍ່ຄືນະໂຍບາຍທີ່ກ່ຽວຂ້ອງກັບການລາພັກເກີດລູກ.

**ທີມງານເກັບກູ້ລະເບີດ**

- ມີທີມງານເກັບກູ້ລະເບີດທັງໝົດ 5 ທີມ, ແຕ່ລະທີມມີພະນັກງານ 13 ຄົນ, ແຕ່ລະທີມມີສະມາຊິກຍິງ 2 ຄົນ. ບໍ່ແຈກົດວ່າມີບູກທີມທີ່ມາຈາກກຸ່ມຊົນເຜົ່າ ຫຼື ກຸ່ມຄົນພິການ.
- ໃນເມືອງຕ່າງໆ, ທີ່ພັກສ່ວນໃຫຍ່ຈະຢູ່ໃນຮູບແບບຂອງຫໍພັກ ຫຼື ບ້ານຊັ້ນດຽວ. ຫ້ອງພັກໜຶ່ງຈະປະກອບມີຜູ້ຊາຍພັກຮ່ວມກັນ 3 ຫຼື 4 ຄົນ. ສ່ວນແມ່ຍິງແມ່ນມີຫ້ອງໜຶ່ງອີກຕ່າງໆຫາກ ແລະ ພັກຮ່ວມກັນ 2 ຄົນ. ທຸກຄົນຈະຕ້ອງໄດ້ໃຊ້ຫ້ອງນ້ຳຮ່ວມກັນ. ໂດຍທົ່ວໄປແລ້ວ, ພວກເຂົາຈະອາໄສໃນທີ່ພັກດັ່ງກ່າວລະຫວ່າງ 1 ຫາ 3 ເດືອນ.
- ໃນກໍລະນີທີ່ແມ່ຍິງທີ່ແຕ່ງດອງແລ້ວ ແລະ ຕ້ອງໄດ້ເດີນທາງໄປເຮັດວຽກພາກສະໜາມ, ຜູ້ຈັດການກໍ່ຈະໂອ້ລົມກັບຜົວຂອງຜູ້ກ່ຽວ.
- ທີ່ປຶກສາໄດ້ສອບຖາມກ່ຽວກັບການແຕ່ງກິນ, ການທຳຄວາມສະອາດ ແລະ ການລ້າງທີ່ພັກອາໄສ. ໄດ້ມີການສ້າງລາຍການສຳລັບວຽກເຮືອນຂຶ້ນ ພ້ອມທັງມີການໝູນວຽນກັນລ້າງຖ້ວຍ. ໂດຍປົກກະຕິແລ້ວ, ແມ່ຍິງຈະເປັນຜູ້ໄປຕະຫຼາດ ແລະ ບາງຄັ້ງຜູ້ຊາຍກໍ່ເປັນຜູ້ແຕ່ງກິນ.
- ຍ້ອນ ກອງຮ້ອຍ 58 ປະຕິບັດຕາມມາດຕະຖານຂອງກອງທັບ, ຈຶ່ງບໍ່ປາກົດວ່າມີນະໂຍບາຍການຮັບເອົາພະນັກງານ ຫຼື ນະໂຍບາຍການຈ້າງງານອັນສະເພາະຕໍ່ແມ່ຍິງ. ທີ່ປຶກສາໄດ້ຮັບການແນະນຳວ່າ ອົງການ UNDP ບໍ່ສາມາດຮຽກຮ້ອງໃຫ້ມີການປັບປ່ຽນນະໂຍບາຍບຸກຄະລາກອນດັ່ງກ່າວໄດ້. ຕຳແໜ່ງວຽກຕ່າງໆກໍ່ບໍ່ໄດ້ຮັບການໂຄສະນາອອກສູ່ພາຍນອກ.
- ແມ່ຍິງມີສິດຂໍພັກເກີດລູກແບບມີເງິນເດືອນໄດ້ 6 ເດືອນ. ຖ້າແມ່ຍິງຮູ້ສຶກບໍ່ສະບາຍໃນລະຫວ່າງຖືພາ, ພວກເຂົາສາມາດຍ້າຍໄປເຮັດວຽກໃນຫ້ອງການແທນ ຫຼື ຂໍລາປ່ອຍໄດ້.
- ຜູ້ເຂົ້າຮ່ວມກອງປະຊຸມອະທິບາຍວ່າຫຼັກປະຕິບັດຂອງກອງທັບນັ້ນ ແມ່ນມີຄວາມເຂັ້ມງວດຫຼາຍກວ່າອົງກອນອື່ນໆ. ໃນເວລາທີ່ທີ່ປຶກສາສອບຖາມກ່ຽວກັບຂັ້ນຕອນການແກ້ໄຂບັນຫາລ່ວງລະເມີດທາງເພດ, ພວກເຂົາກໍ່ໄດ້ຮັບແຈ້ງວ່ານີ້ແມ່ນນະໂຍບາຍປິດລັບຂອງກອງທັບ.
- ຜູ້ເຂົ້າຮ່ວມກອງປະຊຸມກ່າວວ່າທີມປະສົມ ແມ່ນແນວຄິດທີ່ດີຍ້ອນມັນສົ່ງເສີມໃຫ້ຜູ້ຊາຍ ເຮັດວຽກຮ່ວມກັບທັງຊາຍ ແລະ ຍິງເພື່ອສ້າງແຮງບັນດານໃຈໃຫ້ແກ່ກັນ. ພວກເຂົາຮູ້ສຶກວ່າແມ່ຍິງບໍ່ຄ່ອຍສະບາຍໃຈກັບທີມທີ່ມີແຕ່ຜູ້ຊາຍ, ແຕ່ຍ້ອນວ່າພວກເຂົາຢູ່ໃນກອງທັບ, ຊຸມຊົນຈຶ່ງໃຫ້ຄວາມໄວ້ເນື້ອເຊື່ອໃຈ. ກຸ່ມຜູ້ຊາຍໄດ້ກ່າວວ່າເຖິງແມ່ນວ່າຈະຢູ່ໃນທີມຊາຍລ້ວນກໍ່ຕາມ, ກອງທັບກໍ່ມີຄວາມເຂັ້ມງວດໃນການເກືອດຫ້າມເຄື່ອງດື່ມທີ່ມີທາດເຫຼົ້າ.
- ແມ່ຍິງຄົນໜຶ່ງໄດ້ກ່າວວ່າ ລາວອາດຮູ້ສຶກບໍ່ຄ່ອຍປອດໄພໃນທີມທີ່ມີແຕ່ແມ່ຍິງ ແລະ ອາດເປັນກັງວົນວ່າຊຸມຊົນຈະຄິດແນວໃດກ່ຽວກັບພວກເຂົາ.

### ໝາຍເຫດ

- ນອກເໜືອຈາກຜົນໄດ້ຮັບຂ້າງເທິງນີ້ແລ້ວ, ໃຫ້ອ້າງອີງເຖິງຜົນໄດ້ຮັບກ່ຽວກັບການລ່ວງລະເມີດທາງເພດ ແລະ ການຝຶກອົບຮົມວິຊາຊີບຕົ້ນໃນພາກທີ່ກ່ຽວຂ້ອງ ພາຍໃຕ້ແຜນງານໃນປັດຈຸບັນຂອງ ອົງການ UNDP.

### ຂໍ້ແນະນຳທີ 9

- ໂຕແທນຂອງຫົວໜ່ວຍແມ່ຍິງພາຍໃຕ້ ກອງຮ້ອຍ 58 ຈະຕ້ອງຖືກລວມເຂົ້າໄວ້ໃນຊຸດຝຶກອົບຮົມຕົ້ນຕໍກ່ຽວກັບບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ. ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ສຳລັບການຄົ້ນຄວ້າໃນຄັ້ງນີ້ ໄດ້ສະເໜີໃຫ້ມີການສ້າງພື້ນທີ່ໃຫ້ແກ່ໂຕແທນ 2 ຄົນໄດ້ດຳເນີນບົດບາດການເປັນຜູ້ປະສານງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ. ຖ້າເປັນໄປໄດ້ໃຫ້ເລືອກເອົາໂຕແທນຂັ້ນອາວຸໂສໜຶ່ງຄົນ ແລະ ໂຕແທນທີ່ບໍ່ແມ່ນຂັ້ນອາວຸໂສໜຶ່ງຄົນ.

## 5.3 ການພົບປະກັບຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນ ນະຄອນຫຼວງວຽງຈັນ

ຜູ້ເຂົ້າຮ່ວມລວມມີ NRA, ສູນການແພດ ແລະ ຟື້ນຟູໜ້າທີ່ການ (CMR), ສະມາຄົມຄົນພິການແຫ່ງຊາດລາວ (LDPA), ອົງການ HI, ອົງການການສຶກສາໂລກ ແລະ ສູນພັດທະນາແມ່ຍິງພິການແຫ່ງຊາດ (LDWDC).

- CMR ມີພະນັກງານທັງໝົດ 160 ຄົນ, ໃນນັ້ນແມ່ນແມ່ຍິງ 71 ຄົນ, ມີຄູສອນ 18 ຄົນ, ໂດຍທັງໝົດເປັນຄົນພິການ (ສ່ວນໃຫຍ່ຜູ້ຊາຍ), ບໍ່ຮູ້ວ່າມີການຈ້າງງານກຸ່ມຊົນເຜົ່າ ຫຼື ບໍ່.
- LDPA ມີພະນັກງານ 8 ຄົນ, ໃນນັ້ນແມ່ນແມ່ຍິງ 3 ຄົນ, ໜຶ່ງໃນນັ້ນແມ່ນຄົນພິການ ແລະ ໜຶ່ງແມ່ນມາຈາກກຸ່ມຊົນເຜົ່າ (ເຜົ່າພວນ).
- ອົງການ HI ມີພະນັກງານ 114 ຄົນ; ໃນນັ້ນ 38 ສ່ວນຮ້ອຍແມ່ນແມ່ຍິງ; ບໍ່ຮູ້ວ່າປັດຈຸບັນມີພະນັກງານທີ່ມາຈາກກຸ່ມຊົນເຜົ່າ ຫຼື ກຸ່ມຄົນພິການ ຫຼື ບໍ່, ແຕ່ບາງຄັ້ງອົງການດັ່ງກ່າວກໍ່ມີການຈ້າງງານຄົນພິການ.
- ອົງການການສຶກສາໂລກ ມີພະນັກງານ 30 ຄົນ, ໃນນັ້ນແມ່ນແມ່ຍິງ 16 ຄົນ ແລະ ຊົນເຜົ່າມົ້ງ 2 ຄົນ, ແຕ່ບໍ່ມີຄົນພິການ.



- LDWDC ມີພະນັກງານ 34 ຄົນ, ໃນນັ້ນແມ່ນແມ່ຍິງ 27 ຄົນ; ອົງກອນນີ້ມີພະນັກງານທີ່ມາຈາກ 3 ກຸ່ມຊົນເຜົ່າ; ມີພະນັກງານພຽງ 4 ຄົນເທົ່ານັ້ນທີ່ບໍ່ພິການ.

LDPA ດຳເນີນການປະເມີນຄວາມພິການໃນກຸ່ມບ້ານຕ່າງໆ (ຜູ້ຊາຍໜຶ່ງຄົນ ແລະ ແມ່ຍິງໜຶ່ງຄົນຈະເດີນທາງໄປຍັງສະໜາມ), ແລະ ສະໜອງຂໍ້ແນະນຳ ແລະ ສ້າງຄວາມຕື່ນໂຕໃນ 4 ແຂວງ. ອົງກອນດັ່ງກ່າວຍັງຊ່ວຍສ້າງຂີດຄວາມສາມາດໃຫ້ແກ່ ລັດຖະບານ ກ່ຽວກັບຄວາມກວມລວມທາງເສດຖະກິດ, ການສຶກສາແບບກວມລວມ ແລະ EORE. ມັນແມ່ນອົງກອນດຽວຈາກທັງໝົດທີ່ເຂົ້າຮ່ວມການພົບປະ ທີ່ໄດ້ສະໜອງການສະໜັບສະໜູນດ້ານຈິດຕະສັງຄົມທີ່ເນັ້ນໜັກໃສ່ຜູ້ລອດຊີວິດຈາກ ລບຕ ແລະ ຄອບຄົວຂອງພວກເຂົາເປັນຫຼັກ.

ເຖິງແມ່ນວ່າ ອົງການອົງຄະທຽມ ແລະ ເຄື່ອງຄ້ຳຊູ (COPE) ຈະບໍ່ໄດ້ເຂົ້າຮ່ວມການພົບປະດັ່ງກ່າວກໍ່ຕາມ, ທີ່ປຶກສາໄດ້ຖືກຮັບແຈ້ງວ່າ ອົງກອນດັ່ງກ່າວໄດ້ສະໜອງລໍ້ຍູ້ ແລະ ອົງຄະທຽມຕ່າງໆ, ລວມໄປເຖິງເບ້ຍລ້ຽງ ແລະ ທີ່ພັກເຊົາໃຫ້ແກ່ຜູ້ທີ່ໃສ່ອົງຄະທຽມ.

LDWDC, ໂດຍສ່ວນໃຫຍ່ແລ້ວ, ຮັບໃຊ້ແມ່ຍິງຜູ້ພິການທີ່ມາຈາກຄອບຄົວທຸກຍາກ ແລະ ພື້ນທີ່ຫ່າງໄກສອກຫຼີກຂອງ ສປປ ລາວ. ຫຼາຍຄົນແມ່ນສະມາຊິກຂອງຊົນກຸ່ມນ້ອຍ ແລະ ກວ່າ 80 ສ່ວນຮ້ອຍມີພຽງພໍ່ ຫຼື ແມ່ເທົ່ານັ້ນ ຫຼື ສູຍເສຍທັງພໍ່ ແລະ ແມ່ໄປແລ້ວ.

### ຜົນໄດ້ຮັບ

- ການປະເມີນຄວາມພິການໃນຂັ້ນບ້ານ ທີ່ດຳເນີນການໂດຍພະນັກງານຊາຍ ແລະ ຍິງຂອງ LDPA ແມ່ນຢູ່ພາຍໃຕ້ຫຼັກປະຕິບັດທີ່ດີ, ໄປພ້ອມໆກັບການສະໜອງການສະໜັບສະໜູນດ້ານຈິດຕະສັງຄົມ ໃຫ້ແກ່ຜູ້ລອດຊີວິດຈາກ ລບຕ ແລະ ຄອບຄົວຂອງພວກເຂົາ.
- ເຖິງແມ່ນວ່າແມ່ຍິງຜູ້ພິການ ຈະມີອັດຕາສ່ວນຮ້ອຍທີ່ເປັນຜູ້ລອດຊີວິດຈາກອຸບັດເຫດ ລບຕ ຕ່ຳກໍ່ຕາມ, LDWDC ກໍ່ເອົາໃຈໃສ່ໃນການຕອບໂຕ້ຕໍ່ຊ່ອງຫວ່າງອັນຊັດເຈນດັ່ງກ່າວໃນຂະແໜງການ.

### ໝາຍເຫດ

ທີ່ປຶກສາບໍ່ເຊື່ອວ່າພວກເຂົາໄດ້ຮັບຂໍ້ມູນຄົບຖ້ວນແລ້ວ ຈາກຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຫຼື ຜູ້ສະໜອງວຽກງານ EORE ຍ້ອນບັນດາຜູ້ສະໜອງເຫຼົ່ານີ້ ບໍ່ໄດ້ຕາງໜ້າໃຫ້ແກ່ທຸກພາກສ່ວນຢ່າງຄົບຖ້ວນຂອງຂະແໜງການ. ໃນກຸ່ມຜູ້ທີ່ເຂົ້າຮ່ວມການພົບປະ, ແມ່ຍິງບາງຄົນເຮັດວຽກໃນຂົງເຂດການເງິນ ຫຼື ການບໍລິຫານ. ເມື່ອຖືກສອບຖາມວ່າຍ້ອນຫຍັງຈຶ່ງຖືກຄັດເລືອກໃຫ້ເຂົ້າຮ່ວມການພົບປະຄັ້ງນີ້, ແມ່ຍິງເຫຼົ່ານີ້ກໍ່ຊີ້ໃຫ້ເຫັນວ່າ ອົງກອນຂອງພວກເຂົາເລືອກທີ່ຈະສົ່ງແມ່ຍິງມາເຂົ້າຮ່ວມ (ໂດຍສ່ວນໃຫຍ່ຈະມີຕໍາແໜ່ງທີ່ອາວຸໂສໜ້ອຍກວ່າ) ຍ້ອນມັນແມ່ນກອງປະຊຸມດ້ານບົດບາດຍິງຊາຍ. ດ້ວຍເຫດນີ້, ຜົນໄດ້ຮັບ, ເຖິງແມ່ນວ່າຈະມີປະໂຫຍດ, ແຕ່ກໍ່ບໍ່ສາມາດຄອບຄຸມທົ່ວທັງຂະແໜງການໄດ້, ເຮັດໃຫ້ເກີດຂໍ້ຫຍຸ້ງຍາກໃນການສະໜອງຂໍ້ແນະນໍາໂດຍອີງຕາມຂໍ້ມູນຫຼັກຖານ.

## 5.4 ການພົບປະກັບຜູ້ສະໜອງ EORE ໃນນະຄອນຫຼວງວຽງຈັນ

ຜູ້ເຂົ້າຮ່ວມການພົບປະນີ້ແມ່ນມາຈາກ ອົງການການສຶກສາໂລກ, ອົງການແມັກ, ອົງການເຮໂລ ແລະ LYU.

- ⇨ ອົງການເຮໂລ ມີພະນັກງານ 1,129 ຄົນ (60 ສ່ວນຮ້ອຍແມ່ນແມ່ຍິງ), ພ້ອມດ້ວຍຫົວໜ້າທີມທີ່ເປັນແມ່ຍິງໃນ 9 ພະແນກ, ມີຜູ້ແປພາສາຊົນເຜົ່າ 2 ຄົນ ແລະ ມີພະນັກງານຈາກກຸ່ມຊົນເຜົ່າ 9 ຄົນ, ຊ່ວຍໃຫ້ອົງກອນດັ່ງກ່າວກວມໄດ້ 9 ພາສາ.
- ⇨ ອົງການແມັກ ມີພະນັກງານຊາຍ 585 ຄົນ ແລະ ພະນັກງານຍິງ 337 ຄົນ, ບໍ່ມີລາຍລະອຽດກ່ຽວກັບຄົນພິການ ຫຼື ກຸ່ມຊົນເຜົ່າ.
- ⇨ ສູນກາງຊາວໜຸ່ມລາວ ແລະ ອົງການການສຶກສາໂລກ ບໍ່ສາມາດສະໜອງຂໍ້ມູນກ່ຽວກັບພະນັກງານຂອງພວກເຂົາໃຫ້ໄດ້.

ຜູ້ເຂົ້າຮ່ວມການພົບປະໄດ້ເກັບກໍາເອົາຂໍ້ມູນດັ່ງຕໍ່ໄປນີ້ກ່ຽວກັບບຸກຄະລາກອນທີ່ໄດ້ຮັບການຝຶກອົບຮົມ EORE ມາແລ້ວ:

- ⇨ ອົງການການສຶກສາໂລກ ເກັບກໍາເອົາຂໍ້ມູນໂດຍແບ່ງຕາມກຸ່ມເພດ.
- ⇨ ອົງການເຮໂລ ເກັບກໍາຂໍ້ມູນໂດຍອີງຕາມກຸ່ມເພດ, ອາຍຸ, ຄວາມພິການ ແລະ ກຸ່ມຊົນເຜົ່າ.
- ⇨ ສູນກາງຊາວໜຸ່ມລາວ ເກັບກໍາຂໍ້ມູນຕາມກຸ່ມອາຍຸ, ເພດ ແລະ ກຸ່ມຊົນເຜົ່າ.
- ⇨ ອົງການແມັກ ເກັບກໍາຂໍ້ມູນຕາມກຸ່ມເພດ ແລະ ອາຍຸ; ຕອນນີ້ກໍາລັງເກັບກໍາຂໍ້ມູນຕາມກຸ່ມຄວາມພິການ, ແຕ່ບໍ່ມີຂໍ້ມູນທີ່ອີງໃ່ກຸ່ມຊົນເຜົ່າເລີຍ.

ຜູ້ສະໜອງ EORE ທັງໝົດກ່າວວ່າພວກເຂົາບໍ່ມີຊັບພະຍາກອນດ້ານພາສາຊົນເຜົ່າ ແລະ ບໍ່ມີຊັບພະຍາກອນທີ່ແນໃສ່ກຸ່ມທີ່ມີຄວາມສ່ຽງເປັນຫຼັກ. EORE ໄດ້ຖືກຈັດຂຶ້ນກັບທຸກກຸ່ມປະຊາກອນ ຫຼາຍກວ່າທີ່ຈະເນັ້ນໜັກໃສ່ກຸ່ມໃດກຸ່ມໜຶ່ງໂດຍອີງຕາມເພດ, ກຸ່ມຊົນເຜົ່າ ຫຼື ໝວດໝູ່ອື່ນໆ (ເຊັ່ນ: ຄວາມອາວຸໂສ). ອົງການແມັກ ເປັນຜູ້ດໍາເນີນການຝຶກອົບຮົມດ້ານບົດບາດຍິງຊາຍ ແລະ ລບຕ.

ການໂອ້ລົມກັນໄດ້ຊ່ວຍໃຫ້ເຫັນເຖິງກຸ່ມທີ່ມີຄວາມສ່ຽງສູງ ແລະ ແນວໂນ້ມຂອງການເກີດອຸບັດເຫດ ທັງຍັງຊ່ວຍໃຫ້ໄດ້ພິຈາລະນາເຖິງວິທີໃນການເນັ້ນໜັກໃສ່ກຸ່ມດັ່ງກ່າວໂດຍສະເພາະ:

- ⇨ ຊາວກະສິກອນແມ່ນກຸ່ມທີ່ມີຄວາມສ່ຽງສູງ ຍ້ອນພວກເຂົາຕ້ອງໄດ້ເຄື່ອນຍ້າຍ ລບຕ ເພື່ອໃຫ້ສາມາດເຂົ້າເຖິງເນື້ອທີ່ດິນປູກຝັງໄດ້.
- ⇨ ພໍ່ແມ່ເອງກໍ່ອາດໄດ້ຮັບການຝຶກອົບຮົມ ເພື່ອໃຫ້ສາມາດເຝົ້າລະວັງຄວາມສ່ຽງອັນສະເພາະ ສໍາລັບລູກຂອງພວກເຂົາໄດ້. ຂໍ້ຄວາມຈາກພວກເຂົາອາດລວມມີ ການປົກປ້ອງຕົນເອງ ແລະ ຄອບຄົວ.
- ⇨ ຜູ້ເກັບເສດໂລຫະຕ່າງໆແມ່ນກຸ່ມທີ່ເຂົ້າເຖິງໄດ້ຍາກ ຍ້ອນແມ່ນກຸ່ມທີ່ມາຈາກຄອບຄົວທຸກຍາກ ແລະ ຕ້ອງໄດ້ອາໄສການຂາຍເສດໂລຫະເພື່ອປະທັງຊີວິດ.
- ⇨ ເດັກຊາຍໄດ້ຖືກພົບເຫັນວ່ານໍາເອົາ ລບຕ ໄປຫຼິ້ນໂດຍເຊື່ອວ່າຈະເຮັດໃຫ້ຕົນເບິ່ງຄືເປັນຄົນກ້າຂຶ້ນ. EORE ອາດເນັ້ນໜັກໃສ່ບໍ່ພຽງແຕ່ຜົນກະທົບທີ່ເກີດຂຶ້ນກັບພວກເຂົາ ແຕ່ຍັງລວມໄປເຖິງທີ່ເກີດກັບຄອບຄົວຂອງພວກເຂົານໍາອີກ.

ຈາກການລະດົມຄວາມຄິດ, ທີ່ນອກເໜືອໄປຈາກວິທີການທີ່ນໍາໃຊ້ຜ່ານລະບົບການສຶກສາທາງການ, ກ່ຽວກັບວິທີໃນການເຂົ້າເຖິງເດັກຊາຍ ແລະ ໄວໜຸ່ມຊາຍທີ່ບໍ່ສາມາດເຂົ້າເຖິງ EORE ໄດ້ນັ້ນ, ໄດ້ພາໃຫ້ມີການຈັດເຫດສະການບານເຕະຂຶ້ນ ເພື່ອກະຕຸ້ນການເຂົ້າຮ່ວມຂອງພວກເຂົາ. ເຖິງແມ່ນວ່າຜູ້ເຂົ້າຮ່ວມການພົບປະ ຈະບໍ່ແມ່ນໂຕແທນມໃນຂັ້ນບໍລິຫານອາວຸໂສກໍ່ຕາມ, ພວກເຂົາຕາງກໍ່ເຊື່ອວ່າອົງກອນທີ່ຕົນຕາງໜ້າໃຫ້ນັ້ນ ຈະຕ້ອງໃຫ້ຄວາມສົນໃຈໃນການເຮັດວຽກຮ່ວມກັນ ພາຍໃຕ້ແຜນລິເລີ່ມດັ່ງກ່າວ ແລະ ອາດຊ່ວຍສະໜອງເສື້ອ ແລະ ໝວກກິລາ, ປຶ້ມຂຽນ, ປາກກາ ແລະ ອຸປະກອນອື່ນໆໃຫ້ແກ່ກຸ່ມເດັກຊາຍດັ່ງກ່າວ. ການສະແດງລະຄອນ ກໍ່ອາດເປັນອີກທາງເລືອກໜຶ່ງທີ່ສາມາດຈັດຂຶ້ນໄດ້ພາຍໃຕ້ວຽກງານ EORE ໄປພ້ອມໆກັບການແຈກແຜ່ນພັກຮູບກາຕູນ ພ້ອມດ້ວຍຂໍ້ຄວາມທີ່ຖືກອອກແບບມາໃຫ້ແທດເໝາະກັບກຸ່ມເປົ້າໝາຍ. ສິ່ງນີ້ອາດມີປະສິດທິພາບໃນກຸ່ມບ້ານທຸກຍາກ ທີ່ມີໄວໜຸ່ມຊາຍຈາກກຸ່ມຊົນເຜົ່າຕ່າງໆທີ່ມີອັດຕາການປະລະຮຽນສູງ.

### ໝາຍເຫດ

ແນວຄິດການຈັດເຫດສະການບານເຕະ ແມ່ນໄດ້ຖືກນໍາໄປທົດລອງໂອ້ລົມກັບພະນັກງານຫຼາຍຄົນໃນລະຫວ່າງການພົບປະ ແລະ ການປຶກສາຫາລືທີ່ຖືກຈັດຂຶ້ນໃນ ແຂວງບໍລິຄໍາໄຊ ແລະ ແຂວງຊຽງຂວາງ ເຊິ່ງກໍ່ໄດ້ຮັບການຕອບຮັບໃນທາງບວກ.

### ຜົນໄດ້ຮັບ

- ⇨ ເຖິງແມ່ນວ່າຜູ້ສະໜອງ EORE ແລະ ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈະມີການຈັດກອງປະຊຸມເປັນປະຈໍາທຸກປີກໍ່ຕາມ, ແຕ່ບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ກໍ່ບໍ່ໄດ້ຖືກນໍາມາໂອ້ລົມກັນຈັກເທື່ອ. ນອກຈາກນັ້ນ, ກຸ່ມຜູ້ສະໜອງວຽກງານເຫຼົ່ານີ້ເອງ ກໍ່ບໍ່ໄດ້ນໍາໃຊ້ແນວທາງການດໍາເນີນງານທີ່ເປັນເອກະພາບກັນ - ໂດຍທີ່ແຕ່ລະອົງກອນລ້ວນແລ້ວແຕ່ມີຂອບວຽກການດໍາເນີນງານຂອງໃຜມັນ.

### ຂໍ້ແນະນໍາທີ 10

- ⇨ ຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ຜູ້ສະໜອງ EORE ທີ່ຄອບຄຸມຈະຕ້ອງຖືກລວມເຂົ້າໄວ້ໃນ ຈຸດປະສານງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຂອງຂະແໜງການ ລບຕ ຕາມການສະເໜີພາຍໃຕ້ ແຜນການດໍາເນີນດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ສໍາລັບການຄົ້ນຄວ້າໃນຄັ້ງນີ້. ສິ່ງນີ້ຈະຊ່ວຍໃຫ້ສາມາດແບ່ງປັນຫຼັກປະຕິບັດທີ່ດີໄດ້ໃນທົ່ວທຸກຂອບວຽກ ທັງຍັງເປັນເວທີໃນການແກ້ໄຂບັນຫາທ້າທາຍລະດັບສູງ, ລວມທັງທີ່ກ່ຽວຂ້ອງກັບຂັ້ນຕອນການກໍານົດ EORE ໃຫ້ແກ່ກຸ່ມທີ່ມີຄວາມສ່ຽງໂດຍສະເພາະ. ນອກຈາກນັ້ນ, ກຸ່ມດັ່ງກ່າວຍັງຈະຕ້ອງໂອ້ລົມກັນກ່ຽວກັບເຫດສະການບານເຕະ ທີ່ເນັ້ນໜັກໃສ່ເດັກຊາຍ ແລະ ໄວໜຸ່ມຊາຍ ແລະ ກຸ່ມອື່ນໆທີ່ເຂົ້າເຖິງໄດ້ຍາກ ຍ້ອນພວກເຂົາຢູ່ນອກຂອບເຂດຂອງລະບົບການສຶກສາທາງການ, ໂດຍຜ່ານການພິຈາລະນານໍາໃຊ້ແຫຼ່ງທຶນພາຍໃຕ້ ໂຕຊີ້ວັດຂອງໝາກຜົນທີ 1.3 ຂອງແຜນງານຂອງ ອົງການ UNDP, ວ່າດ້ວຍເວທີທີ່ມີພ້ອມນໍາໃຊ້ເຂົ້າໃນການໂອ້ລົມແນວຄິດໃໝ່.



## 5.5 ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນແຂວງຊຽງຂວາງ

ຜູ້ເຂົ້າຮ່ວມປະກອບມີ ສະມາຄົມພັດທະນາຄົນພິການ (PDDA) ແລະ ອົງການກອຍກາ.

- PDDA ແມ່ນອົງການຈັດຕັ້ງທາງສັງຄົມແຫ່ງຊາດທີ່ມີພະນັກງານ 11 ຄົນ. ໃນນັ້ນ 3 ຄົນແມ່ນແມ່ຍິງ; 9 ຄົນພິການ, ເຊິ່ງ 1 ໃນນັ້ນແມ່ນແມ່ຍິງ; 3 ຄົນແມ່ນຊົນເຜົ່າມົ້ງ, ເຊິ່ງເປັນຜູ້ຊາຍທັງໝົດ.
- ອົງການກອຍກາ ມີພະນັກງານ 2 ຄົນປະຈໍາຢູ່ແຂວງຊຽງຂວາງ, ທັງສອງເປັນຜູ້ຊາຍ.

ແຜນງານຂອງ PDDA ເນັ້ນໜັກໃສ່ການສ້າງຄວາມຕື່ນໂຕໃຫ້ທົ່ວທັງຊຸມຊົນ. ມັນຊ່ວຍສະໜອງການຝຶກອົບຮົມໃຫ້ແກ່ຄົນພິການທຸກຄົນ - ແຕ່ບໍ່ໄດ້ເນັ້ນໜັກໃສ່ບັນຫາທີ່ກ່ຽວຂ້ອງກັບແມ່ຍິງ ຫຼື ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ.

ອົງການກອຍກາ ມີງົບປະມານ 2.5 ລ້ານໂດລາ ໃນການເຮັດວຽກຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ພວກເຂົາຊ່ວຍເຫຼືອຜູ້ພິການໂດຍອີງໃສ່ລາຍຊື່ທີ່ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ແລະ ກະຊວງສາທາລະນະສຸກ ສະໜອງໃຫ້. ພວກເຂົາຍອມຮັບວ່າລາຍຊື່ດັ່ງກ່າວນັ້ນອາດມີຊ່ອງຫວ່າງ ຍ້ອນການສໍາຫຼວດອາດຈະຖືກດໍາເນີນສະເພາະແຕ່ໃນພາສາລາວເທົ່ານັ້ນ. ກຸ່ມຊົນເຜົ່າກໍ່ອາດຢູ່ໃນສະໜາມໃນເວລາທີ່ດໍາເນີນການເກັບກໍາຂໍ້ມູນຢູ່ນັ້ນ. ໂຕແທນໄດ້ກ່າວວ່າຄອບຄົວຊົນນະບົດທີ່ທຸກຍາກນັ້ນບໍ່ມີເງິນຈ້າງລົດ ຫຼື ບໍ່ມີເວລາມາເຂົ້າຮັບການສະໜັບສະໜຸນ ຈຶ່ງອາດຈະເຮັດໃຫ້ພວກເຂົາຖືກຖິ້ມໄວ້ທາງຫຼັງ.

ອົງການກອຍກາ ເຄື່ອນໄຫວວຽກໃນດ້ານການຟື້ນຟູຮ່າງກາຍ ແລະ ສະໜັບສະໜຸນເງິນທຶນໃຫ້ແກ່ ສູນ COPE, LYU ແລະ ສະມາຄົມສົ່ງເສີມຄຸນນະພາບຊີວິດ (QLA) ໃນ 2 ແຂວງ, ລວມທັງ 15 ເມືອງ. ດ້ວຍການສະໜັບສະໜຸນຈາກ ອົງການກອຍກາ, ສູນ COPE ຈຶ່ງໄດ້ໃຫ້ການສະໜັບສະໜຸນບັນດາໂຮງໝໍ ແລະ ສະໜອງລໍ້ຍູ້ ແລະ ແຂນຂາທຽມໃຫ້ແກ່ບັນດາໂຮງໝໍດັ່ງກ່າວ. ຜູ້ລອດຊີວິດຈະຕ້ອງມີແບບຟອມຢັ້ງຢືນເພື່ອຮັບບໍລິການປິ່ນປົວແບບບໍ່ເສຍຄ່າ ຈາກອໍານາດການປົກຄອງທີ່ກ່ຽວຂ້ອງ ຫຼື ບໍ່ດັ່ງນັ້ນກໍ່ຕ້ອງໄດ້ຈ່າຍຄ່າບໍລິການປິ່ນປົວເອງ. ໂຕແທນບໍ່ແນ່ໃຈວ່າ ສູນ COPE ໄດ້ມີການຈັດກອງປະຊຸມພົບປະຊຸມຊົນ ຫຼື ບໍ່. ພະນັກງານສ່ວນໃຫຍ່ເວົ້າໄດ້ແຕ່ພາສາລາວ, ແຕ່ມີບາງສ່ວນທີ່ເວົ້າພາສາຊົນເຜົ່າໄດ້.

QLA ສະໜອງການຊ່ວຍເຫຼືອດ້ານຈິດຕະສັງຄົມ ທີ່ກ່ຽວຂ້ອງກັບສະພາບທາງສັງຄົມ ແລະ ຈິດໃຈ, ການຝຶກອົບຮົມການສະໜັບສະໜຸນຊຸມຊົນ, ການປຶກສາຫາລືແບບໝູ່ຕໍ່ໝູ່, ການຍົກສູງບົດບາດທາງເສດຖະກິດ ໂດຍຜ່ານການຝຶກອົບຮົມທາງທຸລະກິດ ແລະ ການຝຶກອົບຮົມດ້ານ

ການຄຸ້ມຄອງການເງິນ.

LYU ສະໜອງການຝຶກອົບຮົມວິຊາຊີບ, ທີ່ລວມມີການຕໍ່າຫູກ ແລະ ການຫຍິບແສ່ວແບບລາວ, ພ້ອມທັງການປູກຕົ້ນໄມ້ ແລະ ການສ້ອມແປງຄອມພິວເຕີ. ເມື່ອສອບຖາມວ່າການຝຶກອົບຮົມວິຊາຊີບ, ເຊັ່ນ: ການຕໍ່າຫູກ ແລະ ຫຍິບແສ່ວນັ້ນ ແມ່ນເນັ້ນໜັກໃສ່ຜູ້ຍິງ, ສ່ວນການປູກຄົ້ນໄມ້ ແລະ ການສ້ອມແປງຄອມພິວເຕີ ແມ່ນເນັ້ນໜັກໃສ່ຜູ້ຊາຍ ຫຼື ບໍ່, ໂຕແທນໄດ້ຕອບກັບມາວ່າການຝຶກອົບຮົມທັງໝົດນັ້ນແມ່ນສະໜອງໃຫ້ແກ່ທຸກຄົນ ແຕ່ບໍ່ມີຂໍ້ມູນທີ່ແບ່ງຕາມກຸ່ມເພດສະໜອງໃຫ້.

### ຜົນໄດ້ຮັບ

- ⇨ ຄູ່ຮ່ວມງານແຕ່ລະຝ່າຍ ມີຊຸດຂໍ້ມູນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍທີ່ແຕກຕ່າງ ແລະ ບໍ່ສອດຄ່ອງກັນ. ບາງຫ້ອງການເກັບກຳຂໍ້ມູນກ່ຽວກັບປະເພດຂອງຄວາມພິການ; ບາງບ່ອນເກັບກຳຂໍ້ມູນຕາມກຸ່ມອາຍຸ ແລະ ເພດ; ບາງບ່ອນບໍ່ເກັບກຳຂໍ້ມູນກ່ຽວກັບກຸ່ມຊົນເຜົ່າເລີຍ. ບັນຫານີ້ເຮັດໃຫ້ເກີດຂໍ້ຫຍຸ້ງຍາກ ໃນການສົມທຽບຂໍ້ມູນຈາກຂະແໜງການສາທາລະນະສຸກ ແລະ ຂະແໜງການສະຫວັດດີການສັງຄົມ. ຜູ້ໃຫ້ທຶນກໍ່ມີລະບົບຂອງຕົນເອງ ແລະ ມັກຈະຮ້ອງຂໍເອົາຂໍ້ມູນໃນຮູບແບບການຈັດໝວດໝູ່ ທີ່ລັດຖະບານບໍ່ສາມາດສະໜອງໃຫ້ໄດ້. ບໍ່ມີລະບົບການຕິດຕາມກວດກາພາຍຫຼັງ ຫຼື ການເກັບກຳຂໍ້ມູນກ່ຽວກັບປະລິມານຂອງການສະໜັບສະໜູນ ທີ່ແຕ່ລະຄົນໄດ້ຮັບ.

### ຂໍ້ແນະນຳທີ 11

- ⇨ ຂໍ້ມູນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈະຕ້ອງຖືກຈັດແບ່ງຢ່າງສະໝໍ່າສະເໝີໃນທົ່ວທັງຂະແໜງການ, ຢ່າງໜ້ອຍສຸດ, ແມ່ນໃຫ້ຈັດຕາມໝວດໝູ່ເພດ ແລະ ອາຍຸ, ແລະ ຖ້າເປັນໄປໄດ້ແມ່ນຕາມກຸ່ມຊົນເຜົ່າ. ລະບົບການຕິດຕາມຜູ້ລອດຊີວິດ ຈະຕ້ອງສາມາດສະໜອງເຄື່ອງມືການຕິດຕາມກວດກາດ້ານຄຸນນະພາບ/ປະລິມານ ເພື່ອວັດແທກຜົນກະທົບທີ່ການຊ່ວຍເຫຼືອມີຕໍ່ຜູ້ລອດຊີວິດ. ຂໍ້ມູນຜົນໄດ້ຮັບອາດຖືກນຳໃຊ້ເຂົ້າໃນການອອກແບບ ແລະ ຈັດກຽມບໍລິການໃຫ້ແກ່ຄູ່ຮ່ວມມືຕ່າງໆ (ຍົກຕົວຢ່າງ: ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ).

## 5.6 ໂຄງການ UXO Lao ໃນ ແຂວງຊຽງຂວາງ

ໂຕແທນອາວຸໂສຂອງ ໂຄງການ UXO Lao ໃນ ແຂວງຊຽງຂວາງ ໄດ້ຢັ້ງຢືນວ່າ ໂຄງການ UXO Lao ບໍ່ມີນະໂຍບາຍດ້ານບົດບາດຍິງຊາຍ. ສັນຍາແຮງງານບໍ່ໄດ້ກຳນົດລາຍລະອຽດສະເພາະອັນໃດເລີຍກ່ຽວກັບແມ່ຍິງ ແລະ ຄົນພິການ ຍົກເວັ້ນນະໂຍບາຍການລາພັກເກີດລູກ. ຜູ້ກ່ຽວບໍ່ມີຄວາມຮັບຮູ້ກ່ຽວກັບຫຼັກປະຕິບັດ ແລະ ບໍ່ເຄີຍໄດ້ຍິນກ່ຽວກັບແຜນງານການຝຶກອົບຮົມດ້ານບົດບາດຍິງຊາຍ ແລະ ລບຕ ຂອງ ອົງການ ສປຊ ເພື່ອແມ່ຍິງ/LWU ມາກ່ອນເລີຍ. ຜູ້ກ່ຽວກ່າວວ່າວຽກງານ ລບຕ ແມ່ນມີຄວາມສ່ຽງຫຼາຍເກີນໄປສຳລັບແມ່ຍິງ ແລະ ສົ່ງຜົນກະທົບຕໍ່ສຸຂະພາບຂອງພວກເຂົາ. ໃນຂະນະທີ່ທີມຊາຍລ້ວນ ແລະ ທີມປະສົມປະຕິບັດໄດ້ຕາມໂຄຕ້າການເກັບກູ້ລະເບີດໃນເນື້ອທີ່ດິນ 120 ຕາແມັດຕໍ່ມື້, ທີມຍິງລ້ວນພັດຖືກເຂົ້າໃຈວ່າບໍ່ສາມາດເຮັດໄດ້ຕາມໂຄຕ້າດຽວກັນ. ເຖິງຢ່າງໃດກໍ່ຕາມ, ບໍ່ມີຂໍ້ມູນມາຫັກລ້າງຄວາມເຂົ້າໃຈດັ່ງກ່າວ.

ທີມງານພາກສະໜາມໄດ້ຖືກຮັບແຈ້ງວ່າມັນແມ່ນວຽກງານທີ່ໜັກເກີນໄປສຳລັບແມ່ຍິງ ເພາະຕ້ອງໄດ້ຂຸດດິນໃນກໍລະນີຄົ້ນພົບ ລບຕ ແລະ ການຖືພາເອງກໍ່ສົ່ງຜົນກະທົບຕໍ່ການເຮັດວຽກ. ພະນັກງານເກັບກູ້ລະເບີດຍິງ ຈະຕ້ອງໄດ້ຢຸດປະຕິບັດວຽກເມື່ອມີອາຍຸຄັນ 6 ເດືອນ, ແຕ່ໃນຄວາມເປັນຈິງແລ້ວ ພວກເຂົາຕ້ອງເຮັດວຽກຈົນຮອດອາຍຸຄັນເດືອນສຸດທ້າຍ, ເຊິ່ງເປັນການເຮັດວຽກເບົາ ແລະ ການແຕ່ງກິນເປັນສ່ວນໃຫຍ່.

### ໝາຍເຫດ

- ⇨ ຂໍ້ກ່າວຫາທີ່ວ່າທີມຍິງລ້ວນມີຜົນງານຕ່ຳກວ່າໝູ່ນັ້ນ ແມ່ນຖືກຄັດຄ້ານໂດຍທີມຍິງລ້ວນເອງ (ຕາມທີ່ອະທິບາຍໄວ້ໃນພາກສ່ວນນີ້) ຜູ້ທີ່ຢັ້ງຢືນວ່າພວກເຂົາສາມາດປະຕິບັດໄດ້ຕາມໂຄຕ້າທີ່ກຳນົດໃຫ້.

ໂຕແທນດັ່ງກ່າວໄດ້ຊີ້ໃຫ້ເຫັນວ່າທີມຍິງລ້ວນນັ້ນ ມີການເຮັດວຽກທີ່ມີຄຸນນະພາບສູງທີ່ສຸດ, ທັງຍັງກ່າວອີກວ່າທີມຊາຍລ້ວນນັ້ນ ມັກຈະມີປະສິດທິພາບຕ່ຳກວ່າໃນຊ່ວງເຊົ້າເນື່ອງຈາກອາການເມົາຄ້າງຈາກການກິນດື່ມໃນຄືນກ່ອນມື້ເຮັດວຽກ (ເຖິງແມ່ນວ່າການດື່ມສິ່ງມຶນເມົາຈະເປັນການລະເມີດລະບຽບການທີ່ກຳນົດໄວ້ກໍ່ຕາມ).

ໄດ້ມີການແນະນຳໃຫ້ຕ້ອງລາຍງານອຸບັດເຫດ ລບຕ ຕໍ່ອຳນາດການປົກຄອງບ້ານ ຫຼື ໂດຍຜ່ານສາຍດ່ວນ ລບຕ. ວຽກງານ EORE ລວມມີການສະໜອງຂໍ້ມູນຂ່າວສານກ່ຽວກັບຂັ້ນຕອນການລາຍງານ ແລະ ໝາຍເລກໂທລະສັບຂອງສາຍດ່ວນ. ເຖິງຢ່າງໃດກໍ່ຕາມ, ຜູ້ຕອບສາຍດ່ວນແມ່ນເວົ້າໄດ້ແຕ່ພາສາລາວເທົ່ານັ້ນ. ທີມງານພາກສະໜາມໄດ້ຖືກຮັບແຈ້ງວ່າ ຜູ້ທີ່ເວົ້າພາສາລາວບໍ່ໄດ້ ກໍ່ຈະບໍ່ໂທລະສັບເຂົ້າສາຍດ່ວນດັ່ງກ່າວ.

### ຂໍ້ແນະນຳທີ 12

- ⇨ ສາຍດ່ວນດັ່ງກ່າວນັ້ນຈະຕ້ອງຮອງຮັບພາສາອື່ນໆນຳ; ຕ້ອງແຈ້ງໃຫ້ກຸ່ມຊົນເຜົ່າຕ່າງໆຊາບກ່ຽວກັບພາສາທີ່ຮອງຮັບໄດ້ໃນສາຍດ່ວນ.

ໂດຍສອດຄ່ອງກັບການສຳຫຼວດຂອງ ອົງການແມັກ, ທີມງານພາກສະໜາມໄດ້ສອບຖາມພຶດຕິກຳ ແລະ ການດຳເນີນງານທີ່ເປັນຄວາມສ່ຽງ ໃນເວລາເກີດອຸບັດເຫດ. ຈາກການສຳພາດຜູ້ໃຫ້ຂໍ້ມູນຕົ້ນຕໍເຮັດໃຫ້ຮູ້ວ່າ ການດຳເນີນງານທີ່ເປັນຄວາມສ່ຽງດັ່ງກ່າວນັ້ນປະກອບມີ: ການປູກຝັງ, ການເກັບເສດໂລຫະ ແລະ ການແລ່ນຫຼິ້ນຂອງເດັກນ້ອຍຜູ້ຊາຍໃນສະໜາມ. ມີຜູ້ຖືກສຳພາດພຽງຄົນດຽວທີ່ເວົ້າເຖິງການຈູດໄມ້ໃນສະໜາມ ເພື່ອສ້າງຄວາມອົບອຸ່ນໃນຊ່ວງຍາມໜາວ. ທັງແມ່ຍິງ ແລະ ຜູ້ຊາຍຈະເປັນຜູ້ເກັບໄມ້ມາໄວ້ກໍ່ກອງໄຟໃນຕະຫຼອດປີ; ເຖິງຢ່າງໃດກໍ່ຕາມ, ຜູ້ຊາຍມັກຈະເຂົ້າປ່າໄປເລິກກວ່າແມ່ຍິງ ເພື່ອຫາໄມ້ມາເປັນຖ່ານດັງໄຟ.

ຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ UNMAS ໃນຂະແໜງການເກັບກູ້ລະເບີດ ກ່າວເຖິງຄວາມຈຳເປັນໃນການ " ສະໜອງການຂົນສົ່ງທີ່ປອດໄພໃຫ້ແກ່ຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມ ເພື່ອໄປຮັບບໍລິການອື່ນໆ, ລວມໄປເຖິງໃຫ້ແກ່ຍາດພີ່ນ້ອງເພື່ອຕິດຕາມໄປກັບແມ່ຍິງທີ່ເປັນຜູ້ປະສົບໄພ ໃນກໍລະນີທີ່ຜູ້ກ່ຽວຕ້ອງເດີນທາງຄົນດຽວ." ໂຕແທນຍັງໄດ້ກ່າວອີກວ່າໃນຂັ້ນແຂວງແມ່ນມີລົດສຸກເສີນໄວ້ພ້ອມບໍລິການ, ແຕ່ໃນຂັ້ນບ້ານນັ້ນຂ້ອນຂ້າງທີ່ຈະຫາລົດຮັບສົ່ງຍາກ. ຖ້າຄອບຄົວທີ່ຕ້ອງການລົດນັ້ນພົວພັນໄປຍັງນາຍບ້ານ, ຜູ້ກ່ຽວກໍ່ອາດໄດ້ຮັບລົດເກ໋ງ ຫຼື ລົດໄຖນາສະໜອງໃຫ້.

ເມື່ອຖືກສອບຖາມກ່ຽວກັບຂໍ້ພິຈາລະນາທີ່ສະໜອງໃຫ້ແກ່ ບັນດາຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ ແລະ ແມ່ຍິງທີ່ເປັນຜູ້ເບິ່ງແຍງສະມາຊິກໃນຄອບຄົວທີ່ພິການ, ການສຳພາດຜູ້ໃຫ້ຂໍ້ມຸນຕົ້ນຕໍໄດ້ຊີ້ໃຫ້ເຫັນວ່າ ບໍ່ມີຂໍ້ມູນກ່ຽວກັບບັນຫານີ້, ຫຼື ມີການຮັບຮູ້ມາກ່ອນວ່າມີບັນຫານີ້ເກີດຂຶ້ນ.

ໂຄງການ UXO Lao ໄດ້ກ່າວວ່າສຳລັບການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍນັ້ນ, ໂຄງການດັ່ງກ່າວຈະຝຶກອົບຮົມຜູ້ລອດຊີວິດໃຫ້ສາມາດເຮັດວຽກກັບທີມງານ ຫຼື ຝຶກອົບຮົມທັກສະວິຊາຊີບໃຫ້ແກ່ພວກເຂົາ, ເຊັ່ນ: ການນວດ, ທີ່ພວກເຂົາສາມາດນຳໄປປະກອບອາຊີບໄດ້ໃນແຂວງ. ໃນ



ແຂວງຊຽງຂວາງ, ອົງການຈັດຕັ້ງທາງສັງຄົມທ້ອງຖິ່ນ (CSO) ໄດ້ສະໜອງການຝຶກອົບຮົມວິຊາຊີບໃຫ້, ແຕ່ບໍ່ແມ່ນໃນຂັ້ນບ້ານ.

## 5.7 ພະນັກງານສຳຫຼວດແບບບໍ່ແມ່ນວິຊາການ, ສຳຫຼວດທາງດ້ານວິຊາສການ, ເກັບກູ້ລະເບີດ ແລະ EORE ຂອງ ໂຄງການ UXO Lao

ໃນແຂວງຊຽງຂວາງ, ເນື່ອງຈາກມີພະນັກງານຂອງໂຄງການ UXO Lao ປະຈຳຢູ່ (ພະນັກງານສຳຫຼວດແບບບໍ່ແມ່ນວິຊາການ ແລະ ເກັບກູ້ລະເບີດຫຼາຍຄົນຈະຕ້ອງໄດ້ໄປປະຈຳຢູ່ສະໜາມ), ພະນັກງານວິຊາການທັງໝົດຈຶ່ງໄດ້ຖືກສຳພາດອີກຄັ້ງໜຶ່ງໃນການພົບປະຄັ້ງດຽວ. ຍ້ອນທີມງານເຫຼົ່ານີ້ມັກຈະເຮັດວຽກຮ່ວມກັນໃນສະໜາມຢູ່ສະເໝີ (ແລະ ຍ້ອນມີການນຳໃຊ້ຊຸດຄຳຖາມຕ່າງໆແບບດຽວກັນ), ທີມປະຕິບັດງານພາກສະໜາມ ຈຶ່ງສາມາດດຳເນີນການສຳພາດໄດ້ແບບບໍ່ມີບັນຫາຫຍັງ. ນອກຈາກນັ້ນ, ຍັງໄດ້ມີການຈັດກອງປະຊຸມພົບປະສຳລັບແມ່ຍິງຕ່າງຫາກ, ທີ່ປະກອບມີພະນັກງານ EORE ສອງຄົນ (ແມ່ຍິງເຜົ່າມົ້ງຄົນ 1 ແລະ ແມ່ຍິງເຜົ່າຂະມຸຄົນ 1) ຜູ້ທີ່ເດີນທາງຮ່ວມກັບທີມງານ, ແລະ ພະນັກງານສຳຫຼວດທາງດ້ານວິຊາການ ເຊິ່ງເປັນແມ່ຍິງພຽງຄົນດຽວທີ່ເດີນທາງຮ່ວມກັບທີມຊາຍລ້ວນ. ໄດ້ມີການຈັດກອງປະຊຸມພົບປະສຳລັບແມ່ຍິງຕ່າງຫາກຂຶ້ນທີ່ ເມືອງຄຳ (ລາຍລະອຽດແມ່ນຈະອະທິບາຍໄດ້ໃນພາກນີ້ໃນພາຍຫຼັງ).

ບໍ່ມີພະນັກງານຄົນໃດເຄີຍໄດ້ຮັບການຝຶກອົບຮົມໃນບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ກ່ຽວຂ້ອງກັບ ລບຕ ມາກ່ອນ, ແຕ່ມີຄວາມປະສົງຢາກໄດ້ຮັບການຝຶກອົບຮົມ. ບໍ່ມີໃຜເຄີຍໄດ້ຍິນກ່ຽວກັບນະໂຍບາຍບໍ່ຍອມຮັບຕໍ່ການກົດຂີ່ ແລະ ຂູດຮີດທາງເພດຕໍ່ບຸກຄົນໃດໆໃນພື້ນທີ່ເກັບກູ້ລະເບີດ ມາກ່ອນ.

ພະນັກງານໄດ້ຖືກສອບຖາມກ່ຽວກັບຫຼັກເຫດຜົນຂອງພວກເຂົາໃນການເລືອກມາເຮັດວຽກນີ້. ສ່ວນໃຫຍ່ບອກວ່າແຮງບັນດານໃຈທຳອິດແມ່ນການຕ້ອງຫາວຽກໃຫ້ໄດ້, ຕໍ່ມາຈຶ່ງແມ່ນການປະກອບສ່ວນຕໍ່ການພັດທະນາປະເທດ ໂດຍຜ່ານການຫຼຸດຜ່ອນອຸບັດເຫດຈາກ ລບຕ ແລະ ການສະໜອງເນື້ອທີ່ດິນປູກຝັງທີ່ປອດໄພໃຫ້ແກ່ປະຊາຊົນ. ຜູ້ຊາຍຖືກຖາມວ່າ: "ເຈົ້າຢາກໃຫ້ເມຍ ຫຼື ລູກສາວຂອງເຈົ້າເຮັດວຽກເກັບກູ້ ລບຕ ຫຼື ບໍ່; ແມ່ນຫຍັງທີ່ຈະສົ່ງຜົນຕໍ່ກັບການຕັດສິນໃຈຂອງເຈົ້າ ໃນເມື່ອເຈົ້າເຂົ້າໃຈວ່າວຽກງານນີ້ກ່ຽວກັບຫຍັງແລ້ວ; ແລະ ແມ່ນໃຜທີ່ຈະເປັນຜູ້ຕັດສິນໃຈຂັ້ນສຸດທ້າຍໃຫ້ແກ່ຜູ້ກ່ຽວ?"

- ⇨ ຜູ້ຊາຍບາງຄົນບອກວ່າພວກເຂົາບໍ່ຢາກໃຫ້ເມຍ ຫຼື ລູກສາວໄປເຮັດວຽກນີ້ຍ້ອນມັນມີຄວາມສ່ຽງສູງ. ຜູ້ຊາຍ 2 ຄົນເວົ້າວ່າພວກເຂົາຈະສະໜັບ

สะໜຸນສິດທິສະເໝີພາບ ໂດຍການໃຫ້ອິດສະຫຼະແມ່ຍິງໄດ້ຕັດສິນໃຈເອງ ຍ້ອນມັນແມ່ນສິດທິຂອງພວກເຂົາ. ຕໍ່ມາກໍ່ມີການສະແດງຄຳເຫັນວ່າເມຍຂອງຜູ້ຊາຍທັງ 2 ນີ້ແມ່ນເຮັດວຽກຢູ່ນີ້ແລ້ວ (ສຽງຫົວດັງຂຶ້ນ).

- ⇨ ຜູ້ຊາຍກຸ່ມອື່ນໆບອກວ່າພວກເຂົາຈະບໍ່ສະໜັບສະໜຸນເມຍ ຫຼື ລູກສາວໃຫ້ເຮັດວຽກນີ້ ເວັ້ນເສຍແຕ່ວ່າຈະບໍ່ມີທາງເລືອກດ້ານວຽກເຮັດງານທຳອັນອື່ນອີກແລ້ວ.

ຜູ້ເຂົ້າຮ່ວມທຸກຄົນຮັບຮູ້ເຖິງຄວາມສ່ຽງທີ່ແຝງຢູ່ໃນວຽກງານນີ້ ແລະ ລາຍງານວ່າສັນຍາແຮງງານຂອງພວກເຂົາປະກອບມີປະກັນສຸຂະພາບຢູ່ນຳ. ເຖິງແມ່ນວ່າ ໂຄງການ UXO Lao ຈະບໍ່ສະໜອງການຊ່ວຍເຫຼືອອັນສະເພາະໃດໆພາຍຫຼັງເກີດອຸບັດເຫດກໍ່ຕາມ, ຜູ້ເຂົ້າຮ່ວມກໍ່ຮັບຮູ້ວ່າ QLA ຈະເປັນຜູ້ສະໜອງການຊ່ວຍເຫຼືອແບບຕໍ່ເນື່ອງໃຫ້ແທນ ໃນດ້ານການປິ່ນປົວ ແລະ ການຊ່ວຍເຫຼືອຄອບຄົວໂດຍຜ່ານການຝຶກອົບຮົມວິຊາຊີບ ແລະ ສະມາຄົມດັ່ງກ່າວກໍ່ຈະດຳເນີນການຕິດຕາມກວດກາຄວາມຕ້ອງການຂອງພວກເຂົາຕໍ່ໄປ. ເຖິງແມ່ນວ່າກອງທຶນປະກັນສັງຄົມຂອງລັດຖະບານ ຈະມີຄວາມສາມາດໃນການຊ່ວຍເຫຼືອໄດ້ຢ່າງຈຳກັດໃນຊ່ວງທີ່ຜ່ານມາກໍ່ຕາມ, ແຕ່ທຶນຈາກຜູ້ໃຫ້ທຶນກໍ່ໄດ້ເຂົ້າມາຊ່ວຍໃຫ້ສາມາດຈັດຕັ້ງລະບົບປະກັນຊີວິດໃຫ້ໄດ້ໃນຊ່ວງປີທີ່ຜ່ານມາ. ເຖິງຢ່າງໃດກໍ່ຕາມ, ບໍ່ມີພະນັກງານຄົນໃດກ່າວເຖິງແຫຼ່ງສະໜັບສະໜຸນເຫຼົ່ານີ້ເລີຍ.

ຍ້ອນ ໂຄງການ UXO Lao ປະກອບມີທັງທີມງານຊາຍລ້ວນ, ຍິງລ້ວນ ແລະ ປະສົມ (ຈາກທັງໝົດ 10 ທີມ, ໃນນັ້ນ 2 ທີມແມ່ນຍິງລ້ວນ), ຜູ້ເຂົ້າຮ່ວມໄດ້ຖືກສອບຖາມກ່ຽວກັບຈຸດແຂງ ແລະ ບັນຫາທ້າທາຍຂອງທີມງານໃນແຕ່ລະປະເພດ. ຍ້ອນທີມສຳຫຼວດທາງດ້ານວິຊາການ, ສຳຫຼວດແບບບໍ່ແມ່ນວິຊາການ, ເກັບກູ້ລະເບີດ ແລະ ສະໜອງ EORE ມັກຈະເດີນທາງຮ່ວມກັນຢູ່ສະເໝີ, ການສົນທະນານີ້ຈຶ່ງຖືກຈັດຂຶ້ນເປັນກຸ່ມໃຫຍ່:

ຂໍ້ດີ - ທີມຊາຍລ້ວນ

- ⇨ ເດີນທາງໄປຍັງພື້ນທີ່ຫ່າງໄກສອກຫຼີກໄດ້ງ່າຍກວ່າ.
- ⇨ ເມື່ອຜູ້ຊາຍໃນທ້ອງຖິ່ນລາຍງານການພົບເຫັນ ລບຕ, ພະນັກງານຊາຍສາມາດຍ່າງໄປຍັງຈຸດຄົ້ນພົບ ລບຕ ຮ່ວມກັບຜູ້ຊາຍທີ່ແຈ້ງຂ່າວນັ້ນໄດ້ງ່າຍກວ່າ.

ຂໍ້ເສຍ - ທີມຊາຍລ້ວນ

- ⇨ ຖ້າແມ່ຍິງໃນທ້ອງຖິ່ນລາຍງານການພົບເຫັນ ລບຕ (ເຊິ່ງມີໂອກາດເກີດຂຶ້ນ 30-40 ສ່ວນຮ້ອຍ), ພວກເຂົາຈະຕ້ອງໄດ້ພາແມ່ຍິງໃນບ້ານດັ່ງກ່າວໄປນຳອີກຄົນ 1 ເພື່ອຍ່າງນຳກັນໄປຈຸດຄົ້ນພົບອັນເນື່ອງມາຈາກບັດຖັດຖານທາງວັດທະນະທຳ. ແມ່ຍິງທີ່ແຕ່ງດອງແລ້ວ ບໍ່ສາມາດເດີນທາງໄປກັບຜູ້ຊາຍແບບ 2 ຕໍ່ 2 ໄດ້.

ຈຸດດີ - ທີມປະສົມ

- ⇨ ຜູ້ຊາຍບອກວ່າພວກເຂົາຂີ້ຄ້ານແຕ່ງກິນ, ທຳຄວາມສະອາດ ແລະ ໄປຕະຫຼາດ. ແມ່ຍິງມັກຈະເປັນຜູ້ທີ່ເອົາອາຫານໄປສະໜາມນຳ ແລະ ແຕ່ງເຂົ້າສວຍກິນຢູ່ຫັ້ນເລີຍ.
- ⇨ ພວກເຂົາບໍ່ມີບັນຫາກ່ຽວກັບການພັກເຊົາ ຍ້ອນມີການແບ່ງຫ້ອງຂອງໃຜລາວ.

ຂໍ້ເສຍ - ທີມປະສົມ

- ⇨ ທີມສຳຫຼວດທາງດ້ານວິຊາການປະກອບມີຜູ້ຊາຍ 4 ຄົນ. ພວກເຂົາຈະຮູ້ສຶກເຖິງຂໍ້ເສຍຂອງທີມປະສົມກໍ່ຕໍ່ເມື່ອແມ່ຍິງຕ້ອງເດີນທາງໄປຍັງເຂດຫ່າງໄກສອກຫຼີກ ແລະ ທີ່ແມ່ຍິງບໍ່ສາມາດຂີ່ລົດຈັກໄດ້. ພວກເຂົາຍັງຕ້ອງໄດ້ຫາທີ່ພັກຕ່າງຫາກໃຫ້ແກ່ແມ່ຍິງໃນເຂດບ້ານນັ້ນ ລວມໄປເຖິງຂໍ້ເສຍໃນການຕ້ອງໃຊ້ຫ້ອງນ້ຳຮ່ວມກັນ.
- ⇨ ສຳລັບແມ່ຍິງທີ່ແຕ່ງດອງແລ້ວ, ການອາໄສຢູ່ໃນສະຖານທີ່ພັກເຊົາຮ່ວມກັບຜູ້ຊາຍ ຈະເຮັດໃຫ້ຊາວບ້ານແນມເບິ່ງຜູ້ກ່ຽວໃນແງ່ທີ່ບໍ່ດີໄດ້.

ບັນຫາສຳລັບທີມຍິງລ້ວນແມ່ນໄດ້ຖືກອະທິບາຍໄວ້ໃນພາກສ່ວນຕ່າງຫາກສຳລັບແມ່ຍິງ.

ຜູ້ຊາຍໃນທີມຊາຍລ້ວນ ແລະ ທີມປະສົມຍອມຮັບວ່າພວກເຂົາດື່ມຫຼັງເຮັດວຽກແລ້ວ, ເຖິງຈະຮູ້ແລ້ວວ່າຫ້າມບໍ່ໃຫ້ດື່ມກໍ່ຕາມ. ພວກເຂົາຍັງໃຫ້ຮູ້ອີກວ່າການດື່ມນັ້ນ ສົ່ງຜົນກະທົບຕໍ່ຄຸນນະພາບໃນການປະຕິບັດວຽກຂອງພວກເຂົາໃນມື້ຕໍ່ມາ ລວມໄປເຖິງຄວາມປອດໄພຂອງພວກເຂົານຳອີກ. ບາງຄັ້ງກໍ່ເປັນເຈົ້າຂອງດິນເອງ ທີ່ສະເໜີເຄື່ອງດື່ມມຶນເມົາໃຫ້ ຫຼັງສຳເລັດການເກັບກູ້ ລບຕ ອອກຈາກເນື້ອທີ່ດິນຂອງພວກເຂົາແລ້ວ ເພື່ອເປັນການສະແດງອອກເຖິງຄວາມຂອບໃຈ. ໃນກໍລະນີເຫຼົ່ານີ້, ບາງຄັ້ງແມ່ຍິງເອງກໍ່ຕ້ອງໄດ້ດື່ມສິ່ງມຶນເມົາຄືກັນ. ພຶດຕິກຳແບບນີ້ແມ່ນສອດຄ່ອງກັບບັນຖັດຖານທາງດ້ານວັດທະນະທຳ, ສັງຄົມ ແລະ ບົດບາດຍິງຊາຍ ທີ່ຖືເປັນການໃຫ້ລາງວັນແກ່ຜູ້ຊາຍໄດ້ດື່ມກິນ ແລະ ສະເຫຼີມສະຫຼອງຫຼັງສຳເລັດວຽກແລ້ວ.

**ຂໍ້ແນະນຳທີ 13**

- ⇨ ເພື່ອຄວາມປອດໄພ, ຫົວໜ້າທີມຈະຕ້ອງບັງຄັບໃຊ້ນະໂຍບາຍຫ້າມດື່ມສິ່ງມຶນເມົາ, ໂດຍສະເພາະໃນເວລາທີ່ພະນັກງານຕ້ອງໄດ້ເຮັດວຽກໃນມື້ຕໍ່ມາ. ຊາວບ້ານໃນທ້ອງຖິ່ນຈະຕ້ອງໄດ້ຮັບແຈ້ງໂດຍນາຍບ້ານກ່ຽວກັບນະໂຍບາຍນີ້ ເພື່ອຮັບປະກັນບໍ່ໃຫ້ມີການສະເໜີເຄື່ອງດື່ມມຶນເມົາໃຫ້ພະນັກງານແທນຄຳຂອບໃຈ, ຍ້ອນສິ່ງນີ້ຈະເຮັດໃຫ້ພະນັກງານຕົກຢູ່ໃນສະຖານະການທາງສັງຄົມທີ່ອຶດອັດ.

ທີມສຳຫຼວດແບບບໍ່ແມ່ນວິຊາການ ແລະ ສຳຫຼວດທາງດ້ານວິຊາການ ປະກອບມີສະມາຊິກ 11 ຄົນ, ທີ່ລວມມີແມ່ນຍິງ 1 ຄົນ ແລະ ຜູ້ຊາຍເຜົ່າຂະມຸ 2 ຄົນ. ພວກເຂົາໄດ້ຖືກມອບໝາຍໃຫ້ເກັບກູ້ລະເບີດໃນ 12 ບ້ານຕໍ່ເດືອນ, ຕາມທີ່ກຳນົດໄວ້ໃນແຜນພັດທະນາແຂວງ. ທີມສຳຫຼວດແບບບໍ່ແມ່ນວິຊາການ ຊ່ວຍສະໜອງບົດລາຍງານກ່ຽວກັບເນື້ອທີ່ດິນ ທີ່ຈະຕ້ອງໄດ້ຮັບການເກັບກູ້ພາຍໃນກຸ່ມບ້ານດັ່ງກ່າວ. ຕໍ່ມາກໍ່ແມ່ນຂັ້ນຕອນການຕັດສິນໃຈໂດຍສະມາຊິກ 2 ຄົນຂອງທີມສຳຫຼວດທາງດ້ານວະຊາການ (ຜູ້ຊາຍ) ແລະ ສະມາຊິກ 1 ຄົນຈາກຝ່າຍຄຸ້ມຄອງຂໍ້ມູນຂ່າວສານ (ແມ່ຍິງ) ບົນພື້ນຖານດ້ານຫຼັກການກຳນົດບຸລິມະສິດຕາມທີ່ສະແດງໄວ້ຂ້າງລຸ່ມນີ້ຕາມລຳດັບຂອງຄວາມສຳຄັນ (ໃນກໍລະນີທີ່ປະຕິບັດໄດ້ຕາມເງື່ອນໄຂຈຳເປັນທັງໝົດ):

1. ມີຈຸດປະສົງດ້ານການພັດທະນາ (ຍົກຕົວຢ່າງ: ພື້ນທີ່ເນັ້ນໜັກການພັດທະນາ)
2. ທີ່ຕັ້ງ (ເນື້ອທີ່ດິນ/ພື້ນທີ່ໃກ້ຄຽງກັບບ້ານ/ຊຸມຊົນ)
3. ບ້ານທຸກຍາກ
4. ເຈົ້າຂອງທີ່ດິນທີ່ທຸກຍາກ
5. ຄວາມຮ່ວມມືຈາກເຈົ້າຂອງທີ່ດິນ ໃນການຖາງຟຸ່ມໄມ້

ແມ່ຍິງໃນທີມສຳຫຼວດທາງດ້ານວິຊາການ ແລະ ທີມ EORE ຍ້ອນວ່າທີມ EORE ປະກອບມີແມ່ຍິງ 2 ຄົນ, ການໂອ້ລົມກັນກ່ຽວກັບວຽກງານ EORE ໃນລະຫວ່າງກອງປະຊຸມພົບປະສຳລັບແມ່ຍິງ ຈຶ່ງລວມມີບັນຫາທີ່ກ່ຽວຂ້ອງກັບແມ່ຍິງໃນສະໜາມ.

ພະນັກງານ EORE ໄດ້ລາຍງານວ່າມີແມ່ຍິງເຂົ້າຮ່ວມກອງປະຊຸມປຶກສາຫາລືຊຸມຊົນຫຼາຍຂຶ້ນ ແລະ ຫຼາຍກວ່າຜູ້ຊາຍ. ເຖິງຢ່າງໃດກໍ່ຕາມ, ພະນັກງານ EORE ບໍ່ຮູ້ວ່າມີຄົນພິການ ຫຼື ກຸ່ມຊົນເຜົ່າເຂົ້າຮ່ວມຫຼາຍປານໃດ. ພວກເຂົາເຊື່ອວ່າທີ່ມີແມ່ຍິງມາເຂົ້າຮ່ວມຫຼາຍຂຶ້ນນັ້ນ ສາເຫດແມ່ນຍ້ອນຜູ້ຊາຍສ່ວນໃຫຍ່ ໄປເຮັດການປູກຝັງຢູ່ພື້ນທີ່ຫ່າງໄກສອກຫຼີກ ທີ່ຢູ່ໄກຈາກບ້ານຂອງພວກເຂົານັ້ນເອງ. ຍ້ອນວ່າພະນັກງານຍິງທີ່ສະໜອງ EORE ແມ່ນມາຈາກຊົນເຜົ່າມົ້ງ ແລະ ຂະມຸ, ພວກເຂົາຈຶ່ງສາມາດສື່ສານກັບປະຊາຊົນທີ່ມາຈາກກຸ່ມຊົນເຜົ່າຕົ້ນຕໍໄດ້. ໃນເວລາປຶດສາຫາລືກັບແມ່ຍິງ, ກໍ່ຈະມີການນຳໃຊ້ແຜນວາດ ແລະ ຮູບພາບແທນຍ້ອນພວກເຂົາມີລະດັບຄວາມຮູ້ໜັງສືທີ່ຕ່ຳ.

ແມ່ຍິງໄດ້ຍົກໃຫ້ເຫັນເຖິງບັນຫາສຳຄັນຫຼາຍປະການກ່ຽວກັບຄວາມເຂົ້າໃຈຂອງຊາວບ້ານ ຕໍ່ແຮງງານຍິງໃນຂະແໜງການ ລບຕ ລວມໄປເຖິງຄວາມກັງວົນໃຈຂອງພວກເຂົາຕໍ່ທີ່ພັກເຊົາ. ພະນັກງານ EORE ຍິງຄົນໜຶ່ງໄດ້ເຮັດວຽກໃນຂະແໜງການນີ້ມາເປັນເວລາ 20 ກວ່າປີແລ້ວ, ດັ່ງນັ້ນຈຶ່ງມີຄວາມລຶ້ງເຄີຍກັບບັນຫາທີ່ແມ່ຍິງຕ້ອງພົບພໍ້ໃນສະໜາມ. ບາງຄັ້ງກໍ່ອາດຕ້ອງໄດ້ເດີນທາງຮ່ວມກັບທີມງານອື່ນໆໃນຖານະແມ່ຍິງຄົນດຽວໃນກຸ່ມ. ແມ່ຍິງເຜົ່າມົ້ງໄດ້ຊີ້ໃຫ້ເຫັນວ່າຜົວຂອງລາວເປັນກັງວົນໃຈ ກ່ຽວກັບການທີ່ລາວຕ້ອງເດີນທາງໄປບ້ານນັ້ນບ້ານນີ້ຢູ່ຕະຫຼອດ.

ແມ່ຍິງທຸກຄົນລາຍງານວ່າພວກເຂົາຮູ້ສຶກເຖິງຜົນກະທົບ ຈາກຄວາມເຂົ້າໃຈຂອງຊາວບ້ານບົດບາດ ແລະ ການເດີນທາງໄປຍັງບ້ານຕ່າງຂອງພວກເຂົາ (ທັງໃນຖານະແມ່ຍິງທີ່ແຕ່ງດອງແລ້ວ ແລະ ໃນຖານະຂອງສະມາຊິກທີມປະສົມ, ລວມໄປເຖິງຄສວາມເປັນຈິງທີ່ວ່າພະນັກງານ EORE ຍິງມັກຈະຕ້ອງໄດ້ເດີນທາງຮ່ວມກັບທີມງານອື່ນໆນຳອີກ). ແມ່ຍິງກຸ່ມດັ່ງກ່າວໄດ້ຍົກບັນຫາເຫຼົ່ານີ້ຕໍ່ຜູ້ຈັດການຂອງພວກເຂົາ, ແຕ່ກໍ່ເຂົ້າໃຈວ່າຜູ້ຈັດການອາດບໍ່ສາມາດເຮັດຫຍັງໄດ້ຫຼາຍ. ໃນກໍລະນີໜຶ່ງ, ຜູ້ຈັດການໄດ້ຈັດກອງປະຊຸມທີມງານທັງໝົດຂຶ້ນ ເພື່ອໂອ້ລົມກ່ຽວກັບບັນຫາດັ່ງກ່າວ ແລະ ຊຸກຍູ້ໃຫ້ເພື່ອນຮ່ວມງານຜູ້ຊາຍ ໂອ້ລົມກັບຊາວບ້ານທ້ອງຖິ່ນ ເພື່ອແກ້ໄຂຄວາມເຂົ້າໃຈທີ່ທ້ອງຖິ່ນມີຕໍ່ເພື່ອຮ່ວມງານຍິງຂອງພວກເຂົາ. ກຸ່ມແມ່ຍິງດັ່ງກ່າວຮູ້ສຶກຊາບຊຶ້ງໃຈ ຕໍ່ການສະໜັບສະໜຸນຈາກເພື່ອນຮ່ວມງານຊາຍຂອງພວກເຂົາ, ແຕ່ກໍ່ຍັງຮູ້ສຶກວ່າຊາວບ້ານທ້ອງຖິ່ນ ຍັງຄົງຍຶດຖືໃວນແນວຄິດດັ້ງເດີມຢູ່.

ບັນຫາກ່ຽວກັບການພັກເຊົາ ແລະ ການໃຊ້ຫ້ອງນ້ຳຮ່ວມກັນຖືເປັນຂໍ້ກັງວົນໃຈພິເສດ ຍ້ອນມີແມ່ຍິງພຽງຄົນດຽວໃນທີມ. ກຸ່ມຜູ້ຍິງໄດ້ອະທິບາຍວ່າຫ້ອງນ້ຳສ່ວນໃຫຍ່ແມ່ນຢູ່ທາງນອກເຮືອນ, ແລະ ຖ້າຢູ່ໄກຈາກໂຕເຮືອນ, ແມ່ຍິງເອງກໍ່ຮູ້ສຶກຢ້ານ. ເມື່ອໃດທີ່ມີທີມງານອື່ນໆຕາມມານຳ ແລະ ມີແມ່ຍິງເພີ່ມຂຶ້ນ, ແມ່ຍິງເອງກໍ່ຈະຮູ້ສຶກວ່າມີໝູ່ ແລະ ຮູ້ສຶກປອດໄພຂຶ້ນ. ພະນັກງານ EORE ແລະ ເກັບກູ້ລະເບີດຍິງກ່າວວ່າ ພວກເຂົາມັກຈະເດີນທາງຮ່ວມກັບແມ່ຍິງອີກ 2 ຄົນຢູ່ສະເໝີ.

ທີ່ປຶກສາໄດ້ສອບຖາມວ່າມີສະຖານທີ່ປອດໄພໃນເຂດບ້ານນັ້ນ ທີ່ແມ່ຍິງສາມາດໄປພັກເຊົາໄດ້ ຫຼື ບໍ່. ແມ່ຍິງຄົນໜຶ່ງໄດ້ແນະນຳໃຫ້ໄປພັກເຊົາຢູ່ບ້ານຂອງນາຍບ້ານ. ແມ່ຍິງອີກຄົນເວົ້າວ່າລາວໄດ້ລອງເຮັດແບບນັ້ນແລ້ວຄັ້ງໜຶ່ງ ແລະ ຮູ້ສຶກວ່າປະຊາຊົນໃນທ້ອງຖິ່ນຕ້ອງການ "ເຮັດສິ່ງທີ່ບໍ່ດີກັບລາວ;" ມີກຸ່ມຜູ້ຊາຍໃນເຂດບ້ານນັ້ນແນມເບິ່ງລາວຜ່ານປ່ອງຢ້ຽມ. ລາວຍັງພົບອີກວ່າເຈົ້າຂອງເຮືອນສອດແນມລາວ ແລະ ຮູ້ສຶກບໍ່ປອດໄພ, ຕໍ່ມາຈຶ່ງຕັດສິນໃຈອອກຈາກເຮືອນຫຼັງນັ້ນ ແລະ ໄປພັກຢູ່ເຮືອນທີ່ທີມງານຜູ້ຊາຍພັກເຊົາຢູ່.

## ຜົນໄດ້ຮັບ

- ສຳລັບແມ່ຍິງທີ່ເດີນທາງໄປເຮັດວຽກພາກສະໜາມ, ພວກເຂົາມັກຈະຕ້ອງປະເຊີນບັນຫາໜັກໃຈກ່ຽວກັບທີ່ພັກ, ຄວາມປອດໄພ ແລະ ທັກສະນະຄະຕິຂອງຊຸມຊົນ. ຄວາມສ່ຽງດ້ານຄວາມປອດໄພຍິ່ງຈະທະວີຄູນຂຶ້ນ ໃນກໍລະນີທີ່ມີຜູ້ຍິງຄົນດຽວ ເດີນທາງໄປນຳກຸ່ມປະສົມ.

## ຂໍ້ແນະນຳທີ 14

- ຈຳນວນຂອງແມ່ຍິງໃນທີມປະສົມ ຈະຕ້ອງຖືກເພີ່ມຂຶ້ນຢ່າງໜ້ອຍເປັນ 3 ຄົນ, ແລະ ຄ່ອຍໆເພີ່ມຂຶ້ນຈົນເທົ່າທຽມກັບຜູ້ຊາຍໃນໄລຍະຍາວ. ຈະຕ້ອງບໍ່ມີແມ່ຍິງພຽງຄົນດຽວໃນທີມປະສົມ.
- ນອກຈາກນັ້ນ, ຂະແໜງການ ລບຕ ໂດຍລວມຈະຕ້ອງໄດ້ແກ້ໄຂຄວາມເຂົ້າໃຈຂອງທ້ອງຖິ່ນ ກ່ຽວກັບພະນັກງານ ລບຕ ຍິງທີ່ເຮັດວຽກພາກສະໜາມ. ບັນຫາເຫຼົ່ານີ້ບໍ່ແມ່ນບັນຫາໃໝ່ໃນຂະແໜງການ ລບຕ ຂອງ ສປປ ລາວ. ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍສຳລັບການຄົ້ນຄວ້າຄັ້ງນີ້ ໄດ້ຊີ້ນຳໃຫ້ຕ້ອງແກ້ໄຂບັນຫານີ້ ແລະ ຖືໃຫ້ເປັນໜຶ່ງໃນຂໍ້ກັງວົນໃຈຂອງຂະແໜງການ ລບຕ.

ທີມເກັບກູ້ລະເບີດຍິງລ້ວນປະຈຳ ໂຄງການ UXO Lao

ແມ່ຍິງໃນທີມປະຕິບັດການພາກສະໜາມ ໄດ້ພົບປະກັບທີມເກັບກູ້ລະເບີດຍິງລ້ວນໃນ ເມືອງຄຳ (ເບິ່ງຮູບພາບລຸ່ມນີ້). ໃນນັ້ນລວມມີຫົວໜ້າທີມ, ຮອງ, ພະນັກງານເກັບກູ້ລະເບີດ 3 ຄົນ ແລະ ພະຍາບານສະໜາມ. ທີມດັ່ງກ່າວໄດ້ຖືກສອບຖາມພາຍໃຕ້ຊຸດຄຳຖາມ ທີ່ຄ້າຍຄືກັນກັບທີມເກັບກູ້ ລບຕ ອື່ນໆໂດຍມີບາງຂໍ້ເນັ້ນໜັກໃສ່ບັນຫາດ້ານບົດບາດຍິງຊາຍ. ທີ່ປຶກສາຮູ້ສຶກວ່າການມີຫົວໜ້າ ແລະ ຮອງຫົວໜ້າທີມຢູ່ນຳ ສົ່ງຜົນຕໍ່ຄຳຖາມທີ່ພວກເຂົາໄດ້ຮັບຈາກພະນັກງານເກັບກູ້ລະເບີດ ຍ້ອນທຸກຄັ້ງທີ່ຖາມຄຳຖາມແລ້ວນັ້ນພະນັກງານກໍ່ຈະຢຸດໜ້ອຍໜຶ່ງ ເພື່ອໃຫ້ຫົວໜ້າທີມໄດ້ປະກອບຄຳເຫັນກ່ອນ, ແລະ ຫຼັງຈາກນັ້ນພະນັກງານທຸກຄົນກໍ່ຈະແນມເບິ່ງຫົວໜ້າອີກເທື່ອໜຶ່ງເພື່ອຂໍຄຳຕອບ.

## ຂໍ້ແນະນຳທີ 15

- ຈະຕ້ອງໄດ້ມີການຄົ້ນຄວ້າເພີ່ມເຕີມ ກ່ຽວກັບແມ່ຍິງທີ່ເຮັດວຽກໃນຂະແໜງການ ລບຕ ໂດຍຜ່ານການສຳພາດແບບ 1 ຕໍ່ 1 ເພື່ອຮັບປະກັນການບໍ່ລະບຸໂຕຕົນ ທີ່ຈະຊ່ວຍໃຫ້ຜູ້ເຂົ້າຮ່ວມສາມາດສະແດງທັດສະນະຂອງຕົນ ອອກມາໄດ້ໂດຍບໍ່ຜ່ານການຄັດກອງ.



ທີມເກັບກູ້ ລບຕ ຍິງລ້ວນໃນ ເມືອງຄຳ. ຖ່າຍພາບໂດຍ: Suzette Mitchell.



ເມື່ອຖືກສອບຖາມວ່າຍ້ອນຫຍັງຈຶ່ງເລືອກມາເຮັດວຽກໃນຂົງເຂດນີ້, ແມ່ຍິງຫຼາຍຄົນກ່າວວ່າ ຍ້ອນພວກເຂົາບໍ່ມີທາງເລືອກດ້ານວຽກເຮັດງານທຳອັນອື່ນ. ອີກກຸ່ມໜຶ່ງຕອບວ່າຢາກຊ່ວຍປະຊາຊົນ, ຢາກລຶບລ້າງ ລບຕ ແລະ ຢາກເຮັດໃຫ້ເນື້ອທີ່ດິນປູກຝັງປອດໄພຂຶ້ນ. ແມ່ຍິງຄົນໜຶ່ງກ່າວວ່າ ລາວເຄີຍເຫັນອຸບັດເຫດທີ່ມີຄົນເສຍຊີວິດ ແລະ ບາດເຈັບ ດັ່ງນັ້ນລາວເລີຍຕ້ອງການຢາກຊ່ວຍແກ້ໄຂບັນຫານີ້.

ທີ່ປຶກສາໄດ້ສອບຖາມຄວາມເຂົ້າໃຈຂອງພວກເຂົາກ່ຽວກັບຈຸດດີ ແລະ ຈຸດອ່ອນຂອງທີມຊາຍລ້ວນ, ທີມຍິງລ້ວນ ແລະ ທີມປະສົມ. ກຸ່ມແມ່ຍິງດັ່ງກ່າວບອກວ່າທີມຊາຍລ້ວນນັ້ນສາມາດເຮັດ ‘ວຽກໜັກ’ ແລະ ທີມປະສົມກໍ່ສາມາດຊ່ວຍເຫຼືອເຊິ່ງກັນ ແລະ ກັນໄດ້ດີກວ່າພວກເຂົາ. ຄຳຕອບທີ່ກ່ຽວຂ້ອງໂດຍສະເພາະກັບທີມຍິງລ້ວນປະກອບມີ:

- ພວກເຂົາຕ້ອງໄດ້ເຮັດວຽກໜັກ ເພື່ອຮັບມືກັບສິ່ງທີ່ໜັກໜ່ວງ.
- ພວກເຂົາແມ່ນແມ່ຍິງທັງໝົດ ດັ່ງນັ້ນພວກເຂົາຈຶ່ງມີໜ້າທີ່ຮັບຜິດຊອບຫຼາຍກວ່າ ແລະ ຕ້ອງໄດ້ພະຍາຍາມໜັກກວ່າ.
- ພວກເຂົາອາດໃຊ້ເວລາດົນກວ່າ, ແຕ່ມີຄວາມສຸຂຸມ ແລະ ລະມັດລະວັງຫຼາຍກວ່າ.
- ພວກເຂົາຕ້ອງເກັບກູ້ເນື້ອທີ່ດິນໃຫ້ໄດ້ 55 ເຮັກຕ້າຕໍ່ປີ, ເຊັ່ນດຽວກັນກັບຜູ້ຊາຍ. ພວກເຂົາບໍ່ຕ້ອງການເຮັດວຽກຫຼາຍຊົ່ວໂມງກວ່າທີມຊາຍ.
- ແມ່ຍິງຄົນໜຶ່ງໄດ້ຊີ້ແຈງວ່າໃນເວລາແມ່ຍິງເກີດລູກ ແລະ ລາພັກເກີດລູກນັ້ນ, ກໍ່ຈະເຮັດໃຫ້ວຽກຊ້າລົງ, ໂດຍໃນແຕ່ລະປີຈະມີແມ່ຍິງ 1 ຫຼື 2 ຄົນລາພັກເກີດລູກ. ພວກເຂົາໄດ້ຊີ້ແຈງວ່າໂດຍລວມແລ້ວ, ພວກເຂົາແມ່ນສາມາດນຳວຽກໄດ້ທັນກັບຜູ້ຊາຍພາຍໃນປີນັ້ນ.
- ພວກເຂົາກ່າວວ່າມັນຍາກທີ່ຈະໃຫ້ແມ່ຍິງໄປຕັດຕົ້ນໄມ້ໃຫຍ່ ດັ່ງນັ້ນບາງເທື່ອພວກເຂົາກໍ່ຈະຂໍຄວາມຊ່ວຍເຫຼືອຈາກຜູ້ຊາຍໃນທ້ອງຖິ່ນ. ທີ່ປຶກສາໄດ້ສອບຖາມວ່າແມ່ຍິງມີຂໍ້ຫຍຸ້ງຍາກບໍ່ ໃນການຍ່າງໄປຈຸດຄົ້ນພົບ ລບຕ ຮ່ວມກັບຜູ້ຊາຍໃນສະໜາມ. ຫົວໜ້າທີມບອກວ່າບໍ່ມີຂໍ້ຫຍຸ້ງຍາກຫຍັງເລີຍ, ໂດຍກ່າວວ່າ: “ນີ້ແມ່ນໜ້າທີ່ຮັບຜິດຊອບຂອງພວກເຮົາ ດັ່ງນັ້ນພວກເຮົາກໍ່ຕ້ອງເຮັດ.” ລາວກ່າວຕື່ມອີກວ່າພວກເຂົາອາດຮູ້ສຶກອຶດອັດ, ແຕ່ກໍ່ຕ້ອງເຮັດເພາະມັນເປັນໜ້າທີ່, ແລະ ບາງຄັ້ງບ້ານກໍ່ອາດໃຫ້ແມ່ຍິງໃນທ້ອງຖິ່ນໄປຍ່າງກັບພວກເຂົານຳ.

ສະມາຊິກຂອງທີມຍິງລ້ວນໄດ້ໃຫ້ຄຳຕອບໄປໃນທາງບວກຕໍ່ຄຳຖາມທີ່ວ່າ: “ເຈົ້າຢາກໃຫ້ລູກສາວໄປເຮັດວຽກເກັບກູ້ ລບຕ ຫຼື ບໍ່; ແມ່ນຫຍັງທີ່ຈະສົ່ງຜົນຕໍ່ກັບການຕັດສິນໃຈຂອງເຈົ້າ ໃນເມື່ອເຈົ້າເຂົ້າໃຈວ່າວຽກງານນີ້ກ່ຽວກັບຫຍັງແລ້ວ; ແລະ ແມ່ນໃຜທີ່ຈະເປັນຜູ້ຕັດສິນໃຈຂັ້ນສຸດທ້າຍໃຫ້ແກ່ຜູ້ກ່ຽວ?” ພວກເຂົາກ່າວວ່າວຽກງານອື່ນນັ້ນ ລ້ວນແລ້ວແຕ່ຕ້ອງການລະດັບການສຶກສາທີ່ສູງກວ່າ; ເຖິງຢ່າງໃດກໍ່ຕາມ, ແມ່ຍິງຄົນໜຶ່ງກ່າວວ່າຖ້າມີວຽກອື່ນຫວ່າງ, ລາວກໍ່ຈະຂໍໃຫ້ລູກສາວໄປເຮັດວຽກນັ້ນແທນ.

ນະໂຍບາຍ ລບຕ ຂໍ້ດຽວທີ່ເນັ້ນໜັກໃສ່ແມ່ຍິງທີ່ພວກເຂົາຮູ້ນັ້ນ ແມ່ນນະໂຍບາຍການລາພັກເກີດລູກ. ພວກເຂົາລາຍງານວ່າໄດ້ຮັບສິດໃຫ້ລາພັກເກີດລູກໄດ້ແຕ່ 3 ຫາ 4 ເດືອນ (ໂດຍທົ່ວໄປແລ້ວ 3 ເດືອນ, ແຕ່ຈະສາມາດຂໍພັກຕໍ່ໄດ້ອີກ 1 ເດືອນໂດຍຍັງໄດ້ຮັບຄ່າແຮງງານຢູ່ ຖ້າສຸຂະພາບຫຼັງເກີດລູກຍັງບໍ່ທັນແຂງແຮງພໍເທື່ອ). ພວກເຂົາຍັງມີປະກັນສຸຂະພາບທີ່ຮອງຮັບຄ່າໃຊ້ຈ່າຍການເກີດລູກຢູ່ໂຮງໝໍ. ມີພະນັກງານພຽງຄົນດຽວທີ່ຍັງໂສດຢູ່. ສ່ວນແມ່ຍິງທັງໝົດແມ່ນແຕ່ງດອງ ແລະ ມີລູກ 2 ຫຼື 3 ຄົນແລ້ວ, ມີອີກຄົນໜຶ່ງກຳລັງຖືພາຢູ່, ແລະ ອີກຄົນໜຶ່ງກຳລັງຢູ່ໃນຊ່ວງລາພັກເກີດລູກ.

ແມ່ຍິງສ່ວນໃຫຍ່ເວົ້າວ່າພວກເຂົາໄດ້ເຮັດວຽກເກັບກູ້ລະເບີດຈົນເຖິງກຳນົດຄັນ 9 ເດືອນ. ຄົນໜຶ່ງກ່າວວ່າຖ້າພວກເຂົາຮູ້ສຶກເມື່ອຍໃນໄລຍະເດືອນສຸດທ້າຍຂອງການຖືພາ, ໜ່ວຍແພດຂອງ ໂຄງການ UXO Lao ຈະຕ້ອງໄດ້ຢັ້ງຢືນກ່ອນທີ່ຈະອານຸຍາດໃຫ້ພວກເຂົາ ສາມາດກັບໄປພັກຢູ່ເຮືອນໄດ້. ໃນບາງກໍລະນີ, ພວກເຂົາກໍ່ອາດຫຼີກລ້ຽງການຂຸດຂຸມ ແລະ ໄປເຮັດໜ້າທີ່ທີ່ເບົາຂຶ້ນແທນ, ເຊັ່ນ: ການປັດກວາດ.

ເມື່ອຖືກສອບຖາມກ່ຽວກັບຫຼັກປະຕິບັດ ແລະ ບັນຫາດ້ານການລ່ວງລະເມີດທາງເພດ, ເຈົ້າໜ້າທີ່ລະດັບ 3+ ໄດ້ຊີ້ແຈງວ່າ ນະໂຍບາຍວ່າດ້ວຍການປົກປ້ອງແມ່ຍິງ ແລະ ເດັກ ແລະ ສິດທິຂອງແມ່ຍິງ ແມ່ນໄດ້ຖືກນຳໃຊ້ໃນທົ່ວທຸກໜ່ວຍງານຂອງລັດຖະບານ, ໂດຍສະເພາະໃນ ໂຄງການ UXO Lao. ເຈົ້າໜ້າທີ່ຄົນດັ່ງກ່າວຍັງໄດ້ບອກໃຫ້ຮູ້ວ່າ ສປປ ລາວ ມີວັດທະນະທຳທີ່ຄຳນຶງເຖິງບົດບາດຍິງຊາຍ.



แม่ยิງในบົດບາດການນຳ

ວຽກງານເກັບກູ້ລະເບີດມີຢູ່ 4 ລະດັບຄື:

- ລະດັບທີ 1: ການເກັບກູ້ລະເບີດ
- ລະດັບທີ 2: ການຝຶກອົບຮົມຫົວໜ້າທີມເກັບກູ້ລະເບີດ
- ລະດັບທີ 3: ຫົວໜ້າທີມ
- ລະດັບທີ 4: ຜູ້ຊ່ຽວຊານດ້ານວັດຖຸລະເບີດ

ທ່ານນາງ ສາຍສະໝອນ ແມ່ນຢູ່ໃນລະດັບທີ 4 (ຮູ້ຈັກໃນນາມ ເຈົ້າໜ້າທີ່ທຳລາຍວັດຖຸລະເບີດ (EOD) ລະດັບ 3+ ພາຍໃຕ້ IMAS 09.30). ໃນ ສປປ ລາວ, ມີແມ່ຍິງ 3 ຄົນຢູ່ໃນລະດັບນີ້, ລວມມີ 2 ຄົນຢູ່ ແຂວງຊຽງຂວາງ ແລະ 1 ຄົນຢູ່ ແຂວງຈຳປາສັກ. ສ່ວນຜູ້ຊາຍມີຈຳນວນ 20 ຄົນຢູ່ໃນລະດັບນີ້.

ກຸ່ມແມ່ຍິງເຊື່ອວ່າຜູ້ຊາຍມີແນວໂນ້ມສູງກວ່າໃນການເຮັດວຽກໃນຂະແໜງການນີ້ ຍ້ອນພວກເຂົາມີລະດັບການສຶກສາທີ່ສູງກວ່າ. ແມ່ຍິງທຸກຄົນກ່າວວ່າພວກເຂົາຕ້ອງການເລື່ອນຂຶ້ນໄປລະດັບ 3+.

ທ່ານນາງ ສາຍສະໝອນ, ເຈົ້າໜ້າທີ່ທຳລາຍວັດຖຸລະເບີດລະດັບ 3+, ໂຄງການ UXO Lao. ຖ່າຍພາບໂດຍ Suzette Mitchell.

ທີ່ປຶກສາໄດ້ສອບຖາມວ່າທີມຍິງນັ້ນ ເຄີຍຖືກເຊີນໄປບ້ານຂອງເຈົ້າຂອງທີ່ດິນ ເມື່ອສຳເລັດວຽກງານເກັບກູ້ລະເບີດ ເພື່ອສະເຫຼີມສະຫຼອງໂດຍການລ້ຽງເຂົ້າ ແລະ ເຄື່ອງດື່ມມຶນເມົາ ຫຼື ບໍ່. ພວກເຂົາຕອບວ່າບາງຄອບຄົວເອົາອາຫານ ແລະ ເຄື່ອງດື່ມມຶນເມົາໃຫ້ ແລະ ບາງຄັ້ງແມ່ຍິງກໍ່ຈະດື່ມໜ້ອຍໜຶ່ງເພື່ອເປັນການຍຮັກສານ້ຳໃຈ.

ກຸ່ມແມ່ຍິງບອກວ່າພວກເຂົາບໍ່ໄດ້ມີການຈັດກອງປະຊຸມຂັ້ນຊຸມຊົນ ກ່ອນດຳເນີນວຽກງານເກັບກູ້ລະເບີດ. ມີແຕ່ປຶກສາຫາລືກັບນາຍບ້ານ ແລະ ເຈົ້າຂອງທີ່ດິນເທົ່ານັ້ນ.

ເມື່ອຖືກສອບຖາມເຖິງຄວາມເຂົ້າໃຈຂອງເຂດບ້ານນັ້ນທີ່ມີຕໍ່ພະນັກງານເກັບກູ້ລະເບີດຍິງ, ຫົວໜ້າທີມໄດ້ຊີ້ໃຫ້ເຫັນວ່າຊາວບ້ານຕ່າງກໍ່ດີໃຈທີ່ເຫັນພວກເຂົາ, ເຊັ່ນດຽວກັນກັບທີມຜູ້ຊາຍ.

ການສຳພາດໄດ້ຖືກດຳເນີນການຢູ່ພາຍໃນຄ້າຍຂອງພະນັກງານ ລບຕ. ໃນຄ້າຍປະກອບມີທີມຊາຍລ້ວນ 2 ທີມພັກຢູ່ນຳ, ແລະ ນຳໃຊ້ຫ້ອງນ້ຳຮ່ວມກັນ. ເມື່ອຖືກສອບຖາມກ່ຽວກັບທີ່ພັກລວມ, ຫົວໜ້າທີມກ່າວວ່າລາວເອງຍັງເຮັດໜ້າທີ່ເປັນຜູ້ຄວບຄຸມຄຸນນະພາບຊີວິດຂອງແມ່ຍິງພາຍໃນຄ້າຍ. ຖ້າທີມມີບັນຫາ, ພວກເຂົາກໍ່ຈະລາຍງານມາທີ່ລາວ. ຍ້ອນວ່າຜູ້ກ່ຽວຢູ່ໃນລະດັບອາວຸໂສແລ້ວ, ກຸ່ມຜູ້ຊາຍເອງກໍ່ສາມາດລາຍງານບັນຫາຕໍ່ລາວໄດ້ເຊັ່ນກັນ ຫຼື ຫົວໜ້າທີມຂອງພວກເຂົາເອງ. ແຂວງຊຽງຂວາງ ມີຜູ້ຄວບຄຸມບັນຫາ 4 ຄົນ ແລະ ຖ້າມີການຮ້ອງທຸກມາ, ບັນຫາດັ່ງກ່າວກໍ່ຈະໄດ້ຮັບການແກ້ໄຂ ຜ່ານການປຶກສາຫາລືຮ່ວມກັບຜູ້ຄວບຄຸມບັນຫາທັງ 4. ລາວຍັງກ່າວຕື່ມອີກວ່າແມ່ຍິງໃນທີມ ລ້ວນແລ້ວແຕ່ເປັນຜູ້ຕາງໜ້າໃຫ້ແກ່ສະຫະພັນຍິງ. ຖ້າແມ່ຍິງກຸ່ມນັ້ນບໍ່ຕ້ອງການລາຍງານບັນຫາໃຫ້ຫົວໜ້າທີມຊາບ, ພວກເຂົາກໍ່ສາມາດແຈ້ງໃຫ້ LWU ຫຼື ໂຄງການ UXO Lao ໃນຂັ້ນແຂວງຊາບແທນໄດ້. ສ່ວນແມ່ຍິງອີກກຸ່ມໜຶ່ງທີ່ເຂົ້າຮ່ວມການສຳພາດນັ້ນ ແມ່ນບໍ່ຮູ້ກ່ຽວກັບຂໍ້ມູນນີ້ເລີຍ.

**ຂໍ້ແນະນຳທີ 16**

- ⇨ ພະນັກງານ ລບຕ ທັງຍິງ ແລະ ຊາຍຈະຕ້ອງໄດ້ຮັບຂໍ້ມູນກ່ຽວກັບຈຸດຕິດຕໍ່ພົວພັນ ລວມໄປເຖິງຂັ້ນຕອນການລາຍງານບັນຫາທາງການ, ໄປພ້ອມໆກັບການສ້າງຂັ້ນຕອນທາງການເພື່ອຮັບມືກັບຂໍ້ພິພາກ ແລະ ຄຳຮ້ອງທຸກຕ່າງໆ ບົນພື້ນຖານຂອງການແຕ່ງຕັ້ງຈຸດປະສານງານ ແລະ ການແຈ້ງໃຫ້ພະນັກງານ ລບຕ ຊາບກ່ຽວກັບຈຸດຕິດຕໍ່ພົວພັນ.



ຫົວໜ້າທີມຄົນດັ່ງກ່າວໄດ້ເຂົ້າຮ່ວມການຝຶກອົບຮົມຂອງອົງການ ສປຊ ເພື່ອແມ່ຍິງ / LWU ວ່າດ້ວຍບົດບາດຍິງຊາຍ ແລະ ລບຕ. ລາວໄດ້ລາຍງານວ່າມີແມ່ຍິງ 3 ຄົນ ແລະ ຜູ້ຊາຍ 3 ຄົນຈາກ ໂຄງການ UXO Lao ແລະ 6 ຄົນຈາກອົງການແມັກ ເຂົ້າຮ່ວມ. ຫົວໜ້າທີມຜູ້ນີ້ແມ່ນຜູ້ຖືກສຳພາດພຽງຄົນດຽວ ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມ ຫຼື ເຄີຍໄດ້ຍິນກ່ຽວກັບການຝຶກອົບຮົມດັ່ງກ່າວ.

**ຜົນໄດ້ຮັບ**

- ⇨ ຂໍ້ມູນຫຼັກຖານໄດ້ຊີ້ໃຫ້ເຫັນວ່າການຝຶກອົບຮົມດ້ານບົດບາດຍິງຊາຍ (ແລະ ຄວາມຫຼາກຫຼາຍ) ນັ້ນແມ່ນສິ່ງທີ່ຈຳເປັນຕໍ່ພະນັກງານ ລບຕ ແລະ ອຳນາດການປົກຄອງຕ່າງໆ. ຜູ້ຖືກສຳພາດທັງໝົດມີຄວາມຮູ້ສຶກໄປໃນທາງບວກ ກ່ຽວກັບການເຂົ້າຮ່ວມການຝຶກອົບຮົມດັ່ງກ່າວ.

ສຸດທ້າຍ, ແມ່ຍິງໄດ້ຖືກສອບຖາມວ່າຜົວຂອງພວກເຂົານັ້ນຄິດແນວໃດກ່ຽວກັບການທີ່ພວກເຂົາໄປອາໄສໃນສະຖານທີ່ພັກເຊົາຮ່ວມກັບຜູ້ຊາຍ. ຍ້ອນສ່ວນໃຫຍ່ແມ່ນແຕ່ງດອງແລ້ວກ່ອນທີ່ຈະມາປະຈຳຕຳແໜ່ງນີ້, ພວກເຂົ້າເວົ້າວ່າຜົວຂອງພວກເຂົານັ້ນເຂົ້າໃຈ. ພວກເຂົາຍັງກ່າວຕື່ມອີກວ່າບາງຄັ້ງຜົວ ແລະ ລູກຂອງພວກເຂົາກໍ່ຈະມາຢ້ຽມຢາມສະຖານທີ່ພັກເຊົາດັ່ງກ່າວໃນໂມງເລີກວຽກ ແລະ ກໍ່ຈະໄດ້ຮັບການຕ້ອນຮັບທີ່ດີຢູ່ສະເໝີ.

## 5.8 ອຳນາດການປົກຄອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ແລະ ຜູ້ສະໜອງບໍລິການທ້ອງຖິ່ນ

### ອຳນາດການປົ

ກຄອງທ້ອງຖິ່ນໃນທຸກລະດັບ ໄດ້ຖືກສອບຖາມຂໍ້ມູນກ່ຽວກັບພະນັກງານຂອງພວກເຂົາໂດຍແບ່ງຕາມກຸ່ມເພດ, ຄວາມພິການ ແລະ ກຸ່ມຊົນເຜົ່າ, ລວມໄປເຖິງກ່ຽວກັບສະພາບປະຊາກອນໃນແຂວງ, ເມືອງ ແລະ ບ້ານ. ຂໍ້ມູນແມ່ນແນໃສ່ກວມເອົາອຸບັດເຫດ ລບຕ ອັນສະເພາະທີ່ເກີດຂຶ້ນໃນຊ່ວງ 5 ຜີທີ່ຜ່ານມາ. ເນື່ອງຈາກມີກໍລະນີເກີດຂຶ້ນໜ້ອຍ, ອຳນາດການປົກຄອງຫຼາຍພາກສ່ວນ ຈຶ່ງໄດ້ລວມເອົາຂໍ້ມູນຈາກປີກ່ອນໆເຂົ້ານຳ. ອຸບັດເຫດແຕ່ລະຄັ້ງແມ່ນໄດ້ຖືກອະທິບາຍໄວ້ຊັດເຈນ, ພ້ອມທັງສະແດງຂໍ້ມູນຕາມກຸ່ມເພດ, ອາຍຸ ແລະ ກຸ່ມຊົນເຜົ່າ, ລວມໄປເຖິງກິດຈະກຳທີ່ມີການດຳເນີນງານຢູ່ໃນລະຫວ່າງເກີດອຸບັດເຫດ.

ອຳນາດການປົກຄອງຕ່າງໆຍັງໄດ້ຖືກສອບຖາມກ່ຽວກັບຂັ້ນຕອນອັນສະເພາະທີ່ນຳໃຊ້ເຂົ້າໃນວຽກງານການສຳຫຼວດ, ການກຳນົດບຸລິມະສິດ, ການເກັບກູ້ລະເບີດ ແລະ EORE. ວຽກງານນີ້ແນໃສ່ສ້າງຄວາມເຂົ້າໃຈຕໍ່ຂັ້ນຕອນການດຳເນີນງານ ຈາກລະດັບຊາດໄປຈົນເຖິງຂັ້ນແຂວງ, ເມືອງ ແລະ ບ້ານ; ຂໍ້ກຳນົດຈາກ ກອງຮ້ອຍ 58 ແລະ ໂຄງການ UXO Lao; ແລະ ວິທີທີ່ກຸ່ມປະຊາກອນຍິງ ແລະ ຊາຍທີ່ຫຼາກຫຼາຍໃນທ້ອງຖິ່ນ ຈະຫາຂໍ້ມູນກ່ຽວກັບວຽກງານເກັບກູ້ລະເບີດ, ການມອບຮັບເນື້ອທີ່ດິນ, ການເຂົ້າຮ່ວມກອງປະຊຸມປຶກສາຫາລືຂັ້ນຊຸມຊົນ ແລະ ການຝຶກອົບຮົມ EORE ລວມໄປເຖິງສື່ການຮຽນການສອນທີ່ກ່ຽວຂ້ອງໄດ້. ສ່ວນຄຳຖາມຊຸດອື່ນໆແມ່ນແນໃສ່ຄົ້ນຫາຄຳຕອບກ່ຽວກັບ ປະລິມານເນື້ອທີ່ດິນໃນກຸ່ມບ້ານເປົ້າໝາຍທີ່ໄດ້ຮັບການເກັບກູ້ ລບຕ ໄປແລ້ວ, ລວມໄປເຖິງຈຳນວນ ແລະ ປະເພດຂອງ ລບຕ ນຳອີກ.

ອຳນາດການປົກຄອງທ້ອງຖິ່ນໄດ້ຖືກຂໍໃຫ້ແບ່ງປັນມຸມມອງກ່ຽວກັບ ບັນຫາດ້ານບົດບາດຍິງຊາຍທີ່ສຳຄັນທີ່ສຸດທີ່ກ່ຽວຂ້ອງກັບ ລບຕ ແລະ ຄວາມພິການ ແລະ ການທີ່ມາຈາກຊົນກຸ່ມນ້ອຍນັ້ນ ຈະກໍ່ໃຫ້ເກີດອຸປະສັກຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນຂະແໜງການຄືແນວໃດ. ພວກເຂົາຍັງໄດ້ຖືກສອບຖາມວ່າ ໄດ້ຮັບການຝຶກອົບຮົມດ້ານບົດບາດຍິງຊາຍ ແລະ ລບຕ ມາກ່ອນ ຫຼື ບໍ່.

**ຜົນໄດ້ຮັບຕົ້ນຕໍ**

**ພາບລວມ**

- ⇨ ຜູ້ຊາຍແມ່ນກຸ່ມທີ່ຜູກຂາດການຈ້າງງານໃນທຸກຕຳແໜ່ງ ລວມໄປເຖິງໃນຂັ້ນຕອນການຕັດສິນໃຈ. ຜູ້ຊາຍຈາກກຸ່ມຊົນເຜົ່າ ແມ່ນຈະຖືກມອບໝາຍໃຫ້ຢູ່ໃນຈຸດທີ່ມີອຳນາດຕັດສິນໃຈໃນຂັ້ນບ້ານ ໃນຂົງເຂດທີ່ພົວພັນກັບປະຊາຊົນສ່ວນໃຫຍ່ທີ່ມາຈາກກຸ່ມຊົນເຜົ່າ.
- ⇨ ບໍ່ມີຄົນພິການໃນຂັ້ນບ້ານ ຫຼື ຂັ້ນເມືອງທີ່ມີບົດບາດກ່ຽວພັນກັບຂັ້ນຕອນການຕັດສິນໃຈໃນສະໜາມ. ອຳນາດການປົກຄອງຕ່າງໆໄດ້ກ່າວວ່າ ແມ່ຍິງບໍ່ມີອຸປະສັກທີ່ກີດຂວາງພວກເຂົາຈາກການຈ້າງງານ ຫຼື ຂະບວນການຕັດສິນໃຈ, ແຕ່ຄົນພິການພັກບໍ່ສາມາດເຂົ້າເຖິງການສະໜັບສະໜຸນຕ່າງໆໄດ້, ເຊັ່ນ: ການຝຶກອົບຮົມເພື່ອພັດທະນາທັກສະ.
- ⇨ ບໍ່ປາກົດວ່າມີຂັ້ນຕອນອັນຊັດເຈນ ໃນການແຈ້ງໃຫ້ສະມາຊິກໃນຊຸມຊົນຊາບ ກ່ຽວກັບວິທີໃນການຮ້ອງຂໍການເກັບກູ້ເນື້ອທີ່ດິນ. ເວັ້ນເສຍແຕ່ວ່າຈະແມ່ນຜູ້ທີ່ຮູ້ຈັກ ແລະ ມາຍັງຫ້ອງການບ້ານເພື່ອຕື່ມແບບຟອມ, ເນື້ອທີ່ດິນຂອງພວກເຂົາກໍ່ຈະບໍ່ໄດ້ຖືກພິຈາລະນາເກັບກູ້. ອຳນາດການປົກຄອງຕ່າງໆໄດ້ຊີ້ແຈງວ່າຖ້າປະຊາຊົນບໍ່ຮູ້ໜັງສື, ອຳນາດການປົກຄອງບ້ານກໍ່ຈະຊ່ວຍພວກເຂົາໃນການຕື່ມແບບຟອມ (ແຂວງບໍລິຄຳໄຊ).
- ⇨ ຜູ້ຊາຍມີອັດຕາພົບພໍ້ກັບອຸບັດເຫດ ລບຕ

ຫຼາຍກວ່າໝູ່ຕາມການຢັ້ງຢືນຈາກ 4 ບ້ານ. ອຸບັດເຫດສ່ວນໃຫຍ່ເກີດຂຶ້ນໃນເວລາທີ່ຜູ້ຊາຍກຳລັງດຳເນີນການປູກຝັງ ຫຼື ເກັບເສດໂລຫະໄປຂາຍ, ແລະ ໃນເວລາທີ່ເດັກຊາຍເຂົ້າໄປຫຼິ້ນໃນເນື້ອທີ່ດິນທີ່ມີລະເບີດຕົກຄ້າງຢູ່.

- ⇨ ບໍ່ປາກົດວ່າມີແຜນປ້າຍໂຄສະນາວຽກງານ EORE ຖືກຕິດຢູ່ຕາມຫ້ອງການຂອງປົກຄອງບ້ານ ຫຼື ອາຄານໂຮງຮຽນຕ່າງໆ ໃນບ່ອນທີ່ທີມປະຕິບັດງານພາກສະໜາມ ໄດ້ພົບປະກັບອຳນາດການປົກຄອງຂັ້ນຕ່າງໆ. ໃນສອງບ້ານ, ອຳນາດການປົກຄອງຂອງພວກເຂົາເວົ້າວ່າພວກເຂົາມີແຜ່ນປ້າຍໂຄສະນາວຽກງານດັ່ງກ່າວ, ແຕ່ຖືກເກັບລອັກໄວ້ໃນຕູ້ (ຮູບທີ 3).

## ບ້ານທອງແສງ, ແຂວງບໍລິຄຳໄຊ

- ⇨ ສະມາຊິກໃນບ້ານທຸກຄົນໄດ້ຖືກເຊື້ອເຊີນໃຫ້ເຂົ້າຮ່ວມ EORE. ອຳນາດການປົກຄອງບໍ່ສາມາດຈື່ຈຳນວນຂອງຜູ້ເຂົ້າຮ່ວມທີ່ເປັນຜູ້ໃຫຍ່ໄດ້ ຍ້ອນບໍ່ໄດ້ມີການລົງທະບຽນຜູ້ເຂົ້າຮ່ວມ. ອຳນາດການປົກຄອງຂັ້ນບ້ານໄດ້ນຳໃຊ້ໂທລະໂຄ່ງ ເພື່ອປ່າວປະກາດກ່ຽວກັບກອງປະຊຸມເປັນພາສາລາວ ແລະ ພາສາມົ້ງ.
- ⇨ ອຳນາດການປົກຄອງບອກວ່າບໍ່ໄດ້ມີການເກັບກຳຂໍ້ມູນກ່ຽວກັບຜູ້ເສຍຊີວິດ ແລະ ບາດເຈັບ. ຂໍ້ມູນແມ່ນມາຈາກຄວາມຈຳເປັນສ່ວນໃຫຍ່; ອຸບັດເຫດຕ່າງໆທີ່ແຈ້ງມານັ້ນ ແມ່ນເກີດຂຶ້ນເມື່ອດົນມາແລ້ວ ແລະ ບໍ່ໄດ້ມີການເກັບບັນທຶກຂໍ້ມູນໄວ້.
- ⇨ ບໍ່ໄດ້ມີການຈັດກອງປະຊຸມປຶກສາຫາລືຂັ້ນຊຸມຊົນ. ກອງຮ້ອຍ 58 ໄດ້ລະບຸພື້ນທີ່ທີ່ຕ້ອງໄດ້ຮັບການເກັບກູ້ ແລະ ສົ່ງຂໍ້ມູນນີ້ໄປຍັງແຂວງ, ຕໍ່ມາກໍ່ຂັ້ນເມືອງ, ຂັ້ນບ້ານ ແລະ ການນຳຂັ້ນບ້ານ, ຜູ້ທີ່ຈະໄປແຈ້ງໃຫ້ເຈົ້າຂອງທີ່ດິນຊາບ ກ່ຽວກັບການເກັບກູ້ລະເບີດໃນເນື້ອທີ່ດິນຂອງພວກເຂົາ.
- ⇨ ອຳນາດການປົກຄອງສາມາດລາຍງານຈຳນວນຂອງເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວ ລວມໄປເຖິງຈຳນວນ ແລະ ປະເພດຂອງ ລບຕ ທີ່ຄົ້ນພົບ ແລະ ຖືກທຳລາຍ.

## ບ້ານໂພນສະອາດ, ແຂວງບໍລິຄຳໄຊ

- ⇨ ໃນປີ 2019, ອຳນາດການປົກຄອງບ້ານ ໄດ້ຕື່ມແບບຟອມພາກສະໜາມ ທີ່ປະກອບມີຂໍ້ມູນກ່ຽວກັບອຸບັດເຫດ ລບຕ ໃນທ້ອງຖິ່ນ ແລະ ຜູ້ບາດເຈັບຕ່າງໆ. ພວກເຂົາໄດ້ສົ່ງແບບຟອມດັ່ງກ່າວ ໄປຍັງອຳນາດການປົກຄອງເມືອງ. ຕໍ່ມາກໍ່ຖືກສົ່ງຕໍ່ໄປຍັງຂັ້ນແຂວງ ແລະ NRA ໃນທີ່ສຸດ. NRA ໄດ້ພົວພັນກັບ ອົງການການສຶກສາໂລກ, ແຕ່ອຳນາດການປົກຄອງທ້ອງຖິ່ນ ຍັງບໍ່ທັນເຂົ້າໃຈບົດບາດຂອງພວກເຂົາຢ່າງຊັດເຈນເທື່ອ.
- ⇨ ກອງຮ້ອຍ 58 ໄດ້ຈັດກອງປະຊຸມປຶກສາຫາລືຂັ້ນຊຸມຊົນ ສຳລັບວຽກງານການເກັບກູ້ລະເບີດໃນຂັ້ນສຸດທ້າຍ. ຖ້າປະຊາຊົນບໍ່ໄດ້ລາຍງານເນື້ອທີ່ດິນສຳລັບການເກັບກູ້ມານັ້ນ, ພວກເຂົາກໍ່ຈະບໍ່ມາຮ່ວມກອງປະຊຸມບ້ານ. ກອງຮ້ອຍ 58 ສາມາດເກັບກູ້ໄດ້ສະເພາະແຕ່ ລບຕ ທີ່ລະບຸໄວ້ ໂດຍອີງຕາມແຜນການຂອງ NRA ໃນ ນະຄອນຫຼວງວຽງຈັນ. ຄະນະກຳມະການຂັ້ນບ້ານໄດ້ຮ້ອງຂໍໃຫ້ມີການເກັບກູ້ພື້ນທີ່ເພີ່ມເຕີມອີກ, ແຕ່ຖືກຮັບແຈ້ງວ່າບໍ່ມີທຶນຮອງຮັບຄຳຮ້ອງດັ່ງກ່າວ. ເຈົ້າໜ້າທີ່ ແລະ ເຈົ້າຂອງທີ່ດິນເວົ້າວ່າ ພວກເຂົາບໍ່ໄດ້ຖືກຮັບແຈ້ງກ່ຽວກັບຈຳນວນ ຫຼື ປະເພດຂອງ ລບຕ ທີ່ຄົ້ນພົບ.
- ⇨ ໃນເວລາທີ່ ລບຕ ຖືກທຳລາຍ, ກອງຮ້ອຍ 58 ໄດ້ປະກາດຜ່ານໂທລະໂຄ່ງໃຫ້ປະຊາຊົນຢູ່ຫ່າງຈາກພື້ນທີ່ດັ່ງກ່າວ, ແຕ່ເປັນພຽງພາສາລາວເທົ່ານັ້ນ.

- ⇨ ຜູ້ຊາຍເຜົ່າຂະມຸຄົນໜຶ່ງໄດ້ຖືກສົ່ງໄປນະຄອນຫຼວງວຽງຈັນ ເພື່ອເຂົ້າຮ່ວມການຝຶກອົບຮົມກ່ຽວກັບ ລບຕ ທີ່ NRA ຈັດຂຶ້ນ. ເມື່ອກັບມາຈາກການຝຶກອົບຮົມແລ້ວ, ລາວກໍ່ໄດ້ສະໜອງ EORE ໃຫ້ແກ່ສະມາຊິກໃນຊຸມຊົນທີ່ຕັ້ງໃຈມາເຂົ້າຮ່ວມເປັນຢ່າງດີ. ອຳນາດການປົກຄອງໄດ້ຊີ້ໃຫ້ເຫັນວ່າ ອັດຕາການເຂົ້າຮ່ວມທີ່ສູງນັ້ນ ແມ່ນມີສາເຫດມາຈາກການທີ່ລາວແຈກປຶ້ມຂຽນ ແລະ ປາກກາໃຫ້ພວກເຂົາ, ເຊິ່ງຊ່ວຍຍົກສູງອັດຕາການເຂົ້າຮຽນ. ຍ້ອນບ້ານດັ່ງກ່າວປະກອບດ້ວຍຊົນເຜົ່າມົ້ງກວມ 80 ສ່ວນຮ້ອຍ, ທີມງານຈຶ່ງໄດ້ສອບຖາມວ່າຍ້ອນຫຍັງ ຜູ້ຊາຍເຜົ່າຂະມຸຄົນນັ້ນຈຶ່ງຖືກຮັບເລືອກໃຫ້ເຂົ້າຝຶກອົບຮົມຢູ່ ນະຄອນຫຼວງວຽງຈັນ. ອຳນາດການປົກຄອງໄດ້ອະທິບາຍວ່າ ພວກເຂົາຕ້ອງການຜູ້ຕາງໜ້າທີ່ມີທັກສະພາສາລາວທີ່ດີ. ອີກເທື່ອໜຶ່ງ, ບໍ່ໄດ້ມີການເກັບກຳຂໍ້ມູນການລົງທະບຽນຜູ້ເຂົ້າຮ່ວມຕາມກຸ່ມເພດ ແລະ ອາຍຸ.

## ບ້ານປຸ່ງໝັ້ນ, ແຂວງຊຽງຂວາງ

- ⇨ ຂັ້ນຕອນການລາຍງານການຕົກຄ້າງຂອງ ລບຕ ໃນ ແຂວງຊຽງຂວາງ ແມ່ນມີຄວາມແຕກຕ່າງຍ້ອນ ໂຄງການ UXO Lao ມີລະບຽບຂັ້ນຕອນການດຳເນີນງານ ທີ່ແຕກຕ່າງໄປຈາກຂັ້ນຕອນຂອງ ກອງຮ້ອຍ 58. ພາຍຫຼັງຕື່ມແບບຟອມແລ້ວ, ອຳນາດການປົກຄອງບ້ານ ກໍ່ໄດ້ສົ່ງຂໍ້ມູນດັ່ງກ່າວໄປຍັງຫ້ອງການສະຫວັດດີການສັງຄົມເມືອງ. ຕໍ່ມາກໍ່ຖືກສົ່ງຕໍ່ໄປຍັງພະແນກສະຫວັດດີການສັງຄົມແຂວງ ແລະ ສຳນັກງານໃຫຍ່ຂອງ ໂຄງການ UXO Lao ໃນ ນະຄອນຫຼວງວຽງຈັນ. ໂຄງການ UXO Lao ຕໍ່ມາກໍ່ຈະເດີນທາງມາຍັງບ້ານນັ້ນ. ອຳນາດການປົກຄອງໄດ້ກ່າວວ່າ ທຸກຄົນຮັບຮູ້ກ່ຽວກັບຂັ້ນ



ຕອນການຕື່ມຄຳຮ້ອງແລ້ວ.
- ⇨ ໂຄງການ UXO Lao ໄດ້ດຳເນີນວຽກງານ EORE ໃນເມືອງດັ່ງກ່າວທຸກໆປີນັບຕັ້ງແຕ່ປີ 1998 ເປັນຕົ້ນມາ. ກອງປະຊຸມແມ່ນໄດ້ຖືກຈັດຂຶ້ນທີ່ວັດ. ໂຄງການ UXO Lao ໄດ້ສົ່ງໜັງສືຜ່ານຫ້ອງການສະຫວັດດີການສັງຄົມເມືອງ ແລະ ຮ້ອງຂໍໃຫ້ຄະນະກຳມະການຂັ້ນບ້ານແຈ້ງໃຫ້ຊຸມຊົນຊາບ.
- ⇨ ແມ່ຍິງຈະເຂົ້າຮ່ວມກອງປະຊຸມປຶກສາຫາລືຂັ້ນຊຸມຊົນຫຼາຍຂຶ້ນຖ້າຈັດໃນຕອນເຊົ້າ; ຜູ້ຊາຍຈະເຂົ້າຮ່ວມຫຼາຍກວ່າໃນຕອນຄໍ່າ, ແຕ່ສ່ວນໃຫຍ່ແລ້ວກອງປະຊຸມມັກຈະຖືກຈັດຂຶ້ນໃນຕອນເຊົ້າ

## ບ້ານປົວ, ແຂວງຊຽງຂວາງ

- ⇨ ອຳນາດການປົກຄອງໄດ້ຢັ້ງຢືນວ່າໃນເວລາທີ່ໂຄງການ UXO Lao ມາຮອດກຸ່ມບ້ານດັ່ງກ່າວແລ້ວນັ້ນ, ພວກເຂົາກໍ່ໄດ້ແຈ້ງໃຫ້ນາຍບ້ານຊາບກ່ຽວກັບກອງປະຊຸມຕ່າງໆ, ຜູ້ທີ່ຕໍ່ມາໄດ້ໃຊ້ພາສາທ້ອງຖິ່ນແຈ້ງໃຫ້ປະຊາຊົນຊາບ.
- ⇨ ຜູ້ຊາຍ ແລະ ແມ່ຍິງໄດ້ເຂົ້າຮ່ວມກອງປະຊຸມປຶກສາຫາລືຂັ້ນຊຸມຊົນ ກ່ຽວກັບວຽກງານເກັບກູ້ເນື້ອທີ່ດິນຍ້ອນທັງບັນດາຜົວ ແລະ ບັນດາເມຍແມ່ນມີຄວາມກັງວົນໃຈກ່ຽວກັບເນື້ອທີ່ດິນຂອງພວກເຂົາ (ເຖິງຢ່າງໃດກໍ່ຕາມ, ບໍ່ໄດ້ມີການລົງທະບຽນຜູ້ເຂົ້າຮ່ວມ).




**ແຜນປ້າຍໂຄສະນາວຽກງານ EORE. ຖ່າຍພາບໂດຍ Suzette Mitchell.**

ຮູບທີ 3: ແຜ່ນປ້າຍໂຄສະນາວຽກງານ EORE

ແຜ່ນປ້າຍໂຄສະນາວຽກງານ EORE ນີ້ແມ່ນຕົວຢ່າງທີ່ດີເລີດ. ມັນໄດ້ລວມເອົາຮູບພາບຂອງທັງຜູ້ຊາຍ ແລະ ແມ່ຍິງ ແລະ ເດັກຊາຍ ແລະ ເດັກຍິງເຂົ້າໃນແຜ່ນປ້າຍພາຍໃຕ້ສະພາບການທີ່ມີຄວາມກວມລວມ. ເຖິງຢ່າງໃດກໍ່ຕາມ, ເປັນໄປບໍ່ໄດ້ເລີຍທີ່ຈະສາມາດຕີຄວາມໝາຍຂອງຮູບພາບຕ່າງໆໄດ້ຖ້າບໍ່ອ່ານເນື້ອຄວາມກ່ອນ. ເຖິງແມ່ນວ່າປະຊາຊົນສ່ວນໃຫຍ່ໃນ ບ້ານປີວ ຈະສາມາດເວົ້າພາສາລາວໄດ້ກໍ່ຕາມ, ທີມງານພາກສະໜາມກໍ່ພົບວ່າ ຜູ້ສູງອາຍຸສ່ວນໃຫຍ່ນັ້ນບໍ່ຮູ້ໜັງສື. ດັ່ງນັ້ນ, ຈຶ່ງຈໍາເປັນຈະຕ້ອງໄດ້ນໍາໃຊ້ຮູບພາບ ທີ່ເບິ່ງແລ້ວເຂົ້າໃຈໄດ້ທັນທີໂດຍບໍ່ຕ້ອງອ່ານເນື້ອຄວາມ, ແລະ ຈໍາເປັນຈະຕ້ອງໄດ້ແປແຜ່ນປ້າຍດັ່ງກ່າວເປັນພາສາຊົນເຜົ່າ.

ບົດປະເມີນຜົນຂອງ ອົງການແມັກ ໃນປີ 2008 ໄດ້ແນະນໍາວ່າ:ການປະເມີນຄວາມຕ້ອງການ (ດ້ານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ) ຈະຕ້ອງລວບລວມເອົາຂໍ້ມູນ, ໂດຍແບ່ງຕາມກຸ່ມເພດ, ອາຍຸ ແລະ ກຸ່ມຊົນເຜົ່າ, ເພື່ອໃຫ້ສາມາດກໍານົດຄວາມຮູ້, ຫຼັກປະຕິບັດ ແລະ ທັດສະນະຄະຕິຂອງ ກຸ່ມສ່ຽງຕ່າງໆ ໄດ້ຢ່າງຊັດເຈນ; ທຸກສື່ການຮຽນການສອນ (ດ້ານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ) ຈະຕ້ອງຄໍານຶງເຖິງ ບົດບາດຍິງຊາຍ, ວັດທະນະທໍາ ແລະ ພາສາ, ກິດຈະກໍາ ແລະ ພຶດຕະກໍາສ່ຽງທີ່ກ່ຽວຂ້ອງ ທີ່ສະແດງໃຫ້ເຫັນ; ຂໍ້ຄວາມ ແລະ ກິດຈະກໍາຕ່າງໆ (ຂອງການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ) ຈະຕ້ອງແນໃສ່ ກຸ່ມທີ່ມີຄວາມສ່ຽງສູງ ໂດຍແບ່ງຕາມກຸ່ມ ເພດ, ອາຍຸ, ພຶດຕິກໍາ ແລະ ກິດຈະກໍາການດໍາລົງຊີວິດ; ການມີສ່ວນຮ່ວມເຂົ້າໃນ MRE ຈະຕ້ອງດໍາເນີນໃນຮູບແບບຂອງ ກຸ່ມແມ່ຍິງ, ກຸ່ມຜູ້ຊາຍ, ແມ່ຍິງແບບສ່ວນໂຕ, ຜູ້ຊາຍແບບສ່ວນໂຕ ຫຼື ຮ່ວມກັນ (ໃນຖານະຂອງກຸ່ມຄົວເຮືອນດຽວກັນ ຫຼື ກຸ່ມຜູ້ເກັບເສດໂລຫະ, ຍົກຕົວຢ່າງ); ທີມງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈະຕ້ອງປະກອບມີ ສະມາຊິກທີ່ເປັນແມ່ຍິງ ແລະ ຜູ້ຊາຍ ເພື່ອຊ່ວຍໃຫ້ເກີດມີການປະຕິສໍາພັນກັນລະຫວ່າງຊາຍຕໍ່ຊາຍ ແລະ ຍິງຕໍ່ຍິງ; ແລະ ທີມງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ຈະຕ້ອງປະກອບມີສະມາຊິກທີ່ມີຄວາມສາມາດໃນການເຜີຍແຜ່ບັນດາຂໍ້ຄວາມ ໃນພາສາຊົນເຜົ່າຕ່າງໆ ຂອງກຸ່ມປະຊາກອນເປົ້າໝາຍ ຫຼື ຝຶກອົບຮົມນັກສື່ສານທ້ອງຖິ່ນ ເພື່ອໃຫ້ສາມາດເຜີຍແຜ່ບັນດາຂໍ້ຄວາມໃນພາສາທ້ອງຖິ່ນໄດ້ (ພາກທີ 4.3.1-4.3.5).

### ຂໍ້ແນະນໍາທີ 17

- ⇨ ທຸກຂັ້ນຕອນການເກັບກູ້ລະເບີດ ຈະຕ້ອງລວມເອົາການປຶກສາຫາລືຂັ້ນຊຸມຊົນເຂົ້ານໍາ. ການປຶກສາຫາລືເຫຼົ່ານີ້ ແລະ ວຽກງານ EORE ຈະຕ້ອງລວມມີຜູ້ຕາງໜ້າຂອງປະຊາຊົນທຸກຄົນໃນຊຸມຊົນ (ຍົກຕົວຢ່າງ: ແມ່ຍິງ, ຜູ້ຊາຍ, ເດັກຊາຍ, ເດັກຍິງ, ຜູ້ສູງອາຍຸ, ໄວໜຸ່ມ, ກຸ່ມຊົນເຜົ່າ, ຜູ້ບໍ່ຮູ້ໜັງສື ແລະ ຜູ້ທີ່ອາໄສໃນເຂດຫ່າງໄກສອກຫຼີກບ່ອນທີ່ມີລບຕ ຕົກຄ້າງຈໍານວນຫຼາຍ). ຂໍ້ມູນກ່ຽວກັບເພດ, ອາຍຸ, ຄວາມພິການ ແລະ ກຸ່ມຊົນເຜົ່າຈະຕ້ອງຖືກເກັບກໍາໄວ້ໃນແບບຟອມລົງທະບຽນ.



- ⇨ ການປະກາດຂ່າວ ແລະ ກອງປະຊຸມຕ່າງໆ ຈະຕ້ອງຖືກດໍາເນີນການເປັນພາສາຂອງກຸ່ມຊົນເຜົ່າໃນພື້ນທີ່, ພ້ອມດ້ວຍກົນໄກເພີ່ມເຕີມໃນການແຈ້ງຂ່າວໃຫ້ກຸ່ມຄົນດ້ອຍໂອກາດ ແລະ ມີຄວາມສ່ຽງສູງຊາບ. ກອງປະຊຸມຕ່າງໆຈະຕ້ອງນໍາໃຊ້ແນວທາງທີ່ກວມລວມແລະ ຕອບສະໜອງໄດ້ຄວາມຕ້ອງການຂອງຜູ້ທີ່ບໍ່ຮູ້ໜັງສື ແລະ ຄົນພິການ. ກອງປະຊຸມຕ່າງໆນັ້ນຈະຕ້ອງຖືກຈັດຂຶ້ນໃນເວລາທີ່ທຸກຄົນສາມາດເຂົ້າຮ່ວມໄດ້ ເພື່ອຮັບປະກັນໃຫ້ຄົນໃນຊຸມຊົນໄດ້ເຂົ້າຮ່ວມຫຼາຍທີ່ສຸດ. ການຈັດກອງປະຊຸມຕ່າງໆຫາກໃຫ້ແກ່ແມ່ຍິງ/ຜູ້ຊາຍ, ໄວໜຸ່ມ/ຜູ້ສູງອາຍຸ, ຄົນເກັບເສດໂລຫະ, ກຸ່ມຊົນເຜົ່າ ຫຼື ກຸ່ມອື່ນໆ ອາດຊ່ວຍໃຫ້ອັດຕາການເຂົ້າຮ່ວມ ແລະ ການມີສ່ວນຮ່ວມເພີ່ມສູງຂຶ້ນ.

## 5.9 ກຸ່ມຍິງຊາຍທ້ອງຖິ່ນເພື່ອເຄື່ອນໄຫວວຽກງານໂຕຈິງສະເພາະ

ກອງປະຊຸມເຫຼົ່ານີ້ແມ່ນໄດ້ຖືກຈັດຂຶ້ນໃນທ້ອງຖິ່ນຕາມຫ້ອງການບ້ານ ຫຼື ຫ້ອງການປົກຄອງເມືອງ ຫຼື ໂຮງຮຽນຕ່າງໆ. ໂຕະໄດ້ຖືກຍັບເຂົ້າກັນເພື່ອຊ່ວຍໃຫ້ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງໄດ້ນັ່ງຫ່າງຈາກກັນ ໃນໄຍລະທີ່ບໍ່ສາມາດໄດ້ຍິນສຽງເວລາລົມກັນ. ກຸ່ມແມ່ຍິງແມ່ນໄດ້ຮັບອໍານວຍຄວາມສະດວກໂດຍທີ່ປຶກສາທ້ອງຖິ່ນ ແລະ ໄດ້ຮັບການຊ່ວຍເຫຼືອຈາກແມ່ຍິງກຸ່ມອື່ນໆຈາກທີມງານພາກສະໜາມ. ຍ້ອນທີມງານດັ່ງກ່າວຍັງປະກອບມີຜູ້ຊາຍນໍາອີກ 2 ຄົນຈາກ LWU, ພວກເຂົາກໍ່ສາມາດອໍານວຍຄວາມສະດວກໃຫ້ແກ່ກຸ່ມສົນທະນາຊາຍໄດ້ນໍາອີກ.[1] ໄດ້ມີການຈັດກອງປະຊຸມຂັ້ນບ້ານທັງໝົດ 4 ຄັ້ງ, ໃນ 2 ບ້ານຕໍ່ແຂວງ. ກອງປະຊຸມແຕ່ລະຄັ້ງໃຊ້ເວລາປະມານ 1-2 ຊົ່ວໂມງລະຫວ່າງ 10 ແລະ 12 ໂມງ.

ກອງປະຊຸມດັ່ງກ່າວປະກອບມີແມ່ຍິງສູງສຸດ 11 ຄົນ ແລະ ຜູ້ຊາຍສູງສຸດ 11 ຄົນໃນບາງບ້ານ. ນີ້ແມ່ນອັດຕາການເຂົ້າຮ່ວມທີ່ດີຫຼາຍ ໂດຍຂໍ້ຊີ້ນໍາປະຕິບັດການພາກສະໜາມ ຮຽກຮ້ອງໃຫ້ມີຜູ້ເຂົ້າຮ່ວມຢ່າງໜ້ອຍພຽງແຕ່ຜູ້ຊາຍ 6 ຄົນ ແລະ ແມ່ຍິງ 6 ຄົນເທົ່ານັ້ນ. ເນື່ອງຈາກການຄົ້ນຄວ້າຄັ້ງນີ້ເນັ້ນໜັກໃສ່ຫຼາຍຂະແໜງການ (ໂດຍພິຈາລະນາທັງຈຸດດີ ແລະ ຈຸດອ່ອນທີ່ກຸ່ມຜູ້ຊາຍ ແລະ ແມ່ຍິງທີ່ຫຼາກຫຼາຍຕ້ອງປະເຊີນ), ຂໍ້ແນະນໍາການກໍານົດແຜນວຽກພາກສະໜາມ ໄດ້ຮຽກຮ້ອງໃຫ້ມີຜູ້ເຂົ້າຮ່ວມທີ່ມາຈາກກຸ່ມອາຍຸ ແລະ ກຸ່ມຊົນເຜົ່າທີ່ແຕກຕ່າງກັນ ລວມໄປເຖິງກຸ່ມຄົນພິການ ແລະ ແມ່ຍິງທີ່ເປັນຜູ້ດູແລສະມາຊິກຄອບຄົວທີ່ພິການນໍາອີກ. ໃນກຸ່ມບ້ານທີ່ດໍາເນີນປະຕິບັດການພາກສະໜາມນີ້, ບໍ່ປາກົດວ່າມີຜູ້ຊາຍທີ່ເປັນຜູ້ດູແລສະມາຊິກຄອບຄົວທີ່ພິການ (ສິ່ງນີ້ແມ່ນໄດ້ຄາດການໄວ້ແລ້ວໃນຂັ້ນຕອນການອອກແບບ ແລະ ສອດຄ່ອງກັບຜົນໄດ້ຮັບຂອງສາກົນ).



ກຸ່ມແມ່ຍິງໃນ ບ້ານທອງແສນ



ກຸ່ມຜູ້ຊາຍໃນ ບ້ານປີວ

ຜູ້ເຂົ້າຮ່ວມມີອາຍຸຕັ້ງແຕ່ 16 ຫາ 64 ປີ. ແມ່ຍິງທີ່ອາຍຸສູງກວ່າມີແນວໂນ້ມປະກອບຄໍາເຫັນໃນລະຫວ່າງການປຶກສາຫາລືຫຼາຍກວ່າໃນ ແຂວງຊຽງຂວາງ ບ່ອນທີ່ມີລະດັບການສຶກສາສູງກວ່າ. ກອງປະຊຸມຢູ່ ແຂວງບໍລິຄໍາໄຊ ສ່ວນໃຫຍ່ແມ່ນເຂົ້າຮ່ວມໂດຍຊົນເຜົ່າມົ້ງ ແລະ ຂະມຸ. ແມ່ຍິງສູງອາຍຸແມ່ນກຸ່ມທີ່ມີລະດັບການສຶກສາຕໍ່າກວ່າ (ແມ່ຍິງຫຼາຍຄົນເອງກໍ່ບໍ່ຮູ້ໜັງສື) ແລະ ເວົ້າພາສາບລາວ; ພວກເຂົາແມ່ນກຸ່ມທີ່ປະກອບຄໍາເຫັນໜ້ອຍກວ່າໄວໜຸ່ມຍິງໃນກອງປະຊຸມ. ໃນແຕ່ລະບ້ານປະກອບມີຜູ້ຊາຍ 1 ຄົນທີ່ພິການຈາກອຸບັດເຫດ ລບຕ; ບໍ່ມີຜູ້ປະສົບເຄາະຮ້າຍທີ່ເປັນແມ່ຍິງ.

ວຽກກຸ່ມປະກອບມີ 2 ກິດຈະກໍາສົ່ງເສີມການມີສ່ວນຮ່ວມ ແລະ ການສົນທະນາກຸ່ມກ່ຽວກັບວຽກງານ EORE. ກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງດໍາເນີນກິດຈະກໍາແບບດຽວກັນແບບແຍກຕ່າງຫາກ. ກິດຈະກໍາທໍາອິດແມ່ນໃຫ້ຜູ້ເຂົ້າຮ່ວມລະບຸວຽກງານອັນສະເພາະທີ່ແຕ່ລະຄົນໃນຄອບຄົວຕ້ອງເຮັດໃນຊີວິດປະຈໍາວັນ (ຕາຕະລາງທີ 1). ໄດ້ມີການສະໜອງຂໍ້ຊີ້ນໍາໃຫ້ແກ່ການລະບຸວຽກງານ, ເຊັ່ນ: ແຕ່ງກິນ, ທໍາຄວາມສະອາດ, ຊັກລ້າງ, ພາລູກໄປໂຮງຮຽນ ຫຼື ຊ່ວຍລູກເຮັດວຽກບ້ານ, ປູກຝັງ, ເຮັດກິດຈະກໍາຍາມຫວ່າງ ແລະ ນອກພັກຜ່ອນ ລວມໄປເຖິງເຂົ້າຮ່ວມກອງປະຊຸມ (ເຖິງແມ່ນວ່າວຽກງານເຫຼົ່ານີ້ອາດບໍ່ແມ່ນສິ່ງເກີດຂຶ້ນທຸກມື້ກໍ່ຕາມ). ທຸກຄົນມີສິດຕື່ມກິດຈະກໍາອື່ນໆເພີ່ມອີກໄດ້. ສິ່ງນີ້ເກີດຂຶ້ນຢູ່ ບ້ານປີວ, ບ່ອນທີ່ປະຊາຊົນລາວມີລາຍຮັບ ແລະ ລະດັບການສຶກສາທີ່ສູງກວ່າ.

**ຕາຕະລາງທີ 1: ຮູບແບບຕາຕະລາງເຄື່ອນໄຫວວຽກປະຈຳວັນ**

| ກິດຈະກຳ | ແມ່ຕູ້ (ຕາມການລະບຸກຸ່ມ) | ພໍ່ຕູ້ 67 | ພໍ່ 45 | ແມ່ XX | ລູກຊາຍ XX | ລູກສາວ XX | ລູກຊາຍ XX | ລູກຊາຍ XX | ອື່ນໆ XX | ອື່ນໆ XX |
|---|---|---|---|---|---|---|---|---|---|---|
| ເຊົ້າມືດ | | | | | | | | | | |
| ຕອນເຊົ້າ | | | | | | | | | | |
| ຕອນສວຍ | | | | | | | | | | |
| ຕອນແລງ | | | | | | | | | | |

ເພື່ອຮັບປະກັນໃຫ້ຜູ້ທີ່ບໍ່ຮູ້ໜັງສືສາມາດເຂົ້າຮ່ວມໄດ້ຢ່າງຫ້າວຫັນ,
ພວກເຂົາສາມາດນຳໃຊ້ສັນຍາລັກຕ່າງໆຕິດລົງໃນຕາຕະລາງແທນ (ຮູບທີ 4).




ນອກຈາກນັ້ນ, ຜູ້ອຳນວຍຄວາມສະດວກຍັງໄດ້ສອບຖາມຊຸດຄຳຖາມດັ່ງຕໍ່ໄປນີ້ ໃນລະຫວ່າງການສົນທະນາຫຼັງຕື່ມຂໍ້ມູນໃສ່ຕາຕະລາງເຄື່ອນໄຫວວຽກປະຈຳວັນແລ້ວ:

- ແມ່ນໃຜໃນຄອບຄົວເຂົ້າຮ່ວມກອງປະຊຸມ? ເປັນກອງປະຊຸມປະເພດໃດ?
- ແມ່ນໃຜໃນຄອຍຄົວທີ່ໄປຫ້ອງປິ່ນພະຍາດ? ໄປເພື່ອຫຍັງ?
- ແມ່ນຫຍັງຄືແຫຼ່ງລາຍຮັບຫຼັກໃນຄົວເຮືອນ, ມາຈາກໃສແດ່, ແລະ ແມ່ນໃຜໄດ້ເງິນ?
- ແມ່ນໃຜເປັນຜູ້ຕັດສິນໃຈຫຼັກກ່ຽວກັບການເງິນ?
- ຊື່ຂອງໃຜປາກົດຢູ່ເທິງໃບຕາດິນທີ່ເຈົ້າມີ?

ກິດຈະກຳທີສອງແມ່ນໃຫ້ຜູ້ເຂົ້າຮ່ວມແຕ້ມຮູບບ້ານຂອງພວກເຂົາ ພ້ອມດ້ວຍຈຸດໝາຍສຳຄັນທີ່ກ່ຽວຂ້ອງກັບບ້ານດັ່ງກ່າວ ແລະ ຕໍ່ມາກໍ່ໝາຍຈຸດທີ່ມີການດຳເນີນວຽກງານເກັບກູ້ ລບຕ ລວມໄປເຖິງພື້ນທີ່ຕ່າງໆທີ່ຍັງມີລະເບີດຕົກຄ້າງຢູ່.

ຜູ້ເຂົ້າຮ່ວມຍັງໄດ້ຖືກຂໍໃຫ້ແຕ້ມແຜນທີ່ບ້ານຂອງພວກເຂົາ ແລະ ໝາຍຈຸດຕ່າງໆໃນແຜນທີ່ນັ້ນທີ່ມີ:

- ອຸບັດເຫດ ລບຕ ເກີດຂຶ້ນໃນຊ່ວງ 5 ປີທີ່ຜ່ານມາ, ແມ່ນໃຜແດ່ທີ່ເສຍຊີວິດ ຫຼື ບາດເຈັບ, ແລະ ເພດ, ອາຍຸ, ກຸ່ມຊົນເຜົ່າ ແລະ ລັກສະນະການບາດເຈັບຂອງພວກເຂົາ
- ການເກັບກູ້ ລບຕ ເກີດຂຶ້ນ
- ລບຕ ຍັງຄົກຄ້າງຢູ່
- ຈຸດໝາຍສຳຄັນອື່ນໆທີ່ກ່ຽວຂ້ອງ

ລຸ່ມນີ້ແມ່ນແຜນທີ່ທີ່ສ້າງຂຶ້ນໂດຍຜູ້ເຂົ້າຮ່ວມໃນ ບ້ານໂພນສະອາດ. ກິດຈະກຳນີ້ບໍ່ຈຳເປັນຕ້ອງອາໄສທັກສະດ້ານຄວາມຮູ້ໜັງສື.







**ກຸ່ມຜູ້ຊາຍໃນ ບ້ານໂພນສະອາດ**

**ກຸ່ມແມ່ຍິງໃນ ບ້ານໂພນສະອາດ**

ຜູ້ເຂົ້າຮ່ວມໄດ້ຖືກສອບຖາມຊຸດຄຳຖາມດັ່ງຕໍ່ໄປນີ້ ພາຍຫຼັງສຳເລັດການແຕ້ມແຜນທີ່ແລ້ວ: "ສຳລັບຂັ້ນຕອນການເກັບກູ້ລະເບີດ, ມີໃຜໃນຄອບຄົວຂອງທ່ານທີ່ເຂົ້າຮ່ວມກອງປະຊຸມວຽກງານເກັບກູ້ ລບຕ ໃນຂັ້ນຊຸມຊົນ ຫຼື ບໍ່? ແມ່ນໃຜ? ພວກເຂົາຮູ້ກ່ຽວກັບກອງປະຊຸມໄດ້ຄືແນວໃດ? ແມ່ນໃຜໃນຄອບຄົວຂອງທ່ານເປັນຜູ້ຕັດສິນໃຈວ່າຈະໃຫ້ໃຜເຂົ້າຮ່ວມ?"

ຈຸດປະສົງຂອງກິດຈະກຳເຫຼົ່ານີ້ແມ່ນເພື່ອໃຫ້ຮູ້ຂໍ້ມູນ ກ່ຽວກັບກິດຈະກຳທີ່ດຳເນີນເປັນປົກກະຕິ, ບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງປະຊາຊົນແຕ່ລະຄົນ ໂດຍແບ່ງຕາມກຸ່ມເພດ, ອາຍຸ, ກຸ່ມຊົນເຜົ່າ, ລະດັບການສຶກສາ ແລະ ລະດັບຂອງລາຍຮັບ. ການສົນທະນາແມ່ນແນໃສ່ໃຫ້ຮູ້ວ່າ ບົດບາດເຫຼົ່ານີ້ສົ່ງຜົນກະທົບຕໍ່ການມີສ່ວນຮ່ວມຂອງປະຊາຊົນໃນຊຸມຊົນ ເຂົ້າໃນຂະບວນການຕັດສິນໃຈຄືແນວໃດ, ການເຂົ້າຮ່ວມກອງປະຊຸມ ລວມໄປເຖິງຄວາມຮູ້ຂອງພວກເຂົາກ່ຽວກັບການລະບຸວັດຖຸທີ່ເປັນ ລບຕ, ຂັ້ນຕອນຕ່າງໆກ່ຽວກັບການເກັບກູ້ລະເບີດໃນທ້ອງຖິ່ນ ແລະ ການຕົກຄ້າງຂອງ ລບຕ, ແລະ ຄວາມເຂົ້າໃຈກ່ຽວກັບພຶດຕິກຳສ່ຽງຕ່າງໆ.

## ຜົນໄດ້ຮັບສະເພາະບ້ານ

### ບ້ານທອງແສນ

ແມ່ຍິງ

- ⇨ ແມ່ຍິງບາງຄົນພົບເຫັນ ລບຕ ໃນສວນມັນຕົ້ນຂອງພວກເຂົາ. ພວກເຂົາບໍ່ຮູ້ວ່າພື້ນທີ່ໃດເປັນພື້ນທີ່ເກັບກູ້ ລບຕ; ເຖິງຢ່າງໃດກໍ່ຕາມ, ພວກເຂົາກ່າວວ່າເຄີຍເຫັນອຳນາດການປົກຄອງ ໃຊ້ເຄື່ອງກວດສຽງ "ບິບບິບ" ໃນບາງພື້ນທີ່ໃນບ້ານຂອງພວກເຂົາ. ພວກເຂົາເວົ້າວ່າຖ້ານີ້ແມ່ນການເກັບກູ້ລະເບີດ, ສະແດງວ່າບາງພື້ນທີ່ມໃນເຂດບ້ານນີ້ ກໍ່ຕ້ອງໄດ້ຮັບການເກັບກູ້ແລ້ວ.
- ⇨ ແມ່ເຖົ້າເຜົ່າເມີຍກ່າວວ່າພວກເຂົາຕ້ອງໄດ້ເຄື່ອນຍ້າຍ ລບຕ, ທີ່ມັກຈະພົບເຫັນຢູ່ຕາມແຄມທາງ ຫຼາຍກວ່າຢູ່ໃນທົ່ງນາ.

ຜູ້ຊາຍ

- ⇨ ຜູ້ຊາຍມີຄວາມຕື່ນໂຕກ່ຽວກັບຄວາມສ່ຽງຈາກ ລບຕ ຫຼາຍກວ່າ ແລະ ມັກຈະພົບເຫັນ ລບຕ ຫຼາຍກວ່າ ຍ້ອນໜ້າທີ່ດັ້ງເດີມຂອງພວກເຂົາໃນການຂຸດດິນ ແລະ ລ່າສັດ.
- ⇨ ພວກເຂົາອະທິບາຍວ່າການເບິ່ງແຍງຜູ້ສູງອາຍຸ ແມ່ນໜ້າທີ່ຂອງຜູ້ຊາຍຕາມວັດທະນະທຳຂອງຊົນເຜົ່າມົ້ງ. ເພື່ອພໍ່ແມ່ຂອງພວກເຂົາເສຍຊີວິດ, ມີແຕ່ລູກຊາຍເທົ່ານັ້ນ ທີ່ໄດ້ຮັບອານຸຍາດໃຫ້ດູແລງານສົບ. ແມ່ຍິງເວົ້າວ່າເມຍ, ລູກສາວ ແລະ ລູກໃພ້ມີໜ້າທີ່ໃນການແຕ່ງກິນ ແລະ ຊ່ວຍວຽກທຳຄວາມສະອາເໃຫ້ແກ່ທຸກຄົນໃນຄອບຄົວ.

### ບ້ານໂພນສະອາດ

ແມ່ຍິງ

- ⇨ ແມ່ຍິງສ່ວນໃຫຍ່ບໍ່ເຄີຍໄດ້ເຂົ້າໂຮງຮຽນ. ມີແມ່ຍິງພຽງຄົນດຽວໄດ້ເຂົ້າຮ່ວມ EORE. ລາວກ່າວວ່າຜູ້ສູງອາຍຸ ແລະ ເດັກນ້ອຍຫຼາຍຄົນກໍ່ເຂົ້າຮ່ວມ ຍ້ອນພວກເຂົາໄດ້ຮັບແຈກເສື້ອຢືດ ແລະ ຂອງຂວັນບາງອັນ, ແລະ ຍ້ອນຜູ້ອຳນວຍຄວາມສະດວກກໍ່ເວົ້າພາສາຂ່ານຳອີກ.
- ⇨ ແມ່ຍິງສ່ວນໃຫຍ່ເວົ້າວ່າລາຍຮັບຂອງພວກເຂົາແມ່ນມາຈາກມັນຕົ້ນ ແລະ ເຂົ້າ.
- ⇨ ກຸ່ມແມ່ຍິງດັ່ງກ່າວບໍ່ມີຄວາມຮູ້ກ່ຽວກັບໃບຕາດິນ. ໜຶ່ງໃນອຳນາດການປົກຄອງເມືອງກ່າວວ່າ ການລົງທະບຽນໃບຕາດິນນັ້ນ ຍັງບໍ່ທັນໄດ້ຖືກນຳມາດຳເນີນການໃນພື້ນທີ່ນີ້.

ຜູ້ຊາຍ

- ⇨ ບໍ່ມີໃຜໃນກຸ່ມຜູ້ຊາຍ ຍົກເວັ້ນອຳນາດການປົກຄອງທີ່ກ່ຽວຂ້ອງ ໄດ້ເຂົ້າຮ່ວມການຝຶກອົບຮົມ EORE ມາກ່ອນ.
- ⇨ ຜູ້ຊາຍທຸກຄົນມີຄວາມໝັ້ນໃຈຫຼາຍກວ່າໃນການສ້າງແຜນທີ່ບ້ານ ແລະ ເຂົ້າຮ່ວມກອງປະຊຸມຂັ້ນບ້ານ (ສ່ວນໃຫຍ່ແມ່ນສະມາຊິກຂອງອຳນາດການປົກຄອງບ້ານ). ພວກເຂົາກ່າວວ່າພວກເຂົາເຄີຍພົບເຫັນ ລບຕ ໃນເນື້ອທີ່ດິນຂອງພວກເຂົາ, ແຕ່ຍັງບໍ່ທັນໄດ້ຮັບການເກັບກູ້ເທື່ອ.
- ⇨ ພວກເຂົາຍັງຄົ້ນພົບ ລບຕ ໃນກຸ່ມບເານ ແລະ ເຂດພູສູງຕ່າງໆ ບ່ອນທີ່ເດັກນ້ອຍຜູ້ຊາຍມັກໄປຫຼິ້ນ. ພວກເຂົາໄດ້ສົ່ງຄຳຮ້ອງຂໍໃຫ້ມີການເກັບກູ້ລະເບີດອອກຈາກພື້ນທີ່ນີ້ (ພວກເຂົາບໍ່ຈື່ວ່າສົ່ງໄປຍາມໃດ, ມີແຕ່ບອກວ່າດົນມາແລ້ວ).
- ⇨ ກຸ່ມດັ່ງກ່າວໄດ້ແຈ້ງວ່າບາງຄັ້ງພວກເຂົາກໍ່ສຳພັດກັບ ລບຕ ຍ້ອນຄິດວ່າມັນເກົ່າ ແລະ ຄືສິບໍ່ແຕກອີກແລ້ວ. ຢ່າງໜ້ອຍມີ 3 ຄົນທີ່ເຄີຍພົບເຫັນ, ສຳພັດ ແລະ ເຄື່ອນຍ້າຍ ລບຕ ໄປຍັງແຄມສວນ.
- ⇨ ຜູ້ຊາຍຈະເປັນຜູ້ຂັບລົດພາເມຍໄປຕະຫຼາດເພື່ອຂາຍມັນຕົ້ນ ຍ້ອນມີແຕ່ຜູ້ຊາຍເທົ່ານັ້ນທີ່ສາມາດຂັບລົດໄດ້. ກຸ່ມນີ້ກ່າວວ່າເມຍຂອງພວກເຂົາເປັນຜູ້ເກັບເງິນ ແລະ ຜົວເປັນຜູ້ຈ່າຍເງິນ.

### ບ້ານປຸ່ງໝັ້ນ

ແມ່ຍິງ

- ⇨ ແມ່ຍິງທຸກຄົນກ່າວວ່າພວກເຂົາໂຊກດີ ຍ້ອນດຽວນີ້ພວກເຂົາມີຈັກຊັກເຄື່ອງຢູ່ບ້ານແລ້ວ ຈຶ່ງເຮັດໃຫ້ໃຊ້ເວລາຊັກເຄື່ອງໜ້ອຍລົງ, ພ້ອມທັງຍັງມີລະບົບນ້ຳໃກ້ກັບເຮືອນຂອງພວກເຂົາ, ດັ່ງນັ້ນຈຶ່ງເຮັດໃຫ້ບໍ່ຈຳເປັນຕ້ອງເດີນທາງໄກເພື່ອໄປຕັກນ້ຳ.
- ⇨ ແມ່ຍິງໃນ ບ້ານປຸ່ງໝັ້ນ ມີຄວາມຮູ້ກ່ຽວກັບ ລບຕ ແລະ ພື້ນທີ່ເກັບກູ້ລະເບີດຫຼາຍກວ່າແມ່ຍິງໃນແຂວງບໍລິຄຳໄຊ. ພວກເຂົາຮູ້ສຶກວ່າວຽກງານທີ່ມີຄວາມສ່ຽງສູງຈາກ ລບຕ ສົ່ງຜົນກະທົບຕໍ່ຜົວ ແລະ ລູກຊາຍຂອງພວກເຂົາ ຍ້ອນສ່ວນໃຫຍ່ພວກເຂົາຕ້ອງເຂົ້າປ່າໄປຫາອາຫານ, ໄມ້ ແລະ ລ່າສັດ.
- ⇨ ແມ່ຍິງກວມເຄິ່ງໜຶ່ງລາຍງານວ່າໄດ້ເຂົ້າຮ່ວມ EORE, ແຕ່ທີມງານພາກສະໜາມໄດ້ຊີ້ໃຫ້ເຫັນວ່າ ແມ່ຍິງເຫຼົ່ານີ້ແຕ່ງດອງກັບອຳນາດການປົກຄອງຂັ້ນບ້ານ. ພວກເຂົາເວົ້າວ່າຫຼາຍຄົນມັກເຂົ້າຮ່ວມ EORE ຍ້ອນໄດ້ຮຽນຮູ້ ແລະ ໄດ້ມ່ວນຊື່ນກັບການຟ້ອນລຳພື້ນເມືອງ (ລຳວົງລາວ).
- ⇨ ກຸ່ມແມ່ຍິງດັ່ງກ່າວເວົ້າວ່າພວກເຂົາເຄີຍເຄື່ອນຍ້າຍ ລບຕ ອອກຈາກເນື້ອທີ່ດິນຂອງພວກເຂົາໄປຍັງລຳນ້ຳ ແລະ ຍັງຄົງສືບຕໍ່ເຄື່ອນຍ້າຍ ລບຕ ຢູ່ຍ້ອນພວກເຂົາຕ້ອງດຳເນີນການປູກຝັງເທິງເນື້ອທີ່ດິນ. ພວກເຂົາເວົ້າວ່າຫຼາຍຄົນກໍ່ເຮັດແບບດຽວກັນດັ່ງນັ້ນ ລບຕ ສ່ວນໃຫຍ່ຈຶ່ງຖືກນຳໄປປະໄວ້ຕາມລຳນ້ຳ ແຕ່ຍັງບໍ່ໄດ້ຮັບການເກັບກູ້ເທື່ອ.

ຜູ້ຊາຍ

- ⇨ ກຸ່ມຜູ້ຊາຍເຂົ້າໃຈເຖິງຂັ້ນຕອນໃນການຮ້ອງຂໍການເກັບກູ້ລະເບີດແລ້ວ, ແຕ່ສ່ວນໃຫຍ່ກຸ່ມທ້ອງຖິ່ນດັ່ງກ່າວ ມັກປະກອບມີສະມາຊິກຈາກອຳນາດການປົກຄອງຂັ້ນບ້ານ. ຜູ້ຊາຍຫຼາຍຄົນເວົ້າວ່າຍ້ອນຂັ້ນຕອນການເກັບກູ້ ລບຕ ທາງການຕ້ອງໄດ້ອາໄສເວລາ ຈຶ່ງເຮັດໃຫ້ພວກເຂົາເຄື່ອນຍ້າຍ ລບຕ ດ້ວຍຕົນເອງແທນ ເພື່ອຈຸດປະສົງໃນການປູກຝັງ.
- ⇨ ກຸ່ມຜູ້ຊາຍເວົ້າວ່າພວກເຂົາບໍ່ມັກຈະແບ່ງປັນຂໍ້ມູນກ່ຽວກັບ EORE ກັບຄອບຄົວຂອງພວກເຂົາພາຍຫຼັງທີ່ເຂົ້າຮ່ວມການສຶກສາອົບຮົມດັ່ງກ່າວແລ້ວ. ພວກເຂົາມັກຈະແບ່ງປັນຂໍ້ມູນກັບໝູ່ ແລະ ເພື່ອນບ້ານໃນເວລາທີ່ນັ່ງລົມກັນເປັນກຸ່ມໃນຕອນແລງ ແລະ ກິນດື່ມນຳກັນ. ຜູ້ຊາຍຄົນໜຶ່ງທີ່ອາຍຸນ້ອຍທີ່ສຸດໃນກຸ່ມເວົ້າວ່າລາວບໍ່ເຄີຍເກັບ ລບຕ ມາກ່ອນ ແລະ ບອກວ່າຜູ້ທີ່ອາຍຸສູງກວ່າຕົນນັ້ນມີຄວາມຮູ້ກ່ຽວກັບ ລບຕ ຫຼາຍກວ່າ.
- ⇨ ຜູ້ຊາຍກ່າວວ່າພວກເຂົາຈະເຂົ້າຮ່ວມກອງປະຊຸມເປັນສ່ວນໃຫຍ່; ເຖິງຢ່າງໃດກໍ່ຕາມ, ກຸ່ມແມ່ຍິງກໍ່ບອກວ່າມີແມ່ຍິງເຂົ້າຮ່ວມຫຼາຍກວ່າ ຍ້ອນບ່ອນເຮັດສວນຂອງພວກເຂົາແມ່ນຢູ່ໃກ້ກັບບ້ານຫຼາຍກວ່າ ແລະ ວຽກກໍ່ເບົາກວ່າ, ເຮັດໃຫ້ສາມາດເຂົ້າຮ່ວມກອງປະຊຸມຕ່າງໆໃນເຂດບ້ານໄດ້ງ່າຍກວ່າ.

### ບ້ານປືວ

ແມ່ຍິງ

- ⇨ ກຸ່ມແມ່ຍິງມີຄວາມຮູ້ທີ່ດີກ່ຽວກັບຈຸດເກັບກູ້ ແລະ ຈຸດທີ່ມີ ລບຕ ຕົກຄ້າງຢູ່ໃນເຂດບ້ານຂອງພວກເຂົາ ແລະ ມີຄວາມຫ້າວຫັນໃນການແຕ້ມແຜນທີ່ບ້ານ. ແມ່ຍິງກ່າວວ່າພວກເຂົາຍັງພົບເຫັນ ລບຕ ຈຳນວນຫຼາຍຢູ່ອ້ອມແອ້ມບ້ານຂອງພວກເຂົາ, ໃກ້ກັບເຮືອນຂອງປະຊາຊົນ, ໃນເຂດດົງສວນ ແລະ ໃກ້ກັບເຂດພູສູງ.
- ⇨ ແມ່ຍິງຫຼາຍຄົນໄດ້ເຂົ້າຮ່ວມ EORE ຍ້ອນມັນຖືກຈັດຂຶ້ນໃນຕອນແລງ ຫຼັງຈາກທີ່ປະຊາຊົນກັບມາແຕ່ສວນແລ້ວ.
- ⇨ ແມ່ຍິງເຮັດວຽກຫຼາຍກວ່າຜົວຂອງພວກເຂົາ, ແຕ່ກໍ່ຍັງຕ້ອງໄດ້ຊ່ວຍຜົວໃນການດ້ອນງົວກັບບ້ານໃນຕອນແລງອີກ. ຜົວມັກຈະອອກໄປຮ່ວມກອງປະຊຸມ ແລະ ເຮັດວຽກຢູ່ນອກເຂດບ້ານ, ບາງຄັ້ງກໍ່ອອກໄປເມືອງອື່ນ ຫຼື ໄປຢ້ຽມຢາມພີ່ນ້ອງ ແລະ ໝູ່ເພື່ອນ.

ຜູ້ຊາຍ

- ⇨ ຜູ້ຊາຍເວົ້າວ່າແມ່ຍິງທຸກຄົນໃນຄອບຄົວລ້ວນແລ້ວແຕ່ເຮັດວຽກ: ແມ່ຕູ້, ແມ່, ເມຍ ແລະ ລູກສາວ. ຜູ້ຊາຍອາຍຸສູງໃນຄອບຄົວ ຈະເປັນຜູ້ເບິ່ງແຍງຫຼານ ແລະ ບາງຄົນກໍ່ພາລູກໄປໂຮງຮຽນ.
- ⇨ ຜູ້ຊາຍພິການຄົນໜຶ່ງໄດ້ສອບຖາມທີມງານພາກສະໜາມວ່າ ກໍລະນີຂອງລາວນັ້ນຈະໄດ້ຮັບການສະໜັບສະໜູນດ້ານເງິນທຶນ ຫຼື ບໍ່. ລາວບໍ່ມີຄວາມຮູ້ກ່ຽວກັບການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍເລີຍ.
- ⇨ ກຸ່ມຜູ້ຊາຍເວົ້າວ່າບົດຝຶກຫັດການສ້າງແຜນທີ່ ລບຕ ນັ້ນແມ່ນມີຄວາມສຳຄັນ ແລະ ໜ້າສົນໃຈສຳລັບພວກເຂົາເພື່ອໂອ້ລົມ ແລະ ແບ່ງປັນຄວາມຮູ້ກ່ຽວກັບ ລບຕ. ພວກເຂົາໄດ້ແນະນຳວ່າ EORE ຈະຕ້ອງຕື່ມກິດຈະກຳນີ້ເຂົ້າໃນຫຼັກສູດການຝຶກອົບຮົມຂອງຕົນ ຍ້ອນຜູ້ອາວຸໂສສ່ວນໃຫຍ່ຮູ້ວ່າມີພື້ນທີ່ສ່ຽງຢູ່ໃສແດ່ໃນເຂດບ້ານຂອງພວກເຂົາ ແລະ ຕ້ອງແບ່ງປັນຂໍ້ມູນຂ່າວສານນີ້ກັບໄວໜຸ່ມຊາຍ ແລະ ເດັກຊາຍຄົນອື່ນໆໃນບ້ານ.

### ຂໍ້ແນະນຳທີ 18

- ⇨ ລວມເອົາກິດຈະກຳການສ້າງແຜນທີ່ ລບຕ ແບບມີສ່ວນຮ່ວມເຂົ້າໃນວຽກງານ EORE ໃຫ້ແກ່ຜູ້ຊາຍ ແລະ ຜູ້ຍິງໃນກຸ່ມອາຍຸທີ່ແຕກຕ່າງກັນ. ແຜນທີ່ເຫຼົ່ານີ້ຈະຕ້ອງຖືກນຳສະເໜີພ້ອມດ້ວຍການປຶກສາຫາລືກ່ຽວກັບ ຄວາມແຕກຕ່າງລະຫວ່າງຄວາມຮູ້ຂອງຜູ້ຊາຍ ແລະ ຂອງແມ່ຍິງ ແລະ ຄວາມສຳຄັນຂອງການໄດ້ຮັບຂໍ້ມູນ ແລະ ມຸມມອງຈາກທຸກຄອບຄົວ ແລະ ສະມາຊິກໃນຊຸມຊົນ. ເພື່ອຮັບປະກັນການມີສ່ວນຮ່ວມ, ຊຸດຝຶກອົບຮົມຈະຕ້ອງຖືກຈັດຂຶ້ນໃນຕອນຄ້າຍແລງ ໃນເວລາທີ່ສະມາຊິກທຸກຄົນໃນຄອບຄົວ ກັບມາແຕ່ວຽກໄຮ່ວຽກນາແລ້ວ. ຊຸດຝຶກອົບຮົມຈະຕ້ອງຖືກດຳເນີນການເປັນພາສາທ້ອງຖິ່ນ (ລວມທັງພາສາໃນແຜ່ນປ້າຍໂຄສະນາ) ແລະ ໃຫ້ນຳໃຊ້ຮູບພາບສຳລັບຜູ້ທີ່ບໍ່ຮູ້ໜັງສື.

## 5.10 ການສຳພາດຄົວເຮືອນ

ໄດ້ມີການດຳເນີນການສຳພາດຄົວເຮືອນ 7 ຄັ້ງດັ່ງນີ້:

- ຜົວ ແລະ ເມຍ 6 ຄົນ
- ແມ່ໝ້າຍເຜົ່າຂະມຸ 1 ຄົນ ແລະ ລູກສາວຂອງລາວ
- ປະຊາຊົນຈາກ 4 ກຸ່ມຊົນເຜົ່າ (ລາວລຸ່ມ, ມົ້ງ, ຂະມຸ ແລະ ເມີຍ)
- ສຳພາດ 1 ຄັ້ງກັບຜູ້ຊາຍທີ່ພິການຈາກອຸບັດເຫດ ລບຕ 1 ຄົນຢູ່ ບ້ານປືວ
- ຄົວເຮືອນ 1 ຫຼັງຢູ່ ບ້ານທອງແສນ ພ້ອມຜູ້ຊາຍທີ່ພິການຈາກອຸບັດເຫດ ລບຕ 1 ຄົນ ແລະ ເມຍຂອງລາວ, ແລະ ຄົວເຮືອນ 1 ຫຼັງຢູ່ ບ້ານໂພນສະອາດ ບ່ອນທີ່ພໍ່ຕູ້ຜູ້ 1 ເສຍອົງຄະຈາກອຸບັດເຫດ ລບຕ ແລະ ເມຍຂອງລາວ.

ການສຳພາດມີຂຶ້ນທີ່ບ້ານຂອງຜູ້ຖືກສຳພາດເອງ ລະຫວ່າງເວລາ 1-5 ໂມງແລງ, ໂດຍການສຳພາດແຕ່ລະຄັ້ງນັ້ນແມ່ນໃຊ້ເວລາ 1.5-2 ຊົ່ວໂມງ. ປະຕິບັດການພາກສະໜາມໄດ້ຮຽກຮ້ອງໃຫ້ຕ້ອງດຳເນີນການສຳພາດຄົວເຮືອນຢ່າງໜ້ອຍ 4 ຄັ້ງຕໍ່ແຂວງ ຫຼື 2 ຄັ້ງຕໍ່ບ້ານ. ຂໍ້ກຳນົດນີ້ແມ່ນຖືກປະຕິບັດຕາມຍົກເວັ້ນກໍລະນີຂອງ ບ້ານປືວ.[2] ທີມງານດັ່ງກ່າວສາມາດພົບປະກັບປະຊາຊົນໃນກຸ່ມອາຍຸ ແລະ ກຸ່ມຊົນເຜົ່າທີ່ຫຼາກຫຼາຍ, ໃນນັ້ນມີ 3 ຄົວເຮືອນທີ່ມີຜູ້ຊາຍປະສົບອຸບັດເຫດ ລບຕ ແລະ ແມ່ໝ້າຍຄົນ 1 ທີ່ຜົວຂອງລາວເສຍຊີວິດຈາກອຸບັດເຫດ ລບຕ. ນອກຈາກແມ່ໝ້າຍ ແລະ ຜູ້ພິການຊາຍ 1 ຄົນໃນ ບ້ານປືວ ແລ້ວນັ້ນ, ທຸກການສຳພາດລ້ວນແລ້ວແຕ່ມີທັງຜົວ ແລະ ເມຍມາຮ່ວມນຳ. ທີມງານດັ່ງກ່າວໄດ້ວາງແຜນສຳພາດກຸ່ມຜົວ ແລະ ກຸ່ມເມຍແຍກຈາກກັນ; ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ບໍ່ສາມາດປະຕິບັດຈິງໄດ້ຍ້ອນຂາດຜູ້ແປພາສາ. ບັນຫານີ້ສົ່ງຜົນກະທົບຕໍ່ຂໍ້ມູນທີ່ຈະໄດ້ຮັບຈາກກຸ່ມເມຍ, ແຕ່ບໍ່ແມ່ນກຸ່ມຜົວ; ເຖິງຢ່າງໃດກໍ່ຕາມ, ທີມງານກໍ່ໄດ້ຖາມກຸ່ມເມຍດ້ວຍຊຸດຄຳຖາມອັນສະເພາະ.

ຊຸດຄຳຖາມຕ່າງໆກວມເອົາຄວາມຮູ້ກ່ຽວກັບການລະບຸ ລບຕ ແລະ ວຽກງານ EORE; ປະສົບການສ່ວນໂຕກ່ຽວກັບ ລບຕ; ພື້ນທີ່ທີ່ໄດ້ຮັບການເກັບກູ້ລະເບີດ ແລະ ຈຳນວນ ແລະ ປະເພດຂອງ ລບຕ ທີ່ຄົ້ນພົບ; ການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບກອງປະຊຸມຂັ້ນຊຸມຊົນ; ແລະ ການແຈ້ງການກ່ຽວກັບຂັ້ນຕອນການເກັບກູ້ລະເບີດຂອງທີມງານ. ຜູ້ທີ່ພິການຈາກອຸບັດເຫດ ລບຕ ໄດ້ຖືກສອບຖາມເຖິງຄວາມຮູ້ຂອງພວກເຂົາກ່ຽວກັບຂັ້ນຕອນການສະໜັບສະໜູນຈາກ NRA ແລະ ຜູ້ໃຫ້ການຊ່ວຍເຫຼືອດ້ານສຸຂະພາບຕໍ່ຜູ້ປະສົບເຄາະຮ້າຍ (ລວມທັງການສະໜັບສະໜູນດ້ານຈິດໃຈ), ຜົນກະທົບຕໍ່ລາຍຮັບຂອງຄອບຄົວ ແລະ ປະລິມານວຽກຂອງສະມາຊິກຄົນອື່ນໆໃນຄອບຄົວ, ແລະ ປະເພດຂອງການຈຳແນກທີ່ພວກເຂົາຕ້ອງປະເຊີນ.

### ຜົນໄດ້ຮັບຂອງການສຳພາດຄົວເຮືອນ

#### ຄົວເຮືອນ 1 ໃນ ບ້ານທອງແສນ: ຄູ່ຜົວເມຍຄົນລາວລຸ່ມ-ເຜົ່າເມີຍ, ອາຍຸ 43 ແລະ 44, ທັງສອງເຂົ້າໂຮງຮຽນຮອດຊັ້ນ ປ. 5, ລາຍຮັບມາຈາກການປູກມັນຕົ້ນ ແລະ ເຂົ້າ

- ⇨ ຜູ້ເປັນຜົວແມ່ນຄົນດຽວໃນເຂດບ້ານນີ້ ທີ່ເຄີຍປະສົບອຸບັດເຫດຈາກ ລບຕ ມາກ່ອນ, ໂດຍທີ່ຍັງຄົງມີສະເກັດລະເບີດຫຼາຍອັນຝັງຢູ່ໃນໂຕຂອງລາວ. ໃນຕອນທີ່ເກີດອຸບັດເຫດເມື່ອ 35 ປີກ່ອນ, ບໍ່ມີໃຜມາຊ່ວຍ, ມີແຕ່ພໍ່ແມ່ ແລະ ຄອບຄົວເທົ່ານັ້ນ. ມີພະຍາບານຄົນໜຶ່ງ ທີ່ເຮັດວຽກຢູ່ບໍລິສັດປູກຖົ່ວດິນຂອງ ທວຽດນາມ ໃນບໍລິເວນໃກ້ຄຽງ ເປັນຜູ້ປະຖົມພະຍາບານໃຫ້ແກ່ລາວຢູ່ບ້ານຂອງລາວເອງ.

- ລາວບໍ່ໄດ້ຮັບການຊ່ວຍເຫຼືອ ຫຼື ການສະໜັບສະໜຸນຫຍັງເລີຍນັບຕັ້ງແຕ່ປີ 1995 ເປັນຕົ້ນມາ. ປະຊາຊົນໄດ້ມາຖາມຄຳຖາມຕ່າງໆ, ທີ່ລວມມີຄຳຖາມທີ່ວ່າ ຍ້ອນຫຍັງອົງການຈັດຕັ້ງທີ່ເຄີຍບອກວ່າຈະຊ່ວຍ, ແຕ່ພັດບໍ່ໃຫ້ການຊ່ວຍເຫຼືອຫຍັງເລີຍ.
- ລາວໄດ້ພົບກັບທີມ EORE ຂອງ ກອງຮ້ອຍ 58 ໃນປີ 2022. ນີ້ແມ່ນຄັ້ງທຳອິດທີ່ລາວໄດ້ຍິນກ່ຽວກັບແບບຟອມການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ລາວໄດ້ຕື່ມແບບຟອມດັ່ງກ່າວໃນຊ່ວງເດືອນພະຈິກທີ່ຜ່ານມາ ແຕ່ພັດບໍ່ໄດ້ຍື່ນແບບຟອມນັ້ນ ເພາະຮູ້ສຶກວ່າຍື່ນໄປກໍ່ຄືຈະບໍ່ມີຫຍັງເກີດຂຶ້ນ.
- ສະເກັດລະເບີດທີ່ຝັງຢູ່ໃນຮ່າງກາຍຂອງລາວມັກຈະກໍ່ໃຫ້ເກີດຄວາມເຈັບປວດ ແລະ ລາວກໍ່ບໍ່ສາມາດຍົກຂອງໜັກໄດ້. ລາວຈຶ່ງຮູ້ສຶກເສົ້າ ແລະ ໃຈຮ້າຍ ແລະ "ກາຍມາເປັນຄົນຊຶມ." ເມຍຂອງລາວເວົ້າວ່າເມື່ອລາວໃຈຮ້າຍ, ລາວກໍ່ຈະກາຍມາເປັນ "ຄົນທີ່ໜ້າລັງກຽດ." ລາວບໍ່ຮູ້ວ່າມີການສະໜອງການຊ່ວຍເຫຼືອທາງດ້ານຈິດໃຈໃຫ້.

**ຄົວເຮືອນທີ 2 ໃນ ບ້ານທອງແສນ: ຄູ່ຜົວເມຍຊົນເຜົ່າເມີຍ ແລະ ເຜົ່າແທ່ນ, ອາຍຸ 62 ແລະ 67, ຜົວບໍ່ຮູ້ໜັງສື, ເມຍໄດ້ຮັບການສຶກສາຊັ້ນປະຖົມ, ລາຍຮັບມາຈາກການປູກມັນຕົ້ນ, ເຂົ້າ ແລະ ຖົ່ວດິນ ແລະ ຮ້ານຄ້າປະຈຳບ້ານ (ບໍລິຫານໂດຍແມ່ຍິງ)**

- ຜູ້ເປັນຜົວກ່າວວ່າ ລາວບໍ່ຮູ້ວ່າເນື້ອທີ່ດິນຂອງລາວ ໄດ້ຖືກຮັບເລືອກໃຫ້ມີການເກັບກູ້ລະເບີດຈົນ ກອງຮ້ອຍ 58 ມາຮອດ, ດັ່ງນັ້ນລາວຈຶ່ງໄດ້ຂຶ້ນແຜນປູກມັນຕົ້ນໄວ້ກ່ອນແລ້ວ. ລາວລາຍງານວ່າການສຳຫຼວດທີ່ທີມງານມາດຳເນີນການນັ້ນ ມີຄວາມເລິກພຽງແຕ່ 10 ຊມ ແລະ ເຊື່ອວ່າຍັງຄົງມີ ລບຕ ຫຼາຍກວ່ານີ້ອີກທີ່ຍັງຝັງຢູ່ເລິກກວ່ານັ້ນ. ໄດ້ມີການຄົ້ນພົບ ລບຕ ທຸກມື້ໃນລະຫວ່າງທີ່ພວກເຂົາດຳເນີນການເກັບກູ້, ແຕ່ລາວພັດບໍ່ໄດ້ຖືກຮັບແຈ້ງກ່ຽວກັບຈຳນວນ ແລະ ປະເພດຂອງ ລບຕ ທີ່ຖືກຄົ້ນພົບ.
- ທັງຜົວ ແລະ ເມຍຕ່າງກໍ່ບໍ່ເຄີຍໄດ້ຍິນກ່ຽວກັບວຽກງານ EORE ມາກ່ອນ, ແຕ່ທັງສອງຕ້ອງການຢາກເຂົ້າຮ່ວມ.
- ພວກເຂົາມີທີ່ດິນ 7 ຕອນ: 4 ຕອນແມ່ນຂຶ້ນຊື່ຂອງພວກເຂົາ. ອີກ 3 ຕອນແມ່ນຂຶ້ນຊື່ລູກຊາຍຂອງພວກເຂົາ; ລູກຊາຍດຽວນີ້ອາໄສຢູ່ນຳພວກເຂົາ.
- ຜູ້ເປັນເມຍໄດ້ອະທິບາຍວ່າ ແມ່ຍິງໃນເຂດບ້ານນັ້ນມີຄວາມຫ້າວຫັນໃນການສ້າງລາຍຮັບ, ຜ່ານການຕ່ຳສິ້ນ ແລະ ປູກມັນຕົ້ນ. ແມ່ຍິງ ແລະ ຜູ້ຊາຍໄປເຮັດວຽກຢູ່ສວນພ້ອມກັນ. ຜູ້ຊາຍສ່ວນໃຫຍ່ສູບຢາໃນຂະນະທີ່ແມ່ຍິງເຮັດວຽກ.
- ຜູ້ເປັນຜົວເວົ້າວ່າເນື່ອງຈາກວັດທະນະທຳຂອງຊົນເຜົ່າເມີຍ, ທັງລາວ ແລະ ເມຍຂອງລາວຈຶ່ງປຶກສາຫາລື ແລະ ຕັດສິນໃຈກ່ຽວກັບບັນຫາເສດຖະກິດຮ່ວມກັນ. ລາວກ່າວວ່າສິ່ງນີ້ບໍ່ມີທາງເກີດຂຶ້ນກັບຊົນເຜົ່າມົ້ງ ຍ້ອນຜົວຢາກໃຫ້ເມຍເຮັດວຽກຢູ່ສວນ ແລະ ເຝົ້າເຮືອນ, ບໍ່ຢາກໃຫ້ເມຍອອກໄປເຮັດວຽກນອກບ້ານ.

**ຄົວເຮືອນທີ 3 ໃນ ບ້ານໂພນສະອາດ: ຄູ່ຜົວເມຍຊົນເຜົ່າຂະມຸ, ອາຍຸ 33 ແລະ 34, ເມຍບໍ່ໄດ້ຮັບການສຶກສາ, ຜົວເຂົ້າໂຮງຮຽນຈົນຮອດ ປ. 4, ລາຍຮັບມາຈາກມັນຕົ້ນ**

- ຜູ້ເປັນຜົວເຄີຍເອົາຊິ້ນສ່ວນ ລບຕ ກັບມາສບ້ານໂດຍຄິດວ່າມັນແມ່ນເສດໂລຫະ ແລະ ເກັບໄວ້ຢູ່ກ້ອງເຮືອນ. ຫຼັງເກີດອຸບັດເຫດຢູ່ເຂດໃກ້ຄຽງ, ບ່ອນທີ່ມີຜູ້ຊາຍຄົນໜຶ່ງເສຍຊີວິດຈາກ ລບຕ ໂດຍຄິດວ່າມັນແມ່ນເສດໂລຫະ, ຜູ້ເປັນຜົວຄົນດັ່ງກ່າວຈຶ່ງໄດ້ພົວພັນກັບອຳນາດການປົກຄອງ. ລບຕ ດັ່ງກ່າວໃນສອງສາມມື້ຕໍ່ມາກໍ່ໄດ້ຮັບການເກັບກູ້, ແຕ່ອຳນາດການປົກຄອງດັ່ງກ່າວ ພັດບໍ່ຂໍກວດສອບເນື້ອທີ່ດິນບ່ອນທີ່ຄົ້ນພົບ ລບຕ ນີ້.
- ໃນລະຫວ່າງມື້ທີ່ມີການລາຍງານ ແລະ ການເກັບກູ້ນັ້ນ, ບໍ່ໄດ້ມີການໝາຍຈຸດ ຫຼື ຕັ້ງປ້າຍເຕືອນໃດໆເລີຍ ໃນເຂດອ້ອມແອ້ມພື້ນທີ່ກ້ອງເຮືອນນັ້ນ. ຜູ້ເປັນເມຍບອກວ່າລາວຮູ້ສຶກຢ້ານທຸກຄືນ ຍ້ອນລາວບໍ່ຮູ້ວ່າມີ ລບຕ ຢູ່ຫັ້ນ, ບ່ອນທີ່ລູກ ແລະ ຄວາຍຂອງລາວຍ່າງໄປມາຢູ່ຕະຫຼອດ.
- ທີມງານພາກສະໜາມໄດ້ສອບຖາມຜູ້ເປັນເມຍວ່າ ລາວຈະເຮັດແນວໃດຖ້າໜຶ່ງໃນລູກຂອງລາວບາດເຈັບ. ລາວບອກວ່າລາວຈະພາພວກເຂົາໄປສຸກສາລາທີ່ຢູ່ໃກ້ກັບບ້ານຂອງພວກເຂົາ. ລາວຈະໃຫ້ຜົວຂອງລາວຂັບລົດຈັກພາໄປ, ແຕ່ຖ້າຜົວຂອງລາວຍັງຄາເຮັດວຽກຢູ່ສວນ, ລາວກໍ່ຈະຂໍໃຫ້ພີ່ນ້ອງ ຫຼື ໃຜບາງຄົນທີ່ມທີລົດພາໄປແທນ (ໃນເຂດບ້ານນີ້ມີລົດຢູ່ 4 ຫຼື 5 ຄັນ).
- ທັງສອງຄົນບໍ່ຮູ້ເລີຍວ່າຕ້ອງໄດ້ລາຍງານອຸບັດເຫດ ລບຕ ຫຼື ມີການຊ່ວຍເຫຼືອຄ່າປິ່ນປົວໃຫ້. ພວກເຂົາບໍ່ຮູ້ກ່ຽວກັບສາຍດ່ວນ.
- ຜູ້ເປັນຜົວເຊື່ອວ່າຍັງຄົງມີ ລບຕ ຕົກຄ້າງ ຢູ່ໃນເນື້ອທີ່ດິນບ່ອນທີ່ລາວເຮັດກະສິກຳຢູ່. ລາວໄດ້ລາຍງານໃຫ້ອຳນາດການປົກຄອງບ້ານຊາບໃນປີ 2019, ແຕ່ພວກເຂົາກໍ່ບໍ່ໄດ້ຕື່ມແບບຟອມອີ່ຫຍັງເລີຍ. ພວກເຂົາບໍ່ຮູ້ຈັກກ່ຽວກັບແບບຟອມກ່ອນການສຳພາດ ແລະ ຕອນນີ້ກໍ່ສົງໄສວ່າຈະຍື່ນແບບຟອມໄດ້ ຫຼື ບໍ່ເພາະພວກເຂົາບໍ່ມີໃບຕາດິນ. ອຳນາດການປົກຄອງເມືອງຍັງບໍ່ທັນໄດ້ມາສະໜອງໃບຕາດິນໃຫ້ເທື່ອ.
- ຫຼັງເກີດອຸບັດເຫດຈາກເສດໂລຫະ, ຜູ້ເປັນຜົວກໍ່ໄດ້ເຂົ້າຮ່ວມວຽກງານ EORE ທີ່ຖືກຈັດຂຶ້ນໂດຍຜູ້ຊາຍຄົນໜຶ່ງ ທີ່ໄດ້ຮັບການຝຶກອົບຮົມຢູ່ນະຄອນຫຼວງວຽງຈັນ. ລາວໄດ້ຍິນປະກາດຜ່ານໂທລະໂຄ່ງຈາກ ກອງຮ້ອຍ 58 ເປັນພາສາລາວ. ທັງຜົວ ແລະ ເມຍກ່າວວ່າແຜ່ນປ້າຍໂຄສະນາຄວນຈະມີພາສາຊົນເຜົ່ານຳ ແລະ ບາງອັນກໍ່ຄວນມີແຕ່ຮູບພາບເທົ່ານັ້ນ (ຍ້ອນຜູ້ເປັນເມຍບໍ່ຮູ້ໜັງສື).

**ຄົວເຮືອນທີ 4 ໃນ ບ້ານໂພນສະອາດ: ແມ່ ແລະ ລູກສາວຊົນເຜົ່າຂ່າ-ຂະມຸ, ອາຍຸ 40 ແລະ 18 ປີ, ແມ່ບໍ່ຮູ້ໜັງສື, ລູກສາວມີລະດັບການສຶກສາຊັ້ນມັດທະຍົມຕົ້ນ, ລາຍຮັບມາຈາກມັນຕົ້ນ**

- ຜູ້ເປັນແມ່ເປັນໝ້າຍໃນປີ 2019 ຫຼັງຈາກທີ່ຜົວຂອງລາວເຄື່ອນຍ້າຍ 'ເສດໂລຫະ' ທີ່ເກັບມານັ້ນອອກຈາກເນື້ອທີ່ດິນປູກຝັງຂອງອ້າຍຂອງລາວ. ລາວໄດ້ເກັບມາປະໄວ້ຢູ່ກ້ອງເຮືອນໂດຍບໍ່ແຈ້ງໃຫ້ເມຍຊາບ.
- ດ້ວຍການສະໜັບສະໜຸນຈາກ ອົງການການສຶກສາໂລກ, NRA ໄດ້ສະໜອງທຶນ 6 ລ້ານກີບໃຫ້ແກ່ບ້ານດັ່ງກ່າວ ແລະ ອຳນາດການປົກຄອງບ້ານກໍ່ໄດ້ມອບເງິນຈຳນວນ 200,000 ກີບເພື່ອຊ່ວຍງານສົບ.
- ຕໍ່ມາຜູ້ເປັນແມ່ຈຶ່ງໄດ້ລາຍງານ ລບຕ ສອງອັນທີ່ລາວພົບໃນສວນມັນຕົ້ນຂອງລາວ ໃຫ້ອຳນາດການປົກຄອງທີ່ກ່ຽວຂ້ອງຊາບ. ລບຕ ເຫຼົ່ານີ້ຕໍ່ມາກໍ່ໄດ້ຖືກເກັບກູ້, ແຕ່ລາວເຊື່ອວ່າຍັງມີອີກຫຼາຍລູກຕົກຄ້າງຢູ່ໃນເນື້ອທີ່ດິນຂອງລາວ. ລາວບໍ່ຮູ້ວ່າຈະຍັງຄົງມີການສືບຕໍ່ເກັບກູ້ຢູ່ອີກບໍ່, ໂດຍເວົ້າວ່າ "ຖ້າເບິ່ງວ່າພວກເຂົາຈະກັບມາບໍ່." ລາວຄິດວ່າທີ່ພວກເຂົາບໍ່ໄດ້ເກັບກູ້ເນື້ອທີ່ດິນຕື່ມອີກໃນຕອນນັ້ນ ແມ່ນຍ້ອນມັນຕົ້ນທີ່ລາວກຳລັງປູກຢູ່, ດັ່ງນັ້ນພວກເຂົາຈຶ່ງບໍ່ສາມາດເກັບກູ້ເນື້ອທີ່ດິນດັ່ງກ່າວໄດ້ຈົນກວ່າມັນຕົ້ນຈະໄດ້ຮັບການເກັບກ່ຽວໝົດແລ້ວ.
- ນອກຈາກມັນຕົ້ນແລ້ວ, ລາວກໍ່ບໍ່ຮູ້ວິທີໃນການຫາເງິນແບບອື່ນອີກ; ລູກຂອງລາວຍັງນ້ອຍຢູ່. ລາວຍັງຄົງຕ້ອງໄດ້ສືບຕໍ່ປູກມັນຕົ້ນເຖິງຈະຮູ້ແລ້ວວ່າຍັງຄົງມີ ລບຕ ຕົກຄ້າງອີກຢູ່.
- ໃນຕອນທີ່ຜູ້ເປັນພໍ່ເສຍຊີວິດ, ລູກສາວໄດ້ອອກຈາກໂຮງຮຽນ ເພື່ອມາຊ່ວຍແມ່ປູກມັນຕົ້ນ; ບໍ່ດັ່ງນັ້ນພວກເຂົາກໍ່ຈະບໍ່ມີເງິນລ້ຽງຊີບ.
- ບໍ່ມີໃຜໃນຄອບຄົວເຄີຍເຂົ້າຮ່ວມວຽກງານ EORE ແລະ ບໍ່ເຄີຍໄດ້ຍິນກ່ຽວກັບວຽກງານນີ້ມາກ່ອນ.

**ຄົວເຮືອນທີ 5 ໃນ ບ້ານປຸ່ງໝັ້ນ: ຄູ່ຜົວເມຍຊົນເຜົ່າລາວພວນ, ອາຍຸ 84 ແລະ 63, ບໍ່ເຄີຍເຂົ້າໂຮງຮຽນ, ລາຍຮັບມາຈາກການລ້ຽງສັດນ້ອຍ; ລູກຊາຍ ແລະ ລູກໃພ້ມີນາເຂົ້າ ແລະ ຂາຍເຂົ້າທີ່ເກັບກ່ຽວໄດ້ຈົນໝົດໂດຍບໍ່ເຫຼືອໄວ້ກິນເອງເລີຍ, ລູກໃພ້ສ້າງລາຍຮັບຈາກການຕ່ຳຫູກ**



- ຜູ້ເປັນຜົວໄດ້ຮັບບາດເຈັບຈາກ ລບຕ ໃນປີ 1978 ໃນຂະນະທີ່ດຳເນີນການປູກຝັງຢູ່. ສະເກັດ ລຍຕ ຍັງຄົງຝັງຢູ່ໃນມື ແລະ ທ້ອງຂອງລາວ ແລະ ຈະເກີດຄວາມເຈັບປວດເມື່ອອາກາດປ່ຽນ. (ໝາຍເຫດ: ອຳນາດການປົກຄອງບ້ານ ບໍ່ໄດ້ບອກໃຫ້ທີມງານຊາບກ່ຽວກັບຜູ້ລອດຊີວິດລາຍນີ້, ອາດຍ້ອນວ່າບໍ່ໄດ້ມີການຕື່ມແບບຟອມມາກ່ອນ).
- ຕາມຄວາມເຂົ້າໃຈຂອງລາວ ເຈົ້າຈະໄດ້ຮັບການສະໜັບສະໜຸນກໍ່ຕໍ່ເມື່ອເຈົ້າເປັນທະຫານ, ແຕ່ຍ້ອນລາວບໍ່ໄດ້ຢູ່ໃນກອງທັບ, ລາວກໍ່ເລີຍບໍ່ໄດ້ຍື່ນແບບຟອມຂໍການສະໜັບສະໜຸນ.
- ລາວກ່າວວ່າໃນບ້ານມີອາສາສະໝັກການແພດປະຈຳຢູ່, ແຕ່ບໍ່ມີຫ້ອງປົວພະຍາດ. ລາວບໍ່ມີຄວາມຮູ້ກ່ຽວກັບບໍລິການທ້ອງຖິ່ນສຳລັບຜູ້ພິການເລີຍ, ເຊັ່ນ: COPE.
- ບໍ່ປາກົດວ່າມີການດຳເນີນວຽກງານເກັບກູ້ລະເບີດໃນຊຸມຊົນຂອງລາວເລີຍ ເຖິງແມ່ນວ່າທັງໝົດບ້ານຈະຮ້ອງຂໍໃຫ້ດຳເນີນວຽກງານນັ້ນກໍ່ຕາມ. ພວກເຂົາບໍ່ຮູ້ເລີຍວ່າລະເບີດມີໜ້າຕາເປັນແບບໃດ. ຜູ້ເປັນຜົວຄິດວ່າລະເບີດມີສີເຫຼືອ ແລະ ມີຂາ.

**ຄົວເຮືອນທີ 6 ໃນ ບ້ານປຸ່ງໝັ້ນ: ຄູ່ຜົວເມຍຊົນເຜົ່າລາວພວນ, ອາຍຸ 70 ແລະ 72, ລະດັບການສຶກສາຊັ້ນປະຖົມ, ລາຍຮັບມາຈາກການປູກເຂົ້າ ແລະ ການລ້ຽງສັດນ້ອຍ; ລູກຊາຍ ແລະ ລູກໃພ້ເຮັດສວນ ແລະ ລູກໃພ້ສ້າງລາຍຮັບຈາກການຕ່ຳຫູກ; ພວກເຂົາເຮັດສວນຜັກເພື່ອບໍລິໂພກເອງ.**

- ເນື້ອທີ່ດິນປູກເຂົ້າຂອງຜູ້ເປັນຜົວ ໄດ້ຮັບການເກັບກູ້ລະເບີດແລ້ວ. ມັນແມ່ນວຽກງານບຸລິມະສິດທີ່ກຳນົດໂດຍບ້ານ, ດັ່ງນັ້ນລາວຈຶ່ງບໍ່ຈຳເປັນຕ້ອງເຮັດຫຍັງ. ລາວຮູ້ວ່າຖ້າຢາກໃຫ້ມີການເກັບກູ້ລະເບີດເອງ ລາວຕ້ອງໄດ້ຮ້ອງຂໍອຳນາດການປົກຄອງທີ່ກ່ຽວຂ້ອງ.
- ລາວກ່າວວ່າລາວໄດ້ຍ້າຍ ລບຕ ອອກຈາກຖະໜົນເມື່ອປີທີ່ຜ່ານມາ. ລາວໄດ້ປະລະເບີດນັ້ນໄວ້ຢູ່ຂ້າງຖະໜົນເປັນເວລາ 9-10 ມື້. ໃນລະຫວ່າງນັ້ນ, ທີມງານເກັບກູ້ລະເບີດແມ່ນຢູ່ໃນບ້ານດັ່ງກ່າວພໍດີ, ລາວຈຶ່ງແຈ້ງໃຫ້ພວກເຂົາຊາບໂດຍກົງ, ແລະ ພວກເຂົາກໍ່ໄດ້ມາ ແລະ ໝາຍຈຸດລະເບີດນັ້ນພາຍໃນ 2 ຫຼື 3 ມື້. ຫຼັງຈາກນັ້ນ 5 ຫຼື 6 ມື້ພວກເຂົາຈຶ່ງໄດ້ເຂົ້າມາເກັບກູ້. ລາວບອກວ່າຍ້ອນລາວໄດ້ເຄື່ອນຍ້າຍລະເບີດໂດຍລະມັດລະວັງ, ມັນຈຶ່ງປອດໄພ.
- ພວກຜູ້ຊາຍໄດ້ລາຍງານ ລບຕ ທີ່ພວກເຂົາຄົ້ນພົບໃນເວລາເດີນທາງອອກໄປເຮັດກະສິກຳ.
- ທັງຜູ້ເປັນຜົວ ແລະ ຜູ້ເປັນເມຍໄດ້ຍິນກ່ຽວກັບ

ວຽກງານ EORE ມາກ່ອນ, ແຕ່ບໍ່ເຄີຍໄດ້ເຂົ້າຮ່ວມ ເລີຍຍ້ອນພວກເຂົາເຊື່ອວ່າ ພວກເຂົາຮູ້ກ່ຽວກັບຄວາມສ່ຽງຕ່າງໆແລ້ວ. ພວກເຂົາເວົ້າວ່າລູກຂອງພວກເຂົາໄດ້ເຂົ້າຮ່ວມ EORE ເມື່ອ 7 ຫຼື 8 ປີກ່ອນ.

- ⇨ ລາວບອກວ່າຖ້າມີການດຳເນີນວຽກງານ EORE ໃນຊຸມຊົນ, ລາວກໍ່ຢາກຖືກເຊີນໃຫ້ເຂົ້າຮ່ວມໂດຍກົງ. ຜູ້ເປັນເມຍເອງກໍ່ມີຄວາມກະຕືລືລົ້ນໃນການເຂົ້າຮ່ວມການຝຶກອົບຮົມໃນຊຸມຊົນ. ຖ້າມີໃຜສະໜອງຂໍ້ມູນໃຫ້, ພວກເຂົາກໍ່ຍິນດີ.

**ຄົວເຮືອນທີ 7 ໃນ ບ້ານປີວ: ຊົນເຜົ່າລາວລຸ່ມ, ມີແຕ່ຜູ້ຊາຍຖືກສຳພາດ, ອາຍຸ 60 ປີ; ເມຍຢູ່ບ້ານ, ອາຍຸ 58; ຜົວມີລະດັບການສຶກສາຊັ້ນມັດທະຍົມ, ເມຍມີລະດັບການສຶກສາຊັ້ນປະຖົມ; ລາຍຮັບມາຈາກສັດນ້ອຍ ແລະ ເຂົ້າຖ້າເກັບກ່ຽວໄດ້ເກີນປະລິມານທີ່ບໍລິໂພກໃນຄົວເຮືອນ**

- ⇨ ເນື່ອງຈາກຂໍ້ຈຳກັດດ້ານເວລາ, ການສຳພາດຄົວເຮືອນຈຶ່ງບໍ່ສາມາດດຳເນີນການໄດ້ໃນ ບ້ານປີວ. ທີມງານພາກສະໜາມບໍ່ສາມາດສຳພາດຜູ້ຊາຍທີ່ລອດຊີວິດຈາກ ລບຕ ໄດ້.
- ⇨ ອຸບັດເຫດຂອງລາວເກີດຂຶ້ນໃນປີ 1992 ໃນເວລາທີ່ລາວຂຸດລາງນ້ຳເຂົ້ານາຂອງລາວ. ໃນເວລານັ້ນ, ຍັງບໍ່ທັນມີສຸກສາລາປະຈຳບ້ານ ຫຼື ປະຈຳເມືອງເທື່ອ, ດັ່ງນັ້ນລາວຈຶ່ງຕ້ອງໄດ້ໄປໂຮງໝໍແຂວງຂະໜາດນ້ອຍແທນ ບ່ອນທີ່ບາດຂອງລາວຕິດເຊື້ອ. ນີ້ແມ່ນສາເຫດທີ່ເຮັດໃຫ້ແຂນ ແລະ ນິ້ວໂປ້ມືຂອງລາວຕ້ອງຖືກຕັດຖິ້ມ.
- ⇨ ຕໍ່ມາລາວກໍ່ໄດ້ຮັບແຂນທຽມ, ແຕ່ມັນບໍ່ພໍດີ ແລະ ເຮັດໃຫ້ຮູ້ສຶກເຈັບ, ດັ່ງນັ້ນລາວຈຶ່ງໃສ່ແຂນທຽມນັ້ນ ສະເພາະຕອນທີ່ໄປງານລ້ຽງເທົ່ານັ້ນ. ລາວບໍ່ເຄີຍໄດ້ຮັບການສະໜັບສະໜູນທາງການເງິນ ຫຼື ການຝຶກອົບຮົມ EORE ມາກ່ອນ.
- ⇨ ລາວເຮັດວຽກໄດ້ຍາກຂຶ້ນ. ພີ່ນ້ອງໄດ້ມາຊ່ວຍລາວ ແລະ ເມຍຂອງລາວກໍ່ຕ້ອງໄດ້ເຮັດວຽກຫຼາຍຊົ່ວໂມງຕື່ມອີກ. ລາວຍັງພະຍາຍາມເຮັດວຽກ, ແຕ່ກໍ່ຕ້ອງເຈີກັບຂໍ້ຈຳກັດເນື່ອງຈາກແຂນທີ່ຖືກຕັດ ແລະ ຄວາມເຈັບປວດຈາກສະເກັດ ລບຕ ທີ່ຍັງຄົງຝັງຢູ່ໃນຮ່າງກາຍຂອງລາວຢູ່. ລູກຊາຍ ແລະ ລູກໃພ້ຊ່ວຍລາວເຮັດສວນ. ລູກຊາຍຂອງລາວ (ບໍ່ມີລູກສາວ) ໄດ້ລິເລີ່ມວຽກປູກຝັງແບບເບົາໆຕອນທີ່ພວກເຂົາອາຍຸໄດ້ 10 ປີ, ຕໍ່ມາຈຶ່ງເລີ່ມເຮັດວຽກເຕັມທີ່ໃນນາເຂົ້າຕອນໄດ້ອາຍຸປະມານ 14 ຫຼື 15 ປີ.

### ຂໍ້ແນະນຳທີ 19

- ⇨ ຂະແໜງການ ລບຕ ຈະຕ້ອງໄດ້ເພີ່ມທະວີຄວາມຮູ້ໃຫ້ແກ່ຊຸມຊົນຢ່າງຫຼວງຫຼາຍ ກ່ຽວກັບວິທີໃນການລາຍງານບັນຫາ ລບຕ, ການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບວຽກງານເກັບກູ້ລະເບີດ ແລະ ການໄດ້ຮັບບໍລິການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍທີ່ມີຢູ່, ໃນຂະນະດຽວກັນກໍ່ຮັບປະກັນໃຫ້ທຸກຄົນສາມາດເຂົ້າເຖິງວຽກງານ EORE ໄດ້. ສິ່ງນີ້ແມ່ນມີຄວາມຈຳເປັນທີ່ສຸດ, ໂດຍສະເພາະຕໍ່ກຸ່ມຄົນທີ່ມີຄວາມສ່ຽງສູງ, ເຊັ່ນ: ຄົນທຸກ, ຜູ້ທີ່ມີລະດັບການສຶກສາຕ່ຳ ແລະ ບໍ່ຮູ້ໜັງສື, ກຸ່ມຊົນເຜົ່າ, ແມ່ຍິງ, ຄົນພິການ ແລະ ຜູ້ທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ.
- ⇨ ໃນເຂດຫ່າງໄກສອກຫຼີກ, ອາດມີການນຳໃຊ້ບໍລິການເຄື່ອນທີ່ (ພະນັກງານສອງຄົນເດີນທາງຈາກເຮືອນຫຼັງໜຶ່ງໄປອີກຫຼັງໜຶ່ງ) ເພື່ອສະໜອງຂໍ້ມູນຂ່າວສານກ່ຽວກັບ EORE, ການຊ່ວຍເຫຼືອຜູ້ປະສົບໄພທີ່ມີຢູ່ ແລະ ຂໍ້ມູນກ່ຽວກັບວຽກງານການເກັບກູ້ ລບຕ.





© UNDP / Mailee Osten-Tan

# 6

# 6. ຜົນໄດ້ຮັບທີ່ສອດຄ່ອງກັບສະພາບເສດຖະກິດ-ສັງຄົມຂອງ ສປປ ລາວ ແລະ ຂອບວຽກການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ

ດັ່ງທີ່ກ່າວໄວ້ໃນພາກທີ່ຜ່ານມາ, ເຄື່ອງມືການຄົ້ນຄວ້າທຸກອັນແມ່ນໄດ້ຖືກອອກແບບມາ ເພື່ອສະແດງໃຫ້ເຫັນເຖິງຂໍ້ມູນດ້ານສະພາບການອັນສະເພາະ ທີ່ກ່ຽວຂ້ອງກັບການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍອັນຮອບດ້ານ, ໂດຍອີງຕາມຂອບເຂດດັ່ງລຸ່ມນີ້:[3]

- ສິດທິ ແລະ ສະຖານະທາງກົດໝາຍ
- ຫຼັກປະຕິບັດ, ການມີສ່ວນຮ່ວມ, ອຳນາດ ແລະ ການຕັດສິນໃຈ
- ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນ
- ເວລາ ແລະ ພື້ນທີ່, ບົດບາດທັງ 3 ດ້ານຂອງແມ່ຍິງ ແລະ ສະພາບແວດລ້ອມເອື້ອອຳນວຍ
- ຄວາມຮູ້, ຄວາມເຊື່ອ ແລະ ຄວາມເຂົ້າໃຈ, ແລະ ບັນຖັດຖານ ແລະ ການເໝົາລວມຂອງສັງຄົມ

ພາຍໃຕ້ຂອບເຂດແຕ່ລະອັນ, ການຄົ້ນຄວ້າດັ່ງກ່າວໄດ້ລະບຸນິຕິກຳແຫ່ງຊາດ, ສະຖິຕິ ແລະ ອົງປະກອບດ້ານເສດຖະກິດ-ສັງຄົມ ເພື່ອຊ່ວຍໃຫ້ເຂົ້າໃນວ່າບັນດາແນວໂນ້ມໃນຂະແໜງການ ລບຕ ນັ້ນສອດຄ່ອງ ຫຼື ແຕກຕ່າງຈາກບັນດາແນວໂນ້ມໃນລະດັບຊາດຄືແນວໃດ.

## 6.1 ສິດທິ ແລະ ສະຖານະທາງກົດໝາຍ

ພາກສ່ວນນີ້ຈະອະທິບາຍເອກະສານນະໂຍບາຍແຫ່ງຊາດທີ່ສຳຄັນ ທີ່ຊ່ວຍປົກປ້ອງສະຖານະທາງກົດໝາຍໃຫ້ແກ່ປະຊາກອນລາວ. ຍຸດທະສາດອັນສະເພາະຊ່ວຍແກ້ໄຂຄວາມຕ້ອງການ ແລະ ສະໜອງມາດຕະການພິເສດໃຫ້ແກ່ແມ່ຍິງ, ຄົນພິການ, ຄົນທຸກ ແລະ ກຸ່ມຊົນເຜົ່າ, ທັງຍັງຊ່ວຍແກ້ໄຂບັນຫາການລ່ວງລະເມີດທາງເພດ, ການກົດຂີ່ຂູດຮີດທາງເພດ ແລະ ບັນຫາອື່ນໆ. ບັນຫາທາງກົດໝາຍທີ່ກ່ຽວຂ້ອງກັບເນື້ອທີ່ດິນ ແມ່ນໄດ້ຖືກອະທິບາຍໄວ້ໃນພາກ 6.3.

ຄວາມທຸກຍາກແມ່ນຖືກຍົກຂຶ້ນມາໂອ້ລົມກັນຢູ່ສະເໝີ ໃນລະຫວ່າງການປຶກສາຫາລືພາກສະໜາມ ໃນຖານະຂອງຄວາມບໍ່ສະເໝີພາບອີກຮູບແບບໜຶ່ງ ທີ່ປະຊາຊົນທຸກຄົນຕ້ອງປະເຊີນ. ສິ່ງນີ້ແມ່ນສອດຄ່ອງກັບສະພາບການແຫ່ງຊາດ. ທະນາຄານໂລກ ໄດ້ຄິດໄລ່ວ່າອັດຕາຄວາມທຸກຍາກນັ້ນແມ່ນຫຼຸດລົງ 6.3 ຈຸດສ່ວນຮ້ອຍຈາກ 24.6 ສ່ວນຮ້ອຍໃນສົກປີ 2012-2013 ມາເປັນ 18.3 ສ່ວນຮ້ອຍໃນສົກປີ 2018-2019.[4] ຄວາມທຸກຍາກຍັງຄົງມີອັດຕາທີ່ສູງຢູ່ໃນກຸ່ມຊົນເຜົ່າ ແລະ ຄົວເຮືອນຕ່າງໆທີ່ບໍ່ໄດ້ຮັບການສຶກສາທາງການ, ໂດຍມີອັດຕາຄວາມທຸກຍາກທີ່ 34.6 ສ່ວນຮ້ອຍໃນປີ 2019. ນີ້ແມ່ນອັດຕາທີ່ສູງຫຼາຍກວ່າ 10 ເທົ່າຂອງກຸ່ມຄົວເຮືອນທີ່ມີຫົວໜ້າຄອບຄົວສຳເລັດການສຶກສາລະດັບມັດທະຍົມ.

NSEDP ຄັ້ງທີ 9 ໄດ້ປະເມີນວ່າອັດຕາຄວາມທຸກຍາກນັ້ນຈະເພີ່ມຂຶ້ນເປັນ 21.5 ສ່ວນຮ້ອຍເນື່ອງຈາກຜົນກະທົບຂອງພະຍາດໂຄວິດ-19. ກ່ອນເກີດການແຜ່ລະບາດ, ການສົ່ງເງິນກັບປະເທດຖືເປັນແຫຼ່ງທຶນດຳລົງຊີວິດຂອງຄົວເຮືອນກວມເກືອບ 15 ສ່ວນຮ້ອຍ ແລະ ປະກອບສ່ວນຢ່າງໃຫຍ່ຫຼວງຕໍ່ການຫຼຸດຜ່ອນຄວາມທຸກຍາກ, ໄປພ້ອມໆກັບການເສີມຂະຫຍາຍການກະສິກຳ ແລະ ການຜະລິດອາຫານເພື່ອສົ່ງອອກໃນລະຫວ່າງປີ 2012 ແລະ 2018.[5]

ຄວາມທຸກຍາກແມ່ນມີຄວາມແຕກຕ່າງກັນຫຼາຍລະຫວ່າງເຂດຕົວເມືອງ ແລະ ເຂດຊົນນະບົດ, ແລະ ທົ່ວທຸກແຂວງ, ເມືອງ ແລະ ກຸ່ມຊົນເຜົ່າ. ອັດຕາຄວາມທຸກຍາກໃນເຂດຊົນນະບົດ ແມ່ນສູງ 3 ເທົ່າຂອງອັດຕາໃນເຂດຕົວເມືອງໃນສົກປີ 2018-2019. ຂະບວນການຫຼຸດຜ່ອນຄວາມທຸກຍາກແມ່ນມີຄວາມຫຼ້າຊ້າ, ໂດຍສະເພາະໃນກຸ່ມທີ່ບໍ່ແມ່ນຊົນເຜົ່າຫຼັກຂອງແຂວງ. ເພື່ອແກ້ໄຂບັນຫາຄວາມທຸກຍາກ ແລະ ຄວາມແຕກໂຕນໃນ ສປປ ລາວ, NSEDP ຄັ້ງທີ 9 ກ່າວວ່າລັດຖະບານຈະສຸມໃສ່ຄວາມພະຍາຍາມຕໍ່ກຸ່ມທີ່ທຸກຍາກທີ່ສຸດ ແລະ ຮັບປະກັນການດຳລົງຊີວິດທີ່ຍືນຍົງ ໂດຍຜ່ານການແຈກຢາຍລາຍຮັບຢ່າງເທົ່າທຽມ ແລະ ຜ່ານການສະໜອງການປົກປ້ອງທາງສັງຄົມ ໃຫ້ແກ່ປະຊາຊົນໃນທຸກກຸ່ມ, ໂດຍສະເພາະກຸ່ມທີ່ມີຄວາມສ່ຽງສູງ.

ນິຕິກຳກ່ຽວກັບແມ່ຍິງ ແລະ ບັນຫາດ້ານບົດບາດຍິງຊາຍ

ສປປ ລາວ ໄດ້ໃຫ້ສັດຕະຍະບັນຕໍ່ ສົນທິສັນຍາລົບລ້າງການຈຳແນກຕໍ່ແມ່ຍິງ (CEDAW) ໃນປີ 1981. ຂອບວຽກດ້ານນະໂຍບາຍແຫ່ງຊາດເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງກັບແມ່ຍິງ ແລະ ບົດບາດຍິງຊາຍແມ່ນ NPAGE ຄັ້ງທີ 4, ທີ່ລວມມີ 3 ແຜນງານຄື: ການເຜີຍແຜ່ຂໍ້ມູນຂ່າວສານ, ການສ້າງຄວາມຕື່ນໂຕ ແລະ ການສ້າງຖານຂໍ້ມູນ; ການສົ່ງເສີມ ແລະ ການສ້າງຄວາມສະເໝີພາບຍິງຊາຍ; ແລະ ການທົບທວນຄືນ, ການປັບປຸງ ແລະ ການສ້າງນິຕິກຳ, ແລະ ການຈັດຕັ້ງປະຕິບັດພັນທະພາຍໃຕ້ສົນທິສັນຍາຕ່າງໆ, ຖະແຫຼງການຂອງພາກພື້ນ ແລະ ສາກົນກ່ຽວກັບສິດທິຂອງແມ່ຍິງທີ່ ສປປ ລາວ ເປັນພາຄີ. NPAGE ຄັ້ງທີ 4 ໄດ້ລະບຸວ່າອຸປະສັກທີ່ສຳຄັນຕໍ່ການສ້າງຄວາມສະເໝີພາບໃຫ້ແກ່ແມ່ຍິງໃນ ສປປ ລາວ ນັ້ນ:

> ... ໂດຍຫຼັກແລ້ວເກີດຂຶ້ນຈາກການທີ່ແມ່ຍິງມີສ່ວນຮ່ວມທີ່ຈຳກັດ ເຂົ້າໃນຂັ້ນຕອນການຕັດສິນໃຈ ແລະ ການຄຸ້ມຄອງໃນທຸກລະດັບ ເພື່ອສະໜອງສະພາບແວດລ້ອມເອື້ອອຳນວຍ ແລະ ໂອກາດຕະຫຼອດຊີບໃຫ້ແກ່ແມ່ຍິງ ແລະ ເດັກຍິງໄດ້ເຂົ້າເຖິງການສຶກສາ, ການປິ່ນປົວສຸຂະພາບ, ການຈ້າງງານທີ່ເທົ່າທຽມ ແລະ ການຍົກສູງບົດບາດທາງເສດຖະກິດ, ໂດຍສະເພາະຕໍ່ແມ່ຍິງ ແລະ ເດັກຍິງໃນເຂດທີ່ຫ່າງໄກສອກຫຼີກ ເພື່ອໃຫ້ພວກເຂົາສາມາດເຂົ້າເຖິງທຶນຮອນ ແລະ ເນື້ອທີ່ດິນສຳລັບການຜະລິດເພື່ອປະກອບສ່ວນ ແລະ ເກັບກ່ຽວຜົນປະໂຫຍດຈາກຂະບວນການພັດທະນາເສດຖະກິດ-ສັງຄົມໃຫ້ໄດ້ເຕັມສ່ວນ ໃນສະພາບແວດລ້ອມການເຮັດວຽກ, ການຮຽນຮູ້ ແລະ ການດຳລົງຊີວິດທີ່ປອດໄພ ປາສະຈາກກະທຳຜິດ, ການລ່ວງລະເມີດ ຫຼື ຄວາມຮຸນແຮງທາງເພດ.[6]

ອີກໜຶ່ງນິຕິກຳທີ່ສຳຄັນແມ່ນ ແຜນການດຳເນີນງານແຫ່ງຊາດ 5-ປີ ວ່າດ້ວຍການປ້ອງກັນ ແລະ ການລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ຄັ້ງທີ II (2021-2025),



ເຊິ່ງປະກອບມີ 3 ຂົງເຂດວຽກງານຕົ້ນຕໍຄື: ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດໃຫ້ແກ່ແມ່ຍິງ ແລະ ເດັກໃນ ສປປ ລາວ ໂດຍຜ່ານການລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ; ຍົກສູງບົດບາດ ແລະ ກຽດສັກສີຂອງພວກເຂົາໃນສັງຄົມ, ຊຸມຊົນ ແລະ ຄອບຄົວ; ແລະ ເພື່ອຈັດຕັ້ງປະຕິບັດຄວາມສະເໝີພາບຍິງຊາຍ ແລະ ສະກັດກັ້ນຄວາມຮຸນແຮງບົດພື້ນຖານຂອງບົດບາດຍິງຊາຍ ແລະ ປະກອບສ່ວນຕໍ່ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ ແລະ ເປົ້າໝາຍການພັດທະນາແຫ່ງຊາດ.

ມີການອ້າງອີງ 2 ຄັ້ງເຖິງ ກົດໝາຍແຮງງານ (ສະບັບປັບປຸງ) ປີ 2013 ທີ່ກ່ຽວຂ້ອງກັບການລາພັກເກີດລູກ ແລະ ການຖືພາ. ຄົນສ່ວນໃຫຍ່ໃນລະຫວ່າງປະຕິບັດການພາກສະໜາມ ຮູ້ແລ້ວວ່ານິຕິກຳຕົ້ນຕໍສຳລັບແມ່ຍິງນັ້ນ ແມ່ນກ່ຽວຂ້ອງກັບການລາພັກເກີດລູກ. ການລາພັກຂອງພໍ່ ແລະ ແມ່ພ້ອມກັນນັ້ນຍັງບໍ່ທັນໄດ້ຖືກລວມເຂົ້າໄວ້ໃນ ກົດໝາຍແຮງງານ. ການທົບທວນຄືນນະໂຍບາຍຂອງພະນັກງານໃນ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao ພາຍໃຕ້ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ນັ້ນຈຳເປັນຕ້ອງໄດ້ແນໃສ່ແກ້ໄຂບັນດານະໂຍບາຍ ແລະ ລະບຽບຂັ້ນຕອນການປະຕິບັດທີ່ກ່ຽວຂ້ອງກັບການລ່ວງລະເມີດທາງເພດ, ແລະ ຄວາມສອດຄ່ອງກັບປະມວນກົດໝາຍແຮງງານ, ໂດຍສະເພາະຫຼັກປະຕິບັດທີ່ຮັບປະກັນຄວາມປອດໄພໃຫ້ແກ່ແມ່ເກີດລູກ (ເບິ່ງຕື່ມ ຂໍ້ແນະນຳທີ 8).

ກົດໝາຍແຮງງານ ມາດຕາທີ 97 (ປັບປຸງ) ການນຳໃຊ້ແຮງງານເພດຍິງທີ່ຖືພາ ຫຼື ໃນໄລຍະລ້ຽງລູກນ້ອຍ ກ່າວວ່າ:

> ຫ້າມບໍ່ໃຫ້ມີການໃຊ້ແຮງງານແມ່ຍິງໃນໄລຍະທີ່ພວກເຂົາຖືພາ ຫຼື ໃນໄລຍະລ້ຽງລູກນ້ອຍທີ່ມີອາຍຸຕ່ຳກວ່າ 1 ປີໃນວຽກງານດັ່ງຕໍ່ໄປນີ້:
>
> 2. ວຽກທີ່ມີການຍົກ ແລະ ແບກຫາມດ້ວຍມື, ແບກຫ້າມດ້ວຍບ່າ, ແບກຫາມດ້ວຍເສົາ, ຫຼື ທີ່ກ່ຽວຂ້ອງກັບສິ່ງຂອງທີ່ມີນ້ຳໜັກເກີນ 10 ກິໂລກຣາມ; ແລະ
>
> 5. ວຽກທີ່ຕ້ອງໄດ້ຢືນເປັນເວລາດົນກວ່າ 2 ຊົ່ວໂມງຕິດຕໍ່ກັນ
>
> ແມ່ຍິງໃນລະຫວ່າງຖືພາ ຫຼື ໃນໄລຍະລ້ຽງລູກນ້ອຍທີ່ມີອາຍຸຕ່ຳກວ່າ 1 ປີທີ່ເຄີຍຖືກໃຊ້ແຮງງານໃນວຽກງານຕາມທີ່ກ່າວມາຂ້າງເທິງນີ້, ນາຍຈ້າງຈະຕ້ອງຍົກຍ້າຍພວກເຂົາໄປຍັງຕຳແໜ່ງງານໃໝ່ທີ່ເໝາະສົມເປັນຍການຊົ່ວຄາວ, ແລະ ຈະຕ້ອງໃຫ້ເງິນເດືອນ ຫຼື ຄ່າຈ້າງເທົ່າເດີມ.

**ຜົນໄດ້ຮັບ**

- ⇨ **ຍ້ອນແມ່ຍິງທີ່ເຮັດວຽກເກັບກູ້ ລບຕ ນັ້ນມີໂອກາດທີ່ຈະໄດ້ຢືນຫຼາຍກວ່າ 2 ຊົ່ວໂມງຕິດຕໍ່ກັນ ແລະ ອາດຕ້ອງໄດ້ແບກຫາມວັດຖຸທີ່ມີນ້ຳໜັກຫຼາຍກວ່າ 10 ກິໂລກຣາມ, ຈຶ່ງມີໂອກາດທີ່ຈະເກີດການລະເມີດ ກົດໝາຍແຮງງານ. ໃນການສຳພາດ ໂຄງການ UXO Lao, ທີມງານເກັບກູ້ລະເບີດຍິງລ້ວນກ່າວວ່າ ໂດຍທົ່ວໄປແລ້ວ, ພວກເຂົາຈະເຮັດວຽກຈົນເຖິງເດືອນທີ 9 ຂອງການຖືພາ, ເຖິງແມ່ນວ່າບາງຄັ້ງສະມາຊິກໃນທີມ ຈະໃຫ້ພວກເຂົາໄປເຮັດວຽກເບົາແທນກໍ່ຕາມ. ຜົນໄດ້ຮັບນີ້ຊີ້ໃຫ້ເຫັນເຖິງຄວາມຈຳເປັນ ໃນການບັງຄັບໃຊ້ນະໂຍບາຍການຍົກຍ້າຍຊົ່ວຄາວ ຕໍ່ພະນັກງານເກັບກູ້ລະເບີດໃນໄລຍະຂອງການຖືພາ.**

ການຄົ້ນຄວ້ານີ້ໄດ້ແນະນຳໃຫ້ມີການຊອກຄົ້ນເຫດຜົນຕ່າງໆທີ່ວ່າ ຍ້ອນຫຍັງແມ່ຍິງຈຶ່ງຍັງເຮັດວຽກຈົນເຖິງເດືອນທີ 9 ຂອງການຖືພາໃນສະໜາມ ແລະ ບໍ່ຮັບເອົານະໂຍບາຍທີ່ແມ່ຍິງຫຼາຍຄົນເອີ້ນວ່າ ທາງເລືອກໃນການຖືກຍົກຍ້າຍໄປເຮັດວຽກຫ້ອງການແທນ (ໂດຍສອດຄ່ອງກັບ ປະມວນກົດໝາຍແຮງງານ). ບາງເຫດຜົນອາດລວມມີ: ຄວາມຮູ້ສຶກເກງໃຈທີ່ວ່າການຍົກຍ້າຍນັ້ນ ຈະເຮັດໃຫ້ທີມງານທີ່ເຫຼືອຕ້ອງເຮັດວຽກໜັກຂຶ້ນ ແລະ ຫຼາຍຊົ່ວໂມງຂຶ້ນເພື່ອໃຫ້ບັນລຸໄດ້ຕາມໂຄຕ້າທີ່ກຳນົດ; ຄວາມກົດດັນຈາກເພື່ອນຮ່ວມງານ; ຄວາມເຂົ້າໃຈຂອງຜູ້ຈັດການ ຫຼື ທີ່ເກີດຈາກວັດທະນະທຳອົງກອນ; ຄວາມກັງວົນໃຈວ່າສິ່ງນີ້ຍິ່ງຈະເປັນກາຕອກຢ້ຳແນວຄິດການເໝົາລວມ ວ່າແມ່ຍິງໃນວຽກງານເກັບກູ້ລະເບີດນັ້ນແມ່ນເພດທີ່ 'ອ່ອນແອ' ແລະ ບໍ່ສາມາດຮັບມືກັບວຽກງານນັ້ນໄດ້; ຫຼື ແມ່ຍິງຂາດຄວາມໝັ້ນໃຈໃນການຕັດສິນໃຈວ່າຈະຮັບເອົານະໂຍບາຍດັ່ງກ່າວ ຫຼື ບໍ່.

**ຂໍ້ແນະນຳທີ 20**

- ⇨ ດຳເນີນການຄົ້ນຄວ້າເພີ່ມເຕີມໃນບັນຫາທີ່ກ່ຽວຂ້ອງກັບພະນັກງານເພດຍິງໃນຂະແໜງການ ລບຕ ຜູ້ທີ່ເດີນທາງໄປປະຕິບັດວຽກພາກສະໜາມ, ລວມທັງບັນຫາທີ່ກ່ຽວຂ້ອງກັບການຖືພາ ແລະ ການລາພັກເກີດລູກ; ການລ່ວງລະເມີດ, ການກົດຂີ່ ແລະ ການຂູດຮີດທາງເພດ; ຫຼັກປະຕິບັດດ້ານຄວາມປອດໄພ ແລະ ການຈ້າງງານອັນກວ້າງຂວາງ; ບັນຫາສຳລັບແມ່ຍິງໃນທີ່ພັກລວມ; ວັດທະນະທຳອົງກອນ ແລະ ຄວາມຄາດຫວັງ ແລະ ແນວຄິດເໝົາລວມທີ່ເຫັນໄດ້ຊັດເຈນ ຫຼື ບົ່ມຊ້ອນ, ແລະ ຄວາມເຂົ້າໃຈທີ່ມີຕໍ່ແມ່ຍິງໃນຂະແນງການໂດຍສະມາຊິກທີ່ຫຼາກຫຼາຍໃນຊຸມຊົນທ້ອງຖິ່ນ. ການຄົ້ນຄວ້າ

ຄັ້ງນີ້ຍັງຕ້ອງພິຈາລະນາປະສິດທິພາບ ແລະ ປະສິດທິຜົນຂອງພະນັກງານເກັບກູ້ລະເບີດເພດຍິງ ໂດຍເບິ່ງທີ່ຜົນງານຂອງພວກເຂົາເປັນລາຍບຸກຄົນແທນທີ່ຈະເປັນແບບທີມລວມໄປເຖິງການວິເຄາະປະສິດທິພາບ ແລະ ປະສິດທິຜົນໂດຍສົມທຽບໃສ່ກຸ່ມຊາຍລ້ວນ, ຍິງລ້ວນ ແລະ ແບບປະສົມ, ລວມທັງການວິເຄາະດ້ານເສດຖະກິດ.

ມາດຕາທີ 98 ໃນ ກົດໝາຍແຮງງານ (ສະບັບປັບປຸງ) ປີ 2013 ກ່າວວ່າ:

> ມາດຕາທີ 98 (ປັບປຸງ) ວ່າດ້ວຍການລາພັກກ່ອນ ແລະ ຫຼັງເກີດລູກ: ແຮງງານຍິງຈະຕ້ອງມີສິດຂໍລາພັກເກີດລູກໄດ້ຢ່າງໜ້ອຍໜຶ່ງຮ້ອຍ ແລະ ຫ້າວັນ; ເຖິງຢ່າງໃດກໍ່ຕາມ, ຈະຕ້ອງຈົ່ງວັນພັກດັ່ງກ່າວໄວ້ຢ່າງໜ້ອຍສີ່ສິບສອງວັນເພື່ອໃຊ້ຫຼັງເກີດລູກ. ໃນກໍລະນີເກີດລູກແຝດ, ໄລຍະເວລາຂອງການລາພັກເກີດລູກຈະເພີ່ມຂຶ້ນເປັນຢ່າງໜ້ອຍໜຶ່ງຮ້ອຍ ແລະ ຊາວວັນ. ໃນໄລຍະການລາພັກນັ້ນ, ລູກຈ້າງຈະຕ້ອງໄດ້ຮັບເງິນເດືອນ ຫຼື ຄ່າຈ້າງຕາມອັດຕາປົກກະຕິ.

### ຜົນໄດ້ຮັບ

⇨ ແມ່ຍິງຈາກ ກອງຮ້ອຍ 58 ກ່າວວ່າພວກເຂົາໄດ້ຮັບສິດຂໍລາພັກເກີດລູກ 6 ເດືອນ; ເຖິງຢ່າງໃດກໍ່ຕາມ, ພະນັກງານເກັບກູ້ລະເບີດເພດຍິງທຸກຄົນໃນ ໂຄງການ UXO Lao ອ້າງວ່າພວກເຂົາໄດ້ຮັບສິດຂໍລາພັກເກີດລູກພຽງແຕ່ 3-4 ເດືອນເທົ່ານັ້ນ. ຈຳນວນມື້ເຮັດວຽກໂດຍສະເຫຼ່ຍໃນໄລຍະ 4 ເດືອນ, ໂດຍທົ່ວໄປແລ້ວນັ້ນ, ແມ່ນ 88 ມື້. [7] ຈະຕ້ອງຢັ້ງຢືນວ່າໂຄງການ UXO Lao ໄດ້ປະຕິບັດຕາມຂໍ້ກຳນົດກ່ຽວກັບການລາພັກເກີດລູກຕາມທີ່ລະບຸໄວ້ໃນ ກົດໝາຍແຮງງານ ແລ້ວ ຫຼື ບໍ່.

ມາດຕະຖານສາກົນເພີ່ມເຕີມເພື່ອຮັບປະກັນສິດທິໃຫ້ແກ່ແມ່ຍິງ ແມ່ນມີຄວາມສອດຄ່ອງໂດຍສະເພາະຕໍ່ແຜນງານຂອງ ອົງການ UNDP. ເອກະສານຂອງແຜນງານດັ່ງກ່າວອ້າງອີງເຖິງການຈັດຕັ້ງປະຕິບັດມາດຕະການພິເສດຂອງເລຂາທິການໃຫຍ່ ສປຊ ເພື່ອປ້ອງກັນການລ່ວງລະເມີດ ແລະ ການກົດຂີ່ຂູດຮີດທາງເພດ.

ເນື້ອໃນດຽວທີ່ກ່ຽວຂ້ອງການລ່ວງລະເມີດທາງເພດໃນກົດໝາຍແຮງງານ (ສະບັບປັບປຸງ) ປີ 2013 ແມ່ນ:

> ລູກຈ້າງມີສິດຮຽກຮ້ອງໃຫ້ມີການຍົກເລີກສັນຍາແຮງງານ ແລະ ໄດ້ຮັບເງິນຊົດເຊີຍຕາມກໍລະນີດັ່ງຕໍ່ໄປນີ້: 4. ໃນກໍລະນີຂອງການກໍ່ກວນ, ການລ່ວງລະເມີດ, ຫຼື ການລ່ວງລະເມີດທາງເພດຈາກນາຍຈ້າງ, ຫຼື ນາຍຈ້າງລະເລີຍເຫດການທີ່ເກີດຂຶ້ນ.[8]

ກົນໄກການຈັດຕັ້ງປະຕິບັດຂອງ NPAGE ຄັ້ງທີ 4 ກ່າວວ່າ:

> … ພິຈາລະນາປັບປຸງ ມາດຕາທີ 86, ໂດຍໃຫ້ ກົດໝາຍວ່າດ້ວຍແຮງງານ ລວມເອົາຄຳນິຍາມຂອງການລ່ວງລະເມີດທາງເພດເຂົ້ານຳ ແລະ ການນຳໃຊ້ມາດຕະການລົງໂທດ…

ທີ່ປຶກສາບໍ່ພົບນິຕິກຳອັນສະເພາະທີ່ແກ້ໄຂບັນການລ່ວງລະເມີດທາງເພດ ແລະ ມາດຕະການລົງໂທດຕໍ່ຜູ້ກະທຳຜິດ, ເຊິ່ງຊ່ວຍຊີ້ໃຫ້ເຫັນວ່າຍ້ອນຫຍັງ ຈຶ່ງບໍ່ມີຜູ້ຖືກສຳພາດຮູ້ກ່ຽວກັບນະໂຍບາຍການລ່ວງລະເມີດທາງເພດເລີຍ. ການປົກປ້ອງຈາກການລ່ວງລະເມີດ ແລະ ການຂູດຮີດທາງເພດ ແມ່ນມາດຕະຖານສາກົນສຳລັບ ອົງການ UNDP ແລະ ຂະແໜງການ ລບຕ ໃນສາກົນ. ຂັ້ນຕອນການແກ້ໄຂບັນຫາການກົດຂີ່, ຂູດຮີດ ແລະ ລ່ວງລະເມີດທາງເພດ, ລວມທັງໂດຍຜ່ານກົນໄກການຮ້ອງທຸກ, ໂດຍທົ່ວໄປແລ້ວມັກຈະຖືກອະທິບາຍໄວ້ໃນຫຼັກປະຕິບັດຂອງຜູ້ປະຕິບັດວຽກງານ ລບຕ. ຂໍ້ແນະນຳຈາກ ອົງການແມັກ ໃນປີ 2008 ແລະ GMAP ໃນປີ 2014 ແມ່ນມີຄວາມກ່ຽວພັນກັບຂະແໜງການດັ່ງຕໍ່ໄປນີ້:

- ທຸກອົງການຈັດຕັ້ງຈະຕ້ອງມີ ກົດລະບຽບດ [CoC] ທີ່ຊີ້ແຈງຢ່າງຊັດເຈນກ່ຽວກັບພຶດຕິກຳໃດຂອງເພື່ອນຮ່ວມງານ, ຜູ້ໄດ້ຮັບຜົນປະໂຫຍດ ແລະ ຄູ່ຮ່ວມມືທີ່ມີຄວາມເໝາະສົມ, ແລະ ພຶດຕິກຳໃດທີ່ອົງກອນຍອມຮັບບໍ່ໄດ້, ລວມທັງ ການລ່ວງລະເມີດ, ການກົດຂີ່ ແລະ ການຂູດຮີດທາງເພດ. ກົດລະບຽບ ຈະຕ້ອງຖືກສ້າງຂຶ້ນເປັນພາສາລາວສຳລັບພະນັກງານທ້ອງຖິ່ນ ແລະ ພາສາອັງກິດສຳລັບ ພະນັກງານສາກົນ ແລະ ພະນັກງານທຸກຄົນຈະຕ້ອງໄດ້ອ່ານ ແລະ ລົງນາມໃນເອກະສານດັ່ງກ່າວ ໄປພ້ອມໆກັບສັນຍາແຮງງານ ແລະ ໄດ້ຮັບການບັນຍາຍກ່ຽວກັບຫຼັກການດັ່ງກ່າວໃນໄລຍະເລີ່ມວຽກ… ໃນລະຫວ່າງການຢັ້ງຢືນຮັບຮອງຜູ້ປະຕິບັດງານ, SWP/SOP ທີ່ກ່ຽວຂ້ອງກັບຊັບພະຍາກອນມະນຸດ ແລະ ຫຼັກປະຕິບັດ ຈະຕ້ອງໄດ້ຮັບການກວດສອບ ເພື່ອຮັບປະກັນຄວາມສອດຄ່ອງກັບກົດໝາຍແຮງງານແຫ່ງຊາດ ແລະ ຄວາມອ່ອນໄຫວດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ… ຜູ້ປະຕິບັດງານຈະຕ້ອງເຜີຍແຜ່ຂໍ້ມູນຂ່າວສານຂອງລະບຽບຂັ້ນຕອນທີ່ກ່ຽວຂ້ອງກັບ ການລາຍງານບັນຫາການລ່ວງລະເມີດ - ຈຸດປະສານງານຕ່າງໆຈະຕ້ອງໄດ້ຮັບການກຳນົດຢ່າງຊັດເຈນ ໄປພ້ອມໆກັບແຜນການດຳເນີນງານ, ດ້ວຍເຫດນີ້ສິ່ງທີ່ສຳຄັນແມ່ນຈະຕ້ອງຮັບປະກັນໃຫ້ພະນັກງານຍິງ ສາມາດລາຍງານບັນຫາຕໍ່ຜູ້ຍິງໄດ້. ແມ່ຍິງມີແນວໂນ້ມທີ່ຈະລາຍງານບັນຫາການລ່ວງລະເມີດທາງເພດທີ່ກໍ່ຂຶ້ນໂດຍຜູ້ຊາຍ ໃຫ້ແມ່ຍິງນຳກັນຫຼາຍກວ່າຕໍ່ຜູ້ຊາຍ. (ການປະເມີນຜົນດ້ານບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ, ພາກທີ 4.5.9)
- ກົນໄກການຮ້ອງທຸກທີ່ປອດໄພ, ປິດລັບ, ໂປ່ງໃສ, ແລະ ເຂົ້າເຖິງໄດ້ ກ່ຽວກັບການລະເມີດ CoC ຈະຕ້ອງຖືກກຳນົດຂຶ້ນ, ພ້ອມກັບຜູ້ຮັບຄຳຮ້ອງທີ່ເປັນຜູ້ຊາຍ ແລະ ຜູ້ຍິງຢ່າງໜ້ອຍຢ່າງລະ 1 ຄົນ. ແນະນຳໃຫ້ດຳເນີນການສຳຫຼວດແບບບໍ່ເປີດເຜີຍຊື່ 1 ຄັ້ງຕໍ່ປີ ແລະ ຮັບປະກັນໃຫ້ທຸກບັນຫາທີ່ເກີດຂຶ້ນໄດ້ຮັບການແກ້ໄຂ… ໄລຍະຮັບພະນັກງານໃໝ່ຈະຕ້ອງລວມເອົາບັນຫາດ້ານບົດບາດຍິງຊາຍ, ກົດລະບຽບ, ແລະ ຄຳອະທິບາຍກ່ຽວກັບກົນໄກການຮ້ອງທຸກ. (GMAP 2014)

### ຂໍ້ແນະນຳທີ 21

⇨ ນອກເໜືອຈາກກົນໄກການຮ້ອງທຸກທີ່ກວມເອົາປະຊາກອນທຸກຄົນ, ທີ່ອີງໃສ່ສິດທິຕາມທີ່ກ່າວເຖິງໃນ ຂໍ້ແນະນຳທີ 6 ແລ້ວນັ້ນ, ຍັງມີການແນະນຳໃຫ້ຕ້ອງຮັບປະກັນໃຫ້ມີການສ້າງຫຼັກປະຕິບັດ ຫຼື ເອກະສານທີ່ຄ້າຍຄືກັນຂຶ້ນ ທີ່ແນໃສ່ແກ້ໄຂບັນຫາການລ່ວງລະເມີດ, ການກົດຂີ່ ແລະ ການຂູດຮີດທາງເພດ, ແລະ ຕ້ອງຮັບປະກັນໃຫ້ລວມເອົາກົນໄກການຮ້ອງທຸກທີ່ປອດໄພ, ປິດລັບ, ໂປ່ງໃສ ແລະ ເຂົ້າເຖິງໄດ້ເຂົ້າໃນສັນຍາແຮງງານ.

## ດຳລັດວ່າດ້ວຍສິດທິຂອງຄົນພິການ

ໃນປີ 2008, ລັດຖະບານ ສປປ ລາວ ໄດ້ລົງນາມໃນສົນທິສັນຍາຂອງ ອົງການ ສປຊ ວ່າດ້ວຍສິດທິຂອງຄົນພິການ. ຕໍ່ມາກໍ່ໄດ້ອອກ ດຳລັດວ່າດ້ວຍສິດທິຂອງຄົນພິການ ໃນປີ 2014. ດຳລັດດັ່ງກ່າວຊ່ວຍປົກປ້ອງສິດທິ ແລະ ຜົນປະໂຫຍດໃຫ້ແກ່ຄົນພິການ ແລະ ກຳນົດໃຫ້ມີການລຶບລ້າງການຈຳແນກທຸກຮູບແບບ ທີ່ກີດຂວາງບໍ່ໃຫ້ພວກເຂົາມີສ່ວນຮ່ວມເຂົ້າໃນວຽກງານທາງສັງຄົມ ແລະ ເສດຖະກິດແບບເຕັມສ່ວນ ແລະ ບາງສ່ວນ. ນອກຈາກນັ້ນ, ດຳລັດດັ່ງກ່າວຍັງໄດ້ສ້າງຕັ້ງ ຄະນະກຳມະການແຫ່ງຊາດເພື່ອຄົນພິການ ແລະ ຜູ້ສູງອາຍຸ ຂຶ້ນ. ມັນໄດ້ກ່າວວ່າ:

> ມາດຕາທີ 27. ການຈ້າງງານຄົນພິການ
>
> ລັດ ແລະ ສັງຄົມຈະຕ້ອງ ສົ່ງເສີມການຈ້າງງານ ແລະ ພິຈາລະນາໃຫ້ບຸລິມະສິດຕໍ່ຄົນພິການ ໂດຍຜ່ານການຮັບເອົາຜູ້ທີ່ຄົບເງື່ອນໄຂການເຮັດວຽກເຂົ້າປະຈຳຕຳແໜ່ງ, ຕາມທີ່ກຳນົດໄວ້ທຸກປີໂດຍນິຕິບຸກຄົນທີ່ກ່ຽວຂ້ອງ. ໃນກໍລະນີທີ່ບໍ່ສາມາດຮັບເອົາຄົນພິການເຂົ້າເຮັດວຽກໄດ້ໃນຂະແໜງການທີ່ກ່ຽວຂ້ອງນັ້ນ, ລັດຈະຕ້ອງໄດ້ມອບເງິນເຂົ້າ ກອງທຶນພັດທະນາຄົນພິການໃນຈຳນວນທີ່ເທົ່າທຽມກັບເງິນເດືອນຂັ້ນຕ່ຳຕາມທີ່ກຳນົດໄວ້ໃນ ກົດໝາຍແຮງງານ. ກະຊວງແຮງງານ



> ແລະ ສະຫວັດດີການສັງຄົມ ແລະ ໜ່ວຍງານອື່ນໆທີ່ກ່ຽວຂ້ອງ ຈະຕ້ອງກຳນົດແຜນໂຄຕ້າອັນສະເພາະເພື່ອຈັດຕັ້ງປະຕິບັດ. ໃນເວລາຮັບເອົາຄົນພິການເຂົ້າເຮັດວຽກ, ພວກເຂົາຈະຕ້ອງໄດ້ຮັບການສະໜອງທີ່ພັກທີ່ຈຳເປັນ.

ມາດຕາອີກສອງອັນທີ່ມີຄວາມກ່ຽວຂ້ອງໂດຍກົງກັບຜົນໄດ້ຮັບຈາກການຄົ້ນຄວ້ານີ້:

> ມາດຕາທີ 31. ລັດສະຫວັດດີການສັງຄົມ ຈະຕ້ອງຍົກສູງເງື່ອນໄຂການດຳລົງຊີວິດໃຫ້ແກ່ຄົນພິການ ໂດຍຜ່ານການສະໜອງອາຫານ, ເຄື່ອງນຸ່ງຫົ່ມ, ທີ່ພັກ ແລະ ສະພາບແວດລ້ອມທີ່ດີ ແລະ ເໝາະສົມໃຫ້ແກ່ພວກເຂົາ. ລັດຈະຕ້ອງຊ່ວຍຄົນພິການກຸ່ມສະເພາະ, ເຊັ່ນ: ກຸ່ມທີ່ຊ່ວຍໂຕເອງບໍ່ໄດ້, ຜູ້ສູງອາຍຸ, ຄົນທຸກ, ຄົນບໍ່ມີບ້ານ, ແລະ ຄອບຄົວຂອງຄົນພິການທີ່ທຸກຍາກ.
>
> ມາດຕາທີ 32. ການຊ່ວຍເຫຼືອເຂົ້າໃນການເບິ່ງແຍງຄົນພິການ. ໜ່ວຍງານບໍລິການໃນຫຼາຍລະດັບຈະຕ້ອງຮ່ວມມືກັບອົງການຈັດຕັ້ງທາງສັງຄົມ ເພື່ອຍົກສູງຄຸນນະພາບຊີວິດໃຫ້ແກ່ຄົນພິການ ຕາມທີ່ກຳນົດໄວ້ໃນ ມາດຕາທີ 31 ຂອງດຳລັດສະບັບນີ້ ແລະ ເພື່ອຊ່ວຍພວກເຂົາດັ່ງຕໍ່ໄປນີ້: 1. ສະໜອງເງິນອຸດໜຸນປະຈຳເດືອນຕາມທີ່ລັດຖະບານກຳນົດ. ໃຮນກໍລະນີຂອງການເສຍຊີວິດ, ລັດຈະຕ້ອງສະໜອງເງິນອຸດໜຸນງານສົບໃຫ້.

### ຜົນໄດ້ຮັບ

⇨ ການສຳພາດຄົວເຮືອນ 2 ຄັ້ງແມ່ນໄດ້ຖືກດຳເນີນການຮ່ວມກັບຜູ້ຊາຍສູງອາຍຸທີ່ທຸກຍາກ, ໜຶ່ງໃນນັ້ນໄດ້ສອບຖາມວ່າລັດຖະບານໄດ້ໃຫ້ການຊ່ວຍເຫຼືອຫຍັງບໍ່. ຍັງບໍ່ເປັນທີ່ຊັດເຈນເທື່ອວ່າ ມາດຕາທີ 31 ໄດ້ຖືກນຳໄປຈັດຕັ້ງປະຕິບັດໃນສະພາບການຂອງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຫຼື ບໍ່. ຍ້ອນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີໜ້າທີ່ຮັບຜິດຊອບໃນການກຳນົດແຜນງານ ລບຕ, ການໂອ້ລົມວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແລະ ກຸ່ມວິຊາການຂະແໜງການ ລບຕ ຮ່ວມກັບອົງການ ລບຕ ອື່ນໆທີ່ເຮັດວຽກຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈຶ່ງແມ່ນສິ່ງທີ່ອາດເປັນປະໂຫຍດ.

⇨ ເຖິງແມ່ນວ່າທີ່ປຶກສາຈະສອບຖາມກ່ຽວກັບການຊ່ວຍເຫຼືອ ທີ່ສະໜອງໃຫ້ແກ່ຜູ້ດູແລສະມາຊິກຄອບຄົວທີ່ພິການກໍ່ຕາມ, ແຕ່ກໍ່ບໍ່ປາກົດວ່າມີໃຜຮູ້ກ່ຽວກັບການຊ່ວຍເຫຼືອອັນໃດເລີຍ. ຜູ້ຖືກສຳພາດຫຼາຍຄົນກ່າວວ່າບັນຫາດັ່ງກ່າວບໍ່ໄດ້ນຳມາປຶກສາຫາລືກັນໃນຂະແໜງການເລີຍ. ເຖິງຢ່າງໃດກໍ່ຕາມ, ມີການພົບຫຼັກຖານອັນຊັດເຈນໃນຂັ້ນບ້ານທີ່ຊີ້ໃຫ້ເຫັນວ່າລັດໄດ້ສະໜອງເງິນອຸດໜູນງານສົບໃຫ້.

### ຂໍ້ແນະນຳທີ 22

⇨ ເຊີນ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເຂົ້າມາເປັນສະມາຊິກທີ່ຫ້າວຫັນຂອງ ທີມປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ແລະ ສ້າງບົດສະເໜີກ່ຽວກັບຄວາມສອດຄ່ອງຂອງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍກັບ ດຳລັດຂອງ ສປປ ລາວ ວ່າດ້ວຍສິດທິຂອງຄົນພິການ.

ກຸ່ມຊົນເຜົ່າ
ລັດຖະທຳມະນູນປີ 2015[9] ຮັບປະກັນໃຫ້ປະຊາຊົນລາວທຸກຄົນໄດ້ຮັບສິດທິ ແລະ ພັນທະຂັ້ນພື້ນຖານໃນການພັດທະນາປະເທດ. ມາດຕາທີ 8 ກ່າວວ່າ:

> ລັດຈະສຸມໃສ່ຄວາມພະຍາຍາມໃນການສ້າງນະໂຍບາຍ ກ່ຽວກັບການສົ່ງເສີມຄວາມກົມກຽວ ແລະ ຄວາມສະເໝີພາບໃຫ້ແກ່ທຸກກຸ່ມຊົນເຜົ່າ ໂດຍແນໃສ່ໃຫ້ພວກເຂົາມີສິດໄດ້ຮັບການປົກປ້ອງ, ມີສິດຮັກສາ ແລະ ສົ່ງເສີມທຳນຽມ ແລະ ວັດທະນະທຳຊົນເຜົ່າຂອງພວກເຂົາເອງ ແລະ ຂອງຊາດ. ຫ້າມທຸກການກະທຳທີ່ເປັນການແບ່ງແຍກ ແລະ ການຈຳແນກກຸ່ມຊົນເຜົ່າຕ່າງໆ... ລະບົບເສດຖະກິດຂອງປະເທດ ແມ່ນມີຈຸດປະສົງແນໃສ່ຍົກສູງມາດຕະຖານການດຳລົງຊີວິດ, ທັງທາງດ້ານວັດຖຸ ແລະ ຈິດໃຈ, ໃຫ້ແກ່ປະຊາຊົນລາວບັນດາເຜົ່າ, ລວມທັງສະພາບແວດລ້ອມ ແລະ ໂອກາດຕ່າງໆໃຫ້ພວກເຂົາໄດ້ໂອ້ລົມກັນກ່ຽວກັບຂໍ້ກັງວົນໃຈຕ່າງໆ. ຈຳເປັນຈະຕ້ອງໄດ້ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ ການຈັດຕັ້ງປະຕິບັດກົດໝາຍ ແລະ ນະໂຍບາຍຕ່າງໆ.[10]

**ຜົນໄດ້ຮັບ**
ເຫັນໄດ້ຊັດເຈນຜ່ານປະຕິບັດການພາກສະໜາມວ່າ ມີຄວາມແຕກໂຕນໃຫຍ່ຫຼວງເກີດຂຶ້ນພາຍໃນ ແລະ ລະຫວ່າງກຸ່ມຊົນເຜົ່າຕ່າງໆ, ໂດຍສະເພາະແມ່ຍິງ. ສິ່ງເຫຼົ່ານີ້ແມ່ນໄດ້ຖືກສະທ້ອນໄວ້ໃນຄວາມທຸກຍາກ ແລະ ລະດັບການສຶກສາ, ແລະ ອັດຕາການບໍ່ຮູ້ໜັງສື. ສຳລັບຊົນເຜົ່າບາງກຸ່ມແລ້ວ, ການທີ່ບໍ່ສາມາດເວົ້າພາສາລາວໄດ້ ສົ່ງຜົນກະທົບໃຫຍ່ຫຼວງຕໍ່ຄວາມສາມາດຂອງພວກເຂົາ ໃນການເຂົ້າເຖິງຂໍ້ມູນ. ບັນຫາເຫຼົ່ານີ້ແມ່ນໄດ້ຖືກນຳໄປໂອ້ລົມກັນຢ່າງຮອບດ້ານ ໃນບັນດາຂົງເຂດຕ່າງໆດັ່ງຕໍ່ໄປນີ້ ເພື່ອຈຸດປະສົງຂອງການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ.

ຂໍ້ຊີ້ນຳວ່າດ້ວຍການປຶກສາຫາລືກັບກຸ່ມຊົນເຜົ່າ (2012) ໄດ້ຮຽກຮ້ອງໃຫ້ມີການສົ່ງເສີມການມີສ່ວນຮ່ວມຂອງທຸກກຸ່ມຊົນເຜົ່າ ເຂົ້າໃນບັນດາໂຄງການ ແລະ ວຽກງານພັດທະນາ ທີ່ອາດເປັນປະໂຫຍດ ແລະ ສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງພວກເຂົາ.

## 6.2 ຫຼັກປະຕິບັດ, ການມີສ່ວນຮ່ວມ, ອຳນາດ ແລະ ການຕັດສິນໃຈ

ແມ່ຍິງຕ້ອງປະເຊີນກັບຄວາມບໍ່ສະເໝີພາບອັນໃຫຍ່ຫຼວງໃນດ້ານການມີສ່ວນຮ່ວມທາງການເມືອງ, ການນຳພາ ແລະ ການຕັດສິນໃຈໃນ ສປປ ລາວ, ນັບຕັ້ງແຕ່ລະດັບຊາດໄປຈົນເຖິງຂັ້ນບ້ານ. ບັນຖັດຖານທາງສັງຄົມ ແລະ ວັດທະນະທຳມັກຈະສົ່ງເສີມຜູ້ຊາຍຫຼາຍກວ່າ, ເຮັດໃຫ້ແມ່ຍິງມີໂອກາດທາງການສຶກສາໜ້ອຍກວ່າ ແລະ ຕ້ອງໄດ້ເຮັດວຽກໜັກກວ່າ, ທັງຍັງກີດຂວາງການມີສ່ວນຮ່ວມຂອງພວກເຂົາເຂົ້າໃນຕຳແໜ່ງຂັ້ນນຳພາ ແລະ ໂຄງຮ່າງຂອງລັດຖະບານ. ຄົນພິການຍັງໄດ້ຮັບຜົນກະທົບແບບບໍ່ສົມສ່ວນຈາກການຈຳແນກ ແລະ ການຂາດຄວາມສາມາດໃນການເຂົ້າເຖິງການຈ້າງງານ ແລະ ສະຖານທີ່ເຮັດວຽກ.[11] ເມື່ອພິຈາລະນາບັນຫາຄວາມແຕກໂຕນລະຫວ່າງຍິງຊາຍໃນຂະບວນການຕັດສິນໃຈໃຫ້ແກ່ ແລະ ພາຍໃນກຸ່ມຊົນເຜົ່າ, ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ ຖືວ່າແມ່ຍິງຈາກກຸ່ມຊົນເຜົ່າລາວ-ໄຕ ແລະ ຂະມຸ ຢູ່ໃນຈຸດທີ່ດີໃນການຄວບຄຸມຊັບພະຍາກອນຄົວເຮືອນ. ແມ່ຍິງຊົນເຜົ່າມົ້ງມີອຳນາດການຕັດສິນໃຈ ແລະ ອຳນາດໃນການຄຸ້ມຄອງຊັບພະຍາກອນຄົວເຮືອນທີ່ຕ່ຳກວ່າໝູ່.[12] ທຸກແຫຼ່ງເຫຼົ່ານີ້ທີ່ກໍ່ໃຫ້ເກີດຄວາມບໍ່ສະເໝີພາບຕໍ່ແມ່ຍິງ, ຄົນພິການ ແລະ ກຸ່ມຊົນເຜົ່າແມ່ນສາມາດເຫັນໄດ້ຢ່າງຊັດເຈນ ຜ່ານການສົນທະນາກຸ່ມສະເພາະ ແລະ ການສຳພາດຄົວເຮືອນ.

ແມ່ຍິງກວມ 21.95 ສ່ວນຮ້ອຍຂອງ ສະພາແຫ່ງຊາດ ໃນປີ 2021, ເຊິ່ງເປັນລະດັບທີ່ຕ່ຳທີ່ສຸດນັບຕັ້ງແຕ່ມີການເກັບກຳຂໍ້ມູນມາແຕ່ປີ 2002.[13] ແມ່ຍິງຖືຄອງຕຳແໜ່ງໃນຂັ້ນລັດຖະມົນຕີ ແລະ ທຽບເທົ່າໃນຂັ້ນແຂວງໃນອັດຕາ 23.2 ສ່ວນຮ້ອຍ, 33.02 ສ່ວນຮ້ອຍໃນຂັ້ນເມືອງ ແລະ 9.21 ສ່ວນຮ້ອຍໃນຂັ້ນບ້ານ.

ຂໍ້ມູນທີ່ໄດ້ຮັບຈາກບົດລາຍງານ ປພຍ ຂອງລັດຖະບານ ຊີ້ໃຫ້ເຫັນວ່າແມ່ຍິງກວມ 32.2 ສ່ວນຮ້ອຍຂອງທີ່ນັ່ງໃນລັດຖະບານທ້ອງຖິ່ນທີ່ໄດ້ຮັບການເລືອກຕັ້ງ. ຂັ້ນແຂວງແມ່ນມີອັດຕາດັ່ງກ່າວສູງກວ່າ. ໃນຂັ້ນເມືອງ, ເມືອງຄຳເກີດມີອັດຕາ 58 ສ່ວນຮ້ອຍ, ໂດຍແມ່ຍິງມີຈຳນວນທີ່ຫຼາຍກວ່າຜູ້ຊາຍ, ແລະ ເມືອງພູກູດ ມີອັດຕາ 30.7 ສ່ວນຮ້ອຍ, ໃກ້ຄຽງກັບຄ່າສະເລ່ຍ. ທີ່ປຶກສາບໍ່ສາມາດເກັບກຳຂໍ້ມູນສຳລັບ ບ້ານທອງແທນ ແລະ ບ້ານປີວ ໄດ້. ໃນບ້ານປຸ່ງໝັ້ນ, ແມ່ນຍິງກວມ 20 ສ່ວນຮ້ອຍໃນທີ່ນັ່ງໃນທ້ອງຖິ່ນ; ບ້ານໂພນສະອາດ ບໍ່ມີແມ່ຍິງໃນຕຳແໜ່ງວຽກເຫຼົ່ານີ້. ຈຶ່ງເຮັດໃຫ້ບໍ່ສາມາດສະຫຼຸບຜົນໄດ້ ຈາກກຸ່ມຕົວຢ່າງຂະໜາດນ້ອຍນີ້.

ອຳນາດການປົກຄອງສ່ວນໃຫຍ່ບໍ່ສາມາດສະໜອງຂໍ້ມູນກ່ຽວກັບກຸ່ມຊົນເຜົ່າ ຫຼື ຄວາມພິການໄດ້. ແຕ່ຄະນະກຳມະການແຂວງຊຽງຂວາງ ເມື່ອສົມທຽບໃສ່ກັບຄະນະກຳມະການຂອງແຂວງອື່ນໆແລ້ວນັ້ນ ແມ່ນຖືເປັນຂໍ້ຍົກເວັ້ນ ຍ້ອນມັນສາມາດສະແດງໃຫ້ເຫັນເຖິງຫຼັກປະຕິບັດທີ່ດີ ໃນການສົ່ງເສີມໃຫ້ມີຜູ້ແທນທີ່ຫຼາກຫຼາຍໃນຂະບວນການຕັດສິນໃຈ. ໂດຍລວມແລ້ວ, ຂໍ້ມູນຂັ້ນແຂວງໄດ້ສະແດງໃຫ້ເຫັນວ່າແມ່ຍິງ, ກຸ່ມຊົນເຜົ່າ ແລະ ຄົນພິການບໍ່ມີຜູ້ຕາງໜ້າໃນຕຳແໜ່ງວຽກຂັ້ນຕັດສິນໃຈ ທີ່ສົມສ່ວນກັບອັດຕາສ່ວນຂອງປະຊາກອນ (ຕາຕະລາງທີ 2).



**ຕາຕະລາງທີ 2: ອັດຕາສ່ວນຂອງແມ່ຍິງ, ກຸ່ມຊົນເຜົ່າ ແລະ ຜູ້ພິການໃນຕຳແໜ່ງວຽກຂັ້ນນຳພາໃນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານໃນພື້ນທີ່ທີ່ທີມງານຄົ້ນຄວ້າລົງຢ້ຽມຢາມ**

| | ຜູ້ຊາຍ | ແມ່ຍິງ | ລວມ (ຍິງຊາຍ) | ພະນັກງານກຸ່ມຊົນເຜົ່າ | ຄົນພິການ |
|---|---|---|---|---|---|
| ແຂວງບໍລິຄຳໄຊ | 5 | 3 | 8 | ບຮ | 0 |
| ໃນກຸ່ມແມ່ຍິງທັງໝົດ, ໜຶ່ງໃນນັ້ນແມ່ນຮອງຫົວໜ້າ ແລະ 2 ຄົນແມ່ນພະນັກງານວິຊາການໃນຂະແໜງການສະຫວັດດີການສັງຄົມ; ຫົວໜ່ວຍ ລບຕ ແມ່ນຫົວໜ່ວຍທີ່ມີຜູ້ຊາຍຄົນດຽວ. | | | | | |
| ເມືອງຄຳເກີດ | 18 | 25 | 43 | 0 | 0 |
| ມີສອງຄົນເຮັດວຽກໃນຂະແໜງການ ລບຕ, ຜູ້ຊາຍ 1 ແລະ ແມ່ຍິງ 1. ແມ່ຍິງດັ່ງກ່າວຊ່ວຍຜູ້ຊາຍໃນການຕິດຕໍ່ສື່ສານ ແລະ ການຂຽນຈົດໝາຍເຖິງອຳນາດການປົກຄອງຕ່າງໆ.<br>ຈາກຈຳນວນການນຳ 5 ຄົນຂອງບ້ານ, ບໍ່ມີແມ່ຍິງເລີຍ.<br>ແມ່ຍິງ 10 ຄົນຈາກ LWU ຖືຄອງຕຳແໜ່ງໃນອຳນາດການປົກຄອງຂັ້ນທ້ອງຖິ່ນ. | | | | | |
| ບ້ານທອງແສນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |
| ບ້ານໂພນສະອາດ | 5 | 0 | 5 | ບຮ | ບຮ |
| ເຈົ້າໜ້າທີ່ 5 ຄົນລວມທັງນາຍບ້ານ, ຄູ, ກອງຫຼອນບ້ານ ແລະ ພະນັກງານ 2 ຄົນຈາກ LYU.<br>ບໍ່ມີສະມາຊິກຈາກ LWU ເຂົ້າຮ່ວມກອງປະຊຸມໃນຖານະຂອງຜູ້ຕາງໜ້າຄະນະກຳມະການບ້ານ, ແຕ່ໃນເວລາທີ່ສະມາຊິກຂອງ LWU ມາທີ່ບ້ານດັ່ງກ່າວ, ພວກເຂົາກໍ່ຈະຖືກຂໍໃຫ້ເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການ. | | | | | |
| ແຂວງຊຽງຂວາງ | 19 | 25 | 44 | 2 (ຜູ້ຊາຍເຜົ່າຂະມຸ 1 ຄົນ, ຜູ້ຊາຍເຜົ່າມົ້ງ 1 ຄົນ) | ແມ່ຍິງ 1 ຄົນ |
| ເມືອງພູກູດ | 13 | 4 | 17 | ບຮ | 0 |
| ກຸ່ມແມ່ຍິງປະກອບມີຜູ້ຕາງໜ້າຈາກ LWU ແລະ ສະມາຊິກອີກ 3 ຄົນຈາກ LWU.<br>ກຸ່ມຜູ້ຊາຍປະກອບມີກອງຫຼອນບ້ານ, ຜູ້ຈັດການ ແລະ ນາຍບ້ານ 3 ຄົນ. | | | | | |
| ບ້ານປຸ່ງໝັ້ນ | 4 | 1 (LWU) | 5 | | 0 |
| ບ້ານປີວ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ |

ໝາຍເຫດ: ບຮ = ບໍ່ຮູ້.

ບົດລາຍງານຂະແໜງການ ລບຕ ປະຈຳປີ 2021 ຂອງ NRA ສະໜອງຂໍ້ມູນກ່ຽວກັບພະນັກງານຈາກໜ່ວຍປະຕິບັດການເກັບກູ້ ລບຕ (ຕາຕະລາງທີ 3).

**ຕາຕະລາງທີ 3: ພະນັກງານຈາກໜ່ວຍປະຕິບັດການເກັບກູ້ ລບຕ ໃນ ສປປ ລາວ, 2021**

| | ພະນັກງານບໍລິຫານ | | | | ພະນັກງານວິຊາການ/ປະຕິບັດງານ | | | | |
|---|---|---|---|---|---|---|---|---|---|
| ອົງການຈັດຕັ້ງ | ລະດັບຊາດ | | ສາກົນ | | ລະດັບຊາດ | | ສາກົນ | | ທັງໝົດ |
| | ຜູ້ຊາຍ | ແມ່ຍິງ | ຜູ້ຊາຍ | ແມ່ຍິງ | ຜູ້ຊາຍ | ແມ່ຍິງ | ຜູ້ຊາຍ | ແມ່ຍິງ | |
| NRA | 30 | 16 | 0 | 0 | 16 | 3 | 0 | 0 | 65 |
| ກອງຮ້ອຍ 58 | 2 | 24 | 0 | 0 | 158 | 4 | 0 | 0 | 188 |
| ອົງການເຮໂລ | 42 | 32 | 1 | 1 | 459 | 491 | 5 | 0 | 1,031 |
| ໂຄງການ UXO Lao | 118 | 74 | 11 | 0 | 918 | 344 | 1 | 0 | 1,466 |
| ອົງການແມັກ | 45 | 29 | 2 | 3 | 740 | 419 | 8 | 0 | 1,246 |

ແຫຼ່ງຂໍ້ມູນ: NRA 2021, ໜ້າທີ 17.

ຍົກເວັ້ນ ອົງການເຮໂລ, ຂະແໜງການ ລບຕ ໃນ ສປປ ລາວ ໂດຍລວມມີການຈ້າງງານແມ່ຍິງຕ່ຳກວ່າຜູ້ຊາຍ, ເຊັ່ນດຽວກັນກັບແນວໂນ້ມໃນທົ່ວໂລກ. ຈາກການຄົ້ນຄວ້າໜ່ວຍປະຕິບັດການເກັບກູ້ ລບຕ 12 ແຫ່ງໃນປີ 2019 ພົບວ່າຜູ້ຊາຍກວມອັດຕາສ່ວນ 80.21 ສ່ວນຮ້ອຍ ແລະ ແມ່ນຍິງກວມ 19.79 ສ່ວນຮ້ອຍໃນທົ່ວຂະແໜງການ.[14] ອີງຕາມການວິເຄາະແບບສົມທຽບໃສ່ກັບຂໍ້ມູນສາກົນ, ອັດຕາການຈ້າງງານແມ່ຍິງໃນຂະແໜງການ ລບຕ ໃນ ສປປ ລາວ ແມ່ນສູງກວ່າ (ຕາຕະລາງທີ 4).

**ຕາຕະລາງທີ 4: ການຈ້າງງານໃນອົງການທີ່ສະໜອງວຽກງານ EORE ແລະ ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍທີ່ພົບປະໃນລະຫວ່າງ ປະຕິບັດການພາກສະໜາມ**

| ຊື່ຂອງອົງການຈັດຕັ້ງ | ແມ່ຍິງ | ຜູ້ຊາຍ | ລວມ (ຍິງຊາຍ) | ກຸ່ມຊົນເຜົ່າ | ຄົນພິການ |
|---|---|---|---|---|---|
| ສູນການແພດ ແລະ ຟື້ນຟູໜ້າທີ່ການ | 71 | 89 | 160 | ບຮ | 18 |
| ສະມາຄົມຄົນພິການແຫ່ງຊາດລາວ | 3 | 5 | 8 | 1 | 1 |
| ອົງການ HI | 43 | 71 | 114 | ບຮ | ບຮ |
| ອົງການການສຶກສາໂລກ | 16 | 14 | 30 | 0 | 2 |
| ສະມາຄົມແມ່ຍິງຄົນພິການແຫ່ງຊາດລາວ | 27 | 7 | 34 | 3 | 30 |
| ສູນກາງຊາວໜຸ່ມລາວ | 95 | 97 | 192 | ບຮ | ບຮ |
| ສະມາຄົມພັດທະນາຄົນພິການແຂວງຊຽງຂວາງ | 3 | 8 | 11 | 3 | 9 |

ໝາຍເຫດ: ບຮ = ບໍ່ຮູ້.

ຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ສະໜອງວຽກງານ EORE ມີອັດຕາການຈ້າງງານແມ່ຍິງທີ່ສູງກວ່າຂະແໜງການ ລບຕ ໂດຍລວມ. ສິ່ງນີ້ແມ່ນສອດຄ່ອງກັບແນວໂນ້ມສາກົນ ໃນການຈ້າງງານແມ່ຍິງເຂົ້າໃນອົງກອນທີ່ເຮັດໜ້າທີ່ເບິ່ງແຍງ ແລະ ໃຫ້ການຊ່ວຍເຫຼືອທາງການຕໍ່ຄົນພິການ ແລະ ສະໜອງບໍລິການທາງສັງຄົມ. ຂໍ້ມູນຂອງ ອົງການແຮງງານສາກົນ (ILO) ສະແດງໃຫ້ເຫັນວ່າ 19.3 ສ່ວນຮ້ອຍຂອງແມ່ຍິງໃນຂອບເຂດທົ່ວໂລກ ແມ່ນຖືກຈ້າງງານເຂົ້າໃນວຽກງານເບິ່ງແຍງດູແລ.[15]

ຍັງຄົງມີອັດຕາຄວາມຫຼາກຫຼາຍຕ່ຳດ້ານກຸ່ມຊົນເຜົ່າ ແລະ ຄວາມພິການພາຍໃນຂະແໜງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ອັດຕາການຈ້າງງານຄົນພິການໂດຍລວມທີ່ຕ່ຳ ໃນບັນດາໜ່ວຍໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍນັ້ນ ແມ່ນສິ່ງທີ່ໜ້າປະຫຼາດໃຈ. CMR ແລະ LDWDC ຖືເປັນຂໍ້ຍົກເວັ້ນ. ການເພີ່ມທະວີການມີສ່ວນຮ່ວມ ແລະ ການຈ້າງງານແມ່ຍິງ, ຄົນພິການ ແລະ ກຸ່ມຊົນເຜົ່າຕ່າງໆ ແມ່ນໄດ້ຖືກກ່າວໄວ້ສະເພາະພາຍໃຕ້ເອກະສານແຜນງານຂອງ ອົງການ UNDP:

> ຍ້ອນຊ່ອງຫວ່າງດ້ານບົດບາດຍິງຊາຍໃນ ສປປ ລາວ, ຈຶ່ງຈະມີການຊອກຄົ້ນໂອກາດໃນການເພີ່ມທະວີການມີສ່ວນຮ່ວມຂອງແມ່ຍິງ ເຂົ້າໃນວຽກງານທີ່ກ່ຽວຂ້ອງກັບ ລບຕ. ນອກຈາກນັ້ນ, ໂຄງການດັ່ງກ່າວຍັງຈະເຮັດວຽກ ເພື່ອຮັບປະກັນການມີສ່ວນຮ່ວມລະຫວ່າງຍິງຊາຍ, ກຸ່ມຊົນເຜົ່າ ແລະ ຄົນພິການເຂົ້າໃນການວາງແຜນ ແລະ ການປຶກສາຫາລືກັບຊຸມຊົນ.

ບັນຫາຕົ້ນຕໍໃນການຈ້າງງານແມ່ຍິງ ແມ່ນອັດຕາການມີສ່ວນຮ່ວມຂອງແມ່ຍິງ ໃນທີມງານເກັບກູ້ລະເບີດ. GMAP ໄດ້ດຳເນີນການສຳຫຼວດທົ່ວໂລກ ເຖິງຜົນກະທົບຂອງທີມປະສົມໃນສົກປີ 2012-2013, ທີ່ພົບວ່າການລວມເອົາແມ່ຍິງເຂົ້າໃນຂະແໜງການນັ້ນ ຊ່ວຍສ້າງປະໂຫຍດຢ່າງຫຼວງຫຼາຍ. ຜູ້ຈັດການທ້ອງຖິ່ນ ແລະ ພະນັກງານພາກສະໜາມຈາກການຄົ້ນຄວ້ານີ້ໄດ້ຊີ້ໃຫ້ເຫັນວ່າ ຜູ້ຊາຍຈະພະຍາຍາມແຂ່ງຂັນເພີ່ມຂຶ້ນ ເນື່ອງຈາກບໍ່ຢາກເກີດຄວາມຮູ້ສຶກວ່າປະຕິບັດວຽກໄດ້ດ້ອຍກວ່າແມ່ຍິງ. ດັ່ງນັ້ນ, ການມີສ່ວນຮ່ວມຂອງແມ່ຍິງໃນທີມ ຈຶ່ງຊ່ວຍສ້າງສົມດຸນໃຫ້ແກ່ທີມ, ແລະ ແມ່ຍິງຍັງຊ່ວຍເພີ່ມທະວີປະສິດທິພາບ, ແຕ່ບໍ່ແມ່ນປະສິດທິຜົນ.[16] ໂດຍສອດຄ່ອງກັບຜົນໄດ້ຮັບນີ້, ການປະເມີນບົດບາດຍິງຊາຍຂອງ GICHD ທີ່ນຳສະເໜີຕໍ່ NRA ໃນປີ 2014 ໄດ້ສ້າງຂໍ້ແນະນຳເພື່ອຮັບປະກັນໃຫ້: "ທີມສຳຫຼວດມີຄວາມດຸ່ນດ່ຽງລະຫວ່າງຍິງຊາຍ, ຍ້ອນການມີຢູ່ຂອງແມ່ຍິງໃນທີມ ຈະຊ່ວຍຊຸກຍູ້ໃຫ້ມີແມ່ຍິງທີ່ໄດ້ຮັບຜົນກະທົບ ກ້າສະແດງອອກຫຼາຍຂຶ້ນ ແລະ ລາຍງານບັນຫາການຕົກຄ້າງຂອງລະເບີດ, ຜົນກະທົບ, ການນຳໃຊ້ເນື້ອທີ່ດິນ ແລະ [ຄວາມຮູ້, ທັດສະນະຄະຕິ ແລະ ຫຼັກປະຕິບັດ]."

ການຄົ້ນຄວ້າຄັ້ງນີ້ໄດ້ລະບຸບັນຫາສຳຄັນ ທີ່ແມ່ຍິງພຽງຄົນດຽວຕ້ອງປະເຊີນໃນທີມທີ່ມີແຕ່ຊາຍລ້ວນ. ຂໍ້ແນະນຳຂ້າງເທິງນີ້ທີ່ໃຫ້ທີມປະສົມຕ້ອງມີຄວາມດຸ່ນດ່ຽງລະຫວ່າງຍິງຊາຍ ແມ່ນບັນຫາທີ່ສຳຄັນເພື່ອຊ່ວຍໃຫ້ແມ່ຍິງ ມີໝູ່ທີ່ເປັນແມ່ຍິງຄົນອື່ນນຳໃນທີມ, ເຊິ່ງຈະຊ່ວຍຍົກສູງຄວາມປອດໄພໃຫ້ແກ່ພວກເຂົາ, ໂດຍສະເພາະການພັກເຊົາໃນເຂດບ້ານທີ່ໄປເຄື່ອນໄຫວວຽກ. ເອກະສານແຜນງານຂອງ ອົງການ UNDP ກ່າວວ່າ:

> 1 ຫຼື 2 ທີມເກັບກູ້ລະເບີດເພື່ອມະນຸດຊະທຳຂອງກອງທັບ ຈະຖືກຈັດສັນໃຫ້ເປັນທີມຍິງລ້ວນພາຍໃນປີ 2025 ເພື່ອໃຫ້ແມ່ຍິງໄດ້ມີບົດບາດການນຳພາຫຼາຍຂຶ້ນ, ແລະ ກອງຮ້ອຍ 58 ຈະຮັກສາອັດຕາສ່ວນຮ້ອຍຂອງພະນັກງານຍິງພາຍໃນ 20 ທີມໃຫ້ຢູ່ໃນລະດັບຢ່າງໜ້ອຍ 15 ສ່ວນຮ້ອຍ ເພື່ອຮັບປະກັນການມີສ່ວນຮ່ວມຂອງແມ່ຍິງໃນຂະແໜງການ.

ໃນປີ 1995, ສະພາເສດຖະກິດ ແລະ ສັງຄົມຂອງ ອົງການ ສປຊ ໄດ້ຮັບຮອງເອົາຄາດໝາຍ 30 ສ່ວນຮ້ອຍຂອງແມ່ຍິງ ທີ່ມີສ່ວນຮ່ວມເຂົ້າໃນຂັ້ນຕອນການຕັດສິນໃຈ. ການຄົ້ນຄວ້າໄດ້ສະແດງໃຫ້ເຫັນວ່າອັດຕາ 30 ສ່ວນຮ້ອຍດັ່ງກ່າວນັ້ນ ແມ່ນມີຄວາມຈຳເປັນເພື່ອຮັບປະກັນໃຫ້ແມ່ຍິງ ຖືກຮັບຟັງສຽງຂອງພວກເຂົາໃນສະພາ ແລະ ເພື່ອໃຫ້ສະຖານທີ່ເຮັດວຽກໄດ້ຮັບການປັບປຸງດີຂຶ້ນ. ຖ້າຕ່ຳກວ່າ 30 ສ່ວນຮ້ອຍ, ແມ່ຍິງກໍ່ຈະຂາດການສະໜັບສະໜູນ ໃນການລິເລີ່ມການປ່ຽນແປງ ຫຼື ການອ້າງສິດທິຕ່າງໆ.[17] ໂດຍສອດຄ່ອງກັບທິດສະດີມວນວິກິດນີ້, ແທນທີ່ຈະເປັນການສ້າງທີມງານຍິງລ້ວນ 1 ຫຼື 2 ທີມຂຶ້ນມາ, ຄົງຈະດີກວ່າຖ້າເພີ່ມອັດຕາສ່ວນຂອງແມ່ຍິງ ໃນທີມງານເກັບກູ້ລະເບີດແບບປະສົມຂຶ້ນເປັນ 30-35 ສ່ວນຮ້ອຍພາຍໃນປີ 2025.



ພາຍໃຕ້ ເປົ້າໝາຍຈຸດສຸມທີ 5 ຂອງ NPAGE ຄັ້ງທີ 4, ຄາດໝາຍຂອງລັດຖະບານແມ່ນເພື່ອ ເພີ່ມທະວີອັດຕາສ່ວນຂອງແມ່ຍິງໃນຕຳແໜ່ງງານຕັດສິນໃຈ ແລະ ບໍລິຫານພາຍໃນລັດຖະບານ ແລະ ອົງການຈັດຕັ້ງມະຫາຊົນຂຶ້ນ 25-30 ສ່ວນຮ້ອຍໂດຍສະເລ່ຍ. ທີ່ປຶກສາບໍ່ສາມາດເກັບກຳຂໍ້ມູນອັນສະເພາະ ກ່ຽວກັບຕຳແໜ່ງບໍລິຫານທີ່ຖືຄອງໂດຍແມ່ຍິງໄດ້ໃນ NRA, ກອງຮ້ອຍ 58 ຫຼື ໂຄງການ UXO Lao. ການຄົ້ນຄວ້າຄັ້ງນີ້ຊີ້ໃຫ້ເຫັນວ່າ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍພາຍໃນອົງກອນ ຈະຕ້ອງເຂົ້າເຖິງຂໍ້ມູນນີ້ໄດ້ ທັງຍັງຕ້ອງສາມາດໂຮມເອົາຄາດໝາຍໃນການຮັບປະກັນໃຫ້ແມ່ຍິງກວມ 25-30 ສ່ວນຮ້ອຍໃນຕຳແໜ່ງບໍລິຫານພາຍໃນປີ 2025.

ສປປ ລາວ ແມ່ນປະເທດທີ່ມີຄວາມຫຼາກຫຼາຍດ້ານກຸ່ມຊົນເຜົ່າໃນ ພາກພື້ນອາຊີຕາເວັນອອກສຽງໃຕ້. ປະຊາຊົນລາວປະກອບມີ 4 ກຸ່ມຊົນເຜົ່າ-ກຸ່ມພາສາຕົ້ນຕໍຄື: ລາວ-ລຸ່ມ (62.4 ສ່ວນຮ້ອຍ), ມອນ-ຂະແມ (23.7 ສ່ວນຮ້ອຍ), ມົ້ງ-ອິວມ້ຽນ (9.7 ສ່ວນຮ້ອຍ) ແລະ ຈີນ-ຕິເບດ (2.9 ສ່ວນຮ້ອຍ).[18] ອັດຕາສ່ວນຂອງກຸ່ມຊົນເຜົ່າ ທີ່ຖືກຈ້າງງານເຂົ້າໃນຂະແໜງການ ລບຕ ແມ່ນຂ້ອນຂ້າງຕ່ຳຫຼາຍ ແລະ ບໍ່ສະທ້ອນໃຫ້ເຫັນເຖິງອັດຕາສ່ວນດ້ານປະຊາກອນຂອງຄົນກຸ່ມນີ້ເລີຍ. ອຳນາດການປົກຄອງຕ່າງໆມີທັກສະທາງພາສາທີ່ຈຳກັດ ໃນການປຶກສາຫາລືກັບກຸ່ມຊົນເຜົ່າທ້ອງຖິ່ນ ຜູ້ທີ່ບໍ່ເວົ້າພາສາລາວ. ນອກຈາກນັ້ນ, ເຖິງແມ່ນວ່າ ການສຳຫຼວດປະຊາກອນລາວປະຈຳປີ 2015 ໄດ້ປະເມີນໄວ້ວ່າມີປະຊາຊົນໃນ ສປປ ລາວ ພຽງແຕ່ 2.8 ສ່ວນຮ້ອຍເທົ່ານັ້ນທີ່ພິການ, ແຕ່ອີງຕາມຂໍ້ມູນໃນທົ່ວໂລກຈາກການສຳຫຼວດຂອງອົງການອະນາໄມໂລກ ພັດປະເມີນໄວ້ທີ່ 15 ສ່ວນຮ້ອຍ. ແມ້ກະທັ້ງໃນອັດຕາສ່ວນ 2.8 ສ່ວນຮ້ອຍ, ຄົນພິການກໍ່ຍັງຄົງມີອັດຕາສ່ວນການຈ້າງງານພາຍໃນຂະແໜງການທີ່ຕ່ຳຢູ່ຄືເກົ່າ.[19]

ໄດ້ມີການແນະນຳໃຫ້ເພີ່ມທະວີອັດຕາສ່ວນການຈ້າງງານກຸ່ມຊົນເຜົ່າຕ່າງໆ ແລະ ຄົນພິການໃນຂະແໜງການ ລບຕ ຂຶ້ນເປັນຢ່າງໜ້ອຍ 10 ສ່ວນຮ້ອຍສຳລັບກຸ່ມຊົນເຜົ່າ ແລະ 5 ສ່ວນຮ້ອຍສຳລັບກຸ່ມຄົນພິການ. ສິ່ງນີ້ແມ່ນສອດຄ່ອງກັບມາດຕາທີ 27 ຂອງ ດຳລັດວ່າດ້ວຍສິດທິຂອງຄົນພິການ[20] ລວມໄປເຖິງຂໍ້ຊີ້ນຳສຳລັບຂະແໜງການ ລບຕ ເພື່ອຈ້າງງານຜູ້ລອດຊີວິດຈາກອຸບັດເຫດ ລບຕ. ຍ້ອນໃນປັດຈຸບັນຍັງບໍ່ທັນມີຂໍ້ມູນການຈ້າງງານກ່ຽວກັບກຸ່ມຊົນເຜົ່າ ແລະ ຄົນພິການເທື່ອ, ຈຶ່ງຈຳເປັນຈະຕ້ອງໄດ້ມອບໝາຍໃຫ້ພາກສ່ວນບຸກຄະລາກອນ ເກັບກຳຂໍ້ມູນນີ້ໃນບ່ອນທີ່ເປັນໄປໄດ້ (ໃນຂະນະດຽວກັນກໍ່ເຄົາລົບຕໍ່ທາງເລືອກ ແລະ ຕ້ອງຂໍຄວາມເຫັນດີຈາກພະນັກງານທີ່ກ່ຽວຂ້ອງ ກ່ອນເປີດເຜີຍຂໍ້ມູນດັ່ງກ່າວ).

**ຂໍ້ແນະນຳທີ 23**

- ⇨ ດັດແກ້ບັນດາຄາດໝາຍໃນໂຄງການ ລບຕ ຂອງລັດຖະບານ ແລະ ອົງການ UNDP ຈາກການເພີ່ມທະວີຈຳນວນທີມເກັບກູ້ລະເບີດຍິງລ້ວນ ມາເປັນການເພີ່ມທະວີອັດຕາສ່ວນຂອງແມ່ຍິງໃນທີມປະສົມຂຶ້ນລະຫວ່າງ 30-35 ສ່ວນຮ້ອຍພາຍໃນປີ 2025 ແທນ. ລວມເອົາໂຄຕ້າການຈ້າງງານຢ່າງໜ້ອຍ 10 ສ່ວນຮ້ອຍສຳລັບກຸ່ມຊົນເຜົ່າ ແລະ 5 ສ່ວນຮ້ອຍສຳລັບຄົນພິການ.

## ການຕັດສິນໃຈໃນລະດັບຄົວເຮືອນ

ການວິເຄາະບົດບາດຍິງຊາຍແບບຮີບດ່ວນ ໂດຍ ອົງການ CARE ໃນປີ 2020 ໄດ້ຢັ້ງຢືນຄວາມແຕກໂຕນລະຫວ່າງຍິງຊາຍໃນຂະບວນການຕັດສິນໃຈບັນຫາໃນຄົວເຮືອນ. ເຖິງແມ່ນວ່າແມ່ຍິງຈະມີແນວໂນ້ມເປັນຜູ້ຄວບຄຸມການຕັດສິນໃຈທາງການເງິນ ທີ່ກ່ຽວຂ້ອງກັບວຽກງານພາຍໃນຄົວເຮືອນກໍ່ຕາມ, ເຊັ່ນ: ການຊື້ຫາອາຫານ, ໃນບາງກໍລະນີ, ໂດຍສະເພາະໃນບັນດາຊຸມຊົນກຸ່ມຊົນເຜົ່າ, ການຕັດສິນໃຈເຫຼົ່ານີ້ແມ່ນເຮັດຮ່ວມກັນລະຫວ່າງຍິງຊາຍ. ການຄົ້ນຄວ້າພົບວ່າ, ໂດຍທົ່ວໄປແລ້ວ, ຜູ້ຊາຍຈະເປັນຜູ້ຕັດສິນໃຈກ່ຽວກັບການຫາເງິນ, ການວາງແຜນການເງິນ, ການລ້ຽງສັດ, ການກໍ່ສ້າງ ແລະ ການແກ້ໄຂບັນຫາ, ໂດຍບາງຄັ້ງກໍ່ເປັນການຕັດສິນໃຈຮ່ວມກັນ, ເຖິງແມ່ນວ່າການສຳພາດພາຍໃຕ້ການຄົ້ນຄວ້າຂອງ ອົງການ CARE ຈະຊີ້ໃຫ້ເຫັນວ່າຜູ້ເປັນຜົວນັ້ນ ມີອຳນາດຕັດສິນໃຈສູງສຸດໃນຄົວເຮືອນກໍ່ຕາມ.[21] ການຄົ້ນຄວ້າດັ່ງກ່າວຍັງພົບວ່າແມ່ຍິງມັກຈະມີບົດບາດການຕັດສິນໃຈໃນລະດັບທີ່ຕ່ຳກວ່າພາຍໃນກຸ່ມຊົນເຜົ່າຕ່າງໆ (ເຖິງແມ່ນວ່າບັນຫານີ້ອາດຈະແຕກຕ່າງກັນໄປຕາມແຕ່ລະກຸ່ມກໍ່ຕາມ).

ຍ້ອນວຽກງານພາກສະໜາມສຳລັບການຄົ້ນຄວ້າ ລບຕ ແມ່ນເນັ້ນໜັກໃສ່ ແຂວງຊຽງຂວາງ ແລະ ແຂວງບໍລິຄຳໄຊເປັນຫຼັກ, ຜົນໄດ້ຮັບຕ່າງໆຈຶ່ງສາມາດນຳໄປສົມທຽບໃສ່ກັບຊົນເຜົ່າລາວ-ລຸ່ມ, ຂະມຸ ແລະ ມົ້ງໄດ້ເທົ່ານັ້ນ. ວຽກງານພາກສະໜາມໄດ້ຢັ້ງຢືນວ່າແມ່ຍິງເຜົ່າມົ້ງ ແລະ ຂະມຸມີບົດບາດການຕັດສິນໃຈໃນຄົວເຮືອນທີ່ຕ່ຳກວ່າ, ໂດຍສະທ້ອນໃຫ້ເຫັນຜ່ານອັດຕາການເຂົ້າຮ່ວມກອງປະຊຸມຂັ້ນຊຸມຊົນໃນລະດັບຕ່ຳ. ແມ່ຍິງເຜົ່າມົ້ງກ່າວວ່າເວລາທີ່ຜູ້ຊາຍກັບມາຈາກກອງປະຊຸມ, ພວກເຂົາບໍ່ໄດ້ແບ່ງປັນຂໍ້ມູນໃຫ້ແມ່ຍິງຊາບ. ສິ່ງນີ້ແມ່ນໄດ້ຮັບການຢັ້ງຢືນຈາກຜູ້ຊາຍກຸ່ມໜຶ່ງ ທີ່ອະທິບາຍວ່າພວກເຂົາມີແຕ່ລົມບັນຫາກອງປະຊຸມກັບໝູ່ ແລະ ເພື່ອນບ້ານທີ່ເປັນຜູ້ຊາຍດ້ວຍກັນເທົ່ານັ້ນ ເວລາທີ່ພວກເຂົາມານັ່ງກິນດື່ມກັນໃນຕອນແລງ. ການຄົ້ນຄວ້າຂອງ ອົງການ CARE ຍັງພົບອີກວ່າບໍ່ຄ່ອຍມີການຕິດຕາມຜົນເພື່ອຮັບປະກັນໃຫ້ຂໍ້ມູນຂ່າວສານທີ່ສະໜອງໃຫ້ຜູ້ຊາຍນັ້ນ

ຖືກແບ່ງປັນໃຫ້ແກ່ສະມາຊິກຄົນອື່ນໆໃນຄອບຄົວນຳອີກ.[22]

## 6.3 ການເຂົ້າເຖິງ ແລະ ການຄວບຄຸມ ຊັບພະຍາກອນ

ຂອບເຂດນີ້ອ້າງອີງເຖິງຄວາມສາມາດໃນການຄວບຄຸມ ຫຼື ຄວາມສາມາດໃນການເຂົ້າເຖິງຊັບພະຍາກອນ. ມັນລວມມີການເຂົ້າເຖິງຊັບພະຍາກອນ, ລາຍຮັບ, ບໍລິການ, ຂໍ້ມູນຂ່າວສານ ແລະ ສິດທິປະໂຫຍດຕ່າງໆ.[23]

ການວິເຄາະບົດບາດຍິງຊາຍແບບຮີບດ່ວນໃນໄລຍະການແຜ່ລະບາດຂອງ ພະຍາດໂຄວິດ-19 ໃນ ສປປ ລາວ ໂດຍ ອົງການ CARE ໃນປີ 2020 ໄດ້ລະບຸວ່າແມ່ຍິງມີ, ກຸ່ມຊົນເຜົ່າ, ຄົນພິການ, ແລະ ຄົນທຸກ ແລ ຊຸມຊົນຕ່າງໆໃນເຂດຊົນນະບົດນັ້ນ ມີຄວາມສາມາດໃນການເຂົ້າເຖິງບໍລິການຕ່າງໆຕ່ຳກວ່າໝູ່. ຄົວເຮືອນທີ່ມີແມ່ຍິງເປັນຫົວໜ້າຄອບຄົວ ຕ້ອງໄດ້ພົບພໍ້ກັບບັນຫາທ້າທາຍເພີ່ມເຕີມ, ເຊັ່ນ: ມີຄວາມສາມາດໃນການເຂົ້າເຖິງການຈ້າງງານໃນຂະແໜງການປະມົງ ແລະ ປ່າໄມ້ທີ່ຕ່ຳກວ່າ, ແລະ ມີຄວາມສາມາດໃນການຂໍກູ້ຢືມເງິນຕ່ຳກວ່າ, ໂດຍສະເພາະເງິນກູ້ຢືມທາງການ ເພື່ອລົງທຶນເຂົ້າໃນການສ້າງລາຍຮັບເພີ່ມເຕີມ.[24]

ການວິເຄາະບົດບາດຍິງຊາຍລະດັບຊາດ ຂອງ ອົງການພັດທະນາສາກົນແຫ່ງ ສ. ອາເມລິກາ (USAID) ໄດ້ລະບຸອຸປະສັກຕ່າງໆ ທີ່ກີດຂວາງການເຂົ້າເຖິງບໍລິການປິ່ນປົວສຸຂະພາບ, ໂດຍສະເພາະຕໍ່ແມ່ຍິງ ແລະ ເດັກຍິງທີ່ຕ້ອງປະເຊີນກັບບັນຫາທ້າທາຍທີ່ກ່ຽວຂ້ອງກັບການຂົນສົ່ງ, ພາສາ, ລະດັບການສຶກສາທີ່ຕ່ຳກວ່າ ແລະ ອັດຕາການບໍ່ຮູ້ໜັງສືທີ່ສູງກວ່າ. ແມ່ຍິງ, ໄວໜຸ່ມ, ຄົນພິການ ແລະ ກຸ່ມຄົນຫຼາກຫຼາຍທາງເພດ ຂາດຄວາມສາມາດໃນການເຂົ້າເຖິງບໍລິການຕ່າງໆ ທີ່ສະໜອງໃຫ້ໃນຊຸມຊົນ. ບົດລາຍງານດັ່ງກ່າວຍັງພົບວ່າ ຂັ້ນຕອນການຮັບພະນັກງານເຂົ້າໃນບໍລິການເຫຼົ່ານີ້ທີ່ຂາດຄວາມຫຼາກຫຼາຍ ໄດ້ສົ່ງຜົນກະທົບຕໍ່ຄວາມສາມາດຂອງກຸ່ມຊົນເຜົ່າ, ໂດຍສະເພາະແມ່ຍິງ, ໃນການເຂົ້າເຖິງບໍລິການເຫຼົ່ານັ້ນ.[25]

### ຜົນໄດ້ຮັບ

⇨ ຕະຫຼອດໄລຍະຂອງປະຕິບັດການພາກສະໜາມ, ເຫັນໄດ້ຊັດເຈນວ່າຄູ່ຮ່ວມງານ ນຳໃຊ້ພຽງແຕ່ 2 ຍຸດທະສາດອັນສະເພາະ ເພື່ອແກ້ໄຂ ຫຼື ປັບປຸງຄວາມສາມາດໃນການເຂົ້າເຖິງຂໍ້ມູນຂ່າວສານຂອງແມ່ຍິງ, ກຸ່ມຊົນເຜົ່າ ຫຼື ຄົນພິການ. ອັນດັບທຳອິດແມ່ນການນຳໃຊ້ພາສາຊົນເຜົ່າ ເຂົ້າໃນກອງປະຊຸມປຶກສາຫາລືບາງອັນ (ຍັງຂາດຄວາມສະໝ່ຳສະເໝີ, ແລະ ຈຳເປັນຕ້ອງໄດ້ມີການຮັບພະນັກງານເພີ່ມຜູ້ທີ່ສາມາດເວົ້າພາສາຊົນເຜົ່າໄດ້, ໂດຍສະເພາະໃນຊຸມຊົນບ່ອນທີ່ມີກຸ່ມຊົນເຜົ່າທີ່ບໍ່ເວົ້າພາສາລາວ). ອັນດັບທີສອງ, ອຳນາດການປົກຄອງ ແລະ ໜ່ວຍປະຕິບັດວຽກງານເກັບກູ້ ລບຕ ຮັບຮູ້ເປັນກ່ຽວກັບຄວາມຕ້ອງການດ້ານການປູກຝັງຕາມລະດູການ, ດັ່ງນັ້ນຈຶ່ງໄດ້ພະຍາຍາມຫຼີກເວັ້ນການຈັດກອງປະຊຸມໃນໄລຍະເວລາເຫຼົ່ານີ້, ແລະ ມັກຈະຈັດຕາຕະລາງກອງປະຊຸມປຶກສາຫາລືໄວ້ໃນຕອນແລງ ເວລາທີ່ແມ່ຍິງແຕ່ງກິນຮຽບຮ້ອຍແລ້ວ ແລະ ຜູ້ຊາຍເກັບມາແຕ່ເຮັດໄຮ່ເຮັດນາແລ້ວ.

ໃນປີ 2009, ພະນັກງານ 2 ຄົນຈາກ ໂຄງການລົບລ້າງລະເບີດຂອງສະວິດເພື່ອເກືອດຫ້າມລະເບີດຝັງດິນ ໄດ້ຮ່ວມກັນຂຽນບົດຄົ້ນຄວ້າ, ບົດບາດຍິງຊາຍ ແລະ ການອານຸຍາດນຳໃຊ້ທີ່ດິນ: ໜ້າທີ່ຮັບຜິດຊອບຂອງຊຸມຊົນເກັບກູ້ລະເບີດ. ເອກະສານດັ່ງກ່າວເນັ້ນໜັກໃສ່ບັນຫາການເຂົ້າເຖິງ ແລະ ການຄວບຄຸມກຳມະສິດທີ່ດິນສຳລັບແມ່ຍິງ ແລະ ຂະບວນການຕັດສິນໃຈ. ມັນໄດ້ພົບວ່າເນື່ອງຈາກລະດັບການສຶກສາທີ່ຕ່ຳ ແລະ ດ້ວຍບັນຖັດຖານທາງສັງຄົມທີ່ສ້າງຂໍ້ຈຳກັດໃຫ້ແກ່ພວກເຂົາ, ແມ່ຍິງໃນຫຼາຍປະເທດຈຶ່ງບໍ່ສາມາດເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບຂັ້ນຕອນການອານຸຍາດນຳໃຊ້ທີ່ດິນ ຫຼື ສິດທິທາງກົດໝາຍອື່ນໆ. ເອກະສານສະບັບນີ້ໄດ້ຍົກໃຫ້ເຫັນເຖິງບັນຫາຮີບດ່ວນ ກ່ຽວກັບສິ່ງທີ່ຈະເກີດຂຶ້ນກັບເນື້ອທີ່ດິນ ໃນກໍລະນີທີ່ຜູ້ເປັນຜົວເສຍຊີວິດຈາກ ລບຕ ແລະ ຊື່ຂອງຜູ້ເປັນເມຍບໍ່ປາກົດຢູ່ໃນເອກະສານກຳມະສິດທີ່ດິນ. ມັນຍັງຮຽກຮ້ອງໃຫ້ໜ່ວຍປະຕິບັດການເກັບກູ້ ລບຕ ພິຈາລະນາຜົນກະທົບຂອງການອານຸຍາດນຳໃຊ້ທີ່ດິນ ຕໍ່ຄວາມສາມາດຂອງແມ່ຍິງໃນການເຂົ້າເຖິງ ແລະ ຄວບຄຸມເນື້ອທີ່ດິນ. ເອກະສານດັ່ງກ່າວຍັງສະໜັບສະໜູນຂັ້ນຕອນການປຶກສາຫາລືທີ່ເທົ່າທຽມ ແລະ ມີຄວາມໝາຍ; ການຝຶກອົບຮົມດ້ານບົດບາດຍິງຊາຍໃຫ້ແກ່ພະນັກງານ; ຂັ້ນຕອນການສືບຄົ້ນຂໍ້ມູນທີ່ຈຳເປັນສຳລັບແມ່ຍິງ ເພື່ອໃຫ້ໄດ້ຮັບໃບຕາດິນ ຫຼື ໃບຢັ້ງຢືນຫຼັງການເກັບກູ້ລະເບີດ; ແລະ ເງື່ອນໄຂການຕອບສະໜອງຕໍ່ບົດບາດຍິງຊາຍຂອງຂັ້ນຕອນການອານຸຍາດນຳໃຊ້ທີ່ດິນ.[26]

### ຜົນໄດ້ຮັບ

ທີມປະຕິບັດການພາກສະໜາມບໍ່ສາມາດເຂົ້າເຖິງຂໍ້ມູນທີ່ຊັດເຈນກ່ຽວກັບຂັ້ນຕອນການອານຸຍາດນຳໃຊ້ທີ່ດິນ. ແມ່ຍິງທີ່ໄດ້ຮັບການສຳພາດ ບໍ່ມີຄວາມຮູ້ກ່ຽວກັບຂັ້ນຕອນເຫຼົ່ານີ້ ຍ້ອນມີພຽງຜູ້ຊາຍໃນຄົວເຮືອນທີ່ມີສ່ວນຮ່ວມ ແລະ ຜູ້ທີ່ມີຊື່ໃນໃບຕາດິນເທົ່ານັ້ນ. ໃນແຂວງບໍລິຄຳໄຊ, ອຳນາດການປົກຄອງທ້ອງຖິ່ນບໍ່ໄດ້ສະໜອງໃຫ້ແມ້ກະທັ້ງໃບອານຸຍາດນຳໃຊ້ທີ່ດິນ.

ມາດຕະຖານ IMAS ວ່າດ້ວຍການອານຸຍາດນຳໃຊ້ທີ່ດິນ (07.11) ກ່າວວ່າ:

- ການມີສ່ວນຮ່ວມຂອງທ້ອງຖິ່ນ, ລວມທັງຜູ້ຊາຍ ແລະ ແມ່ຍິງ, ຈະຕ້ອງຖືກໂຮມເຂົ້າໃນໄລຍະຕົ້ນຕໍຂອງຂັ້ນຕອນການອານຸຍາດນຳໃຊ້ທີ່ດິນ ເພື່ອຮັບປະກັນໃຫ້ເນື້ອທີ່ດິນນັ້ນໄດ້ຖືກນຳໃຊ້ພາຍຫຼັງການມອບຮັບ.[27]
- "ທຸກຄວາມພະຍາຍາມທີ່ສົມເຫດສົມຜົນ" ອາດລວມມີ, ແຕ່ບໍ່ຈຳກັດພຽງເທົ່ານີ້: ການລະບຸ ແລະ ການເຂົ້າເຖິງທຸກແຫຼ່ງຂໍ້ມູນທີ່ກ່ຽວຂ້ອງ, ລວມທັງແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ, ລວມໄປເຖິງສື່ຂໍ້ມູນທາງປະຫວັດສາດ ແລະ ການວິເຄາະຕ່າງໆ.[28]
- ອົງກອນທີ່ດຳເນີນການສຳຫຼວດ ຫຼື ວຽກງານເກັບກູ້ລະເບີດນັ້ນຈະຕ້ອງ: ປຶກສາຫາລືຢ່າງໃກ້ຊິດກັບບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ ລວມທັງແມ່ຍິງ ກ່ຽວກັບທຸກການຕັດສິນໃຈໃນການຍົກເລີກ, ຫຼຸດຜ່ອນ ຫຼື ມອບຮັບເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວ.[29]

ບໍ່ມີຂໍ້ມູນອ້າງອີງເຖິງແມ່ຍິງພາຍໃຕ້ ມາດຕະຖານແຫ່ງຊາດວ່າດ້ວຍການເກັບກູ້ ລບຕ/ລະເບີດຝັງດິນໃນ ສປປ ລາວ.

### ຂໍ້ແນະນຳທີ 24

⇨ ການທົບທວນຄືນ ມາດຕະຖານແຫ່ງຊາດວ່າດ້ວຍການເກັບກູ້ ລບຕ/ລະເບີດຝັງດິນໃນ ສປປ ລາວ ຈະຕ້ອງລວມເອົາຂໍ້ມູນອ້າງອີງເຖິງແມ່ຍິງທີ່ໄດ້ຮັບການປຶກສາຫາລືນຳ ເພື່ອໃຫ້ເຂົ້າເຖິງຄວາມຮູ້ຂອງພວກເຂົາ ແລະ ເພື່ອໃຫ້ສາມາດໂຮມເຂົ້າໄວ້ໃນໄລຍະຕົ້ນຕໍ ຂອງຂັ້ນຕອນການອານຸຍາດນຳໃຊ້ທີ່ດິນ ແລະ ໃນທຸກການຕັດສິນໃຈທີ່ກ່ຽວຂ້ອງກັບ ເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວ.

### ການເຂົ້າເຖິງກອງປະຊຸມປຶກສາຫາລື ແລະ ວຽກງານ EORE ຂັ້ນຊຸມຊົນ

ຜູ້ຂຽນເບິ່ງເຫັນບັນຫາໃນການເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບຂັ້ນຕອນ ລບຕ, ການມີສ່ວນຮ່ວມເຂົ້າໃນການເກັບກຳຂໍ້ມູນ ແລະ ການປຶກສາຫາລືຢ່າງກວ້າງຂວາງກັບຊຸມຊົນ, ລວມທັງວຽກງານ EORE, ເຊິ່ງເປັນໜຶ່ງໃນຂົງເຂດທີ່ມີຄວາມສຳຄັນ ແລະ ຄວນເນັ້ນໜັກເປັນທີ່ສຸດ. ການບໍ່ຮັບປະກັນສະເໝີພາບໃນການເຂົ້າເຖິງຂໍ້ມູນ EORE ຈະເຮັດໃຫ້ແມ່ຍິງ, ຄົນພິການ ແລະ ກຸ່ມຊົນເຜົ່າມີຄວາມສ່ຽງສູງຂຶ້ນ, ໂດຍສະເພາະຜູ້ທີ່ທຸກຍາກ, ແລະ ຜູ້ທີ່ບໍ່ເວົ້າພາສາທີ່ໃຊ້ສື່ສານກັນຕົ້ນຕໍ ແລະຫຼື ຜູ້ທີ່ບໍ່ຮູ້ໜັງສື.

ຜູ້ຖືກສຳພາດໄດ້ປະກອບ 2 ຄຳເຫັນໃນລະຫວ່າງປະຕິບັດການພາກສະໜາມ ໂດຍເນັ້ນໜັກໃສ່ບັນຫາຕົ້ນຕໍກ່ຽວກັບການເຂົ້າເຖິງ. ເຈົ້າໜ້າທີ່ໃນ ນະຄອນຫຼວງວຽງຈັນໄດ້ຊີ້ໃຫ້ເຫັນວ່າຂັ້ນຕອນແມ່ນການທີ່ອຳນາດການປົກຄອງທ້ອງຖິ່ນ ຕິດຕໍ່ກັບຫົວໜ້າຄອບຄົວໃນແຕ່ລະຄົວເຮືອນເພື່ອເຊີນພວກເຂົາມາເຂົ້າຮ່ວມກອງປະຊຸມ. ສິ່ງນີ້ແມ່ນໄດ້ຮັບການພິສູດໂດຍຜ່ານບົດຄົ້ນຄວ້າທີ່ດຳເນີນການຮ່ວມກັບ ອົງການເກັບກູ້ລະເບີດສາກົນທີ່ບໍ່ສັງກັດລັດ (INGO). ບົດຄົ້ນຄວ້າດັ່ງກ່າວຖືກເຜີຍແຜ່ໃນປີ 2018, ມັນໄດ້ພົບວ່າ "ຂັ້ນຕອນດັ່ງກ່າວຈະຕ້ອງຜ່ານອຳນາດການປົກຄອງທ້ອງຖິ່ນ, ແລະ ຕໍ່ມາອຳນາດການປົກຄອງທ້ອງຖິ່ນນັ້ນກໍ່ຈະຕິດຕໍ່ກັບພຽງແຕ່ຫົວໜ້າຄອບຄົວເທົ່ານັ້ນ, ເຊິ່ງສ່ວນໃຫຍ່ແມ່ນຜູ້ຊາຍ."[30] ມັນຍັງຊີ້ໃຫ້ເຫັນອີກວ່າແມ່ຍິງຊົນເຜົ່າ ບໍ່ເດີນທາງໄປໄກຈາກບ້ານຂອງຕົນເອງ, ດັ່ງນັ້ນ, ຂໍ້ມູນທີ່ພວກເຂົາມີຈຶ່ງບໍ່ມີປະໂຫຍດຫຍັງເລີຍຕໍ່ການເກັບກຳຂໍ້ມູນ. ຕົວຢ່າງທັງສອງນີ້ສະແດງໃຫ້ເຫັນເຖິງຮູບແບບການຈຳແນກແບບບົ່ມຊ້ອນ ທີ່ຈຳກັດຄວາມສາມາດຂອງແມ່ຍິງໃນການເຂົ້າເຖິງ ແລະ ສະໜອງຂໍ້ມູນທີ່ສຳຄັນ.

ໃນຫຼາຍໆກໍລະນີ, ທີມປະຕິບັດການພາກສະໜາມ ແມ່ນໄດ້ຮັບແຈ້ງວ່າບໍ່ມີການຈັດກອງປະຊຸມປຶກສາຫາລືຊຸມຊົນເລີຍ ໃນໄລຍະດຳເນີນປະຕິບັດການເກັບກູ້ລະເບີດ. ໃນຫຼາກໆກໍລະນີ, ທັງອຳນາດການປົກຄອງທ້ອງຖິ່ນ ແລະ ລູກບ້ານກ່າວວ່າແຈ້ງການກ່ຽວກັບກອງປະຊຸມນັ້ນ ມີແຕ່ໄດ້ຮັບການເຜີຍແຜ່ຜ່ານທາງໂທລະໂຄ່ງເປັນພາສາລາວ-ລຸ່ມເທົ່ານັ້ນ. ສິ່ງນີ້ໄດ້ສ້າງຂໍ້ຈຳກັດການເຂົ້າເຖິງໃຫ້ແກ່ທຸກຄົນຜູ້ທີ່ບໍ່ເວົ້າພາສາດັ່ງກ່າວ ລວມໄປເຖິງຜູ້ທີ່ຢູ່ໃນພື້ນທີ່ທີ່ບໍ່ໄດ້ຍິນສຽງປະກາດຈາກໂທລະໂຄ່ງ.

ບົດສຳຫຼວດພະນັກງານຊາຍ ແລະ ຍິງໃນປີ 2016 ໃນຂົງເຂດວຽກງານຕ່າງໆພາຍໃຕ້ ອົງການເກັບກູ້ລະເບີດສາກົນທີ່ບໍ່ສັງກັດລັດ 2 ແຫ່ງໄດ້ເນັ້ນໜັກໃສ່ຄວາມກວມລວມທາງສັງຄົມ ແລະ ຊຸມຊົນດ້ອຍໂອກາດ. ມັນໄດ້ຄົ້ນພົບອຸປະສັກໃນສະຖານທີ່ເຮັດວຽກສຳລັບພະນັກງານທ້ອງຖິ່ນທີ່ກີດຂວາງແມ່ຍິງຊົນເຜົ່າໃນພື້ນທີ່ຫ່າງໄກສອກຫຼີກໃນການມີສ່ວນຮ່ວມ ອັນເນື່ອງມາຈາກຄວາມແຕກຕ່າງທາງພາສາ ແລະ ວັດທະນະທຳ. ໃນດ້ານບວກ, ບົດຄົ້ນຄວ້າດັ່ງກ່າວໄດ້ຊີ້ໃຫ້ເຫັນວ່າ ການວ່າຈ້າງກຸ່ມຊົນເຜົ່າທີ່ຫຼາກຫຼາຍ ແລະ ພະນັກງານຍິງໄດດ້ຊ່ວຍພັດທະນາທັກສະ, ຄວາມຮູ້ ແລະ ຄວາມຕື່ນໂຕໃຫ້ແກ່ພະນັກງານທັງໝົດກ່ຽວກັບບັນຫາຕ່າງໆໃນຊຸມຊົນ, ທັງຍັງຊ່ວຍຫຼຸດຜ່ອນອັກຄະຕິ (ເບິ່ງຕື່ມ ຮູບທີ 5 ແລະ ຂໍ້ແນະນຳທີ 23 ວ່າດ້ວຍຄາດໝາຍສຳລັບການເສີມຂະຫຍາຍການຈ້າງງານປະຊາຊົນຈາກກຸ່ມຊົນເຜົ່າຕ່າງໆ.)[31]

**ຮູບທີ 5: ຜົນສະທ້ອນທີ່ເກີດຂຶ້ນຈາກການເຮັດວຽກຮ່ວມກັບເພື່ອນຮ່ວມງານທີ່ມາຈາກກຸ່ມຊົນເຜົ່າຕ່າງໆ[32]**




ຜົນໄດ້ຮັບອື່ນໆຈາກປະຕິບັດການພາກສະໜາມ ທີ່ກ່ຽວຂ້ອງກັບບັນຫາການເຂົ້າເຖິງແມ່ນ:

- ຜູ້ຊາຍສາມາດເຂົ້າເຖິງຂໍ້ມູນຂ່າວສານກ່ຽວກັບຂັ້ນຕອນ ລບຕ ໄດ້ຫຼາຍກວ່າ ຈາກການເຂົ້າຮ່ວມກອງປະຊຸມ ແລະ ຊຸດຝຶກອົບຮົມ EORE ຕ່າງໆໃນຂັ້ນຊຸມຊົນ, ລວມທັງຄວາມຮູ້ກ່ຽວກັບຂັ້ນຕອນທາງການໃນການຮ້ອງຂໍການເກັບກູ້ລະເບີດ. ທຸກກຸ່ມມີຄວາມສາມາດໃນການເຂົ້າເຖິງຂໍ້ມູນທີ່ຕໍ່າ, ແຕ່ແມ່ຍິງ ແລະ ກຸ່ມຊົນເຜົ່າແມ່ນກຸ່ມທີ່ຕໍ່າກວ່າໝູ່.
- ທັງຜູ້ຊາຍ ແລະ ແມ່ຍິງບໍ່ມີໃຜເຂົ້າໃຈວິທີໃນການເຂົ້າເຖິງ ການສະໜັບສະໜູນທາງການແພດຫຼັງເກີດອຸບັດເຫດ ລບຕ ຫຼື ຮູ້ໝາຍເລກໂທລະສັບສາຍດ່ວນ. ໃນປັດຈຸບັນ, ສາຍດ່ວນແມ່ນໃຫ້ບໍລິການພຽງແຕ່ໃນພາສາລາວເທົ່ານັ້ນ, ເຊິ່ງເປັນຂໍ້ຈຳກັດໃຫ້ແກ່ທຸກຄົນ ຜູ້ທີ່ບໍ່ເວົ້າພາສາທີ່ໃຊ້ສື່ສານຕົ້ນຕໍ (ໂດຍສະເພາະແມ່ຍິງກຸ່ມຊົນເຜົ່າ).
- ຜູ້ເຂົ້າຮ່ວມສ່ວນໃຫຍ່ບໍ່ເຄີຍເຂົ້າຮ່ວມຝຶກອົບຮົມ EORE ມາກ່ອນ. ສຳລັບກຸ່ມທີ່ເຄີຍ, ຜູ້ຊາຍແມ່ນກວມອັດຕາສ່ວນສູງກວ່າ.
- ເຖິງແມ່ນວ່າວຽກງານ EORE ໄດ້ນຳໃຊ້ຊ່ອງທາງທີ່ດີໃນການສື່ສານ, ເຊັ່ນ: ວີດີໂອ ແລະ ຮູບພາບ, ແລ້ວກໍ່ຕາມ, ປ້າຍໂຄສະນາຍັງຄົງບໍ່ສາມາດເຂົ້າເຖິງ ກຸ່ມປະຊາຊົນທີ່ບໍ່ຮູ້ໜັງສືໄດ້. (ໝາຍເຫດ: ຜົນໄດ້ຮັບນີ້ແມ່ນອີງໃສ່ການສັງເກດການແຜ່ນປ້າຍຂອງທີ່ປຶກສາເອງ, ບໍ່ແມ່ນຜ່ານການປຶກສາຫາລືພາກສະໜາມ ຍ້ອນບໍ່ພົບເຫັນແຜນປ້າຍໂຄສະນາວຽກງານ EORE ເລີຍໃນບ້ານຄາພື້ນທີ່ທີ່ລົງຢ້ຽມຢາມ.)
- ບໍ່ມີລູກບ້ານຄົນໃດທີ່ພົບປະກັນໃນລະຫວ່າງປະຕິບັດການພາກສະໜາມ ຮັບຮູ້ກ່ຽວກັບຂັ້ນຕອນການລາຍງານອຸບັດເຫດ ແລະ ການເຂົ້າເຖິງບໍລະການປິ່ນປົວສຸຂະພາບຜ່ານ NRA ຫຼື ມີຄວາມຮູ້ກ່ຽວກັບສາຍດ່ວນ. ຜູ້ລອດຊີວິດຈາກອຸບັດເຫດ ລບຕ ບໍ່ມີໃຜຮັບຮູ້ກ່ຽວກັບບໍລິການສຸຂະພາບ ນອກເໜືອໄປຈາກບໍລິການຂອງຫ້ອງປົວພະຍາດ ແລະ ໂຮງໝໍແຂວງ. ເຖິງແມ່ນວ່າຈະມີຜູ້ໃຫ້ບໍລິການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຫຼາຍແຫ່ງໃນ ແຂວງຊຽງຂວາງ ກໍ່ຕາມ, ລວມທັງ COPE, ທີ່ເດີນທາງໄປຍັງບ້ານຕ່າງໆ, ແຕ່ບໍ່ປາກົດວ່າມີຜູ້ພິການຊາຍຄົນໃດທີ່ໄດ້ຮັບການສຳພາດນັ້ນ ຮູ້ກ່ຽວກັບບໍລິການເຫຼົ່ານີ້ເລີຍ.

ບັນຫາທີ່ລະບຸໄດ້ນີ້ບໍ່ແມ່ນບັນຫາໃໝ່ເລີຍ. ພວກມັນແມ່ນບັນຫາທີ່ຮີບດ່ວນ ທີ່ຖືກຍົກຂຶ້ນມາໃນການປະເມີນບົດບາດຍິງຊາຍ ແລະ ລບຕ ທີ່ຖືກຕີພິມໃນປີ 2008 ທັງຍັງຖືກສະທ້ອນໃຫ້ເຫັນວ່າເປັນໜຶ່ງໃນບັນຫາ ທີ່ຕ້ອງໄດ້ຮັບການແກ້ໄຂພາຍໃຕ້ຂໍ້ແນະນຳຕ່າງໆ ຈາກການປະເມີນຜົນຂອງ GMAP ໃນປີ 2014. ນອກຈາກນັ້ນ, ການລວມເອົາສະມາຊິກທຸກຄົນໃນຊຸມຊົນ (ໂດຍສະເພາະຜູ້ທີ່ມີຄວາມສ່ຽງ ແລະ ເຂົ້າເຖິງຍາກທີ່ສຸດ) ແມ່ນເງື່ອນໄຂໜຶ່ງທີ່ຖືກລະບຸໄວ້ໃນ IMAS (ຕາມລາຍການຂ້າງລຸ່ມນີ້). ບໍ່ພົບວ່າຈຳເປັນຕ້ອງໄດ້ມີຂໍ້ແນະນຳເພີ່ມເຕີມ ຈາກການຄົ້ນຄວ້າຄັ້ງນີ້ຕໍ່ບັນຫາເຫຼົ່ານີ້ຍ້ອນມາດຕະຖານ ແລະ ຂໍ້ແນະນຳເຫຼົ່ານີ້ແມ່ນຍັງຄົງມີຄວາມກ່ຽວພັນ ແລະ ສຳຄັນໃນປັດຈຸບັນເຊັ່ນດຽວກັນກັບເມື່ອ 15 ປີກ່ອນ.

- ຂັ້ນຕອນການເກັບກຳ ແລະ ວິເຄາະຂໍ້ມູນຈະຕ້ອງມີຄວາມໂປ່ງໃສ. ຂັ້ນຕອນການປະເມີນຄວາມຕ້ອງການຈະຕ້ອງຮັບປະກັນການມີສ່ວນຮ່ວມຂອງແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍຈາກຊຸມຊົນທີ່ມີຄວາມສ່ຽງ ຕ້ອງລວມເອົາກຸ່ມທີ່ດ້ອຍໂອກາດ ແລະ ກຸ່ມສ່ຽງທີ່ເຂົ້າເຖິງຍາກເຂົ້ານຳ (ຄົນພິການ, ຜູ້ສູງອາຍຸ, ເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນ, ແລະ ອື່ນໆ) (IMAS 12.10 ສະບັບທີສອງ 2020 5.2).
- ຍຸດທະສາດອັນສະເພາະ ຈະຕ້ອງໄດ້ຖືກຈັດຕັ້ງປະຕິບັດເພື່ອຮັບປະກັນໃຫ້ ແມ່ຍິງ ແລະ ຊົນກຸ່ມນ້ອຍຕ່າງໆ ຖືກລວມເຂົ້າໃນຂະບວນການເກັບກຳຂໍ້ມູນ ແລະ ກອງປະຊຸມກຳນົດບຸລິມະສິດ, ແລະ ເພື່ອໃຫ້ສຽງຂອງພວກເຂົາຖືກຮັບຟັງ... ຈະຕ້ອງສຸມໃສ່ 'ທຸກຄວາມພະຍາຍາມທີ່ສົມເຫດສົມຜົນ' (IMAS 8.10) ຕໍ່ທີມສຳຫຼວດ ເພື່ອໃຫ້ພວກເຂົາສາມາດເຂົ້າເຖິງທຸກແຫຼ່ງຂໍ້ມູນໄດ້ (ຜູ້ຊາຍ, ເດັກຊາຍ, ເດັກຍິງ, ແມ່ຍິງ) ໃນຊຸມຊົນທີ່ໄດ້ຮັບຜົນກະທົບ (GMAP 2014).
- ທີມຊຸມຊົນຈະຕ້ອງມີ ຄວາມດຸ່ນດ່ຽງລະຫວ່າງຍິງຊາຍ ເພື່ອຊ່ວຍໃຫ້ເກີດການປະຕິສຳພັນກັນລະຫວ່າງຊາຍ-ຊາຍ ແລະ ຍິງ-ຍິງ ແລະ ໄດ້ຮັບການຝຶກອົບຮົມສ້າງຄວາມຕື່ນໂຕດ້ານບົດບາດຍິງຊາຍ ແລະ ເຕັກນິກອັນສະເພາະໃນການສຳພາດແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍທີ່ມາຈາກກຸ່ມພາສາທີ່ແຕກຕ່າງກັນ (ອົງການແມັກ 2008: 4.1.1).
- ການຮັບປະກັນໃຫ້ທີມສຳຫຼວດແບບບໍ່ແມ່ນວິຊາການ ມີຄວາມດຸ່ນດ່ຽງລະຫວ່າງຍິງຊາຍນັ້ນແມ່ນວຽກງານທີ່ມີຄວາມສຳຄັນເປັນພິເສດ, ຍ້ອນການມີສ່ວນຮ່ວມຂອງແມ່ຍິງໃນທີມງານຕ່າງໆນັ້ນ ຈະຊ່ວຍຊຸກຍູ້ໃຫ້ແມ່ຍິງທີ່ໄດ້ຮັບຜົນກະທົບກ້າສະແດງອອກ ແລະ ລາຍງານບັນຫາລະເບີດທີ່ຍັງຕົກຄ້າງຢູ່, ຜົນກະທົບ, ການນຳໃຊ້ທີ່ດິນ ແລະ KAP (GMAP 2014).
- ພະນັກງານຊາຍ ແລະ ຍິງຈາກໜ່ວຍງານເກັບກູ້ ລບຕ ຈະຕ້ອງລົງຢ້ຽມຢາມບ້ານເພື່ອແຈ້ງໃຫ້ແຕ່ລະຄົວເຮືອນຊາບດ້ວຍໂຕເອງ ກ່ຽວກັບກອງປະຊຸມທີ່ຈະຈັດຂຶ້ນ ພ້ອມທັງຫົວຂໍ້ ແລະ ເຜີຍແຜ່ທຸກຂໍ້ມູນຂ້າວສານທີ່ກ່ຽວຂ້ອງກັບ ຈຸດປະສົງຂອງກອງປະຊຸມດັ່ງກ່າວ ແລະ ເຮັດວຽກຮ່ວມກັບສະມາຊິກໃນຊຸມຊົນເພື່ອ ກຳນົດເວລາ ແລະ ວັນນັດປະຊຸມທີ່ດີທີ່ສຸດ. ການສົ່ງຈົດໝາຍໃຫ້ນາຍບ້ານ ບໍ່ຖືເປັນການແຈ້ງການລ່ວງໜ້າກ່ຽວກັບຫົວຂໍ້ກອງປະຊຸມທີ່ພຽງພໍ ຍ້ອນມີໂອກາດທີ່ຂໍ້ມູນດັ່ງກ່າວຈະບໍ່ໄດ້ຮັບການເຜີຍແຜ່ຢ່າງຄົບຖ້ວນ ເມື່ອຖືກສະໜອງຜ່ານວິທີການນີ້... ໃນທຸກກອງປະຊຸມຂັ້ນຊຸມຊົນ ຈະຕ້ອງມີ ກຸ່ມແມ່ຍິງ, ກຸ່ມຜູ້ຊາຍ, ແມ່ຍິງສ່ວນບຸກຄົນ, ຫຼື ຜູ້ຊາຍສ່ວນບຸກຄົນ ເຂົ້າຮ່ວມ. ເພື່ອຮັບປະກັນໃຫ້ຜູ້ທີ່ບໍ່ຮູ້ໜັງສື ຫຼື ຜູ້ທີ່ມີທັກສະທາງພາສາທີ່ຈຳກັດ ສາມາດເຂົ້າຮ່ວມໄດ້ນັ້ນ, ກອງປະຊຸມຕ່າງໆຈະຕ້ອງຖືກດຳເນີນການ ໂດຍຜ່ານການຳໃຊ້ພາສາເວົ້າທີ່ລຽບງ່າຍ (ພ້ອມດ້ວຍ ບໍລິການແປເປັນພາສາທ້ອງຖິ່ນ ຖ້າເປັນໄປໄດ້). ໜ່ວຍປະຕິບັດງານຈະຕ້ອງຮັບປະກັນໃຫ້ຜູ້ເຂົ້າຮ່ວມແມ່ນມາຈາກ ຂະແໜງການຕ່າງໆຂອງຊຸມຊົນ, ລວມທັງຂະແໜງການທີ່ທຸກຍາກທີ່ສຸດ, ແລະ ຕ້ອງບໍ່ມີພຽງແຕ່ກຸ່ມທີ່ໄດ້ຮັບການສຶກສາ ຫຼື ທີ່ມີສະຖານະທາງຄອບຄົວສູງເທົ່ານັ້ນທີ່ໄດ້ເຂົ້າຮ່ວມ (ອົງການແມັກ 2008:4.2.1)

## ຊັບພະຍາກອນມະນຸດ ແລະ ການເຂົ້າເຖິງການຈ້າງງານ

ພາກທີ່ຜ່ານມາເວົ້າເຖິງສະຖິຕິກ່ຽວກັບການຈ້າງງານ ແລະ ຈຸດໃດທີ່ແມ່ຍິງ, ກຸ່ມຊົນເຜົ່າ ແລະ ຄົນພິການຈະສາມາດດຳເນີນບົດບາດການນຳພາໃນຂະແໜງການ ລບຕ ໄດ້. ລະດັບການສຶກສາຂອງແມ່ຍິງ ແລະ ເດັກຍິງທີ່ຕ່ຳກວ່າຜູ້ າຍ ແລະ ເດັກຊາຍຢ່າງຫຼວງຫຼາຍ ຖືເປັນອຸປະສັກຕົ້ນຕໍໃນການເຂົ້າເຖິງການຈ້າງງານ. ແມ່ຍິງ ແລະ ເດັກຍິງຊົນເຜົ່າຈາກບາງກຸ່ມຍິ່ງມີສະພາບການທີ່ຮ້າຍແຮງກວ່ານີ້. ອັດຕາການຮູ້ໜັງສືແຫ່ງຊາດສຳລັບແມ່ຍິງແມ່ນຢູ່ໃນລະດັບ 84.2 ສ່ວນຮ້ອຍ (ຜູ້ຊາຍ 91 ສ່ວນຮ້ອຍ), ໃນຂະນະທີ່ແມ່ຍິງໃນເຂດຊົນນະບົດແມ່ານຢູ່ໃນລະດັບ 51 ສ່ວນຮ້ອຍ (ຜູ້ຊາຍ 72 ສ່ວນຮ້ອຍ).[33] ຂໍ້ມູນແມ່ນຈະແຕກຕ່າງກັນໄປຕາມແຕ່ລະກຸ່ມຊົນເຜົ່າ; ເຖິງຢ່າງໃດກໍ່ຕາມ, ໃນຊຸມຊົນລາວ-ລຸ່ມ, ເດັກຍິງກວມ 1 ສ່ວນ 3 ປະລະການຮຽນໃນຊັ້ນມັດທະຍົມປາຍ. ອັດຕາສ່ວນແມ່ນ 50 ຫາ 57 ສ່ວນຮ້ອຍສຳລັບເດັກຍິງຈາກກຸ່ມຊົນເຜົ່າ (ສູງກວ່າອັດຕາສ່ວນຂອງຜູ້ຊາຍ 1.9 ຫາ 4 ເທົ່າ).[34]

ການແກ້ໄຂບັນຫາອັດຕາສ່ວນຂອງແມ່ຍິງ ໃນຂັ້ນຕອນການກຳນົດແຜນວຽກ ລບຕ ໄດ້ກາຍມາເປັນຂໍ້ກັງວົນໃຈໜຶ່ງ ພາຍໃນຂະແໜງການດັ່ງກ່າວໃນຂອບເຂດທົ່ວໂລກ. GMAP ໄດ້ສ້າງ ຂໍ້ຊີ້ນຳການຮັບພະນັກງານ ແລະ ການຝຶກອົບຮົມທີ່ຄຳນຶງເຖິງບົດບາດຍິງຊາຍ ໃນປີ 2013 ເພື່ອຍົກສູງຄວາມສາມາດຂອງແມ່ຍິງ ໃນການເຂົ້າເຖິງການຈ້າງງານໃນຂະແໜງການ. ຂໍ້ຊີ້ນຳດັ່ງກ່າວກຳນົດໄວ້ວ່າ:

> ການຮັບພະນັກງານ, ການຝຶກອົບຮົມ ແລະ ຫຼັກປະຕິບັດທີ່ຄຳນຶງເຖິງບົດບາດຍິງຊາຍນັ້ນ ແມ່ນປັກໄຈຕົ້ນຕໍໃນການບັນລຸໄດ້ ແລະ ການຮັກສາຄວາມດຸ່ນດ່ຽວລະຫວ່າງຍິງຊາຍ ໃນທຸກຂົງເຂດຂອງວຽກງານເກັບກູ້ລະເບີດ, ຈາກທີມສຳຫຼວດ ແລະ ທີມເກັບກູ້ໄປຈົນເຖິງຄູຝຶກ ແລະ ຜູ້ຈັດການໃນຕຳແໜ່ງລະດັບສູງ. ຜົນປະໂຫຍດຂອງການມີພະນັກງານຍິງຊາຍທີ່ດຸ່ນດ່ຽງກັນນັ້ນ, ນອກເໜືອໄປຈາກພັນທະທາງກົດໝາຍທີ່ຜູ້ມັດກັບຂໍ້ຕົກລົງສາກົນຫຼາຍອັນແລ້ວ, ຍັງລວມມີຄວາມສາມາດໃນການເຂົ້າເຖິງຜູ້າຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງເພື່ອໃຫ້ສາມາດເກັບກຳຂໍ້ມູນ ກ່ຽວກັບວຽກງານເກັບກູ້ລະເບີດໄດ້ຢ່າງຖືກຕ້ອງຍິ່ງຂຶ້ນ, ເພື່ອໃຫ້ສາມາດລວມເອົາມຸມມອງທີ່ແຕກຕ່າງໃນວຽກງານອານຸຍາດນຳໃຊ້ທີ່ດິນ, ແລະ ເພື່ອໃຫ້ຕອບສະໜອງໄດ້ເງື່ອນໄຂຂອງຜູ້ໃຫ້ທຶນ. ການຈ້າງງານແມ່ຍິງຊ່ວຍສ້າງລາຍຮັບ ແລະ ສະຖານະ ແລະ ຊ່ວຍສະໜອງແບບຢ່າງໃຫ້ແກ່ແມ່ຍິງຄົນ ແລະ ເດັກຍິງຄົນອື່ນໆ.[35]

ແຜນງານຂອງ ອົງການ UNDP ແນໃສ່ແກ້ໄຂຄວາມຕ້ອງການຂອງແມ່ຍິງໂດຍກົງ ໃຫ້ພວກເຂົາສາມາດເຂົ້າເຖິງການຈ້າງງານ ແລະ ຕຳແໜ່ງວຽກຂັ້ນນຳພາໄດ້ຫຼາຍ

ຂຶ້ນ. ສິ່ງນີ້ຕ້ອງໄດ້ອາໄສຍຸດທະສາດຕ່າງໆ ເພື່ອຊຸກຍູ້ແມ່ຍິງໃນບົດບາດເຫຼົ່ານີ້. ທັງການປະເມີນຜົນຂອງ ອົງການແມັກ ໃນປີ 2008 ແລະ ຂອງ ອົງການ ສປຊ ເພື່ອແມ່ຍິງ / LWU ໃນປີ 2018 ໄດ້ສ້າງຂໍ້ແນະນຳຕ່າງໆຂຶ້ນມາເພື່ອແກ້ໄຂບັນຫານີ້. ການປະເມີນຜົນຂອງ ອົງການ ສປຊ ເພື່ອແມ່ຍິງ / LWU ໄດ້ເນັ້ນໜັກໃສ່ນະໂຍບາຍຊັບພະຍາກອນມະນຸດ ແລະ ຂໍ້ຊີ້ນຳດ້ານບົດບາດຍິງຊາຍ, ໃນຂະນະທີ່ການປະເມີນຜົນຂອງ ອົງການແມັກ ຊ່ວຍສະໜອງບາງຍຸດທະສາດປະຕິບັດງານທີ່ສຳຄັນ. ຍ້ອນຂໍ້ແນະນຳເຫຼົ່ານີ້ຍັງຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢູ່, ພວກມັນຈຶ່ງຍັງຄົງມີຄວາມກ່ຽວພັນກັບການຄົ້ນຄວ້ານີ້.

- ອອກແບບ ແລະ ຈັດຕັ້ງປະຕິບັດ ນະໂຍບາຍຊັບພະຍາກອນພາຍໃນຂອງ NRA ແລະ ໂຄງການ UXO Lao ວ່າດ້ວຍບົດບາດຍິງຊາຍ. ສິ່ງນີ້ອາດຊ່ວຍສົ່ງເສີມຄວາມສະເໝີພາບຍິງຊາຍພາຍໃນ NRA ແລະ ໂຄງການ UXO Lao ທີ່ອາດພາໃຫ້ເກີດຜົນກະທົບດ້ານຄວາມສະເໝີພາບຍິງຊາຍທາງລວກ ຕໍ່ຜູ້ໄດ້ຮັບຜົນປະໂຫຍດຈາກວຽກງານຂອງ NRA ແລະ ໂຄງການ UXO Lao; ແລະ ອອກແບບ ແລະ ຮັບຮອງເອົາ ຂໍ້ຊີ້ນຳດ້ານລະບຽບຂັ້ນຕອນການປະຕິບັດວຽກງານຊັບພະຍາກອນມະນຸດ ທີ່ຄຳນຶງເຖິງບົດບາດຍິງຊາຍ ສຳລັບ NRA ແລະ ໂຄງການ UXO Lao, ລວມທັງໜ້າທີ່ຮັບຜິດຊອບໃນການເຊື່ອມສານບົດບາດຍິງຊາຍເຂົ້າໃນ ຄຳອະທິບາຍໜ້າວຽກສຳລັບພະນັກງານວິຊາການ, ພະນັກງານຄຸ້ມຄອງ ແລະ ພະນັກງານໂຄງການ ແລະ ພະນັກງານວາງແຜນວຽກ: ອາດກະກຽມຮ່າງ ແລະ ຈັດກອງປະຊຸມສຳມະນາຂຶ້ນ ເພື່ອສຳເລັດຮ່າງດັ່ງກ່າວໃນຂັ້ນສຸດທ້າຍ (ອົງການ ສປຊ ເພື່ອແມ່ຍິງ / LWU 2018: 6.1.2 ແລະ 6.1.3)
- ອົງການຈັດຕັ້ງຕ່າງໆຈະຕ້ອງລວມເອົາຂໍ້ຄວາມທີ່ວ່າ "ຊຸກຍູ້ໃຫ້ແມ່ຍິງສະໝັກຕຳແໜ່ງນີ້," ເຂົ້າໃນທຸກການໂຄສະນາຮັບພະນັກງານຂອງຕົນ ບໍ່ວ່າຈະແມ່ນຕຳແໜ່ງໃດກໍ່ຕາມ ແລະ ຕ້ອງນຳໃຊ້ສື່ຂ່າວສານອັນຫຼາກຫຼາຍໃນການໂຄສະນາ; ໂດຍສະເພາະວິທະຍຸ. ເງື່ອນໄຂການຄັດເລືອກຈະຕ້ອງບໍ່ແຄບເກີນໄປຈົນເປັນການຈຳກັດສິດຂອງຜູ້ສະໝັກຍິງ; ແລະ ອົງການຈັດຕັ້ງຕ່າງໆຈະຕ້ອງຮັບປະກັນໃຫ້ມີ ທັງຜູ້ຍິງ ແລະ ຜູ້ຊາຍໃນຄະນະສຳພາດ - ຖ້າບໍ່ສາມາດຄັດເລືອກແມ່ຍິງພາຍໃນອົງກອນເຂົ້າໃນຄະນະສຳພາດໄດ້ ກໍ່ໃຫ້ພົວພັນກັບອົງການຈັດຕັ້ງອື່ນໆ, ເຊັ່ນ: LWU ຫຼື ຄູ່ຮ່ວມພັດທະນາ ເພື່ອໃຫ້ພວກເຂົາເຂົ້າຮ່ວມໃນຂັ້ນຕອນການສຳພາດນັ້ນ. ການມີຜູ້ຍິງໃນຄະນະສຳພາດ ຈະຊ່ວຍເພີ່ມທະວີຄວາມເຊື່ອໝັ້ນໃຫ້ແກ່ຜູ້ສະໝັກຍິງ ແລະ ຊ່ວຍໃຫ້ພວກເຂົາສາມາດສະແດງທ່າແຮງຂອງຕົນອອກມາໄດ້ຢ່າງໝັ້ນໃຈ. (ອົງການແມັກ 2008: 4.5.2 ແລະ 4.5.3)

## 6.4 ເວລາ ແລະ ພື້ນທີ່

### ສະພາບການແຫ່ງຊາດ

ການວິເຄາະບົດບາດຍິງຊາຍລະດັບປະເທດສຳລັບ ສປປ ລາວ ຂອງ ອົງການ USAID ຊີ້ໃຫ້ເຫັນເຖິງຄວາມຈຳເປັນໃນການພິຈາລະນາ ບັນຫາການແບ່ງວຽກທີ່ບໍ່ເທົ່າທຽມໃນຄົວເຮືອນ, ລວມທັງໜ້າທີ່ຮັບຜິດຊອບໃນການດູແລທີ່ບໍ່ມີເງິນເດືອນ, ແລະ ຂໍ້ຈຳກັດດ້ານເວລາ ແລະ ສະພາວະຂາດແຄນເວລາຂອງແມ່ຍິງ.[36]

ຂອບເຂດນີ້ລວມມີການຮັບຮູ້ເຖິງຄວາມແຕກຕ່າງລະຫວ່າງຍິງຊາຍ/ຄວາມພິການ/ກຸ່ມຊົນເຜົ່າ ໃນດ້ານການມີ ແລະ ການຈັດສັນເວລາ, ເຊິ່ງແມ່ນພາກສ່ວນຕົ້ນຕໍພາຍໃຕ້ຕາຕະລາງເຄື່ອນໄຫວວຽກປະຈຳວັນ ທີ່ປະຊາຊົນໃນທ້ອງຖິ່ນນຳໃຊ້. ສິ່ງນີ້ແມ່ນສອດຄ່ອງກັບ ຂອບວຽກການວິເຄາະຂອງ Harvard[37] ເພື່ອລະບຸບົດບາດໃນການສ້າງຄວາມເຂົ້າໃຈຄົວເຮືອນ ແລະ ຊຸມຊົນ. ມັນຍັງຊ່ວຍສະໜອງຄວາມຮູ້ກ່ຽວກັບປະເພດຂອງວຽກງານໃນຄົວເຮືອນ ແລະ ວຽກງານການປູກຝັງທີ່ສະມາຊິກໃນຄອບຄົວແຕ່ລະກຸ່ມອາຍຸຕ້ອງດຳເນີນການ ແລະ ເວລາທີ່ໃຊ້ເຂົ້າໃນວຽກງານເຫຼົ່ານີ້. ເປົ້າໝາຍແມ່ນເພື່ອກຳນົດວ່າປະຊາຊົນທີ່ມີສະຖານະດ້ານເພດ, ອາຍຸ, ຄວາມພິການ ແລະ ກຸ່ມຊົນເຜົ່າທີ່ແຕກຕ່າງກັນນັ້ນ ໃຊ້ເວລາຂອງພວກເຂົາຄືແນວໃດ, ຜົນສະທ້ອນສຳລັບການຈ້າງງານອື່ນໆ ແລະ ຄວາມພ້ອມສຳລັບກິດຈະກຳຂອງແຜນງານ.

ກິດຈະກຳສົ່ງເສີມການມີສ່ວນຮ່ວມນີ້, ທີ່ຖືກດຳເນີນການແຍກຕ່າງຫາກຮ່ວມກັບຜູ້ຊາຍ ແລະ ແມ່ຍິງໃນທ້ອງຖິ່ນ, ໄດ້ລະບຸບົດບາມ 3 ດ້ານຂອງແມ່ຍິງ - ບົດບາດດ້ານການຜະລິດ, ການຈະເລີນພັນ ແລະ ວຽກງານຊຸມຊົນ ຕາມທີ່ລະບຸໄວ້ໃນ ຂອບວຽກ Moser ໃນ ຕາຕະລາງທີ 5. ຄວາມເຂົ້າໃຈນີ້ແມ່ນຈຳເປັນຕໍ່ການແກ້ໄຂບັນຫາດ້ານບົດບາດຍິງຊາຍ ໃຫ້ແກ່ແຮງງານໃນຂະແໜງການ ລບຕ ທັງຍັງຊ່ວຍໃຫ້ຮູ້ວ່າສິ່ງເຫຼົ່ານີ້ ທ້າຍທີ່ສຸດແລ້ວຈະສົ່ງຜົນກະທົບຕໍ່ແມ່ຍິງ ແລະ ຄອບຄົວຂອງພວກເຂົາຄືແນວໃດ ໃນຊຸມຊົນທີ່ພວກເຂົາເຄື່ອນໄຫວວຽກ.



**ຕາຕະລາງທີ 5: ຂອບວຽກ Moser: ບົດບາດ 3 ດ້ານຂອງແມ່ຍິງ**

| Triple roles | | |
|---|---|---|
| **Productive work** | **Reproductive work** | **Community work** |
| Production of goods and services for home consumption and sale (e.g. employment and self-employment, formal and informal) | Tasks associated with domestic work, maintenance of the household and care for its members. Usually unpaid. | Management and wellbeing of the community. employment, formal and informal) Usually voluntary and unpaid. |
| According to gender division of labour. Women: lower paid, less secured jobs, often support sector Man: technical, managerial positions, political parties | Women: preparing food, bearing and caring for children and other household members, maintaining the house, collecting water. Man: constructing the home, household security. decision-making. | Women: provisioning and maintenance of resources which are used by everyone, such as water, healthcare, education. Man: politics at the community. |
| Women's productive work often alongside their reproductive work. | Women have bigger burden than men. Activities often overlooked. unmeasured and undervalued. | Activities often as extension to women's reproductive role. Differences in the community engagement across the countries. |

ແຫຼ່ງຂໍ້ມູນ: ສະຖາບັນ Ekvilib n.d.

ປະຕິທິນເຄື່ອນໄຫວວຽກປະຈຳວັນ ໄດ້ສະແດງໃຫ້ເຫັນເຖິງປະລິມານວຽກອັນໜັກໜ່ວງໃນຄົວເຮືອນ ທີ່ແມ່ຍິງທຸກກຸ່ມອາຍຸຕ້ອງປະຕິບັດ ດັ່ງທີ່ເຫັນໄດ້ໃນຕົວຢ່າງສຳລັບ ບ້ານໂພນສະອາດ ໃນ ຕາຕະລາງທີ 6 ແລະ 7 (ຕາຕະລາງແຕ່ລະອັນສະແດງໃຫ້ເຫັນເຖິງ 'ມື້ປົກກະຕິ' ສຳລັບແຕ່ລະກຸ່ມ). ສິ່ງນີ້ແມ່ນໄດ້ຖືກບັນທຶກໄວ້ໂດຍທັງກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງ. ໂດຍທົ່ວໄປແລ້ວ, ບົດບາດຈະຖືກກຳນົດຕາມເພດ ໂດຍທັງສອງກຸ່ມໄດ້ຊີ້ໃຫ້ເຫັນວ່າແມ່ຍິງໃນທຸກກຸ່ມອາຍຸນັ້ນ ມີອັດຕາການປະຕິບັດວຽກດ້ານການຜະລິດ ແລະ ການຈະເລີນພັນທີ່ສູງ. ຜູ້ຊາຍມັກຈະໄດ້ປະຕິບັດວຽກຕ່າງໆໜ້ອຍກວ່າ, ເຊັ່ນ: ແຕ່ງກິນ, ທຳຄວາມສະອາດ ແລະ ຊັກລ້າງຕ່າງໆ, ເຖິງແມ່ນວ່າຫຼາຍຄົນຈະບອກວ່າ ຜູ້ຊາຍເອງກໍ່ຊ່ວຍໃນການພາລູກເຮັດວຽກບ້ານກໍ່ຕາມ. ສິ່ງນີ້ມີຄວາມເຊື່ອມໂຍງກັບຄວາມເປັນຈິງທີ່ວ່າ ຍ້ອນຫຍັງຜູ້ຊາຍຈຶ່ງມີລະດັບການສຶກສາ ແລະ ຄວາມຮູ້ໜັງສືສູງກວ່າ.

ໜ້າທີ່ຫຼັກຂອງຜູ້ຊາຍແມ່ນການປູກຝັງ, ເຊິ່ງໄດ້ຖືກອະທິບາຍວ່າລວມມີວຽກ 'ທີ່ໜັກກວ່າ' ແລະ ເຮັດໃນພື້ນທີ່ຫ່າງໄກສອກຫຼີກ. ແມ່ຍິງມັກຈະຕ້ອງໄດ້ເຮັດວຽກທີ່ຢູ່ໃກ້ເຮືອນຫຼາຍກວ່າ. ແມ່ຍິງຫຼາຍຄົນກ່າວວ່າ ມີຫຼາຍຄັ້ງທີ່ຜູ້ເປັນຜົວ ແລະ ຜູ້ເປັນເມຍຈະເດີນທາງໄປນາເຂົ້າພ້ອມກັນ, ແລະ ຜູ້ຊາຍເອງກໍ່ມັກຈະໄປພັກຜ່ອນສູບຢາ. ຜູ້ຊາຍມັກຈະນອນພັກຜ່ອນດົນກວ່າ, ມີເວລາຫວ່າງຫຼາບກວ່າ ແລະ ໄດ້ເຂົ້າຮ່ວມກອງປະຊຸມໃນຂັ້ນຊຸມຊົນຫຼາຍກວ່າ. ເຖິງຈະເຫັນໄດ້ຊັດເຈນວ່າແມ່ຍິງເປັນຜູ້ດູແລຄົວເຮືອນເປັນຫຼັກກໍ່ຕາມ, ບົດບາດໃນຊຸມຊົນຂອງພວກເຂົາ ພັດບໍ່ໄດ້ຊ່ວຍໃຫ້ພວກເຂົາສາມາດມີສ່ວນຮ່ວມລະດັບສູງ ເຂົ້າໃນກອງປະຊຸມຂັ້ນຊຸມຊົນໄດ້.

**ຕາຕະລາງທີ 6: ຕາຕະລາງເຄື່ອນໄຫວວຽກປະຈຳວັນສຳລັບແມ່ຍິງໃນ ບ້ານໂພນສະອາດ, ຈຳນວນຊົ່ວໂມງທີ່ຖືກນຳໃຊ້ເຂົ້າໃນວຽກງານຕ່າງໆ**

| ເວລາ | ແມ່ຕູ້ | ພໍ່ | ແມ່ | ລູກຊາຍ | ລູກສາວ | ຫຼານຊາຍ | ຫຼານສາວ |
|---|---|---|---|---|---|---|---|
| **ເຊົ້າມືດ** | ແຕ່ງກິນ 1 ຊົ່ວໂມງ | | ແຕ່ງກິນ 6 ຊົ່ວໂມງ | | ທຳ ຄວາມສະອາດ 1 ຊົ່ວໂມງ ແຕ່ງກິນ 1 ຊົ່ວໂມງ | ໄປໂຮງຮຽນ | ໄປໂຮງຮຽນ |
| **ຕອນເຊົ້າ** | | ປູຝັງ 3 ຊົ່ວໂມງ | ທຳ ຄວາມສະອາດ 5 ຊົ່ວໂມງ ຊັກເຄື່ອງ 2 ຊົ່ວໂມງ ປູກຝັງ 1 ຊົ່ວໂມງ | ປູກຝັງ 3 ຊົ່ວໂມງ | ປູກຝັງ 1 ຊົ່ວໂມງ ຊັກເຄື່ອງ 1 ຊົ່ວໂມງ | | ຊັກເຄື່ອງ 1 ຊົ່ວໂມງ |
| **ຕອນສວຍ** | | ປູກຝັງ 2 ຊົ່ວໂມງ | ແຕ່ງກິນ 3 ຊົ່ວໂມງ ປູກຝັງ 1 ຊົ່ວໂມງ | ປູກຝັງ 2 ຊົ່ວໂມງ | ປູກຝັງ 1 ຊົ່ວໂມງ | | |
| **ຕອນແລງ** | | | ທຳ ຄວາມສະອາດ 1 ຊົ່ວໂມງ ແຕ່ງກິນ 1 ຊົ່ວໂມງ | | | ຫຼິ້ນ 2 ຊົ່ວໂມງ | |

**ຕາຕະລາງທີ 7: ຕາຕະລາງເຄື່ອນໄຫວວຽກປະຈຳວັນສຳລັບຜູ້ຊາຍໃນ ບ້ານໂພນສະອາດ, ຈຳນວນຊົ່ວໂມງທີ່ຖືກນຳໃຊ້ເຂົ້າໃນວຽກງານຕ່າງໆ**

| ເວລາ | ພໍ່ຕູ້ | ແມ່ຕູ້ | ພໍ່ | ແມ່ | ລູກສາວ | ລູກເຂີຍ | ຫຼານສາວ |
|---|---|---|---|---|---|---|---|
| **ເຊົ້າມືດ** | ແຕ່ງກິນ 2 ຊົ່ວໂມງ | ແຕ່ງກິນ 2 ຊົ່ວ ຖມງ ທຳ ຄວາມສະອາດ 1 ຊົ່ວຖມງ | ນອນ 2 ຊົ່ວໂມງ | ນອນ 1 ຊົ່ວໂມງ ທຳ ຄວາມສະອາດ 3 ຊົ່ວໂມງ ແຕ່ງກິນ 8 ຊົ່ວໂມງ | ນອນ 1 ຊົ່ວໂມງ ທຳ ຄວາມສະອາດ 2 ຊົ່ວໂມງ ແຕ່ງກິນ 1 ຊົ່ວໂມງ | ນອນ 1 ຊົ່ວໂມງ ແຕ່ງກິນ 1 ຊົ່ວໂມງ | ໄປ ໂຮງຮຽນ |
| **ຕອນເຊົ້າ** | ປູກຝັງ 1 ຊົ່ວໂມງ | ຊັກເຄື່ອງ 2 ຊົ່ວໂມງ | ປູກຝັງ 4 ຊົ່ວໂມງ | ປູກຝັງ 4 ຊົ່ວໂມງ ຊັດເຄື່ອງ 3 ຊົ່ວໂມງ | ປູກຝັງ 1 ຊົ່ວໂມງ ຊັກເຄື່ອງ 1 ຊົ່ວໂມງ | ປູກຝັງ 3 ຊົ່ວໂມງ | ປູກຝັງ 2 ຊົ່ວໂມງ ຊັກເຄື່ອງ 1 ຊົ່ວໂມງ |
| **ຕອນສວຍ** | | ແຕ່ງກິນ 1 ຊົ່ວໂມງ | | | | | |
| **ຕອນແລງ** | ນອນ | ນອນ | ຊ່ວຍລູກ ເຮັດວຽກບ້ານ ແລະ ນອນ 4 ຊົ່ວໂມງ | ຊ່ວຍລູກ ເຮັດວຽກບ້ານ ແລະ ນອນ 2 ຊົ່ວໂມງ | | | |



ການທີ່ຜູ້ຊາຍສາມາດຂັບຂີ່ລົດຈັກ (ບາງຄັ້ງລົດໃຫຍ່) ໄປມາໄດ້ນັ້ນ ເຮັດໃຫ້ພວກເຂົາມີຄວາມສາມາດໃນການເຂົ້າເຖິງຊັບພະຍາກອນ ທີ່ສົ່ງຜົນກະທົບຕໍ່ເວລາ ແລະ ພື້ນທີ່ໄດ້ຫຼາຍກວ່າແມ່ຍິງ. ແມ່ຍິງທີ່ຖືກສຳພາດໃນແຕ່ລະຄົວເຮືອນ ຕ່າງກໍ່ບອກວ່າພວກເຂົາຂັບລົດບໍ່ເປັນ. ການທີ່ແມ່ຍິງບໍ່ສາມາດເຂົ້າເຖິງການຂົນສົ່ງ ທີ່ຊ່ວຍຫຍໍ້ໄລຍະທາງໃຫ້ພວກເຂົາໄດ້ນັ້ນ ໄດ້ສ້າງຂໍ້ຈຳກັດໃຫ້ແກ່ການເດີນທາງຂອງພວກເຂົາ. ນີ້ຈຶ່ງແມ່ນສາເຫດທີ່ວ່າຍ້ອນຫຍັງຜູ້ຊາຍ ມັກຈະເປັນຜູ້ທີ່ໄດ້ດຳເນີນວຽກງານປູກຝັງຢູ່ໄກຈາກເຮືອນ ແລະ ໄດ້ເດີນທາງໄປຍັງສຳນັກບ້ານ ແລະ ຫ້ອງການປົກຄອງເມືອງຫຼາຍກວ່າ ເພື່ອເຂົ້າຮ່ວມກອງປະຊຸມ ແລະ ພົບປະສັງສັນກັບໝູ່ເພື່ອນ.

## ບົດບາດຍິງຊາຍ ແລະ ກຸ່ມຊົນເຜົ່າ

ບົດບາດຍິງຊາຍ ແລະ ກຸ່ມຊົນເຜົ່າແມ່ນປັດໄຈທີ່ສ້າງຂໍ້ຈຳກັດໃຫ້ແກ່ພື້ນທີ່ສາທາລະນະຂອງແມ່ຍິງ, ເຮັດໃຫ້ພວກເຂົາມີວົງລັດສະໝີການເຄື່ອນຍ້າຍທີ່ແຄບລົງ ໂດຍເຫຼືອພຽງແຕ່ລະແວກອ້ອມແອ້ມເຮືອນ ແລະ ຊຸມຊົນທ້ອງຖິ່ນເທົ່ານັ້ນ. ຄວາມແຕກຕ່າງອັນໃຫຍ່ຫຼວງລະຫວ່າງແຜນທີ່ທີ່ແຕ້ມໂດຍຜູ້ຊາຍ ແລະ ແຜນທີ່ທີ່ແຕ້ມໂດຍແມ່ຍິງ ໄດ້ຊີ້ໃຫ້ເຫັນເຖິງຄວາມແຕກຕ່າງດ້ານການເຄື່ອນໄຫວນີ້, ໂດຍຜູ້ົາຍມັກຈະເປັນກຸ່ມທີ່ສາມາດລາຍງານລາຍລະອຽດ ແລະ ຄວາມຖືກຕ້ອງກ່ຽວກັບຈຸດຄົ້ນພົບລະເບີດຕົກຄ້າງ ແລະ ເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ໄດ້ຫຼາຍກວ່າ (ເຖິງແມ່ນວ່າຜູ້ຊາຍຊົນເຜົ່າຈະມີລະດັບຄວາມຮູ້ຕ່ຳກວ່າຜູ້ຊາຍຊົນເຜົ່າລາວ-ລຸ່ມກໍ່ຕາມ). ຄວາມກ່ຽວພັນກັນລະຫວ່າງບົດບາດຍິງຊາຍ ແລະ ກຸ່ມຊົນເຜົ່າໄດ້ສົ່ງຜົນເຮັດໃຫ້ແມ່ຍິງມີລະດັບການສຶກສາ ແລະ ຄວາມຮູ້ໜັງສືທີ່ຕ່ຳກວ່າ ແລະ ມີເວລານຳໃຊ້ຢູ່ນອກເຮືອນ ແລະ ໃນຊຸມຊົນໂດຍທົ່ວໄປໜ້ອຍກວ່າຜູ້ຊາຍຫຼາຍ, ໂດຍສະເພາະແມ່ຍິງຊົນເຜົ່າມົ້ງ (ລວມໄປເຖິງຊົນເຜົ່າຂະມຸ) ໃນ ແຂວງບໍລິຄຳໄຊ. ແຜນທີ່ທີ່ຖືກສ້າງຂຶ້ນໂດຍແມ່ຍິງຊົນເຜົ່າມົ້ງນັ້ນ ໄດ້ຊີ້ໃຫ້ເຫັນວ່າພວກເຂົາມີລະດັບຄວາມຕື່ນໂຕຕ່ຳທີ່ສຸດ ກ່ຽວກັບພື້ນທີ່ໃດທີ່ໄດ້ຮັບການເກັບກູ້ແລ້ວ ແລະ ທີ່ຍັງມີລະເບີດຕົກຄ້າງຢູ່, ໄປຈົນເຖິງບໍ່ຮູ້ວ່າການເກັບກູ້ ລບຕ ແມ່ນຫຍັງ.

ສິ່ງທີ່ຊ່ວຍຫຼຸດຜ່ອນອຸປະສັກດ້ານເວລາໃຫ້ແກ່ແມ່ຍິງໃນ ແຂວງຊຽງຂວາງ ແມ່ນການມີຈັກຊັກເຄື່ອງ ແລະ ການຕິດຕັ້ງລະບົບທໍ່ນ້ຳ. ຕາຕະລາງເຄື່ອນໄຫວວຽກປະຈຳວັນ ໄດ້ຊີ້ໃຫ້ເຫັນວ່າແມ່ຍິງຊົນເຜົ່າມົ້ງນັ້ນ ແມ່ນກຸ່ມທີ່ຕ້ອງປະສົບກັບອຸປະສັກດ້ານເວລາຫຼາຍທີ່ສຸດ, ໃນນັ້ນແມ່ຍິງທຸກກຸ່ມອາຍຸແມ່ນໃຊ້ເວລາໄປກັບວຽກງານຕ່າງໆໃນເຮືອນ, ໃນຂະນະທີ່ຜູ້ຊາຍມີພາລະວຽກໜ້ອຍກວ່າ, ຢ່າງໜ້ອຍກໍ່ປະຕິບັດວຽກດັ່ງເດີມໃນຄົວເຮືອນເທົ່ານັ້ນ.

## ບົດບາດຂອງແມ່ຍິງໃນການເຮັດວຽກທີ່ບໍ່ມີເງິນເດືອນ ແລະ ການດູແລເບິ່ງແຍງຄົນພິການ

ບົດບາດຂອງແມ່ຍິງ ແລະ ເດັກຍິງໃນການເຮັດວຽກທີ່ບໍ່ມີເງິນເດືອນ ມັກຈະບໍ່ໄດຖືກຮັບຮູ້ ຫຼື ໃຫ້ຄວາມສຳຄັນດ້ານເວລາເລີຍ. ບົດບາດການປູກຝັງທີ່ບໍ່ມີເງິນເດືອນຂອງແມ່ຍິງ ແລະ ເດັກຍິງເອງກໍ່ຖືກເບິ່ງຂ້າມເຊັ່ນກັນ. ບົດລາຍງານຂອງ ອົງການ UNICEF ພົບວ່າແມ່ຍິງໃນ ສປປ ລາວ ໃຊ້ເວລາໂດຍສະເຫຼ່ຍ 4.1 ຊົ່ວໂມງໄປກັບວຽກງານດູແລ ແລະ ວຽກເຮືອນທີ່ບໍ່ມີເງິນເດືອນໃນແຕ່ລະວັນ, ເມື່ອສົມທຽບກັບຜູ້ຊ່າຍທີ່ໃຊ້ເວລາພຽງແຕ່ 1.7 ຊົ່ວໂມງເທົ່ານັ້ນ, ໂດຍສະເພາະໃນຊ່ວງເກີດການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ແມ່ຍິງຕ້ອງແບກຮັບພາລະເພີ່ມເຕີມ ຈາກການເບິ່ງລູກໃນຊ່ວງປິດເມືອງ.[38] ສະຖິຕິນີ້ແມ່ນສອດຄ່ອງກັບຕາຕະລາງເຄື່ອນໄຫວວຽກປະຈຳວັນທີ່ສ້າງຂຶ້ນໂດຍຜູ້ຊາຍ ແລະ ແມ່ຍິງ ໃນຕະຫຼອດໄລຍະຂອງການປະຕິບັດວຽກພາກສະໜາມໃນ ແຂວງບໍລິຄຳໄຊ ແລະ ແຂວງຊຽງຂວາງ.

ຍ້ອນໃນບ້ານທີ່ດຳເນີນປະຕິບັດການພາກສະໜາມນັ້ນບໍ່ມີຄົນພິການຫຼາຍ, ຈຶ່ງບໍ່ສາມາດວັດແທກປະລິມານວຽກທີ່ແມ່ຍິງຕ້ອງໄດ້ເຮັດ ໃນການເບິ່ງແຍງສະມາຊິກຄອບຄົວທີ່ພິການໄດ້. ອົງການ ILO ໄດ້ຊີ້ໃຫ້ເຫັນວ່າແມ່ຍິງເປັນຜູ້ປະຕິບັດວຽກທີ່ບໍ່ມີເງິນເດືອນກວມຫຼາຍກວ່າ 75 ສ່ວນຮ້ອຍໃນຂອບເຂດທົ່ວໂລກ, ບັນຫານີ້ຖືເປັນອຸປະສັກຕົ້ນຕໍທີ່ກີດຂວາງແມ່ຍິງບໍ່ໃຫ້ເຂົ້າເຖິງ ໂອກາດດ້ານການຈ້າງງານ, ການສ້າງລາຍຮັບ ແລະ ວຽກງານທີ່ມີຄຸນນະພາບສູງ.[39]

ທີ່ປຶກສາໄດ້ສອບຖາມວ່າມີການສະໜອງການສະໜັບສະໜູນຫຍັງແດ່ ໃຫ້ແມ່ຍິງທີ່ເປັນຜູ້ດູແລຄົນພິການໃນຄົວເຮືອນເປັນຫຼັກ. ບໍ່ມີຜູ້ຕອບສຳພາດຄົນໃດກ່າວເຖິງຍຸດທະສາດ ຫຼື ລະບົບການສະໜັບສະໜູນອັນໃດເລີຍ ໃຫ້ແກ່ແມ່ຍິງທີ່ເປັນຜູ້ດູແລຄອບຄົວ. ຍັງສາມາດເຫັນໄດ້ຊັດເຈນອີກວ່າ ບັນຫາສນີ້ບໍ່ໄດ້ຖືກພິຈາລະນາຈາກມຸມມອງດ້ານນະໂຍບາຍ, ເຖິງແມ່ນວ່າຜູ້ດູແລຈະຖືກພິຈາລະນາວ່າເປັນ ຜູ້ປະສົບເຄາະຮ້າຍທາງກົງຈາກອຸບັດເຫດ ລບຕ ຕາມທີ່ກຳນົດໄວ້ໃນຂໍ້ຊີ້ນຳພາຍໃຕ້ IMAS ກໍ່ຕາມ:

- NMAA ຫຼື ອົງການຈັດຕັ້ງທີ່ຕາງໜ້າໃຫ້ແກ່ NMAA ຈະຕ້ອງ: ສົ່ງເສີມຂັ້ນຕອນການວາງແຜນທີ່ອີງໃສ່ຊຸມຊົນ ທີ່ຊ່ວຍອຳນວຍຄວາມສະດວກໃຫ້ຜູ້ລອດຊີວິດນັ້ນ ສາມາດມີສ່ວນຮ່ວມໃນວຽກງານຕ່າງໆໄດ້ຢ່າງມີຄວາມໝາຍ. ອຳນວຍຄວາມສະດວກໃຫ້ແກ່ການສ້າງຄວາມເຊື່ອມໂຍງລະຫວ່າງ ຂັ້ນຕອນການກຳນົດບຸລິມະສິດໃຫ້ແກ່ປະຕິບັດການອານຸຍາດນຳໃຊ້ທີ່ດິນ ກັບນັກເຄື່ອນໄຫວພັດທະນາ ເພື່ອສະໜອງການສະໜັບສະໜູນອັນຮອບດ້ານໃຫ້ແກ່ຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍທາງກົງ ພາຍໃນກຸ່ມທີ່ມີຄວາມສ່ຽງສູງອື່ນໆ (IMAS 13.10 ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ).[40]

- ... ສະໜັບສະໜູນການເຜີຍແຜ່ລາຍຊື່ບໍລິການຕ່າງໆ ລວມໄປເຖິງລະບຸ ແລະ ເຊື່ອມໂຍງ ຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍທາງກົງ ເຂົ້າກັບບໍລິການຕ່າງໆ ໂດຍຜ່ານການສະໜອງຂໍ້ມູນທີ່ເຂົ້າເຖິງໄດ້ ກ່ຽວກັບບໍລິການທີ່ມີພ້ອມສະໜອງໃຫ້, ໂດຍຮ່ວມມືກັບກະຊວງ ຫຼື ໜ່ວຍງານທີ່ກ່ຽວຂ້ອງ (IMAS ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ 13.10).[41]

## 6.5 ຄວາມຮູ້, ຄວາມເຊື່ອ ແລະ ຄວາມເຂົ້າໃຈ, ແລະ ບັນຖັດຖານ ແລະ ການເໝົາລວມຂອງສັງຄົມ

ຂອບເຂດນີ້ແນໃສ່ສືບຄົ້ນບັນຖັດຖານ ແລະ ການເໝົາລວມຂອງສັງຄົມໃນຂອບເຂດທົ່ວປະເທດ ກ່ຽວກັບຜູ້ຊາຍ ແລະ ແມ່ຍິງ, ຄົນພິການ ແລະ ກຸ່ມຊົນເຜົ່າ ເພື່ອໃຫ້ເຂົ້າໃຈວ່າພວກມັນມີບົດບາດແນວໃດໃນຂັ້ນບ້ານ, ໂຍດສະເພາະທີ່ກ່ຽວຂ້ອງກັບວຽກງານພາຍໃນຂະແໜງການ ລບຕ. ການວິເຄາະແບບສົມທຽບແນໃສ່ພິຈາລະນາຂໍ້ມູນ ແລະ ຜົນໄດ້ຮັບຂອງວຽກງານ ລບຕ ໃນລະດັບສາກົນ.

ອີງຕາມ ໂຄສະນາລົນນະລົງການເກືອດຫ້າມລະເບີດຝັງດິນສາກົນ, ຈາກປີ 2010 ຫາ 2019, 87 ສ່ວນຮ້ອຍຂອງຜູ້ປະສົບໄພໃນທົ່ວໂລກແມ່ນຜູ້ຊາຍ ແລະ ເດັກຊາຍ ແລະ ອີກ 13 ສ່ວນຮ້ອຍແມ່ນແມ່ຍິງ ແລະ ເດັກຍິງ.[42] ຕາຕະລາງທີ 8 ສະແດງໃຫ້ເຫັນເຖິງຂໍ້ມູນທີ່ເກັບກຳໄດ້ໃນ ແຜນຍູດທະສາດແຫ່ງຊາດສຳລັບຂະແໜງການ ລບຕ ໃນ ສປປ ລາວ 2021-2030. ສິ່ງນີ້ສະແດງໃຫ້ເຫັນວ່າແມ່ຍິງ ແລະ ເດັກຍິງກວມ 23.5 ສ່ວນຮ້ອຍຂອງກຸ່ມທີ່ໄດ້ຮັບບາດເຈັບໃນຊ່ວງເວລາດຽວກັນ, ເຊິ່ງສູງກວ່າຄ່າສະເຫຼ່ຍໂລກ 10 ຈຸດສ່ວນຮ້ອຍ.

**ຕາຕະລາງທີ 8: ຈຳນວນຂອງຜູ້ບາດເຈັບ ແລະ ເສຍຊີວິດຈາກ ລບຕ ໃນ ສປປ ລາວ ແຕ່ປີ 2011 ຫາ 2020**

| ໄດ້ຮັບບາດເຈັບ | | | | |
|---|---|---|---|---|
| ຜູ້ຊາຍ | ເດັກຊາຍ | ແມ່ຍິງ | ເດັກຍິງ | ທັງໝົດ |
| 129 | 140 | 40 | 43 | 352 |
| ເສຍຊີວິດ | | | | |
| ຜູ້ຊາຍ | ເດັກຊາຍ | ແມ່ຍິງ | ເດັກຍິງ | ທັງໝົດ |
| 47 | 53 | 3 | 4 | 107 |

ແຫຼ່ງຂໍ້ມູນ: ລັດຖະບານ ສປປ ລາວ 2021a

ບໍ່ມີຂໍ້ມູແບບດຽວກັນສະໜອງໃຫ້ສຳລັບການເສຍຊີວິດ[43] ແຕ່ຂໍ້ມູນກ່ຽວກັບການບາດເຈັບສະແດງໃຫ້ເຫັນວ່າແມ່ຍິງ ແລະ ເດັກຍິງນັ້ນ ມີໂອກາດຕົກເປັນຜູ້ປະສົບເຄາະຮ້າຍຈາກອຸບັດເຫດ ລບຕ ໜ້ອຍກວ່າຜູ້ຊາຍ. ໃນຂອບເຂດທົ່ວໂລກ, ຜູ້ຊາຍ ແລະ ເດັກຊາຍມັກຈະເປັນກຸ່ມທີ່ເສຍຊີວິດ ແລະ ໄດ້ຮັບບາດເຈັບຈາກ ລບຕ ຫຼາຍກວ່າອັນເນື່ອງມາຈາກບົດບາດດັ້ງເດີມ ແລະ ບັນຖັດຖານທາງສັງຄົມຂອງພວກເຂົາ ທີ່ຜູ້ຊາຍສ່ວນໃຫຍ່ຕ້ອງເປັນທະຫານ (ຈຳນວນທະຫານຍິງໃນກອງທັບແມ່ນມີໜ້ອຍກວ່າ, ຈຶ່ງເຮັດໃຫ້ອັດຕາສ່ວນຂອງແມ່ຍິງໃນ NRA ໜ້ອຍລົງຕາມ) ແລະ ແນ່ນອນວ່າ 'ເດັກນ້ອຍຜູ້ຊາຍຊື້ດື້ກວ່າ,' ໝາຍຄວາມວ່າພວກເຂົາມັກຈະເຂົ້າໄປຫຼິ້ນໃນພື້ນທີ່ທີ່ມີລະເບີດຕົກຄ້າງຢູ່, ບາງຄັ້ງກໍ່ເກີດຂໍ້ສົງໄສ ແລະ/ຫຼື ສະແດງຄວາມກ້າຜ່ານການງັດແງະ ລບຕ. ຜູ້ຊາຍເອງກໍ່ມີແນວໂນ້ມທີ່ຈະມ້າງ ລບຕ ອອກເພື່ອເກັບເອົາເສດໂລຫະໄປຂາຍ. ສິ່ງນີ້ແມ່ນໄດ້ຮັບການຢັ້ງຢືນໃນການປະຕິບັດງານພາກສະໜາມ ຜ່ານການສຳພາດຄົວເຮືອນ 2 ຄັ້ງບ່ອນທີ່ຜູ້ເປັນຜົວ ໄດ້ນຳເອົາສິ່ງທີ່ຕົນເດົາວ່າແມ່ນເສດໂລຫະມາເກັບໄວ້ຢູ່ກ້ອງເຮືອນ. ໃນທັງສອງກໍລະນີ, ຜູ້ເປັນຜົວບໍ່ໄດ້ບອກເມຍຂອງຕົນວ່າເກັບເສດໂລຫະມາມ້ຽນໄວ້ຢູ່ເຮືອນ. ຜູ້ຊາຍຜູ້ໜຶ່ງເສຍຊີວິດຈາກການໄປສຳພັດກັບວັດຖຸດັ່ງກ່າວ. ຜູ້ຊາຍທັງ 2 ແມ່ນມາຈາກກຸ່ມຊົນເຜົ່າ ທີ່ມີຄວາມຮູ້ຈຳກັດກ່ຽວກັບຮູບຮ່າງຂອງ ລບຕ ແລະ ມີຄວາມທຸກຍາກຫຼາຍ, ເຮັດໃຫ້ການເກັບ 'ເສດໂລະຫະ' ເປັນແຫຼ່ງລາຍຮັບເພີ່ມເຕີມທີ່ໜ້າດຶງດູດສຳລັບພວກເຂົາ.

ປະຕິບັດການພາກສະໜາມໄດ້ພົບວ່າມີຜູ້ຊາຍຊົນເຜົ່າລາວ-ລຸ່ມ 2 ຄົນໃນ ແຂວງຊຽງຂວາງ ເຄື່ອນຍ້າຍສິ່ງທີ່ພວກເຂົາຮູ້ແລ້ວວ່າແມ່ນ ລບຕ, ໃນກໍລະນີໜຶ່ງແມ່ນຍ້າຍອອກຈາກຫົນທາງ, ແລະ ອີກກໍລະນີໜຶ່ງແມ່ນຍ້າຍອອກຈາກນາເຂົ້າຂອງຕົນ. ເມື່ອຖືກຖາມກ່ຽວກັບຄວາມສ່ຽງຈາກການເຄື່ອນຍ້າຍ ລບຕ, ຜູ້ຊາຍຄົນໜຶ່ງເວົ້າວ່າລາວບໍ່ມີທາງເລືອກ ຍ້ອນຂັ້ນຕອນການເກັບກູ້ລະເບີດນັ້ນໃຊ້ເວລາຫຼາຍ ແລະ ລາວຈຳເປັນຕ້ອງໄດ້ປູກເຂົ້າ. ແນວຄິດເໝົາລວມ ແລະ ບັນຖັດຖານທາງສັງຄົມອື່ນໆທີ່ກ່ຽວຂ້ອງກັບຜູ້ຊາຍນັ້ນ ລວມມີການທີ່ຜູ້ຊາຍມີໂອກາດໄດ້ເດີນທາງໄປເຂດຫ່າງໄກສອກຫຼີກຫຼາຍກວ່າແມ່ຍິງ ຍ້ອນພວກເຂົາເຂົ້າເຖິງການຂົນສົ່ງ ແລະ ສາມາດດຳເນີນ ' ວຽກງານທີ່ໜັກໜ່ວງ' ໄດ້, ທີ່ລວມມີ: ການຂຸດດິນໂດຍໃຊ້ສຽມ ແລະ ຈັກທີ່ມີໂອກາດກໍ່ໃຫ້ເກີດອຸບັດເຫດຈາກ ລບຕ ທີ່ຝັງຢູ່ກ້ອງໜ້າດິນສູງກວ່າໝູ່. ຜູ້ຖືກສຳພາດຊາຍ 2 ຄົນທີ່ພິການຈາກອຸບັດເຫດ ລບຕ ກ່າວວ່າພວກເຂົາພວມດຳເນີນການປູກຝັງຢູ່ກ່ອນໄດ້ຮັບບາດເຈັບ.

ການເສຍຊີວິດຂອງເດັກທີ່ໄດ້ຮັບລາຍງານໃນ ແຂວງບໍລິຄຳໄຊທີ່ລວມມີ: ເດັກຊາຍ 3 ຄົນທີ່ນຳເອົາ ລບຕ ມາຫຼິ້ນ, ຊ່ວຍຢັ້ງຢືນແນວໂນ້ມຈາກທັງສາກົນ ແລະ ແຫ່ງຊາດວ່າເດັກຊາຍນັ້ນແມ່ນກຸ່ມທີ່ມີຄວາມສ່ຽງສູງເນື່ອງຈາກພຶດຕິກຳຂອງພວກເຂົາ. ນີ້ແມ່ນຈຸດເນັ້ນໜັກຂອງແຜນງານ UNDP, ໂດຍທີ່ໃນເອກະສານຂອງແຜນງານໄດ້ຊີ້ໃຫ້ເຫັນວ່າ:

> ປະຊາຊົນຍັງຄົງສືບຕໍ່ເຮັດພຶດຕິກຳສ່ຽງຢູ່. ເຖິງແມ່ນວ່າຈະມີການດຳເນີນວຽກງານ ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ໃນຊ່ວງຊຸມຜີທີ່ຜ່ານມາແລ້ວກໍ່ຕາມ, ຈຳນວນຜູ້ປະສົບໄພຈາກ ລບຕ ກໍ່ຍັງຄົງມີຢູ່ ແລະ ສິ່ງຜົນກະທົບຢ່າງບໍ່ສົມສ່ວນຕໍ່ເດັກຊາຍ ແລະ ຜູ້ຊາຍຜ່ານກິດຈະກຳປະຈຳວັນຂອງພວກເຂົາ. ບັນຫານີ້ຊີ້ໄປຍັງຫຼັກປະຕິບັດທີ່ພົວພັນເຖິງບົດບາດຍິງຊາຍໃນເຂດຊົນນະບົດ (ເຊັ່ນ: ການເກັບກູ້ເນື້ອທີ່ດິນເພື່ອຈຸດປະສົງໃນການປູກພືດ ແລະ ລ້ຽງສັດໂດຍເດັກຊາຍ ແລະ ຜູ້ຊາຍ, ການໄປຕັກນ້ຳ ແລະ ເກັບໄມ້, ການແຕ່ງກິນສຳລັບເດັກຍິງ ແລະ ແມ່ຍິງ), ທີ່ເຮັດໃຫ້ພວກເຂົາກາຍເປັນກຸ່ມທີ່ຕ້ອງປະເຊີນກັບຄວາມອັນຕະລາຍຈາກ ລບຕ ຫຼາຍກວ່າໝູ່. ມັນຍັງອາດຊີ້ໃຫ້ເຫັນວ່າການສຶກສານັ້ນ ບໍ່ໄດ້ແມ່ນຄຳຕອບດຽວໃນການແກ້ໄຂບັນຫາ, ໂດຍສະເພາະໃນບ່ອນທີ່ຄວາມຮູ້ທີ່ໄດ້ຮັບນັ້ນ ບໍ່ສາມາດປ່ຽນແປງພຶດຕິກຳຂອງຄົນໃນທ້ອງຖິ່ນນັ້ນໄດ້.

ເອກະສານປີ 2015 ໂດຍ GMAP ແລະ UNMAS ວ່າດ້ວຍການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພທີ່ຄຳນຶງເຖິງວັດທະນະທຳ ໄດ້ຮັບຮູ້ເຖິງຄວາມຈຳເປັນໃນການລະບຸເວລາ ແລະ ພື້ນທີ່ທີ່ມີປະສິດທິພາບໃນການເຂົ້າເຖິງຜູ້ຊາຍ, ແມ່ຍິງ, ເດັກຍິງ ແລະ ເດັກຊາຍຈາກແຕ່ລະກຸ່ມອາຍຸເພື່ອສ້າງຄວາມຕື່ນໂຕໃຫ້ແກ່ພວກເຂົາ. ໃນປະເທດໂຊມາລີ, ຍຸດທະສາດທີ່ມີປະສິດທິພາບແມ່ນແນໃສ່ແມ່ຍິງເປັນຫຼັກ ໂດຍຜ່ານການຝຶກອົບຮົມວຽກງານຜະດຸງຄັນ ແລະ ການເກີດລູກແບບດັ້ງເດີມໃຫ້ແກ່ຜູ້ເຂົ້າຮ່ວມ; ແນໃສ່ຜູ້ຊາຍ ແລະ ຜູ້ນຳສາສະໜາໃນຮ້ານນ້ຳຊາ, ຫ້ອງກວດພະຍາດ, ຕະຫຼາດຂາຍສັດ ແລະ ຈຸດນ້ຳດື່ມ; ແລະ ຝຶກອົບຮົມຄູໃຫ້ສາມາດເຂົ້າເຖິງເດັກນ້ອຍ ແລະ ເຍົາວະຊົນທັງໃນ ແລະ ຢູ່ນອກໂຮງຮຽນ ຫຼື ຫຼັກສູດທາງການ.[44]

IMAS ສະບັບທີສອງວ່າດ້ວຍວຽກງານ EORE ໄດ້ຊີ້ໃຫ້ເຫັນວ່າ:

> ... ແມ່ຍິງ ແລະ ເດັກຍິງມັກຈະຕ້ອງເຂົ້າໄປພົວພັນກັບອຸບັດເຫດຕ່າງໆ ອັນເນື່ອງມາຈາກການດຳເນີນວຽກງານປະເພດຕ່າງໆ, ສ່ວນໃຫຍ່ມັກຈະມີລະດັບຄວາມຮູ້ທີ່ຕ່ຳກ່ຽວກັບລະເບີດຕົກຄ້າງ ໃນພື້ນທີ່ທີ່ເຄີຍເກີດຂໍ້ຂັດແຍ່ງມາກ່ອນ, ແລະ ອັນດັບທີສອງ, ພວກເຂົາມັກຈະເປັນໂຕແທນທີ່ມີອິດທິພົນສູງເພື່ອຂັບເຄື່ອນການປ່ຽນແປງໃນວົງກວ້າງ, ລວມທັງການປັບປ່ຽນພຶດຕິກຳໃນກຸ່ມເດັກຊາຍ ແລະ ໄວໜຸ່ມ/ຜູ້ໃຫຍ່ທີ່ເປັນຜູ້ຊາຍ (12.10).[45]



ຂໍ້ແນະນຳກ່ຽວກັບບັນຫາເຫຼົ່ານີ້ແມ່ນໄດ້ຖືກໂຮມເຂົ້າໄວ້ໃນແຜນການດຳເນີນງານດ້ານບົດບາດຍິງຊາຍປະຈຳປີ 2008 ສຳລັບຂະແໜງການ ລບຕ (ພາກເອກະສານຊ້ອນທ້າຍທີ 3):

> ທົບທວນຄືນ, ດັດແກ້ ແລະ ສ້າງຂໍ້ຄວາມກ່ຽວກັບວຽກງານ MRE ໃຫ້ແກ່ຢ່າງໜ້ອຍ 4 ກຸ່ມສ່ຽງ ແລະ ສ້າງຍຸດທະສາດອັນສະເພາະໃຫ້ແກ່ກຸ່ມທີ່ມີຄວາມສ່ຽງສູງ. ເປົ້າໝາຍທີ່ຄຳນຶງເຖິງບົດບາດຍິງຊາຍປະກອບມີ: ຮັບປະກັນໃຫ້ ກຸ່ມທີ່ມີຄວາທມສ່ຽງ ໄດ້ຮັບການລະບຸຢ່າງເໝາະສົມ; ຮັບປະກັນໃຫ້ທຸກຄົນ, ບໍ່ວ່າຈະເພດໃດ, ອາຍຸເທົ່າໃດ, ມີລະດັບການສຶກສາຊໍ່າໃດ, ສະຖານະດ້ານຄວາມຮູ້ໜັງສື ຫຼື ສະຖານະທາງເສດຖະກິດ-ສັງຄົມເປັນແບບໃດກໍ່ຕາມ, ໃຫ້ສາມາດເຂົ້າເຖິງວຽກງານ MRE ໄດ້; ຮັບປະກັນໃຫ້ຂໍ້ຄວາມ ແລະ ຍຸດທະສາດຕ່າງໆກາຍເປັນຈຸດສົນໃຈຕົ້ນຕໍຂອງບັນດາກຸ່ມທີ່ໄດ້ຮັບການລະບຸໄວ້ແລ້ວ; ຍົກສູງ ການມີສ່ວນຮ່ວມຂອງຜູ້ຊາຍ ແລະ ແມ່ຍິງໃນຊຸມຊົນເຂົ້າໃນຂັ້ນຕອນການວາງແຜນ ແລະ ການຕິດຕາມກວດກາວຽກງານ MRE; ຮັບປະກັນໃຫ້ຜູ້ຊາຍ ແລະ ແມ່ຍິງມີ ຄວາມສາມາດໃນການເຂົ້າເຖິງໂອກາດ ແລະ ຜົນປະໂຫຍດຈາກການຈ້າງງານ ທີ່ກ່ຽວຂ້ອງກັບຂໍ້ລິເລີ່ມວຽກງານ MRE ຢ່າງເທົ່າທຽມກັນ; ແລະ ຮັບປະກັນການມີສ່ວນຮ່ວມຂອງກຸ່ມທີ່ມີຄວາມສ່ຽງ ເຂົ້າໃນຂັ້ນຕອນການສ້າງຂໍ້ຄວາມ ແລະ ການສ້າງຍຸດທະສາດ. ວຽກງານ: ປະເມີນຄວາມຈຳເປັນຂອງວຽກງານ MRE ໃນພື້ນທີ່ທີ່ໄດ້ຮັບຜົນກະທົບຈາກ ລບຕ ແລະ ເພື່ອ ລະບຸກຸ່ມເປົ້າໝາຍອັນສະເພາະ; ການວິເຄາະຂໍ້ມູນທີ່ເກັບກຳໄດ້ (ເຊັ່ນ: KAP, ການສຳຫຼວດຂໍ້ມູນທຽບຖານ, ການສຳຫຼວດຄວາມເພິ່ງພໍໃຈ, ແລະ ອື່ນໆ) ເພື່ອຮັບປະກັນ ໃຫ້ມີການໄຈ້ແຍກຂໍ້ມູນອອກຕາມກຸ່ມເພດ, ອາຍຸ ແລະ ສາເຫດໂຕຈິງຂອງອຸບັດເຫດ; ການຮັບປະກັນຄຸນນະພາບໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ການບັນລຸຜົນໄດ້ຮັບຂອງແຜນງານທີ່ຄຳນຶງເຖິງບົດບາດຍິງຊາຍ; ດຳເນີນກອງປະຊຸມພົບປະກັບການນຳຂັ້ນບ້ານ ເພື່ອຂໍຄວາມເຫັນດີໃນການສົ່ງເສີມໃຫ້ແມ່ຍິງ ແລະ ເດັກຍິງມີສ່ວນຮ່ວມຫຼາຍຂຶ້ນ; ດັດແກ້ ແລະ ທົບທວນຄືນ ມາດຕະຖານແຫ່ງຊາດ ແລະ SOP ເພື່ອໃຫ້ສະທ້ອນມຸມມອງດ້ານຍບົດບາດຍິງຊາຍເຂົ້ານຳ; ແລະ ທົບທວນຄືນຂະບວນການສ້າງທີມງານ ແລະ ການສ້າງ ຍຸດທະສາດຊັບພະຍາກອນມະນຸດທີ່ຄຳນຶງເຖິງບົດບາດຍິງຊາຍ ເພື່ອແກ້ໄຂຊ່ອງຫວ່າງ (ການຮັບ, ການເກັບຮັກສາ ແລະ ການພັດທະນາພະນັກງານ).

ວຽກງານຕ່າງໆພາຍໃຕ້ ແຜນການດຳເນີນງານດ້ານບົດບາດຍິງຊາຍປະຈຳປີ 2008 ແມ່ນຍັງຄົງມີຄວາມສອດຄ່ອງກັບໝາກຜົນທີ 2 ຂອງເອກະສານແຜນງານ UNDP, ວ່າດ້ວຍການຫຼຸດຜ່ອນການເຮັດພຶດຕິກຳສ່ຽງຂອງກຸ່ມທີ່ມີຄວາມສ່ຽງສູງ, ແລະ ໂຕຊີ້ວັດທີ 2.2, ວ່າດ້ວຍການເພີ່ມທະວີອັດຕາສ່ວນຮ້ອຍຂອງກຸ່ມສ່ຽງ (ຕາມກຸ່ມອາຍຸ, ເພດ, ກຸ່ມຊົນເຜົ່າ ແລະ ທີ່ຕັ້ງພູມລຳເນົາ) ທີ່ມີການປັບປ່ຽນຄວາມຮູ້, ທັດສະນະຄະຕິ ແລະ ການປະພຶດປະຕິບັດ. ດ້ວຍເຫດນີ້, ວຽກງານດັ່ງກ່າວຈຶ່ງ

ຈະຕ້ອງຖືກໂຮມເຂົ້າໃນຂັ້ນຕອນການທົບທວນຄືນວຽກງານ EORE, ທີ່ພວມໄດ້ຮັບການດຳເນີນງານໂດຍໂດຍແຜນງານ UNDP ໃນປັດຈຸບັນ.

### ຂໍ້ແນະນຳທີ 25

⇨ ຂັ້ນຕອນການທົບທວນຄືນວຽກງານ EORE ໃນປັດຈຸບັນໂດຍແຜນງານ UNDP ນັ້ນຈະຕ້ອງໂຮມເອົາວຽກງານທີ່ກຳນົດໄວ້ພາຍໃຕ້ ແຜນການດຳເນີນງານດ້ານບົດບາດຍິງຊາຍປະຈຳປີ 2008 ສຳລັບຂະແໜງການ ລບຕ (ພາກເອກະສານຊ້ອນທ້າຍທີ 3).

## ບັນທັດຖານທົ່ວໄປທາງສັງຄົມ

ດັ່ງທີ່ເຫັນໄດ້ຊັດເຈນໃນພາກທີ່ຜ່ານມາ, ແມ່ຍິງໄດ້ກຳນົດບົດບາດທາງສັງຄົມຂອງຕົນຂຶ້ນມາໃນຄົວເຮືອນ, ລວມໄປເຖິງພາຍໃນວຽກງານການປູກຝັງ ແລະ ໃນດ້ານການຕັດສິນໃຈຂັ້ນຊຸມຊົນ ແລະ ການເຂົ້າຮ່ວມກອງປະຊຸມ. ບົດບາດເຫຼົ່ານີ້ລ້ວນແລ້ວແຕ່ຂຶ້ນກັບບັນຖັດຖານທາງສັງຄົມ ແລະ ວັດທະນະທຳ.

ບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂ ຫຼື ລະບຸໃນລະຫວ່າງການລົງຢ້ຽມຢາມພາກສະໜາມ ແມ່ນຄວາມຮຸນແຮງບົນພື້ນຖານດ້ານບົດບາດຍິງຊາຍ. ບົດຄົ້ນຄວ້າຫຼາຍອັນໄດ້ອ້າງອີງເຖິງລະດັບຂອງການຍອມຮັບຄວາມຮຸນແຮງຕໍ່ແມ່ຍິງໃນສັງຄົມ. ບົດຄົ້ນຄວ້າກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ ທີ່ສ້າງຂຶ້ນໂດຍ ຄະນະກຳມາທິການແຫ່ງຊາດວ່າດ້ວຍຄວາມກ້າວໜ້າຂອງແມ່ຍິງ ໃນປີ 2015 ພົບວ່າມີແມ່ຍິງກວມ 15.3 ສ່ວນຮ້ອຍລາຍງານວ່າພວກເຂົາຕ້ອງໄດ້ປະເຊີນກັບຄວາມຮຸນແຮງທາງຮ່າງກາຍ, ຄວາມຮຸນແຮງທາງເພດ ຫຼື ທັງສອງ.[46] ອັດຕາສ່ວນນີ້ແມ່ນຕ່ຳກວ່າຄ່າສະເຫຼ່ຍສາກົນໃນລະດັບ 30 ສ່ວນຮ້ອຍທີ່ລະບຸໄວ້ໂດຍ ອົງການອານາໄມໂລກ,[47] ເຖິງແມ່ນວ່າການຄິດໄລ່ອັດຕາສ່ວນດັ່ງກ່າວ ຈະລວມເອົາຄວາມຮຸນແຮງຈາກຄູ່ຮັກ ແລະ ຄວາມຮຸນແຮງທາງເພດຈາກຄົນທີ່ບໍ່ແມ່ນຄູ່ຮັກເຂົ້ານຳກໍ່ຕາມ, ໃນຂະນະທີ່ຂໍ້ມູນຂອງລາວປະກອບມີພຽງແຕ່ຂໍ້ມູນຢ່າງຫຼັງ. ເພື່ອຄົ້ນຫາວ່າບັນຖັດຖານທາງສັງຄົມນັ້ນ ມີອິດທິພົນແນວໃດຕໍ່ພຶດຕິກຳນີ້, ບົດລາຍງານຈຶ່ງໄດ້ໃຫ້ຮູ້ວ່າ:

- ແມ່ຍິງກວມ 58 ສ່ວນຮ້ອຍ ແລະ ຜູ້ຊາຍກວມ49 ສ່ວນຮ້ອຍລາຍງານວ່າ [ຄວາມຮຸນແຮງຕໍ່ແມ່ຍິງ] ແມ່ນສິ່ງທີ່ກະທຳໄດ້ ໃນກໍລະນີທີ່ແມ່ຍິງບໍ່ຍຶດໝັ້ນຕໍ່ບັນຖັດຖານ, ບົດບາດ ແລະ ສາຍພົວພັນຍິງຊາຍອັນດັ້ງເດີມ
- 35.6 ສ່ວນຮ້ອຍຂອງຜູ້ຕອບບົດສຳຫຼວດ ເຫັນດີກັບປະໂຫຍກທີ່ວ່າ "ເມຍທີ່ດີຕ້ອງເຊື່ອຟັງຜົວ, ເຖິງແມ່ນວ່າຜູ້ເປັນເມຍຈະບໍ່ເຫັນດີກັບຜົວຂອງຕົນກໍ່ຕາມ"
- 22.9 ສ່ວນຮ້ອຍເຫັນດີວ່າ "ຜູ້ຊາຍຕ້ອງສະແດງໃຫ້ເຫັນວ່າແມ່ນໃຜເປັນໃຫຍ່"
- 29.4 ສ່ວນຮ້ອຍຍອມຮັບວ່າເມຍມີພັນທະໃນການຮ່ວມເພດກັບຜູ້ເປັນຜົວ[48]

ຂໍ້ມູນເຫຼົ່ານີ້ແມ່ນຜົນໄດ້ຮັບທີ່ສຳຄັນທີ່ຊີ້ໃຫ້ເຫັນເຖິງຄວາມເຊື່ອ ແລະ ຄວາມເຂົ້າໃຈຂອງແມ່ຍິງທີ່ກ່ຽວຂ້ອງກັບບົດບາດ ແລະ ບັນຖັດຖານຕໍ່ພວກຕົນທີ່ຝັງຮາກເລິກໃນສັງຄົມ, ແມ້ກະທັ້ງຄວາມເຊື່ອ ແລະ ຄວາມເຂົ້າໃຈລະຫວ່າງແມ່ຍິງດ້ວຍກັນເອງ.

## ຜົນກະທົບເພີ່ມເຕີມ ແລະ/ຫຼື ຜົນກະທົບອັນຮ້າຍແຮງຂອງບັນຖັດຖານທາງສັງຄົມໃນກຸ່ມຊົນເຜົ່າ

ກຸ່ມຊົນເຜົ່າຕ່າງໆມີບັນຖັດຖານທາງສັງຄົມ ແລະ ບັນຖັດຖານດ້ານບົດບາດຍິງຊາຍທີ່ຫຼາກຫຼາຍ ແລະ ແຕກຕ່າງກັນຢ່າງກວ້າງຂວາງ. ຂໍ້ມູນໄດ້ຊີ້ໃຫ້ເຫັນວ່າຫຼາຍຄອບຄົວໃນກຸ່ມຊົນເຜົ່າຕ່າງໆນັ້ນ ຕ້ອງປະເຊີນກັບບັນຫາຄວາມທຸກຍາກທີ່ເພີ່ມຂຶ້ນ, ໂດຍສະເພາະໃນເຂດຊົນນະບົດທີ່ຫ່າງໄກສອກຫຼີກ ບ່ອນທີ່ບັນຖັດຖານທາງສັງຄົມ ແລະ ວັດທະນະທຳສົ່ງເສີມໃຫ້ມີລູກຫຼາຍຄົນ ແລະ ໃຫ້ຄວາມສຳຄັນແກ່ລູກຊາຍເປັນພິເສດ, ການແຕ່ງດອງໄວ ແລະ ໃນບາງກໍລະນີກໍ່ປ່ອຍໃຫ້ມີການແຕ່ງດອງເດັກ ແລະ ການບັງຄັບແຕ່ງດອງເພື່ອເອີ້ນຄ່າສິນສອດຕ່າງໆ.[49] ການວິເຄາະດ້ານບົດບາດຍິງຊາຍແບບຮີບດ່ວນຂອງ ອົງການ CARE ໄດ້ອະທິບາຍວ່າການຈ່າຍຄ່າສິນສອດນັ້ນຖືເປັນ 'ຫຼັກປະກັນ' ຂອງຜູ້ເປັນເມຍຕໍ່ຜູ້ເປັນຜົວ ແລະ ຄອບຄົວຂອງລາວ, ໂດຍທີ່ຜູ້ເປັນເມຍນັ້ນຈະຕ້ອງເຊື່ອຟັງຄຳສັ່ງຂອງຜູ້ເປັນຜົວທຸກຢ່າງ.[50]

## ແນວຄິດເໝົາລວມ ແລະ ຄວາມເຂົ້າໃຈຂອງພະນັກງານເກັບກູ້ ລບຕ ຍິງພາກສະໜາມ

ພື້ນທີ່ອັນສະເພາະໃນການສືບຄົ້ນຂໍ້ມູນພາຍໃຕ້ການຄົ້ນຄວ້າຄັ້ງນີ້ ແມ່ນການສືບຄົ້ນທັດສະນະຄະຕິກ່ຽວກັບການຈ້າງງານແມ່ຍິງໃນຂະແໜງການ ລບຕ ແລະ ການສ້າງຄວາມເຂົ້າໃຈເຖິງບັນຫາທ້າທາຍຕ່າງໆ ທີ່ພວກເຂົາຕ້ອງປະເຊີນໃນວຽກງານ ແລະ ສະພາບການເຮັດວຽກໃນສະໜາມຂອງພວກເຂົາ. ດັ່ງທີ່ເຫັນໄດ້ຊັດເຈນໃນການສຳພາດກັບພະນັກງານ ລບຕ ແລະ ອຳນາດການປົກຄອງຕ່າງໆ, ແນວຄິດເໝົາລວມອັນສຳຄັນທີ່ຍັງມີຢູ່ໃນວຽກງານເກັບກູ້ ລບຕ ນັ້ນແມ່ນວ່ານີ້ແມ່ນວຽກງານ 'ທີ່ໜັກໜ່ວງ' ແລະ ບໍ່ເໝາະສົມກັບແມ່ຍິງ. ຜູ້ຖືກສຳພາດຫຼາຍຄົນກ່າວວ່າວຽກງານນີ້ອາດເປັນອັດຕະລາຍຕໍ່ສຸຂະພາບຂອງແມ່ຍິງ. ຂໍ້ຊີ້ນຳການຮັບ ແລະ ການຝຶກອົບຮົມພະນັກງານທີ່ຄຳນຶງເຖິງບົດບາດຍິງຊາຍໃນຂະແໜງການເກັບກູ້ລະເບີດຂອງ GMAP ກ່າວວ່າ:

> … ນັກເກັບກູ້ລະເບີດຍິງແມ່ນມີຄວາມສາມາດທາງຮ່າງກາຍ ເຊັ່ນດຽວກັນກັບນັກເກັບກູ້ລະເບີດຊາຍ ເນື່ອງຈາກວ່ານັກເກັບກູ້ລະເບີດທຸກຄົນຈະຕ້ອງມີຮ່າງກາຍທີ່ແຂັງແຮງ ແລະ ໄດ້ຮັບການກວດສຸຂະພາບປະຈຳປີແລ້ວ… ຖ້າຜູ້ກ່ຽວກວດສຸຂະພາບບໍ່ຜ່ານ, ແນ່ນອນວ່າກໍ່ຈະບໍ່ຖືກຮັບເຂົ້າເປັນພະນັກງານ, ບໍ່ວ່າຈະເພດໃດກໍ່ຕາມ.[51]

ອີງຕາມການສຳຫຼວດຂອງ GMAP, 8.8 ສ່ວນຮ້ອຍຂອງແມ່ຍິງຕ້ອງພົບພໍ້ກັບຂໍ້ຫຍຸ້ງຍາກທາງກາຍະພາບ ໃນການປະຕິບັດວຽກງານເກັບກູ້ລະເບີດ, ເມື່ອສົມທຽບກັບຜູ້ຊາຍໃນລະດັບ 9.9 ສ່ວນຮ້ອຍ. ນອກຈາກນັ້ນ, 9.9 ສ່ວນຮ້ອຍຂອງພະນັກງານເກັບກູ້ ລບຕ ຊາຍກ່າວວ່າພວກເຂົາຍັງຕ້ອງພົບພໍ້ກັບຂໍ້ຫຍຸ້ງຍາກທາງດ້ານຈິດໃຈອີກ ເມື່ອສົມທຽບໃສ່ກັບແມ່ຍິງໃນລະດັບ 2.9 ສ່ວນຮ້ອຍ.[52] ນັກເກັບກູ້ລະເບີດຍິງໄດ້ອະທິບາຍວ່າບັນຫາທ້າທາຍຕົ້ນຕໍໃນວຽກງານຂອງພວກເຂົາ ແມ່ນການຕໍ່ຕ້ານຈາກຄອບຄົວ, ຊຸມຊົນ ແລະ ເພື່ອນຮ່ວມງານຊາຍຂອງພວກເຂົາເອງ (76 ສ່ວນຮ້ອຍ), ໃນຂະນະທີ່ຜູ້ຊາຍກວມ 57 ສ່ວນຮ້ອຍເທົ່ານັ້ນທີ່ຮູ້ສຶກວ່າຖືກຕໍ່ຕ້ານ.[53]

ແນວຄິດເໝົາລວມ ແລະ ຄວາມເຂົ້າໃຈອີກອັນໜຶ່ງ ທີ່ບົດຄົ້ນຄວ້າພາກສະໜາມຄັ້ງນີ້ພະຍາຍາມທ້າທາຍແມ່ນແນວຄິດທີ່ບອກວ່າແມ່ຍິງ ແລະ ທີມຍິງລ້ວນນັ້ນມີປະສິດທິພາບໃນການປະຕິບັດວຽກງານເກັບກູ້ ລບຕ ດ້ອຍກວ່າຜູ້ຊາຍ ແລະ ບໍ່ສາມາດບັນລຸໂຄຕ້າປະຈຳວັນໄດ້. ແນວຄິດເຫຼົ່ານີ້ແມ່ນໄດ້ຮັບການໂຕ້ຖຽງຈາກກຸ່ມພະນັກງານເກັບກູ້ລະເບີດຍິງ ແລະ ໄດ້ຮັບການທ້າທາຍຈາກບົດຄົ້ນຄວ້າສາກົນ. ໃນປີ 2022, ການຄົ້ນຄວ້າກ່ຽວກັບຂໍ້ມູນຊັບພະຍາກອນມະນຸດຈາກ 4 ຜູ້ສະໜອງວຽກງານເກັບກູ້ລະເບີດໃນທົ່ວທັງ 4 ທະວີບແມ່ນແນໃສ່ປະເມີນ "ແນວຄິດເໝົາລວມ ແລະ ສົມມຸດຖານທີ່ບໍ່ໄດ້ຮັບການພິສູດ ທີ່ອາດເກີດຂຶ້ນໃນຂະແໜງການເກັບກູ້ລະເບີດ ກ່ຽວກັບການປະຕິບັດວຽກງານຂອງແມ່ຍິງ ແລະ ຄວາມພ້ອມຂອງພວກເຂົາໃນການດຳເນີນບົດບາດພາກສະໜາມ."[54] ການວິເຄາະຂໍ້ມູນດ້ານປະລິມານໄດ້ພົບວ່າ "ບໍ່ມີຄວາມແຕກຕ່າງອັນມີຄວາມໝາຍສຳຄັນລະຫວ່າງຍິງຊາຍ ໃນດ້ານປະສິດທິພາບຂອງການດຳເນີນງານ ຫຼື ໃນດ້ານຄວາມພ້ອມຂອງການດຳເນີນບົດບາດພາກສະໜາມໃນຂະແໜງການເກັບກູ້ລະເບີດ."[55]

ບັນຫາທີ່ພາໃຫ້ເກີດຄວາມເຂົ້າໃຈວ່າພະນັກງານເກັບກູ້ ລບຕ ຍິງບໍ່ສາມາດບັນລຸຄາດໝາຍຕ່າງໆໄດ້ນັ້ນ ແມ່ນກ່ຽວຂ້ອງກັບການລາພັກເກີດລູກ. ບົດລາຍງານທີ່ກ່າວມາຂ້າງເທິງນີ້ພົບວ່າ ບໍ່ມີຄວາມແຕກຕ່າງກັນລະຫວ່າງພະນັກງານຍິງຊາຍ ໃນດ້ານຄວາມພ້ອມຂອງການດຳເນີນວຽກງານເກັບກູ້ລະເບີດພາກສະໜາມ ໂດຍອີງໃສ່ຂໍ້ມູນກ່ຽວກັບການລາປ່ວຍ ແລະ ລາພັກເກີດລູກ (ໂດຍລວມແລ້ວມີຄວາມຜິດດ່ຽງກັນເລັກນ້ອຍເທົ່ານັ້ນ). ເຖິງຢ່າງໃດກໍ່ຕາມ, ຍ້ອນພະນັກງານເກັບກູ້ລະເບີດຍິງທີ່ໄດ້ຮັບການສຳພາດໃນ ກອງຮ້ອຍ 58 ແລະ ໂຄງການ UXO Lao ນັ້ນສ່ວນໃຫຍ່ມີອາຍຸຍັງນ້ອຍຢູ່, ຈຶ່ງເຮັດໃຫ້ບໍ່ສາມາດພິສູດຄວາມເຂົ້າໃຈຂ້າງເທິງນີ້ໄດ້. ທີມຍິງລ້ວນຂອງ ໂຄງການ UXO Lao ກ່າວວ່າໃນແຕ່ລະປີຈະມີພະນັກງານຍິງຢ່າງໜ້ອຍ 1 ຫຼື 2 ຄົນລາພັກເກີດລູກ. ເຖິງຢ່າງໃດກໍ່ຕາມ, ພວກເຂົາກໍ່ຍັງຄົງສາມາດບັນລຸໄດ້ຕາມໂຄຕ້າປະຈຳປີ. ດັ່ງທີ່ໄດ້ໂອ້ລົມກັນໃນພາກສິດທິ ແລະ ສະຖານະທາງກົດໝາຍ, ການທີ່ພວກເຂົາບັນລຸໂຄຕ້າປະຈຳປີໄດ້ນັ້ນ ສ່ວນໜຶ່ງແມ່ນອາດຍ້ອນວ່າພວກເຂົາຕ້ອງເຮັດວຽກ 9 ເດືອນຈົນຄົບກຳນົດເກີດລູກ ເຊິ່ງເປັນການລະເມີດ ປະມວນກົດໝາຍແຮງງານ. ການລາພັກເກີດລູກ ແລະ ສິດທິຂອງແມ່ຍິງຖືພາ ຈະຕ້ອງບໍ່ຖືກເຂົ້າໃຈວ່າເປັນອຸປະສັກສຳລັບຂະແໜງການ. ທຸກອົງກອນຕ້ອງເຄົາລົບສິດທິດັ່ງກ່າວ ທີ່ໄດ້ຮັບການຄ້ຳປະກັນພາຍໃຕ້ ປະມວນກົດໝາຍແຮງງານ, ໃນຂະນະດຽວກັນກໍ່ຫັນໄປແກ້ໄຂບັນຫາທີ່ເປັນຕົ້ນຕໍອັນແທ້ຈິງ ທີ່ກ່ຽວຂ້ອງກັບການຂາດແຫຼ່ງທຶນ ແລະ ຄວາມພ້ອມຂອງແຮງງານໄລຍະສັ້ນ (ໂດຍສະເພາະແມ່ຍິງ) ເພື່ອມາເຮັດວຍກແທນໃນໄລຍະຂອງການລາພັກເກີດລູກ ລວມໄປເຖິງພະນັກງານຊາຍໃນໄລຍະທີ່ມີການລາປ່ວຍແບບກະທັນຫັນ. GMAP ໄດ້ຍົກໃຫ້ ສປປ ລາວ ເປັນປະເທດທີ່ມີຫຼັກປະຕິບັດທີ່ດີໃນຂົງເຂດນີ້, ໂດຍອ້າງອີງເຖິງຂໍ້ລິເລີ່ມຂອງ ອົງການແມັກ ທີ່ຝຶກອົບຮົມໃຫ້ພະນັກງານຮັກສາຄູວາມປອດໄພ ສາມາດປະຕິບັດໜ້າທີ່ແທນພະນັກງານທີ່ຂໍລາພັກເກີດລູກໄດ້.[56] ຂໍ້ຊີ້ນຳຂອງ GMAP ຍັງຊຸກຍູ້ໃຫ້ມີການຍົກຍ້າຍພະນັກງານທີ່ຖືພາ ແລະ ແມ່ຍິງຫຼັງເກີດລູກແລ້ວໄປປະຈຳຕຳແໜ່ງໃໝ່ເພື່ອເປັນການຝຶກຝົນຊຸກທັກສະ ແລະ ສ້າງປະສົບການໃໝ່ໃຫ້ແກ່ພວກເຂົາໂດຍລວມ.

ບັນຫາສຸດທ້າຍ ແລະ ຮີບດ່ວນທີ່ກ່ຽວຂ້ອງກັບຄວາມຮູ້, ຄວາມເຊື່ອ ແລະ ຄວາມເຂົ້າໃຈຂອງແມ່ຍິງ ທີ່ເຮັດວຽກພາກສະໜາມໃນຂະແໜງການ ລບຕ ແມ່ນກ່ຽວຂ້ອງກັບປະຊາຊົນທ້ອງຖິ່ນ ແລະ ທີ່ພັກຮ່ວມ. ບັນຫາເຫຼົ່ານີ້ແມ່ນໄດ້ຮັບການໂອ້ລົມ ແລະ ແກ້ໄຂກັນແລ້ວໃນບົດລາຍງານສະບັບນີ້, ໂດຍທີ່ ຂໍ້ແນະນຳທີ 20 ໄດ້ສະເໜີໃຫ້ດຳເນີນການຄົ້ນຄວ້າ ແລະ ການໂອ້ລົມກັບທຸກຂະແໜງການ. ບັນຖັດຖານ ແລະ ຄວາມເຂົ້າໃຈຂອງສັງຄົມ ຍັງຄົງສ້າງຄວາມກົດດັນໃຫ້ແມ່ຍິງທີ່ແຕ່ງດອງແລ້ວ ຈະຕ້ອງບໍ່ເດີນທາງຫ່າງຈາກຄອບຄົວຂອງພວກເຂົາ ຫຼື ໄປພັກເຊົາຢູ່ກັບແມ່ຍິງຄົນອື່ນໆ ໃນໍລະນີທີ່ພວກເຂົາແຕ່ງດອງແລ້ວ, ທັງຍັງພິຈາລະນາວ່າວຽກງານນີ້ແມ່ນບໍ່ເໝາະສົມກັບແມ່ຍິງ. ໃນເວລາທີ່ຜູ້ຊາຍ ແລະ ແມ່ຍິງອາໄສຢູ່ໃນທີ່ພັກຮ່ວມກັນນັ້ນ ພວກເຂົາລ້ວນແລ້ວແຕ່ມີຄວາມເຂົ້າໃຈເຖິງບົດບາດອັນດັ້ງເດີມຂອງຕົນ. ເຖິງແມ່ນວ່າຈະມີການໝູນວຽນຊ່ວຍກັນເຮັດວຽກເຮືອນລະຫວ່າງຍິງຊາຍກໍ່ຕາມ, ພະນັກງານເກັບກູ້ ລບຕ ຊາຍອະທິບາຍວ່າ ແມ່ຍິງມັກຈະເປັນຜູ້ເຂົ້າຄົວເພື່ອກະກຽມອາຫານ ແລະ ນຳໄປແຕ່ງກິນເປັນເຂົ້າສວຍຢູ່ສະໜາມ. ມີການແນະນຳໃຫ້ຫົວໜ້າທີມຕ້ອງເປັນຜູ້ຮັບຜິດຊອບ ຮັບປະກັນໃຫ້ມີການແບ່ງກັນເຮັດວຽກ

ເຮືອນຢ່າງເທົ່າທຽມ ໃນເວລາອາໄສໃນທີ່ພັກຮ່ວມກັນ, ພ້ອມທັງຕ້ອງເຂັ້ມງວດກັບການດື່ມສິ່ງມຶນເມົາຂອງຜູ້ຊາຍ, ເຊິ່ງຜິດຕໍ່ລະບຽບການ, ແຕ່ພັດເປັນທີ່ຍອມຮັບໄດ້ຕາມບັນຖັດຖານທາງສັງຄົມ.

## ຄວາມພິການ

ການທົບທວນຄືນບົດຄວາມຈາກທົ່ວໂລກໃນປີ 2014, ຄວາມເປັນຊາຍ: ອຸປະສັກທີ່ເບິ່ງບໍ່ເຫັນໃນການຊ່ວຍເຫຼືອຜູ້ລອດຊີວິດ, ໄດ້ລະບຸຈຸດເນັ້ນໜັກຂອງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃສ່ແມ່ຍິງ ແລະ ເດັກຍິງ ໃນຂະນະດຽວກັນກໍ່ລະເລີຍຜົນກະທົບທີ່ແຕກຕ່າງທາງດ້ານຈິດໃຈທີ່ຜູ້ຊາຍ ແລະ ເດັກຊາຍຕ້ອງພົບພໍ້ຜ່ານການບາດເຈັບຈາກ ລບຕ. ຜູ້ພິການຊາຍອາດຮູ້ສຶກຕ້ອຍຕ່ຳ, ໂສກເສົ້າ, ໃຈຮ້າຍ ແລະ ດ້ອຍຄ່າ[57] ຍ້ອນພວກເຂົາບໍ່ສາມາດດຳເນີນບົດບາດ ໃນຖານະຂອງຜູ້ສ້າງລາຍຮັບໃຫ້ແກ່ຄອບຄົວໄດ້ອີກຕໍ່ໄປ, ເຊິ່ງໃນບາງກໍລະນີກໍ່ອາດນຳໄປສູ່ບັນຫາຄວາມຮຸນແຮງໃນຄອບຄົວ. ເອກະສານດັ່ງກ່າວໄດ້ຮຽກຮ້ອງໃຫ້ມີການຄົ້ນຄວ້າເພີ່ມເຕີມກ່ຽວກັບການມີສ່ວນຮ່ວມຂອງຜູ້ລອດຊີວິດຊາຍ ເຂົ້າໃນແຜນງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

ການສຳພາດຄົວເຮືອນກັບຜູ້ຊາຍທີ່ລອດຊີວິດຈາກອຸບັດເຫດ ລບຕ ທີ່ຕ້ອງທົນທຸກທໍລະມານດ້ວຍຄວາມເຈັບປວດ ຈາກສະເກັດລະເບີດທີ່ຝັງຢູ່ໃນຮ່າງກາຍມາເປັນເວລາຍາວນານ, ເຊິ່ງສົ່ງຜົນກະທົບຕໍ່ຄວາມສາມາດໃນການປູກຝັງຂອງຜູ້ກ່ຽວ, ກ່າວວ່າລາວຮູ້ສຶກເສົ້າ ແລະ ໃຈຮ້າຍໄປພ້ອມໆກັນ. ເມຍຂອງລາວໃຫ້ຄຳເຫັນວ່າເມື່ອຜົວຮູ້ສຶກໃຈຮ້າຍ, ລາວກໍ່ຈະກາຍເປັນ "ຄົນທີ່ໜ້າລັງກຽດ."

ທີ່ປຶກສາໄດ້ສອບຖາມປະຊາຊົນໃນບ້ານຕ່າງໆ ເຖິງຄວາມຮູ້ສຶກຂອງພວກເຂົາວ່າ ການຈຳແນກຕໍ່ຄົນພິການນັ້ນ ແຕກຕ່າງໄປຈາກການຈຳແນກຕໍ່ຜູ້ຊາຍ ແລະ ແມ່ຍິງ ຫຼື ບໍ່. ຜູ້ຕອບຄຳຖາມບໍ່ໄດ້ຮູ້ສຶກເຖິງຄວາມແຕກຕ່າງ, ເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ອົງການ USAID ໃນປີ 2018 ວ່າດ້ວຍບົດບາດຍິງຊາຍ ແລະ ຄວາມພິການໃນ ສປປ ລາວ.[58] ມັນຍັງຊີ້ໃຫ້ເຫັນອີກວ່າຜູ້ພິການຊາຍນັ້ນ ມີແນວໂນ້ມທີ່ຈະແຕ່ງດອງກັບແມ່ຍິງທີ່ພິການໜ້ອຍກວ່າ. ຜູ້ຕອບຄຳຖາມຊາຍໃນ ແຂວງຊຽງຂວາງ ກ່າວວ່າ:

> ... ສັງຄົມເບິ່ງຜູ້ພິການຍິງໃນແງ່ລົບ, ດ້ວຍຄວາມລັງກຽດ ແລະ ບໍ່ເປັນທີ່ຕ້ອງການ. ຜູ້ຊາຍບໍ່ຕ້ອງການແຕ່ງດອງກັບພວກເຂົາ ຍ້ອນຜູ້ຊາຍຢ້ານຖືກໝູ່ເວົ້າຂວັນວ່າມີປັນຍາຫາເມຍໄດ້ແຕ່ຄົນພິການເທົ່ານັ້ນ. ... ພໍ່ແມ່ເອງກໍ່ບໍ່ຢາກເສຍເວລາ ແລະ ເງິນຄຳໄປກັບການພາລູກສາວທີ່ພິການໄປໃສ່ແຂນຂາທຽມ ຍ້ອນບໍ່ມີໃຜຢາກແຕ່ງດອງກັບພວກເຂົາຢູ່ດີ.[59]

ຜູ້ຖືກສຳພາດອີກຄົນໜຶ່ງກ່າວວ່າແມ່ຍິງ ແລະ ເດັກຍິງນັ້ນ:

> ... ພວກເຂົາຕ້ອງໄດ້ປະເຊີນກັບຄວາມຫຍຸ້ງຍາກຕ່າງໆ ແລະ ບໍ່ມີບົດບາດຫຍັງໃນຄອບຄົວ ແລະ ໃນຊຸມຊົນ... ຄົນທົ່ວໄປເຊື່ອວ່າຄວາມພິການນັ້ນແມ່ນສິ່ງທີ່ບໍ່ດີ ແລະ, ຍົກຕົວຢ່າງ, ໃນກໍລະນີທີ່ຄອບຄົວໜຶ່ງມີລູກທີ່ພິການ, ກໍ່ຈະມີຄວາມເຊື່ອວ່າຄອບຄົວນັ້ນໂຊກບໍ່ດີ ແລະ ຕໍ່ມາຊຸມຊົນກໍ່ຈະກ່າວໂທດ ແລະ ກີດກັນພວກເຂົາຈາກສັງຄົມ.[60]

ບົດຄົ້ນຄວ້າຂອງ ອົງການ USAID ໄດ້ຊີ້ໃຫ້ເຫັນເຖິງການຈຳແນກອັນສຳຄັນດ້ານບົດບາດຍິງຊາຍ ແລະ ຄວາມພິການຕໍ່ແມ່ຍິງ ແລະ ເດັກຍິງທີ່ພິການ, ໂດຍອີງໃສ່ບັນຖັດຖານ ແລະ ການເໝົາລວມທາງວັດທະນະທຳ. ການສ້າງຄວາມເຂົ້າໃຈຕໍ່ບັນຫານີ້ຖືເປັນສິ່ງທີ່ຈຳເປັນ ເພື່ອແກ້ໄຂຄວາມຕ້ອງການໃຫ້ແກ່ແມ່ຍິງ ແລະ ເດັກຍິງໃນວຽກງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ດັ່ງທີ່ໄດ້ເນັ້ນໜັກໄວ້ໃນລະຫວ່າງກອງປະຊຸມຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນນະຄອນຫຼວງວຽງຈັນ ແລະ ແຂວງຊຽງຂວາງ, ບໍລິການສ່ວນໃຫຍ່ແມ່ນເນັ້ນໜັກໃສ່ແຕ່ຜູ້ປະສົບເຄາະຮ້າຍທີ່ເປັນຜູ້ຊາຍ, ຍົກເວັ້ນວຽກງານການຊ່ວຍເຫຼືອຂອງ LDWDC. ບັນຖັດຖານທາງສັງຄົມ ແລະ ວັດທະນະທຳຈະຕ້ອງຖືກນຳມາພິຈາລະນາ ເພື່ອຮັບປະກັນໃຫ້ແມ່ຍິງ ແລະ ເດັກຍິງສາມາດເຂົ້າເຖິງການສະໜັບສະໜຸນທີ່ພວກເຂົາຕ້ອງການ ທັງຮັບປະກັນໃຫ້ຜູ້ລອດຊີວິດຊາຍ ສາມາດເຂົ້າເຖິງການໃຫ້ຄຳປຶກສາດ້ານຈິດຕະວິທະຍາ. ການສະໜັບສະໜຸນຈາກທຸກຄົນໃນຄອບຄົວເອງກໍ່ມີຄວາມສຳຄັນຫຼາຍ, ໂດຍສະເພາະໃນເວລາທີ່ກ່ຽວພັນກັບການຊ່ວຍເຫຼືອຜູ້ດູແລ ແລະ ຜູ້ລອດຊີວິດຕົ້ນຕໍ. ເຖິງແມ່ນວ່າ COPE ຈະສະໜອງການໃຫ້ຄຳປຶກສາດ້ານຈິດຕະວິທະຍາໃນ ແຂວງຊຽງຂວາງ ແລ້ວກໍ່ຕາມ, ບໍ່ມີຜູ້ປະສົບເຄາະຮ້າຍຊາຍທີ່ໄດ້ຮັບການສຳພາດຄັ້ງນີ້ຄົນໃດ ທີ່ເຄີຍໄດ້ຍິນກ່ຽວກັບບໍລິການນີ້ມາກ່ອນ. ຂໍ້ແນະນຳຈາກ ອົງການແມັກ ໃນປີ 2008 ແລະ GMAP ໃນປີ 2014 ຍັງຄົງມີຄວາມສຳຄັນຢູ່:

- ຜູ້ໃຫ້ (ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ) ຈະຕ້ອງທັງເຂົ້າໃຈ ແລະ ແກ້ໄຂບັນຫາຕ່າງໆທີ່ກ່ຽວຂ້ອງກັບ ຄວາມພາກພູມໃຈ ແລະ ຄວາມໝັ້ນໃຈໃນໂຕເອງ ແລະ ຕ້ອງບໍ່ເນັ້ນໜັກໃສ່ພຽງແຕ່ການບາດເຈັບທາງຮ່າງກາຍເທົ່ານັ້ນ (ຍົກຕົວຢ່າງ: ຜູ້ຊາຍມັກຈະສູນເສຍຄວາມພູມໃຈໃນໂຕເອງຫຼາຍກວ່າແມ່ຍິງ) (ອົງການແມັກ 2008:4.2.2).
- ວິເຄາະ ລະບົບຕິດຕາມຜູ້ລອດຊີວິດ ເພື່ອໃຫ້ໄດ້ຮັບຂໍ້ມູນກ່ຽວກັບ ຄວາມຕ້ອງການການຊ່ວຍເຫຼືອຂອງກຸ່ມຜູ້ປະສົບເຄາະຮ້າຍໂດຍແບ່ງຕາມເພດ ແລະ ອາຍຸ - ນຳໃຊ້ຜົນໄດ້ຮັບຕ່າງໆ ເພື່ອອອກແບບບໍລິການຕາມຄວາມເໝາະສົມ ຮ່ວມກັບບັນດາຄູ່ຮ່ວມມື (ກະຊວງສຶກສາ, ກະຊວງສາທາ ແລະ ກະຊວງແຮງງານ) ແລະ ສ້າງເຄື່ອງມືຕິດຕາມກວດກາຜົນກະທົບຂອງການຊ່ວຍເຫຼືອຜູ້ລອດຊີວິດໃນດ້ານປະລິມານ/ຄຸນນະພາບ (ຕາມກຸ່ມເພດ ແລະ ອາຍຸ) (GMAP 2014).



© UNDP / Mailee Osten-Tan



© UNDP / Mailee Osten-Tan

# 7 ຂໍ້ແນະນຳ



## 7. ຂໍ້ແນະນຳ

ພາກສ່ວນຕໍ່ໄປນີ້ສັງລວມບັນດາຂໍ້ແນະນຳທີ່ມີຢູ່ໃນບົດລາຍງານສະບັບນີ້, ພ້ອມກັບບາງອັນທີ່ແນໃສ່ແກ້ໄຂບັນຫາທົ່ວໄປ. ຂໍ້ແນະນຳເຫຼົ່ານີ້ແມ່ນໄດ້ຮັບການຈັດລຽງຕາມຫົວຂໍ້ເພື່ອໃຫ້ສອດຄ່ອງກັບ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແລະ ຂອບວຽກຜົນໄດ້ຮັບທີ່ກ່ຽວຂ້ອງ.

**1. ນະໂຍບາຍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແລະ ກົນໄກການປະສານງານ**

**1.A ນະໂຍບາຍ/ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຂອງ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao**
ຂໍ້ແນະນຳຂອງ GMAP ທີ່ຮ່າງຂຶ້ນໂດຍ NRA ແລະ ຖືກຮັບຮອງເປັນນະໂຍບາຍດ່ຽວ ຫຼື ແຜນການດຳເນີນງານທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍແມ່ນໄດ້ຮັບການພິຈາລະນາພາຍໃຕ້ບົດລາຍງານສະບັບນີ້ວ່າເປັນສະບັບປັບປຸງຂອງ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ, ໂດຍມີການລະບຸວຽກງານຕ່າງໆທີ່ NRA, ກອງຮ້ອຍ 58, ໂຄງການ UXO Lao ແລະ LWU ມີໜ້າທີ່ຮັບຜິດຊອບໃນການຈັດຕັ້ງປະຕິບັດ. ນອກຈາກນັ້ນ, ເອກະສານຊີ້ນຳຂອງ UNMAS ຈະຕ້ອງຖືກນຳໃຊ້ເປັນຂໍ້ຊີ້ນຳການປະຕິບັດໂຕຈິງ ເພື່ອເຊື່ອມສານວຽກງານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້າໃນຂະແໜງການ ລບຕ ໂດຍດັດປັບໃຫ້ສອດຄ່ອງກັບສະພາບການຂອງ ສປປ ລາວ ຕາມຄວາມຈຳເປັນ.

**1.B ກຸ່ມປະສານວຽກງານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ**
ການສ້າງ ກຸ່ມປະສານວຽກງານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ແມ່ນປະຕິບັດຕາມຂໍ້ແນະນຳຈາກການປະເມີນຜົນຂອງ ອົງການ ສປຊ ເພື່ອແມ່ຍິງ / LWU. ສະມາຊິກຂອງກຸ່ມດັ່ງກ່າວອາດລວມມີຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ຜູ້ສະໜອງວຽກງານ EORE ໃນຂະແໜງການ ລບຕ ລວມໄປເຖິງຜູ້ໃຫ້ທຶນທັງໝົດທີ່ຍັງເຄື່ອນໄຫວວຽກໃນຂະແໜງການ. ວາລະການເຄື່ອນໄຫວຂອງກຸ່ມອາດລວມມີ:

- ⇨ ການຄົ້ນຄວ້າທົ່ວຂະແໜງການຕໍ່ບັນຫາທີ່ກ່ຽວຂ້ອງກັບ ການຈ້າງງານພະນັກງານແມ່ຍິງ, ລວມທັງບັນຫາທີ່ກ່ຽວຂ້ອງກັບການຖືພາ ແລະ ການລາພັກເກີດລູກ, ການລ່ວງລະເມີດ ແລະ ຄວາມປອດໄພ, ທີ່ພັກອາໄສຮ່ວມກັນ ແລະ ຄວາມເຂົ້າໃຈຂອງຊຸມຊົນ.
- ⇨ ຫຼັກປະຕິບັດທີ່ດີໃນການແກ້ໄຂບັນຫາທ້າທາຍລະດັບສູງໃນທົ່ວຂະແໜງການ, ລວມທັງຂັ້ນຕອນການອອກແບບວຽກງານ EORE ໃຫ້ແທດເໝາະກັບກຸ່ມສ່ຽງ, ພ້ອມຮັບປະກັນໃຫ້ມີການຕິດຕາມກວດກາ ແລະ ປະເມີນຄວາມຄືບໜ້າຢ່າງເປັນປະຈຳ ແລະ ທັນຕໍ່ສະພາບການ.
- ⇨ ການພິຈາລະນາຈັດມະຫາກຳບານເຕະໃຫ້ແກ່ເດັກຊາຍ ແລະ ໄວໜຸ່ມຊາຍໂດຍສອດຄ່ອງກັບ ໂຕຊີ້ວັດໝາກຜົນທີ 1.3 ຂອງແຜນງານ UNDP, ວ່າດ້ວຍເວລາທີໃນການໂອ້ລົມແນວຄິດໃໝ່.
- ⇨ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຈະຕ້ອງຖືກເຊີນໃຫ້ເຂົ້າມານຳສະເໜີຂໍ້ມູນ ກ່ຽວກັບຄວາມສອດຄ່ອງຂອງວຽກງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍກັບ ດຳລັດຂອງ ສປປ ລາວ ວ່າດ້ວຍສິດທິຂອງຄົນພິການ.

**2. ການສ້າງຂີດຄວາມສາມາດ**

**2.A** ຄູ່ມືການຝຶກອົບຮົມການເຊື່ອມສານວຽກງານດ້ານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ ໃນ ສປປ ລາວ ຈະຕ້ອງໄດ້ຮັບການທົບທວນຄືນ ແລະ ປັບປຸງໃສ່ຈຸດທີ່ຈຳເປັນ ແລະ ລິເລີ່ມຈັດຕັ້ງປະຕິບັດໂດຍພະນັກງານຂອງ NRA, ກອງຮ້ອງ 58 ແລະ ໂຄງການ UXO Lao, ໂດຍທຳອິດເນັ້ນໜັກໃສ່ຈຸດປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ແລະຕໍ່ມາຈຶ່ງຂະຫຍາຍໃຫ້ກວມເອົາພະນັກງານໃນຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານທີ່ເຮັດວຽກແກ້ໄຂບັນຫາ ລບຕ.

**2.B** ຕຍໍ່ອດຈາກບັນດາເຄື່ອງມືຊີ້ນຳທີ່ຖືກສ້າງຂຶ້ນໂດຍ GICHD/GMAP ເພື່ອແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ກ່ຽວຂ້ອງກັບການກຳນົດບຸລິມະສິດ, ການຮັບເອົາພະນັກງານ ແລະ ການຝຶກອົບຮົມ, ການຄຸ້ມຄອງຄຸນນະພາບ, ສັນຍາ, ການຄຸ້ມຄອງທຶນ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

**3. ນະໂຍບາຍ ແລະ ຂັ້ນຕອນການກຳນົດແຜນງານໃນຂະແໜງການ ລບຕ**

**3.A** ໂດຍສອດຄ່ອງກັບ NPAGE ຄັ້ງທີ 4, ຂໍ້ມູນທຸກອັນຈະຕ້ອງຖືກແບ່ງອອກເປັນກຸ່ມເພດ, ອາຍຸ, ຄວາມພິການ, ກຸ່ມຊົນເຜົ່າ, ທີ່ພັກອາໄສ ແລະ ສະຖານະທາງເສດຖະກິດ-ສັງຄົມ, ໂດຍສະເພາະທີ່ກ່ຽວຂ້ອງກັບຂະແໜງການ ລບຕ.

**3.B** ທຸກຂັ້ນຕອນການເກັບກູ້ລະເບີດ ຈະຕ້ອງລວມມີການປຶກສາຫາລືກັບຊຸມຊົນ. ການປຶກສາຫາລື ແລະ ການຝຶກອົບຮົມວຽກງານ EORE ເຫຼົ່ານີ້ຈະຕ້ອງລວມມີຜູ້ຕາງໜ້າຈາກທຸກພາກສ່ວນໃນຊຸມຊົນ (ແມ່ຍິງ, ຜູ້ຊາຍ, ເດັກຊາຍ, ເດັກຍິງ, ຜູ້ສູງອາຍຸ, ໄວໜຸ່ມ, ກຸ່ມຊົນເຜົ່າ, ຄົນພິການ, ຜູ້ທີ່ບໍ່ຮູ້ໜັງສື ແລະ ຜູ້ທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ, ໂດຍສະເພາະໃນພື້ນທີ່ທີ່ມີລະເບີດຕົກຄ້າງໃນລະດັບສູງ). ຕ້ອງມີການປະກາດຂ່າວກ່ຽວກັບການພົບປະຕ່າງໆໃນພາສາທີ່ກຸ່ມຊົນເຜົ່ານຳໃຊ້ໃນພື້ນທີ່, ພ້ອມດ້ວຍກົນໄກເພີ່ມເຕີມໃນການແຈ້ງໃຫ້ຜູ້ມີຄວາມສ່ຽງ ຫຼື ຜູ້ດ້ອຍໂອກາດ

ຊາບ. ການພົບປະຕ່າງໆຈະຕ້ອງຖືກຈັດຂຶ້ນຢ່າງເປັນປະຈຳ ພ້ອມທັງຕ້ອງຮັບປະກັນໃຫ້ມີຄົນເຂົ້າຮ່ວມຫຼາຍທີ່ສຸດຈາກທຸກພາກສ່ວນຂອງຊຸມຊົນ, ໄປພ້ອມໆກັບການພິຈາລະນາຈັດກອງປະຊຸມແຍກຕ່າງຫາກໃຫ້ແກ່ແມ່ຍິງ/ຜູ້ຊາຍ, ໄວໜຸ່ມ/ຜູ້ສູງອາຍຸ, ຜູ້ເກັບເສດໂລຫະ, ກຸ່ມຊົນເຜົ່າ ຫຼື ກຸ່ມອື່ນໆເພື່ອເພີ່ມອັດຕາການມີເຂົ້າຮ່ວມ ແລະ ການມີສ່ວນຮ່ວມຂຶ້ນຕື່ມ.

**3.C** ໃຫ້ລວມມີການສະໜອງຄວາມຮູ້ແກ່ປະຊາຊົນໃນທ້ອງຖິ່ນ ກ່ຽວກັບຂັ້ນຕອນຕ່າງໆໃນການຮ້ອງຂໍການເກັບກູ້ລະເບີດ ແລະ ບໍລິການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍທີ່ມີຢູ່, ແລະ ຮັບປະກັນໃຫ້ທຸກຄົນສາມາດເຂົ້າເຖິງວຽກງານ EORE ໄດ້. ສິ່ງນີ້ແມ່ນມີຄວາມຈຳເປັນໂດຍສະເພາະຕໍ່ກຸ່ມທີ່ມີຄວາມສ່ຽງສູງ, ເຊັ່ນ: ຄົນທຸກ, ຜູ້ທີ່ມີລະດັບການສຶກສາ ແລະ ຄວາມຮູ້ໜັງສືຕ່ຳ, ກຸ່ມຊົນເຜົ່າ, ແມ່ຍິງ, ຄົນພິການ ແລະ ຜູ້ທີ່ອາໄສຢູ່ເຂດຫ່າງໄກສອກຫຼີກ. ພິຈາລະນານຳໃຊ້ທີມງານເຄື່ອນທີ່ ເພື່ອສະໜອງຂໍ້ມູນຂ່າວສານກ່ຽວກັບວຽກງານ EORE, ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍທີ່ມີຢູ່ ແລະ ຂໍ້ມູນກ່ຽວກັບຂັ້ນຕອນການເກັບກູ້ ລບຕ.

**3.D** ການສະໜັບສະໜູນຈາກ ອົງການ UNDP ສຳລັບການທົບທວນຄືນວຽກງານ EORE ອາດໃຫ້ສາມາດໂຮມເອົາຜົນໄດ້ຮັບຂອງການຄົ້ນຄວ້ານີ້ເຂົ້າໃນການສຳຫຼວດຄວາມຮູ້, ທັດສະນະຄະຕິ ແລະ ຫຼັກປະຕິບັດ, ແຜນຍຸດທະສາດ, ມາດຕະຖານລະບຽບການປະຕິບັດງານ, ຂໍ້ມູນທຽບຖານ ແລະ ຂໍ້ມູນຂີດໝາຍ ແລະ ການສະໜັບສະໜູນສຳລັບຫຼັກປະຕິບັດຕ່າງໆ, ໂດຍສະເພາະເນັ້ນໜັກໃສ່ບັນຫາທີ່ກ່ຽວຂ້ອງກັບພາສາ ແລະ ຄວາມຮູ້ໜັງສື. ວຽກງານຕ່າງໆຈະຕ້ອງຖືກດຳເນີນການໃນພື້ນທີ່ ທີ່ປະຊາກອນກຸ່ມສ່ຽງຈະສາມາດເຂົ້າຮ່ວມນຳໄດ້, ໃນເວລາທີ່ພວກເຂົາສະດວກ, ແລະ ອາດລວມມີການສະໜອງແຮງຈູງໃຈໃຫ້ພວກເຂົາເຂົ້າຮ່ວມນຳ (ເບິ່ງຕື່ມ ແຜນການດຳເນີນງານດ້ານບົດບາດຍິງຊາຍໃນປີ 2008 ໃນ ພາກເອກະສານຊ້ອນທ້າຍທີ 3).

**3.E** ລວມເອົາກິດຈະກຳການສ້າງແຜນທີ່ ລບຕ ແບບມີສ່ວນຮ່ວມເຂົ້າໃນຊຸດຝຶກອົບຮົມວຽກງານ EORE ໃຫ້ແກ່ກຸ່ມຜູ້ຝຶກອົບຮົມທັງຍິງ ແລະ ຊາຍໃນຫຼາກຫຼາຍກຸ່ມອາຍຸ ພ້ອມດ້ວຍການສົນທະນາກຸ່ມກ່ຽວກັບຄວາມແຕກຕ່າງລະຫວ່າງ ຄວາມຮູ້ຂອງຜູ້ຊາຍ ແລະ ຂອງຜູ້ຍິງ ແລະ ຄວາມສຳຄັນໃນການໄດ້ຮັບຮູ້ມຸມມອງຈາກທັງສອງຝ່າຍ.

**3.F** ຂໍ້ມູນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈະຕ້ອງຖືກຈັດແບ່ງຢ່າງສະໝ່ຳສະເໝີ ແລະ ສອດຄ່ອງກັນໃນທົ່ວທັງຈະແໜງການ.

### 4.ນະໂຍບາຍແລະຂັ້ນຕອນດ້ານຊັບພະຍາກອນມະນຸດ

**4.A** ດຳເນີນການທົບທວນຄືນນະໂຍບາຍບຸກຄະລາກອນຂອງ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao, ແລະ ສ້າງຂໍ້ຊີ້ນຳການປະຕິບັດໂຕຈິງຂຶ້ນ ເພື່ອເພີ່ມທະວີການຈ້າງງານແມ່ຍິງ. ສິ່ງນີ້ຈະຕ້ອງສອດຄ່ອງກັບເປົ້າໝາຍຈຸດສຸມພາຍໃຕ້ NPAGE ຄັ້ງທີ 4 ໃນການຮັບປະກັນໃຫ້ແມ່ຍິງກວມ 25-30 ສ່ວນຮ້ອຍໃນຕຳແໜ່ງວຽກຂັ້ນບໍລິຫານ.

**4.B** ເປົ້າໝາຍຂອງແຜນງານຂອງ ອົງການ UNDP ສຳລັບແມ່ຍິງຈະຕ້ອງໄດ້ຮັບການປັບປຸງ ຈາກການເພີ່ມຈຳນວນທີມເກັບກູ້ລະເບີດຍິງລ້ວນຂຶ້ນ ກາຍເປັນການເພີ່ມຈຳນວນແມ່ຍິງໃນທີມປະສົມຂຶ້ນໃນອັດຕາ 30-35 ສ່ວນຮ້ອຍພາຍໃນປີ 2025 ແທນ, ເພື່ອຮັບປະກັນບໍ່ໃຫ້ມີແມ່ຍິງຄົນດຽວຕ້ອງເດີນທາງໄປກັບທີມປະສົມຢູ່ສະເໝີ. ຕ້ອງຮັບຮອງເອົາໂຄຕ້າການຈ້າງທີ່ປະກອບມີຕຳແໜ່ງວຽກສຳລັບກຸ່ມຊົນເຜົ່າຢ່າງໜ້ອຍ 10 ສ່ວນຮ້ອຍ ແລະ ຄົນພິການ 5 ສ່ວນຮ້ອຍ.[61] ຮຽກຮ້ອງໃຫ້ພະແນກບຸກຄະລາກອນ ເກັບກຳຂໍ້ມູນໃນຈຸດທີ່ເປັນໄປໄດ້, ໃນຂະນະດຽວກັນກໍ່ເຄົາລົບການຕັດສິນໃຈ ແລະ ຄວາມເຫັນດີຍິນຍອມຂອງພະນັກງານ ກ່ອນນຳເອົາຂໍ້ມູນຂອງພວກເຂົາໄປເຜີຍແຜ່.

**4.C** ສ້າງຫຼັກປະຕິບັດ ຫຼື ເອກະສານທີ່ຄ້າຍຄືກັນ ເພື່ອຮັບປະກັນໃຫ້ປະຊາກອນທຸກກຸ່ມຄົນ, ເຂົ້າເຖິງກົນໄກການຮ້ອງທຸກທີ່ສອດຄ່ອງກັບສິດທິຂອງພວກເຂົາ. ກົນໄກດັ່ງກ່າວຈະຕ້ອງມີຄວາມປອດໄພ, ປິດລັບ, ໂປ່ງໃສ ແລະ ເຂົ້າເຖິງໄດ້ໂດຍກຸ່ມຊົນເຜົ່າຕ່າງໆຜູ້ທີ່ບໍ່ຮູ້ໜັງສື.

**4.D** ບັງຄັບໃຊ້ນະໂຍບາຍເກືອດຫ້າມການບໍລິໂພກສິ່ງມຶນເມົາ ໂດຍສະເພາະໃນເວລາທີ່ພະນັກຕ້ອງເຮັດວຽກໃນມື້ຕໍ່ມາ ເພື່ອໃຫ້ກາຍເປັນລະບຽບການດ້ານຄວາມປອດໄພ ແລະ ເພື່ອເພີ່ມທະວີປະສິດທິພາບ ແລະ ປະສິດທິຜົນໃຫ້ແກ່ວຽກງານ. ປະຊາຊົນໃນທ້ອງຖິ່ນຈະຕ້ອງຖືກຮັບແຈ້ງໂດຍອຳນາດການປົກຄອງບ້ານກ່ຽວກັບນະໂຍບາຍນີ້ ເພື່ອຮັບປະກັນບໍ່ໃຫ້ມີການສະໜອງສິ່ງມຶນເມົາ ແທນຄຳຂອບໃຈໃຫ້ແກ່ທີມງານເກັບກູ້ລະເບີດທີ່ປະຕິບັດວຽກສຳເລັດແລ້ວ ຍ້ອນຈະເຮັດໃຫ້ທີມງານດັ່ງກ່າວນັ້ນຢູ່ໃນສະຖານະການທີ່ອຶດອັດ.





© Sasha Popovic

# 8 ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ 2023-2026

ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ 2023-2026 ໄດ້ຖືກອອກແບບມາເພື່ອຕອບສະໜອງຕໍ່ບຸລິມະສິດຍຸດທະສາດຂອງລັດຖະບານ ແລະ ຂອງແຜນງານ ລບຕ ຂອງ ອົງການ UNDP, ເຊິ່ງມີເນື້ອໃນດັ່ງນີ້:

> ພາຍໃນປີ 2026, ປະຊາຊົນ, ໂດຍສະເພາະຜູ້ທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດທີ່ສຸດ, ຈະໄດ້ຮັບຜົນປະໂຫຍດຈາກໂອກາດດ້ານເສດຖະກິດ-ສັງຄົມ ແລະ ໂອກາດດ້ານປະຊາກອນທີ່ມີຄວາມກວມລວມ, ທົນທານ, ປ່ຽນໃໝ່ ແລະ ຍືນຍົງ ເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ.

**ແຜນດັ່ງກ່າວແມ່ນຂຶ້ນກັບຂໍ້ມູນຫຼັກຖານອັນເຂັ້ມແຂງທີ່ໄດ້ຮັບຈາກ:**

- ⇨ ການໂຮມເອົາການວິເຄາະ ແລະ ບັນດາຂໍ້ແນະນຳຈາກການປະເມີນຜົນດ້ານບົດບາດຍິງຊາຍ ແລະ ລບຕ ຫຼາຍຄັ້ງ ທີ່ດຳເນີນການໃນ ສປປ ລາວ ນັບຕັ້ງແຕ່ປີ 2008 ເປັນຕົ້ນມາ
- ⇨ ການລະບຸ ແລະ ການວິເຄາະອົງປະກອບຫຼັກດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຂອງມາດຕະຖານສາກົນຂອງ ອົງການ ສປຊ ແລະ ຄຳໝັ້ນສັນຍາທີ່ ລັດຖະບານ ສປປ ລາວ ມີຕໍ່ສາກົນ
- ⇨ ການທົບທວນຄືນບົດຄວາມ ແລະ ບົດຄົ້ນຄວ້າຂອງສາກົນໂດຍລະອຽດ ກ່ຽວກັບບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ແລະ ຂໍ້ຊີ້ນຳທີ່ສະໜອງໃຫ້ໂດຍ GICHD/GMAP
- ⇨ ການລະບຸນະໂຍບາຍ ແລະ ລະບຽບການຫຼັກຂອງລັດຖະບານ ທີ່ແນໃສ່ແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແລະ ສິດທິຂອງແມ່ຍິງ, ຄົນພິການ ແລະ ກຸ່ມຊົນເຜົ່າ, ໂດຍສະເພາະຄົນທຸກຍາກ
- ⇨ ການທຳພາດຜູ້ໃຫ້ຂໍ້ມູນຫຼັກຮ່ວມກັບຄູ່ຮ່ວມງານຕົ້ນຕໍໃນຂະແໜງການ ລບຕ
- ⇨ ການສຳພາດຜູ້ໃຫ້ຂໍ້ມູນຫຼັກທີ່ປະຈຳຢູ່ສະໜາມ, ການສົນທະນາກຸ່ມສະເພາະ, ກິດຈະກຳສົ່ງເສີມການມີສ່ວນຮ່ວມກັບກຸ່ມທ້ອງຖິ່ນຕ່າງໆ, ເຊັ່ນ: ກຸ່ມແມ່ຍິງ ແລະ ຜູ້ຊາຍທີ່ມີຄວາມຫຼາກຫຼາຍ, ແລະ ການສຳພາດຄົວເຮືອນ

ການປະເມີນຜົນດ້ານບົດບາດຍິງຊາຍ ແລະ ລບຕ ໃນຄັ້ງທີ່ຜ່ານມາໃນ ສປປ ລາວ ໄດ້ສະແດງໃຫ້ເຫັນເຖິງການລົງທຶນທີ່ສຳຄັນດ້ານເວລາ ແລະ ຊັບພະຍາກອນຕ່າງໆ. ການວິເຄາະເອກະສານເຫຼົ່ານີ້ໄດ້ຊີ້ໃຫ້ເຫັນວ່າ ມີຂໍ້ແນະນຳພຽງ 5 ຈາກທັງໝົດ 100 ຂໍ້ເທົ່ານັ້ນທີ່ໄດ້ຖືກນຳມາຈັດຕັ້ງປະຕິບັດໂຕຈິງ. ການນຳຂັ້ນອາວຸໂສໃນ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao; ການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ; ແລະ ຄຳໝັ້ນສັນຍາດ້ານງົບປະມານ ລ້ວນແລ້ວແຕ່ມີຄວາມຈຳເປັນໃນການຮັບປະກັນໃຫ້ຜົນໄດ້ຮັບຈາກການຄົ້ນຄວ້າ ແລະ ຂໍ້ແນະນຳຕ່າງໆຖືກນຳເອົາມາໃຊ້ງານ. ດ້ວຍເຫດນີ້, ຂອບວຽກການຕິດຕາມກວດກາ ແລະ ປະເມີນຜົນໄດ້ຮັບ ຈຶ່ງຖືກສ້າງຂຶ້ນເພື່ອສະໜັບສະໜູນແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ສະບັບນີ້ ແລະ ຖືກສະແດງໄວ້ໃນພາກສ່ວນສຸດທ້າຍຂອງບົດລາຍງານສະບັບນີ້.

ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼ!ຍ ສະໜອງຍຸດທະສາດ ແລະ ວຽກງານອັນສະເພາະໃຫ້ແກ່ ລັດຖະບານ ແລະ ແຜນງານ ລບຕ ຂອງ ອົງການ UNDP, ການຍົກສູງປະສິດທິພາບ ແລະ ປະສິດທິຜົນໃຫ້ແກ່ຂະແໜງການ ລບຕ ເພື່ອປະກອບສ່ວນເຂົ້າໃນການບັນລຸ ປພຍ 18 ແລະ SPF III. ບາງວຽກງານພາຍໃຕ້ແຜນນີ້ແມ່ນຢູ່ນອກເໜືອບົດບາດຂອງ NRA, ກອງຮ້ອຍ 58, ໂຄງການ UXO Lao, LWU ແລະ ອົງການ UNDP ຍ້ອນພວກມັນນຳໃຊ້ແນວທ່າງທີ່ກວມເອົາຂະແໜງການທັງໝົດ. ຄວາມເຂົ້າໃຈຮ່ວມກັນ ແລະ ການປຶດສາຫາລືບັນຫາເຫຼົ່ານີ້ແມ່ນສິ່ງທີ່ສຳຄັນທຽບເທົ່າກັບໜ້າທີ່ຮັບຜິດຊອບ ແລະ ຄວາມຮັບຜິດຊອບຮ່ວມກັນ.

ຂອບວຽກແຜນການ ແລະ ຜົນໄດ້ຮັບແມ່ນສອດຄ່ອງກັບຂົງເຂດຫົວຂໍ້ ຂອງບັນດາຂໍ້ແນະນຳຕົ້ນຕໍທີ່ໄດ້ສັງລວມໄວ້ໃນພາກສ່ວນທີ່ຜ່ານມາ ແລະ ສາມາດອ້າງອີງເຖິງຂໍ້ແນະນຳເຫຼົ່ານີ້ໄດ້ໃນຈຸດທີ່ເຫັນວ່າກ່ຽວຂ້ອງ.

## 8.1 ນະໂຍບາຍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແລະ ກົນໄກການປະສານງານ

### ກົນໄກການຈັດຕັ້ງປະຕິບັດ

#### ຈຸດປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍພາຍໃນອົງກອນ

ການຈັດຕັ້ງປະຕິບັດຂໍ້ແນະນຳຕ່າງໆພາຍໃຕ້ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ທີ່ກ່ຽວພັນໂດຍກົງກັບ ແຜນງານ ລບຕ ຂອງລັດຖະບານ ແລະ ຂອງ ອົງການ UNDP ຈຳເປັນຈະຕ້ອງໄດ້ມີການຈັດສັນເວລາຂອງພະນັກງານ ພ້ອມດ້ວຍກົນໄກການສະແດງຄວາມຮັບຜິດຊອບທີ່ກ່ຽວຂ້ອງ ແລະ ການສະໜັບສະໜູນເຂົ້າໃນການພັດທະນາຂີດຄວາມສາມາດ. ການແຕ່ງຕັ້ງ ຈຸດປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ແມ່ນໄດ້ຖືກນຳສະເໜີໃຫ້ເປັນກົນໄກການປະສານງານອັນໜຶ່ງ ຮ່ວມກັບບັນດາຝ່າຍດຳເນີນວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ທີ່ມີໜ້າທີ່ຮັບຜິດຊອບໃນ



ການບັນລຸເປົ້າໝາຍຕ່າງໆຂອງໂຄງການ. ຝ່າຍດຳເນີນວຽກຢ່າງໜ້ອຍຈະຕ້ອງລວມມີ: NRA, ກອງຮ້ອຍ 58, ໂຄງການ UXO Lao, LWU, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການ UNDP. ຍັງມີການແນະນຳໃຫ້ລວມເອົາພະນັກງານທ້ອງຖິ່ນເຂົ້ານຳ, ເຊັ່ນ: ຝ່າຍປະສານງານອາວຸໂສດ້ານວິຊາການຍິງ ແລະ ຊາຍໃຫ້ແກ່ທີມງານຫຼັກໃນຈຸດທີ່ເປັນໄປໄດ້ (ຜູ້ປະສານງານຫຼັກ 1 ຄົນ ແລະ ຜູ້ປະສານງານສຳຮອງອີກ 1 ຄົນ ເພື່ອແກ້ໄຂບັນຫາການຂາດແຄນບຸກຄະລາກອນໃນສະຖາບັນ, ເປັນໄປໄດ້ໃຫ້ຮັບເອົາພະນັກງານອາວຸໂສຍິງ ແລະ ພະນັກງານຄຸ້ມຄອງລະດັບກາງຊາຍ). ທີມງານທຸກຄົນຈະຕ້ອງສາມາດປະກອບສ່ວນເຂົ້າໃນທຸກຂົງເຂດວຽກງານຂອງຂະແໜງການ ລບຕ ໄດ້, ທີ່ລວມມີ: ການສຳຫຼວດແບບບໍ່ແມ່ນວິຊາການ, ການສຳຫຼວດທາງດ້ານວິຊາການ, ການເກັບກູ້ລະເບີດ, ການຄຸ້ມຄອງຂໍ້ມູນ, ຊັບພະຍາກອນມະນຸດ, ນະໂຍບາຍ, ວຽກງານ EORE ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ຈຸດປະສານວຽກງານດ້ານບົດບາດຍິງຊາຍ ແລະ ລບຕ ພາຍໃນອົງກອນ ຈະຕ້ອງຖືກສ້າງຕັ້ງຂຶ້ນພາຍໃນ NRA/ກອງຮ້ອຍ 58 ແລະ ໂຄງການ UXO Lao ເພື່ອເຜີຍແຜ່ວາລະຕ່າງໆກ່ອນດຳເນີນກອງປະຊຸມ ແລະ ເພື່ອເປັນຈຸດສັງລວມຂໍ້ມູນກ່ຽວກັບກອງປະຊຸມໃນພາຍຫຼັງ.

ພະນັກງານຂອງລັດໃນທີມປະຕິບັດການພາກສະໜາມ ຈະຕ້ອງຖືກລວມເຂົ້າໄວ້ໃນ ຈຸດປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ຍ້ອນພວກເຂົາມີຄວາມຮູ້ກ່ຽວກັບບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ໃນຂັ້ນທ້ອງຖິ່ນ. ໄດ້ມີການແນະນຳໃຫ້ລວມເອົາ ທ່ານນາງ ສາຍສະໝອນ, ເຈົ້າໜ້າທີ່ທຳລາຍວັດຖຸລະເບີດຍິງລະດັບ 3+, ຈາກ ໂຄງການ UXO Lao ເຂົ້ານຳ, ພ້ອມທັງແມ່ຍິງອີກຢ່າງໜ້ອຍ 1 ຄົນຈາກ LWU. ໂດຍສອດຄ່ອງກັບຫຼັກປະຕິບັດທີ່ດີທີ່ສຸດຂອງ GMAP, ຈຸດປະສານວຽກງານດ້ານບົດບາດຍິງຊາຍ ຈະຕ້ອງມີຂອບໜ້າວຽກທີ່ຊັດເຈນ ແລະ ປະຕິບັດໄດ້ຄຳໝັ້ນສັນຍາໃນການຈັດສັນເວລາຂອງພະນັກງານ 10 ສ່ວນເພື່ອມາດຳເນີນວຽກປະສານງານນີ້. ກຸ່ມນີ້ຈະຕ້ອງພົບປະກັນທຸກໆ 3 ເດືອນ, ຢ່າງໜ້ອຍໃນຊ່ວງປີທຳອິດຂອງ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ.

### ການສ້າງຍຸດທະສາດດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃຫ້ແກ່ NRA, ກອງຮ້ອຍ 5, LWU ແລະ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ການສ້າງຍຸດທະສາດດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍແບບແຍກດ່ຽວໃຫ້ແກ່ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao ຖືເປັນຂໍ້ລິເລີ່ມທີ່ສຳຄັນ. ສິ່ງນີ້ແມ່ນຂໍ້ແນະນຳຈາກການປະເມີນຜົນຂອງ GMAP ໃນປີ 2014[62] ແລະ ການປະເມີນຜົນຂອງ ອົງການ ສປຊ ເພື່ອແມ່ຍິງ / LWU ໃນປີ 2018 ດັ່ງລຸ່ມນີ້:

> ອົງຕາມມາດຕະຖານແຫ່ງຊາດ ແລະ ກົດໝາຍຄວາມສະເໝີພາບຍິງຊາຍທີ່ຈະຖືກສ້າງຂຶ້ນໃນໄວໆນີ້, ແລະ ດ້ວຍການຊ່ວຍເຫຼືອຂອງ LWU, NRA/ໂຄງການ UXO Lao ເພື່ອສ້າງນະໂຍຍາຍດ້ານບົດບາດຍິງຊາຍ ແລະ ຍຸດທະສາດເຊື່ອມສານວຽກງານດ້ານບົດບາດຍິງຊາຍ ອັນສະເພາະຕໍ່ການປະຕິບັດວຽກງານໃນອົງກອນຂອງພວກເຂົາ. ສິ່ງນີ້ແມ່ນແນໃສ່ສ້າງຜົນກະທົບທາງບວກດ້ານຄວາມສະເໝີພາບຍິງຊາຍ ຕໍ່ຜູ້ທີ່ໄດ້ຮັບຜົນປະໂຫຍດຈາກປະຕິບັດການເກັບກູ້ ລບຕ. ອາດມີການກະກຽມຮ່າງຂຶ້ນມາ, ແລະ ຈັດກອງປະຊຸມສຳມະນາເພື່ອສະຫຼຸບເນື້ອໃນ. ອາດມີການເຜີຍແຜ່ຮ່າງສະບັບສຸດທ້າຍໃຫ້ໜ່ວຍງານປະຕິບັດການເກັບກູ້ ລບຕ ເພື່ອໃຊ້ເປັນເອກະສານຊີ້ນຳດ້ານຫຼັກປະຕິບັດທີ່ດີ - ພາກທີ 6.1.1. ຂອງ ພາກເອກະສານຊ້ອນທ້າຍທີ 6. ເຄື່ອງມືພາກສະໜາມ

ທັນທີທີ່ແຕ່ງຕັ້ງຈຸດປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ພາຍໃນອົງກອນແລ້ວພ້ອມທັງໂຕແທນຝ່າຍບໍລິຫານ (ກຸ່ມປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜກງານ ລບຕ), ແລະ ປະຕິບັດຕາມບັນດາຂໍ້ແນະນຳຂ້າງເທິງແລ້ວ, ຍຸດທະສາດດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຈະຕ້ອງຖືກສ້າງຂຶ້ນໃຫ້ແກ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, NRA, ກອງຮ້ອຍ 58, ໂຄງການ UXO Lao ແລະ LWU. ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ສາມາດຕາງໜ້າໃຫ້ແກ່ຍຸດທະສາດນີ້ໄດ້ ຍ້ອນມັນຊ່ວຍສະໜອງວຽກງານຕ່າງໆພ້ອມດ້ວຍຊຸດໂຕຊີ້ວັດ ແລະ ຄູ່ຮ່ວມງານທີ່ຮັບຜິດຊອບ. ເພື່ອໃຫ້ສອດຄ່ອງກັບແຜນການ, ເຄື່ອງມືສຳລັບການຈັດຕັ້ງປະຕິບັດນັ້ນຈະຕ້ອງລວມມີ:

- ⇨ ການອ້າງອີງເຖິງມາດຕະຖານສາກົນ, ລວມທັງ ຍູດທະສາດການເກັບກູ້ລະເບີດຂອງ ອົງການ ສປຊ 2019-2023 ເປົ້າໝາຍຈຸດສຸມຍຸດທະສາດກວມຫຼາຍຂະແໜງການລຳດັບທີ 2, ວ່າດ້ວຍແຜນງານເກັບກູ້ລະເບີດທີ່ຊ່ວຍແກ້ໄຂຄວາມຕ້ອງການອັນສະເພາະໃຫ້ແກ່ແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍຈາກກຸ່ມທີ່ຫຼາກຫຼາຍ, ໃນຂະນະດຽວກັນກໍ່ອຳນວຍຄວາມສະດວກໃຫ້ແກ່ການຍົກສູງບົດບາດ ແລະ ຄວາມກວມລວມໃຫ້ແກ່ພວກເຂົາ (ເບິ່ງຕື່ມ ພາກທີ 2.1 ຂອງບົດລາຍງານສະບັບນີ້ ສຳລັບລາຍຊື່ຂົງເຂດເປົ້າໝາຍຈຸດສຸມ ແລະ ໝາກຜົນການປະກອບສ່ວນ)
- ⇨ ການອ້າງອີງເຖິງການນຳໃຊ້ຂໍ້ຊີ້ນຳດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ມີຢູ່ທີ່ຖືກສ້າງຂຶ້ນໂດຍ UNMAS ແລະ GICHD/GMAP
- ⇨ ການລະບຸຊ່ອງຫວ່າງເພີ່ມເຕີມໃນຂະແໜງການ ເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງກັບຄວາມພິການ, ຄວາມທຸກຍາກ ແລະ ກຸ່ມຊົນເຜົ່າໃນ ສປປ ລາວ ຕາມທີ່ແນະນຳໄວ້ໃນບົດລາຍງານສະບັບນີ້

## ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ

ແນວຄິດການສ້າງກຸ່ມວິຊາການ ຫຼື ເວທີປຶກສາຫາລືໃນການແກ້ໄຂບັນຫາດ້ານບົດບາດຍິງຊາຍໃນຂະແໜງການ ລບຕ ບໍ່ແມ່ນສິ່ງໃໝ່ເລີຍ. ມັນແມ່ນໜຶ່ງໃນຂໍ້ແນະນຳຈາກທັງການປະເມີນຜົນຂອງ ອົງການແມັກໃນປີ 2008 ແລະ ອົງການ ສປຊ ເພື່ອແມ່ຍິງ / LWU ໃນປີ 2018:

- ສືບຕໍ່ສົ່ງເສີມການມີສ່ວນຮ່ວມຂອງຜູ້ໃຫ້ທຶນ ແລະ ໜ່ວຍປະຕິບັດງານເຂົ້າໃນການປຶກສາຫາລືກັນຢ່າງຕໍ່ເນື່ອງ ເພື່ອຮັບປະກັນໃຫ້ບັນຫາດ້ານບົດບາດຍິງຊາຍນັ້ນ ຖືກໂຮມເຂົ້າໄວ້ໃນການດຳເນີນວຽກງານ ລບຕ (ອົງການແມັກ 2008).
- ສ້າງເຄືອຂ່າຍດ້ານບົດບາດຍິງຊາຍຮ່ວມກັບໜ່ວຍປະຕິບັດວຽກງານ ລບຕ ຕ່າງໆ ເພື່ອສະໜັບສະໜູນຂໍ້ແນະນຳທີ່ກ່າວມາຂ້າງເທິງນີ້, ເພື່ອເປັນການແບ່ງປັນຫຼັກປະຕິບັດທີ່ດີ ແລະ ເພື່ອເປັນການຈັດຕັ້ງປະຕິບັດຍຸດທະສາດເຊື່ອມສານບົດບາດຍິງຊາຍເຂົ້າໃນທົ່ວທຸກຂະແໜງການ ລບຕ. ທາງເລືອກໜຶ່ງໃນນັ້ນລວມມີການສ້າງກຸ່ມວິຊາການດ້ານບົດບາດຍິງຊາຍຂຶ້ນ (TWG) ໂດຍ NRA ເພື່ອມາສະໜັບສະໜູນຂັ້ນຕອນການເຊື່ອມສານບົດບາດຍິງຊາຍ ເຂົ້າໃນກຸ່ມວິຊາການອື່ນໆທີ່ກ່ຽວຂ້ອງກັບວຽກງານເກັບກູ້ເນື້ອທີ່ດິນ, ວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ (ອົງການ ສປຊ ເພື່ອແມ່ຍິງ / LWU 2018: 6.5.1).

ເພື່ອເປັນການຕໍ່ຍອດຈາກຂໍ້ແນະນຳເຫຼົ່ານີ້, ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ອາດຖືກສ້າງຂຶ້ນ ເພື່ອສົ່ງເສີມການມີສ່ວນຮ່ວມຂອງຜູ້ໃຫ້ທຶນ ທີ່ຍັງມີການເຄື່ອນໄຫວໃນຂະແໜງການ ພ້ອມທັງໜ່ວຍງານພາກລັດ ແລະ ສາກົນ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດແຫ່ງຊາດ, ລວມທັງໜ່ວຍງານທີ່ມີການເຄື່ອນໄຫວໃນວຽກງານ EORE ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ສິ່ງນີ້ຈະຊຸກຍູ້ແນວທາງສົ່ງເສີມການມີສ່ວນຮ່ວມໃນທົ່ວຂະແໜງການ ຕໍ່ການແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຍ້ອນບັນຫາ ແລະ ຂໍ້ແນະນຳຫຼາຍອັນພາຍໃຕ້ບົດລາຍງານສະບັບນີ້ ແມ່ນກວມເອົາທົ່ວຂະແໜງການ. ການຈັດຕັ້ງປະຕິບັດວຽກງານຕ່າງໆພາຍໃຕ້ແຜນການດຳເນີນງານດັ່ງກ່າວແມ່ນຢູ່ນອກເໜືອຂີດຄວາມສາມາດຂອງ NRA, ກອງຮ້ອຍ 58, ໂຄງການ UXO Lao, LWU, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການ UNDP ພຽງໜ່ວຍງານດຽວ. ດ້ວຍເຫດນີ້, ຈຶ່ງໄດ້ມີການແນະນຳໃຫ້ນຳສະເໜີຂໍ້ແນະນຳຕ່າງໆພາຍໃຕ້ບົດລາຍງານສະບັບນີ້ ຕໍ່ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ເພື່ອໃຫ້ລະບຸວ່າວຽກງານໃດທີ່ສາມາດເຮັດຮ່ວມກັນໄດ້ ຫຼື ໃຫ້ຄູ່ຮ່ວມງານໃດເປັນຜູ້ນຳພາ, ແລະ ເພື່ອຈັດລຽງບຸລິມະສິດໃຫ້ແກ່ວຽກງານຕ່າງໆທີ່ມີຄວາມສຳຄັນ ແລະ ກ່ຽວຂ້ອງໂດຍກົງ.

ຍ້ອນ ອົງການ UNDP ເປັນປະທານຮ່ວມ ກຸ່ມວິຊາການຂອງຂະແໜງການ ລບຕ, ຮ່ວມກັບ ກະຊວງການຕ່າງປະເທດ ແລະ ສະຖານທູດ ສ. ອາເມລິກາ, ບາດກ້າວທຳອິດທີ່ຄວນດຳເນີນການ ຈຶ່ງແມ່ນການນຳສະເໜີບົດລາຍງານສະບັບນີ້ ແລະ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ຕໍ່ກຸ່ມວິຊາການດັ່ງກ່າວເພື່ອປຶກສາຫາລືກັນ. ທັນທີທີ່ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ໄດ້ຮັບການຮັບຮອງແລ້ວ, ກໍ່ຈະຕ້ອງສ້າງຂອບໜ້າວຽກໃຫ້ແກ່ກຸ່ມດັ່ງກ່າວຂຶ້ນໃນລຳດັບຕໍ່ໄປ. ໄດ້ມີການແນະນຳໃຫ້ NRA ເປັນປະທານກຸ່ມດັ່ງກ່າວໂດຍມີ ອົງການ UNDP ແລະ LWU ໃຫ້ການສະໜັບສະໜູນ. ຈະຕ້ອງນັດພົບປະກັນທຸກໆໄຕມາດ, ພ້ອມບົດບັນທຶກກອງປະຊຸມທີ່ສະໜອງຂໍ້ມູນອັບເດດ ກ່ຽວກັບການບັນລຸໄດ້ວຽກງານຕ່າງໆພາຍໃຕ້ແຜນການດຳເນີນງານ. ກອງປະຊຸມຄັ້ງສຸດທ້າຍຂອງປີ ອາດຖືກເສີມຂະຫຍາຍຂຶ້ນເປັນກອງປະຊຸມປະຈຳປີ. ບົດບັນທຶກກອງປະຊຸມຈະຕ້ອງສະໜອງທັງບົດລາຍງານປະຈຳປີ ພ້ອມຂໍ້ມູນອັບເດດກ່ຽວກັບແຜນການດຳເນີນງານ ແລະ ລາຍລະອຽດກ່ຽວກັບວຽກງານຕ່າງໆ, ພະນັກງານຮັບຜິດຊອບ, ງົບປະມານ ແລະ ໄລຍະເວລາຂອງການປະຕິບັດວຽກໃນປີຕໍ່ໄປ.

ກອງປະຊຸມຂອງກຸ່ມປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ຈະຕ້ອງຖືກຈັດຂຶ້ນທຸກໆ 2 ເດືອນເພື່ອສ້າງວາລະໃຫ້ແກ່ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ແລະ ເພື່ອຕິດຕາມກວດກາການຈັດຕັ້ງປະຕິບັດແຜນການດຳເນີນງານ.

## 8.2 ການສ້າງຂີດຄວາມສາມາດ

ການປະເມີນຜົນຂອງ GMAP ໃນປີ 2014 ໄດ້ກວດສອບບັນຫາດ້ານບົດບາດຍິງຊາຍໃນ NRA, ໂຄງການ UXO Lao, ອົງການ UNDP, ອົງການແມັກ ແລະ ອົງການເຮໂລ. ຂັ້ນຕອນດັ່ງກ່າວລວມເອົາພະນັກງານທັງຍິງ ແລະ ຊາຍຈາກຫຼາຍຂົງເຂດເຂົ້ານຳ, ເຊັ່ນ: ຝ່າຍປະຕິບັດງານ, ຝ່າຍບໍລິຫານ, ຝ່າຍຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ຝ່າຍສະໜອງການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ; ຫຼາຍກວ່າເຄິ່ງໜຶ່ງຂອງຜູ້ຕອບບົດສຳຫຼວດ ໄດ້ເຮັດວຽກກັບອົງກອນຂອງພວກເຂົາມາແລ້ວຫຼາຍກວ່າ 3 ປີ. ຜົນໄດ້ຮັບຊີ້ໃຫ້ເຫັນວ່າ:

- 76.9 ສ່ວນຮ້ອຍບອກວ່າອົງກອນຂອງພວກເຂົາບໍ່ໄດ້ໃຫ້ໂອກາດພຽງພໍ ຫຼື ບໍ່ໃຫ້ໂອກາດເລີຍໃນການເສີມສ້າງຄວາມຮູ້ດ້ານບົດບາດຍິງຊາຍ
- 77 ສ່ວນຮ້ອຍບອກວ່າພວກເຂົາບໍ່ມີເຄື່ອງມື ແລະ ຂໍ້ຊີ້ນຳອັນພຽງພໍໃນການເຊື່ອມສານວຽກງານດ້ານບົດບາດຍິງຊາຍ
- 92 ສ່ວນຮ້ອຍຄິດວ່າບໍ່ມີຂໍ້ມູນເລີຍ ຫຼື ມີຂໍ້ມູນບໍ່ພຽງພໍກ່ຽວກັບການນຳໃຊ້ເຄື່ອງມື ເຂົ້າໃນການດຳເນີນການວິເຄາະບົດບາດຍິງຊາຍ ແລະ ໃນການໂຮມເອົາຜົນໄດ້ຮັບເຂົ້າໃນວຽກງານຂອງພວກເຂົາ
- 95 ສ່ວນຮ້ອຍຂອງຜູ້ຕອບບົດສຳຫຼວດບອກວ່າ ການສ້າງກຸ່ມວິຊາການຂຶ້ນນັ້ນອາດເປັນປະໂຫຍດແກ່ພວກເຂົາຫຼາຍ



ຜົນໄດ້ຮັບເຫຼົ່ານີ້ແມ່ນສອດຄ່ອງກັບຜົນໄດ້ຮັບ ຈາກປະຕິບັດການພາກສະໜາມພາຍໃຕ້ການຄົ້ນຄວ້າຄັ້ງນີ້, ທີ່ໄດ້ຊ່ວຍລະບຸໃຫ້ເຫັນເຖິງພາວະຂາດແຄນຄວາມຮູ້ ແລະ ຄວາມເຂົ້າໃຈກ່ຽວກັບບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍອັນຊັດເຈນໃນຂະແໜງການ ລບຕ ນັບຕັ້ງແຕ່ລະດັບຊາດໄປຈົນເຖິງຂັ້ນບ້ານ. ຈາກກຸ່ມທີ່ຖືກສຳພາດໃນລະຫວ່າງປະຕິບັດການພາກສະໜາມນັ້ນ, ມີພຽງຄົນດຽວທີ່ເຄີຍໄດ້ເຂົ້າຮ່ວມການຝຶກອົບຮົມ ທີ່ອີງໃສ່ປຶ້ມຄູ່ມືການຝຶກອົບຮົມກ່ຽວກັບບົດບາດຍິງຊາຍ ແລະ ລບຕ ຂອງ ອົງການ ສປຊ ເພື່ອແມ່ຍິງ / LWU. ປຶ້ມຄູ່ມືດັ່ງກ່າວຈະຕ້ອງໄດ້ຮັບການປັບປຸງ ດ້ວຍຜົນໄດ້ຮັບຕ່າງໆຈາກການຄົ້ນຄວ້າຄັ້ງນີ້ ແລະ ນຳໄປຈັດຕັ້ງປະຕິບັດໂດຍລວມໂດຍພະນັກງານຂອງຄູ່ຮ່ວມຈັດຕັ້ງປະຕິບັດຂອງ ອົງການ UNDP ແລະ ອຳນາດການປົກຄອງຂັ້ນແຂວງ ແລະ ຂັ້ນບ້ານ. ການປະເມີນຜົນຂອງ ອົງການແມັກ ໃນປີ 2008 ຍັງໄດ້ຊ່ວຍແກ້ໄຂຄວາມຕ້ອງການໃຫ້ແກ່ພະນັກງານຂັ້ນເມືອງ ແລະ ຂັ້ນແຂວງດັ່ງຕໍ່ໄປນີ້:

ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຂັ້ນເມືອງ/ຂັ້ນແຂວງ ໃນການຕິດຕາມກວດກາວຽກງານຕ່າງໆ - ເກັບກຳ, ວິເຄາະ, ແລະ ນຳໃຊ້ຂໍ້ມູນທີ່ຖືກຈັດແບ່ງຕາມກຸ່ມເພດ ແລະ ອາຍຸ (4.2.2).

ໄດ້ມີການສະເໜີໃຫ້ດຳເນີນຊຸດວຽກງານການສ້າງຂີດຄວາມສາມາດເພີ່ມເຕີມ ໃຫ້ແກ່ຄູ່ຮ່ວມງານຝ່າຍຕ່າງໆ, ທີ່ລວມມີ: ການຝຶກອົບຮົມດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ 2 ຄັ້ງທີ່ຖືກດຳເນີນການໂດຍ GICHD ໃນໄຕມາດທີ 3 ແລະ 4 ຂອງປີ 2023. ຕາຕະລາງທີ 9 ໄດ້ເນັ້ນໜັກໃຫ້ເຫັນເຖິງວຽກງານການສ້າງຂີດຄວາມສາມາດທີ່ແນະນຳ.

**ຕາຕະລາງທີ 9: ວຽກງານການສ້າງຂີດຄວາມສາມາດໃຫ້ແກ່ຄູ່ຮ່ວມຈັດຕັ້ງປະຕິບັດ ແລະ ຄູ່ຮ່ວມງານຂອງ ອົງການ UNDP**

| ກຸ່ມເປົ້າໝາຍ | ວຽກງານ |
|---|---|
| **ຝ່າຍຄຸ້ມຄອງອາວຸໂສ** | GICHD ໄດ້ຈັດຕັ້ງປະຕິບັດຫຼັກສູດຄວາມເປັນຜູ້ນຳ ໃຫ້ແກ່ຝ່າຍຄຸ້ມຄອງລະດັບກາງໄປຈົນເຖິງຂັ້ນອາວຸໂສ ໃນຊ່ວງທ້າຍປີ 2023. ໃນນັ້ນ, ຝ່າຍຄຸ້ມຄອງລະດັບກາງ 1 ຄົນ ແລະ ລະດັບອາວຸໂສ 1 ຄົນສາມາດເຂົ້າຮ່ວມຫຼັກສູດນີ້ໄດ້ (ຖ້າເປັນໄປໄດ້, ໃຫ້ສະເໜີພະນັກງານທ້ອງຖິ່ນຊາຍ 1 ຄົນ ແລະ ຍິງ 1 ຄົນທີ່ສາມາດເວົ້າພາສາອັງກິດໄດ້) ແລະ ລາຍງານຄືນໃຫ້ແກ່ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ<br>(ໝາຍເຫດ: ນີ້ແມ່ນຫຼັກສູດອອນລາຍ ແລະ ດຳເນີນເປັນພາສາອັງກິດ, ທີ່ຈຳກັດການເຂົ້າຮ່ວມໄວ້ສະເພາະຝ່າຍຄຸ້ມຄອງລະດັບກາງ-ຂັ້ນອາວຸໂສ). |
| **ພະນັກງານຂອງແຜນງານ ລບຕ** | ປັບປຸງ ແລະ ລິເລີ່ມການຝຶກອົບຮົມດ້ານບົດບາດຍິງຊາຍ ແລະ ລບຕ ຂອງ ອົງການ ສປຊ ເພື່ອແມ່ຍິງ / LWU ໃຫ້ແກ່ເພື່ອນຮ່ວມງານ ແລະ ພະນັກງານໂດຍທົ່ວໄປຂອງ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao. |
| | ຫຼັກສູດການຝຶກອົບຮົມທາງອອນລາຍແບບບໍ່ເສຍຄ່າ, ການນຳສະເໜີບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການເກັບກູ້ລະເບີດ, ແມ່ນສາມາດເຂົ້າຮ່ວມໄດ້ທີ່ເວັບໄຊ້ຂອງ GICHD ເປັນພາສາອັງກິດ. ເປົ້າໝາຍຂອງຫຼັກສູດທີ່ປະກອບມີ 3 ພາກນີ້ແມ່ນເພື່ອໃຫ້ນັກຮຽນ ສາມາດລະບຸໄດ້ວ່າຈຸດໃດ ແລະ ຍ້ອນຫຍັງບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຈຶ່ງມີຄວາມສຳຄັນໃນຂະແໜງການເກັບກູ້ລະເບີດ.[63]<br>ເບິ່ງຕື່ມ: https://training.gichd.org/. |
| | ຮັບປະກັນໃຫ້ຈຸດປະສານງານຕົ້ນຕໍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທັງຍິງ ແລະ ຊາຍ (ແລະ ຖ້າເປັນໄປໄດ້ກໍ່ໃຫ້ບຸລິມະສິດແກ່ຄົນພິການ ແລະ ກຸ່ມຊົນເຜົ່າຕ່າງໆກ່ອນ) ໄດ້ເຂົ້າຮ່ວມການຝຶກອົບຮົມ ARMAC ຂອງ GICHD ສຳລັບຈຸດປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນໄຕມາດທີ 3 ຂອງປີ 2023 ແລະ ແບ່ງປັນບົດຮຽນທີ່ພວກເຂົາຖອດຖອນໄດ້ຮ່ວມກັບ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ.<br>(ໝາຍເຫດ: ນີ້ແມ່ນຫຼັກສູດທີ່ດຳເນີນເປັນພາສາອັງກິດ ແລະ ມີການຈຳກັດຈຳນວນຜູ້ເຂົ້າຮ່ວມນຳ) |
| **ອຳນາດການປົກຄອງຂັ້ນແຫ່ງຊາດ-ຂັ້ນບ້ານ ທີ່ມີສ່ວນພົວພັນກັບຂັ້ນຕອນ ລບຕ** | ສ້າງເອກະສານສັງລວມຂໍ້ມູນໂດຍຫຍໍ້ ແລະ ລຽບງ່າຍໃຫ້ແກ່ອຳນາດການປົກຄອງແຫ່ງຊາດ-ຂັ້ນບ້ານ ກ່ຽວກັບບັນຫາຕົ້ນຕໍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ. |
| **ພະນັກງານ ລບຕ ພາກສະໜາມຍິງ** | ໄດ້ມີການແນະນຳໃຫ້ສ້າງແຜນງານການໃຫ້ຄຳປຶກສາແກ່ພະນັກງານຍິງຂຶ້ນ ເພື່ອເປັນການສ້າງຂີດຄວາມສາມາດໃຫ້ແກ່ແມ່ຍິງ ທີ່ເຮັດວຽກໃນ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao. ຜູ້ໄດ້ຮັບຄຳປຶກສາຈະຕ້ອງປະກອບມີແມ່ຍິງທີ່ຖືກຮັບເຂົ້າມາໃໝ່ ເພື່ອຈຸດປະສົງໃນການຍົກສູງຄວາມດຸ່ນດ່ຽງລະຫວ່າງຍິງຊາຍ ໃຫ້ແກ່ທີມງານພາກສະໜາມ. ນອກຈາກນັ້ນ, ພະນັກງານຍິງຊຸດປັດຈຸບັນເອງ ກໍ່ມີສິດໄດ້ຮັບຄຳປຶກສາຈາກພະນັກງານອາວຸໂສຍິງ ຫຼື ຊາຍ (ໃນກໍລະນີທີ່ບໍ່ມີແມ່ຍິງໃນຕຳແໜ່ງວຽກຂັ້ນອາວຸໂສ) ເພື່ອສົ່ງເສີມການເພີ່ມທະວີຈຳນວນຂອງແມ່ຍິງໃນຕຳແໜ່ງວຽກຂັ້ນຄຸ້ມຄອງ. |

## 8.3 ນະໂຍບາຍ ແລະ ການກຳນົດແຜນງານຂອງຂະແໜງການ ລບຕ

ບາດກ້າວທຳອິດໃນການຮັບປະກັນໃຫ້ຂັ້ນຕອນການກຳນົດແຜນງານ ລບຕ ນັ້ນຕອບສະໜອງໄດ້ຕໍ່ບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແມ່ນການທຳຄວາມເຂົ້າໃຈວ່າກຸ່ມອັນຫຼາກຫຼາຍນັ້ນ ໄດ້ຮັບຜົນກະທົບແຕກຕ່າງກັນໄປຄືແນວໃດ ພ້ອມທັງຕ້ອງມີຄວາມຮູ້ອັນສະເພາະກ່ຽວກັບ ລບຕ ໃນຊຸມຊົນຂອງພວກເຂົາ. ຂັ້ນຕອນການກຳນົດແຜນງານຈະຕ້ອງຮັບປະກັນໃຫ້ທຸກຄົນຖືກລວມເຂົ້າໄວ້ພາຍໃຕ້ທຸກກົນໄກການປຶກສາຫາລື ເພື່ອໃຫ້ສາມາດເຂົ້າເຖິງຄວາມຮູ້ຂອງພວກເຂົາ ທັງຍັງຊ່ວຍສະໜອງຂໍ້ມູນໃຫ້ແກ່ພວກເຂົາ ກ່ຽວກັບທຸກໄລຍະຂອງການເກັບກູ້ ລບຕ ແລະ ບໍລິການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ສິ່ງນີ້ຕ້ອງໄດ້ອາໄສຂໍ້ມູນທີ່ແບ່ງກຸ່ມສຳຫຼວດ ແລະ ການວິເຄາະ ເພື່ອໃຫ້ສາມາດອອກແບບແຜນງານທີ່ເໝາະສົມ ແລະ ມີປະສິດທິພາບສູງສຸດໄດ້. ການເກັບ

ກຳຂໍ້ມູນໄດ້ກາຍມາເປັນຫົວຂໍ້ໜຶ່ງໃນທົ່ວທັງບົດລາຍງານສະບັບນີ້, ເຊິ່ງແມ່ນບັນຫາທີ່ຖືກຍົກຂຶ້ນມາເປັນປະຈຳພາຍໃຕ້ການປະເມີນບົດບາດຍິງຊາຍ ແລະ ລບຕ ຄັ້ງທີ່ຜ່ານໆມາ, ຕາມທີ່ລະບຸໄວ້ຂ້າງລຸ່ມນີ້:

- ໃນ ສປປ ລາວ, ໜ່ວຍປະຕິບັດການທັງໝົດ ຈະຕ້ອງເກັບກຳຂໍ້ມູນທີ່ກ່ຽວຂ້ອງ ໂດຍແບ່ງຕາມກຸ່ມເພດ ແລະ ອາຍຸ ແລະ ສົ່ງຕໍ່ໃຫ້ NRA ໂດຍຜ່ານ IMSMA ໃຫ້ທັນຕາມເວລາທີ່ກຳນົດ. ຕໍ່ມາຂໍ້ມູນດັ່ງກ່າວກໍ່ຈະຖືກນຳມາວິເຄາະ ຜ່ານມຸມມອງດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາ!ຍ ແລະ ຈະມີການສ້າງບົດລາຍງານຂຶ້ນເພື່ອນຳໃຊ້ເຂົ້າໃນຂັ້ນຕອນການກຳນົດແຜນງານ (GMAP 2014).
- ນຳໃຊ້ ຂໍ້ມູນຕາມກຸ່ມເພດ ຂອງ NRA ທີ່ຖືກເກັບກຳໃນລະຫວ່າງປະຕິບັດການເກັບກູ້ ລບຕ ເພື່ອມາວິເຄາະເຖິງບັນຫາທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ແລະ ໂຮມເອົາຜົນການວິເຄາະນັ້ນເຂົ້າໃນຂັ້ນຕອນການອອກແບບໂຄງການ ແລະ ວຽກງານຕ່າງໆ; ລວມເອົາ ໂຕຊີ້ວັດດ້ານບົດບາດຍິງຊາຍ ແລະ ຄາດໝາຍຕ່າງໆເຂົ້າໃນການແຜນ ແລະ ຍຸດທະສາດການຈັດຕັ້ງປະຕິບັດ ຂອງໜ່ວຍປະຕິບັດງານໃນຂະແໜງການ ລບຕ ທີ່ກ່ຽວຂ້ອງກັບຜູ້ໄດ້ຮັບຜົນປະໂຫຍດຈາກການສຳຫຼວດແບບບໍ່ແມ່ນວິຊາການ, ບຸລິມະສິດໃນວຽກງານການອານຸຍາດນຳໃຊ້ທີ່ດິນ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ; ແລະ 6.3.2 ຕິດຕາມກວດກາ ແລະ ນຳໃຊ້ຂໍ້ມູນທີ່ເກັບກຳໄດ້ກ່ຽວກັບໂຕຊີ້ວັດດ້ານບົດບາດຍິງຊາຍເຂົ້າໃນ ການລາຍງານຂໍ້ມູນ ແລະ ວຽກງານການປະເມີນຜົນປະຈຳປີ (ອົງການ ສປຊ ເພື່ອແມ່ຍິງ / LWU 2018: 6.3.1,6.3.2 ແລະ 6.3.2).

ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍສຳລັບການເກັບກຳຂໍ້ມູນໃນທົ່ວທັງຂະແໜງການໂດຍຜ່ານ ລະບົບຄຸ້ມຄອງຂໍ້ມູນສຳລັບຂະແໜງການເກັບກູ້ລະເບີດ (IMSMA), ລວມທັງ, ບໍ່ຈຳກັດພຽງເທົ່ານີ້, ຜູ້ທີ່ລົງທະບຽນເຂົ້າຮ່ວມທຸກກອງປະຊຸມປຶກສາຫາລືຂັ້ນຊຸມຊົນ, ວຽກງານ EORE ແລະ ລະບົບຕິດຕາມຜູ້ລອດຊີວິດ.

ກອງປະຊຸມປຶກສາຫາລືຂັ້ນຊຸມຊົນ ແມ່ນຂໍ້ບັງຄັບທີ່ເປັນມາດຕະຖານສາກົນ ສຳລັບວຽກງານການກຳນົດແຜນງານ ລບຕ. ຜົນໄດ້ຮັບຈາກການຄົ້ນຄວ້ານີ້ໄດ້ຊີ້ໃຫ້ເຫັນວ່າແຈ້ງການຕ່າງໆສຳລັບກອງປະຊຸມປຶກສາຫາລືຂັ້ນຊຸມຊົນນັ້ນ ແມ່ນແນມໃສ່ຫົວໜ້າຄອບຄົວເປັນຫຼັກ.

ເມື່ອສົມທຽບກັບບັນທັດຖານດັ້ງເດີມ ແລະ ບົດບາດຂອງຍິງຊາຍໃນສັງຄົມແລ້ວນັ້ນ, ສິ່ງນີ້ໄດ້ກໍ່ໃຫ້ເຫັນຂໍ້ຈຳກັດຕໍ່ການມີສ່ວນຮ່ວມຂອງແມ່ຍິງ, ໂດຍທີ່ວຽກພາກສະໜາມໄດ້ຊີ້ໃຫ້ເຫັນວ່າ ຜູ້ຊາຍທີ່ເຂົ້າຮ່ວມກອງປະຊຸມປຶກສາຫາລື ແລະ ເມື່ອກັບຮອດບ້ານແລ້ວ, ແມ່ນບໍ່ໄດ້ແບ່ງປັນຂໍ້ມູນທີ່ໄດ້ຮັບຈາກກອງປະຊຸມກັບຜູ້ເປັນເມຍ ແລະ ຄອບຄົວເລີຍ.

ນອກຈາກນັ້ນ, ການປະກາດຜ່ານໂທລະໂຄ່ງ ກໍ່ມັກຈະບໍ່ມີການນຳໃຊ້ພາສາທ້ອງຖິ່ນ ແລະ ບໍ່ເຂົ້າເຖິງກຸ່ມຄົນທີ່ຢູ່ເຂດຫ່າງໄກສອກຫຼີກ ທີ່ມັກຈະເປັນກຸ່ມສ່ຽງໄພສູງ. ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກໃນປີ 2008 ໄດ້ຮຽກຮ້ອງໃຫ້ໜ່ວຍປະຕິບັດການເກັບກູ້ ລບຕ ລົງຢ້ຽມຢາມບ້ານຕ່າງໆ ເພື່ອແຈ້ງຂ່າວໃຫ້ແຕ່ລະຄົວເຮືອນຊາບດ້ວຍຕົນເອງ ກ່ຽວກັບກອງປະຊຸມທີ່ຈະຖືກຈັດຂຶ້ນ. ເພື່ອຮັບປະກັນໃຫ້ຄົນໃນພື້ນທີ່ຫ່າງໄກສອກຫຼີກ (ໂດຍສະເພາະຄົນທຸກ ແລະ ກຸ່ມຊົນເຜົ່າທີ່ຫຼາກຫຼາຍ) ສາມາດເຂົ້າເຖິງຂໍ້ມູນຂ່າວສານໄດ້ນັ້ນ, ອາດມີການນຳໃຊ້ບໍລິການເຄື່ອນທີ່ ເພື່ອແຈ້ງຂ່າວໃຫ້ພວກເຂົາຊາບກ່ຽວກັບ ລບຕ ແລະ ຂັ້ນຕອນການເກັບກູ້ລະເບີດ, ວຽກງານ EORE ແລະ ບໍລິການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ສິ່ງເຫຼົ່ານີ້ສາມາດນຳມາຈັດຕັ້ງປະຕິບັດໄດ້ ພ້ອມການຊ່ວຍເຫຼືອຈາກໜ່ວຍປະຕິບັດການເກັບກູ້ ລບຕ (ທີ່ລວມມີ: ຫອງຮ້ອຍ 58, ໂຄງການ UXO Lao ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດ) ທີ່ດຳເນີນການລົງຢ້ຽມຢາມດັ່ງກ່າວ.

ວຽກງານ EORE ຈະຕ້ອງໄດ້ຮັບຮອງເອົາຍຸດທະສາດ ແລະ ສື່ການຮຽນການສອນທີ່ຖືກອອກແບບມາໂດຍສະເພາະ, ໃນພາສາທີ່ຫຼາກຫຼາຍ ແລະ ໃນຊ່ອງທາງຕ່າງໆທີ່ສາມາດເຂົ້າເຖິງໄດ້ ສຳລັບກຸ່ມຄົນທີ່ບໍ່ຮູ້ໜັງສື. ມັນຈະຕ້ອງປະກອບມີຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບຂັ້ນຕອນຕ່າງໆໃນການຮ້ອງຂໍການເກັບກູ້ ລບຕ ແລະ ບໍລິການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ NRA ແລະ ໜ່ວຍງານທ້ອງຖິ່ນ, ລວມໄປເຖິງສາຍດ່ວນທີ່ມີບໍລິການແປພາສາແບບຄອບຄຸມໄວ້ໃຫ້.

ກອງປະຊຸມປຶກສາຫາລືຂັ້ນຊຸມຊົນ ແລະ ຊຸດຝຶກອົບຮົມ EORE ຈະຕ້ອງໄດ້ພິຈາລະນາເວລາ ແລະ ສະຖານທີ່ທີ່ເໝາະສົມ ເພື່ອຮັບປະກັນໃຫ້ທຸກຄົນໃນຊຸມຊົນສາມາດເຂົ້າຮ່ວມໄດ້ຢ່າງຄົບຖ້ວນ. ບົດຄົ້ນຄວ້າຂອງສາກົນພົບວ່າ ການສະໜອງຂໍ້ມູນແບບແຍກຕ່າງຫາກໃຫ້ແກ່ແມ່ຍິງ ແລະ ຜູ້ຊາຍ, ໄວໜຸ່ມ/ຜູ້ສູງອາຍຸ, ກຸ່ມຊົນເຜົ່າ ແລະ ກຸ່ມອື່ນໆນັ້ນ ອາດຍົກສູງໂອກາດທີ່ພວກເຂົາຈະເຂົ້າຮ່ວມ ແລະ ມີສ່ວນຮ່ວມໃນກອງປະຊຸມ ຫຼື ຊຸດຝຶກອົບຮົມນຳໄດ້. ວຽກງານພາກສະໜາມຍັງຄົ້ນພົບອີກວ່າ ປະຊາຊົນມີແນວໂນ້ມທີ່ຈະເຂົ້າຮ່ວມກອງປະຊຸມ ຫຼື ຊຸດຝຶກອົບຮົມຕ່າງໆ ຖ້າມີການແຈກເຄື່ອງຂອງ, ເຊັ່ນ: ປຶ້ມຂຽນ ແລະ ປາກກາ ຫຼື ເສື້ອຢືດ. ແນວທາງທີ່ຖືກອອກແບບມາສະເພາະ ແລະ ທີ່ອີງໃສ່ສິ່ງຈູງໃຈນີ້ ແມ່ນພື້ນຖານສຳຄັນທີ່ນຳພາໄປສູ່ແນວຄິດຂອງການຈັດມະຫາກຳບານເຕະໃຫ້ແກ່ເດັກຊາຍ ເພື່ອໃຫ້ສາມາດເຂົ້າເຖິງກຸ່ມປະຊາກອນທີ່ເຂົ້າເຖິງໄດ້ຍາກ ແລະ ມີຄວາມສ່ຽງສູງທີ່ສຸດ.

ຂໍ້ມູນໃນທົ່ວທຸກລະບົບຈະຕ້ອງໄດ້ມີການແຍກອອກເປັນກຸ່ມຕ່າງໆຢ່າງສະໝ່ຳສະເໝີ ພ້ອມທັງຍົກສູງຄວາມຕື່ນໂຕ ແລະ ການເຂົ້າເຖິງບໍລິການໃຫ້ຄຳປຶກສາດ້ານຈິດຕະສັງຄົມແກ່ຜູ້ຊາຍ ແລະ ສະມາຊິກໃນຄອບຄົວຂອງພວກເຂົາຢ່າງກວ້າງຂວາງຕື່ມອີກ.

ໄດ້ມີການດຳເນີນວຽກງານ 3 ຢ່າງທີ່ສຳຄັນໃນຂະແໜງການ ລບຕ ແລະ ຈະຕ້ອງຖືກແກ້ໄຂໄປພ້ອມໆກັບການສ້າງ ແຜນການດຳເນີນງານດ້ານບົດບາດຍິງຊາຍ. ທັງ 3 ວຽກງານນັ້ນລວມມີ: ການທົບທວນຄືນມາດຕະຖານແຫ່ງຊາດ, ການທົບທວນຄືນຂໍ້ຊີ້ນຳວຽກງານ EORE ທີ່ໄດ້ຮັບການສະໜັບສະໜຸນທາງການເງິນຈາກ ອົງການ UNDP ແລະ ການທົບທວນຄືນເງື່ອນໄຂການຈັດລຽງບຸລິມະສິດໃຫ້ແກ່ວຽກງານເກັບກູ້ ລບຕ ຂອງ NRA:

- ⇨ ການທົບທວນຄືນມາດຕະຖານແຫ່ງຊາດ: ການທົບທວນຄືນດັ່ງກ່າວລວມມີຊຸດບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ໄດ້ຮັບການແກ້ໄຂພາຍໃຕ້ IMAS (ເບິ່ງຕື່ມ ພາກເອກະສານຊ້ອນທ້າຍທີ 5). ສິ່ງນີ້ອາດໄດ້ຮັບການສົ່ງເສີມຜ່ານຂໍ້ຊີ້ນຳຈາກ ຍຸດທະສາດຂອງ UNMAS 2019-2023 ແລະ ເປົ້າໝາຍຈຸດສຸມຍຸດທະສາດກວມຫຼາຍຂະແໜງການລຳດັບທີ 2 ແລະ ບັນດາຂໍ້ແນະນຳຂອງບົດລາຍງານນີ້.
- ⇨ ການທົບທວນຄືນຂໍ້ຊີ້ນຳວຽກງານ EORE ທີ່ໄດ້ຮັບການສະໜັບສະໜຸນດ້ານເງິນທຶນຈາກ ອົງການ UNDP: ການທົບທວນຄືນວຽກງານ EORE ຈະຕ້ອງໂຮມເອົາຜົນໄດ້ຮັບ ແລະ ຂໍ້ແນະນຳຕ່າງໆຂອງບົດລາຍງານນີ້ເຂົ້ານຳ (ສັງລວມຂໍ້ແນະນຳ 3A ຫາ 3E) ແລະ ການດຳເນີນງານຕ່າງໆທີ່ອະທິບາຍໄວ້ໃນ ແຜນການດຳເນີນງານດ້ານບົດບາດຍິງຊາຍສຳລັບ NRA ໃນປີ 2008.
- ⇨ ການທົບທວນຄືນເງື່ອນໄຂການຈັດລຽງບຸລິມະສິດໃຫ້ແກ່ວຽກງານເກັບກູ້ ລບຕ ຂອງ NRA: ວຽກງານນີ້ຈະສົ່ງຜົນກະທົບຕໍ່ຂະແໜງການທັງໝົດ ແລະ ຕ້ອງໂຮມເອົາຂໍ້ພິຈາລະນາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຕົ້ນຕໍ ທີ່ຄົນທຸກ ແລະ ຄົນບໍ່ຮູ້ໜັງສືຕ້ອງພົບພໍ້ໃນເຂດຊົນນະບົດທີ່ຫ່າງໄດສອກຫຼີກ, ໂດຍສະເພາະແມ່ຍິງ, ຄົນພິການ, ກຸ່ມຊົນເຜົ່າ ແລະ ຜູ້ທີ່ບໍ່ເວົ້າພາສາລາວ ແລະ/ຫຼື ຜູ້ທີ່ບໍ່ຮູ້ໜັງສື ເພື່ອຮັບປະກັນໃຫ້ຜູ້ທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດທີ່ສຸດນັ້ນໄດ້ຮັບບຸລິມະສິດດ້ານວຽກງານການເກັບກູ້ລະເບີດກ່ອນໝູ່.



## 8.4 ນະໂຍບາຍ ແລະ ຂັ້ນຕອນດ້ານຊັບພະຍາກອນມະນຸດ

ການສ້າງນະໂຍບາຍຊັບພະຍາກອນມະນຸດ ແລະ ຂໍ້ຊີ້ນຳກ່ຽວກັບບົດບາດຍິງຊາຍໃຫ້ແກ່ NRA ແລະ ໂຄງການ UXO Lao ແມ່ນໄດ້ຖືກແນະນຳໄວ້ໃນບົດປະເມີນຜົນຂອງອົງການ ສປຊ ເພື່ອແມ່ຍິງ / LWU ໃນປີ 2018, ພ້ອມທັງຍຸດທະສາດຫຼາຍອັນທີ່ແນໃສ່ເພີ່ມທະວີຈຳນວນຂອງແມ່ຍິງໃນຂະແໜງການ ໃນບົດປະເມີນຜົນຂອງ ອົງການແມັກ ໃນປີ 2008.[64]

ພາກທີ 7.1 ຫາ 7.3 ຂອງບົດລາຍງານສະບັບນີ້ ໄດ້ຮັບຮອງເອົາການທົບທວນຄືນບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃຫ້ແກ່ນະໂຍບາຍບຸກຄະລາກອນ ແລະ ຫຼັກປະຕິບັດວຽກງານຕ່າງໆຂອງ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao, ໂດຍເນັ້ນໜັກເປັນພິເສດໃສ່ຂົງເຂດທີ່ຕ້ອງໄດ້ຮັບການແກ້ໄຂ ຕາມທີ່ລະບຸໄວ້ໃນບົດສັງລວມຂໍ້ແນະນຳ 4.A ຫາ 4.D. ສິ່ງເຫຼົ່ານີ້ລວມມີ, ແຕ່ບໍ່ຈຳກັດພຽງເທົ່ານັ້ນ, ການສ້າງຍຸດທະສາດເພື່ອກຳນົດຄາດໝາຍທີ່ແນໃສ່ ຮັບປະກັນໃຫ້ແມ່ຍິງກວມ 30-35 ສ່ວນຮ້ອຍຂອງທີມເກັບກູ້ລະເບີດແບບປະສົມ; ເພື່ອຮັບປະກັນອັດຕາສ່ວນການຈ້າງງານໃນຂະແໜງການໃນລະດັບ 10 ສ່ວນຮ້ອຍໃຫ້ແກ່ກຸ່ມຊົນເຜົ່າ ແລະ 5 ສ່ວນຮ້ອຍໃຫ້ແກ່ຄົນພິການ; ແລະ 25-30 ສ່ວນຮ້ອຍຂອງແມ່ຍິງໃນຕຳແໜ່ງວຽກຂັ້ນຄຸ້ມຄອງພາຍໃນປີ 2025 ໂດຍສອດຄ່ອງກັບ NPAGE ຄັ້ງທີ 4.

ພາກສ່ວນນີ້ຍັງກ່າວເຖິງບັນດາຍຸດທະສາດ ທີ່ແນໃສ່ຮັບປະກັນສະພາບຂອງສະຖານທີ່ເຮັດວຽກທີ່ປອດໄພສຳລັບແມ່ຍິງຖືພາ ແລະ ຫຼັງເກີດລູກແລ້ວ ພ້ອມທັງພະນັກງານ ລບຕ ຍິງໃນສະໜາມ, ລວມໄປເຖິງການເດີນທາງ ແລະ ທີ່ພັກອາໄສ, ແນວຄິດເໝົາລວມ ແລະ ຄວາມເຂົ້າໃຈຂອງຊຸມຊົນໃນທ້ອງຖິ່ນ. ຍ້ອນທຸກໜ່ວຍປະຕິບັດການ ລບຕ ຕ້ອງໄດ້ພົບພໍ້ກັບບັນຫາເຫຼົ່ານີ້, ແນວທາງທີ່ກວມທົ່ວທັງຂະແໜງການ ຈະຕ້ອງຖືກສ້າງຂຶ້ນເພື່ອແກ້ໄຂບັນຫາເຫຼົ່ານີ້. ຈຳເປັນຕ້ອງໄດ້ມີການຄົ້ນຄວ້າເພີ່ມເຕີມ ເພື່ອລະບຸຍຸດທະສາດອັນຮອບດ້ານ, ເປັນໄປໄດ້ ແລະ ມີປະສິດທິພາບ ໂດຍອີງໃສ່ປະສົບການການດຳລົງຊີວິດຂອງແມ່ຍິງເປັນຫຼັກ.

GICHD ມີແຜນເຜີຍແຜ່ບົດລາຍງານກ່ຽວກັບຂໍ້ມູນແບບແບ່ງກຸ່ມສຳຫຼວດໃນຂະແໜງການ ລບຕ ໂດຍອີງໃສ່ການຄົ້ນຄວ້າເມື່ອບໍ່ດົນມານີ້ໃນປະເທດກຳປູເຈຍ, ສປປ ລາວ, ມຽນມາ ແລະ ໄທ. ມັນປະກອບມີການສຳຫຼວດ ແລະ ການສົນທະນາກຸ່ມສະເພາະໃນ ສປປ ລາວ ຮ່ວມກັບພະນັກງານປະຕິບັດການເກືອບ 300ຄົນຈາກ ອົງການແມັກ ແລະ ໂຄງການ UXO Lao, ພ້ອມດ້ວຍວຽກງານພາກສະໜາມໃນອີກຫຼາຍແຂວງ.

ພາກທີ 3.1 ຂອງຂອບວຽກຜົນໄດ້ຮັບ (ນະໂຍບາຍ ແລະ ລະບຽບຂັ້ນຕອນຂອງ NRA/ກອງຮ້ອຍ 58/ໂຄງການ UXO Lao) ແນໃສ່ແກ້ໄຂບັນຫາການລ່ວງລະເມີດ, ການກົດຂີ່ ແລະ ຂູດຮີດທາງເພດດ້ວຍກົນໄກການຮ້ອງທຸກທີ່ປອດໄພ, ປິດລັບ, ໂປ່ງໃສ ແລະ ເຂົ້າເຖິງໄດ້ໂດຍຜ່ານຫຼັກປະຕິບັດ ຫຼື ເອກະສານທີ່ກ່ຽວຂ້ອງ.

ການຕິດຕາມກວດກາແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແລະ ຂອບວຽກຜົນຂອງການປະເມີນ ຂອບວຽກຜົນຂອງການຕິດຕາມກວດກາ ແລະ ການປະເມີນ ສາມາດຊ່ວຍຊີ້ນຳການຈັດຕັ້ງປະຕິບັດ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ, ໂດຍຜ່ານການເພັນຂະຫຍາຍເນື້ອໃນ ໃຫ້ກາຍມາເປັນໝາດຜົນພ້ອມດ້ວຍຄາດໝາຍ ແລະ/ຫຼື ໂຕຊີ້ວັດອັນຊັດເຈນ, ແຫຼ່ງຂໍ້ມູນເພື່ອຢັ້ງຢືນຄວາມຖືກຕ້ອງ, ຂອບເຂດເວລາທີ່ແນະນຳ, ຄູ່ຮ່ວມງານທີ່ມີໜ້າທີ່ຮັບຜິດຊອບໃນການນຳພາວຽກງານ, ຈຸດທົບທວນຄືນທີ່ແນະນຳ ແລະ ການປະເມີນງົບປະມານທີ່ກ່ຽວຂ້ອງ.

ຂອບວຽກດັ່ງກ່າວແມ່ນສອດຄ່ອງກັບໝາກຜົນທັງ 4, ໂຕຊີ້ວັດ ແລະ ແຫຼ່ງຂໍ້ມູນພາຍໃນແຜນງານ ລບຕ ຂອງລັດຖະບານ ແລະ ຂອງ ອົງການ UNDP. ສິ່ງເຫຼົ່ານີ້ແມ່ນຖືກໝາຍສີຟ້າໄວ້. ມັນຍັງສອດຄ່ອງກັບໝາກຜົນສຳລັບ ຍຸດທະສາດຂອງ UNMAS 2019-2023 ແລະ ເປົ້າໝາຍຈຸດສຸມຍຸດທະສາດກວມຫຼາຍຂະແໜງການລຳດັບທີ 2, ວ່າດ້ວຍແຜນການເກັບກູ້ລະເບີດ ທີ່ແນໃສ່ແກ້ໄຂບັນຫາອັນສະເພາະໃຫ້ແກ່ແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍທີ່ມາຈາກກຸ່ມອັນຫຼາກຫຼາຍ, ໃນຂະນະດຽວກັນກໍ່ຊ່ວຍອຳນວຍຄວາມສະດວກໃນການຍົກສູງບົດບາດ ແລະ ຄວາມກວມລວມໃຫ້ແກ່ພວກເຂົາ.

ວຽກງານສ່ວນໃຫຍ່ແມ່ນຖືກກຳນົດໃຫ້ຈັດຕັ້ງປະຕິບັດພາຍໃນໄລຍະເວລາ 2 ປີ, ຫຼັງຈາກນັ້ນຫຼາຍອັນກໍ່ຈະຍັງຄົງສືບຕໍ່, ພ້ອມດ້ວຍບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດໂຕຈິງ. ເມື່ອພິຈາລະນາເຖິງຄວາມຈຳເປັນໃນການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານແລ້ວນັ້ນ, ໄດ້ມີການແນະນຳໃຫ້ຕ້ອງເສີມຂະຫຍາຍ ຄວາມສາມາດໃນການເຂົ້າເຖິງແຫຼ່ງທຶນ ແລະ ຊຸກຍູ້ໃຫ້ຄູ່ຮ່ວມງານຕ່າງໆໃນຂະແໜງການເຫັນດີກັບແຜນວຽກດັ່ງກ່າວ, ລວມໄປເຖິງຕ້ອງທົບທວນຄືນ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ໃນໄລຍະ 2 ປີນີ້, ຫຼັງຈາກນັ້ນກໍ່ໃຫ້ດັດແກ້ແຜນວຽກຄືນໃໝ່.

ໃນ ຕາຕະລາງທີ 10, ໄດ້ມີການອ້າງອີງເຖິງຄວາມສອດຄ່ອງເພີ່ມເຕີມໂດຍສົມທຽບໃສ່ກັບ ແຜນການດຳເນີນງານດ້ານບົດບາດຍິງຊາຍ ທີ່ຖືກສ້າງຂຶ້ນໂດຍ GMAP ໃຫ້ແກ່ NRA ໃນປີ 2014. ຖັນສຸດທ້າຍຂອງຕາຕະລາງ ຊີ້ໃຫ້ເຫັນເຖິງຄວາມສອດຄ່ອງກັບແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ໃນປັດຈຸບັນ.

**ຕາຕະລາງທີ 10: ແຜນການດຳເນີນງານດ້ານບົດບາດຍິງຊາຍ ສຳລັບ NRA ທີ່ສ້າງຂຶ້ນໂດຍ GMAP ໃນປີ 2014**

| ເປົ້າໝາຍ | ໜ້າວຽກ | ໂຕຊີ້ວັດ | ໜ້າທີ່ຮັບຜິດຊອບ | ຂໍ້ມູນອ້າງອີງພາຍໃຕ້ ຂອບວຽກຜົນໄດ້ຮັບດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ທີ່ສະເໜີມາ |
|---|---|---|---|---|
| ຮັບປະກັນຄວາມດຸ່ນດ່ຽງລະຫວ່າງຍິງຊາຍເພີ່ມເຕີມໃນກຸ່ມພະນັກງານໃນຂະແໜງການ ລບຕ, ລວມທັງໃນຂັ້ນຕັດສິນໃຈ | • ການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂັ້ນແຂວງ<br>• ນຳໃຊ້ເຄືອຂ່າຍຂອງ LWU ແລະ LYU (ໂຕແທນຂັ້ນບ້ານ) ເພື່ອເຂົ້າເຖິງແມ່ຍິງ ແລະ ໄວໜຸ່ມໃນຂັ້ນທ້ອງຖິ່ນ | ບົດລາຍງານຜູ້ປະຕິບັດງານ<br><br>ຂໍ້ມູນໃນ IMS-MA | NRA, ຜູ້ປະຕິບັດງານ | ກ່າວເຖິງໃນ ພາກທີ 4<br><br>ນຳໃຊ້ເຄືອຂ່າຍທ້ອງຖິ່ນຂອງ LWU ແລະ LYU ໃຫ້ເປັນປະໂຫຍດ |
| ແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍໃນຊຸມຊົນທີ່ໄດ້ຮັບຜົນກະທົບ ແມ່ນໄດ້ຖືກຮັບແຈ້ງກ່ຽວກັບເນື້ອທີ່ດິນທີ່ອານຸຍາດໃຫ້ນຳໃຊ້ | • ລວມເອົາແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍເຂົ້າໃນພິທີມອບຮັບເນື້ອທີ່ດິນ | ບໍ່ມີລາຍຊື່ | ຫົວໜ່ວຍເກັບກູ້ລະເບີດ, NRA | ກ່າວເຖິງໃນ ພາກທີ 3.1 |
| ວຽກງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແມ່ນຄຳນຶງເອົາບົດບາດຍິງຊາຍເຂົ້ານຳ | • ນຳສະເໜີຂໍ້ມູນຂອງຜູ້ປະສົບເຄາະຮ້າຍຕາມກຸ່ມເພດ ແລະ ອາຍຸໄວໃນບົດລາຍງານ<br>• ວິເຄາະ ລະບົບຕິດຕາມຜູ້ລອດຊີວິດ (STS) ເພື່ອໃຫ້ໄດ້ຂໍ້ມູນຄວາມຊ່ວຍເຫຼືອທີ່ຜູ້ປະສົບເຄາະຮ້າຍຕ້ອງການ ຕາມກຸ່ມເພດ ແລະ ອາຍຸ, ແລະ ນຳໃຊ້ຜົນໄດ້ຮັບນັ້ນເຂົ້າໃນການອອກແບບ ບໍລິການທີ່ແທດເໝາະຮ່ວມກັບຄູ່ຮ່ວມມື (ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ແລະ ກະຊວງແຮງງານ)<br>• ສ້າງເຄື່ອງມືການຕິດຕາມກວດກາດ້ານຄຸນນະພາບ/ປະລິມານ ເພື່ອວັດແທກຜົນກະທົບຕໍ່ຜູ້ລອດຊີວິດ | ບໍ່ມີລາຍຊື່ | ຫົວໜ່ວຍການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, NRA | ກ່າວເຖິງໃນພາກທີ 4.5 ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ |
| ການຄຸ້ມຄອງ/ການຕິດຕາມກວດກາຄຸນນະພາບ ແລະ ການປະເມີນແຜນງານ ລບຕ ທັງໝົດ ແມ່ນຄຳນຶງເຖິງບົດບາດຍິງຊາຍເຂົ້ານຳ | • ເສັ້ນທຽບຖານ ແລະ ຄວາມຄາດຫວັງ<br>• ຂັ້ນຕອນການສຳຫຼວດ ການປະເມີນຜົນກະທົບຫຼັງການເກັບກູ້ລະເບີດທີ່ຄຳນຶງເຖິງບົດບາດຍິງຊາຍ | ບໍ່ມີລາຍຊື່ | ບໍ່ມີລາຍຊື່ | ກ່າວເຖິງໃນ ພາກທີ 3.2 |
| ບົດບາດຍິງຊາຍແມ່ນຖືກເຊື່ອມສານເຂົ້າໃນ ບົດບັນທຶກຄວາມເຂົ້າໃຈ (MOU) ຮ່ວມກັບໜ່ວຍປະຕິບັດງານຕ່າງໆ | • ປຶກສາຫາລືກັບໜ່ວຍປະຕິບັດງານຕ່າງໆ ແລະ ກະຊວງການຕ່າງປະເທດ<br>• ສ້າງຂໍ້ຊີ້ນຳ<br>• ຂໍເອົາລະບຽບປະຕິບັດ | MOU ມີການຄຳນຶງເອົາບົດບາດຍິງຊາຍເຂົ້ານຳ | ຫົວໜ່ວຍຄົ້ນຄວ້າ, NRA | ກ່າວເຖິງໃນ ພາກທີ 3.1 |
| ບົດລາຍງານປະຈຳປີຂອງຂະແໜງການ ລບຕ ນຳສະເໜີຂໍ້ມູນຕາມກຸ່ມເພດ ແລະ ອາຍຸ | • ຂໍ້ມູນຕາມກຸ່ມເພດ ແລະ ອາຍຸສຳລັບວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ອົງປະກອບຂອງພະນັກງານ | ບົດລາຍງານປະຈຳປີແມ່ນມີພ້ອມສະໜອງໃຫ້ | ຫົວໜ່ວຍແຜນງານ | ກ່າວເຖິງໃນ ພາກທີ 3.3 ແລະ 3.4 |



# 9 ຂອບວຽກການຕິດຕາມກວດກາ ແລະການປະເມີນຜົນສໍາລັບ ແຜນການດໍາເນີນງານດ້ານ ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ

© UNDP / Pongpat Sensouphone



## ຂອບວຽກການຕິດຕາມກວດກາ ແລະ ການປະເມີນຜົນສໍາລັບ ແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ

| # | ໝາກຜົນ | ຄາດໝາຍ ຫຼື ໂຕຊີ້ວັດ | ຂໍ້ມູນ | ໄລຍະເວລາ | ຝ່າຍຮັບຜິດຊອບ | ທົບທວນຄືນ | ງົບປະມານ |
|---|---|---|---|---|---|---|---|
| 1. | ນະໂຍບາຍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ແລະ ກົນໄກການປະສານງານ | | | | | | |
| 1.1 | ການລະບຸທີ່ປຶກສາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນແຜນງານ ລບຕ ເພື່ອຈັດຕັ້ງປະຕິບັດແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ໃນປີທໍາອິດ | ປຶກສາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ໃນແຜນງານ ລບຕ ໄດ້ຮັບການແຕ່ງຕັ້ງໃຫ້ເຮັດວຽກກັບໜ່ວຍງານຈັດຕັ້ງປະຕິບັດ (NRA, ໂຄງການ UXO Lao, ກອງຮ້ອຍ 58) ແລະ LWU ເພື່ອຊີ້ນໍາ, ໃຫ້ຄໍາປຶກສາ ແລະ ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ | ຈັດຕັ້ງປະຕິບັດສັນຍາແລ້ວ | ປີທີ 1: ໄຕມາດທີ 3 | ຫົວໜ່ວຍ ລບຕ ຂອງ ອົງການ UNDP | ບົດລາຍງານການທົດລອງງານ 3 ເດືອນ<br><br>ການພິຈາລະນາຜົນງານປະຈໍາປີ | $8,000 ພ້ອມພື້ນທີ່ຫ້ອງການ |
| 1.2 | ການສ້າງຕັ້ງ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍພາຍໃນ ຮ່ວມກັບ NRA, ກອງຮ້ອງ 58, LWU, ກະຊວງແຮງງານ ແລະ ອົງການ UNDP | ຈຸດປະສານງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍພາຍໃນອົງການ UNDP, NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao & LWU ໄດ້ຮັບການລະບຸ<br><br>ຂອບໜ້າວຽກຂອງຈຸດປະສານງານດັ່ງກ່າວປະກອບມີບົດບາດ, ໜ້າທີ່ ແລະ ຄວາມຮັບຜິດຊອບທີ່ສໍາຄັນ ໃນການຈັດຕັ້ງປະຕິບັດແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ, ພ້ອມຮັບຮູ້ວ່າພວກເຂົາຕ້ອງໄດ້ໃຊ້ເວລາ 10 ສ່ວນຮ້ອຍຈາກທັງໝົດທີ່ຕົນມີ ເຂົ້າໃນການດໍາເນີນບົດບາດນີ້ | ບົດບັນທຶກກອງປະຊຸມຂອງ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍພາຍໃນ<br><br>ຂອບໜ້າວຽກ ແລະ ການພິຈາລະນາຜົນງານຂອງພະນັກງານ | ປີທີ 1: ໂຕມາດທີ 2 | NRA | ປະຈໍາປີ | ເວລາຂອງພະນັກງານ |
| 1.3 | ການສ້າງແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃຫ້ແກ່ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao | ແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແມ່ນໄດ້ຖືກສ້າງຂຶ້ນໂດຍປະກອບມີຂໍ້ແນະນໍາທີ່ສໍາຄັນຕ່າງໆ ຈາກການປະເມີນຜົນດ້ານບົດບາດຍິງຊາຍ ແລະ ລບຕ ເມື່ອຄັ້ງທີ່ຜ່ານໆມາ ແລະ ມີຄວາມສອດຄ່ອງກັບມາດຕະຖານສາກົນດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຂອງ ອົງການ ສປຊ ແລະ GICHD/GMAP | ແຜນທີ່ໄດ້ຮັບການຮັບຮອງ | ປີທີ 1: ໄຕມາດທີ 2-3 | ສະມາຊິກຂອງກຸ່ມວິຊາການ ລບຕ<br><br>ກະຊວງແຮງງານ ແລະ ອົງການ UNDP ເປັນປະທານ<br><br>ນໍາພາໂດຍ: NRA | ຕິດຕາມຜົນ 2 ຄັ້ງຕໍ່ປີ<br><br>ລາຍງານຜົນປະຈໍາປີ | ເວລາຂອງພະນັກງານ |

| | | | | | | | |
|---|---|---|---|---|---|---|---|
| 1.4 | ກຸ່ມວິຊາການດ້ານ ບົດບາດຍິງຊາຍ ແລະ ຄວາມຫຼາກ ຫຼາຍ ເສີມສ້າງ ຄວາມສົນໃຈ ແລະ ການຈັດຕັ້ງ ປະຕິບັດບັນຫາ ທີ່ກ່ຽວຂ້ອງກັບ ບົດບາດຍິງຊາຍ ແລະ ຄວາມຫຼາກ ຫຼາຍ ພາຍໃຕ້ ແນວທາງ ທີ່ພົວພັນ ຂະແໜງການ ທັງໝົດ | • ຂອບໜ້າວຽກຖືກ ສ້າງຂຶ້ນ<br>• ກອງປະຊຸມປະຈໍາ ໄຕມາດຖືກຈັດຂຶ້ນ<br>• GICHD ນໍາສະເໜີ ບົດດ້ານກໍລະນີສຶກສາ ກ່ຽວກັບການຈ້າງງານ ຂອງ ອົງການແມັກ ແລະ ໂຄງການ UXO Lao | ຂອບໜ້າວຽກ ຂອງກຸ່ມວິຊາການ ດ້ານບົດບາດຍິງ ຊາຍ ແລະ ຄວາມ ຫຼາກຫຼາຍ, ແລະ ບົດບັນທຶກກອງ ປະຊຸມ | ປີທີ 1: ໄຕມາດທີ 3, ໄຕມາດ ທີ 4 | NRA, ກອງຮ້ອຍ 58, ໂຄງການ UXO Lao, ກະຊວງແຮງງານ, LWU ແລະ ອົງການ UNDP | ຕິດຕາມຜົນປະຈໍາ ໄຕມາດ<br><br>ບົດບັນທຶກກອງ ປະຊຸມປະຈໍາ ໄຕມາດ | ເວລາຂອງ ພະນັກງານ<br><br>$2,100 ສໍາລັບ ປີ 2023, $4,200 ສໍາ ລັບທຸກໆປີທີ່ ເພີ່ມໃໝ່ |



| **2. ການສ້າງຂີດຄວາມສາມາດ** | | | | | | | |
|---|---|---|---|---|---|---|---|
| **#** | **ໝາກຜົນ** | **ຄາດໝາຍ ຫຼື ໂຕຊີ້ວັດ** | **ຂໍ້ມູນ** | **ໄລຍະເວລາ** | **ຝ່າຍ ຮັບຜິດຊອບ** | **ທົບທວນຄືນ** | **ງົບປະມານ** |
| ພາກສ່ວນການສ້າງຂີດຄວາມ ສາມາດນີ້ ແມ່ນສອດຄ່ອງກັບ ແລະ ສາມາດລວມເຂົ້າໄວ້ໃນ **ໝາກຜົນ ທີ 3 ຂອງແຜນງານ UNDP:** ປັບປຸງຂີດຄວາມສາມາດໃຫ້ແກ່ NRA ໃນການກໍານົດທິດທາງຍຸດ ທະສາດໃຫ້ແກ່ຂະແໜງການ, ການ ຄຸ້ມຄອງ (ກວດສອບ, ຕິດຕາມ ກວດກາ, ຮັບປະກັນຄຸນນະພາບ), ການນໍາໃຊ້ຂໍ້ມູນ ແລະ ການລະດົມ ຊັບພະຍາກອນ ລວມໄປເຖິງການ ກໍານົດຄໍາອະທິບາຍກ່ຽວກັບຮູບ ແບບການຈັດຫາແຫຼ່ງທຶນທາງ ເລືອກ | | 3.1 ຄວາມຖີ່ໃນການດໍາເນີນວຽກ ງານຮັບປະກັນຄຸນນະພາບ ໂດຍ NRA ໃຫ້ແກ່ໜ່ວຍ ປະຕິບັດການເກັບກູ້ ລບຕ ຕໍ່ປີ<br>3.2 ອັດຕາສ່ວນຮ້ອຍຂອງຈໍານວນ ຄະນະກໍາມະການຄຸ້ມຄອງ ບັນຫາ ລບຕ ຂັ້ນແຂວງ (PRA) ທັງໝົດທີ່ມີສ່ວນຮ່ວມ ເຂົ້າໃນຂັ້ນຕອນການວາງແຜນ ຂັ້ນແຂວງ<br>3.3 ຄວາມພ້ອມຂອງຍຸດທະສາດ ການຫຼຸດຜ່ອນຄວາມສ່ຽງຂອງ NRA<br>3.4 ໄດ້ມີການເຜີຍແຜ່ເອກະສານຊີ້ ແຈງແຫຼ່ງທຶນທາງເລືອກໃນ ຂະແໜງການ ລບຕ ແລ້ວ | 3.1 ບົດລາຍງານວຽກງານ ຮັບປະກັນຄຸນນະພາບ ຂອງ NRA / ວຽກງານ ຮັບປະກັນຄຸນນະພາບ<br>3.2 ບົດລາຍງານການທົບ ທວນຄວາມຄືບໜ້າ ປະຈໍາປີຂອງ NRA / ການທົບທວນຄືນ ເອກະສານ<br>3.3 ຍຸດທະສາດການ ຫຼຸດຜ່ອນຄວາມສ່ຽງຂອງ NRA / ການທົບ ທວນຄືນເອກະສານ<br>3.4 ເອກະສານວຽກງານ ຕິດຕາມກວດກາ, ປະເມີນ ຜົນ ແລະ ຮຽນຮູ້ / ເອກະສານຊີ້ແຈງຂໍ້ມູນ | **ແນະນໍາໃຫ້ມີການໂຮມເອົາບັນຫາດ້ານບົດບາດຍິງ ຊາຍ ແລະ ຄວາມຫຼາກຫຼາຍເຂົ້ານໍາ:**<br><br>3.1 ວຽກງານຮັບປະກັນຄຸນນະພາບ ລວມມີຊຸດຄໍາຖາມ ເພື່ອແກ້ໄຂບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກ ຫຼາຍຮ່ວມກັບຝ່າຍບໍລິຫານຂອງ NRA, ເຮັດໃຫ້ການສ້າງ ບົດລາຍງານການລົງຢ້ຽມຢາມເພື່ອຕິດຕາມກວດກາ ກາຍເປັນວຽກງານພາກບັງຄັບ (ລວມທັງທີ່ກ່ຽວຂ້ອງກັບ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ ວຽກງານ EORE) ເພື່ອຊີ້ໃຫ້ເຫັນວ່າອົງກອນທີ່ສະໜອງວຽກງານ EORE ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍນັ້ນ ແກ້ໄຂບັນຫາ ດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນສະໜາມຄື ແນວໃດ, ແລະ ເກັບກໍາຂໍ້ມູນກ່ຽວກັບຫຼັກປະຕິບັດທີ່ດີທີ່ສຸດ ຫຼື ບົດຮຽນທີ່ຖອດຖອນໄດ້. ວຽກງານຮັບປະກັນຄຸນ ນະພາບແມ່ນໄດ້ຮັບການເຜີຍແຜ່ໃນຮູບແບບຂອງ ເອກະສານ 2 ໜ້າທີ່ສັງລວມວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ<br><br>3.2 ບົດລາຍງານຄວາມຄືບໜ້າປະຈໍາປີຂອງ NRA ແລະ ຂອບວຽກປັນໄດ້ຮັບສໍາລັບ SPF III ລວມມີພາກສ່ວນໜຶ່ງ ທີ່ເວົ້າກ່ຽວກັບ ການຈັດຕັ້ງປະຕິບັດແຜນການດໍາເນີນງານ ດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ<br>3.3 ຍຸດທະສາດການຫຼຸດຜ່ອນຄວາມສ່ຽງ ລວມມີ ງົບປະມານສໍາລັບການຈັດຕັ້ງປະຕິບັດວຽກງານພາຍໃຕ້ ແຜນການດໍາເນີນງານດ້ານບົດບາດຍິງຊາຍ ແລະ ຄວາມ ຫຼາກຫຼາຍ<br>3.4 ເອກະສານຊີ້ແຈງແຫຼ່ງທຶນທາງເລືອກ ລວມມີເສັ້ນ ງົບປະມານສໍາລັບວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ | | | |
| 2.1 | ເພີ່ມທະວີການສ້າງຂີດຄວາມ ສາມາດດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ສະໜອງໃຫ້ໂດຍ ບັນດາໜ່ວຍງານ ຈັດຕັ້ງປະຕິບັດແຜນງານຂອງ ອົງການ UNDP ແລະ ຄູ່ຮ່ວມ ງານຕ່າງໆ | ປຶ້ມຄູ່ມືການຝຶກອົບຮົມໄດ້ຮັບການ ປັບປຸງ ໂດຍອີງໃສ່ຂໍ້ແນະນໍາຈາກ ການຄົ້ນຄວ້າຄັ້ງນີ້<br><br># ຄູຝຶກ (ຕາມກຸ່ມເພດ, ກຸ່ມ ຊົນເຜົ່າ ແລະ ຄວາມພິການ) ທີ່ ສໍາເລັດການຝຶກອົບຮົມຄູຝຶກ<br># ຊຸດຝຶກອົບຮົມທີ່ໄດ້ຮັບການ ດໍາເນີນງານຫຼັງຈາກນັ້ນ | ບົດລາຍງານການປັບປຸງປຶ້ມ ຄູ່ມືຫຼັກສູດການຝຶກອົບຮົມ ເສັ້ນທຽບຖານ ແລະ ການ ສໍາຫຼວດເພື່ອຕິດຕາມຜົນ ທີ່ ຊີ້ໃຫ້ເຫັນເຖິງລະດັບຂອງ ຂີດຄວາມສາມາດ | ປີທີ 2: ໄຕ ມາດທີ 1<br><br>ພວມດໍາເນີນ ການຢູ່ | LWU ແລະ NRA | ຕິດຕາມຜົນ 2 ຄັ້ງຕໍ່ປີ ລາຍງານຜົນ ປະຈໍາປີ | $10,000 ໂດຍປະມານ |

| | | | | | | | |
|---|---|---|---|---|---|---|---|
| | | # ພະນັກງານຂອງ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao ທີ່ໄດ້ຮັບການຝຶກອົບຮົມ<br># ການນຳຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານທີ່ໄດ້ຮັບການຝຶກອົບຮົມ (ລາຍຊື່ທັງໝົດແບ່ງຕາມກຸ່ມເພດ, ກຸ່ມຊົນເຜົ່າ ແລະ ຄວາມພິການ)<br>ອັດຕາສ່ວນຮ້ອຍຂອງຜູ້ເຂົ້າຮ່ວມ ທີ່ສະແດງໃຫ້ເຫັນເຖິງຄວາມຮູ້ທີ່ເພີ່ມຂຶ້ນ ທີ່ໄດ້ຮັບຈາກແຜນງານການຝຶກອົບຮົມ | | | | | |
| 2.2 | ເສີມສ້າງຂີດຄວາມສາມາດໃຫ້ແກ່ຈຸດປະສານວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຂອງ NRA/ກອງຮ້ອຍ 58/ໂຄງການ UXO Lao | # ຜູ້ເຂົ້າຮ່ວມທີ່ສຳເລັດຫຼັກສູດຈາກ NRA/ກອງຮ້ອຍ 58/ໂຄງການ UXO Lao<br><br>ອັດຕາສ່ວນຮ້ອຍຂອງຜູ້ເຂົ້າຮ່ວມ ທີ່ສະແດງໃຫ້ເຫັນເຖິງຄວາມຮູ້ທີ່ເພີ່ມຂຶ້ນ ທີ່ໄດ້ຮັບຈາກແຜນງານການຝຶກອົບຮົມ | ບົດລາຍງານການປະເມີນຫຼັກສູດຝຶກອົບຮົມ<br>ບົດສະເໜີຈາກຜູ້ເຂົ້າຮ່ວມຫຼັກສູດຝຶກອົບຮົມດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຕໍ່ ກຸ່ມວິຊາການສຳຫຼວດຂໍ້ມູນທຽບຖານ ແລະ ຕິດຕາມການປະຕິບັດວຽກງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ຊີ້ໃຫ້ເຫັນເຖິງລະດັບຂີດຄວາມສາມາດ | ປີທີ 1: ໄຕມາດທີ 3 | NRA/ກອງຮ້ອຍ 58/ໂຄງການ UXO Lao | ບົດລາຍງານປະຈຳປີ | |
| 2.3 | ພະນັກງານຂອງ NRA/ກອງຮ້ອຍ 58/ໂຄງການ UXO Lao ເຂົ້າຮ່ວມ *ຫຼັກສູດການນຳແບບກວມລວມ* ທີ່ແນໃສ່ຝ່າຍຄຸ້ມຄອງລະດັບກາງເປັນຫຼັກໃນໄຕມາດທີ 4 ຂອງປີ 2023 | # ຜູ້ເຂົ້າຮ່ວມທີ່ສຳເລັດ *ຫຼັກສູດການນຳແບບກວມລວມ* ຂອງ GICHD ຈາກ NRA/ກອງຮ້ອຍ 58/ໂຄງການ UXO Lao | ບົດສະເໜີຈາກຜູ້ເຂົ້າຮ່ວມຫຼັກສູດຝຶກອົບຮົມຕໍ່ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ | ປີທີ 1: ໄຕມາດທີ 4 | NRA/ກອງຮ້ອຍ 58/ໂຄງການ UXO Lao | ບົດລາຍງານປະຈຳປີ | ເວລາຂອງພະນັກງານ |
| 2.4 | ເພີ່ມທະວີການສ້າງຂີດຄວາມສາມາດພາຍໃນ NRA/ກອງຮ້ອຍ 58/ໂຄງການ UXO Lao ໂດຍຜ່ານຫຼັກສູດການຮຽນຮູ້ທາງອອນລາຍ | ພະນັກງານທີ່ສາມາດເວົ້າພາສາອັງກິດໄດ້ຂອງ NRA/ກອງຮ້ອຍ 58/ໂຄງການ UXO Lao/ຫົວໜ່ວຍ ລບຕ ຂອງ ອົງການ UNDP ກວມ 60 ສ່ວນຮ້ອຍ ຈະສຳເລັດຫຼັກສູດອອນລາຍກ່ຽວກັບ *ການແນະນຳບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການເກັບກູ້ລະເບີດ* ໃນໄລຍະສິ້ນສຸດໂຄງການ | ອັບເດດຂໍ້ມູນກ່ຽວກັບພະນັກງານທີ່ສຳເລັດຫຼັກສູດຝຶກອົບຮົມ ທີ່ຖືກບັນທຶກໄວ້ໃນບົດບັນທຶກກອງປະຊຸມພາຍໃນຂອງກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ | ກຳລັງດຳເນີນການຢູ່ | NRA/ກອງຮ້ອຍ 58/ໂຄງການ UXO Lao, ກະຊວງແຮງງານ ແລະ ອົງການ UNDP | ປະຈຳໄຕມາດ | ເວລາຂອງພະນັກງານ |



| | | | | | | | |
|---|---|---|---|---|---|---|---|
| 2.5 | ຍົກສູງຄວາມເຂົ້າໃຈກ່ຽວກັບບັນຫາພື້ນຖານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ໂດຍຜ່ານການສະໜອງເອກະສານສັງລວມຂໍ້ມູນ | # ເອກະສານສັງລວມຂໍ້ມູນ 5 ໜ້າ ທີ່ອະທິບາຍບັນຫາຕົ້ນຕໍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂະແໜງການ ລບຕ ທີ່ຖືກເຜີຍແຜ່ໃຫ້ພະນັກງານທີ່ເຮັດວຽກໃນຂະແໜງການ ລບຕ ທັງໃນລະດັບຊາດ ແລະ ຂັ້ນແຂວງ<br><br># ເອກະສານສັງລວມຂໍ້ມູນ 2 ໜ້າ ທີ່ຖືກເຜີຍແຜ່ໃຫ້ພະນັກງານທັງໃນລະດັບຊາດ ແລະ ຂັ້ນແຂວງ ເພີ່ມທະວີຄວາມຮູ້ກ່ຽວກັບບັນຫາຕົ້ນຕໍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນເອກະສານສັງລວມຂໍ້ມູນ | ບົດລາຍງານປະຕິບັດການພາກສະໜາມ ແບບສອບຖາມທີ່ໃຫ້ຄະແນນທາງອອນລາຍກ່ອນ ແລະ ຫຼັງກອງປະຊຸມພະນັກງານ / ກຸ່ມວິຊາການທີ່ມີການເຜີຍແຜ່ເອກະສານສັງລວມຂໍ້ມູນ, ແລະ/ຫຼື ມີການເກັບກຳຂໍ້ມູນຈາກບົດລາຍງານການຮັບປະກັນຄຸນນະພາບ | ປີທີ 2: ໄຕມາດທີ 1 | ອົງການ UNDP ແລະ NRA | ບົດລາຍງານປະຈຳປີ | ຂຶ້ນກັບວ່າແມ່ນໃຜເປັນຜູ້ຂຽນເອກະສານສັງລວມຂໍ້ມູນຂຶ້ນມາ, ອາດແມ່ນການສ້າງເອກະສານດັ່ງກ່າວຂຶ້ນມາພາຍໃນອົງການ UNDP ເອງ ຫຼື ບໍ່? |

**3. ນະໂຍບາຍ ແລະ ການກຳນົດແຜນງານຂອງຂະແໜງການ ລບຕ**

**3.1 ນະໂຍບາຍ ແລະ ລະບຽບຂັ້ນຕອນການປະຕິບັດງານຂອງ NRA/ກອງຮ້ອຍ 58/ໂຄງການ UXO Lao**

ສິ່ງນີ້ແມ່ນສອດຄ່ອງກັບ ເປົ້າໝາຍຈຸດສຸມຍຸດທະສາດກວມຫຼາຍຂະແໜງການລຳດັບທີ 2 ພາຍໃຕ້ ຍຸດທະສາດຂອງ UNMAS 2019-2023

ໝາກຜົນທີ 1.4: ການຮັບປະກັນໃຫ້ຂີດຄວາມສາມາດໃນການຫຼຸດຜ່ອນຄວາມສ່ຽງຂອງສະຖາບັນ ແທດເໝາະກັບຄວາມຕ້ອງການອັນສະເພາະຂອງແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍ, ໃນຂະນະດຽວກັນກໍ່ຮັບຮູ້ເຖິງບົດບາດ ແລະ ຂີດຄວາມສາມາດອັນສະເພາະຂອງແມ່ຍິງ ໃນຖານະຂອງໂຕແທນຂັບເຄື່ອນຄວາມປ່ຽນແປງໃນຄົວເຮືອນ ແລະ ພາຍໃນຊຸມຊົນທີ່ໄດ້ຮັບຜົນກະທົບ

ໝາກຜົນທີ 3.2: ການສະໜັບສະໜູນການນຳໃຊ້ແນວທາງທີ່ຄຳນຶງເຖິງບົດບາດຍິງຊາຍ ແລະ ມີຄວາມກວມລວມທາງສັງຄົມ ເຂົ້າໃນການສ້າງນະໂຍບາຍແຫ່ງຊາດ, ຂອບວຽກນິຕິກຳ ແລະ ແຜນສຳຫຼັບວຽກງານເກັບກູ້ລະເບີດ

| # | ໝາກຜົນ | ຄາດໝາຍ ຫຼື ໂຕຊີ້ວັດ | ຂໍ້ມູນ | ໄລຍະເວລາ | ຝ່າຍ ຮັບຜິດຊອບ | ທົບທວນຄືນ | ງົບປະມານ |
|---|---|---|---|---|---|---|---|
| ສິ່ງນີ້ແມ່ນສອດຄ່ອງກັບ **ໝາກຜົນທີ 4 ຂອງແຜນງານຂອງ ອົງການ UNDP:** ສະພາບແວດລ້ອມດ້ານນິຕິກຳທີ່ເຂັ້ມແຂງຂຶ້ນ ເພື່ອສະໜັບສະໜູນການປະຕິບັດໄດ້ຕາມ ສົນທິສັນຍາເກືອດຫ້າມລະເບີດລູກຫວ່ານ (CCM) ແລະ ເລັ່ງລັດຂັ້ນຕອນການອານຸຍາດນຳໃຊ້ທີ່ດິນ ແລະ ບໍລິການເກັບກູ້ ລບຕ ອື່ນໆໃນຊຸມຊົນ | | 4.1 ຈຳນວນຂອງກົດໝາຍ ແລະ/ຫຼື ເອກະສານທາງດ້ານນະໂຍບາຍ (SPF III, ແຜນການກຳນົດບຸລິມະສິດ, ດຳລັດຂອງນາຍົກລັດຖະມົນຕີ) ທີ່ຖືກສ້າງຂຶ້ນ, ດັດແກ້ ແລະ/ຫຼື ສະໜັບສະໜູນໂດຍ NRA. | ກົດໝາຍ ແລະ ເອກະສານທາງດ້ານນະໂຍບາຍ; ບົດລາຍງານຄວາມຄືບໜ້າປະຈຳປີຂອງ NRA ການທົບທວນຄືນເອກະສານ | **ແນະນຳໃຫ້ໂຮມເອົາບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້ານຳ:**<br>• ບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ຈະຕ້ອງຖືກໂຮມເຂົ້າ ເປັນບັນຫາທີ່ກວມຫຼາຍຂະແໜງການຢ່າງສະໝໍ່າສະເໝີ ໃນທົ່ວທຸກຂໍ້ກົດໝາຍ ແລະ ເອກະສານທາງດ້ານນະໂຍບາຍ<br>• ບົດລາຍງານຄວາມຄືບໜ້າປະຈຳປີຂອງ NRA ແລະ ຂອບວຽກຜົນໄດ້ຮັບສຳລັບ SPF III ທີ່ລວມມີພາກສ່ວນທີ່ເວົ້າກ່ຽວກັບການຈັດຕັ້ງປະຕິບັດ ແຜນການດຳເນີນງານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ | | | |
| 3.1.1 | ບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແມ່ນໄດ້ຖືກໂຮມເຂົ້າໄວ້ໃນ ມາດຕະຖານແຫ່ງຊາດ ທີ່ສອດຄ່ອງກັບ ຍຸດທະສາດ IMAS ແລະ UNMAS 2019-2023 | ຈຳນວນຂອງຂໍ້ແນະນຳດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ທີ່ຖືກນຳສະເໜີໃນມາດຕະຖານຕ່າງໆທີ່ໄດ້ຮັບການປັບປຸງ ທີ່ສອດຄ່ອງກັບບັນຫາດ້ານບົດບາດຍິງຊາຍໃນ | ມາດຕະຖານແຫ່ງຊາດທີ່ໄດ້ຮັບການປັບປຸງ | ປີທີ 1: ໄຕມາດທີ 2 | NRA ແລະ ອົງການ UNDP ເພື່ອສ້າງຂໍ້ສະເໜີດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ | ໃນເວລາທີ່ມີການເຜີຍແຜ່ ແລະ ບັນທຶກມາດຕະຖານຕ່າງໆໄວ້ໃນບົດລາຍງານປະຈຳປີ | ເວລາຂອງພະນັກງານ |

| | | | | | | | |
|---|---|---|---|---|---|---|---|
| | | IMAS (ເບິ່ງຕື່ມ ພາກ ເອກະສານຊ້ອນທ້າຍທີ 5) | | | | | |
| 3.1.2 | ມາດຕະຖານສາກົນກ່ຽວກັບ ບົດບາດຍິງຊາຍ ແລະ ຄວາມ ຫຼາກຫຼາຍໃນຂະແໜງການ ລບຕ ແມ່ນຖືກຍຶດໝັ້ນ ແລະ ອຳນວຍຄວາມສະດວກ ໂດຍ ຜ່ານການຈັດຕັ້ງປະຕິບັດ ລະບຽບການປະຕິບັດທີ່ ຫ້າວຫັນ ແລະ ກົນໄກການ ຮ້ອງທຸກທີ່ປົດລັບ ແລະ ໂປ່ງໃສ | ລະບຽບການປະຕິບັດ ຫຼື ເອກະສານທີ່ຄ້າຍຄືກັນ ທີ່ຖືກ ສ້າງຂຶ້ນ ທີ່ກ່າວເຖິງ ມາດຕະຖານຂອງ UNMAS ທີ່ກ່ຽວຂ້ອງກັບການລ້ວງ ລະເມີດ, ການກົດຂີ່ ແລະ ຂູດ ຮີດທາງເພດ ພາຍໃຕ້ກົນໄກ ການຮ້ອງທຸກທີ່ມີຄວາມປອດ ໄພ, ປົດລັບ, ໂປ່ງໃສ ແລະ ເຂົ້າ ເຖິງໄດ້<br><br>ກົນໄກການຮ້ອງທຸກໄດ້ຖືກສ້າງ ຂຶ້ນ ພ້ອມດ້ວຍແຜນການຄຸ້ມ ຄອງອັນຊັດເຈນ<br><br>ພະນັກງານເຂົ້າໃຈລະບຽບການ ປະຕິບັດ ແລະ ພົບວ່າກົນໄກ ການຮ້ອງທຸກນັ້ນມີຄວາມ "ປອດໄພ, ປົດລັບ, ໂປ່ງໃສ, ແລະ ເຂົ້າເຖິງໄດ້" | ລະບຽບການ ປະຕິບັດ ແມ່ນຖືກ ຕິດຄັດມາພ້ອມກັບ ສັນຍາແຮງງານ<br><br>ການສຳຫຼວດພາຍ ໃນ 6 ເດືອນຫຼັງລິ ເລີ່ມກົນໄກການ ຮ້ອງທຸກ ເພື່ອໃຫ້ ເຫັນວ່າພະນັກງານ ເຂົ້າໃຈລະບຽບການ ປະຕິບັດ ແລະ ກົນ ໄກການຮ້ອງທຸກ ແລ້ວ ຫຼື ບໍ່, ພວກ ເຂົາພົບວ່າກົນໄກ ດັ່ງກ່າວນັ້ນມີຄວາມ "ປອດໄພ, ປົດລັບ, ໂປ່ງໃສ, ແລະ ເຂົ້າ ເຖິງໄດ້" ຫຼື ບໍ່ | ປີທີ 2: ໄຕ ມາດທີ 1 | ຫົວໜ່ວຍ ຊັບພະຍາກອນ ມະນຸດຂອງ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao | ບົດລາຍງານ ປະຈຳປີ | ຕົ້ນທຶນຂັ້ນຕໍ່າຂຶ້ນ ກັບຜົນງານທີ່ມີ |

| 3.2 ຂັ້ນຕອນການເກັບກູ້ລະເບີດ - ຈາກຂັ້ນຕອນການຍື່ນຄໍາຮ້ອງຂັ້ນບ້ານ, ການສໍາຫຼວດແບບບໍ່ແມ່ນວິຊາການ, ການສໍາຫຼວດທາງດ້ານວິຊາການ, ການເກັບກູ້ລະເລີດ, ການມອບຮັບເນື້ອທີ່ດິນ<br>ຂັ້ນຕອນນີ້ແມ່ນສອດຄ່ອງກັບ ຍຸດທະສາດຂອງ UNMAS 2019-2023 ເປົ້າໝາຍຈຸດສຸມຍຸດທະສາດກວມຫຼາຍຂະແໜງການລາດັບທີ 2<br>ໝາກຜົນທີ 1.1: ການຮັບປະກັນການນໍາໃຊ້ແນວທາງທີ່ຄໍານຶງເຖິງບົດບາດຍິງຊາຍ ແລະ ອາຍຸເຂົາໃນການສໍາຫຼວດ, ການກໍານົດບຸລິມະສິດ ແລະ ລະບຽບຂັ້ນຕອນການມອບຮັບເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວ | | | | | | | |
|---|---|---|---|---|---|---|---|
| **#** | **ໝາກຜົນ** | **ຄາດໝາຍ ຫຼື ໂຕຊີ້ວັດ** | **ຂໍ້ມູນ** | **ໄລຍະເວລາ** | **ຝ່າຍຮັບຜິດຊອບ** | **ທົບທວນຄືນ** | **ງົບປະມານ** |
| ພາກສ່ວນນີ້ແມ່ນສອດຄ່ອງກັບ **ໝາກຜົນທີ 1 ຂອງແຜນງານ UNDP**<br>ການສຳຫຼວດ ແລະ ການເກັບກູ້ ລບຕ/ລະເບີດຝັງດິນ ທີ່ດຳເນີນຕາມ ບຸລິມະສິດ ຈະຊ່ວຍໃຫ້ສາມາດອານຸ ຍາດນຳໃຊ້ເນື້ອທີ່ດິນທີ່ເປັນ ບຸລິມະສິດສູງໄດ້ | | ໂຕຊີ້ວັດທີ 1.1: ແຜນການ ຈັດລຽງບຸລິມະສິດແຫ່ງຊາດ ແມ່ນໄດ້ຖືກໂຮມເຂົ້າໃນ ຍຸດ ທະສາດແຫ່ງຊາດ ຢ່າງຄົບ ຖ້ວນ<br>ໂຕຊີວັດທີ 1.2: ເນື້ອທີ່ດິນ ກ) ທີ່ໄດ້ຮັບການສຳຫຼວດ ແລະ ຂ) ໄດ້ຮັບອານຸຍາດນຳໃຊ້ (ໂດຍທີມງານທີ່ໄດ້ຮັບເງິນ ທຶນຈາກ ອົງການ UNDP)<br>ໂຕຊີ້ວັດທີ 1.3: ຄວາມພ້ອມ ຂອງຊ່ອງທາງໃນການໂອ້ລົມ ກັນກ່ຽວກັບແນວຄິດໃໝ່ | 1.1 ການທົບທວນຄືນແຜນ ແລະ ເອກະສານຍຸດທະສາດ ແຫ່ງຊາດ<br>1.2 ການສຳຫຼວດ IMSMA<br>1.3 ເອກະສານໂຄງການ ຕິດຕາມກວດກາ, ປະເມີນຜົນ ແລະ ຮຽນຮູ້<br>ການຕິດຕາມກວດກາຂັ້ນຕອນ | | **ແນະນຳໃຫ້ໂຮມເອົາບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້ານຳ:**<br>1.1 ເບິ່ງຕື່ມ 3.2.1 ຂ້າງລຸ່ມ<br>1.2 ຮັບປະກັນໃຫ້ມີການເກັບກຳຂໍ້ມູນແບບແບ່ງກຸ່ມສຳຫຼວດ ຢ່າງຮອບດ້ານ ແລະ ເປັນລະບົບ ໂດຍສອດຄ່ອງກັບ NPAGE 2021-2025 (ເບິ່ງຕື່ມ 3.2.2 ຂ້າງລຸ່ມ)<br>1.3 ການລວມເອົາບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້າ ໃນຂໍ້ລິເລີ່ມຕ່າງໆ, ເຊັ່ນ: ແນວຄິດການຈັດມະຫາກຳບານເຕະ ຮ່ວມມືຫຼາຍຂະແໜງການພາຍໃຕ້ວຽກງານ EORE ໃຫ້ແກ່ ບັນດາເດັກນ້ອຍຊາຍ | | |



| | | | | | | | |
|---|---|---|---|---|---|---|---|
| 3.2.1 | ແຜນການກຳນົດ ບຸລິມະສິດແຫ່ງຊາດ ໄດ້ ໂຮມເອົາຂໍ້ພິຈາລະນາ ດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ທີ່ ກຸ່ມທີ່ມີຄວາມສ່ຽງທີ່ສຸດ, ເຊັ່ນ: ຄົນທຸກ, ແມ່ຍິງ, ຄົນພິການ, ກຸ່ມຊົນເປົ່າ ແລະ ຄອບຄົວຂອງພວກ ເຂົາຕ້ອງປະເຊີນ ເຂົ້ານຳ | ການນຳສະເໜີຂໍ້ພິຈາລະນາ ດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້າໃນ ແຜນການກຳນົດບຸລິມະສິດ ແຫ່ງຊາດ (ຂໍ້ພິຈາລະນາທີ່ກ່ຽວຂ້ອງ ສຳລັບກຸ່ມຕ່າງໆ, ລວມທັງ ແຮງຈູງໃຈ)<br><br>ຈຳນວນຄັ້ງຂອງການປຶກສາ ຫາລື ກັບກຸ່ມທີ່ລະບຸໂຕຕົນທີ່ ກ່ຽວຂ້ອງ ເພື່ອເກັບກຳຂໍ້ມູນ ກ່ຽວກັບຂໍ້ພິຈາລະນາດ້ານ ບົດບາດຍິງຊາຍ ແລະ ຄວາມ ຫຼາກຫຼາຍຕົ້ນຕໍທີ່ພວກເຂົາ ຕ້ອງປະເຊີນ | ແຜນການກຳນົດບຸລິມະສິດທີ່ ໄດ້ຮັບການດັດແກ້ | ປີທີ 1: ໄຕມາດ ທີ 2 | ອົງການ UNDP ແລະ NRA | ໃນເວລາ ເຜີຍແຜ່ ແຜນການ | ເວລາຂອງ ພະນັກງານ |
| 3.2.2 | ເພີ່ມທະວີການເກັບກຳຂໍ້ ມູນແບບແບ່ງກຸ່ມສຳ ຫຼວດ ແລະ ດັດປັບໃຫ້ ເປັນເອກະພາບກັນໃນທົ່ວ ທັງລະບົບຂອງລັດ ໃນ ທົ່ວທຸກວຽກງານດ້ານ ລບຕ | ຈຳນວນຂອງໝວດໝູ່ຂໍ້ມູນ ພາຍໃຕ້ຖານຂໍ້ມູນ IMSMA ຕາມກຸ່ມເພດ, ອາຍຸ, ຄວາມ ພິການ, ກຸ່ມຊົນເຜົ່າ, ທີ່ພັກ ອາໄສ (ບ້ານ) ແລະ ສະຖານະ ທາງເສດຖະກິດ-ສັງຄົມ (ຕາມ NPAGE 2021-2025) | ການສຳຫຼວດ ແລະ ຖານຂໍ້ມູນ ຂອງ IMSMA | ກຳລັງດຳເນີນ ການຢູ່ | NRA ຮ່ວມກັບໜ່ ວຍງານອື່ນໆຂອງລັດ | ບົດລາຍງານ ປະຈຳປີຂອງ ຂະແໜ ງການ ລບຕ | ບໍ່ມີຂໍ້ມູນ |
| 3.2.3 | ກອງປະຊຸມປຶກສາຫາລື ຂັ້ນຊຸມຊົນ ແມ່ນຖືກ ອອກແບບມາເພື່ອ ຮັບປະກັນ ໃຫ້ປະຊາຊົນ ທ້ອງຖິ່ນທີ່ມີຄວາມຫຼາກ ຫຼາຍ ໄດ້ເຂົ້າມາມີສ່ວນ ຮ່ວມເພີ່ມຂຶ້ນ | ລະບຽບຂັ້ນຕອນການວາງ ແຜນ ແມ່ນໄດ້ຖືກເພີ່ມເຂົ້າໃນ ກອງປະຊຸມປຶກສາຫາລືຂັ້ນ ຊຸມຊົນ ເພື່ອເກັບກຳເອົາຂໍ້ມູນ ດ້ານປະຊາກອນໃນເຂດບ້ານ ນັ້ນ ແລະ ເພື່ອສື່ສານກັບການ ນຳຂັ້ນບ້ານ ເພື່ອສົ່ງເສີມໃຫ້ມີ ການລວມເອົາກຸ່ມຊົນເຜົ່າ ໃນ ອັດຕາສ່ວນທີ່ເໝາະສົມເຂົ້າ ໃນກຸ່ມປຶກສາຫາລື.<br>ຈຳນວນຂອງແມ່ຍິງ, ກຸ່ມ ຊົນເຜົ່າ ແລະ ຄົນພິການທີ່ ລົງທະບຽນເຂົ້າຮ່ວມກອງ ປະຊຸມປຶກສາຫາລືຂັ້ນຊຸມຊົນ ໃນທົ່ວທັງຂັ້ນຕອນການສຳ ຫຼວດວຽກງານ ລບຕ, ການ ກຳນົດບຸລິມະສິດ ແລະ ລະບຽບຂັ້ນຕອນການເກັບກູ້ | ເອກະສານວຽກງານການ ຕິດຕາມກວດກາ, ການປະເມີນ ຜົນ ແລະ ການຮຽນຮູ້ໂຄງການ ບົດລາຍງານປະຕິບັດການ ຮັບປະກັນຄຸນນະພາບ ບົດລາຍງານການຕິດຕາມ ກວດກາຂັ້ນຕອນ ບົດບັນທຶກກອງປະຊຸມຂອງ ກຸ່ມວິຊາການດ້ານບົດບາດຍິງ ຊາຍ ແລະ ຄວາມຫຼາກຫຼາຍ | ກຳລັງດຳເນີນ ການຢູ່ | NRA, ກອງຮ້ອຍ 58, ໂຄງການ UXO Lao | ຈະຕ້ອງ ຖືກລວມເຂົ້າ ໄວ້ໃນບົດ ລາຍງານ ປະຈຳປີຂອງ ຂະແໜ ງການ ລບຕ | ເວລາຂອງ ພະນັກງານ |

| | | | | | | | |
|---|---|---|---|---|---|---|---|
| | | ເນື້ອທີ່ດິນ ໂດຍສອດຄ່ອງກັບຂໍ້ມູນດ້ານປະຊາກອນຂ້າງເທິງ<br>ຫຼັກຖານທີ່ຊີ້ໃຫ້ເຫັນວ່າການປະກາດຂ່າວຜ່ານໂທລະໂຄ່ງກ່ຽວກັບກອງປະຊຸມປຶກສາຫາລືຂັ້ນຊຸມຊົນນັ້ນ ຖືກເສີມຂະຫຍາຍໃຫ້ກວມເອົາພາສາຊົນເຜົ່ານໍາ. ຂໍ້ມູນນີ້ອາດຖືກບັນທຶກເຂົ້າໄວ້ໃນບົດລາຍງານລວມທັງຊີ້ໃຫ້ເຫັນເຖິງພາສາ ແລະ ຍຸດທະສາດທີ່ນໍາໃຊ້ໃນການເຂົ້າເຖິງພື້ນທີ່ໃນເຂດຫ່າງໄກສອກຫຼີກ | | | | | |

**3.3 ວຽກງານ EORE**

ວຽກງານນີ້ແມ່ນສອດຄ່ອງກັບ ຍູດຂອງ UNMAS 2019-2023 ເປົ້າໝາຍຈຸດສຸມຍຸດທະສາດກວມຫຼາຍຂະແໜງການລໍາດັບທີ 2

ໝາກຜົນທີ 1.2: ຮັບປະກັນໃຫ້ແຜນງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ແນໃສ່ພຶດຕິກໍາອັນສະເພາະຂອງແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍທີ່ມີຄວາມສ່ຽງ; ແລະ

ໝາກຜົນທີ 1.3: ອໍານວຍຄວາມສະດວກໃຫ້ແກ່ການໂຮມເອົາຂໍ້ພິຈາລະນາດ້ານບົດບາດຍິງຊາຍ, ອາຍຸ, ສັງຄົມ, ເສດຖະກິດ, ວັດທະນະທໍາ ແລະ ສາສະໜາເຂົ້າໃນແຜນງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ

| # | ໝາກຜົນ | ຄາດໝາຍ ຫຼື ໂຕຊີ້ວັດ | ຂໍ້ມູນ | ໄລຍະເວລາ | ຝ່າຍຮັບຜິດຊອບ | ທົບທວນຄືນ | ງົບປະມານ |
|---|---|---|---|---|---|---|---|
| ວຽກງານນີ້ແມ່ນສອດຄ່ອງກັບ **ໝາກຜົນທີ 2 ຂອງແຜນງານ UNDP:** ຫຼຸດຜ່ອນການເຮັດພຶດຕິກໍາສ່ຽງຂອງກຸ່ມສ່ຽງ | | ໂຕຊີ້ວັດທີ 2.1: ຄວາມພ້ອມຂອງມາດຕະຖານແຫ່ງຊາດດ້ານວຽກງານ EORE ທີ່ໄດ້ຮັບການປັບປຸງ | ການທົບທວນຄືນເອກະສານມາດຕະຖານ EORE | **ແນະນໍາໃຫ້ໂຮມເອົາບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້ານໍາ:**<br>ຂໍ້ແນະນໍາສໍາລັບການທົບທວນຄືນວຽກງານ EORE ທີ່ກໍາລັງດໍາເນີນງານໃນປັດຈຸບັນໂດຍແຜນງານ UNDP ໄດ້ສັງລວມເອົາຂໍ້ແນະນໍາ 3A-3E ເຂົ້ານໍາ ແລະ ວຽກງານຕ່າງໆຕາມທີ່ລະບຸໄວ້ໃນ ແຜນການດໍາເນີນງານດ້ານບົດບາດຍິງຊາຍໃນປີ 2008 ສໍາລັບຂະແໜງການ ລບຕ (ພາກເອກະສານຊ້ອນທ້າຍທີ 3)ເບິ່ງຕົ່ມ 3.3.1 ຂ້າງລຸ່ມ | | | |
| | | ໂຕຊີ້ວັດທີ 2.2: ເພີ່ມທະວີອັດຕາສ່ວນຂອງບຸກຄົນ (ແບ່ງຕາມກຸ່ມອາຍຸ, ເພດ, ກຸ່ມຊົນເຜົ່າ, ແລະ ພູມສັນຖານ) ຈາກກຸ່ມສ່ຽງທີ່ເປັນເປົ້າໝາຍທີ່ມີການປັບປ່ຽນ ຄວາມຮູ້, ທັດສະນະຄະຕິ ແລະ ຫຼັກປະພຶດປະຕິບັດ (KAP) | ບົດລາຍງານການສໍາຫຼວດ KAP ການສໍາຫຼວດ KAP | | | | |
| 3.3.1 | ການທົບທວນຄືນມາດຕະຖານວຽກງານ EORE ໄດ້ໂຮມເອົາປັນໄດ້ຮັບດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແລະ ຂໍ້ແນະນໍາຕ່າງໆສໍາລັບການຄົ້ນຄວ້າຄັ້ງນີ້ເຂົ້ານໍາ | ຈໍານວນຂອງຂໍ້ແນະນໍາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນມາດຕະຖານວຽກງານ EORE ທີ່ໄດ້ຮັບການປັບປຸງ<br>ເນື້ອໃນຂອງຂໍ້ແນະນໍາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນມາດຕະຖານວຽກງານ EORE ທີ່ໄດ້ຮັບການປັບປຸງ, ໂດຍສະເພາະທີ່ເນັ້ນໜັກໃສ່ພາສາຊົນເຜົ່າ ແລະ ຄວາມຮູ້ໜັງສື | ບົດລານງານມາດຕະຖານວຽກງານ EORE ການສໍາຫຼວດ KAP<br>ບົດລາຍງານການສໍາຫຼວດ KAP | ປີທີ 1: ໄຕມາດທີ 2 | ອົງການ UNDP ແລະ NRA | ໃນເວລາທີ່ມີການເຜີຍແຜ່ ແລະ ບັນທຶກມາດຕະຖານຕ່າງໆໄວ້ໃນບົດລາຍງານປະຈໍາປີ | ເວລາຂອງພະນັກງານ |



| | | | | | | | |
|---|---|---|---|---|---|---|---|
| 3.3.2 | ແຜນງານ EORE ທີ່ຖືກອອກແບບມາໂດຍສະເພາະ ຈະຕ້ອງຖືກສ້າງຂຶ້ນໃຫ້ແກ່ບັນດາກຸ່ມສ່ຽງທີ່ເປັນເປົ້າໝາຍ | • ແຜນງານ EORE ທີ່ຖືກອອກແບບໃຫ້ແກ່ເດັກຊາຍ/ໄວໜຸ່ມຊາຍທີ່ມີຄວາມສ່ຽງ ແລະ ຢູ່ນອກລະບົບການສຶກສາທາງການ<br>• ມະຫາກໍາບານເຕະສໍາລັບເດັກຊາຍທີ່ຖືກຈັດຂຶ້ນເປັນໜຶ່ງໃນກິດຈະກໍາຂອງ EORE<br>• ແຜນງານທີ່ຖືກອອກແບບມາສະເພາະອື່ນໆ ໃຫ້ແກ່ບັນດາກຸ່ມສ່ຽງທີ່ຖືກລະບຸໄວ້ໂດຍ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ<br>• ຈໍານວນຂອງຊຸດຝຶກອົບຮົມ EORE ທີ່ຖືກອອກແບບມາສະເພາະ ແລະ ຈັດຂຶ້ນໃຫ້ແກ່ແຕ່ລະກຸ່ມທີ່ມີການລະບຸໂຕຕົນຕ່າງໆ | ຍຸດທະສາດວຽກງານ EORE ສໍາລັບເດັກຊາຍ/ໄວໜຸ່ມຊາຍທີ່ມີຄວາມສ່ຽງ<br>ຍຸດທະສາດວຽກງານ EORE ສໍາລັບກຸ່ມສ່ຽງອື່ນໆທີ່ເປັນເປົ້າໝາຍ<br>ບົດບັນທຶກກອງປະຊຸມຂອງ ກຸ່ມວິຊາການດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ | • ປີທີ 2. ໄຕມາດທີ 3-4<br>• ປີທີ 3. ໄຕມາດທີ 1<br>• ປີທີ 4 | ນີ້ອາດແມ່ນກິດຈະກໍາໜຶ່ງຂອງຜູ້ໃຫ້ທຶນຮ່ວມ ແລະ ຄູ່ຮ່ວມງານແຫ່ງຊາດ | ບົດລາຍງານປະຈໍາປີ | • $20,000?<br>• $10,000?<br>ຢັ້ງຢືນໃໝ່ໃນພາຍຫຼັງ |

**3.4 ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ**

ພາກສ່ວນນີ້ແມ່ນສອດຄ່ອງກັບ ຍຸດທະສາດຂອງ UNMAS 2019-2023 ເປົ້າໝາຍຍຸດທະສາດກວມຫຼາຍຂະແໜງການລໍາດັບທີ 2

ໝາກຜົນທີ 2.1: ການຮັບປະກັນໃຫ້ການຊ່ວຍເຫຼືອນັ້ນຕອບສະໜອງໄດ້ຕໍ່ບົດບາດຍິງຊາຍ, ແກ້ໄຂຄວາມຕ້ອງການ ແລະ ຂໍ້ກໍານົດອັນສະເພາະອັນໃຫ້ແກ່ກຸ່ມຍິງຊາຍ ແລະ ກຸ່ມອາຍຸ, ແລະ ຕ້ອງກວມລວມເອົາກຸ່ມປະຊາກອນທີ່ໄດ້ຮັບຜົນກະທົບທັງໝົດ

ໝາກຜົນທີ 2.2: ສະໜັບສະໜູນແນວທາງການເກັບກໍາ, ການວິເຄາະ ແລະ ການຕິດຕາມກວດກາຂໍ້ມູນແບບມີສ່ວນຮ່ວມ, ທີ່ມີການປຶກສາຫາລືກັນ ແລະ ແບ່ງກຸ່ມສໍາຫຼວດຕາມອາຍຸ ແລະ ເພດ ເພື່ອສະໜັບສະໜູນຍຸດທະສາດການຊ່ວຍເຫຼືອຫຼາຍຂະແໜງການ

ໝາກຜົນທີ 2.3: ການລົບນະລົງ ແລະ ການສະໜັບສະໜູນຄວາມສະເໝີພາບຍິງຊາຍໃນລະຫວ່າງກຸ່ມແຮງງານໃນວຽກງານສຸຂະພາບ, ການຟື້ນຟູ ແລະ ການສະໜັບສະໜູນທາງສັງຄົມ ເພື່ອຮັບປະກັນໃຫ້ຄວາມຕ້ອງການອັນສະເພາະຂອງແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍໄດ້ຮັບການແກ້ໄຂ; ແລະ

ໝາກຜົນທີ 2.4: ຄໍານຶງເຖິງຫຼັກການຂອງ 'ການບໍ່ສ້າງຄວາມອັນຕະລາຍ' ເພື່ອບໍ່ໃຫ້ການຊ່ວຍເຫຼືອທີ່ສົ່ງເສີມຄວາມກວມລວມ ແລະ ການຍົກສູງບົດບາດນັ້ນ ນໍາພາຜູ້ປະສົບເຄາະຮ້າຍໄປສູ່ຄວາມສ່ຽງໃນການປະເຊີນກັບຄວາມຮຸນແຮງບົນພື້ນຖານຂອງບົດບາດຍິງຊາຍ

| # | ໝາກຜົນ | ຄາດໝາຍ ຫຼື ໂຕຊີ້ວັດ | ຂໍ້ມູນ | ໄລຍະເວລາ | ຝ່າຍຮັບຜິດຊອບ | ທົບທວນຄືນ | ງົບປະມານ |
|---|---|---|---|---|---|---|---|
| 3.4.1 | ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແມ່ນຕອບສະໜອງໄດ້ຕໍ່ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ທີ່ເປັນການຕໍ່ຍອດມາຈາກການເກັບກໍາຂໍ້ມູນແບບແບ່ງກຸ່ມສໍາຫຼວດຢ່າງສະໝໍ່າສະເໝີ | • ຂໍ້ມູນການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແມ່ນຖືກແບ່ງອອກເປັນກຸ່ມເພດ, ອາຍຸ, ຄວາມພິການ, ກຸ່ມົນເຜົ່າ, ທີ່ພັກອາໄສ (ບ້ານ) ແລະ ສະຖານະທາງເສດຖະກິດ-ສັງຄົມ (ຕາມທີ່ລະບຸໄວ້ໃນ NPAGE 2021-2025) ແລະ ສອດຄ່ອງກັບທົ່ວທັງຂະແໜງການ ລວມທັງກັບ ລະບົບການຕິດຕາມຜູ້ລອດຊີວິດ<br>• ວຽກງານ EORE ລວມມີຂໍ້ມູນຂ່າວສານກ່ຽວກັບບໍລິການ | • ລະບົບການຕິດຕາມຜູ້ລອດຊີວິດ<br>• ເອກະສານແຜນງານ EORE<br>• ບົດບັນທຶກສາຍດ່ວນ<br>• ບົດລາຍງານດ້ານຈິດຕະສັງຄົມຂອງ COPE | ກໍາລັງດໍາເນີນການຢູ່ | ກະຊວງແຮງງານ, NRA, COPE | ບົດລາຍງານປະຈໍາປີ | ບໍ່ມີຂໍ້ມູນ |

| | | | | | | | |
|---|---|---|---|---|---|---|---|
| | | ຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຂອງ NRA ແລະ ຂອງທ້ອງຖິ່ນ ລວມທັງສາຍດ່ວນທີ່ມີບໍລິການແປພາສາມາພ້ອມ<br>• ຍົກສູງການເຂົ້າເຖິງໃຫ້ແກ່ຜູ້ຊາຍ ແລະ ເດັກຊາຍຕໍ່ບໍລິການໃຫ້ຄໍາປຶກສາດ້ານຈິດຕະສັງຄົມ | | | | | |

**4. ນະໂຍບາຍ ແລະ ຫຼັກປະຕິບັດດ້ານວຽກງານຊັບພະຍາກອນມະນຸດ**

ພາກສ່ວນນີ້ແມ່ນສອດຄ່ອງກັບ ຍຸດທະສາດຂອງ UNMAS 2019-2023

ໝາກຜົນທີ 3.3: ການສະໜັບສະໜູນຄວາມສະເໝີພາບຍິງຊາຍ ແລະ ການບໍ່ຈໍາແນກດ້ານໂອກາດການຈ້າງງານ ແລະ ການຕັດສິນໃຈໃນຂັ້ນຕອນການກໍານົດແຜນງານເກັບກູ້ລະເບີດ

| # | ໝາກຜົນ | ຄາດໝາຍ ຫຼື ໂຕຊີ້ວັດ | ຂໍ້ມູນ | ໄລຍະເວລາ | ຝ່າຍຮັບຜິດຊອບ | ທົບທວນຄືນ | ງົບປະມານ |
|---|---|---|---|---|---|---|---|
| 4.1 | ເພີ່ມທະວີຄວາມຫຼາກຫຼາຍໃຫ້ແກ່ພະນັກງານ ພາຍໃນອົງກອນຈອງຄູ່ຮ່ວມຈັດຕັ້ງປະຕິບັດ ເພື່ອສະທ້ອນ ແລະ ຮັບໃຊ້ກຸ່ມປະຊາກອນທ້ອງຖິ່ນ | • ທົບທວນຄືນນະໂຍບາຍບຸກຄະລາກອນດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ແລະ ຫຼັກປະຕິບັດໃນການຈ້າງງານໃຫ້ແກ່ NRA, ກອງຮ້ອຍ 58 ແລະ ໂຄງການ UXO Lao<br>• ແນໃສ່ເພີ່ມທະວີຈໍານວນຂອງແມ່ຍິງໃນທີມປະສົມຂຶ້ນເປັນ 30-35 ສ່ວນຮ້ອຍພາຍໃນປີ 2025<br>• ແນໃສ່ຮັບປະກັນການຈ້າງງານກຸ່ມຊົນເຜົ່າໃຫ້ໄດ້ຢ່າງໜ້ອຍ 10 ສ່ວນຮ້ອຍ ແລະ ຄົນພິການ 5 ສ່ວນຮ້ອຍ | • ບົດລາຍງານການທົບທວນຄືນນະໂຍບາຍບຸກຄະລາກອນ<br>• ຂໍ້ມູນດ້ານຊັບພະຍາກອນມະນຸດ<br>• ຂໍ້ມູນດ້ານຊັບພະຍາກອນມະນຸດ | • ປີທີ 2: ໄຕມາດທີ 1<br>• ກໍາລັງດໍາເນີນການຢູ່<br>• ກໍາລັງດໍາເນີນການຢູ່ | NRA/ກອງຮ້ອຍ 58/ໂຄງການ UXO Lao | ບົດລາຍງານປະຈໍາປີ | ບໍ່ມີຂໍ້ມູນກ່ຽວກັບວຽກງານການທົບທວນຄືນນະໂຍບາຍໃນປັດຈຸບັນ |
| 4.2 | ບັນຫາທ້າທາຍ, ບັນຫາທີ່ກ່ຽວຂ້ອງກັບຄວາມເຂົ້າໃຈ ແລະ ຫຼັກປະຕິບັດຂອງພະນັກງານເກັບກູ້ ລບຕ ຍິງພາກສະໜາມ ແມ່ນໄດ້ຮັບການແກ້ໄຂບົນພື້ນຖານຂອງຂໍ້ມູນຫຼັກຖານອັນເຂັ້ມແຂງ | ບົດລາຍງານການຄົ້ນຄວ້າກ່ຽວກັບຄວາມເຂົ້າໃຈ, ບັນຫາທ້າທາຍ ແລະ ຫຼັກປະຕິບັດຂອງພະນັກງານເກັບກູ້ ລບຕ ຍິງພາກສະໜາມ | ບົດລາຍງານການຄົ້ນຄວ້າ | ປີທີ 3 | ອົງການ UNDP/LWU/NRA ແລະ ໜ່ວຍງານອື່ນໆໃນຂະແໜງການ | ບົດລາຍງານປະຈໍາປີສໍາລັບປີທີ 3 | $30,000? (ແນະນໍາໃຫ້ລະດົມແຫຼ່ງທຶນຈາກຜູ້ໃຫ້ທຶນຫຼາຍຝ່າຍ) |
| 4.3 | ແມ່ຍິງໃນຂະແໜງການ ລບຕ ມີຈໍານວນທີ່ສູງຂຶ້ນ ແລະ ມີບົດບາດຂັ້ນອາວຸໂສຫຼາຍຂຶ້ນ | ຄາດໝາຍ: ແມ່ຍິງກວມ 25-30 ສ່ວນຮ້ອຍໃນຕາແໜ່ງວຽກຂັ້ນຄຸ້ມຄອງພາຍໃນປີ 2025 ໂດຍສອດຄ່ອງກັບ NPAGE 2021-2025<br><br>ຈໍານວນຂອງແມ່ຍິງທີ່ໄດ້ຮັບຄໍາປຶກສາກ່ຽວກັບການເຂົ້າເຖິງການຈ້າງງານ<br>ຈໍານວນຂອງແມ່ຍິງໃນປັດຈຸບັນທີ່ໄດ້ຮັບຄໍາປຶກສາ ແລະ ຖືກຈ້າງງານເຂົ້າໃນຕໍາແໜ່ງວຽກຂັ້ນອາວຸໂສ<br>ຈໍານວນຂອງແມ່ຍິງທີ່ຖືກແຕ່ງຕັ້ງເຂົ້າໃນຕໍາແໜ່ງວຽກຂັ້ນອາວຸໂສຕໍ່ປີ | ບົດລາຍງານຂອງພະນັກງານຝ່າຍຊັບພະຍາກອນມະນຸດ | ປີທີ 2: ໄຕມາດທີ 1 | NRA/ກອງຮ້ອຍ 58/ໂຄງການ UXO Lao | ບົດລາຍງານປະຈໍາປີ | ໃຊ້ພຽງເວລາຂອງພະນັກງານເທົ່ານັ້ນ ໃນກໍລະນີທີ່ພະນັກງານໃນປັດຈຸບັນແມ່ນຜູ້ໃຫ້ຄໍາປຶກສາເອງ |



# 10 ຂໍ້ມູນອ້າງອີງ



## ຂໍ້ມູນອ້າງອີງ


Bini, A. C. 2013. ບົດລາຍງານກ່ຽວກັບການປະເມີນຜົນຂອງ GMAP ຕໍ່ວຽກງານການເຊື່ອມສານບົດບາດຍິງຊາຍຂອງ NPA ໃນ ສປປ ລາວ. ເຊີແນວ: GMAP.

Bini, A. C., ແລະ A. Jones. 2014. "ຜົນກະທົບຂອງທີມປະສົມຕໍ່ຂັ້ນຕອນການອານຸຍາດນຳໃຊ້ທີ່ດິນ." ບົດຄວາມວ່າດ້ວຍສິ່ງເສດເຫຼືອຈາກລະເບີດເມື່ອປາງສົງຄາມ ແລະ ການເກັບກູ້ລະເບີດ 1(1).

Biscaglia, L., R. Sophal, K. Sochenda et al. 2020. "ການເສີມສ້າງຂີດຄວາມສາມາດແຫ່ງຊາດແບບຍືນຍົງ ເພື່ອເຊື່ອມສານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້າໃນວຽກງານເກັບກູ້ລະເບີດ." ບົດຄວາມວ່າດ້ວຍອາວຸດທຳລາຍລ້າງແບບທຳມະດາ 24(2).

ອົງການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກວຽກງານເກັບກູ້ລະເບີດແຫ່ງກຳປູເຈຍ. 2018. ການເຊື່ອມສານບົດບາດຍິງຊາຍເຂົ້າໃນແຜນການເກັບກູ້ລະເບີດ 2018-2022. ພະນົມເປນ: CMAA.

ອົງການແຄ. 2020. ການວິເຄາະບົດບາດຍິງຊາຍແບບຮີບດ່ວນຂອງ ອົງການແຄ ໃນໄລຍະເກີດການແຜ່ລະບາດຂອງ ພະຍາດໂຄວິດ-19 ໃນ ສປປ ລາວ. ນະຄອນຫຼວງວຽງຈັນ: ອົງການແຄປະຈຳ ສປປ ລາວ.

Downs, C., ແລະ A. Fox. 2016. "ປະສິດທິພາບ ແລະ ຜົນກະທົບຂອງການສະໜັບສະໜຸນດ້ານວຽກງານເກັບກູ້ລະເບີດຂອງ ອົງການ UNDP: ບົດຮຽນທີ່ຖອດຖອນໄດ້." ບົດຄວາມວ່າດ້ວຍອາວຸດທຳລາຍລ້າງແບບທຳມະດາ 20(3).

Duprat, A.-S., ແລະ L. Pecak. 2014. "ຄວາມເປັນຊາຍ: ອຸປະສັກທີ່ເບິ່ງບໍ່ເຫັນໃນວຽກງານຊ່ວຍເຫຼືອຜູ້ລອດຊີວິດ." ບົດຄວາມວ່າດ້ວຍສິ່ງເສດເຫຼືອຈາກລະເບີດເມື່ອປາງສົງຄາມ ແລະ ການເກັບກູ້ລະເບີດ 18(1): 19.

Durham, J. 2016. ການປະເມີນຜົນຂອງການສະໜັບສະໜຸນດ້ານວຽກງານເກັບກູ້ລະເບີດຂອງ ອົງການ UNDP ໃນ ສປປ ລາວ, 2013-2016. ນະຄອນຫຼວງວຽງຈັນ: ອົງການ UNDP.

ສະຖາບັນ Ekvilib. n.d. ປື້ມຄູ່ມືສຳລັບຄູຝຶກ: ຄວາມສະເໝີພາບຍິງຊາຍ ແລະ ການເຊື່ອມສານບົດບາດຍິງຊາຍ. www.ekvilib.org/wp-content/uploads/2017/06/02_Gender_Analysis.pdf

ຄະນະບໍລິຫານງານສູງສຸດຂອງ ອົງການ ສປຊ ເພື່ອການພັດທະນາ, ອົງການ ສປຊ ກອງທຶນປະຊາກອນ ແລະ ອົງການ ສປຊ ເພື່ອການບໍລິການໂຄງການ. 2021. ຮ່າງເອກະສານແຜນງານການຮ່ວມມືສຳລັບ ສປປ ລາວ (2022-2026). ນິວຢອກ.

GICHD (ສູນເກັບກູ້ລະເບີດເພື່ອມະນຸດຊະທຳສາກົນແຫ່ງເຊີແນວ). 2014a. ບົດບາດຍິງຊາຍ ແລະ ການກຳນົດບຸລິມະສິດໃນວຽກງານເກັບກູ້ລະເບີດ: ບົດສັງລວມບັນຫາຂອງ GICHD 5. ເຊີແນວ: GICHD.

———. 2014b. ການວາງແຜນຍຸດທະສາດໃນແຜນງານການເກັບກູ້ລະເບີດຂອງ ສປປ ລາວ. ເຊີແນວ: GICHD.

———. 2021. ນະໂຍບາຍສົ່ງເສີມຄວາມສະເໝີພາບຍິງຊາຍ ແລະ ຄວາມກວມລວມ. ເຊີແນວ: GICHD.

———. 2022. ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ (CCM). ເຊີແນວ: GICHD.

GICHD (ສູນເກັບກູ້ລະເບີດເພື່ອມະນຸດຊະທຳສາກົນແຫ່ງເຊີແນວ) ແລະ NRA (ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງຢູ່ ສປປ ລາວ). 2017. ນະໂຍບາຍ, ລະບຽບຂັ້ນຕອນ ແລະ ຫຼັກປະຕິບັດໃນການກຳນົດບຸລິມະສິດທີ່ກ່ຽວຂ້ອງກັບວຽກງານເກັບກູ້ ລບຕ ໃນ ສປປ ລາວ. ເຊີແນວ: GICHD.

GICHD (ສູນເກັບກູ້ລະເບີດເພື່ອມະນຸດຊະທຳສາກົນແຫ່ງເຊີແນວ) ແລະ ອົງການ UNDP (ອົງການ ສປຊ ເພື່ອການພັດທະນາ). 2017. ພວກເຮົາພ້ອມກັນກ້າວໄປ: ການເກັບກູ້ລະເບີດ ແລະ ເປົ້າໝາຍການພັດທະນາແບບຍືນຍົງ. ເຊີແນວ: GICHD.

GMAP (ແຜນງານດ້ານບົດບາດຍິງຊາຍ ແລະ ການເກັບກູ້ລະເບີດ). 2013. ຂັ້ນຕອນການຮັບເອົາພະນັກງານ ແລະ ການຝຶກອົບຮົມໃນວຽກງານເກັບກູ້ລະເບີດທີ່ຄຳນຶງເຖິງບົດບາດຍິງຊາຍ - ຂໍ້ຊີ້ນຳ. ເຊີແນວ: GICHD.

GMAP (ແຜນງານດ້ານບົດບາດຍິງຊາຍ ແລະ ການເກັບກູ້ລະເບີດ). 2014. ບົດລາຍງານວ່າດ້ວຍ ການປະເມີນຜົນຂອງ GMAP

ດ້ານບົດບາດຍິງຊາຍຂອງແຜນງານການເກັບກູ້ ລບຕ/ລະເບີດ ໃນ ສປປ ລາວ. ເຊີແນວ: GICHD.

———. 2018. ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍທີ່ຕອບສະໜອງໄດ້ດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ. ເຊີແນວ: GICHD.

GMAP-GICHD) (ແຜນງານດ້ານບົດບາດຍິງຊາຍ ແລະ ການເກັບກູ້ລະເບີດ-ສູນເກັບກູ້ລະເບີດເພື່ອມະນຸດຊະທຳສາກົນແຫ່ງ ເຊີແນວ). 2014a. ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານຄຸ້ມຄອງສັນຍາເກັບກູ້ລະເບີດ ແລະ ທົ່ນ. ເຊີແນວ: GICHD.

———. 2014b. ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນວຽກງານຄຸ້ມຄອງຄຸນນະພາບຂອງການເກັບກູ້ລະເບີດ. ເຊີແນວ: GICHD.

ລັດຖະບານ ສປປ ລາວ (2012). ມາດຕະຖານແຫ່ງຊາດວ່າດ້ວຍການເກັບກູ້ ລບຕ/ລະເບີດຂອງ ສປປ ລາວ. ນະຄອນຫຼວງວຽງຈັນ: NRA.

———. 2018. ຂະບວນການທົບທວນຄືນການຈັດຕັ້ງປະຕິບັດ ວາລະ 2030 ເພື່ອການພັດທະນາແບບຍືນຍົງ ຂັ້ນແຫ່ງຊາດ ແບບສະໝັກໃຈ. ນະຄອນຫຼວງວຽງຈັນ: ລັດຖະບານ ສປປ ລາວ.

———. 2021a. ແຜນການດຳເນີນງານແຫ່ງຊາດ 5 ປີວ່າດ້ວຍຄວາມສະເໝີພາບຍິງຊາຍຄັ້ງທີ 4 (2021-2025). ນະຄອນຫຼວງວຽງຈັນ: ລັດຖະບານ ສປປ ລາວ.

———. 2021a. ແຜນຍຸດທະສາດແຫ່ງຊາດສຳລັບຂະແໜງການ ລບຕ ໃນ ສປປ ລາວ 2021-2030 "ແຜນທິດທາງຄວາມປອດໄພຕໍ່ໜ້າໄລຍະທີ III." ນະຄອນຫຼວງວຽງຈັນ: ລັດຖະບານ ສປປ ລາວ.

———. 2021b. ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ 9 (2021-2025). ນະຄອນຫຼວງວຽງຈັນ: ລັດຖະບານ ສປປ ລາວ.

Hottentot, E. 2014. ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນສະພາບການຂອງລະເບີດຝັງດິນ ແລະ ສິ່ງເສດເຫຼືອຈາກລະເບີດເມື່ອປາງສົງຄາມ. ລີຢົງ, ຝຣັ່ງ: ອົງການຜູ້ພິການສາກົນ.

Hudoshnyk, Y. 2021. ຂໍ້ຊີ້ນຳດ້ານບົດບາດຍິງຊາຍສຳລັບໜ່ວຍປະຕິບັດການເກັບກູ້ລະເບີດ. ນິວຢອກ: ແຜນງານການຟື້ນຟູ ແລະ ການສ້າງສັນຕິພາບຂອງ ອົງການ ສປຊ.

ICBL (ໂຄງການລົງນະລົງສາກົນເພື່ອເກືອດຫ້າມລະເບີດຝັງດິນ). 2021. ການຕິດຕາມກວດກາລະເບີດລູກຫວ່ານ ແລະ ລະເບີດຝັງດິນ: ສົນທິສັນຍາກ່ຽວກັບບົດບາດຍິງຊາຍ ແລະ ການເກືອດຫ້າມລະເບີດຝັງດິນ. ເຊີແນວ: ICBL. p.

———. 2022. ຄວາມຮ່ວມມືດ້ານລະເບີດລູກຫວ່ານ, ການຕິດຕາມກວດກາລະເບີດລູກຫວ່ານ 2022. ນິວຢອກ: ICBL.

ກຸ່ມອ້າງອີງຂອງ IASC (ຄະນະປະຈຳໜ່ວຍງານລະຫວ່າງປະເທດ) ວ່າດ້ວຍການດຳເນີນງານດ້ານບົດບາດຍິງຊາຍ ແລະ ມະນຸດຊະທຳ. 2018, ຂໍ້ຊີ້ນຳ: ປື້ມຄູ່ມືບົດບາດຍິງຊາຍສຳລັບການດຳເນີນງານດ້ານມະນຸດຊະທຳ. ນິວຢອກ: IASC.

———. 2022. ເອກະສານຊີ້ວັດຄວາມຕ້ອງການລະຫວ່າງຍິງຊາຍໃນວຽກງານເກັບກູ້ລະເບີດ. ນິວຢອກ: IASC.

IASC (ຄະນະປະຈຳໜ່ວຍງານລະຫວ່າງປະເທດ) ວ່າດ້ວຍການລວມເອົາຄົນພິການເຂົ້າໃນການດຳເນີນງານດ້ານມະນຸດຊະທຳ. 2019. ຂໍ້ຊີ້ນຳ: ການລວມເອົາຄົນພິການເຂົ້າໃນການດຳເນີນງານດ້ານມະນຸດຊະທຳ. ນິວຢອກ: IASC.

ILO (ອົງການແຮງງານສາກົນ). 2018. ວຽກງານ ແລະ ອາຊີບດູແລເພື່ອອະນາຄົດດ້ານວຽກງານເຮັດວຽກທີ່ດີ. ເຊີແນວ: ILO.

Ironside, J. 2017. ການຮັບຮູ້ເຖິງສິດຖືຄອງທີ່ດິນຕາມປະເພນີໃນ ສປປ ລາວ. ບົດຄົ້ນຄວ້າຕາມຫົວຂໍ້ຂອງ MRLG ເລກທີ 8. ນະຄອນຫຼວງວຽງຈັນ: MRLG.

Jones, A., ແລະ K. I. Breili. 2015. "ການຈັດຕັ້ງປະຕິບັດການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພທີ່ຄຳນຶງເຖິງວັດທະນະທຳໃນ ໂຊມາລີ." ບົດຄວາມວ່າດ້ວຍສິ່ງເສດເຫຼືອຈາກລະເບີດເມື່ອປາງສົງຄາມ ແລະ ການເກັບກູ້ລະເບີດ 19(2).

Kalamar, T. 2017. "ຄວາມກວມລວມທາງສັງຄົມຂອງຊຸມຊົນດ້ອຍໂອກາດ: ວຽກງານເກັບກູ້ລະເບີດໃນ ສປປ ລາວ." ບົດຄວາມວ່າດ້ວຍສິ່ງເສດເຫຼືອຈາກລະເບີດເມື່ອປາງສົງຄາມ ແລະ ການເກັບກູ້ລະເບີດ 19(2).



ສູນສະຖິຕິແຫ່ງຊາດລາວ. 2016. "ຜົນໄດ້ຮັບຂອງບົດສຳຫຼວດປະຊາກອນ ແລະ ຄົວເຮືອນປະຈຳປີ 2015."

Lark, R., D. Hewitson ແລະ D. Wolsey. 2022. "ບົດບາດຍິງຊາຍ ແລະ ປະສິດທິພາບຂອງການປະຕິບັດງານ." ບົດຄວາມວ່າດ້ວຍອາວຸດທຳລາຍລ້າງແບບທຳມະດາ 26(1).

ອົງການແມັກ (ກຸ່ມທີ່ປຶກສາດ້ານລະເບີດ). 2008. ການປະເມີນມຸມມອງດ້ານບົດບາດຍິງຊາຍໃນວຽກງານເກັບກູ້ ລບຕ ໃນ ສປປ ລາວ. ນະຄອນຫຼວງວຽງຈັນ: ອົງການແມັກ.

ອົງການເກັບກູ້ລະເບີດແຫ່ງການາດາ. 2019. ບົດບາດຍິງຊາຍ ແລະ ການຈ້າງງານໃນຂະແໜງການເກັບກູ້ລະເບີດ - ສະຖິຕິ. ອົດຕາວາ: ອົງການເກັບກູ້ລະເບີດແຫ່ງການາດາ.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ອົງການ UNDP (ອົງການ ສປຊ ເພື່ອການພັດທະນາ). 2022. ການຍົກສູງປະສິດທິພາບ ແລະ ປະສິດທິຜົນໃຫ້ແກ່ຂະແໜງການ ລບຕ ເພື່ອປະກອບສ່ວນເຂົ້າໃນການບັນລຸ ປພຍ 18 ແລະ ແຜນທິດທາງຄວາມປອດໄພຕໍ່ໜ້າໄລຍະທີ III, ເອກະສານໂຄງການ. ນະຄອນຫຼວງວຽງຈັນ.

ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ. 2020. ການຍົກສູງບົດບາດຍິງຊາຍ ແລະ ການຜະລິດກະສິກຳໃນ ສປປ ລາວ. www.nafri.org.la/?wpfb_dl=101.

ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ. 2015. ບົດຄົ້ນຄວ້າວ່າດ້ວຍຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ. ນະຄອນຫຼວງວຽງຈັນ: ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ.

Newton-Small, J. 2016. ອິດທິພົນໃນວົງກວ້າງ. ນິວຢອກ: Time Books.

Nilsson, M., V. Rozes ແລະ J. Garcia. 2015. "ບົດບາດຍິງຊາຍ ແລະ ການອານຸຍາດນຳໃຊ້ທີ່ດິນ: ໜ້າທີ່ຮັບຜິດຊອບຂອງຊຸມຊົນຕໍ່ວຽກງານເກັບກູ້ລະເບີດ." ບົດຄວາມວ່າດ້ວຍສິ່ງເສດເຫຼືອຈາກລະເບີດເມື່ອປາງສົງຄາມ ແລະ ການເກັບກູ້ລະເບີດ 13(2).

NRA (ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງຢູ່ ສປປ ລາວ). 2021. ບົດລາຍງານປະຈຳປີຂອງຂະແໜງການ ລບຕ 2021. ນະຄອນຫຼວງວຽງຈັນ: NRA ແລະ ອົງການ UNDP.

Pimhidzai, O. n.d. ບົດສັງລວມນະໂຍບາຍຄວາມທຸກຍາກຂອງ ສປປ ລາວ: ຍ້ອນຫຍັງຊົນກຸ່ມນ້ອຍຈຶ່ງທຸກຍາກ? ຜົນກະທົບການຈຳແນກດ້ານເງິນທຶນ, ໂອກາດ ແລະ ການເຂົ້າເຖິງຕະຫຼາດ. ວໍຊິງຕັນ, ດີຊີ: ທະນາຄານໂລກ.

Raaymakers, S., ແລະ L. Phakdisoth. 2019. ແຜນງານ ລບຕ ຂອງ ອົງການ UNDP-ສປປ ລາວ 2017-2021: ການປະເມີນຜົນໄລຍະກາງ, ການປະເມີນຜົນຂັ້ນສຸດທ້າຍໃຫ້ແກ່ການປະກອບສ່ວນຂອງ ອີຢູ ແລະ ໂອກາດຕໍ່ໜ້າ - ທັນວາ 2019. ບົດລາຍງານຕໍ່ ອົງການ ສປຊ ເພື່ອການພັດທະນາ ແລະ ລັດຖະບານ ສປປ ລາວ.

ReliefWeb. 2022. "ການປັບສົມດຸນໃຫ້ແກ່ແມ່ຍິງໃນເສດຖະກິດການເບິ່ງແຍງດູແລ." ບົດຂ່າວ, ວັນທີ 12 ເມສາ.

Roberts, R., ແລະ K. Ounmany. 2021. ກ້າວໄປສູ່ການບັນລຸ ປພຍ 18: ການລົບລ້າງອຸປະສັກ ລບຕ ທີ່ກີດຂວາງການພັດທະນາໃນ ສປປ ລາວ: ບົດລາຍງານສະບັບສຸດທ້າຍ. ນະຄອນຫຼວງວຽງຈັນ: ອົງການ UNDP.

Somphongbouthakanh, P., ແລະ L. Schenk-Sandbergen. 2020. ແມ່ຍິງ ແລະ ສິດທິດ້ານທີ່ດິນໃນ ສປປ ລາວ: ການສ້າງຄວາມປ່ຽນແປງໃນເຂດຊົນນະບົດ ແລະ ຄວາມຝັນໃນການຖືຄອງເນື້ອທີ່ດິນໄດ້ຢ່າງໝັ້ນຄົງ. ນະຄອນຫຼວງວຽງຈັນ: ອົງການແຄປະຈຳ ສປປ ລາວ - ກຸ່ມວິຊາການດ້ານຂໍ້ມູນຂ່າວສານກ່ຽວກັບເນື້ອທີ່ດິນ.

ອົງການ ສປຊ. 2021. ກອງປະຊຸມທົບທວນຄືນຂອງລັດພາຄີຕໍ່ສົນທິສັນຍາວ່າດ້ວຍການເກືອດຫ້າມລະເບີດລູກຫວ່ານ, ກອງປະຊຸມທົບທວນຄືນຄັ້ງທີ 2, ເຊີແນວ, ວັນທີ 20-21 ກັນຍາ 2021. CCM/CONF/2021/5.

ອົງການ ສປຊ ເພື່ອແມ່ຍິງ. n.d. ພະຍາດໂຄວິດ-19 ແລະ ເສດຖະກິດການເບິ່ງແຍງດູແລ: ການດຳເນີນງານໂດຍທັນທີ ແລະ ການປ່ຽນແປງດ້ານໂຄງສ້າງເພື່ອການຟື້ນຟູທີ່ຄຳນຶງເຖິງບົດບາດຍິງຊາຍ. ນິວຢອກ: ອົງການ ສປຊ ເພື່ອແມ່ຍິງ.

ອົງການ ສປຊ ເພື່ອແມ່ຍິງ. 2018a. ບົດລາຍງານການປະເມີນຜົນ: ຍົກສູງຜົນໄດ້ຮັບຈາກແຜນງານ ລບຕ ໃນ ສປປ ລາວ ໂດຍຜ່ານການສົ່ງເສີມຄວາມສະເໝີພາບຍິງຊາຍ ແລະ ການຍົກສູງບົດບາດໃຫ້ແກ່ແມ່ຍິງ. ນະຄອນຫຼວງວຽງຈັນ: ອົງການ ສປຊ ເພື່ອແມ່ຍິງ.

———. 2018b. ປື້ມຄູ່ມືການຝຶກອົບຮົມການເຊື່ອມສານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ ໃນ ສປປ ລາວ. ນະຄອນຫຼວງວຽງຈັນ: ອົງການ ສປຊ ເພື່ອແມ່ຍິງ, NRA (ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງຢູ່ ສປປ ລາວ) ແລະ ສູນກາງສະຫະພັນແມ່ຍິງລາວ.

ອົງການ UNDP (ອົງການ ສປຊ ເພື່ອການພັດທະນາ). 2012. ເໜືອຂອບເຂດ - ການຫຼຸດຜ່ອນຜົນກະທົບຂອງ ລບຕ ຕໍ່ຂະບວນການຫຼຸດຜ່ອນຄວາມທຸກຍາກໃນ ສປປ ລາວ. ນະຄອນຫຼວງວຽງຈັນ: ອົງການ UNDP.

———. 2017. ບົດລາຍງານໂຄງການສະບັບສຸດທ້າຍ - ການສະໜັບສະໜູນເຂົ້າໃນການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງຢູ່ ສປປ ລາວ (NRA) ແລະ ໂຄງການເກັບກູ້ລະເບີດແຫ່ງຊາດ (UXO Lao). ນະຄອນຫຼວງວຽງຈັນ: ອົງການ UNDP.

———. 2019. ແຜນງານ ລບຕ ຂອງ ອົງການ UNDP - ສປປ ລາວ: ການປະເມີນຜົນໄລຍະກາງ, ການປະເມີນຜົນຂັ້ນສຸດທ້າຍໃຫ້ແກ່ການປະກອບສ່ວນຂອງ ອີຢູ ແລະ ໂອກາດຕໍ່ໜ້າ. ນະຄອນຫຼວງວຽງຈັນ: ອົງການ UNDP.

———. 2020. ຍຸດທະສາດສົ່ງເສີມຄວາມສະເໝີພາບຍິງຊາຍຂອງ ສປປ ລາວ 2022-2026. ນະຄອນຫຼວງວຽງຈັນ: ອົງການ UNDP.

———. 2021a. ຍຸດທະສາດສົ່ງເສີມຄວາມສະເໝີພາບຍິງຊາຍໃນຂອບເຂດທົ່ວໂລກຂອງ ອົງການ UNDP 2022-2025. ນິວຢອກ: ອົງການ UNDP.

———. 2021b. ແຜນຍຸດທະສາດ 2022-2025. ນິວຢອກ: ອົງການ UNDP.

———. 2022a. ເອກະສານໂຄງການຂອງ ສປປ ລາວ - ການຍົກສູງປະສິດທິພາບ ແລະ ປະສິດທິຜົນໃຫ້ແກ່ຂະແໜງການ ລບຕ ເພື່ອປະກອບສ່ວນເຂົ້າໃນການບັນລຸ ປພຍ 18 ແລະ ແຜນທິດທາງຄວາມປອດໄພຕໍ່ໜ້າໄລຍະທີ III (SPF III). ນະຄອນຫຼວງວຽງຈັນ: ອົງການ UNDP.

———. 2022b. ບົດລາຍງານການວິເຄາະ (2019-2022): ການສະໜັບສະໜູນເພື່ອເສີມສ້າງຄວາມເຂັ້ມແຂງໃຫ້ແກ່ ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກ ທີ່ຍັງຕົກຄ້າງຢູ່ ສປປ ລາວ. ນະຄອນຫຼວງວຽງຈັນ: ອົງການ UNDP.

ອົງການ UNICEF (ອົງການ ສປຊ ກອງທຶນສຳລັບເດັກ). 2020. ສະຖານະການຂອງເດັກ ແລະ ແມ່ຍິງໃນ ສປປ ລາວ. ນິວຢອກ: ອົງການ UNICEF.

———. 2021. ຜົນກະທົບຂອງ ພະຍາດໂຄວິດ-19: ການສ້າງພາບລວມດ້ານບົດບາດຍິງຊາຍຄືນໃໝ່. ນະຄອນຫຼວງວຽງຈັນ: ອົງການ UNICEF.

UNMAS (ໜ່ວຍບໍລິການເກັບກູ້ລະເບີດຂອງ ອົງການ ສປຊ). 2005. ຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ ອົງການ ສປຊ ສຳລັບແຜນງານເກັບກູ້ລະເບີດ. ນິວຢອກ: UNMAS.

———. 2010. ຂໍ້ຊີ້ນຳດ້ານບົດບາດຍິງຊາຍສຳລັບແຜນງານເກັບກູ້ລະເບີດ. ນິວຢອກ: UNMAS.

———. 2019a. ຊີ້ນຳດ້ານບົດບາດຍິງຊາຍຂອງ ອົງການ ສປຊ ສຳລັບແຜນງານເກັບກູ້ລະເບີດ. ນິວຢອກ: UNMAS.

———. 2019b. ຍຸດທະສາດການເກັບກູ້ລະເບີດຂອງ ອົງການ ສປຊ 2019-2023. ນິວຢອກ: UNMAS.

ອົງການ USAID (ອົງການພັດທະນາສາກົນແຫ່ງ ສ. ອາເມລິກາ). n.d. ຂໍ້ແນະນຳໃນການດຳເນີນການວິເຄາະບົດບາດຍິງຊາຍໃນລະດັບວຽກງານ ຫຼື ລະດັບໂຄງການ. https://pdf.usaid.gov/pdf_docs/Pnadt865.pdf.

———. 2018. ການວິເຄາະບົດບາດຍິງຊາຍຂອງ ສປປ ລາວ ກ່ຽວກັບຄວາມພິການ. ນະຄອນຫຼວງວຽງຈັນ: ອົງການ USAID.

———. 2019. ການວິເຄາະບົດບາດຍິງຊາຍ ແລະ ຄວາມກວມລວມທາງສັງຄົມ (GSIA). ນະຄອນຫຼວງວຽງຈັນ: ແຜນງານການຊ່ວຍເຫຼືອທາງກົດໝາຍໃຫ້ແກ່ ສປປ ລາວ ໂດຍ ອົງການ USAID

———. 2022. ການວິເຄາະບົດບາດຍິງຊາຍໃນລະດັບຊາດໃຫ້ແກ່ ສປປ ລາວ. ນະຄອນຫຼວງວຽງຈັນ: ອົງການ USAID.



ທະນາຄານໂລກ. 2020. ຂໍ້ມູນຄວາມທຸກຍາກໃນ ສປປ ລາວ, ບົດລາຍງານຄວາມທຸກຍາກສຳລັບການສຳຫຼວດລາຍຈ່າຍ ແລະ ການບໍລິໂພກໃນ ສປປ ລາວ 2018-2019. ວໍຊິງຕັນ, ດີຊີ: ທະນາຄານໂລກ.

———. 2022. ການຕິດຕາມກວດກາເສດຖະກິດໃນ ສປປ ລາວ: ການແກ້ໄຂຄວາມສ່ຽງດ້ານເສດຖະກິດມະຫາພາກ. ນະຄອນຫຼວງວຽງຈັນ: ທະນາຄານໂລກ.

ອົງການອະນາໄມໂລກ. 2021. “ຄວາມຮຸນແຮງຕໍ່ແມ່ຍິງ.” www.who.int/news-room/fact-sheets/detail/violence-against-women

## ພາກເອກະສານຊ້ອນທ້າຍທີ 1: ລາຍຊື່ຂອງບັນດາຄູ່ຮ່ວມງານທີ່ໄດ້ການປຶກສາຫາລືນຳ

**ບັນດາຄູ່ຮ່ວມປະຕິບັດງານພາກສະໜາມທີ່ໄດ້ປຶກສາຫາລືນຳໃນ ນະຄອນຫຼວງວຽງຈັນ**

| | ຊື່ | ເພດ | ອາຍຸ | ກຸ່ມຊົນເຜົ່າ | ຄວາມພິການ | ອົງການຈັດຕັ້ງ | ຕຳແໜ່ງ/ ໜ້າທີ່ຮັບຜິດຊອບ |
|---|---|---|---|---|---|---|---|
| **I** | **ກອງປະຊຸມຄັ້ງທີ 01: ທີມງານ NRA ໃນ ນະຄອນຫຼວງວຽງຈັນ ທີ່ຫ້ອງປະຊຸມຂອງ NRA ຊັ້ນ 2 ວັນທີ 23 ມັງກອນ 2023** | | | | | | |
| 1 | ວິລະພົນ ພະທະວົງ | ຊາຍ | 28 | ລາວລຸ່ມ | ບໍ່ມີ | NRA | ທີມງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ |
| 2 | ເມກຂະຫຼາ ສີຫາລາດ | ຍິງ | 33 | ລາວລຸ່ມ | ບໍ່ມີ | NRA | ພະນັກງານວິຊາການ |
| 3 | ຈັນສະໝອນ ສີຫາລາດ | ຊາຍ | 33 | ລາວລຸ່ມ | ບໍ່ມີ | NRA | ພະນັກງານວິຊາການ |
| 4 | ບົວລາ | ຍິງ | 34 | ລາວລຸ່ມ | ບໍ່ມີ | NRA | ພະນັກງານວິຊາການ |
| **II** | **ກອງປະຊຸມຄັ້ງທີ 02: ຄູ່ຮ່ວມຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນ ນະຄອນຫຼວງວຽງຈັນ ທີ່ຫ້ອງປະຊຸມຂອງ NRA ຊັ້ນ 2 ວັນທີ 24 ມັງກອນ 2023** | | | | | | |
| 1 | ບົວຄຳ ທຳມະວົງ | ຍິງ | 37 | ລາວລຸ່ມ | ບໍ່ມີ | NRA | ວຽກງານວິຊາການໃນການກວດສອບ ແລະ ຮັບຮອງຂໍ້ມູນ (ຫົວໜ່ວຍຈັດຕັ້ງປະຕິບັດ) |
| 2 | ສີອາທອນ ພູມມະວົງ | ຍິງ | 52 | ລາວລຸ່ມ | ບໍ່ມີ | ສູນການແພດ ແລະ ຟື້ນຟູໜ້າທີ່ການ | ຮອງອຳນວຍການ |
| 3 | ສີຈັນ ສິດທິພົນ | ຊາຍ | 50 | ລາວລຸ່ມ | ບໍ່ມີ | ອົງການ HI | ຮອງຜູ້ອຳນວຍການ |
| 4 | ພູວັນ ພັນທະວົງ | ຍິງ | 22 | ລາວລຸ່ມ | ບໍ່ມີ | ສະມາຄົມຄົນພິການແຫ່ງຊາດລາວ | ຜູ້ປະສານງານ |
| 5 | ມາໄລເມືອງ ສີສະໝຸດ | ຍິງ | 35 | ລາວລຸ່ມ | ມີ | ສະມາຄົມຄົນພິການແຫ່ງຊາດລາວ | ພະນັກງານການເງິນ |
| 6 | ເມກ ພຸດດາໄຊ | ຍິງ | 33 | ລາວລຸ່ມ | ບໍ່ມີ | ອົງການການສຶກສາສາກົນ | ຜູ້ປະສານວຽກງານພັດທະນາຫຼັກສູດ ແລະ ຊຸດຝຶກອົບຮົມ |
| 7 | ຈອມໃຈ ເພຍນາມ | ຍິງ | 33 | ລາວລຸ່ມ | ມີຄວາມພິການທາງຮ່າງກາຍ | ສູນພັດທະນາແມ່ຍິງຄົນພິການ | ພະນັກງານໂຄງການ |
| **III** | **ກອງປະຊຸມຄັ້ງທີ 03: ຄູ່ຮ່ວມມືໃນວຽກງານ EORE ໃນ ນະຄອນຫຼວງວຽງຈັນ ທີ່ຫ້ອງປະຊຸມຂອງ NRA ຊັ້ນ 2 ວັນທີ 24 ມັງກອນ 2023** | | | | | | |
| 1 | ເມກ ພຸດດາໄຊ | ຍິງ | 33 | ລາວລຸ່ມ | ບໍ່ມີ | ອົງການການສຶກສາໂລກ | ຜູ້ປະສານວຽກງານພັດທະນາຫຼັກສູດ ແລະ ຊຸດຝຶກອົບຮົມ |
| 2 | ວຽງວິໄລ ວົງຄຳມຸນຕີ | ຍິງ | 41 | ລາວລຸ່ມ | ບໍ່ມີ | ອົງການເຮໂລ | ຜູ້ຄຸ້ມຄອງວຽກງານບໍລິຫານ |
| **IV** | **ກອງປະຊຸມຄັ້ງທີ 04: ກອງຮ້ອຍ 58 - ທີມງານ EORE ແລະ ການສຳຫຼວດແບບບໍ່ແມ່ນວິຊາການ ທີ່ຫ້ອງປະຊຸມຂອງ NRA ຊັ້ນ 2 ວັນທີ 24 ມັງກອນ 2023** | | | | | | |
| 1 | ໄຊຍະສອນ ຫຼວງວິເສດ | ຊາຍ | 30 | ລາວລຸ່ມ | | ກອງຮ້ອຍ 58 | ພະນັກງານວິຊາການ EORE ແລະ ການສຳຫຼວດແບບບໍ່ແມ່ນວິຊາການ |
| 2 | ວິດາວັນ ວິລະເກດ | ຍິງ | 26 | ລາວລຸ່ມ | | ກອງຮ້ອຍ 58 | ພະນັກງານວິຊາການ |
| **V** | **ກອງປະຊຸມຄັ້ງທີ 05: ກອງຮ້ອຍ 58 - ທີມງານເກັບກູ້ລະເບີດ ແລະ ການສຳຫຼວດທາງດ້ານວິຊາການທີ່ຫ້ອງປະຊຸມຂອງ NRA ຊັ້ນ 2 ວັນທີ 25 ມັງກອນ 2023** | | | | | | |
| 1 | ຫຼ້າ ແສງຄຳຍອງ | ຍິງ | 27 | ລາວລຸ່ມ | ບໍ່ມີ | ກອງຮ້ອຍ 58 | ການເກັບກູ້ລະເບີດ |
| 2 | ໂພໄຊ ສຸວັນຄຳ | ຊາຍ | 30 | ລາວລຸ່ມ | ບໍ່ມີ | ກອງຮ້ອຍ 58 | ການເກັບກູ້ລະເບີດ |
| 3 | ບົວພາ ລັດຖະກອນ | ຊາຍ | 31 | ລາວລຸ່ມ | ບໍ່ມີ | ກອງຮ້ອຍ 58 | ການເກັບກູ້ລະເບີດ |
| 4 | ພັດທະນາກອນ | ຊາຍ | 43 | ລາວລຸ່ມ | ບໍ່ມີ | ກອງຮ້ອຍ 58 | ຫົວໜ້າທີມງານສຳຫຼວດທາງດ້ານວິຊາການ |
| 5 | ສອນສີ BounlwLuom | ຊາຍ | 43 | ລາວລຸ່ມ | ບໍ່ມີ | ກອງຮ້ອຍ 58 | ຫົວໜ້າທີມງານປະສານວຽກບໍລິຫານ |
| **VI** | **ແຂວງຊຽງຂວາງ - ຄູ່ຮ່ວມຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ພະແນກສະຫວັດດີການສັງຄົມແຂວງ (ຫ້ອງປະຊຸມຊັ້ນ 2) ວັນທີ 30 ມັງກອນ 2023 ຈາກເວລາ 14:00-15:30 ຕອນແລງ** | | | | | | |
| 1 | ຫຼ້າ ໝູຄຳ | ຍິງ | 30 | ລາວລຸ່ມ | ບໍ່ມີ | ສະມາຄົມຟື້ນຟູຄົນພິການ | ພະນັກງານການເງິນ |
| 2 | ສີອຳພອນ ບຸດສະດີ | ຊາຍ | 50 | ລາວລຸ່ມ | ບໍ່ມີ | ຫົວໜ່ວຍຈັດຕັ້ງປະຕິບັດໂຄງການ-ອົງການກອຍກາ | ຜູ້ປະສານງານຂັ້ນແຂວງ |
| **VII** | **ແຂວງຊຽງຂວາງ - ກອງປະຊຸມຂອງທີມງານ ໂຄງການ UXO Lao (ທີມງານ EORE, ທີມສຳຫຼວດແບບບໍ່ແມ່ນວິຊາການ, ທີມເກັບກູ້ລະເບີດ ແລະ ທີມສຳຫຼວດທາງດ້ານວິຊາການຊາຍລ້ອນ) ທີ່ຫ້ອງປະຊຸມຂອງ ໂຄງການ UXO Lao ຂັ້ນແຂວງ (09:00-12:00) ວັນທີ 1 ກຸມພາ 2023)** | | | | | | |
| 1 | ໝອນສີ | ຍິງ | 37 | ຂະມຸ | ບໍ່ມີ | ໂຄງການ UXO Laos | ພະນັກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ |
| 2 | ເໜັ່ງຈ່າງ | ຍິງ | 38 | ມົ້ງ | ບໍ່ມີ | ໂຄງການ UXO Laos | ພະນັກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ |
| 3 | ສອນເພັດ | ຊາຍ | 49 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | |
| 4 | ຄຳຫຼ້າ ບັນທະວົງ | ຊາຍ | 42 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ພະນັກງານຂັບລົດ |
| 5 | ບຸນລ້ອມ | ຊາຍ | 53 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ການເກັບກູ້ລະເບີດ |
| 6 | ສົມພັນ | ຊາຍ | 30 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ການເກັບກູ້ລະເບີດ |
| 7 | ປອັກກົ້ | ຍິງ | 27 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ການເກັບກູ້ລະເບີດ |
| 8 | ສູນພາວັນ | ຊາຍ | 38 | ລາວລຸ່ມ | ບໍ່ມີ | ໂຄງການ UXO | ການເກັບກູ້ລະເບີດ |

| | | | | | | | |
|---|---|---|---|---|---|---|---|
| | | | | | | Laos | |
| 9 | ຄຳຫຼ້າ | ຊາຍ | 43 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ການເກັບກູ້ລະເບີດ |
| 10 | ສີພອນ ວົງພະຈັນ | ຊາຍ | 35 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ການເກັບກູ້ລະເບີດ |
| 11 | ທອງຄຳ ພິມມະວົງ | ຊາຍ | 48 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ຫົວໜ້າທີມ EORE |
| 12 | ພອນສະຫວັນ ພິມມະວີ | ຊາຍ | 49 | ຂະມຸ | ບໍ່ມີ | ໂຄງການ UXO Laos | ຫົວໜ້າທີມສຳຫຼວດທາງດ້ານວິຊາການ |
| 13 | ສີສຸພັນ ນັນທະສິນ | ຊາຍ | 48 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ຫົວໜ້າທີມສຳຫຼວດແບບບໍ່ແມ່ນວິຊາການ |
| 14 | ວັນດີ ນັນທະເສນ | ຊາຍ | 55 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ພະນັກງານປະສານວຽກບໍລິຫານ |
| VIII | ແຂວງຊຽງຂວາງ - ກອງປະຊຸມທີມງານເກັບກູ້ລະເບີດຍິງລ້ວນຂອງ ໂຄງການ UXO Lao ທີ່ເມືອງຄາ, ຫ້ອງປະຊຸມຂອງ ໂຄງການ UXO Lao ແຂວງຊຽງຂວາງ (16:00-17:30) ວັນທີ 2 ກຸມພາ 2023) | | | | | | |
| 1 | ຂັນທະລີ ພິມມະຈັນ | ຍິງ | 43 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ຫົວໜ້າທີມງານເກັບກູ້ລະເບີດ |
| 2 | ວອນຄຳ ແກ້ວພານຸວົງ | ຍິງ | 30 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ການເກັບກູ້ລະເບີດ |
| 3 | ອີດ ສີສົມພອນ | ຍິງ | 28 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ພະຍາບານພາກສະໜາມ |
| 4 | ສອນໄຊ ບຸນພະຈັນ | ຍິງ | 23 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ການເກັບກູ້ລະເບີດ |
| 5 | ລັດຕາວັນ ແສງບັນດິດ | ຍິງ | 24 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ການເກັບກູ້ລະເບີດ |
| 6 | ແດງອ່ອນ ວົງໄຊ | ຍິງ | 36 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ຮອງຫົວໜ້າທີມ |
| 7 | ສາຍສະໝອນ | ຍິງ | 46 | ລາວລຸ່ມ | ບໍ່ມີ | ໂຄງການ UXO Laos | ເຈົ້າໜ້າທີ່ທຳລາຍວັດຖຸລະເບີດຂັ້ນອາວຸໂສ |

**ບັນດາຄູ່ຮ່ວມງານທີ່ໄດ້ປຶກສາຫາລືນຳໃນ ແຂວງບໍລິຄຳໄຊ ແລະ ແຂວງຊຽງຂວາງ**

| | ຊື່ | ເພດ | ອາຍຸ | ກຸ່ມຊົນເຜົ່າ | ຄວາມພິການ | ຕຳແໜ່ງ |
|---|---|---|---|---|---|---|
| I | ບ້ານທີ 01: ບ້ານທອງແສນ, ເມືອງຄຳເກີດ, ແຂວງບໍລິຄຳໄຊ ວັນທີ 27 ມັງກອນ 2023 | | | | | |
| 1 | ທ້າວ ລັດຕະນະຜາສຸກ ແຂທະວົງ | ຊາຍ | 44 | ລາວລຸ່ມ | | PRA ແຂວງບໍລິຄຳໄຊ |
| 2 | ທ້າວ ທຸມແພງ ພູມສີ | ຊາຍ | 40 | ລາວລຸ່ມ | | ຫ້ອງການສະຫວັດດີການສັງຄົມເມືອງຄຳເກີດ, ແຂວງບໍລິຄຳໄຊ |
| 3 | ທ້າວ ບຸນມີ | ຊາຍ | 57 | ລາວລຸ່ມ | | ພະແນກສະຫວັດດີການສັງຄົມແຂວງບໍລິຄຳໄຊ |
| 4 | ທ້າວ ຈົ່ງເຢຍຊົ້ງ | ຊາຍ | 39 | ມົ້ງ | | |
| 5 | ທ້າວ ຄຳແກ້ວ ສຸວັນດີ | ຊາຍ | 44 | ລາວລຸ່ມ | ມີ | |
| 6 | ທ້າວ ໃໝ່ ປ່າງຕົວຮ້າງ | ຊາຍ | 31 | ມົ້ງ | | |
| 7 | ນາງ ນຸຂາ | ຍິງ | 35 | ມົ້ງ | | |
| 8 | ນາງ ຊີລໍ້ | ຍິງ | 40 | ມົ້ງ | | |
| 9 | ນາງ ລີວໍ້ | ຍິງ | 34 | ມົ້ງ | | |
| 10 | ທ້າວ ບົວແກ້ວ ສຸດທິໄຊ | ຊາຍ | 47 | ລາວລຸ່ມ | | |
| 11 | ນາງ ລິນດາລີ | ຍິງ | 16 | ມົ້ງ | | |
| 12 | ນາງ ຄຳ | ຍິງ | 64 | ເມີຍ | | |
| 13 | ທ້າວ ດົວວໍ້ | ຊາຍ | 18 | ມົ້ງ | | |
| 14 | ທ້າວ ເບຣຍປາວຊົ້ງ | ຊາຍ | 60 | ມົ້ງ | | |
| 15 | ທ້າວ ໄມວາງ ປາງຕົ໊ວ | ຊາຍ | 31 | ມົ້ງ | | |
| 16 | ທ້າວ ກົງ | ຊາຍ | 38 | ມົ້ງ | | |
| 17 | ນາງ ຄຳແມ | ຊາຍ | 61 | ລາວລຸ່ມ | | |
| 18 | ທ້າວ ຊົງແຊງວໍ້ | ຊາຍ | 63 | ມົ້ງ | | |
| 19 | ທ້າວ ມາ | ຊາຍ | 60 | ລາວລຸ່ມ | | |
| 20 | ທ້າວ ກົວວໍ້ | ຊາຍ | 35 | ມົ້ງ | | |
| 21 | ທ້າວ ຈີວໍ້ | ຊາຍ | 32 | ມົ້ງ | | |
| 22 | ນາງ ປາກູຊົ້ງ | ຍິງ | 28 | ມົ້ງ | | |
| II | ບ້ານທີ 02: ບ້ານໂພນສະອາດ, ເມືອງຄຳເກີດ, ແຂວງບໍລິຄຳໄຊ ວັນທີ 28 ມັງກອນ 2023 | | | | | |
| 1 | ທ້າວ ຈ່າງແຢ້ງ ຄາຊືຢ້າງ | ຊາຍ | 46 | ມົ້ງ | | |
| 2 | ທ້າວ ຈັນທາ ຊະນະບຸນມີ | ຊາຍ | 56 | ຂະມຸ | | |
| 3 | ທ້າວ ເຄນກອງ ໄຊສົມບູນ | ຊາຍ | 37 | ຂະມຸ | | ຫ້ອງການສະຫວັດດີການສັງຄົມເມືອງຄຳເກີດ, ແຂວງບໍລິຄຳໄຊ |
| 4 | ທ້າວ ບຸນມີ | ຊາຍ | 57 | ລາວລຸ່ມ | | ຄູ |
| 5 | ທ້າວ ໄຂສຸກສະໄໝ | ຊາຍ | 36 | ລາວລຸ່ມ | | |
| 6 | ທ້າວ ສີທາ ພິມມະທັດ | ຊາຍ | 58 | ລາວລຸ່ມ | | |
| 7 | ທ້າວ ລັດຕະນະຜາສຸກ | ຊາຍ | 44 | ລາວລຸ່ມ | | ພະແນກສະຫວັດດີການສັງຄົມແຂວງ |
| 8 | ທ້າວ ໄຊພອນ ໄຊຍະລືກ | ຊາຍ | 60 | ຂ່າ | | |
| 9 | ທ້າວ ວັນ | ຊາຍ | 32 | ຂ່າ | | |
| 10 | ທ້າວ ເບັງ | ຊາຍ | 34 | ຂ່າ | | |
| 11 | ທ້າວ ຄອກ | ຊາຍ | 43 | ຂ່າ | | |
| 12 | ທ້າວ ທິດ ພິມມະບຸດ | ຊາຍ | 36 | ຂ່າ | | |
| 13 | ທ້າວ ຍັງ | ຊາຍ | 70 | ຂ່າ | | |
| 14 | ທ້າວ ຄື | ຊາຍ | 47 | ຂ່າ | | |
| 15 | ທ້າວ ສຸ | ຊາຍ | 41 | ຂ່າ | | |
| 16 | ທ້າວ ຄຳເກົ່ງ | ຊາຍ | 62 | ຂ່າ | | |
| 17 | ທ້າວ ກະຮອກ | ຊາຍ | 22 | ຂ່າ | | |
| 18 | ນາງ ສອນ | ຍິງ | 40 | ຂ່າ | | |
| 19 | ນາງ ແຫຼ້ | ຍິງ | 20 | ຂ່າ | | |
| 20 | ນາງ ເພັງ | ຍິງ | 58 | ຂ່າ | | |

| | | | | | | |
|---|---|---|---|---|---|---|
| 21 | ນາງ ເຄນມີ | ຍິງ | 70 | ຂ່າ | | |
| 22 | ນາງ ສຸມ | ຍິງ | 35 | ຂ່າ | | |
| 23 | ນາງ ຕິກ | ຍິງ | 31 | ຂ່າ | | |
| 24 | ນາງ ເຄນ | ຍິງ | 34 | ຂ່າ | | |
| 25 | ນາງ ລ້ຽງ | ຍິງ | 35 | ລາວ | | |
| 26 | ນາງ ສອນແກ້ວ | ຍິງ | 69 | ຂ່າ | | |
| 27 | ນາງ ຊ້າງ | ຍິງ | 75 | ຂ່າ | | |
| 28 | ນາງ ຄຳສອນ | ຍິງ | 39 | ຂ່າ | | |
| **III** | **ບ້ານທີ 03: ບ້ານປຸ່ງໝັ້ນ, ເມືອງພູກູດ, ແຂວງຊຽງຂວາງ ວັນທີ 31 ມັງກອນ 2023** | | | | | |
| 1 | ທ້າວ ບຸນຍົງ | ຊາຍ | 50 | ລາວລຸ່ມ | | |
| 2 | ທ້າວ ສີພັນດອນ ໄຊຍະແຂ | ຊາຍ | 42 | ລາວລຸ່ມ | | |
| 3 | ນາງ ບົວພາ ນັນທະວົງ | ຍິງ | 56 | ລາວລຸ່ມ | | |
| 4 | ທ້າວ ແສງແກ້ວ | ຊາຍ | | ລາວລຸ່ມ | | |
| 5 | ນາງ ຄຳແກ້ວ | ຍິງ | 32 | ລາວລຸ່ມ | | |
| 6 | ທ້າວ ທອງສີ ບຸນທະວົງ | ຊາຍ | 62 | ລາວລຸ່ມ | | |
| 7 | ທ້າວ ຈັນວັນ ສົມຈິດທະວົງ | ຊາຍ | 46 | ລາວລຸ່ມ | | |
| 8 | ນາງ ແຫຼ້ | ຍິງ | 37 | ລາວລຸ່ມ | | |
| 9 | ນາງ ເພັງ | ຍິງ | 45 | ລາວລຸ່ມ | | |
| 10 | ນາງ ພຸດ | ຍິງ | 35 | ລາວລຸ່ມ | | |
| 11 | ນາງ ເອ້ | ຍິງ | 31 | ລາວລຸ່ມ | | |
| 12 | ນາງ ວ່າງຄຳ | ຍິງ | 29 | ລາວລຸ່ມ | | |
| 13 | ນາງ ບຸນມາ | ຍິງ | 36 | ລາວລຸ່ມ | | |
| 14 | ນາງ ຈັນສຸກ | ຍິງ | 40 | ລາວລຸ່ມ | | |
| 15 | ນາງ ສຸພີ | ຍິງ | 42 | ລາວລຸ່ມ | | |
| 16 | ທ້າວ ວັນເພັງ ມູນທະສອນ | ຊາຍ | 54 | ລາວລຸ່ມ | | |
| 17 | ທ້າວ ວັນສີ ນັນທະວົງ | ຊາຍ | 70 | ລາວລຸ່ມ | | |
| 18 | ທ້າວ ສຸດຕາ ໄພອາລຸນ | ຊາຍ | 69 | ລາວລຸ່ມ | | |
| 19 | ທ້າວ ຊຽງຄຳ ກິ່ງຄຳກອນ | ຊາຍ | 49 | ລາວລຸ່ມ | | |
| 20 | ນາງ ສາວພານ ທຳມະລືວອນ | ຍິງ | 48 | ລາວລຸ່ມ | | |
| 21 | ນາງ ຄຳແພງ ວັນນະວົງ | ຍິງ | 46 | ລາວລຸ່ມ | | |
| 22 | ນາງ ຈັນເພັງ ສິນທະວົງ | ຍິງ | 84 | ລາວລຸ່ມ | | |
| | **ກອງປະຊຸມພົບປະກັບຜູ້ອຳນວຍການໃຫຍ່ຂອງ NRA** | | | | | |
| | *ທ່ານ ຈອມແຍງ ແພງທອງສະຫວັດ* | ຊາຍ | | ລາວລຸ່ມ | | |
| **III** | **ບ້ານທີ 04: ບ້ານປົວ, ເມືອງພູກູດ, ແຂວງຊຽງຂວາງ ວັນທີ 01 ກຸມພາ 2023** | | | | | |
| 1 | ນາງ ຄຳມົນ ດາລາວົງ | ຍິງ | 62 | ລາວລຸ່ມ | | |
| 2 | ທ້າວ ສົມພັນ ອ້ວນວິໄລ | ຊາຍ | 58 | ລາວລຸ່ມ | | |
| 3 | ນາງ ນ້ອຍ | ຍິງ | 49 | ລາວລຸ່ມ | | |
| 4 | ນາງ ສຸດສະດີ ສີທອງຄຳ | ຍິງ | 19 | ລາວລຸ່ມ | ມີ | |
| 5 | ນາງ ດີ ສອນວິໄລ | ຍິງ | 48 | ລາວລຸ່ມ | | |
| 6 | ນາງ ບົວພັນ | ຍິງ | 33 | ລາວລຸ່ມ | | |



| | | | | | | |
|---|---|---|---|---|---|---|
| 7 | ນາງ ທຳມະນອຍ | ຍິງ | 49 | ລາວລຸ່ມ | ມີ | |
| 8 | ນາງ ສົມດີ ພູມມະລີ | ຍິງ | 71 | ລາວລຸ່ມ | | |
| 9 | ນາງ ຈັນ ຈັນທະວົງ | ຍິງ | 40 | ລາວລຸ່ມ | | |
| 10 | ນາງ ດຳດີ | ຍິງ | 65 | ລາວລຸ່ມ | ມີ | |
| 11 | ທ້າວ ບົວຮຸມ ສົມພະນາ | ຊາຍ | 53 | ລາວລຸ່ມ | ມີ | |
| 12 | ທ້າວ ບົວຄຳ ວໍລະເພັດ | ຊາຍ | 66 | ລາວລຸ່ມ | | |
| 13 | ທ້າວ ຄຳສິງ ອຸດທິນຍາ | ຊາຍ | 57 | ລາວລຸ່ມ | | |
| 14 | ທ້າວ ແສງ ພິມມະສອນ | ຊາຍ | 41 | ລາວລຸ່ມ | | |
| 15 | ທ້າວ ສອນ | ຊາຍ | 31 | ລາວລຸ່ມ | | |
| 16 | ທ້າວ ດຳບົວຄົງ | ຊາຍ | 54 | ລາວລຸ່ມ | | |

## ພາກເອກະສານຊ້ອນທ້າຍທີ 2: ການປະເມີນບົດບາດຍິງຊາຍ ແລະ ລບຕ ໃນ ສປປ ລາວ ຕາມຫົວຂໍ້

### 1. ນະໂຍບາຍ

**ການປະເມີນຜົນດ້ານບົດບາດຍິງຊາຍ ແລະ ລບຕ ຂອງ GMAP ໃນປີ 2014**

NRA ຈະຕ້ອງພິຈາລະນາ ຮ່າງ ແລະ ຮັບຮອງເອົາ ນະໂຍບາຍແບບດ່ຽວວ່າດ້ວຍ ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍສໍາລັບຂະແໜງການ ລບຕ, ໃຫ້ເປັນເອກະສານໄວ້ໃຊ້ ອ້າງອີງເຖິງໃນມາດຕະຖານແຫ່ງຊາດ ແລະ ຖືກນໍາໃຊ້ເຂົ້າໃນການສື່ສານ, ທັງພາຍໃນຕໍ່ພະນັກງານ ແລະ ພາຍນອກຕໍ່ຄູ່ຮ່ວມມື, ຄູ່ຮ່ວມງານ ແລະ ຜູ້ໃຫ້ທຶນ, ວິໄສທັດ, ຄຸນຄ່າ ແລະ ຫຼັກປະຕິບັດຕ່າງໆດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ NRA ສູ້ສົນ.

**ຂໍ້ແນະນໍາຈາກຍຸດທະສາດ ແລະ ມາດຕະຖານຕ່າງໆ:**

• ຊີ້ແຈງເຖິງເປົ້າໝາຍຂອງບົດບາດຍິງຊາຍ ແລະ ການຊ່ວຍເຫຼືອເພື່ອຍົກສູງປະສິດທິພາບໃນ ແຜນວຽກປະຈໍາປີຂອງຍຸດທະສາດສາກົນວ່າດ້ວຍ "ແຜນທິດທາງຄວາມປອດໄພຕໍ່ໜ້າໄລຍະທີ II." ຍຸດທະສາດດັ່ງກ່າວຈະຕ້ອງປະກອບມີ ຄວາມເປັນມາບາງສ່ວນກ່ຽວກັບບັນຫາດ້ານບົດບາດຍິງຊາຍຂັ້ນພື້ນຖານ ທີ່ກ່ຽວຂ້ອງກັບແຜນງານ, ເຊັ່ນ:

o ທີ່ກ່ຽວຂ້ອງກັບນິຕິກໍາແຫ່ງຊາດວ່າດ້ວຍຄວາມສະເໝີພາບຍິງຊາຍ

o ຜູ້ປະສົບໄພ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ ແລະ ຜູ້ໄດ້ຮັບຜົນປະໂຫຍດຈາກການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຖືກນໍາສະເໜີຕາມກຸ່ມເພດ, ອາຍຸ, ກຸ່ມຊົນເຜົ່າ

o ມີການອ້າງອີງເຖິງຄວາມຈໍາເປັນໃນການສະໜອງການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນລັກສະນະທີ່ ຄໍານຶງເຖິງບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ. ຈະຕ້ອງມີການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃຫ້ແກ່ບັນດາແຂວງ ທີ່ມີການດໍາເນີນແຜນງານ ລບຕ, ເພື່ອກວດຫາ ແລະ ແກ້ໄຂທຸກບັນຫາທີ່ແຕ່ລະກຸ່ມໃນຊຸມຊົນມີ (ແມ່ນໃຜເຮັດຫຍັງແດ່), ຮູບແບບການເຄື່ອນໄຫວທີ່ແຕກຕ່າງ (ພື້ນທີ່ໃດແດ່ທີ່ພວກເຂົາເຄື່ອນຍ້າຍເຂົ້າໄປ), ການເຂົ້າເຖິງ ແລະ ການນໍາໃຊ້ຊັບພະຍາກອນ (ແມ່ນໃຜຖືຄອງ/ນໍາໃຊ້ເນື້ອທີ່ດິນ), ການມີສ່ວນຮ່ວມເຂົ້າໃນວຽກງານລວບລວມຂໍ້ມູນ/ການກໍານົດບຸລິມະສິດ (ທັງຊາຍ ແລະ ຍິງໄດ້ເຂົ້າຮ່ວມ ແລະ ໄດ້ປະກອບຄໍາເຫັນໃນກອງປະຊຸມຂັ້ນບ້ານ ຫຼື ບໍ່), ລະດັບຄວາມຮູ້ໜັງສື/ການສຶກສາ (ຕ້ອງນໍາໃຊ້ພາສາ/ສື່ການຮຽນການສອນໃດ ເຂົ້າໃນວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ), ຄວາມຕ້ອງການຂອງຜູ້ລອດຊີວິດຍິງ ແລະ ຊາຍ ແລະ ຄອບຄົວຂອງພວກເຂົາ.

o ຍຸດທະສາດອັນສະເພາະ ຈະຕ້ອງຖືກນໍາເອົາມາຈັດຕັ້ງປະຕິບັດ ເພື່ອຮັບປະກັນໃຫ້ ແມ່ຍິງ ແລະ ຊົນກຸ່ມນ້ອຍຕ່າງໆ ຖືກລວມເຂົ້າໃນກອງປະຊຸມລວບລວມຂໍ້ມູນ ແລະ ກໍານົດບຸລິມະສິດ, ແລະ ຮັບປະກັນໃຫ້ສຽງຂອງພວກເຂົາຖືກຮັບຟັງ. ຍົກຕົວຢ່າງ, ຈະຕ້ອງມີການອ້າງອີງເປັນພິເສດເຖິງຄວາມຈໍາເປັນໃນການກໍານົດໃຫ້ ທີມສໍາຫຼວດເປັນທີມງານແບບປະສົມ ແລະ ມີຄວາມສາມາດທາງດ້ານພາສາອັນຈໍາເປັນ ເພື່ອໃຫ້ສາມາດສື່ສານກັບຄົນໄດ້ທຸກກຸ່ມໃນຂັ້ນຊຸມຊົນ.

• ນະໂຍບາຍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍສໍາລັບຂະແໜງການ ລບຕ ອາດກາຍເປັນເອກະສານອ້າງອີງທີ່ມີຄຸນຄ່າຫຼາຍສໍາລັບຍຸດທະສາດດັ່ງກ່າວ ພ້ອມທັງທຸກມາດຕະຖານການເກັບກູ້ລະເບີດແຫ່ງຊາດທີ່ກ່ຽວຂ້ອງ. ນະໂຍບາຍດັ່ງກ່າວອາດຕໍ່ຍອດມາຈາກ ຂໍ້ຊີ້ນໍາດ້ານບົດບາດຍິງຊາຍຂອງ ອົງການ ສປຊ ສໍາລັບແຜນງານການເກັບກູ້ລະເບີດ ແລະ ໄດ້ຮັບການອອກແບບໃຫ້ແທດເໝາະກັບສະພາບການຂອງ ສປປ ລາວ. GMAP ແມ່ນພ້ອມແລ້ວທີ່ຈະໃຫ້ຄໍາປຶກສາ ແລະ ມີສ່ວນຮ່ວມເຂົ້າໃນຂັ້ນຕອນການຮ່າງນະໂຍບາຍ, ຖ້າຈໍາເປັນ.

• ອີກບັນຫາສໍາຄັນອັນໜຶ່ງແມ່ນການ ໂຮມເອົາທຸກຕົ້ນທຶນ ທີ່ອາດເກີດຂຶ້ນຈາກວຽກງານການເຊື່ອມສານບົດບາດຍິງຊາຍພາຍໃນ ແລະ ເຂົ້າໃນປະຕິບັດການຕ່າງໆຕາມງົບປະມານ ແລະ ຂໍ້ສະເໜີຂອງຜູ້ໃຫ້ທຶນ. ຜູ້ໃຫ້ທຶນທີ່ມີຄວາມມຸ້ງໝັ້ນສົ່ງເສີມຄວາມສະເໝີພາບຍິງຊາຍ ຈະຕ້ອງບໍ່ໃສ່ໂທດຕໍ່ຄ່າໃຊ້ຈ່າຍທີ່ເກີນມາ.

**ການປະເມີນບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຂອງ ອົງການ ສປຊ ເພື່ອແມ່ຍິງ / ສູນກາງສະຫະພັນແມ່ຍິງລາວ ໃນປີ 2018**

6.1.1 ອີງຕາມມາດຕະຖານແຫ່ງຊາດ ແລະ ກົດໝາຍຄວາມສະເໝີພາບຍິງຊາຍທີ່ຈະຖືກສ້າງຂຶ້ນ, ແລະ ດ້ວຍການຊ່ວຍເຫຼືອຈາກ LWU, NRA/ໂຄງການ UXO Lao ເພື່ອສ້າງນະໂຍບາຍດ້ານບົດບາດຍິງຊາຍ ແລະ ຍຸດທະສາດການເຊື່ອມສານບົດບາດຍິງຊາຍ ສໍາລັບການປະຕິບັດວຽກງານຂອງພວກເຂົາໃນອົງກອນໂດຍສະເພາະ. ສິ່ງນີ້ແນໃສ່ສ້າງຜົນກະທົບທາງບວກຕໍ່ຄວາມສະເໝີພາບຍິງຊາຍໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຈາກປະຕິບັດການ ລບຕ. ອາດມີການກະກຽມຮ່າງ, ແລະ ຈັດກອງປະຊຸມສໍາມະນາຂຶ້ນເພື່ອສະຫຼຸບເນື້ອໃນສຸດທ້າຍ. ຮ່າງສະບັບສຸດທ້າຍອາດຖືກນໍາມາເຜີຍແຜ່ກັບອົງການຈັດຕັ້ງ ລບຕ ອື່ນໆເພື່ອສົ່ງເສີມຫຼັກປະຕິບັດທີ່ດີ.

6.1.2 ອອກແບບ ແລະ ຈັດຕັ້ງປະຕິບັດ ນະໂຍບາຍຊັບພະຍາກອນມະນຸດກ່ຽວກັບບົດບາດຍິງຊາຍພາຍໃນ NRA ແລະ ໂຄງການ UXO Lao. ສິ່ງນີ້ອາດຊ່ວຍສົ່ງເສີມຄວາມສະເໝີພາບຍິງຊາຍພາຍໃນ NRA ແລະ ໂຄງການ UXO Lao ອັນຈະສົ່ງຜົນເຮັດໃຫ້ເກີດຜົນກະທົບທາງບວກດ້ານຄວາມສະເໝີພາບຍິງຊາຍ ຕໍ່ຜູ້ໄດ້ຮັບຜົນປະໂຫຍດຈາກວຽກງານຂອງ NRA ແລະ ໂຄງການ UXO Lao. ສິ່ງນີ້ອາດກວມເອົາ:

6.1.3 ອອກແບບ ແລະ ຮັບຮອງເອົາ ຂໍ້ຊີ້ນໍາກ່ຽວກັບລະບຽບຂັ້ນຕອນການພັດທະນາຊັບພະຍາກອນມະນຸດທີ່ຄໍານຶງເຖິງບົດບາດຍິງຊາຍ ໃຫ້ແກ່ NRA ແລະ ໂຄງການ UXO Lao, ລວມທັງໜ້າທີ່ຮັບຜິດຊອບໃນການເຊື່ອມສານບົດບາດຍິງຊາຍເຂົ້າໃນ ຄໍາອະທິບາຍວຽກຂອງພະນັກງານໃນຕໍາແໜ່ງວິຊາການ, ຄຸ້ມຄອງ ແລະ ໂຄງການ, ແລະ ແຜນການ: ອາດມີການກະກຽມຮ່າງ, ແລະ ຈັດກອງປະຊຸມຂຶ້ນເພື່ອສະຫຼຸບຮ່າງສະບັບສຸດທ້າຍ;

6.1.4 ສ້າງຄາດໝາຍໃນການບັນລຸຄວາມດຸ່ນດ່ຽງລະຫວ່າງຍິງຊາຍ ພາຍໃນ NRA ແລະ ໂຄງການ UXO Lao ພາຍໃນຂອບເຂດເວລາທີ່ກໍານົດໃນທຸກລະດັບ, ໂດຍສະເພາະໃນລະດັບຕັດສິນໃຈ. ສິ່ງນີ້ອາດລວມມີ ການເສີມຂະຫຍາຍຈໍານວນຂອງທີມງານແມ່ຍິງທັງໝົດ ແລະ ເພີ່ມຈໍານວນແມ່ຍິງໃນທີມປະສົມ ເພື່ອປະຕິບັດວຽກງານເກັບກູ້ລະເບີດ ແລະ ການສໍາຫຼວດແບບບໍ່ແມ່ນວິຊາການ;

6.1.5 ຮັບຮອງເອົາມາດຕະການສົ່ງເສີມ ຄວາມດຸ່ນດ່ຽງລະຫວ່າງການໃຊ້ຊີວິດ-ການເຮັດວຽກ ແລະ ການປ້ອງກັນການລ່ວງລະເມີດທາງເພດ;

6.1.6 ສະໜອງ ການຝຶກອົບຮົມຄວາມເປັນຜູ້ນໍາ ໃຫ້ແກ່ທັງຊາຍ ແລະ ຍິງ ໃນລັກສະນະທີ່ມີຈໍານວນຜູ້ເຂົ້າຮ່ວມຍິງຫຼາຍກວ່າຊາຍ, ຍົກຕົວຢ່າງ: 80 ສ່ວນຮ້ອຍແມ່ນແມ່ຍິງ ແລະ 20 ສ່ວນຮ້ອຍແມ່ນຜູ້ຊາຍ. ສິ່ງນີ້ຈະເຮັດໃຫ້ແມ່ຍິງໄດ້ຮູ້ວ່າພວກເຂົາບໍ່ຄ່ອຍມີໂອກາດມີສ່ວນຮ່ວມເຂົ້າໃນຂັ້ນຕອນການຕັດສິນໃຈ, ໃນຂະນະດຽວກັນກໍ່ໃຫ້ໂອກາດຜູ້ຊາຍໄປນໍາ. ການຝຶກອົບຮົມໃນລັກສະນະນີ້ຍັງຈະຊ່ວຍໃຫ້ແມ່ຍິງ ແລະ ຜູ້ຊາຍເຂົ້າໃຈຂໍ້ຈໍາກັດຂອງກັນ ແລະ ກັນ.

6.1.7 ຝຶກສອນພະນັກງານຍິງໃນ NRA ແລະ ໂຄງການ UXO Lao ກ່ອນ ແລະ ຫຼັງໄດ້ຮັບແຕ່ງຕັ້ງເຂົ້າໃນຕໍາແໜ່ງຂັ້ນຕັດສິນໃຈ ເພື່ອຮັບປະກັນໃຫ້ພວກເຂົາສາມາດປະສົບຜົນສໍາເລັດໃນໜ້າທີ່ວຽກງານໄດ້.

### 2. ການປະສານງານ

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການ ສປຊ ເພື່ອແມ່ຍິງ / LWU ໃນປີ 2018**

6.5 ການກຽມຄວາມພ້ອມໃຫ້ແກ່ສະຖາບັນ ເພື່ອເສີມສ້າງວຽກງານເຊື່ອມສານບົດບາດຍິງຊາຍເຂົ້າໃນຂະແໜງການ ລບຕ

6.5.1 ສ້າງເຄືອຂ່າຍບົດບາດຍິງຊາຍໃນກຸ່ມໜ່ວຍງານປະຕິບັດການເກັບກູ້ ລບຕ ເພື່ອສະໜັບສະໜຸນຂໍ້ແນະນໍາຂ້າງເທິງນີ້, ເພື່ອເປັນການເຜີຍແຜ່ຫຼັກປະຕິບັດທີ່ດີ ແລະ ການຈັດຕັ້ງປະຕິບັດຍຸດທະສາດເຊື່ອມສານບົດບາດຍິງຊາຍ ໃນທົ່ວທັງຂະແໜງການ ລບຕ. ທາງເລືອກໜຶ່ງອາດໝາຍເຖິງການສ້າງຕັ້ງກຸ່ມວິຊາການເພື່ອປະສານງານດ້ານບົດບາດຍິງຊາຍຂຶ້ນໂດຍ NRA ແລະ ໜຶ່ງໃນບົດບາດຂອງກຸ່ມດັ່ງກ່າວ ແມ່ນການສະໜັບສະໜຸນຂັ້ນຕອນການເຊື່ອມສານບົດບາດຍິງຊາຍ ເຂົ້າໃນກຸ່ມວິຊາການອື່ນໆທີ່ປະຕິບັດວຽກງານເກັບກູ້ລະເບີດ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ໄດ້ຮັບການສະໜັບສະໜຸນຢ່າງເຂັ້ມແຂງຈາກຜູ້ຖືກສໍາພາດສ່ວນໃຫຍ່ ແລະ ຜູ້ເຂົ້າຮ່ວມກອງປະຊຸມສໍາມະນາ ທີ່ທີ່ປຶກສາໄດ້ພົບປະນໍາເພື່ອສ້າງເຄືອຂ່າຍຮ່ວມກັນ.

ຖ້າມີການເຫັນດີຮ່ວມກັນແລ້ວວ່າ ສິ່ງນີ້ອາດຊ່ວຍເລັ່ງລັດຂະບວນການເຊື່ອມສານບົດບາດຍິງຊາຍ, ຈະຕ້ອງໄດ້ມີການຕັດສິນໃຈກ່ຽວກັບວ່າແມ່ນໃຜແດ່ ທີ່ຈະເຂົ້າມາເປັນສະມາຊິກ (ຜູ້ຊາຍ ແລະ ແມ່ຍິງຈາກແຕ່ລະໜ່ວຍງານປະຕິບັດການ, LWU, ອໍານາດການປົກຄອງໃນຂັ້ນຕ່າງໆ, ແລະ ອື່ນໆ), ອົງກອນໃດທີ່ອາດຊ່ວຍນໍາພາ/ເປັນປະທານໃຫ້ແກ່ເຄືອຂ່າຍນີ້ໄດ້ (NRA ຫຼື ອາດໝູນວຽນກັນພາຍໃນ), ພ້ອມທັງຮ່າງ ແລະ ຮັບຮອງເອົາຂອບໜ້າວຽກ ແລະ ຄວາມຮັບຜິດຊອບອັນຊັດເຈນ.

### 3. ຂໍ້ມູນ ແລະ ການປະຕິບັດງານ

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008**

**ໄດ້ມີການສົ່ງຂໍ້ແນະນໍາຫຼາຍອັນຄືນໃຫ້ NRA ພິຈາລະນາດັ່ງຕໍ່ໄປນີ້:**

• ບັນດານະໂຍບາຍ ແລະ ແຜນພັດທະນາທີ່ລັດຖະບານລາວ ມີຢູ່ແລ້ວ ຈະຕ້ອງຖືກນໍາໃຊ້ເປັນພື້ນຖານໃຫ້ແກ່ການທົບທວນຄືນ ຍຸດທະສາດ ລບຕ ແຫ່ງຊາດ ແລະ ຮ່າງມາດຕະຖານອື່ນໆ

• ໂຕຊີ້ວັດດ້ານບົດບາດຍິງຊາຍຈະຕ້ອງຖືກລວມເຂົ້າໄວ້ໃນຍຸດທະສາດ ລບຕ ສໍາລັບຂະແໜງການ

• ແປ ແລະ ເຜີຍແຜ່ຂໍ້ແນະນພດ້ານບົດບາດຍິງຊາຍຂອງ ອົງການ ສປຊ. ຂໍ້ແນະນໍາດັ່ງກ່າວອາດໄດ້ຮັບການເຜີຍແຜ່ຜ່ານກອງປະຊຸມສໍາມະນາຕ່າງໆ (ໄດ້ຮັບການຈັດຕັ້ງປະຕິບັດແລ້ວ)

• ຮັບປະກັນໃຫ້ໜ່ວຍປະຕິບັດງານ ແລະ ທີມງານຄຸ້ມຄອງຂອງພວກເຂົາ ມີຄວາມຮັບຜິດຊອບຕໍ່ການສ້າງ ແລະ ການບັນລຸເປົ້າໝາຍທີ່ກ່ຽວຂ້ອງກັບບົດບາດຍິງຊາຍ

• ຂໍ້ແນະນໍາດ້ານບົດບາດຍິງຊາຍຂອງ ຄະນະກໍາມາທິການເອີຣົບ ໄດ້ຊ່ວຍສະໜອງຂໍ້ແນະນໍາອັນມີປະໂຫຍດ ເຂົ້າໃນການທົບທວນຄືນບັນດາຍຸດທະສາດ, ມາດຕະຖານ ແລະ ຫຼັກປະຕິບັດທີ່ມີຢູ່ແລ້ວ. ດັ່ງທີ່ໄດ້ນໍາໃຊ້ກັບ NRA, ຂໍ້ແນະນໍາເຫຼົ່ານີ້ປະກອບມີ:

o ການຮຽກຮ້ອງໃຫ້ໜ່ວຍປະຕິບັດງານຕ່າງໆ ສະໜອງຂໍ້ມູນສະຖິຕິໂດຍແບ່ງເປັນກຸ່ມເພດ ໄປພ້ອມໆກັບຂໍ້ມູນດ້ານຄຸນນະພາບກ່ຽວກັບສະຖານະການຂອງແມ່ຍິງ

ແລະ ຜູ້ຊາຍສຳລັບກຸ່ມປະຊາກອນເປົ້າໝາຍ;

o ການທົບທວນຄືນຂໍ້ສະເໜີ ແລະ ບົດລາຍງານ ເພື່ອຮັບປະກັນໃຫ້ມີການຄຳນຶງເຖິງຂໍ້ພິຈາລະນາດ້ານບົດບາດຍິງຊາຍ; ການລວມເອົາລະບົບການຕິດຕາມກວດກາ ແລະ ປະເມີນບົດບາດຍິງຊາຍເຂົ້ານຳ;

o ການສືບຕໍ່ສົ່ງເສີມການມີສ່ວນຮ່ວມຂອງຜູ້ໃຫ້ທຶນ ແລະ ໜ່ວຍປະຕິບັດງານເຂົ້າໃນການສົນທະນາຢ່າງຕໍ່ເນື່ອງ ເພື່ອຮັບປະກັນໃຫ້ມີການໂຮມເອົາບົດບາດຍິງຊາຍ ເຂົ້າໃນການດຳເນີນວຽກງານ ລບຕ.

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ GMAP ໃນປີ 2014**

**ຂໍ້ແນະນຳດ້ານການຄຸ້ມຄອງຂໍ້ມູນ:**

- ໃນ ສປປ ລາວ, ໜ່ວຍປະຕິບັດງານທັງໝົດ ຈະຕ້ອງເກັບກຳເອົາຂໍ້ມູນທີ່ຈຳເປັນ ໃນລັກສະນະທີ່ແບ່ງອອກເປັນກຸ່ມເພດ ແລະ ອາຍຸ ແລະ ສົ່ງຕໍ່ໃຫ້ NRA ໂດຍຜ່ານ IMSMA ໃຫ້ທັນຕາມກຳນົດເວລາ. ຕໍ່ມາຂໍ້ມູນດັ່ງກ່າວກໍ່ຈະຖືກນຳມາວິເຄາະພາຍໃຕ້ມູມມອງດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ, ແລະ ຈະຕ້ອງສ້າງບົດລາຍງານຂຶ້ນເພື່ອປະກອບເປັນຂໍ້ມູນເຂົ້າໃນການກຳນົດແຜນງານ.
- ໂຕຊີ້ວັດດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຈະຕ້ອງໄດ້ຮັບການລະບຸໂດຍແຕ່ລະຫົວໜ່ວຍຂອງ NRA ໃຫ້ຄອບຄຸມຂະແໜງການ ລບຕ ທັງໝົດ. ຈະຕ້ອງມີການສື່ສານກັບ ຫົວໜ່ວຍຄຸ້ມຄອງຂໍ້ມູນ ເພື່ອຮ້ອງຂໍຂໍ້ມູນທີ່ຈຳເປັນໃນການວັດແທກໂຕຊີ້ວັດເຫຼົ່ານັ້ນ ລວມໄປເຖິງຕິດຕາມກວດກາຄວາມຄືບໜ້າຕ່າງໆ, ເພື່ອປະກັນໃຫ້ມີການກະກຽມຂໍ້ມູນດັ່ງກ່າວນັ້ນໄວ້ພ້ອມ.

ຂໍ້ແນະນຳດ້ານການຄຸ້ມຄອງຄຸນນະພາບ / ການຕິດຕາມກວດກາ & ການປະເມີນຜົນ:

- ທັນທີທີ່ເລີ່ມດຳເນີນວຽກງານຄຸ້ມຄອງຄຸນນະພາບໃຫ້ແກ່ການສຳຫຼວດແບບບໍ່ແມ່ນວິຊາການແລ້ວ, ຊຸດຄຳຖາມກ່ຽວກັບວິທີໃນການເຂົ້າເຖິງແຫຼ່ງຂໍ້ມູນຕ່າງໆ (ແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍ) ຈະຕ້ອງຖືກລວມເຂົ້ານຳ
- GMAP ໄດ້ສະໜອງຂໍ້ແນະນຳ/ຄຳເຫັນໃນການຮັບປະກັນໃຫ້ຮູບແບບຂອງ MOU ຮ່ວມກັບ NGO ທີ່ອອກໃຫ້ໂດຍ ກະຊວງການຕ່າງປະເທດນັ້ນ ມີການຄຳນຶງເຖິງບົດບາດຍິງຊາຍເຂົ້ານຳ (ເບິ່ງຕື່ມ ພາກເອກະສານຊ້ອນທ້າຍທີ 2). ຖ້າໄດ້ຮັບການເຫັນດີກັບບັນດາຜູ້ບໍລິຫານຂອງ NRA ແລ້ວ, ກໍ່ຈະມີການລວມເອົາຫົວຂໍ້ນີ້ເຂົ້າໃນວາລະຂອງກອງປະຊຸມຄະນະບໍລິຫານງານຂອງ NRA ທີ່ຈະຖືກຈັດຂຶ້ນໃນເດືອນມັງກອນປີ 2025 (ເບິ່ງຕື່ມ ແຜນການດຳເນີນງານໃນ ພາກເອກະສານຊ້ອນທ້າຍທີ 3)
- ໃນລະຫວ່າງຂັ້ນຕອນການຮັບຮອງເອົາໜ່ວຍປະຕິບັດງານ, SWP/SOP ທີ່ກ່ຽວຂ້ອງກັບຊັບພະຍາກອນມະນຸດ ແລະ ລະບຽບການປະຕິບັດງານ ຈະຕ້ອງໄດ້ຮັບການກວດສອບ ເພື່ອຮັບປະກັນຄວາມສອດຄ່ອງກັບກົດໝາຍແຮງງານແຫ່ງຊາດ, ແລະ ໃຫ້ມີການຄຳນຶງເຖິງບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້ານຳ

## 4. ການຈັດສັນພະນັກງານ

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008**

4.5. ພະນັກງານເກັບກູ້ລະເບີດ, ໂອກາດດ້ານການຈ້າງງານ ແລະ ບົດບາດຍິງຊາຍ

4.5.1 ໜ່ວຍປະຕິບັດງານຈະຕ້ອງສ້າງຍຸດທະສາດໄລຍະຍາວເພື່ອ ຝຶກອົບຮົມ ແລະ ສົ່ງເສີມ (ບົນພື້ນຖານຄວາມເປັນຈິງ) ພະນັກງານຍິງ ເຂົ້າໃນບົດບາດການນຳພາ ແລະ ການຄຸ້ມຄອງ.

4.5.2 ອົງກອນຕ່າງໆຈະຕ້ອງລວມເອົາປະໂຫຍກນີ້ເຂົ້ານຳ: "ຊຸກຍູ້ໃຫ້ແມ່ຍິງສະໝັກຕຳແໜ່ງນີ້," ໃນທຸກໆການໂຄສະນາວຽກ ບໍ່ວ່າຈະແມ່ນຕຳແໜ່ງໃດກໍ່ຕາມ ແລະ ຜ່ານຊ່ອງທາງສື່ໂຄສະນາທີ່ຫຼາກຫຼາຍ, ໂດຍສະເພາະວິທະຍຸ. ເງື່ອນໄຂການຄັດເລືອກຈະຕ້ອງບໍ່ຖືກຳນົດໃຫ້ແຄບຈົນເກີນໄປ ເຊິ່ງອາດເປັນການກີດກັນຜູ້ສະໝັກຍິງ.

4.5.3 ອົງກອນຕ່າງໆຈະຕ້ອງຮັບປະກັນໃຫ້ ມີທັງແມ່ຍິງ ແລະ ຜູ້ຊາຍຢູ່ໃນຄະນະສຳພາດ - ຖ້າໃນອົງກອນນັ້ນບໍ່ມີແມ່ຍິງຄົນໃດພ້ອມປະຕິບັດໜ້າທີ່ນີ້, ກໍ່ໃຫ້ປະສານກັບອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງ, ເຊັ່ນ: LWU ຫຼື ຄູ່ຮ່ວມພັດທະນາຕ່າງໆ ເພື່ອສົ່ງໂຕແທນມາເຂົ້າຮ່ວມຂັ້ນຕອນການສຳພາດນີ້. ການມີແມ່ຍິງໃນຄະນະສຳພາດນັ້ນ ຈະຊ່ວຍໃຫ້ຜູ້ຖືກສຳພາດຍິງມີຄວາມໝັ້ນໃຈ ທັງຍັງຊ່ວຍໃຫ້ພວກເຂົາສາມາດສະແດງທ່າແຮງຂອງຕົນອອກມາໄດ້ຢ່າງເຕັມທີ່.

4.5.4 NRA ຈະຕ້ອງສ້າງຖານຂໍ້ມູນຂອງພະນັກງານເກັບກູ້ລະເບີດຍິງ ແລະ ຊາຍໃນ ສປປ ລາວ ທີ່ໄດ້ຮັບການຝຶກອົບຮົມ ເຊິ່ງຕ້ອງປະກອບມີ: ພະນັກງານເກັບກູ້ລະເບີດ, ສຳຫຼວດ, ປະສານງານຊຸມຊົນ, ໃຫ້ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ / ສ້າງຄວາມຕື່ນໂຕໃນຊຸມຊົນ. ສິ່ງນີ້ຍັງຈະຊ່ວຍໃຫ້ແມ່ຍິງທີ່ລາພັກເກີດລູກ ສາມາດກັບຄືນເຂົ້າວຽກໄດ້ໃນພາຍຫຼັງ.

4.5.5 ໜ່ວຍປະຕິບັດງານຈະຕ້ອງໄດ້ດຳເນີນການຕິດຕາມກວດກາແບບຟອມສະໝັກວຽກ, ການຄັດເລືອກ ແລະ ການຮັບເອົາບຸກຄະລາກອນໂດຍຮັບປະກັນຄວາມສະເໝີພາບຍິງຊາຍ. ສິ່ງນີ້ຈະຊ່ວຍໃຫ້ໜ່ວຍປະຕິບັດການຕ່າງໆ ສາມາດເຂົ້າເຖິງກຳລັງແຮງງານທັງຊາຍ ແລະ ຍິງໄດ້ຢ່າງເທົ່າທຽມກັນ.

4.4.6 ໜ່ວຍປະຕິບັດງານຈະຕ້ອງ ຕິດຕາມກວດກາຂະບວນການຮັກສາ ພະນັກງານຍິງ/ຊາຍ ແລະ ດຳເນີນ ການສຳພາດອອກວຽກ ເພື່ອຫາສາເຫດວ່າຍ້ອນຫຍັງພວກເຂົາຈຶ່ງອອກວຽກ. ສິ່ງນີ້ຈະຊ່ວຍໃຫ້ສາມາດເຂົ້າໃຈໄດ້ວ່າຈະຮັກສາພະນັກງານໄວ້ນຳອົງກອນຄືແນວໃດ ທັງຍັງຊ່ວຍໃຫ້ໜ່ວຍປະຕິບັດການນັ້ນ ຄົ້ນຫາວິທີແກ້ໄຂບັນຫາທີ່ມີຢູ່ໄດ້.

4.5.7 ໜ່ວຍປະຕິບັດການຈະຕ້ອງມີນະໂຍບາຍລາພັກວຽກ ເພື່ອໃຫ້ແມ່ຍິງ/ຜູ້ຊາຍສາມາດ ຂໍລາພັກເພື່ອໄປລ້ຽງລູກນ້ອຍ ລວມໄປເຖິງນະໂຍບາຍລາພັກເກີດລູກສຳລັບແມ່/ລາພັກເບິ່ງແຍງລູກສຳລັບທັງພໍ່ ແລະ ແມ່.

4.5.8 ໜ່ວຍປະຕິບັດການຈະຕ້ອງສະໜອງ ຫ້ອງນອນ/ຫ້ອງອາບນ້ຳໃຫ້ແກ່ພະນັກງານແບບແຍກຊາຍຍິງ, ເທົ່າທີ່ເຮັດໄດ້ໃນແຕ່ລະພື້ນທີ່.

4.5.9 ໜ່ວຍປະຕິບັດງານຈະຕ້ອງເຜີຍແຜ່ຂໍ້ມູນຂ່າວສານກ່ຽວກັບ ລະບຽບຂັ້ນຕອນການປະຕິບັດງານທີ່ກ່ຽວຂ້ອງກັບ ການລາຍງານການລ່ວງລະເມີດ - ຊ່ອງທາງການສື່ສານຕ່າງໆ ຈະຕ້ອງໄດ້ຮັບການກຳນົດຂຶ້ນຢ່າງຊັດເຈນລວມໄປເຖິງແຜນການດຳເນີນງານຕ່າງໆ. ສິ່ງສຳຄັນແມ່ນຕ້ອງຮັບປະກັນໃຫ້ພະນັກງານຍິງສາມາດລາຍບັນຫາຕໍ່ແມ່ຍິງດ້ວຍກັນເອງໄດ້. ແມ່ຍິງມີແນວໂນ້ມທີ່ຈະລາຍງານບັນຫາການລ່ວງລະເມີດຈາກຜູ້ຊາຍ ຕໍ່ແມ່ຍິງດ້ວຍກັນເອງຫຼາຍກວ່າຕໍ່ຜູ້ຊາຍ.

ເພື່ອໃຫ້ທົ່ວທັງຂະແໜງການດັ່ງກ່າວ ສາມາດປະກອບສ່ວນເຂົ້າໃນການລຶບລ້າງຄວາມທຸກຍາກ ແລະ ບັນລຸເປົ້າໝາຍການພັດທະນາຕ່າງໆໄດ້ຢ່າງມີຄວາມໝາຍຄວາມສຳຄັນນັ້ນ, ສິ່ງສຳຄັນແມ່ນຕ້ອງຮັບປະກັນໃຫ້ NRA ເປັນຜູ້ນຳພາດຳເນີນບາດກ້າວສຳຄັນ ໃນການເຊື່ອມສານບົດບາດຍິງຊາຍເຂົ້າໃນວຽກງານ ລບຕ ໃນທົ່ວທັງຂະແໜງການ. ຂໍ້ແນະນຳຂອງບົດລາຍງານສະບັບນີ້ຊ່ວຍສະໜອງທິດທາງຕໍ່ໜ້າທີ່ປະຕິບັດໄດ້ຈິງ.

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ GMAP ໃນປີ 2014**

ຂໍ້ແນະນຳດ້ານການຮັບເອົາພະນັກງານ ແລະ ການຝຶກອົບຮົມ

ທຸກອົງກອນຈະຕ້ອງຮັບປະກັນໃຫ້ສະພາບການເຮັດວຽກນັ້ນມີຄວາມເໝາະສົມຕໍ່ແມ່ຍິງ ແລະ ຄົນພິການ. ຍົກຕົວຢ່າງ: ມີການຊຸກຍູ້ຄົນພິການໃຫ້ສະໝັກຕຳແໜ່ງຫວ່າງ, ແຕ່ຫ້ອງການຕ່າງໆຂອງ NRA ນັ້ນ, ລວມໄປເຖິງຂອງໜ່ວຍປະຕິບັດການສ່ວນໃຫຍ່, ພັດເຂົ້າເຖິງໄດ້ຍາກ ແລະ ບໍ່ມີສິ່ງອຳນວຍຄວາມສະດວກໃຫ້ແກ່ຄົນພິການເລີຍ. ຈະຕ້ອງແຈ້ງສະພາບການເຮັດວຽກ ແລະ ການເຂົ້າເຖິງອາຄານຕ່າງໆໃຫ້ແກ່ຄົນພິການຊາບໃນເວລາໂຄສະນາ ເພື່ອໃຫ້ພວກເຂົາພິຈາລະນາວ່າຈະສະໝັກຕຳແໜ່ງໃນຂະແໜງການ ລບຕ ຫຼື ບໍ່.

ໜ່ວຍປະຕິບັດການຕ່າງໆຈະຕ້ອງໄດ້ຮັບມືກັບບັນຫາທ້າທາຍ ທີ່ລະບຸໄວ້ກ່ຽວກັບຂັ້ນຕອນການຮັບເອົາພະນັກງານ ແລະ ການເລື່ອນຕຳແໜ່ງໃຫ້ແກ່ພະນັກງານຍິງໃນຕຳແໜ່ງວຽກຂັ້ນປະຕິບັດງານພາກສະໜາມ ໂດຍຄຳນຶງເຖິງສະພາບການ ແລະ ພາຍໃຕ້ວິທີທາງອັນສະເພາະ ແລະ ອາດມີວິທີແກ້ໄຂບັນຫາທີ່ແຕກຕ່າງກັນໃນແຕ່ລະແຂວງ. ການມີພະນັກງານຍິງຊາຍທີ່ດຸ່ນດ່ຽງໃນທຸກຕຳແໜ່ງວຽກແມ່ນສິ່ງທີ່ສຳຄັນຫຼາຍ, ໂດຍສະເພາະທີມງານສຳຫຼວດ, ຍ້ອນການມີແມ່ຍິງໃນທີມດັ່ງກ່າວ ຈະຊ່ວຍຊຸກຍູ້ໃຫ້ແມ່ຍິງທີ່ໄດ້ຮັບຜົນກະທົບກ້າອອກໜ້າ ແລະ ລາຍງານບັນຫາລະເບີດຕົກຄ້າງ, ຜົນກະທົບ, ການນຳໃຊ້ເນື້ອທີ່ດິນ ແລະ ທີ່ກ່ຽວຂ້ອງກັບ KAP ຫຼາຍຂຶ້ນ. ສິ່ງນີ້ແມ່ນມີຄວາມສຳຄັນເປັນພິເສດໃນລາວ, ຍ້ອນການສຳຫຼວດແບບບໍ່ແມ່ນວິຊາການ, ການປະເມີນຜົນກະທົບ ແລະ ຂໍ້ມູນດ້ານ KAP ນັ້ນແມ່ນໄດ້ຮັບການລວບລວມໃນຄັ້ງດຽວກັນ. ເຖິງແມ່ນວ່າຈະສາມາດພົບເຫັນແມ່ຍິງ ທີ່ຄົບຄຸນສົມບັດຕາມທີ່ຕ້ອງການໃນເຂດຕົວເມືອງ ໄດ້ຫຼາຍກວ່າຢ່າງຊັດເຈນກໍ່ຕາມ, ພວກເຂົາພັດບໍ່ຄ່ອຍສົນໃຈທີ່ຈະເຮັດວຽກພາກສະໜາມເລີຍ. ອາດຈຳເປັນຕ້ອງໄດ້ດຳເນີນຂັ້ນຕອນການຮັບເອົາພະນັກງານແບບເລັງເປົ້າຊັດເຈນ ແລະ ໂຄສະນາຕຳແໜ່ງຫວ່າງໃນລັກສະນະທີ່ສາມາດດຶງດູດຄວາມສົນໃຈຂອງແມ່ຍິງກຸ່ມນັ້ນໄດ້, ຍົກຕົວຢ່າງ: ໂດຍຜ່ານການນຳໃຊ້ແມ່ຍິງທີ່ເຮັດວຽກໃນຕຳແໜ່ງທີ່ໃກ້ຄຽງກັນນັ້ນ ມາເຮັດໜ້າທີ່ເປັນແບບຢ່າງ ແລະ ເນັ້ນໜັກໃຫ້ເຫັນເຖິງສິດທິປະໂຫຍດຕ່າງໆທີ່ຈະໄດ້ຮັບຈາກວຽກງານນີ້ ເພື່ອດຶງດູດກຸ່ມແມ່ຍິງເປົ້າໝາຍ (ຍົກຕົວຢ່າງ: ສິດທິປະໂຫຍດດ້ານສາຍອາຊີບ, ເງິນອຸດໜູນເກີດລູກ, ສະພາບການເຮັດວຽກທີ່ມີວາມຍືດຢຸ່ນ, ນະໂຍບາຍການລາພັກເກີດລູກທີ່ດຶງດູດ, ແລະ ອື່ນໆ).

ຂັ້ນຕອນການອົບຮົມຂອງພະນັກງານໃໝ່ຈະຕ້ອງລວມເອົາບັນຫາດ້ານບົດບາດຍິງຊາຍ, ລະບຽບການປະຕິບັດ, ແລະ ຄຳອະທິບາຍກົນໄກການຮ້ອງທຸກ ເຂົ້ານຳ.

**ຂໍ້ແນະນຳດ້ານກົດລະບຽບ ແລະ ນະໂຍບາຍພາຍໃນ**

ທຸກອົງກອນຈະຕ້ອງມີ ລະບຽບການປະຕິບັດ ທີ່ກຳນົດຢ່າງຊັດເຈນວ່າພຶດຕິກຳແບບໃດທີ່ເໝາະສົມກັບເພື່ອນຮ່ວມງານ, ຜູ້ໄດ້ຮັບຜົນປະໂຍດ ແລະ ຄູ່ຮ່ວມມື, ແລະ ພຶດຕິກຳໃດທີ່ອົງກອນບໍ່ຍອມຮັບ, ລວມທັງ ການລ່ວງລະເມີດ, ການກົດຂີ່ ແລະ ຂູດຮີດທາງເພດ. ລະບຽບການປະຕິບັດ ຈະຕ້ອງຖືກສ້າງຂຶ້ນເປັນພາສາລາວໃຫ້ແກ່ພະນັກງານທ້ອງຖິ່ນ ແລະ ພາສາອັງກິດໃຫ້ແກ່ ພະນັກງານຕ່າງປະເທດ ແລະ ພະນັກງານທຸກຄົນຕ້ອງອ່ານ ແລະ ລົງນາມໃນລະບຽບການນີ້ ຮ່ວມກັບສັນຍາແຮງງານ ແລະ ຕ້ອງໄດ້ຮັບການອົບຮົມກ່ຽວກັບລະບຽບການນີ້ ໃນໄລຍະເຂົ້າປະຈຳຕຳແໜ່ງໃໝ່.

ກົນໄກການຮ້ອງທຸກທີ່ປອດໄພ, ປິດລັບ, ໂປ່ງໃສ, ແລະ ເຂົ້າເຖິງໄດ້ ທີ່ກ່ຽວຂ້ອງກັບການລະເມີດ ລະບຽບການປະຕິບັດ ຈະຕ້ອງຖືກສ້າງຕັ້ງຂຶ້ນ, ໂດຍມີຜູ້ຮັບຄຳຮ້ອງທຸກທັງຍິງ ແລະ ຊາຍພາຍໃນກົນໄກດັ່ງກ່າວ. ໄດ້ມີການແນະນຳໃຫ້ດຳເນີນການສຳຫຼວດພະນັກງານແບບບໍ່ລະບຸຊື່ຢ່າງໜ້ອຍ 1 ຄັ້ງຕໍ່ປີ ແລະ ຮັບປະກັນໃຫ້ທຸກບັນຫາທີ່ເກີດຂຶ້ນນັ້ນໄດ້ຮັບການແກ້ໄຂ.

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການ ສປຊ ເພື່ອແມ່ຍິງ / LWU ໃນປີ 2018**

6.2 ເຄື່ອງມື ແລະ ການຝຶກອົບຮົມດ້ານບົດບາດຍິງຊາຍ ທີ່ຖືກດັດປັບໃຫ້ສອດຄ່ອງກັບຂະແໜງການ ລບຕ

6.2.1 ສູນກາງສະຫະພັນແມ່ຍິງລາວ ມີແຜນຮ່ວມມືກັບ NRA ໃນການອອກແບບຊຸດເຄື່ອງມືການເຊື່ອມສານບົດບາດຍິງຊາຍ ເປັນພາສາລາວອັນສະເພາະຕໍ່ຂະແໜງການ ລບຕ. ເຄື່ອງມືເຫຼົ່ານີ້ອາດເນັ້ນໜັກໃສ່ການເຊື່ອມສານບົດບາດຍິງຊາຍເຂົ້າໃນການສຳຫຼວດແບບບໍ່ແມ່ນວິຊາການ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ, ການວາງແຜນເກັບກູ້ເນື້ອທີ່ດິນ, ແລະ ແຜນງານ ແລະ ວຽກງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

6.2.2 ດັດປັບບັນດາສື່ການຮຽນການສອນດ້ານບົດບາດຍິງຊາຍທີ່ມີຢູ່ໃນຂະແໜງການ ລບຕ ໃຫ້ເປັນພາສາລາວຢ່າງເໝາະສົມ, ເຊັ່ນ: ຂໍ້ຊີ້ນຳດ້ານບົດບາດຍິງຊາຍສຳລັບແຜນງານການເກັບກູ້ລະເບີດ.

6.2.3 ສະໜອງ ການຝຶກອົບຮົມຄູຝຶກກ່ຽວກັບເຄື່ອງມືທີ່ຖືກອອກແບບມາສະເພາະ ໃນ ນະຄອນຫຼວງວຽງຈັນ ແລະ ໃນບັນດາແຂວງທີ່ຖືກຄັດເລືອກ, ເພື່ອສະໜອງການຝຶກອົບຮົມດ້ານບົດບາດຍິງຊາຍ ໃຫ້ແກ່ພະນັກງານ ລບຕ ຈຳນວນຫຼາຍໃນພາຍຫຼັງ. ບັນດາຄູຝຶກທີ່ຈະໄດ້ຮັບການຝຶກອົບຮົມນັ້ນ ອາດໄດ້ຮັບການຄັດເລືອກມາຈາກ: LWU, NRA ແລະ ໂຄງການ UXO Lao, ແລະ ຈາກໜ່ວຍປະຕິບັດງານອື່ນໆ ລວມໄປເຖິງບັນດາຜູ້ຊ່ຽວຊານດ້ານບົດບາດຍິງຊາຍໃນ ສປປ ລາວ.

6.2.4 ດຳເນີນ ການຝຶກອົບຮົມດ້ານບົດບາດຍິງຊາຍໃຫ້ແກ່ພະນັກງານຂອງ NRA ແລະ ໂຄງການ UXO Lao ໂດຍບັນດາຄູຝຶກທີ່ໄດ້ຮັບການຝຶກອົບຮົມຈາກແຜນງານທີ່ກ່າວມາຂ້າງເທິງນີ້. ກິດຈະກຳການຝຶກອົບຮົມອາດຖືກດຳເນີນການຮ່ວມກັບໜ່ວຍປະຕິບັດການເກັບກູ້ ລບຕ ອື່ນໆ ເພື່ອເສີມສ້າງຄວາມຮ່ວມມື ແລະ ການຮຽນຮູ້ລະຫວ່າງກັນ.

6.2.5 ເຊື່ອມສານບັນຫາທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ເຂົ້າໃນແຜນງານການຝຶກອົບຮົມທີ່ກຳລັງດຳເນີນການຢູ່ຂອງ NRA ແລະ ໂຄງການ UXO Lao, ເຊັ່ນ: ວຽກງານພາກປະຕິບັດ, ໂດຍສະເພາະທີ່ກ່ຽວຂ້ອງກັບການສຳຫຼວດແບບບໍ່ແມ່ນວິຊາການ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ແລະ ການວາງແຜນເກັບກູ້ເນື້ອທີ່ດິນ.

6.3 ການເຊື່ອມສານບົດບາດຍິງຊາຍເຂົ້າໃນວຽກງານ ລບຕ ແລະ ແຜນການຈັດຕັ້ງປະຕິບັດ

6.3.1 ນຳໃຊ້ ຂໍ້ມູນຕາມກຸ່ມເພດ ຂອງ NRA ທີ່ໄດ້ຮັບການເກັບກຳຜ່ານປະຕິບັດການເກັບກູ້ ລບຕ ເພື່ອມາວິເຄາະບັນຫາທີ່ກ່ຽວຂ້ອງກັບບົດບາດຍິງຊາຍ ແລະ ໂຮມເຂົ້າໄວ້ໃນຂັ້ນຕອນການອອກແບບໂຄງການ ແລະ ການເຄື່ອນໄຫວວຽກຕ່າງໆ.

6.3.2 ລວມເອົາ ໂຕຊີ້ວັດ ແລະ ຄາດໝາຍດ້ານບົດບາດຍິງຊາຍ ເຂົ້າໃນແຜນ ແລະ ຍຸດທະສາດການຈັດຕັ້ງປະຕິບັດຂອງໜ່ວຍປະຕິບັດງານໃນຂະແໜງການ ລບຕ ທີ່ກ່ຽວຂ້ອງກັບຜູ້ໄດ້ຮັບຜົນປະໂຫຍດຈາກການສຳຫຼວດທີ່ບໍ່ແມ່ນວິຊາການ, ບຸລິມະສິດກ່ຽວກັບການເກັບກູ້ເນື້ອທີ່ດິນ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

6.3.2 ຕິດຕາມກວດກາ ແລະ ນຳໃຊ້ຂໍ້ມູນທີ່ເກັບກຳໄດ້ກ່ຽວກັບໂຕຊີ້ວັດດ້ານບົດບາດຍິງຊາຍເຂົ້າໃນ ວຽກງານການລາຍງານ ແລະ ການປະເມີນຜົນປະຈຳປີ.

## 5. ການສື່ສານ

ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ GMAP ໃນປີ 2014

ຂໍ້ແນະນຳດ້ານການສື່ສານ/ການລາຍງານ:

ກິດຈະກຳຍົກສູງຄວາມຕື່ນໂຕໃຫ້ແກ່ປະຊາຊົນ ແລະ ກິດຈະກຳສະໜັບສະໜຸນ

ຮັບປະກັນໃຫ້ທັງແມ່ຍິງ ແລະ ຜູ້ຊາຍມີໜ້າຢູ່ໃນຄະນະກິດຈະກຳຍົກສູງຄວາມຕື່ນໂຕໃຫ້ແກ່ປະຊາຊົນ. ເຊື້ອເຊີນທັງແມ່ຍິງ ແລະ ຜູ້ຊາຍມາເຂົ້າຮ່ວມກິດຈະກຳຍົກສູງຄວາມຕື່ນໂຕ ແລະ ຕິດຕາມຂໍ້ມູນການເຂົ້າຮ່ວມຂອງພວກເຂົາ. ເຊື້ອເຊີນບັນດາອົງການຈັດຕັ້ງກ່ຽວກັບແມ່ຍິງ ແລະ ຜູ້ນຳສາສະໜາມາເຂົ້າຮ່ວມກິດຈະກຳຍົກສູງຄວາມຕື່ນໂຕໃຫ້ແກ່ປະຊາຊົນ ແລະ ກິດຈະກຳສະໜັບສະໜຸນ.

ການຕີພິມ ແລະ ການລາຍງານຂໍ້ມູນພາຍໃນ ແລະ ພາຍນອກ

ຊຸກຍູ້ໃຫ້ໜ່ວຍປະຕິບັດງານຕ່າງໆລາຍງານຂໍ້ມູນສະຖິຕິກ່ຽວກັບຜູ້ໄດ້ຮັບຜົນປະໂຫຍດຕາມກຸ່ມອາຍຸ ແລະ ເພດ ແລະ ສ້າງ ແລະ ຕີພິມກໍລະນີສຶກສາຕ່າງໆຂອງທຸກກຸ່ມອາຍຸ ແລະ ເພດ.

ສື່ການຮຽນການສອນແບບສຽງ ແລະ ແບບພາບ

ຮັບປະກັນໃຫ້ມີການສະແດງພາບຜູ້ເຂົ້າຮ່ວມທີ່ຫ້າວຫັນໃນທຸກກຸ່ມອາຍຸ ແລະ ກຸ່ມເພດຢ່າງເທົ່າທຽມກັນ: ໃນສະຖານທີ່ເຮັດວຽກ (ຊາຍ ແລະ ຍິງ) ແລະ ໃນຖານະຜູ້ໄດ້ຮັບຜົນປະໂຫຍດຈາກວຽກງານຕ່າງໆ (ທັງໝົດ). ທ້າທາຍແນວຄິດເໝົາລວມດ້ານບົດບາດຍິງຊາຍ ໂດຍຜ່ານການນຳໃຊ້ຮູບພາບທີ່ສະແດງໃຫ້ເຫັນເຖິງແມ່ຍິງ ແລະ ຜູ້ຊາຍໃນບົດບາດ ແລະ ສາຍອາຊີບທີ່ບໍ່ເປັນໄປຕາມແນວຄິດດັ້ງເດີມ ແລະ ແນວຄິດແບບເໝົາລວມ ເພື່ອຫຼີກລ້ຽງການເຜີຍແຜ່ຂໍ້ຄວາມດ້ອຍຄ່າກ່ຽວກັບບັນທັດຖານດ້ານບົດບາດຍິງຊາຍ. ສຳລັບການອອກອາກາດຜ່ານທາງໂທລະພາບ ແລະ ວິທະຍຸນັ້ນ, ໃຫ້ດຳເນີນການວິເຄາະເພື່ອລະບຸວ່າກຸ່ມອາຍຸ/ກຸ່ມເພດໃດ ຈະສາມາດເຂົ້າເຖິງປະເພດຂອງສື່ຂ່າວສານນັ້ນໄດ້ໃນຊ່ວງເວລາທີ່ແຕກຕ່າງກັນໃນມື້ນັ້ນ ແລະ ວາງແຜນນຳໃຊ້ສື່ດັ່ງກ່າວຢ່າງເໝາະສົມ. ເນັ້ນໜັກໃຫ້ເຫັນເຖິງຫຼັກປະຕິບັດທີ່ດີ ແລະ ຂໍ້ລິເລີ່ມຕ່າງໆກ່ຽວກັບການເຊື່ອມສານບົດບາດຍິງຊາຍ ເຂົ້າໃນບົດລາຍງານຕໍ່ຜູ້ໃຫ້ທຶນ ແລະ ບົດລາຍງ່ານປະຈຳປີ.

## 6. ຂັ້ນຕອນການເກັບກູ້ລະເບີດ

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008**

4.1. ຜົນກະທົບຕໍ່ບົດບາດຍິງຊາຍຈາກ ລບຕ ຕົກຄ້າງ ແລະ ຜົນກະທົບຫຼັງການເກັບກູ້ລະເບີດ

4.1.1 ທີມງານຊຸມຊົນຈະຕ້ອງມີ ຄວາມດຸ່ນດ່ຽງລະຫວ່າງຍິງຊາຍ ເພື່ອຊ່ວຍຮັບປະກັນໃຫ້ເກີດການພົວພັນກັນລະຫວ່າງຜູ້ຊາຍ-ຜູ້ຊາຍ ແລະ ຜູ້ຍິງ-ຜູ້ຍິງ ແລະ ໃຫ້ໄດ້ຮັບການຝຶກອົບຮົມໃນການສ້າງຄວາມຕື່ນໂຕດ້ານບົດບາດຍິງຊາຍ ແລະ ເຕັກນິກອັນສະເພາະໃນການສຳພາດ ແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍຈາກກຸ່ມຊົນເຜົ່າທີ່ແຕກຕ່າງກັນ. ຍ້ອນການເຊື່ອມສານບົດບາດຍິງຊາຍແມ່ນສິ່ງທີ່ຂ້ອນຂ້າງໃໝ່ໃນ ວຽກງານເກັບກູ້ລະເບີດເພື່ອມະນຸດຊະທຳ, ການຝຶກອົບຮົມເພື່ອສ້າງຄວາມຕື່ນໂຕດ້ານບົດບາດຍິງຊາຍນີ້ ດີທີ່ສຸດແມ່ນຕ້ອງໃຫ້ຜູ້ຊ່ຽວຊານດ້ານບົດບາດຍິງຊາຍທ້ອງຖິ່ນເປັນຜູ້ດຳເນີນງານ.

- ມາດຕະຖານລະບຽບການປະຕິບັດງານ ແລະ ຂອບໜ້າວຽກ ສຳລັບ, ຍົກຕົວຢ່າງ: ສະມາຊິກທີມງານຊຸມຊົນ, ຈະຕ້ອງກຳນົດໄວ້ລະອຽດວ່າ ພວກເຂົາຕ້ອງໄດ້ດຳເນີນວຽກງານຂອງຕົນ ຕາມຂໍ້ແນະນຳທີ່ສະແດງໄວ້ຂ້າງລຸ່ມນີ້.

4.1.2 ໜ່ວຍປະຕິບັດງານຈະຕ້ອງດຳເນີນການປະເມີນຜົນກ່ອນ ແລະ ຫຼັງວຽກງານເກັບກູ້ລະເບີດທີ່ແນໃສ່ ໂຮມເອົາມຸມມອງດ້ານບົດບາດຍິງຊາຍ ແລະ ສົ່ງເສີມແນວທາງແບບກວມລວມ. ສິ່ງຈຳເປັນແມ່ນຕ້ອງຮັບປະກັນໃຫ້ໜ່ວຍປະຕິບັດການ ດຳເນີນການປະເມີນຜົນກ່ອນວຽກງານເກັບກູ້ລະເບີດ ເພື່ອສ້າງຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບ ຜົນກະທົບດ້ານບົດບາດຍິງຊາຍຫຼັງການເກັບກູ້ລະເບີດ ເພື່ອຮັບປະກັນຜົນປະໂຫຍດອັນເທົ່າທຽມ.

- ສຳລັບການປະເມີນຜົນກະທົບກ່ອນການເກັບກູ້ລະເບີດ, ຊຸດຄຳຖາມຕ່າງໆຈະຕ້ອງສາມາດດຶງເອົາຂໍ້ມູນກ່ຽວກັບ ຜົນກະທົບອັນສະເພາະສຳລັບແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍ.
- ສຳລັບການປະເມີນຜົນຫຼັງການເກັບກູ້ລະເບີດ, ຊຸດຄຳຖາມຕ່າງໆຈະຕ້ອງຖືກອອກແບບມາ ເພື່ອໃຊ້ເຂົ້າໃນການວັດແທກ ຜົນປະໂຫຍດ (ແລະ ຖ້າເປັນໄປໄດ້, ຜົນກະທົບທາງລົບ) ທີ່ການເກັບກູ້ລະເບີດນັ້ນມີຕໍ່ ແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍ.
- ຂອບວຽກການວິເຄາະບົດບາດຍິງຊາຍ, ເຊັ່ນ: ຂໍ້ມູນການເຂົ້າເຖິງ ແລະ ການຄວບຄຸມ ແລະ ການເຄື່ອນໄຫວວຽກທີ່ໄດ້ຮັບການເນັ້ນໜັກໄວ້ໃນຂັ້ນຕອນການທົບທວນຄືນບົດຄວາມ, ອາດນຳມາໃຊ້ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຜົນກະທົບດ້ານບົດບາດຍິງຊາຍ ທີ່ເກີດຈາກບັນຫາ ລບຕ ທີ່ຕົກຄ້າງຢູ່ ແລະ ຫຼັງການເກັບກູ້ລະເບີດ.

4.1.3 ຂໍ້ມູນທີ່ໄດ້ຮັບການລວບລວມ - ພ້ອມກັບຂໍ້ມູນທີ່ໄດ້ຮັບຈາກການປະເມີນກ່ອນ ແລະ ຫຼັງການເກັບກູ້ລະເບີດ - ຈະຕ້ອງ ຖືກແບ່ງຕາມກຸ່ມເພດ ແລະ ອາຍຸ ຕາມທີ່ແນະນຳໂດຍຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ ຄະນະກຳມາທິການເອີຣົບ.

4.2. ບົດບາດຍິງຊາຍໃນຂັ້ນຕອນການເກັບກູ້ລະເບີດ

4.2.1 ການເຂົ້າຮ່ວມກອງປະຊຸມຂັ້ນຊຸມຊົນຈະຕ້ອງຖືກດຳເນີນການ ໃນຮູບແບບກຸ່ມຍິງ, ກຸ່ມຊາຍ, ແບບດ່ຽວຍິງ, ຫຼື ແບບດ່ຽວຊາຍ.

- ເພື່ອຮັບປະກັນໃຫ້ຜູ້ທີ່ບໍ່ຮູ້ໜັງສື ຫຼື ຜູ້ທີ່ມີທັກສະທາງພາສາຕ່ຳສາມາດເຂົ້າຮ່ວມໄດ້, ກອງປະຊຸມຈະຕ້ອງຖືກຈັດຂຶ້ນໂດຍຜ່ານການນຳໃຊ້ພາສາເວົ້າແບບລຽບງ່າຍ (ພ້ອມດ້ວຍການແປເປັນພາສາທ້ອງຖິ່ນຖ້າເປັນໄປໄດ້)
- ໜ່ວຍປະຕິບັດການຈະຕ້ອງຮັບປະກັນໃຫ້ຜູ້ເຂົ້າຮ່ວມກອງປະຊຸມແມ່ນມາຈາກ ຂະແໜງການອັນກວ້າຂວາງຂອງຊຸມຊົນ, ລວມທັງຂະແໜງການທີ່ທຸກຍາກທີ່ສຸດ, ບໍ່ແມ່ນແຕ່ສະເພາະຜູ້ທີ່ມີການສຶກສາ ຫຼື ສະມາຊິກຄອບຄົວທີ່ມີສະຖານະສູງ.

ພະນັກງານຊາຍ ແລະ ຍິງຂອງໜ່ວຍປະຕິບັດການເກັບກູ້ ລບຕ ຕ້ອງລົງຢ້ຽມຢາມບ້ານເພື່ອແຈ້ງໃຫ້ຄົວເຮືອນຕ່າງໆຊາບດ້ວຍຕົນເອງ ກ່ຽວກັບກອງປະຊຸມທີ່ຈະຖືກຈັດຂຶ້ນ ແລະ ຫົວຂໍ້ຂອງກອງປະຊຸມດັ່ງກ່າວ ພ້ອມທັງເຜີຍແຜ່ຂໍ້ມູນຂ່າວສານຢ່າງຊັດເຈນ ກ່ຽວກັບຈຸດປະສົງຂອງກອງປະຊຸມ ແລະ ວຽກງານຂອງຊຸມຊົນ ເພື່ອເລືອກເອົາວັນ ແລະ ເວລາທີ່ດີທີ່ສຸດໃນການຈັດກອງປະຊຸມ. ການນຳສົ່ງຈົດໝາຍໄປຍັງນາຍບ້ານ ແມ່ນບໍ່ຖືວ່າເປັນການແຈ້ງລ່ວງໜ້າກ່ຽວກັບຫົວຂໍ້ຂອງກອງປະຊຸມທີ່ພຽງພໍ ຍ້ອນມີໂອກາດທີ່ຂໍ້ມູນດັ່ງກ່າວນັ້ນຈະບໍ່ໄດ້ຮັບການເຜີຍແຜ່ຢ່າງຄົບຖ້ວນ ເມື່ອຖືກສະໜອງໃຫ້ດ້ວຍວິທີນີ້.

- ສຳລັບທຸກກອງປະຊຸມ, ສິ່ງທີ່ຈຳເປັນແມ່ນຕ້ອງຮັບປະກັນໃຫ້ຜູ້ເຂົ້າຮ່ວມນັ້ນມີຄວາມຮັບຮູ້ ແລະ ໄດ້ຮັບແຈ້ງຢ່າງຄົບຖ້ວນກ່ຽວກັບເປົ້າໝາຍ ແລະ ຂັ້ນຕອນຂອງກອງປະຊຸມ - ໂດຍສະເພາະສຳລັບກອງປະຊຸມກ່ຽວກັບຂັ້ນຕອນການຈັດລຽງບຸລິມະສິດແລ້ວນັ້ນ, ສິ່ງທີ່ສຳຄັນແມ່ນຕ້ອງຮັບປະກັນໃຫ້ຜູ້ເຂົ້າຮ່ວມ ຮັບຮູ້ກ່ຽວກັບຂັ້ນຕອນ ແລະ ເງື່ອນໄຂການຄັດເລືອກ, ແລະ ອື່ນໆ.
- ຕ້ອງສຸມໃສ່ຄວາມພະຍາຍາມເປັນພິເສດໃນການລວມເອົາ ແມ່ຍິງຈາກຂະແໜງການທີ່ແຕກຕ່າງກັນພາຍໃນກຸ່ມບ້ານເປົ້າໝາຍ ທີ່ຖືກລວມເຂົ້າເປັນຫົວໜ່ວຍບໍລິການທີ່ໃຫຍ່ຂຶ້ນ ແລະ ພະນັກງານຕ້ອງເຂົ້າໃຈເຖິງບັນຫາທ້າທາຍທີ່ອາດກີດຂວາງການບັນລຸການມີສ່ວນຮ່ວມຢ່າງເທົ່າທຽມໃນກໍລະນີດັ່ງກ່າວ. ສິ່ງນີ້ອາດລວມມີການຈັດກອງປະຊຸມຂຶ້ນຫຼາຍຄັ້ງໃນເຂດບ້ານໃນ ພື້ນທີ່ທີ່ແຕກຕ່າງກັນ, ຍົກຕົວຢ່າງ: ໜ່ວຍບ້ານຕ່າງໆພາຍໃນເຂດບ້ານນັ້ນ. ອາດ ມີການສະໜອງການຂົນສົ່ງ ໃຫ້ແກ່ປະຊາຊົນເພື່ອເດີນທາງມາຍັງກອງປະຊຸມ.

4.2.2 ອົງກອນຕ່າງໆຈະຕ້ອງເຮັດວຽກຢ່າງໃກ້ຊິດ ແລະ ຊ່ວຍ ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານຂັ້ນເມືອງ/ຂັ້ນແຂວງ ໃນການຄຸ້ມຄອງແຜນການຕ່າງໆ ແລະ ສ້າງ

ຄວາມເຂົ້າໃຈຕໍ່ວຽກງານ ລບຕ ແລະ ການພັດທະນາ ໂດຍຜ່ານການໂຮມເອົາຜົນກະທົບດ້ານບົດບາດຍິງຊາຍເຂົ້ານຳ.

- ກອງປະຊຸມຂັ້ນເມືອງ/ຂັ້ນແຂວງປະຈຳເດືອນ ລະຫວ່າງໜ່ວຍປະຕິບັດການທຸກຝ່າຍ, ໜ່ວຍງານພັດທະນາ ແລະ ອຳນາດການປົກຄອງຕ່າງໆ ໃນການວາງແຜນ ແລະ ປະສານວຽກງານຕ່າງໆ. ຂັ້ນຕອນການວາງແຜນຍັງຈະຕ້ອງ ລວມເອົາການວິເຄາະສະຖານະການ ແລະ ຜົນກະທົບຕ່າງໆຂອງວຽກງານທີ່ດຳເນີນການນັ້ນຕໍ່ຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງ.
- ສ້າງຂີດຄວາມສາມາດ ໃຫ້ແກ່ພະນັກງານຂັ້ນເມືອງ/ຂັ້ນແຂວງ ເພື່ອຕິດຕາມກວດກາວຽກງານ - ເກັບກຳ, ວິເຄາະ, ແລະ ນຳໃຊ້ຂໍ້ມູນທີ່ຖືກແບ່ງຕາມກຸ່ມເພດ ແລະ ອາຍຸ.

4.2.3 ອົງການຈັດຕັ້ງຕ່າງໆໃນເວລາມອບຮັບເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວ ຕ້ອງຮັບປະກັນໃຫ້ເຈົ້າຂອງທີ່ດິນ ແລະ ຄອບຄົວຂອງຜູ້ກ່ຽວ ນັ້ນ (ຍົກຕົວຢ່າງ: ເມຍ, ເດັກຊາຍ ແລະ ເດັກຍິງ ແລະ ສະມາຊິກຄົນອື່ນໆໃນຄອບຄົວ) ແລະ ສະມາຊິກຍິງ ແລະ ຊາຍໃນຊຸມຊົນນັ້ນ ມີໜ້າຢູ່ ແລະ ໄດ້ຮັບການຊີ້ແຈງຢ່າງຄົບຖ້ວນ ກ່ຽວກັບສິ່ງທີ່ເກັບກູ້ໄດ້ ແລະ ເນື້ອທີ່ດິນນັ້ນຕ້ອງນຳໃຊ້ໃນຈຸດປະສົງອັນໃດ (ຂຶ້ນກັບລະດັບຄວາມເລິກຂອງການເກັບກູ້).

- ເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ທັງໝົດ ແລະ ຖືກມອບຮັບນັ້ນຈະຕ້ອງໄດ້ຮັບການໝາຍຈຸດຢ່າງຊັດເຈນພ້ອມທັງຍັງຕ້ອງອະທິບາຍໃຫ້ຊຸມຊົນຊາບນຳອີກ.

## 7. ການອານຸຍາດນຳໃຊ້ທີ່ດິນ

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ GMAP ໃນປີ 2014**

**ຂໍ້ແນະນຳດ້ານວຽກງານການອານຸຍາດນຳໃຊ້ ແລະ ການມອບຮັບເນື້ອທີ່ດິນ:**

- ຂໍ້ແນະນຳອັນສະເພາະສຳລັບລະບຽບຂັ້ນຕອນໃໝ່ຂອງ ສປປ ລາວ ໃນການສຳຫຼວດ ລບຕ, ໂດຍເນັ້ນໜັກໃສ່ການສຳຫຼວດແບບບໍ່ແມ່ນວິຊາການເປັນພິເສດ, ແມ່ນມີລາຍລະອຽດດັ່ງຕໍ່ໄປນີ້:

o ລວມມີຂໍ້ມູນອ້າງອີງທີ່ວ່າການສຳຫຼວດ ຈະຕ້ອງໄດ້ຮັບການດຳເນີນງານໂດຍສອດຄ່ອງກັບ ຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ ສປຊ ສຳລັບແຜນງານການເກັບກູ້ລະເບີດ

o ລວມມີວັກທີ່ກ່ຽວຂ້ອງກັບການຄັດເລືອກ ແລະ ການຝຶກອົບຮົມທີມສຳຫຼວດແບບບໍ່ແມ່ນວິຊາການ

o ກ່ອນລົງຢັ້ງຢາມບ້ານ, ຈະຕ້ອງເກັບກຳເອົາຂໍ້ມູນຕາມກຸ່ມເພດ ແລະ ອາຍຸ ໃນບັນຫາທີ່ກ່ຽວຂ້ອງຕ່າງໆ, ເຊັ່ນ: ບັນຫາດ້ານປະຊາກອນ, ຄວາມທຸກຍາກ, ຄວາມເຂົ້າໃຈກ່ຽວກັບການຕົກຄ້າງຂອງ ລບຕ ໃນເຂດບ້ານນັ້ນ

o ການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໂດຍລະອຽດ ຈະຕ້ອງຖືກດຳເນີນການເພື່ອກຳນົດວ່າບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍອັນໃດແດ່ ທີ່ຈຳເປັນຈະຕ້ອງໄດ້ຮັບການພິຈາລະນາ ເພື່ອ 'ສຸມໃສ່ທຸກຄວາມພະຍາຍາມທີ່ເໝາະສົມ' (IMAS 8.10) ເພື່ອໃຫ້ທີມສຳຫຼວດສາມາດເຂົ້າເຖິງທຸກແຫຼ່ງຂໍ້ມູນໄດ້ (ຜູ້ຊາຍ, ເດັກຊາຍ, ເດັກຍິງ, ແມ່ຍິງ) ໃນບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ

o ຮັບປະກັນໃຫ້ມີການເຜີຍແຜ່ບົດສັງລວມການສຳຫຼວດບ້ານ, ບົດລາຍງານພື້ນທີ່ຢັ້ງຢືນອັນຕະລາຍ ແລະ ຮ່າງແຜນທີ່ໃຫ້ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍໃນບ້ານນັ້ນຊາບ

o ການລວມເອົາຊຸດຄຳຖາມດັ່ງຕໍ່ໄປນີ້ ເຂົ້າໃນລາຍການກວດສອບວຽກງານຄຸ້ມຄອງຄຸນນະພາບ - ຂັ້ນຕອນການສຳຫຼວດ ລບຕ ຂອງ NRA:

- ການລົງຢັ້ງຢາມພາກສະໜາມ ໄດ້ມີການກວດສອບທຸກແຫຼ່ງຂໍ້ມູນທີ່ເປັນໄປໄດ້, ທີ່ລວມມີ: ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍແລ້ວ ຫຼື ບໍ່?
- ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍໃນເຂດບ້ານທີ່ໄດ້ຮັບຜົນກະທົບ ໄດ້ຮັບແຈ້ງຂໍ້ມູນໂດຍຫຍໍ້ຢ່າງເໝາະສົມກ່ຽວກັບຜົນໄດ້ຮັບຂອງການສຳຫຼວດແບບບໍ່ແມ່ນວິຊາການ, ການກຳນົດພື້ນທີ່ຢັ້ງຢືນອັນຕະລາຍ ແລະ ຮ່າງແຜນທີ່ແລ້ວ ຫຼື ບໍ່?

- ບັນທຶກການມີສ່ວນຮ່ວມເຂົ້າໃນການສຳຫຼວດແບບບໍ່ແມ່ນວິຊາການຕາມກຸ່ມເພດ ແລະ ອາຍຸ ແລະ ວິເຄາະຂໍ້ມູນນີ້
- ຮັບປະກັນໃຫ້ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍໄດ້ຮັບການປຶກສາຫາລື ໃນຂັ້ນຕອນການກຳນົດບູລິມະສິດສຳລັບວຽກງານເກັບກູ້ລະເບີດ
- ຮັບປະກັນໃຫ້ທຸກຄົນ (ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ) ໃນຊຸມຊົນໄດ້ຮັບແຈ້ງກ່ຽວກັບເນື້ອທີ່ດິນທີ່ຖືກເກັບກູ້/ອານຸຍາດໃຫ້ນຳໃຊ້ ໂດຍຜ່ານພິທີມອບຮັບທີ່ເໝາະສົມ ແລະ ເອກະສານທີ່ເຂົ້າເຖິງໄດ້ງ່າຍ (ຍົກຕົວຢ່າງ: ຮ່າງແຜນທີ່ຂອງເນື້ອທີ່ດິນທີ່ອານຸຍາດໃຫ້ນຳໃຊ້ ແມ່ນໄດ້ຖືກເຜີຍແຜ່ທີ່ສູນປະຊຸມບ້ານ).

## 8. ວຽກງານ EORE

**ແຜນການດຳເນີນງານດ້ານບົດບາດຍິງຊາຍໃນ ສປປ ລາວ ຂອງ NRA ໃນປີ 2004**

- ທົບທວນຄືນ, ດັດແກ້ ແລະ ສ້າງຂໍ້ຄວາມກ່ຽວກັບວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ ໃຫ້ແກ່ຢ່າງໜ້ອຍ 4 ກຸ່ມສ່ຽງ
- ສ້າງຍຸດທະສາດອັນສະເພາະໃຫ້ແກ່ກຸ່ມທີ່ມີຄວາມສ່ຽງສູງ

**ເປົ້າໝາຍທີ່ຄຳນຶງເຖິງບົດບາດຍິງຊາຍ:**

- ຮັບປະກັນໃຫ້ ກຸ່ມສ່ຽງ ໄດ້ຮັບການລະບຸຢ່າງເໝາະສົມ
- ຮັບປະກັນໃຫ້ທຸກຄົນ, ບໍ່ວ່າຈະອາຍຸເທົ່າໃດ, ເພດໃດ, ການສຶກສາລະດັບໃດ, ມີສະຖານະການຮູ້ໜັງສື ຫຼື ສະຖານະທາງເສດຖະກິດ-ສັງຄົມແບບໃດກໍ່ຕາມ, ສາມາດເຂົ້າເຖິງວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດໄດ້
- ຮັບປະກັນໃຫ້ຂໍ້ຄວາມ ແລະ ຍຸດທະສາດຕ່າງໆເນັ້ນໜັກໃສ່ບັນດາກຸ່ມທີ່ລະບຸໄວ້ເປັນຫຼັກ
- ຍົກສູງ ການມີສ່ວນຮ່ວມຂອງສະມາຊິກໃນຊຸມຊົນທັງຊາຍ ແລະ ຍິງເຂົ້າໃນການວາງແຜນ ແລະ ການຕິດຕາມກວດກາ ວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ
- ຮັບປະກັນໃຫ້ຜູ້ຊາຍ ແລະ ແມ່ຍິງມີ ຄວາມສາມາດທີ່ເທົ່າທຽມກັນ ໃນການເຂົ້າເຖິງໂອກາດ ແລະ ສິດທິປະໂຫຍດດ້ານການຈ້າງງານ ທີ່ກ່ຽວຂ້ອງກັບຂໍ້ລິເລີ່ມການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ
- ຮັບປະກັນ ໃຫ້ກຸ່ມສ່ຽງມີສ່ວນຮ່ວມ ເຂົ້າໃນການສ້າງຂໍ້ຄວາມ ແລະ ຍຸດທະສາດ

**ການເຄື່ອນໄຫວ:**

- ປະເມີນຄວາມຈຳເປັນຂອງວຽກງານການສຶກສາເພື່ອລຸດຜ່ອນຄວາມສ່ຽງໄພຈາກລະເບີດ ໃນບັນດາຂົງເຂດທີ່ໄດ້ຮັບຜົນກະທົບຈາກ ລບຕ ແລະ ເພື່ອລະບຸກຸ່ມເປົ້າໝາຍສະເພາະ
- ວິເຄາະຂໍ້ມູນທີ່ເກັບກຳໄດ້ (ເຊັ່ນ: KAP, ການສຳຫຼວດເສັ້ນທຽບຖານ, ການສຳຫຼວດຄວາມເພິ່ງພໍໃຈ, ແລະ ອື່ນໆ) ເພື່ອຮັບປະກັນ ໃຫ້ມີການຈັດແບ່ງອອກເປັນກຸ່ມເພດ, ອາຍຸ ແລະ ສາເຫດຂອງເຫດການ
- ທົບທວນຄືນ ແລະ ປັບປຸງເຄື່ອງມືຕ່າງໆທີ່ນຳໃຊ້ເຂົ້າໃນການເກັບກຳຂໍ້ມູນເພື່ອລະບຸ ແລະ ດັດແກ້ຈຸດບົກພ່ອງໃຫ້ຖືກຕ້ອງ
- ເຄື່ອງມືທົດສອບພາກສະໜາມ
- ການຝຶກອົບຮົມເພີ່ມເຕີມໃຫ້ແກ່ທີມງານ MRE
- ການຮັບປະກັນຄຸນນະພາບໃຫ້ແກ່ການຈັດຕັ້ງປະຕິບັດ ແຜນງານທີ່ຄຳນຶງເຖິງບົດບາດຍິງຊາຍ
- ດຳເນີນກອງປະຊຸມຮ່ວມກັບການນຳຂັ້ນບ້ານ ເພື່ອຂໍເອົາການຕົກລົງເຫັນດີ ໃນການສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ ແລະ ເດັກນ້ອຍ
- ປັບປຸງ ແລະ ທົບທວນຄືນ ມາດຕະຖານ ແລະ SOP ແຫ່ງຊາດເພື່ອໃຫ້ສະທ້ອນມຸມມອງດ້ານບົດບາດຍິງຊາຍເຂົ້ານຳ
- ທົບທວນຄືນຂັ້ນຕອນການສ້າງທີມງານທີ່ມີຢູ່ ແລະ ສ້າງ ຍຸດທະສາດຊັບພະຍາກອນມະນຸດທີ່ຄຳນຶງເຖິງບົດບາດຍິງຊາຍ ເພື່ອແກ້ໄຂຊ່ອງຫວ່າງຕ່າງໆ (ດ້ານການຮັບເອົາ, ການຮັກສາ ແລະ ການພັດທະນາບຸກຄະລາກອນ)

**ການສະໜັບສະໜູນ**

- ວຽກງານຕ່າງໆແມ່ນໄດ້ຮັບການດຳເນີນງານຕາມເວລາ ແລະ ສະຖານທີ່ທີ່ສະດວກ
- ຄຳໝັ້ນສັນຍາ ແລະ ທັດສະນະຄະຕິ
- ການສະໜັບສະໜູນດ້ານເງິນທຶນສຳລັບການຝຶກອົບຮົມ ແລະ ການໃຫ້ຄຳປຶກສາດ້ານບົດບາດຍິງຊາຍ
- ການສະໜັບສະໜູນທາງດ້ານວິຊາການ ໂດຍຜ່ານການສະໜອງການຝຶກອົບຮົມ, ການປະເມີນຜົນ, ການຕິດຕາມກວດກາ, ການຕີລາຄາ)
- ຄຳໝັ້ນສັນຍາແຫ່ງຊາດເພື່ອຈັດຕັ້ງປະຕິບັດຍຸດທະສາດການເຊື່ອມສານບົດບາດຍິງຊາຍ
- ຄະນະກຳມະການລະຫວ່າງໜ່ວຍງານ (ອົງການ ສປຊ, ກຸ່ມແມ່ຍິງ, ຈຸດປະສານງານແຫ່ງຊາດ)
- ຊັບພະຍາກອນມະນຸດທີ່ພຽງພໍໃນການຈັດຕັ້ງປະຕິບັດວຽກງານ
- ພະນັກງານໄດ້ຮັບສິດທິຢ່າງພຽງພໍ
- ມີການກະກຽມລະບົບໂລຊິດສະຕິກທີ່ຄຳນຶງເຖິງບົດບາດຍິງຊາຍຢ່າງເໝາະສົມ ແລະ ພຽງພໍ

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008**

4.3. ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ

4.3.1 ການປະເມີນຄວາມຕ້ອງການໃນວຽກງານ MRE ຈະຕ້ອງລວບລວມຂໍ້ມູນ, ຕາມກຸ່ມເພດ, ອາຍຸ ແລະ ກຸ່ມຊົນເຜົ່າ, ເພື່ອໃຫ້ສາມາດກຳນົດໄດ້ຄວາມຮູ້, ຫຼັກປະຕິບັດ ແລະ ທັດສະນະຄະຕິຂອງ ແຕ່ລະກຸ່ມສ່ຽງ ໄດ້ຢ່າງຊັດເຈນ.

4.3.1 ທຸກສື່ການຮຽນການສອນໃນວຽກງານ MRE ຈະຕ້ອງພິຈາລະນານຳສະເໜີ ບົດບາດຍິງຊາຍ, ວັດທະນະທຳ ແລະ ພາສາ, ກິດຈະກຳ ແລະ ພຶດຕິກຳສ່ຽງທີ່ກ່ຽວຂ້ອງ.

4.3.2 ຂໍ້ຄວາມ ແລະ ກິດຈະກຳຕ່າງໆພາຍໃຕ້ວຽກງານ MRE ຈະຕ້ອງແນໃສ່ ກຸ່ມທີ່ມີຄວາມສ່ຽງສູງ ທີ່ຖືກຈັດແບ່ງອອກເປັນ ກຸ່ມເພດ, ອາຍຸ, ພຶດຕິກຳ ແລະ ກິດຈະກຳການດຳລົງຊີວິດ.

4.3.3 ການເຂົ້າຮ່ວມຝຶກອົບຮົມ MRE ແມ່ນສາມາດເຮັດໄດ້ ທັງໃນແບບເປັນກຸ່ມ ແລະ ແບບບຸກຄົນ, ທັງຊາຍ ແລະ ຍິງ (ຫຼື ໃນຮູບແບບກຸ່ມຄົວເຮືອນ ຫຼື ກຸ່ມຜູ້ເກັບເສດໂລຫະຊາຍ, ຍົກຕົວຢ່າງ),

4.3.4 ທີມງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ຈະຕ້ອງປະກອບມີ: ສະມາຊິກທີມທີ່ເປັນແມ່ຍິງ ແລະ ຜູ້ຊາຍເພື່ອຊ່ວຍໃຫ້ເກີດມີການພົວພັນກັນລະຫວ່າງຜູ້ຊາຍ-ຜູ້ຊາຍ ແລະ ແມ່ຍິງ-ແມ່ຍິງ.

4.3.5 ທີມງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ຈະຕ້ອງປະກອບມີສະມາຊິກທີ່ມີຄວາມສາມາດ ໃນການສື່ສານຂໍ້ຄວາມຕ່າງໆໃນ ບັນດາພາສາຂອງກຸ່ມປະຊາກອນທີ່ເປັນເປົ້າໝາຍ ຫຼື ຝຶກອົບຮົມນັກສື່ສານທ້ອງຖິ່ນ ໃຫ້ສາມາດຖ່າຍທອດຂໍ້ຄວາມເປັນພາສາທ້ອງຖິ່ນ.

4.3.6 ນັກສື່ສານທ້ອງຖິ່ນ (ຍົກຕົວຢ່າງ: ອາສາສະໝັກ, ທີມງານ CA/MRE) ຈະຕ້ອງໄດ້ຮັບການຝຶກອົບຮົມ ເພື່ອແກ້ໄຂບັນຫາ ແລະ ຄວາມຕ້ອງການໃຫ້ແກ່ຍິງຊາຍ ໃນລະຫວ່າງດຳເນີນການຖ່າຍທອດຄວາມຮູ້ MRE; ຍົກຕົວຢ່າງ: ໃນສະພາບແວດລ້ອມ, ເຊັ່ນ: ໝູ່ຕໍ່ໝູ່, ຜູ້ໃຫຍ່ຕໍ່ເດັກ, ເດັກຕໍ່ຜູ້ໃຫຍ່, ອາສາສະໝັກຂັ້ນບ້ານ, ແລະ ອື່ນໆ.

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ GMAP ໃນປີ 2014**

ຂໍ້ແນະນຳຈາກ ວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກລະເບີດ:

- ສືບຕໍ່ນຳໃຊ້ ແລະ ວິເຄາະຂໍ້ມູນຂອງຜູ້ປະສົບເຄາະຮ້າຍຕາມກຸ່ມເພດ ແລະ ອາຍຸ ເຂົ້າໃນການກຳນົດຍຸດທະສາດການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ແລະ ເພື່ອຊີ້ນຳຜູ້ສະໜອງວຽກງານ MRE ໃຫ້ອອກແບບກິດຈະກຳຕ່າງໆຂອງຕົນໃນ ລັກສະນະທີ່ຄຳນຶງເຖິງອາຍຸ ແລະ ບົດບາດຍິງຊາຍຂອງຜູ້ເຂົ້າຮ່ວມ
- ສືບຕໍ່ນຳສະເໜີຂໍ້ມູນຜູ້ໄດ້ຮັບຜົນປະໂຫຍດຕາມກຸ່ມເພດ ແລະ ອາຍຸ ແລະ ວັດແທກຜົນກະທົບທີ່ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພມີຕໍ່ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ (ການປ່ຽນແປງພຶດຕິກຳ)

## 9. ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008**

4.4. ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ/ຜູ້ລອດຊີວິດ ແລະ ບັນຫາທີ່ກ່ຽວຂ້ອງກັບບົດບາດຍິງຊາຍ

4.4.1 ທີມງານຊຸມຊົນທີ່ມີຄວາມດຸ່ນດ່ຽງລະຫວ່າງຍິງຊາຍ ຈະຕ້ອງໄດ້ຮັບການຝຶກອົບຮົມໃນບໍລິການຕ່າງໆ ທີ່ມີສະໜອງໃຫ້ແກ່ຜູ້ປະສົບເຄາະຮ້າຍ/ຜູ້ລອດຊີວິດໃນຂັ້ນທ້ອງຖິ່ນ, ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນແຫ່ງຊາດ ແລະ ຕ້ອງສາມາດສື່ສານບໍລິການເຫຼົ່ານີ້ໄປຍັງຜູ້ທີ່ໄດ້ຮັບຜົນກະທົບ, ທັງຊາຍ ແລະ ຍິງໄດ້.

4.4.2 ຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈະຕ້ອງທັງເຂົ້າໃຈ ແລະ ແກ້ໄຂບັນຫາຕ່າງໆທີ່ກ່ຽວຂ້ອງກັບ ສັກສີ ແລະ ຄວາມເຊື່ອໝັ້ນໃນຕົນເອງ ແລະ ບໍ່ພຽງແຕ່ຕ້ອງເນັ້ນໜັກໃສ່ການບາດເຈັບທາງຮ່າງກາຍເທົ່ານັ້ນ (ຍົກຕົວຢ່າງ: ໂດຍທົ່ວໄປແລ້ວ, ຜູ້ຊາຍມັກຈະຕ້ອງປະເຊີນກັບພາວະສູນເສຍຄວາມເຊື່ອໝັ້ນໃນຕົນເອງຫຼາຍກວ່າແມ່ຍິງ).

- ຂໍ້ມູນຈະຕ້ອງ ຖືກຈັດແບ່ງຕາມກຸ່ມເພດ ແລະ ອາຍຸ.

4.4.3 ຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈະຕ້ອງສະໜອງບໍລິການເພີ່ມເຕີມໃຫ້ແກ່ຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງໂດຍຕ້ອງຄຳນຶງວ່າ ແມ່ຍິງອາດແມ່ນກຸ່ມທີ່ຕ້ອງການການສະໜັບສະໜູນໄລຍະຍາວ ແລະ ອາດມີແນວໂນ້ມແຕ່ງດອງໃໝ່ໜ້ອຍກວ່າ

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ GMAP ໃນປີ 2014**

**ຂໍ້ແນະນຳການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ:**

- ນຳສະເໜີຂໍ້ມູນຜູ້ປະສົບໄພຕາມ ກຸ່ມເພດ ແລະ ອາຍຸ ໃນບົດລາຍງານ
- ວິເຄາະ ລະບົບການຕິດຕາມຜູ້ລອດຊີວິດ ເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບ ຄວາມຕ້ອງການດ້ານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຕາກຸ່ມເພດ ແລະ ອາຍຸ - ນຳໃຊ້ຜົນໄດ້ຮັບຈາກການວິເຄາະດັ່ງກ່າວ ເຂົ້າໃນການອອກແບບບໍລິການທີ່ແທດເໝາະກັບຄູ່ຮ່ວມມື (ກະຊວງສຶກສາ, ກະຊວງສາທາ, ກະຊວງແຮງງານ)
- ສ້າງ ເຄື່ອງມືຕິດຕາມກວດກາດ້ານຄຸນນະພາບ/ປະລິມານ ເພື່ອວັດແທກຜົນກະທົບຂອງການຊ່ວຍເຫຼືອທີ່ມີຕໍ່ຜູ້ລອດຊີວິດ (ຕາມກຸ່ມເພດ ແລະ ອາຍຸ)

**ການປະເມີນບົດບາດຍິງຊາຍ ແລະ ລບຕ ຂອງ ອົງການ ສປຊ ເພື່ອແມ່ຍິງ / LWU ໃນປີ 2018**

6.4 ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈາກ ລບຕ ທີ່ຄຳນຶງເຖິງບົດບາດຍິງຊາຍ

6.4.1 ປະເມີນຜູ້ປະສົບເຄາະຮ້າຍຈາກຖານຂໍ້ມູນຂອງ NRA ວ່າຜູ້ໃດໄດ້ຮັບການຝຶກອົບຮົມ ແລະ ອຸປະກອນເຄື່ອງມືອັນໃດແດ່, ແລະ ລະບຸແມ່ຍິງທີ່ເປັນຜູ້ປະສົບເຄາະຮ້າຍຈາກ ລບຕ ແລະ ເມຍ ແລະ ແມ່ຂອງຜູ້ທີ່ເສຍຊີວິດ ຫຼື ໄດ້ຮັບບາດເຈັບຈາກອຸບັດເຫດ ລບຕ.

6.4.2 ຄັດເລືອກເອົາ ໜຶ່ງ ຫຼື ສອງແຂວງບ່ອນທີ່ແມ່ຍິງທີ່ເປັນຜູ້ເຄາະຮ້າຍຈາກ ລບຕ ອາໄສຢູ່ ແລະ ປະເມີນຄວາມຕ້ອງການດ້ານທັກສະຂອງກຸ່ມແມ່ຍິງເຫຼົ່ານີ້ ແລະ ສະໜອງການຝຶກອົບຮົມໃນຂັ້ນບ້ານ ບ່ອນທີ່ບໍ່ມີຜູ້ໃຫ້ບໍລິການອື່ນໆອີກແລ້ວ, ໂດຍຜ່ານການນຳໃຊ້ກຸ່ມຄູຝຶກຂອງ LWU ໃນຂັ້ນແຂວງ. ການຝຶກອົບຮົມອາດລວມມີວິຊາຫັດຖະກຳ, ຕັດຫຍິບ, ລ້ຽງສັດ, ຕ່ຳຫູກ, ຄວາມຮູ້ດ້ານການເງິນ ແລະ ການລິເລີ່ມທຸລະກິດ. ແຜນງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຍິງ ຈະຕ້ອງມີການປະສານງານຮ່ວມກັບຫ້ອງການ NRA ແຂວງ ລວມໄປເຖິງບັນຫາອົງການຈັດຕັ້ງທາງສັງຄົມ ທີ່ເຮັດວຽກໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນພື້ນ



## ພາກເອກະສານຊ້ອນທ້າຍທີ 3: ແຜນການດຳເນີນງານດ້ານບົດບາດຍິງຊາຍຂອງ ສປປ ລາວ ໃນປີ 2008

| ວຽກງານເກັບກູ້ລະເບີດທີ່ວາງແຜນໄວ້ສຳລັບແຜນງານຂອງທ່ານໃນໄລຍະ 12-18 ເດືອນທີ່ຈະມາເຖິງນີ້ | ເປົ້າໝາຍການດຳເນີນງານທີ່ຄຳນຶງເຖິງບົດບາດຍິງຊາຍ (ການດຳເນີນງານເຫຼົ່ານີ້ມີຈຸດປະສົງຫຍັງແດ່?) | ການດຳເນີນງານ (ເຈົ້າຈະມີວິທີດຳເນີນວຽກງານເຫຼົ່ານີ້ຄືແນວໃດ?) | ການສະໜັບສະໜູນ (ສິ່ງທີ່ຕ້ອງການມີຫຍັງແດ່?) | ຂອບເຂດເວລາ (ວຽກງານເຫຼົ່ານີ້ຈະໃຊ້ເວລາດົນປານໃດ?) | ໂຕຊີ້ວັດ (ຈະຮູ້ໄດ້ແນວໃດວ່າເຈົ້າບັນລຸເປົ້າໝາຍໄດ້?) | ການປະເມີນຜົນ |
|---|---|---|---|---|---|---|
| **ທົບທວນຄືນແຜນຍຸດທະສາດການຄົ້ນຄວ້າດ້ານບົດບາດຍິງຊາຍ**<br>(ເປັນຂໍ້ມູນໃຫ້ແກ່ຍຸດທະສາດ)<br>**ກ່ອນ/ຫຼັງການເກັບກູ້ລະເບີດ**<br>ທີມງານທີ່ປຶກສາ<br>(ໜ່ວຍງານຮ່ວມໂຄງການແກ້ໄຂຄວາມທຸກຍາກ/ລບຕ)<br>**ການກຳນົດແຜນວຽກໃນປີ 2008**<br>ຂັ້ນແຂວງ -<br>ຮັບປະກັນໃຫ້ບຸລິມະສິດຕ່າງໆຢູ່ພາຍໃຕ້ຂົງເຂດບຸລິມະສິດ<br>X## ເຮັດຕ້າໃນອີກ 12 ເດືອນຕໍ່ໜ້າ<br>X## ເຮັດຕ້າໃນອີກ 12 ເດືອນຕໍ່ໜ້າ<br>X## ວຽກງານເກັບກູ້ໜ້າດິນ<br>X## CA ໃນໜ້າວຽກ | ເພື່ອສົ່ງເສີມໃຫ້ຂອບວຽກນະໂຍບາຍການເກັບກູ້ລະເບີດຄຳນຶງເຖິງບົດບາດຍິງຊາຍ<br>(ຄານຶງເຖິງຄວາມຕ້ອງການ<br>ແລະ<br>ປະສົບການອັນແຕກຕ່າງຂອງແມ່ຍິງ, ເດັກຊາຍ, ເດັກຍິງ ແລະ ຜູ້ຊາຍ)<br>ຮັບປະກັນໃຫ້ມີການຄຳນຶງເຖິງແງ່ມຸມຕ່າງໆຂອງບົດບາດຍິງຊາຍ<br>ເຂົ້າໃນການພິຈາລະນາບຸລິມະສິດ<br>ຮັບປະກັນໃຫ້ມີການຄຳນຶງເຖິງແງ່ມຸມຕ່າງໆຂອງບົດບາດຍິງຊາຍ<br>ເຂົ້າໃນການພິຈາລະນາບຸລິມະສິດ<br>ທົບທວນຄືນຂັ້ນຕອນການຄັດເລືອກ<br>ເພື່ອສົ່ງເສີມການລວມເອົາຂໍ້ພິຈາລະນາດ້ານບົດບາດຍິງຊາຍເຂົ້າໃນການກຳນົດບຸລິມະສິດໃຫ້ແກ່ເນື້ອທີ່ດິນທີ່ຈະຕ້ອງໄດ້ຮັບການເກັບກູ້ (ໃນທຸກລະດັບ)<br>– PPCIA<br>ທົບທວນຄືນຂັ້ນຕອນການຄັດເລືອກ<br>ເພື່ອສົ່ງເສີມການລວມເອົາຂໍ້ພິຈາລະນາດ້ານບົດບາດຍິງຊາຍເຂົ້າໃນການກຳນົດບຸລິມະສິດໃຫ້ແກ່ເນື້ອທີ່ດິນທີ່ຈະຕ້ອງໄດ້ຮັບການເກັບກູ້ (ໃນທຸກລະດັບ)<br>– PPCIA<br>ເພື່ອສົ່ງເສີມໃຫ້ທຸກຄົນສາມາດເຂົ້າເຖິງສິດທິປະໂຫຍດຕ່າງໆໄດ້ຢ່າງເທົ່າທຽມ<br>ຈາກໂອກາດ ແລະ<br>ການຝຶກອົບຮົມໃນວຽກງານເກັບກູ້ລະເບີດ<br>ເພື່ອສົ່ງເສີມໃຫ້ທຸກຄົນສາມາດເຂົ້າເຖິງສິດທິປະໂຫຍດຕ່າງໆໄດ້ຢ່າງເທົ່າທຽມ<br>ຈາກໂອກາດ ແລະ<br>ການຝຶກອົບຮົມໃນວຽກງານເກັບກູ້ລະເບີດ | ການທົບທວນຄືນໄລຍະກາງໃຫ້ແກ່ແຜນຍຸດທະສາດ<br>(2003-2013)-<br>ການທົບທວນຄືນຂອງລັດຖະບານ<br>--<br>ຮັບປະກັນໃຫ້ຂໍ້ພິຈາລະນາດ້ານບົດບາດຍິງຊາຍໄດ້ຮັບຄວາມເອົາໃຈໃສ່ສູງຂຶ້ນໃສ ຂອບໜ້າວຽກສຳລັບທີ່ປຶກສາ.<br>--<br>ລະບຸຂົງເຂດບ່ອນທີ່ສາມາດບັນລຸຄວາມດຸ່ນດ່ຽງລະຫວ່າງຍິງຊາຍໄດ້<br>--<br>ລະບຸຈຸດທີ່ຂໍ້ພິຈາລະນາດ້ານບົດບາດຍິງຊາຍ<br>(ບຸລິມະສິດ)<br>ສາມາດປັບປຸງໄດ້<br>--<br>ບາງທີອາດຕ້ອງໄດ້ສ້າງເປົ້າໝາຍສົ່ງເສີມຄວາມດຸ່ນດ່ຽງລະຫວ່າງຍິງຊາຍອັນສະເພາະ<br>-<br>-PPCAT<br>ການສຳເລັດຊຸດເຄື່ອງມືການປເມີນຜົນໃນຂັ້ນສຸດທ້າຍ/ວິທີການ<br>(ຈະຕ້ອງລວມມີຂໍ້ມນູທີ່ຈັດແບ່ງຕາມກຸ່ມເພດ, ອາຍຸ).<br>-<br>-<br>ແຜນວຽກທີ່ຖືກສ້າງຂຶ້ນໂດຍນຳໃຊ້ບຸລິມະສິດ & ຂໍ້ມູນ PPCIA<br>ທີ່ໄດ້ຮັບການປັບປຸງແລ້ວ | ຊັບພະຍາກອນທາງການເງິນເພື່ອການທົບທວນຄືນ.<br>ແຫຼ່ງທຶນສຳລັບການຄົ້ນຄວ້າດ້ານບົດບາດຍິງຊາຍ (ມີພ້ອມແລ້ວ)<br>ແຫຼ່ງທຶນສຳລັບການຄົ້ນຄວ້າດ້ານບົດບາດຍິງຊາຍ (ມີພ້ອມແລ້ວ)<br>ໂຄງການ PPCAT ໄດ້ຮັບການພັດທະນາ & ແຫຼ່ງທຶນ<br>ໂຄງການ PPCAT ໄດ້ຮັບການພັດທະນາ & ແຫຼ່ງທຶນ<br>ທີ່ປຶກສາດ້ານບົດບາດຍິງຊາຍ<br>ທີ່ປຶກສາດ້ານບົດບາດຍິງຊາຍ | ການວາງແຜນຂັ້ນຕອນການທົບທວນຄືນດ້ານຍຸດທະສາດ - 6 ເດືອນ<br>ຈັດຕັ້ງປະຕິບັດ - 3 ເດືອນ<br>ອານຸມັດ - ?<br>ການຄົ້ນຄວ້າດ້ານບົດບາດຍິງຊາຍ<br>ການຄົ້ນຄວ້າດ້ານບົດບາດຍິງຊາຍ<br>ການວາງແຜນ 3 ເດືອນ<br>ຈັດຕັ້ງປະຕິບັດ - 10 ອາທິດ<br>PPCAT<br>PPCAT<br>ແຜນໄລຍະ 12 ເດືອນ<br>ຈັດຕັ້ງປະຕິບັດ - ບໍ່ມີກຳນົດ<br>ແຜນວຽກປີ 2008<br>ແຜນວຽກປີ 2008<br>ແຜນໄລຍະ 2 ເດືອນ<br>ຈັດຕັ້ງປະຕິບັດ - 2008 | ການລວມເອົາມຸມມອງດ້ານບົດບາດຍິງຊາຍເຂົ້າໃນແຜນການ<br>ໂຕຊີ້ວັດຈະຖືກສ້າງຂຶ້ນຈາກ<br>ການຄົ້ນຄວ້າດ້ານບົດບາດຍິງຊາຍ<br><br>ການລວມເອົາບົດບາດຍິງຊາຍເຂົ້າໃນບົດບັນທຶກກອງແະຊຸມຂອງກຸ່ມວິຊາການ<br><br>ການລວມເອົາບົດບາດຍິງຊາຍເຂົ້າໃນ MOU<br><br>ບົດບາດຍິງຊາຍທີ່ຖືກລວມເຂົ້າໃນການວິເຄາະຂໍ້ມູນກ່ອນ/ຫຼັງການເກັບກູ້ລະເບີດ &<br>ທີ່ເນັ້ນໜັກໄວ້ໃນບົດລາຍງານສະບັບສຸດທ້າຍ<br><br>ຂໍ້ມູນຜູ້ໄດ້ຮັບຜົນປະໂຫຍດແບ່ງເປັນກຸ່ມເພດ/ອາຍຸ/ຊຸມຊົນ ແລະ ອື່ນໆ...<br>ບົດລາຍງານປະຈຳປີທີ່ສະແດງໃຫ້ເຫັນເຖິງຂໍ້ມູນຜູ້ໄດ້ຮັບຜົນປະໂຫຍດທີ່ແບ່ງເປັນກຸ່ມເພດ. | ການທົບທວນຄືນແຜນຍຸດທະສາດຖືເປັນການປະເມີນຜົນໄປໃນໂຕເລີຍ ກຸ່ມວິຊາການ<br><br>ການທົບທວນຄືນບົດບັນທຶກກອງປະຊຸມຂອງກຸ່ມວິຊາການ (CL, CA, VA & SR)<br><br>ຂອງ MOU ສະບັບໃໝ່ |

| ວຽກງານເກັບກູ້ລະເບີດທີ່ວາງແຜນໄວ້ສຳລັບແຜນງານຂອງທ່ານໃນໄລຍະ 12-18 ເດືອນທີ່ຈະມາເຖິງນີ້ | ເປົ້າໝາຍການດຳເນີນງານທີ່ຄຳນຶງເຖິງບົດບາດຍິງຊາຍ (ການດຳເນີນງານເຫຼົ່ານີ້ມີຈຸດປະສົງຫຍັງແດ່?) | ການດຳເນີນງານ (ເຈົ້າຈະມີວິທີດຳເນີນວຽກງານເຫຼົ່ານີ້ຄືແນວໃດ?) | ການສະໜັບສະໜູນ (ສິ່ງທີ່ຕ້ອງການມີຫຍັງແດ່?) | ຂອບເຂດເວລາ (ວຽກງານເຫຼົ່ານີ້ຈະໃຊ້ເວລາດົນປານໃດ?) | ໂຕຊີ້ວັດ (ຈະຮູ້ໄດ້ແນວໃດວ່າເຈົ້າບັນລຸເປົ້າໝາຍໄດ້?) | ການປະເມີນຜົນ |
|---|---|---|---|---|---|---|
| MRE (CA ໃນ ລາວ)<br>- ການສ້າງຖານຂໍ້ມູນອຸບັດເຫດ/ຜູ້ລອດຊີວິດແຫ່ງຊາດ ແລະ ລະບົບການເກັບກຳຂໍ້ມູນ<br><br>- ອີງຕາມການປະເມີນຜົນຂອງ MRE, ທົບທວນຄືນ ແລະ ດັດແກ້ຍຸດທະສາດ MRE ແຫ່ງຊາດ<br><br>- ທົບທວນຄືນ, ດັດແກ້ ແລະ ສ້າງຂໍ້ຄວາມ MRE ສຳລັບຢ່າງໜ້ອຍ 4 ກຸ່ມສ່ຽງ<br><br>- ສ້າງຍຸດທະສາດອັນສະເພາະສຳລັບກຸ່ມທີ່ມີຄວາມສ່ຽງສູງ<br><br>- ສະໜອງການຝຶກອົບຮົມໃນວຽກງານ M&E<br><br>- ສ້າງແຜນວຽກ M&E<br><br>- ສ້າງຂອບວຽກດ້ານຂີດຄວາມສາມາດສຳລັບພະນັກງານ MRE<br>- ສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ MRE | ຮັບປະກັນໃຫ້ກຸ່ມສ່ຽງໄດ້ຮັບການລະບຸຢ່າງເໝາະສົມ<br><br>- ຮັບປະກັນໃຫ້ທຸກຄົນ, ບໍ່ວ່າຈະອາຍຸເທົ່າໃດ, ເພດໃດ, ມີລະດັບການສຶກສາຊໍ່າໃດ, ມີສະຖານະການຮູ້ໜັງສື ຫຼື ສະຖານະທາງເສດຖະກິດ-ສັງຄົມແບບໃດກໍ່ຕາມ, ສາມາດເຂົ້າເຖິງວຽກງານ MRE ໄດ້<br><br>- ຮັບປະກັນໃຫ້ຂໍ້ຄວາມ ແລະ ຍຸດທະສາດຕ່າງໆ ເນັ້ນໜັກໃສ່ບັນດາກຸ່ມທີ່ໄດ້ລະບຸໄວ້<br><br>- ຍົກສູງການມີສ່ວນຮ່ວມໃຫ້ແກ່ສະມາຊິກໃນຊຸມຊົນທັງຍິງ ແລະ ຊາຍເຂົ້າໃນຂັ້ນຕອນການວາງແຜນ ແລະ ການຕິດຕາມກວດກາວຽກງານ MRE<br><br>- ຮັບປະກັນໃຫ້ຜູ້ຊາຍ ແລະ ແມ່ຍິງສາມາດເຂົ້າເຖິງໂອກາດການຈ້າງງານ ແລະ ສິດທິປະໂຫຍດທີ່ກ່ຽວຂ້ອງກັບຂໍລິເລີ່ມວຽກງານ MRE | -<br>ປະເມີນຄວາມຈຳເປັນຂອງວຽກງານ MRE ໃນພື້ນທີ່ທີ່ໄດ້ຮັບຜົນກະທົບຈາກ ລບຕ ແລະ ເພື່ອລະບຸກຸ່ມເປົ້າໝາຍສະເພາະ<br><br>- ການວິເຄາະຂໍ້ມູນທີ່ເກັບກຳໄດ້ (ເຊັ່ນ: KAP, ການສຳຫຼວດເສັ້ນທຽບຖານ, ການສຳຫຼວດຄວາມເພິ່ງພໍໃຈ, ແລະ ອື່ນໆ) ເພື່ອຮັບປະກັນໃຫ້ຂໍ້ມູນຖືກຈັດແບ່ງຕາມກຸ່ມເພດ, ອາຍຸ ແລະ ສາເຫດຕົ້ນຕໍຂອງເຫດການ<br><br>- ທົບທວນຄືນ ແລະ ປັບປຸງຊຸດເຄື່ອງມືສຳລັບການເກັບກຳຂໍ້ມູນເພື່ອລະບຸ ແລະ ປັບປຸງຂໍ້ບົດພ່ອງຕ່າງໆໃຫ້ຖືກຕ້ອງ<br><br>- ຊຸດເຄື່ອງມືທົດສອບພາກສະໜາມ<br><br>- ຊຸດຝຶກອົບຮົມເພີ່ມເຕີມໃຫ້ແກ່ທີມງານ MRE<br><br>- ການຮັບປະກັນຄຸນນະພາບໃຫ້ແກ່ການຈັດຕັ້ງປະຕິບັດແຜນງານທີ່ຄຳນຶງເຖິງບົດບາດຍິງຊາຍ<br><br>- ດຳເນີນກອງປະຊຸມຮ່ວມກັບການນຳຂັ້ນບ້ານ ເພື່ອໂອ້ລົມ ແລະ ຂໍຄວາມເຫັນດີໃນການຍົກສູງການມີສ່ວນຮ່ວມຂອງແມ່ຍິງ ແລະ ເດັກຕື່ມອີກ | -<br>ມີການດຳເນີນວຽກງານໃນເວລາ ແລະ ສະຖານທີ່ທີ່ສະດວກ<br><br>- ຄຳໝັ້ນສັນຍາ ແລະ ທັດສະນະຄະຕິ<br><br>- ການສະໜັບສະໜູນດ້ານແຫຼ່ງທຶນເຂົ້າໃນການຝຶກອົບຮົມ ແລະ ໃຫ້ຄຳປຶກສາດ້ານບົດບາດຍິງຊາຍ<br><br>- ການສະໜັບສະໜູນດ້ານວິຊາການ ຜ່ານການສະໜອງການຝຶກອົບຮົມ, ການປະເມີນຜົນ, ການຕິດຕາມກວດກາ, ການຕີລາຄາ)<br><br>- ຄຳໝັ້ນສັນຍາແຫ່ງຊາດໃນການຈັດຕັ້ງປະຕິບັດຍຸດທະສາດເຊື່ອມສານບົດບາດຍິງຊາຍ<br><br>- ຄະນະກຳມະການໜ່ວຍງານລະຫວ່າງປະເທດ (ອົງການ ສປຊ, ກຸ່ມແມ່ຍິງ, ຈຸດປະສານງານແຫ່ງຊາດ)<br><br>- ຊັບພະຍາກອນມະນຸດທີ່ພຽງພໍໃນການຈັດຕັ້ງປະຕິບັດວຽກງານ<br><br>- ພະນັກງານມີສິດທິທີ່ພຽງພໍ | (ສຳເລັດແລ້ວພ້ອມກັບການຈັດແບ່ງຂໍ້ມູນຕາມກຸ່ມເພດ)<br><br>ຈະກຳນົດໃນພາຍຫຼັງ | - ບົດລາຍງານທີ່ຍືນໂດຍທີມ MRE ແລະ ຄູ່ຮ່ວມມືແມ່ນໄດ້ມີການແບ່ງຂໍ້ມູນອອກຕາມກຸ່ມເພດ, ອາຍຸ ແລະ ສາເຫດຂອງອຸບັດເຫດແລ້ວ<br><br>- ຜົນໄດ້ຮັບຈາກການສຳຫຼວດ KAP ລວມມີຂໍ້ມູນທີ່ກ່ຽວຂ້ອງໂດຍສະເພາະກັບຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງ<br><br>- ຈຳນວນຄັ້ງຂອງການສົນທະນາກຸ່ມສະເພາະທີ່ຖືກຈັດຂຶ້ນຮ່ວມກັບກຸ່ມທີ່ມາຈາກພື້ນທີ່ຕ່າງໆ ເພື່ອລະບຸພຶດຕິກຳສ່ຽງອັນສະເພາະ ພາຍໃນກຸ່ມປະຊາກອນທີ່ເປັນຜູ້ໄດ້ຮັບຜົນປະໂຫຍດ ພາຍໃຕ້ວຽກງານ MRE ໂດຍແບ່ງອອກຕາມກຸ່ມອາຍຸ, ເພດ<br><br>- ຈຳນວນພະນັກງານຊາຍ ແລະ ຍິງທີ່ມີຄຸນສົມບັດເໝາະສົມໃນການສະໜອງວຽກງານ MRE ໃຫ້ແກ່ກຸ່ມເປົ້າໝາຍ: ຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງ<br><br>- ສື່ການຮຽນການສອນທີ່ໄດ້ຮັບການປັບປຸງ ແມ່ນມີເນື້ອຫາທີ່ເຂົ້າໃຈງ່າຍສຳລັບກຸ່ມປະຊາກອນເປົ້າໝາຍ<br><br>- ບົດລາຍງານປະຈຳເດືອນສະແດງໃຫ້ເຫັນເຖິງໂຕເລກທີ່ຊີ້ບອກຂໍ້ມູນກ່ຽວກັບການມີສ່ວນຮ່ວມຂອງຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງເຂົ້າໃນວຽກງານຕ່າງໆ | ດັ່ງທີ່ກ່າວມາຂ້າງເທິງ |



## ພາກເອກະສານຊ້ອນທ້າຍທີ 4: ແຜນການດຳເນີນງານດ້ານບົດບາດຍິງ-ຊາຍສຳລັບ NRA, ສປປ ລາວ, ກັນຍາ 2014

| ເປົ້າໝາຍ | ວຽກງານໃນການບັນລຸເປົ້າໝາຍ | ຊັບພະຍາກອນທີ່ມີ | ຊັບພະຍາກອນທີ່ຕ້ອງການ | ແມ່ນໃຜເປັນຜູ້ຮັບຜິດຊອບ |
|---|---|---|---|---|
| ພະນັກງານໃນຂະແໜງການ ລບຕ ມີຄວາມຄຸ້ນເຄີຍດ້ານລະຫວ່າງຍິງຊາຍຫຼາກຂຶ້ນ, ລວມທັງໃນລະດັບຕັດສິນໃຈ | • ຮັບປະກັນໃຫ້ສະພາບການເຮັດວຽກມີຄວາມເໝາະສົມກັບແມ່ຍິງ ແລະ ຄົນພິການ<br>• ຮ່າງ ແລະ ຮັບຮອງເອົາລະບຽບການປະຕິບັດ ແລະ ກົນໄກການຮ້ອງທຸກ | ຂໍ້ແນະນຳຂອງ GMAP | | ຮອງຫົວໜ້າຝ່າຍສະໜັບສະໜູນຫົວໜ່ວຍຊັບພະຍາກອນມະນຸດ |
| ລະບຸ **ຄວາມຕ້ອງການສຳຫຼັບການຝຶກອົບຮົມ** ກ່ຽວກັບບົດບາດຍິງຊາຍໃນນະຄອນຫຼວງວຽງຈັນ ແລະ ໃນຂັ້ນແຂວງ | • ຮ້ອງຂໍໃຫ້ທຸກພື້ນທີ່ຮັບຜິດຊອບລະບຸຄວາມຕ້ອງການໃນພື້ນທີ່ຂອງຕົນ | ພື້ນທີ່ຮັບຜິດຊອບຂອງ NRA | | ? |
| **ຍຸດທະສາດແຫ່ງຊາດ** ແມ່ນຄຳນຶງເຖິງບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍເຂົ້ານຳ | • ໂອ້ລົມບັນຫາບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຮ່ວມກັບກຸ່ມຂະແໜງການ, ກຸ່ມວິຊາການ, ໃນກອງປະຊຸມປຶກສາຫາລືດ້ານນະໂຍບາຍ | ຂໍ້ແນະນຳຂອງ GMAP | | ຮອງຫົວໜ້າຝ່າຍນະໂຍບາຍ |
| ມາດຕະຖານການເກັບກູ້ລະເບີດແຫ່ງຊາດທີ່ກ່ຽວຂ້ອງ ແມ່ນຄຳນຶງເຖິງບົດບາດຍິງຊາຍ ແລະ ຄວາມຫຼາກຫາຍເຂົ້ານຳ | • ໂອ້ລົມກັບກຸ່ມວິຊາການ, ເພື່ອຮ້ອງຂໍການອານຸມັດຈາກຄະນະບໍລິຫານງານຂອງ NRA | ຄະນະບໍລິຫານຂອງ NRA<br>ກອງທຶນທຣັສ<br>ຄະນະຊີ້ນຳ<br>ຂໍ້ແນະນຳຂອງ GMAP | | ຮອງຫົວໜ້າຝ່າຍສະໜັບສະໜູນວຽກງານຮັບປະກັນ/ຄວບຄຸມຄຸນນະພາບ, ຫົວໜ່ວຍຊັບພະຍາກອນມະນຸດຂອງ NRA, ກຸ່ມວິຊາການຂອງ NRA |
| **SOP ທີ່ກ່ຽວຂ້ອງ (ການສາຫຼວດແບບບໍ່ແມ່ນວິຊາການ, ການການົດບຸລິມະສິດ, ການມອບຮັບເນື້ອທີ່ດິນ, MRE, ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ການຄຸ້ມຄອງຄຸນນະພາບ, ການຈັດຕັ້ງປະຕິບັດ)** ລ້ວນແລ້ວແຕ່ຄຳນຶງເຖິງບົດບາດຍິງຊາຍເຂົ້ານຳ | • ຮ່າງບົດລາຍງານ NTS, ຮ່າງຂໍ້ຊີ້ນຳສຳລັບວຽກງານ NTS, ໂອ້ລົມກັນກ່ຽວກັບ SOP ຮ່ວມກັບກຸ່ມວິຊາການ ແລະ NRA | | | ຮອງຫົວໜ້າຝ່າຍສະໜັບສະໜູນວຽກງານຮັບປະກັນ/ຄວບຄຸມຄຸນນະພາບ, ກຸ່ມວິຊາການຂອງ NRA |
| **ຂໍ້ມູນສຳຫຼວດຕາມກຸ່ມເພດ ແລະ ອາຍຸ** ແມ່ນໄດ້ຮັບການວິເຄາະ ແລະ ນຳໃຊ້ເພື່ອກຳນົດແຜນງານ | | ISMA | | ຫົວໜ່ວຍ MRE<br>ຫົວໜ່ວຍ VA<br>ຫົວໜ່ວຍເກັບກູ້ລະເບີດ |
| ໜ່ວຍປະຕິບັດງານໄດ້ 'ສຸມໃສ່ທຸກຄູວາມພະຍາຍາມທີ່ເໝາະສົມ' **(IMAS 8.10)** ເພື່ອໃຫ້ເຂົ້າເຖິງທຸກແຫຼ່ງຂໍ້ມູນ (ຜູ້ຊາຍ, ເດັກຊາຍ, ເດັກຍິງ, ແມ່ຍິງ)ໃນຊຸມຊົນທີ່ໄດ້ຮັບຜົນກະທົບ | • ການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໃນຂັ້ນແຂວງ<br>• ນຳໃຊ້ເຄືອຂ່າຍຂອງ LWU ແລະ LYU (ຜູ້ຕາງໜ້າໃນເຂດບ້ານ) ເພື່ອໃຫ້ສາມາດເຂົ້າເຖິງກຸ່ມແມ່ຍິງ ແລະ ໄວໜຸ່ມໃນຂັ້ນທ້ອງຖິ່ນໄດ້ | LWU<br>LYU | | ໜ່ວຍປະຕິບັດການຂອງ NRA |
| ແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍໃນຊຸມຊົນທີ່ໄດ້ຮັບຜົນກະທົບແມ່ນໄດ້ຮັບແຈ້ງຂໍ້ມູນກ່ຽວກັບເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວ | • ສົ່ງເສີມການມີສ່ວນຮ່ວມຂອງແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍເຂົ້າໃນພິທີມອບຮັບເນື້ອທີ່ດິນ | | ຫ້ອງການພັດທະນາຊົນນະບົດຂັ້ນບ້ານ / ຄະນະພັດທະນາ | ຫົວໜ່ວຍເກັບກູ້ລະເບີດ, NRA |
| ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍແມ່ນຄຳນຶງເຖິງບົດບາດຍິງຊາຍເຂົ້ານຳ | • ນຳສະເໜີຂໍ້ມູນຜູ້ປະສົບເຄາະຮ້າຍຕາມກຸ່ມເພດ ແລະ ອາຍຸໃນບົດລາຍງານ<br>• ວິເຄາະ STS ເພື່ອໃຫ້ໄດ້ຮັບຂໍ້ມູນກ່ຽວກັບຄວາມຕ້ອງການດ້ານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ | LVIS<br>STS<br>ໂຄງການຮ່ວມກັບອົງການກອຍກາ | ຂໍ້ມູນຈາກໜ່ວຍປະຕິບັດການ | ຫົວໜ່ວຍ VA, NRA |

| | | | | |
|---|---|---|---|---|
| | ຕາມກຸ່ມເພດ ແລະ ອາຍຸ - ນຳໃຊ້ຜົນໄດ້ຮັບເຂົ້າໃນການອອກແບບບໍລິການໃຫ້ແທດເໝາະກັບຄູ່ຮ່ວມມື (ກະຊວງສຶກສາ, ກະຊວງສາທາ, ກະຊວງແຮງງານ)<br>• ສ້າງຊຸດເຄື່ອງມືຕິດຕາມກວດກາດ້ານຄຸນນະພາບ/ປະລິມານ ໃຫ້ແກ່ຜົນກະທົບທີ່ເກີດຂຶ້ນຕໍ່ຜູ້ລອດຊີວິດ | | | |
| ການຄຸ້ມຄອງຄຸນນະພາບ/ການຕິດຕາມກວດກາ ແລະ ປະເມີນແຜນງານ ລບຕ ທັງໝົດກໍ່ຄຳນຶງເຖິງບົດບາດຍິງຊາຍເຂົ້ານຳ | • ເສັ້ນທຽບຖານ ແລະ ຄວາມຄາດຫວັງ<br>• ຂັ້ນຕອນການສຳຫຼວດ PCIA ທີ່ຄຳນຶງເຖິງບົດບາດຍິງຊາຍ | | | |
| ບົດບາດຍິງຊາຍແມ່ນໄດ້ຮັບການເຊື່ອມສານເຂົ້າໃນ MOU ທີ່ເຊັນຮ່ວມກັບໜ່ວຍປະຕິບັດການຕ່າງໆ | • ໂອ້ລົມກັບໜ່ວຍປະຕິບັດງານຕ່າງໆ ແລະ ກະຊວງການຕ່າງປະເທດ ເພື່ອສ້າງຂໍ້ຊີ້ນຳ<br>• ສອບຖາມເຖິງ ລະບຽບການປະຕິບັດ | ເວລາ | | ຫົວໜ່ວຍຄົ້ນຄວ້າ, NRA |
| ບົດລາຍງານປະຈຳປີຂອງ ຂະແໜງການ ລບຕ ນຳສະເໜີຂໍ້ມູນສຳຫຼວດຕາມກຸ່ມເພດ ແລະ ອາຍຸ | • ຂໍ້ມູນສຳຫຼວດແບ່ງຕາມກຸ່ມເພດ ແລະ ອາຍຸສຳລັບວຽກງານ MRE ແລະ VA, ອົງປະກອບຂອງພະນັກງານ | ກິວໜ່ວຍແຜນງານ | | ຫົວໜ່ວຍແຜນງານ |



## ພາກເອກະສານຊ້ອນທ້າຍທີ 5: ຂໍ້ມູນອ້າງອີງຈາກ IMAS ກ່ຽວກັບບົດບາດຍິງ-ຊາຍ ແລະ ຄວາມຫຼາກຫຼາຍ

**IMAS 07.14 ສະບັບທຳອິດ (ກຸມພາ 2019) ການຄຸ້ມຄອງຄວາມສ່ຽງໃນວຽກງານເກັບກູ້ລະເບີດ**

5.9 ອາຍຸ, ບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ
ຄວາມເປັນໄປໄດ້ ແລະ ຜົນທີ່ຕາມມາຂອງຄວາມສ່ຽງແຕ່ລະອັນ ອາດແຕກຕ່າງກັນໄປຕາມແຕ່ລະກຸ່ມອາຍຸ ແລະ ກຸ່ມເພດ ແລະ ກຸ່ມຄົນພິການ, ລວມໄປເຖິງກຸ່ມຊົນເຜົ່າ, ກຸ່ມວັດທະນະທຳ ແລະ ກຸ່ມສາສະໜາຕ່າງໆ. ຜູ້ຄຸ້ມຄອງຄວາມສ່ຽງຈະຕ້ອງຮັບຮູ້ ແລະ ຄຳນຶງເຖິງຄວາມແຕກຕ່າງດັ່ງກ່າວໃນເວລາລະບຸ, ວິເຄາະ, ປະເມີນຜົນ ແລະ ຈັດການກັບຄວາມສ່ຽງ. ຂໍ້ມູນແບ່ງກຸ່ມສຳຫຼວດຕາມເພດ ແລະ ອາຍຸ ຈະຕ້ອງໄດ້ຮັບການເກັບກຳ ແລະ ນຳໃຊ້ເພື່ອສະໜັບສະໜູນການລະບຸ, ການປະເມີນຜົນ, ການວິເຄາະ ແລະ ການຈັດການກັບຄວາມສ່ຽງຢ່າງມີປະສິດທິພາບ. ຜູ້ຄຸ້ມຄອງຄວາມສ່ຽງຈະຕ້ອງຮັບປະກັນໃຫ້ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ ຖືກລວມເຂົ້າໃນຂັ້ນຕອນການປຶກສາຫາລືຢ່າງເໝາະສົມ ທັງຍັງຮັບປະກັນໃຫ້ມີສ່ວນຮ່ວມເຂົ້າໃນຂັ້ນຕອນ ແລະ ລະບຽບປະຕິບັດຕ່າງໆ ພາຍໃນລະບົບຄຸ້ມຄອງຄວາມສ່ຽງຈາກວຽກງານເກັບກູ້ລະເບີດ.

**ການສຳຫຼວດແບບບໍ່ແມ່ນວິຊາການ: IMAS 08.10 ສະບັບທຳອິດ (ປັບປຸງຄັ້ງ 4, ເດືອນກຸມພາ 2019)**

**6.3. ທຸກຄວາມພະຍາຍາມທີ່ສົມເຫດສົມຜົນ:** c) ສະແດງໃຫ້ເຫັນວ່າການເກັບກຳຂໍ້ມູນໃນສະໜາມ ແມ່ນໄດ້ຮັບການວາງແຜນ ແລະ ດຳເນີນການໂດຍທີມສຳຫຼວດທີ່ມີຄວາມສາມາດ ແລະ ໄດ້ຮັບການຢັ້ງຢືນຮັບຮອງມາແລ້ວ, ພ້ອມທັງຂີດຄວາມສາມາດໃນການເຂົ້າເຖິງ ທຸກແຫຼ່ງຂໍ້ມູນທີ່ລວມມີ: ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ;

**7. ວິທີການສຳຫຼວດແບບບໍ່ແມ່ນວິຊາການ:** d) ທີມສຳຫຼວດແບບບໍ່ແມ່ນວິຊາການ ຈະຕ້ອງມີຊັບພະຍາກອນ, ທັກສະ, ຄວາມຮູ້ ແລະ ຂີດຄວາມສາມາດທີ່ພຽງພໍ ເພື່ອດຳເນີນວຽກງານທີ່ບໍ່ແມ່ນວິຊາການ ໃຫ້ໄດ້ຢ່າງມີປສິດທິພາບ ແລະ ປະສິດທິຜົນ, ແລະ ໂດຍສະເພາະຈະຕ້ອງສາມາດມີສ່ວນຮ່ວມ ເຂົ້າໃນການສື່ສານກັບອຳນາດການປົກຄອງທ້ອງຖິ່ນ, ຝ່າຍອື່ນໆທີ່ມີຄວາມສົນໃຈ ແລະ ທຸກແຫຼ່ງຂໍ້ມູນ, ທີ່ລວມມີ: ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ.

**8.2. ການປະເມີນຜົນ ແລະ ການລະບຸແຫຼ່ງຂໍ້ມູນ:** j) ຂໍ້ມູນແມ່ນໄດ້ມາຈາກປະຊາຊົນ ແລະ ສະຖາບັນຕ່າງໆ ທີ່ເປັນຜູ້ສະໜອງແຫຼ່ງຂໍ້ມູນແບບປະຖົມພູມ. ແຫຼ່ງຂໍ້ມູນດັ່ງກ່າວອາດລວມມີ: ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍໃນບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ, ທະຫານ, ຕຳຫຼວດ, ຜູ້ປະສົບເຄາະຮ້າຍຈາກວັດຖຸລະເບີດ ແລະ ພະຍານທຸກຄົນທີ່ກ່ຽວຂ້ອງກັບເຫດການ ຫຼື ອຸບັດເຫດລະເບີດ;

**9. ເງື່ອນໄຂຂອງທີມສຳຫຼວດ:** ທີມສຳຫຼວດແບບບໍ່ແມ່ນວິຊາການ ຈະຕ້ອງມີຊັບພະຍາກອນ, ທັກສະ, ຄວາມຮູ້ ແລະ ຂີດຄວາມສາມາດທີ່ພຽງພໍ ເພື່ອດຳເນີນວຽກງານທີ່ບໍ່ແມ່ນວິຊາການ ໃຫ້ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ແລະ ໂດຍສະເພາະຈະຕ້ອງສາມາດມີສ່ວນຮ່ວມ ເຂົ້າໃນການສື່ສານກັບອຳນາດການປົກຄອງທ້ອງຖິ່ນ, ຝ່າຍອື່ນໆທີ່ມີຄວາມສົນໃຈ ແລະ ທຸກແຫຼ່ງຂໍ້ມູນ, ທີ່ລວມມີ: ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ.

**11. ການມີສ່ວນຮ່ວມຂອງຊຸມຊົນ:** ຈະຕ້ອງສົ່ງເສີມການມີສ່ວນຮ່ວມຂອງທ້ອງຖິ່ນ ເຂົ້າໃນທຸກຂັ້ນຕອນຂອງວຽກງານອານຸຍາດນຳໃຊ້ເນື້ອທີ່ດິນ, ລວມທັງການສຳຫຼວດແບບບໍ່ແມ່ນວິຊາການ, ເພື່ອໃຫ້ໄດ້ຮັບຂໍ້ຕົກລົງຈາກຄູ່ຮ່ວມງານທຸກຝ່າຍທີ່ກ່ຽວຂ້ອງ ແລະ ເພື່ອຮັບປະກັນໃຫ້ເນື້ອທີ່ດິນນັ້ນ ຖືກນຳໃຊ້ຢ່າງເໝາະສົມຫຼັງໄດ້ຮັບອານຸຍາດແລ້ວ. ຜູ້ທີ່ຈະມີສ່ວນຮ່ວມໃນຊຸມຊົນນັ້ນຕ້ອງລວມມີ: ຜູ້ຊາຍ, ແມ່ຍິງ ແລະ ເດັກທີ່ອາໄສ ຫຼື ເຮັດວຽກໃນບໍລິເວນໃກ້ຄຽງກັບພື້ນທີ່ຕ້ອງສົງໄສ ແລະ ໃນຈຸດທີ່ເໝາະສົມ,ລວມໄປເຖິງເຈົ້າຂອງທີ່ດິນນຳ.

**13.2 ອົງການສຳຫຼວດ:** g) ປຶກສາຫາລືຢ່າງໃກ້ຊິດກັບຜູ້ຊາຍ ແລະ ແມ່ຍິງໃນຊຸມຊົນທີ່ໄດ້ຮັບຜົນກະທົບ, ຕາມທີ່ກຳນົດໄວ້, ກ່ຽວກັບທຸກການຕັດສິນໃຈທີ່ເກີດຂຶ້ນຈາກການສຳຫຼວດແບບບໍ່ແມ່ນວິຊາການ;

**ການສຳຫຼວດທາງດ້ານວິຊາການ, IMAS 08.20 ສະບັບທຳອິດ (ປັບປຸງຄັ້ງ 4, ເດືອນກຸມພາ 2019)**

**9.2. ອົງການເກັບກູ້ລະເບີດ**
ອົງການຈັດຕັ້ງທີ່ດຳເນີນການສຳຫຼວດທາງດ້ານວິຊາການຈະຕ້ອງ:
g) ປຶກສາຫາລືຢ່າງໃກ້ຊິດກັບທັງຜູ້ຊາຍ ແລະ ແມ່ຍິງໃນຊຸມຊົນທີ່ໄດ້ຮັບຜົນກະທົບ ກ່ຽວກັບທຸກການຕັດສິນໃຈທີ່ສ້າງຂຶ້ນ ໃນລະຫວ່າງການສຳຫຼວດທາງດ້ານວິຊາການ.

**ການກະກຽມເອກະສານຫຼັງການເກັບກູ້ລະເບີດ: IMAS 08.30 ສະບັບທີສອງ (ປັບປຸງຄັ້ງ 5, ເດືອນມິຖຸນາ 2013)**
ອົງການເກັບກູ້ລະເບີດ ຫຼື ໂຕແທນປະສານງານກັບຊຸມຊົນທີ່ໄດ້ຮັບການສະເໜີຊື່ມາ ຈະຕ້ອງຮັບປະກັນໃຫ້ມີການສະໜອງລາຍລະອຽດ ກ່ຽວກັບທຸກວຽກງານເກັບກູ້ລະເບີດໃນພື້ນທີ່ ແລະ ຜົນສະທ້ອນສຳລັບຜູ້ຊາຍ, ແມ່ຍິງ ແລະ ເດັກ ໃຫ້ແກ່ຊຸມຊົນທີ່ໄດ້ຮັບຜົນກະທົບຊາບ.
ໝາຍເຫດ: ອົງການເກັບກູ້ລະເບີດຈະຕ້ອງອະທິບາຍໃຫ້ຊຸມຊົນທ້ອງຖິ່ນ ແລະ ຜູ້ທີ່ຈະໄດ້ຮັບຜົນປະໂຫຍດຈາກເນື້ອທີ່ດິນທີ່ໄດ້ຮັບການເກັບກູ້ແລ້ວນັ້ນ ຊາບກ່ຽວກັບວຽກງານດັ່ງກ່າວເມື່ອປະຕິບັດສຳເລັດແລ້ວ ແລະ ໄດ້ຮັບການມອບຮັບຢ່າງເປັນທາງການໃຫ້ແກ່ NMAA. ການອະທິບາຍນັ້ນຈະຕ້ອງປະກອບມີຂໍ້ມູນ ທີ່ຊ່ວຍໃຫ້ຜູ້ຊາຍ, ແມ່ຍິງ ແລະ ເດັກເກີດຄວາມໝັ້ນໃຈ ລວມໄປເຖິງຄວາມສ່ຽງທີ່ຍັງຄົງຄ້າງຢູ່.

**ເງື່ອນໄຂຂອງວຽກງານເກັບກູ້ລະເບີດ: IMAS 09.10 ສະບັບທີສອງ (ປັບປຸງຄັ້ງວັນທີ 6 ມັງກອນ 2020)**

**ໝາຍເຫດ:** ການປະສານງານຊຸມຊົນແມ່ນແນໃສ່ຮັບປະກັນໃຫ້ ແຜນງານເກັບກູ້ລະເບີດນັ້ນຄຳນຶງເຖິງ ແລະ ຕອບສະໜອງໄດ້ຄວາມຕ້ອງການ ແລະ ບຸລິມະສິດຂອງຊຸມຊົນ, ລວມໄປເຖິງຄວາມຕ້ອງການອັນສະເພາະຂອງຜູ້ຊາຍ, ແມ່ຍິງ, ເດັກຊາຍ ຫຼື ເດັກຍິງ. ມັນຍັງຈະຕ້ອງຮັບປະກັນໃຫ້ບັນດາຊຸມຊົນ ທີ່ໄດ້ຮັບຜົນກະທົບຈາກລະເບີດນັ້ນເຂົ້າໃຈ ແລະ ສະໜັບສະໜູນວຽກງານເກັບກູ້ລະເບີດ.

**5.2. ອົງການເກັບກູ້ລະເບີດ**

**ອົງການຈັດຕັ້ງທີ່ດຳເນີນວຽກງານເກັບກູ້ລະເບີດຈະຕ້ອງ:**

e) ຮັບປະກັນໃຫ້ຊຸມຊົນທີ່ໄດ້ຮັບຜົນກະທົບຈາກລະເບີດຮັບຮູ້ກ່ຽວກັບວຽກງານເກັບກູ້ລະເບີດໃນພື້ນທີ່ຢ່າງຄົບຖ້ວນ ລວມໄປເຖິງຜົນສະທ້ອນອັນສະເພາະສຳລັບຜູ້ຊາຍ, ແມ່ຍິງ ແລະ ເດັກໃນຊຸມຊົນ.

**ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ (EORE): IMAS 12.10 ສະບັບທີສອງ (ປັບປຸງຄັ້ງທີ 3, ເດືອນກັນຍາ 2020)**

ຄຳວ່າ 'ການໂຄສະນາສຶກສາຄວາມສ່ຽງຈາກ ລບຕ' (EORE) ໝາຍເຖິງວຽກງານຕ່າງໆ ທີ່ແນໃສ່ຫຼຸດຜ່ອນຄວາມສ່ຽງທີ່ກ່ຽວຂ້ອງກັບການບາດເຈັບຈາກວັດຖຸລະເບີດ ໂດຍຜ່ານການຍົກສູງຄວາມຕື່ນໂຕໃຫ້ແກ່ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ ໂດຍອີງຕາມຄວາມສ່ຽງ, ບົດບາດ ແລະ ຄວາມຕ້ອງການທີ່ແຕກຕ່າງຂອງພວກເຂົາ, ລວມໄປເຖິງການສົ່ງເສີມການປັບປ່ຽນພຶດຕິກຳ. ວຽກງານຕົ້ນຕໍລວມມີ: ການເຜີຍແຜ່ຂໍ້ມູນສູ່ສາທາລະນະ, ການສະໜອງການສຶກສາ ແລະ ການຝຶກອົບຮົມ.

**4.3.3 ການລວບລວມຂໍ້ມູນກ່ຽວກັບຊຸມຊົນສ່ຽງໄພ**

ຂໍ້ມູນຜູ້ປະສົບໄພຈະຕ້ອງຖືກຈັດແບ່ງຕາມຜົນທີ່ເກີດຂຶ້ນ (ບາດເຈັບ ຫຼື ເສຍຊີວິດ), ເພດ, ອາຍຸ, ຄວາມພິການ, ທີ່ຕັ້ງພູມລຳເນົາ, ເວລາ, ສາເຫດ ແລະ ສະຖານທີ່ເກີດອຸບັດເຫດ, ປະເພດຂອງວັດຖຸລະເບີດ, ບໍ່ວ່າຊຸມຊົນນັ້ນຈະມີຄວາມຮູ້ກ່ຽວກັບໄພອັນຕະລາຍນັ້ນມາກ່ອນ ຫຼື ບໍ່ກໍ່ຕາມ, ບໍ່ວ່າຊຸມຊົນນັ້ນຈະໄດ້ຮັບການສຶກສາອົບຮົມ ກ່ຽວກັບພຶດຕິກຳທີ່ປອດໄພ, ໄດ້ຮັບການສະໜັບສະໜູນດ້ານວຽກງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ແລະ ການຊ່ວຍເຫຼືອທາງດ້ານເສດຖະກິດ-ສັງຄົມ ຫຼື ບໍ່ກໍ່ຕາມ.

**4.3.4 ຜູ້ປະສານງານຊຸມຊົນ**

ຜູ້ປະສານງານຊຸມຊົນຈະຕ້ອງຮັບປະກັນໃຫ້ສະມາຊິກໃນຊຸມຊົນນັ້ນ ຮັບຮູ້ເຖິງໄພອັນຕະລາຍທີ່ມີຢູ່ ແລະ ມີສ່ວນຮ່ວມເຂົ້າໃນການລະບຸຄວາມສ່ຽງ ລວມໄປເຖິງການກຳນົດບຸລິມະສິດໃຫ້ແກ່ພວກເຂົາເອງ ກ່ຽວກັບການຊ່ວຍເຫຼືອໃນວຽກງານເກັບກູ້ລະເບີດ. ມັນຍັງອາດຊ່ວຍໃຫ້ຊຸມຊົນຕ່າງໆສາມາດສ້າງວິທີແກ້ໄຂບັນຫາທີ່ເໝາະສົມໃນທ້ອງຖິ່ນໄດ້ເພື່ອຊ່ວຍຫຼຸດຜ່ອນຄວາມສ່ຽງໃນຊຸມຊົນໃຫ້ແກ່ພວກເຂົາ. ຜູ້ປະສານງານຊຸມຊົນຍັງຈະຕ້ອງຮັບປະກັນໃຫ້ແຜນງານເກັບກູ້ລະເບີດນັ້ນ ສາມາດແກ້ໄຂຄວາມຕ້ອງການ ແລະ ບຸລິມະສິດໃຫ້ແກ່ຊຸມຊົນໄດ້ ທັງຍັງຕ້ອງຊ່ວຍສົ່ງເສີມການມສ່ວນຮ່ວມຂອງສະມາຊິກໃນຊຸມຊົນ, ເຊັ່ນ: ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ, ລວມໄປເຖິງຜູ້ດ້ອຍໂອກາດ ໃນການກຳນົດບຸລິມະສິດທີ່ກ່ຽວຂ້ອງກັບວຽກງານການອອກແບບ, ການຈັດຕັ້ງປະຕິບັດ, ການຕິດຕາມກວດກາ, ແລະ ການປະເມີນປະຕິບັດການເກັບກູ້ລະເບີດ.

**4.3.5 ການສະໜັບສະໜູນຈາກວຽກງານ EORE ຕໍ່ການສຳຫຼວດ, ການໝາຍຈຸດ ແລະ ການເກັບກູ້ວັດຖຸລະເບີດ**

**ໃນດ້ານການເກັບກູ້ລະເບີດ, ຜູ້ດຳເນີນວຽກງານ EORE ຈະຕ້ອງ:**

d) ແຈ້ງໃຫ້ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍຊາບກ່ຽວກັບພື້ນທີ່ຕ່າງໆ ທີ່ໄດ້ຮັບການເກັບກູ້ແລ້ວ ລວມໄປເຖິງທີ່ຍັງຄົງອັນຕະລາຍຢູ່, ລວມທັງການໝາຍຈຸດພື້ນທີ່ທີ່ໄດ້ຮັບການເກັບກູ້ ແລະ ຍັງບໍ່ທັນຖືກເກັບກູ້ເທື່ອ.

**4.3.6 ການສະໜັບສະໜູນຈາກວຽກງານ EORE ຕໍ່ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ**

ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໝາຍເຖິງ ວຽກງານຕ່າງໆທີ່ແນໃສ່ແກ້ໄຂຄວາມຕ້ອງການ ແລະ ສິດທິໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກວັດຖຸລະເບີດ ແລະ ປະກອບມີການເກັບກຳຂໍ້ມູນ, ສະພາວະສຸກເສີນ ແລະ ການປິ່ນປົວທາງການແພດ, ການຟື້ນຟູ, ການສະໜັບສະໜູນດ້ານຈິດຕະສັງຄົມ, ຄວາມກວມລວມທາງດ້ານເສດຖະກິດ-ສັງຄົມ, ແລະ ກົດໝາຍ ແລະ ນະໂຍບາຍຕ່າງໆ. EORE ຊ່ວຍອຳນວຍຄວາມສະດວກໃຫ້ສາມາດສະໜອງການຊ່ວຍເຫຼືອໃຫ້ແກ່ຜູ້ປະສົບເຄາະຮ້າຍຈາກວັດຖຸລະເບີດ, ລວມທັງຜູ້ລອດຊີວິດໄປຈົນເຖິງຄົນພິການໄດ້. ເວົ້າສະເພາະ, ຜູ້ດຳເນີນວຽກງານ EORE ອາດ: a) ລະບຸຜູ້ປະສົບເຄາະຮ້າຍຈາກວັດຖຸລະເບີດ ລວມທັງຜູ້ລອດຊີວິດ ແລະ ຄົນພິການທີ່ຕ້ອງການຄວາມຊ່ວຍເຫຼືອ.

**5.2. ການດຳເນີນການປະເມີນຄວາມຕ້ອງການ**

ຂັ້ນຕອນການລວບລວມ ແລະ ການວິເຄາະຂໍ້ມູນຈະຕ້ອງມີຄວາມໂປ່ງໃສ. ຂັ້ນຕອນການປະເມີນຄວາມຕ້ອງການ ຈະຕ້ອງຮັບປະກັນການມີສ່ວນຮ່ວມຂອງແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍໃນຊຸມຊົນສ່ຽງໄພ ແລະ ຕ້ອງລວມເອົາກຸ່ມຄົນດ້ອຍໂອກາດ ແລະ ທີ່ເຂົ້າເຖິງໄດ້ຍາກດເຂົ້າຮ່ວມນຳ (ຄົນພິການ, ຜູ້ສູງອາຍຸ, ເດັກທີ່ບໍ່ໄດ້ເຂົ້າໂຮງຮຽນ, ແລະ ອື່ນໆ).

**5.3. ບັນດາຫຼັກການທີ່ນຳໃຊ້ເຂົ້າໃນການດຳເນີນການປະເມີນຄວາມຕ້ອງການ**

ຄວາມຕ້ອງການທີ່ແຕກຕ່າງຂອງແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍຈະຕ້ອງໄດ້ຮັບການພິຈາລະນາ. ຄວາມເຂົ້າໃຈ ແລະ ຄວາມຕ້ອງການຂອງສະມາຊິກໃນຊຸມຊົນ ອາດແຕກຕ່າງກັນໄປຕາມອາຍຸ, ເພດ, ສັງຄົມ, ກຸ່ມຊົນເຜົ່າ, ສາສະໜາ ແລະ ລະດັບການສຶກສາຂອງພວກເຂົາ, ແລະ ອື່ນ ໆ.

**6. ຂໍ້ຄວາມ EORE ແລະ ການສົ່ງຕໍ່ຂໍ້ຄວາມດັ່ງກ່າວ**

**6.1. ທົ່ວໄປ**

ທູກການສື່ສານໃນວຽກງານ EORE ຈະຕ້ອງຢູ່ບົນພື້ນຖານຂອງຍຸດທະສາດ ທີ່ໄດ້ຮັບການວາງແຜນມາຢ່າງຮັດກຸມ ທີ່ແນໃສ່ກຸ່ມທີ່ມີຄວາມສ່ຽງສະເພາະເປັນຫຼັກ ແລະ ຕ້ອງມີຄວາມແທດເໝາະກັບສັງຄົມ, ວັດທະນະທຳ ແລະ ອາຍຸຂອງກຸ່ມເຫຼົ່ານັ້ນ. ໃນຫຼາຍໆສະຖານະການ, ຜູ້ຊາຍ ແລະ ເດັກຊາຍແມ່ນກຸ່ມທີ່ກວມອັດຕາສ່ວນໃຫຍ່ຂອງຈຳນວນຜູ້ປະສົບເຄາະຮ້າຍໂດຍກົງ, ເຖິງຢ່າງໃດກໍ່ຕາມ, ສິ່ງນີ້ບໍ່ໄດ້ໝາຍຄວາມວ່າ ຈະຕ້ອງສຸມໃສ່ທຸກຄວາມພະຍາຍາມຕໍ່ຜູ້ຊາຍເທົ່ານັ້ນ; ອັນດັບທຳອິດ, ແມ່ຍິງ ແລະ ເດັກຍິງເອງກໍ່ມັກຈະເຂົ້າໄປພົວພັນກັບອຸບັດເຫດເຊັ່ນກັນ ເນື່ອງຈາກວຽກງານຕ່າງໆທີ່ພວກເຂົາຕ້ອງເຮັດ, ຫຼາຍຄັ້ງກໍ່ມີສາເຫດມາຈາກການຂາດຄວາມຮູ້ ກ່ຽວກັບລະເບີດທີ່ຕົກຄ້າງຢູ່ໃນພື້ນທີ່ຫຼັງເກີດຂໍ້ພິພາດ, ແລະ ອັນດັບທີສອງ, ແມ່ຍິງແມ່ນກຸ່ມທີ່ເປັນຜູ້ຂັບເຄື່ອນການປ່ຽນແປງທີ່ເຂັ້ມແຂງ, ທີ່ລວມມີ: ການປັບປ່ຽນພຶດຕິກຳໃຫ້ແກ່ເດັກຊາຍ ແລະ ຜູ້ຊາຍໄວໜຸ່ມ/ຜູ້ໃຫຍ່.

**6.3. ການທົບສອບຂໍ້ຄວາມ**

ຜູ້ດຳເນີນວຽກງານ EORE ຈະຕ້ອງທົດສອບທຸກຂໍ້ຄວາມ ແລະ ບັນດາຊ່ອງທາງການນຳສົ່ງຂໍ້ຄວາມທີ່ແນະນຳ ກັບຕົວຢ່າງຜູ້ຕາງໜ້າໃຫ້ແກ່ກຸ່ມເປົ້າໝາຍ ລວມທັງກຸ່ມທີ່ມີຄວາມສ່ຽງສູງ ກ່ອນທີ່ຈະນຳເອົາຂໍ້ຄວາມດັ່ງກ່າວນັ້ນໄປເຜີຍແຜ່ໃນວົງກວ້າງ. ການທົດສອບດັ່ງກ່າວຈະຕ້ອງໄດ້ຮັບການດຳເນີນງານ ໂດຍຄຳນຶງເຖິງຄວາມແຕກຕ່າງດ້ານລະດັບຄວາມຮູ້ໜັງສື, ທັກສະທາງພາສາ ແລະ ຕົ້ນທຶນທີ່ແຕກຕ່າງກັນ, ລະຫວ່າງກຸ່ມສັງຄົມ ຫຼື ກຸ່ມວັດທະນະທຳ, ແລະ ລະຫວ່າງແມ່ຍິງ, ເດັກຍິງ, ເດັກຊາຍ, ແລະ ຜູ້ຊາຍ.

**ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນວຽກງານເກັບກູ້ລະເບີດ: IMAS 13.10 ສະບັບທຳອິດ ປັບປຸງຄັ້ງທີ 1, ວັນທີ 17 ມັງກອນ 2023, ພາກແນະນຳ**

ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍແມ່ນຄວາມຮັບຜິດຊອບແຫ່ງຊາດ ຕໍ່ປະຊາຊົນທຸກຄົນທີ່ໄດ້ຮັບບາດເຈັບ, ແລະ ຕໍ່ຄົນພິການ ຫຼື ຜູ້ທີ່ມີຄວາມສ່ຽງເປັນພິເສດດ້ວຍເຫດຜົນທີ່ກ່ຽວຂ້ອງອື່ນໆ.

ຂະແໜງການເກັບກູ້ລະເບີດມີບົດບາດສຳຄັນ ໃນການສະໜັບສະໜູນບັນດານິຕິບຸກຄົນ ທີ່ມີໜ້າທີ່ຮັບຜິດຊອບຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ພັດທະນາລະບົບ, ລະບຽບປະຕິບັດ ແລະ ຂັ້ນຕອນແຫ່ງຊາດທີ່ກ່ຽວຂ້ອງ, ໄລຍະຍາວ ແລະ ຈຳເປັນເພື່ອຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນທຸກກຸ່ມອາຍຸ, ເພດ ແລະ ຄວາມພິການໃນລັກສະນະແບບກວມລວມ.

ການເກັບກຳ, ການວິເຄາະ ແລະ ການນຳໃຊ້ຂໍ້ມູນສຳຫຼວດທີ່ແບ່ງຕາມກຸ່ມເພດ, ອາຍຸ ແລະ ຄວາມພິການກ່ຽວກັບຜູ້ປະສົບໄພ ຈະເຮັດໃຫ້ສາມາດຊ່ວຍກຳນົດບຸລິມະສິດຕໍ່ການສຳຫຼວດແບບບໍ່ແມ່ນວິຊາການ, ການສຳຫຼວດທາງດ້ານວິຊາການ, ແລະ ການເກັບກູ້ລະເບີດ, ລວມໄປເຖິງການປະສານງານ ແລະ ການກຳນົດເປົ້າໝາຍໃຫ້ແກ່ວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກວັດຖຸລະເບີດໄດ້.

**3. ຄຳສັບ ແລະ ຄວາມໝາຍ**

**3.11 ຜູ້ປະສົບເຄາະຮ້າຍທາງອ້ອມ ທີ່ເປັນສະມາຊິກໃນ**ຄອບຄົວຂອງຜູ້ປະສົບເຄາະຮ້າຍທາງກົງ, ລວມໄປເຖິງບຸກຄົນ ແລະ ຊຸມຊົນຕ່າງໆ ທີ່ໄດ້ຮັບຜົນກະທົບຈາກວັດຖຸລະເບີດ

**5 ບົດບາດ ແລະ ໜ້າທີ່ຮັບຜິດຊອບ**

**5.1 ບັນດາລັດທີ່ໄດ້ຮັບຜົນກະທົບ**

**5.1.1 ອົງການເກັບກູ້ລະເບີດແຫ່ງຊາດ**

**NMAA ຫຼື ອົງການຈັດຕັ້ງທີ່ເຄື່ອນໄຫວໂດຍຕາງໜ້າໃຫ້ແກ່ໜ່ວຍງານດັ່ງກ່າວຈະຕ້ອງ:**

1) ມີສ່ວນຮ່ວມເຂົ້າໃນກົນໄກການປະສານງານດ້ານຄວາມພິການ ແລະ ສະໜັບສະໜູນການມີສ່ວນຮ່ວມຢ່າງຫ້າວຫັນຂອງຜູ້ລອດຊີວິດ ແລະ ຄົນພິການອື່ນໆ. ໃນລະຫວ່າງທີ່ຍັງບໍ່ມີກົນໄກການປະສານງານດັ່ງກ່າວ, ກໍ່ໃຫ້ສົ່ງເສີມ ແລະ ສະໜັບສະໜູນການພັດທະນາ ແລະ ການຈັດຕັ້ງປະຕິບັດ ຄະນະກຳມະການປະສານງານລະຫວ່າງກະຊວງ ແລະ ຄູ່ຮ່ວມງານ ກ່ຽວກັບການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແລະ/ຫຼື ຄວາມພິການ ເພື່ອຮັບປະກັນສິດ ແລະ ໂອກາດອັນເທົ່າທຽມໃຫ້ແກ່ຜູ້ປະສົບເຄາະຮ້າຍ ແລະ ຄົນພິການ;

2) ປະສານສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ເພື່ອດຳເນີນການປະເມີນຄວາມຕ້ອງການໃຫ້ແກ່ຜູ້ລອດຊີວິດ ແລະ ຄົນພິການ ເພື່ອຍົກສູງການວາງແຜນ ແລະ ການກຳນົດແຜນງານ, ໂດຍເນັ້ນໜັກເປັນພິເສດໃສ່ບັນດາຊຸມຊົນທີ່ໄດ້ຮັບຜົນກະທົບຈາກວັດຖຸລະເບີດ;

3) ສົ່ງເສີມຂັ້ນຕອນການວາງແຜນທີ່ອີງໃສ່ຊຸມຊົນ ທີ່ອຳນວຍຄວາມສະດວກໃຫ້ແກ່ ການມີສ່ວນຮ່ວມຢ່າງມີຄວາມໝາຍຂອງຜູ້ລອດຊີວິດ. ອຳນວຍຄວາມສະດວກໃຫ້ແກ່ການເຊື່ອມໂຍງຂັ້ນຕອນການກຳນົດບຸລິມະສິດ ສຳລັບວຽກງານອານຸຍາດນຳໃຊ້ເນື້ອທີ່ດິນ ແລະ ຝ່າຍພັດທະນາເພື່ອສະໜອງການສະໜັບສະໜູນອັນຮອບດ້ານໃຫ້ແກ່ຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍທາງກົງໃນບັນດາກຸ່ມຜູ້ມີຄວາມສ່ຽງສູງທັງໝົດ;

4) ຕິດຕາມກວດກາການອອກແບບ ແລະ ການສະໜອງວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ໂດຍໜ່ວຍງານເກັບກູ້ລະເບີດຕ່າງໆ ຫຼື ຄູ່ຮ່ວມຈັດຕັ້ງປະຕິບັດຂອງພວກເຂົາ ເພື່ອຮັບປະກັນໃຫ້ຜູ້ລອດຊີວິດ ແລະ ຄົນພິການອື່ນໆ ສາມາດເຂົ້າເຖິງວຽກງານດັ່ງກ່າວໄດ້;

5) ຕິດຕາມກວດກາບັນດາຂໍ້ຄວາມທີ່ກວມເອົາຄວາມພິການເຂົ້ານຳ ເພື່ອຮັບປະກັນວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພນັ້ນມີຂໍ້ຄວາມເຫຼົ່ານີ້, ໃນຮູບແບບທີ່ສາມາດເຂົ້າເຖິງໄດ້, ເພື່ອສົ່ງເສີມຄວາມຮູ້, ທັດສະນະຄະຕິ ແລະ ຫຼັກປະຕິບັດດ້ານບວກຕໍ່ຄົນພິການ ໃນບັນດາສະມາຊິກທັງໝົດໃນຊຸມຊົນ;

6) ສົ່ງເສີມຫຼັກການຈ້າງງານທີ່ມີຄວາມກວມລວມ, ບໍ່ຈຳແນກ ແລະ ມີຄວາມເປັນເຫດເປັນຜົນຂອງຂະແໜງການເກັບກູ້ລະເບີດ, ລວມທັງການຈ້າງງານຜູ້ລອດຊີວິດ, ຄົນພິການ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມ; ແລະ

7) ສະໜັບສະໜູນການຮັບຮອງ ແລະ ການຈັດຕັ້ງປະຕິບັດກົດໝາຍ ທີ່ແນໃສ່ແກ້ໄຂຄວາມຕ້ອງການ ແລະ ສິດທິໃຫ້ແກ່ຜູ້ລອດຊີວິດ.

**5.2 ໜ່ວຍປະຕິບັດການເກັບກູ້ລະເບີດ**

**ໜ່ວຍປະຕິບັດການເກັບກູ້ລະເບີດ ຫຼື ຄູ່ຮ່ວມຈັດຕັ້ງປະຕິບັດຂອງໜ່ວຍງານດັ່ງກ່າວຈະຕ້ອງ:**

1) ແຈ້ງໃຫ້ NMAA ຊາບເຖິງທຸກຄວາມພະຍາຍາມທີ່ກ່ຽວຂ້ອງກັບການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍອັນສະເພາະ;

2) ເກັບກຳຂໍ້ມູນຜູ້ປະສົບເຄາະຮ້າຍຕາມກຸ່ມອາຍຸ, ເພດ ແລະ ຄວາມພິການ, ໂດຍສອດຄ່ອງກັບຂໍ້ມູນຂອງລະບຽບການປົກປ້ອງທີ່ກ່ຽວຂ້ອງ. ພວກເຂົາຍັງຕ້ອງຮັບປະກັນໃຫ້ຂໍ້ມູນທີ່ກ່ຽວຂ້ອງນັ້ນ ຖືກເຜີຍແຜ່ຮ່ວມກັບໜ່ວຍງານແຫ່ງຊາດທີ່ເໝາະສົມ, ໄປພ້ອມໆກັບການເຄົາຈັບຍາບັນ ແລະ ຫຼັກການປົກປ້ອງຂໍ້ມູນ (ລວມທັງຄວາມປົດລັບ, ການສະໜອງຂໍ້ມູນ, ຄວາມເຫັນດີ ແລະ ຄວາມປອດໄພ);

3) ເກັບກຳຂໍ້ມູນກ່ຽວກັບບໍລິການກ່ຽວຂ້ອງທີ່ມີ ໃນຂົງເຂດການປະຕິບັດງານ ເພື່ອຊ່ວຍສ້າງລາຍການການບໍລິການ ທີ່ຖືກລວບລວມໂດຍໜ່ວຍງານພາກລັດ;

4) ສະໜັບສະໜຸນການເຜີຍແຜ່ລາຍການການບໍລິການຕ່າງໆ ແລະ ລະບຸ ແລະ ເຊື່ອມໂຍງຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມເຂົ້າກັບບໍລິການຕ່າງໆ ໂດຍຜ່ານການສະໜອງຂໍ້ມູນທີ່ເຂົ້າເຖິງໄດ້ກ່ຽວກັບບໍລິການທີ່ມີຢູ່, ໂດຍຜ່ານການປະສານງານກັບກະຊວງ ຫຼື ໜ່ວຍງານທີ່ກ່ຽວຂ້ອງ;

5) ໃນການປະສານງານຮ່ວມກັບກະຊວງສາທາລະນະສຸກ ຫຼື ໜ່ວຍງານການແພດອື່ນໆທີ່ກ່ຽວຂ້ອງ, ລະບຸ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງ ລະບົບຂົນສົ່ງຜູ້ປ່ວຍຂັ້ນສຸກເສີນ ແລະ ບຸກຄົນອື່ນໆທີ່ໄດ້ຮັບບາດເຈັບທີ່ເປັນອັນຕະລາຍຕໍ່ຊີວິດ ໄປຍັງສູນປິ່ນປົວໃກ້ຄຽງໃນພື້ນທີ່ທີ່ພວກເຂົາປະຕິບັດງານຢູ່. ຖ້າບໍ່ມີລະບົບດັ່ງກ່າວ, ໜ່ວຍງານເກັບກູ້ລະເບີດຈະຕ້ອງເປັນຜູ້ສະໜອງລະບົບຂົນສົ່ງເອງ.

**5.3 ອົງການຊ່ວຍເຫຼືອຜູ້ລອດຊີວິດ ແລະ ໜ່ວຍງານຕາງໜ້າຂອງພວກເຂົາ**

ຜູ້ລອດຊີວິດ ແລະ ຄົນພິການ, ແລະ ອົງການທີ່ຕາງໜ້າໃຫ້ແກ່ຜູ້ລອດຊີວິດ ແລະ ຄົນພິການ (ລວມທັງສະມາຄົມ ແລະ ເຄືອຂ່າຍຕ່າງໆ), ແມ່ນໜ່ວຍງານເຄື່ອນໄຫວວຽກງານທີ່ສຳຄັນ ໃນດ້ານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ, ໂດຍສະເພາະຜ່ານຄວາມພະຍາຍາມຂອງພວກເຂົາໃນການ:

- ຮັບປະກັນ ແລະ ສະໜັບສະໜຸນຫຼັກການສົ່ງເສີມການມີສ່ວນຮ່ວມ;
- ເສີມຂະຫຍາຍຫຼັກການປະຕິບັດວຽກງານທີ່ດີທີ່ສຸດຈາກຂັ້ນສະຖາບັນໄປຍັງຂັ້ນທ້ອງຖິ່ນ; ແລະ
- ຮັບປະກັນໃຫ້ມີຄວາມເຂົ້າໃນອັນຄົບຖ້ວນ ກ່ຽວກັບການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ໃນວຽກງານເກັບກູ້ລະເບີດໃນທຸກລະດັບ.

ອົງການຊ່ວຍເຫຼືອຜູ້ລອກຊີວິດ ແລະ ຄົນພິການອື່ນໆມີມຸມມອງທີ່ເປັນເອກະລັກ ກ່ຽວກັບສະຖານະການ ແລະ ຄວາມຕ້ອງການຂອງພວກເຂົາເອງ ທີ່ກ່ຽວຂ້ອງກັບການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

ອົງການຊ່ວຍເຫຼືອຜູ້ລອກຊີວິດ ຈະຕ້ອງໄດ້ຮັບການປຶກສາຫາລື, ໂດຍຜ່ານກົນໄກແຫ່ງຊາດທີ່ມີຄວາມເໝາະສົມ, ໃນທຸກດ້ານຂອງວຽກງານການວາງແຜນ, ການປະສານງານ, ການຈັດຕັ້ງປະຕິບັດ, ການຕິດຕາມກວດກາ, ການປະເມີນຜົນ ແລະ ການລາຍງານ, ໂດຍສະເພາະໃນທຸກວຽກງານທີ່ສົ່ງຜົນກະທົບຕໍ່ຊີວິດຂອງພວກເຂົາ. ນອກຈາກນັ້ນ, ອົງການຊ່ວຍເຫຼືອຜູ້ລອດຊີວິດທີ່ມີສ່ວນພົວພັນ ໃນເສົາຄ້ຳການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຂອງວຽກງານເກັບກູ້ລະເບີດນັ້ນ ຈະຕ້ອງດຳເນີນວຽກງານທີ່ມີການສອດປະສານກັນຢ່າງກົມກຽວ ກັບຍຸດທະສາດການພັດທະນາຂະແໜງການເກັບກູ້ລະເບີດແຫ່ງຊາດ, ຕາມຄວາມເໝາະສົມ.

**ໜ້າທີ່ຮັບຜິດຊອບອົງການຊ່ວຍເຫຼືອຜູ້ລອດຊີວິດອາດລວມມີ:**

1) ການປະເມີນຄວາມຕ້ອງການຂອງສະມາຊິກເຄືອຂ່າຍ, ທີ່ແບ່ງຕາມກຸ່ມເພດ, ອາຍຸ ແລະ ຄວາມພິການ, ເພື່ອປະກອບເປັນຂໍ້ມູນເຂົ້າໃນການສ້າງແຜນການດຳເນີນງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຫຼື ແຜນການດຳເນີນງານເພື່ອຄົນພິການແຫ່ງຊາດ ແລະ ນະໂຍບາຍອື່ນໆທີ່ກ່ຽວຂ້ອງກັບຂະແໜງການ ທີ່ມີວຽກງານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍເປັນພາກສ່ວນໜຶ່ງໃນນັ້ນ;

2) ການປະກອບສ່ວນຕໍ່ການສ້າງແຜນຍຸດທະສາດແຫ່ງຊາດທີ່ກ່ຽວຂ້ອງໃນຂະແໜງການອື່ນໆ;

3) ການຊ່ວຍໃຫ້ຜູ້ລອດຊີວິດ ແລະ ຄົນພິການອື່ນໆໃນຂັ້ນຊຸມຊົນນັ້ນ ໄດ້ຮັບການຟື້ນຟູ ແລະ ສົ່ງເສີມຄວາມກວມລວມທາງເສດຖະກິດ-ສັງຄົມຂອງພວກເຂົາ, ບົນພື້ນຖານຂອງການມີສ່ວນຮ່ວມຢ່າງເຕັມທີ ແລະ ການເປັນໂຕແທນ;

4) ການດຳເນີນການສະໜັບສະໜຸນໝູ່ເພື່ອນ ແລະ ການເຮັດໜ້າທີ່ເປັນແບບຢ່າງໃຫ້ແກ່ອົງກອນ ແລະ ສະຖາບັນອື່ນໆ;

5) ການເຊື່ອມໂຍງຜູ້ປະສົບເຄາະຮ້າຍເຂົ້າກັບບໍລິການຊ່ວຍເຫຼືອຜູ້ທີ່ຈຳເປັນ;

6) ການສະໜັບສະໜຸນການມີສ່ວນຮ່ວມຂອງຜູ້ລອດຊີສິດ ໃນລະຫວ່າງໄລຍະຂອງການເກັບກຳຂໍ້ມູນເບື້ອງຕົ້ນ ເພື່ອລະບຸຜູ້ປະສົບເຄາະຮ້າຍ, ລວມທັງຜົນຂອງການລອດຊີວິດ, ປະເພດຂອງການບາດເຈັບ, ອາຍຸ, ເພດ, ຂໍ້ບົກພ່ອງທີ່ເກີດກ່ອນປະສົບເຫດ, ສະຖານະບຸກຄະລາກອນພົນລະເຮືອນ ຫຼື ທະຫານ ແລະ ຄວາມຕ້ອງການອັນສະເພາະ;

7) ການສ້າງຄວາມຮ່ວມມື ແລະ ລະບົບເຄືອຂ່າຍ;

8) ການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂອງພາກລັດ, ລວມທັງບັນດາຫ້ອງການ ແລະ ໜ່ວຍງານເກັບກູ້ລະເບີດ;

9) ການຕາງໜ້າໃຫ້ແກ່ຜູ້ປະສົບເຄາະຮ້າຍໃນກອງປະຊຸມລະດັບຊາດ ແລະ ສາກົນ, ກອງປະຊຸມປຶກສາຫາລືແລະ ໂອກາດຕ່າງໆທີ່ກ່ຽວຂ້ອງກັບຜູ້ປະສົບເຄາະຮ້າຍ;

10) ການແບ່ງປັນປະສົບການ ແລະ ຫຼັກປະຕິບັດທີ່ດີຮ່ວມກັບອົງການຈັດຕັ້ງອື່ນໆ;

11) ການສົມທຽບ ແລະ ການຮຽບຮຽງຂໍ້ມູນຂອງຜູ້ໃຫ້ບໍລິການໂດຍລະອຽດ ພ້ອມທັງເຜີຍແຜ່ໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງຊາບ, ໂດຍຮ່ວມມືກັບ NMAA/NMAC;

12) ການອຳນວຍຄາມສະດວກໃຫ້ແກ່ ວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈາກວັດຖຸລະເບີດ ໄປພ້ອມໆກັບການຍົກສູງຄວາມຕື່ນໂຕກ່ຽວກັບສິດທິຂອງຜູ້ປະສົບເຄາະຮ້າຍ ໃນທ້ອງຖິ່ນໃນລະດັບຊຸມຊົນ; ແລະ

13) ການດຳເນີນການລົນນະລົງເພື່ອສົ່ງເສີມສິດທິຂອງຜູ້ປະສົບເຄາະຮ້າຍ ທັງໃນຂັ້ນທ້ອງຖິ່ນ ແລະ ລະດັບຊາດ, ພ້ອມທັງຄວາມເປັນໄປໄດ້ໃນການເຊື່ອມໂຍງໄປເຖິງຄວາມພະຍາຍາມຂອງສາກົນ ໃນການລົນນະລົງສົ່ງເສີມສິດທິດັ່ງກ່າວ.

**ພາກເອກະສານຊ້ອນທ້າຍ B (ພາກຂໍ້ມູນ) ຂໍ້ມູອ້າງອີງ**

**A.5 ການສະໜັບສະໜຸນທາງຈິດຕະວິທະຍາ ແລະ ຈິດຕະສັງຄົມ**

**ການສະໜັບສະໜຸນທາງຈິດຕະວິທະຍາ ແລະ ຈິດຕະສັງຄົມແມ່ນພາກສ່ວນໜຶ່ງຂອງຂະແໜງການສຸຂະພາບຈິດ ແລະ ຈິດຕະສັງຄົມ. ມັນປະກອບມີ:**

- ການສະໜັບສະໜຸນທາງຈິດຕະວິທະຍາ: ການໃຫ້ຄຳປຶກສາໂດຍຜູ້ຊ່ຽວຊານດ້ານຈິດຕະວິທະຍາ ແລະ ນັກຈິດຕະສາດ;
- ການສະໜັບສະໜຸນດ້ານຈິດຕະສັງຄົມ: ກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບວັດທະນະທຳ, ກິລາ ແລະ ງານອາດິເຫຼກ, ທີ່ແນໃສ່ປັບປຸງສຸຂະພາບຈິດໃຫ້ດີຂຶ້ນ; ແລະ
- ການສະໜັບສະໜຸນແບບໝູ່ຕໍ່ໝູ່: ການສະໜອງການສະໜັບສະໜຸນທາງສັງຄົມ ແລະ ທາງອາລົມໂດຍຜ່ານບຸກຄົນທີ່ຕ້ອງພົບພໍ້ກັບສະຖານະການ ແລະ ບັນຫາທ້າທາຍທີ່ຄ້າຍຄືກັນ ໂດຍຜ່ານການພົວພັນກັນແບບຕໍ່ໜ້າ, ຫຼື ຜ່ານທາງຄອບຄົວ ແລະ ກຸ່ມສະໜັບສະໜຸນຂອງສັງຄົມ.

**A.6 ຄວາມກວມລວມທັງເສດຖະກິດ-ສັງຄົມ**

**A.6.1 ຄວາມກວມລວມທົ່ວໄປທາງເສດຖະກິດ-ສັງຄົມ** ແມ່ນກ່ຽວຂ້ອງກັບຂະແໜງການສຶກສາ, ການຈ້າງງານ, ແລະ ການປົກປ້ອງທາງສັງຄົມ. ຄຳສັບທີ່ມີຄວາມໝາຍກວ້າງນີ້ໝາຍເຖິງຄວາມກວມລວມທາງສັງຄົມ, ການສຶກສາທີ່ມີຄວາມກວມລວມ ແລະ ຄວາມກວມລວມທາງເສດຖະກິດ. ຄວາມກວມລວມທາງເສດຖະກິດ ປະກອບມີການຈ້າງງານແບບມີເງິນເດືອນ, ການປະກອບທຸລະກິດຂອງຕົນເອງ ແລະ ການປົກປ້ອງທາງສັງຄົມ.

**A.6.2 ຄວາມກວມລວມທາງສັງຄົມ**

**ອົງປະກອບຕົ້ນຕໍຂອງຄວາມກວມລວມທາງສັງຄົມແມ່ນ:**

- ການສະໜັບສະໜຸນທາງສັງຄົມສະເພາະບຸກຄົນ; ແລະ
- ການສະໜັບສະໜຸນເພື່ອສົ່ງເສີມສາຍພົວພັນທີ່ເຂັ້ມແຂງ ແລະ ຊີວິດການເປັນຢູ່ໃນຄອບຄົວ: ການຮັບປະກັນໃຫ້ທຸກຄົນມີສາຍພົວພັນທີ່ດີຮ່ວມກັນ ໂດຍຜ່ານການປັບປ່ຽນທັດສະນະຄະຕິດ້ານລົບໃນຄອບຄົວ ແລະ ຊຸມຊົນ.

ມັນຍັງແນໃສ່ປ້ອງກັນ ແລະ ແກ້ໄຂບັນຫາຄວາມຮຸນແຮງຕໍ່ຜູ້ລອດຊີວິດ ແລະ ຄົນພິການອື່ນໆ;

- ກິດຈະກຳທາງວັດທະນະທຳ, ກິລາ ແລະ ງານອາດິເຫຼກ; ແລະ
- ການລົບລ້າງອຸປະສັກດ້ານແນວຄິດເໝົາລວມ ແລະ ທັດສະນະຄະຕິທາງລົບ



**A.7 ກົດໝາຍ ແລະ ນະໂຍບາຍ**

ຫຼັກການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ

- ການບໍ່ຈຳແນກ: ຈະຕ້ອງບໍ່ມີການຈຳແນກໃນເວລາຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ໃນກຸ່ມຂອງຜູ້ປະສົບເຄາະຮ້າຍເອງ, ຫຼື ລະຫວ່າງຜູ້ປະສົບເຄາະຮ້າຍ ແລະ ຜູ້ທີ່ໄດ້ຮັບບາດເຈັບຈາກສາເຫດອື່ນໆ. ການປິ່ນປົວທີ່ແຕກຕ່າງກັນນັ້ນຈະຕ້ອງຢູ່ບົນພື້ນຖານດ້ານຄວາມຕ້ອງການທາງການແພດ, ການຟື້ນຟູ, ຈິດຕະວິທະຍາ ຫຼ. ເສດຖະກິດ-ສັງຄົມຂອງຜູ້ປະສົບເຄາະຮ້າຍ, ລວມທັງເພື່ອສະໜອງທີ່ພັກອາໄສທີ່ເໝາະສົມ. ໃນເວລາຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈະຕ້ອງບໍ່ມີການຈຳແນກບົນພື້ນຖານຂອງປັກໄຈດ້ານຄວາມຫຼາກຫຼາຍອື່ນໆ, ເຊັ່ນ: ຄວາມພິການ, ເພດ, ໂຕຕົນ, ອາຍຸ, ກຸ່ມຊົນເປົ່າ, ເຊື້ອຊາດ, ສາສະໜາ, ພາສາ, ສະຖານະທາງເສດຖະກິດ-ສັງຄົມ, ຫຼື ແງ່ມຸມອື່ນໆດ້ານໂຕຕົນ.
- ການມີສ່ວນຮ່ວມ ແລະ ຄວາມກວມລວມ: ຜູ້ປະສົບເຄາະຮ້າຍ ແລະ ອົງກອນທີ່ຕາງໜ້າໃຫ້ແກ່ພວກເຂົາ ຈະຕ້ອງໄດ້ຮັບການປຶກສາຫາລືນຳ ແລະ ມີສ່ວນຮ່ວມເຂົ້າໃນຂັ້ນຕອນການຕັດສິນໃຈທີ່ກ່ຽວຂ້ອງ ພ້ອມທັງການຈັດຕັ້ງປະຕິບັດຂັ້ນຕອນດັ່ງກ່າວ, ລວມທັງໃນນະໂຍບາຍ ແລະ ແຜນງານຕ່າງໆທີ່ກ່ຽວຂ້ອງ. - ຄວາມສາມາດໃນການເຂົ້າເຖິງ: ຜູ້ລອດຊີວິດ, ຄົນພິການອື່ນໆ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມ, ລວມໄປເຖິງຄົນພິການ, ຈະຕ້ອງສາມາດເຂົ້າເຖິງບໍລິການທີ່ພວກເຂົາຕ້ອງການໄດ້. ໃນຈຸດທີ່ມີອຸປະສັກກີດຂວາງການເຂົ້າເຖິງບໍລິການເຫຼົ່ານັ້ນ, ບັນຫາເຫຼົ່ານີ້ຈະຕ້ອງໄດ້ຮັບການແກ້ໄຂຢ່າງເປັນລະບົບ. ອຸປະສັກເຫຼົ່ານີ້ອາດມີຄວາມກ່ຽວພັນກັບຄວາມສາມາດໃນການເຂົ້າເຖິງບໍລິການໂຕຈິງ, ທາງການເງິນ, ທາງດິຈິຕອນ, ຫຼື ທາງໄກທີ່ລວມມີທີ່ຕັ້ງ, ພາສາ, ຂໍ້ພິຈາລະນາທາງກົດໝາຍ, ແລະ ອາຍຸ, ເພດ, ຄວາມພິການ ແລະ ບັນຖັດຖານທາງວັດທະນະທຳ, ແລະ ປັດໄຈອື່ນໆ, ທີ່ອາດກີດຂວາງການມີສວນຮ່ວມເຂົ້າໃນບໍລິການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ. ຈະຕ້ອງມີການສະໜອງທີ່ພັກອາໄສທີ່ເໝາະສົມ ໃຫ້ແກ່ຜູ້ທີ່ມີຄວາມຕ້ອງການນຳອີກ.
- ຄວາມສ່ຽງ: ເງື່ອນໄຂດ້ານສະພາບແວດລ້ອມ ແລະ ສັງຄົມອັນກວ້າງຂວາງ ແລະ ຄວາມສ່ຽງສຳລັບຜູ້ລອດຊີວິດ, ຄົນພິການອື່ນໆ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມ, ອາດເຮັດໃຫ້ຜົນກະທົບທາງລົບຈາກວັດຖຸລະເບີດນັ້ນຮ້າຍແຮງຂຶ້ນຕື່ມອີກ. ເວົ້າສະເພາະ, ອຸປະສັກອັນຫຼາກຫຼາຍທາງດ້ານສະພາບແວດລ້ອມ ແລະ ທັດສະນະຄະຕິ, ອາດເຮັດໃຫ້ຜູ້ປະສົບເຄາະຮ້າຍ ແລະ ຄົນພິການຕົກຢູ່ໃນສະຖານະການທີ່ຍາກລຳບາກທາງການເງິນ, ສັງຄົມ, ຮ່າງກາຍ ແລະ ຄວາມປອດໄພ, ອັນຈະເປັນສິ່ງກີດຂວາງພວກເຂົາ ຈາກການມີສ່ວນຮ່ວມຢ່າງເຕັມທີ່ ແລະ ເທົ່າທຽມ. ດ້ວຍເຫດນີ້, ປັດໄຈຕ່າງໆທີ່ເຮັດໃຫ້ພວກເຂົາຕ້ອງຕົກຢູ່ໃນສະຖານະການສ່ຽງ ຈະຕ້ອງຖືກພິຈາລະນາເຂົ້າໃນນະໂຍບາຍ ແລະ ແຜນງານທີ່ກ່ຽວຂ້ອງ.
- ອາຍຸ, ເພດ,ຄວາມພິການ, ແລະ ຂໍ້ພິຈາລະນາດ້ານຄວາມຫຼາກຫຼາຍອື່ນໆ: ອາຍຸ, ເພດ, ຄວາມພິການ ແລະ ຄວາມຕ້ອງການອັນຫຼາກຫຼາຍອື່ນໆ ແລະ ປະສົບການຂອງຜູ້ເຄາະຮ້າຍ ຈະຕ້ອງໄດ້ຮັບການພິຈາລະນາເຂົ້າໃນຂັ້ນຕອນການອອກແບບ, ການວາງແຜນ ແລະ ການຈັດຕັ້ງປະຕິບັດຄວາມພະຍາຍາມຕ່າງໆ ທີ່ກ່ຽວຂ້ອງກັບການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໂດຍສະເພາະ. ບໍລິການຊ່ວຍເຫຼືອຜູ້

ປະສົບເຄາະຮ້າຍ ຈະຕ້ອງຖືກດັດປັບໃຫ້ສອດຄ່ອງກັບຄວາມຕ້ອງການ ແລະ ຄວາມເປັນຈິງສຳລັບແຕ່ລະກຸ່ມ. ເພື່ອເປັນການສະໜັບສະໜູນຂັ້ນຕອນການກຳນົດແຜນງານທີ່ມີປະສິດທິພາບ, ຂໍ້ມູນຜູ້ປະສົບໄພ (ຫຼື ທີ່ຮູ້ຈັກກັນໂດຍທົ່ວໄປວ່າ ຂໍ້ມູນຜູ້ປະສົບເຄາະຮ້າຍ) ແລະ ຂໍ້ມູນຜູ້ໄດ້ຮັບຜົນປະໂຫຍດ, ຈະຕ້ອງຖືກຈັດແບ່ງຕາມກຸ່ມເພດ, ອາຍຸ ແລະ ຄວາມພິການ.

- ແນວທາງທີ່ອີງໃສ່ສິດທິ: ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ແມ່ນກ່ຽວຂ້ອງກັບການບັນລຸສິດທິມະນຸດ ໃຫ້ແກ່ຜູ້ທີ່ໄດ້ຮັບບາດເຈັບ, ຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມ ໂດຍອີງຕາມກົດໝາຍມະນຸດຊະທຳສາກົນ ແລະ ກົດໝາຍສິດທິມະນຸດສາກົນ. ພວກເຂົາຈະຕ້ອງມີສິດເຂົ້າເຖິງ:

- ມາດຕະຖານດ້ານສຸຂະພາບ, ການຟື້ນຟູ, ການສຶກສາແບບກວມລວມ, ວຽກງານ ແລະ ການຈ້າງງານໃນລະດັບທີ່ສຸດທີ່ສຸດ ເທົ່າທີ່ຈະບັນລຸໄດ້;
- ການມີສ່ວນຮ່ວມ ແລະ ຄວາມກວມໃນສັງຄົມຢ່າງຄົບຖ້ວນ;
- ມາດຕະຖານການດຳລົງຊີວິດ ແລະ ການປົກປ້ອງທາງສັງຄົມທີ່ເໝາະສົມ;
- ໃນຈຸດທີ່ເໝາະສົມ, ໃຫ້ສືບຕໍ່ດຳເນີນການແກ້ໄຂບັນຫາລະເມີດສິດທິມະນຸດສາກົນ ທີ່ກ່ຽວຂ້ອງກັບວຽກງານເກັບກູ້ລະເບີດ ໃຫ້ໄດ້ຢ່າງມີປະສິດທິພາບ, ຫຼື ການລະເມີດກົດໝາຍສິດທິມະນຸດສາກົນ [ໃນຂັ້ນຮ້າຍແຮງ]; ແລະ
- ການບໍ່ຈຳແນກ.

**ຂໍ້ຊີ້ນຳສຳລັບການຕີລາຄາມາດຕະການແຊກແຊງໃນຂະແໜງການເກັບກູ້ລະເບີດ: IMAS 14.10 ສະບັບທຳອິດ (ປັບປຸງຄັ້ງທີ 3, ເດືອນມິຖຸນາ 2013)**

1. ການຕີລາຄາ - ໂດຍທົ່ວໄປ
ການປະເມີນຜົນໝາຍເຖິງຂັ້ນຕອນການກຳນົດ 'ຄວາມຄຸ້ມຄ່າ ຫຼື ຄວາມສຳຄັນ' ໃຫ້ແກ່ວຽກງານ, ນະໂຍບາຍ, ໂຄງການ ຫຼື ແຜນງານໃດໜຶ່ງ. 'ຄວາມຄຸ້ມຄ່າ ຫຼື ຄວາມສຳຄັນ' ສຳລັບການຕີລາຄາວຽກງານເກັບກູ້ລະເບີດນັ້ນ ແມ່ນຈະໄດ້ຮັບການປະເມີນໂດຍຫຼັກແລ້ວ ໃນດ້ານຄວາມປ່ຽນແປງທີ່ເກີດຂຶ້ນກັບຄວາມເປັນຢູ່ຂອງປະຊາຊົນ (ຜູ້ຊາຍ, ແມ່ຍິງ ແລະ ເດັກ) ໃນບັນດາຊຸມຊົນ, ຂົງເຂດ ແລະ ປະເທດທີ່ໄດ້ຮັບຜົນກະທົບຈາກລະເບີດ...

**5. ຈຸດປະສົງຂອງການຕີລາຄາ**
ການຕີລາຄາຈະຕ້ອງແນໃສ່ສ້າງຜົນປະໂຫຍດໃຫ້ແກ່ຄູ່ຮ່ວມງານຫຼາຍພາກສ່ວນ, ລວມທັງຜູ້ຊາຍ, ແມ່ຍິງ ແລະ ເດັກທີ່ໄດ້ຮັບຜົນປະທົບຈາກວຽກງານເກັບກູ້ລະເບີດ, ໜ່ວຍງານຜູ້ໃຫ້ທຶນທີ່ສະໜັບສະໜູນວຽກງານເກັບກູ້ລະເບີດ, ລັດຖະບານ ແລະ ບັນດາກົງຈັກສະໜັບສະໜູນຕ່າງໆ, ເຊັ່ນ: NMAA ແລະ ອົງການແມັກ, ແລະ ໜ່ວຍງານຈັດຕັ້ງປະຕິບັດ ແລະ ຄູ່ຮ່ວມມືຕ່າງໆ.

**6. ເງື່ອນໄຂການຕີລາຄາ**
**6.1. ເງື່ອນໄຂ**
**ເງື່ອນໄຂທົ່ວໄປອື່ນໆທີ່ອາດຖືກລວມເຂົ້າໃນການຕີລາຄາໃນວຽກງານເກັບກູ້ລະເບີດລວມມີ:**
j) ຄວາມເພິ່ງພໍໃຈຂອງຜູ້ໄດ້ຮັບບໍລິການທັງຊາຍ ແລະ ຍິງ; ແລະ
k) ຄວາມເພິ່ງພໍໃຂຂອງຜູ້ໄດ້ຮັບຜົນປະໂຫຍດ.

**7.3. ຜົນໄດ້ຮັບຂອງການຕີລາຄາ**
ໝາຍເຫດ: ໝາກຜົນທີ່ໄດ້ຮັບນັ້ນອາດແຕກຕ່າງກັນໄປລະຫວ່າງຜູ້ໄດ້ຮັບຜົນປະໂຫຍດ ໂດຍອີງຕາມບົດບາດຍິງຊາຍ. ຍົກຕົວຢ່າງ, ຜູ້ຊາຍ ແລະ ແມ່ຍິງອາດບໍ່ສາມາດເຂົ້າເຖິງ ແລະ ນຳໃຊ້ເນື້ອທີ່ດິນໄດ້ຢ່າງເທົ່າທຽມກັນ ພາຍຫຼັງທີ່ມັນໄດ້ຮັບການເກັບກູ້ແລ້ວ. ການວິເຄາະຄວາມຕ້ອງການດ້ານບົດບາດຍິງຊາຍ ຈະຕ້ອງຖືກດຳເນີນການເພື່ອຮັບປະກັນໃຫ້ໝາກຜົນທີ່ໄດ້ຮັບນັ້ນ ເປັນປະໂຫຍດຕໍ່ຜູ້ຊາຍ, ແມ່ຍິງ ແລະ ເດັກ.

**10.5. ການມີສ່ວນຮ່ວມຂອງຄູ່ຮ່ວມງານ**
ໃນທຸກກໍລະນີທີ່ເປັນໄປໄດ້, ຜູ້ໄດ້ຮັບຜົນປະໂຫຍດ (ຜູ້ຊາຍ ແລະ ແມ່ຍິງ) ແລະ ຄູ່ຮ່ວມຈັດຕັ້ງປະຕິບັດມາດຕະການແຊກແຊງອື່ນໆ ຈະຕ້ອງມີສ່ວນຮ່ວມເຂົ້າໃນຂັ້ນຕອນການວາງແຜນການຕີລາຄາ ເພື່ອສົ່ງເສີມຄວາມເປັນເຈົ້າການຕໍ່ຜົນໄດ້ຮັບຂອງການຕີລາຄານັ້ນ.

ໃນທຸກກໍລະນີທີ່ເໝາະສົມ, ຈະຕ້ອງສຸມໃສ່ຄວາມພະຍາຍາມເປັນພິເສດ ເພື່ອໃຫ້ໄດ້ຮັບມຸມມອງຂອງແມ່ຍິງ ແລະ ກຸ່ມຕ່າງໆ ຜູ້ທີ່ຍັງຂາດໂອກາດໃນການສະແດງມຸມມອງຂອງຕົນ. ຖ້າການຕີລາຄາຈຳເປັນຕ້ອງໄດ້ປະເມີນຄວາມປ່ຽນແປງ ຕໍ່ຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນປະໂຫຍດ, ຈະຕ້ອງໄດ້ສ້າງຂໍ້ກຳນົດໃນການປຶກສາຫາລືກັບຜູ້ໄດ້ຮັບຜົນປະໂຫຍດ (ຫຼື ໂຕແທນຂອງພວກເຂົາ) ຂຶ້ນ ແລະ, ຖ້າເປັນໄປໄດ້, ແມ່ນໃຫ້ມີສ່ວນຮ່ວມເຂົ້າໃນການຕີລາຄາ ແລະ ກຳນົດການດຳເນີນງານອັນຈຳເປັນໃນພາຍຫຼັງ ໂດຍອີງຕາມຜົນໄດ້ຮັບ, ຂໍ້ແນະນຳ, ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຕີລາຄານັ້ນ.

**15.3. ອົງການເກັບກູ້ລະເບີດ**
ອົງການຈັດຕັ້ງປະຕິບັດໂຄງການເກັບກູ້ລະເບີດ
a) ຈະຕ້ອງຕີລາຄາຄວາມຄືບໜ້າຂອງຕົນເອງ ໂດຍສົມທຽບໃສ່ກັບເປົ້າໝາຍ ແລະ ຈະຕ້ອງຕີລາຄາເປົ້າໝາຍຈຸດສຸມຕ່າງໆ ແລະ, ໃນຈຸດທີ່ເປັນໄປໄດ້, ຜົນກະທົບຂອງມາດຕະການແຊກແຊງຂອງພວກເຂົາ, ໃນລັກສະນະທີ່ຄຳນຶງເຖິງບົດບາດຍິງຊາຍສຳລັບຜູ້ຊາຍ ແລະ ແມ່ຍິງ. ພວກເຂົາຈະຕ້ອງມີການວາງແຜນຢ່າງເໝາະສົມ ເພື່ອດຳເນີນການຕີລາຄາ ແລະ ຮັບປະກັນໃຫ້ມີຊັບພະຍາກອນຈຳເປັນໄວ້ພ້ອມ; ແລະ
ຈະຕ້ອງຮັບປະກັນໃຫ້ຄູ່ຮ່ວມງານທີ່ກ່ຽວຂ້ອງນັ້ນ ມີສ່ວນຮ່ວມເຂົ້າໃນຂັ້ນຕອນການຕີລາຄາ. ເວົ້າສະເພາະ, ພວກເຂົາຈະຕ້ອງຮັບປະກັນໃຫ້ຊຸມຊົນມີສ່ວນຮ່ວມ ແລະ ຊຸກຍູ້ການນຳໃຊ້ການຕີລາຄາເປັນຂັ້ນຕອນການສຶກສາ ເພື່ອສ້າງຂີດຄວາມສາມາດໃຫ້ແກ່ສະມາຊິກໃນຊຸມຊົນ ແລະ ພະນັກງານຂອງອົງການເກັບກູ້ລະເບີດ.



## ພາກເອກະສານຊ້ອນທ້າຍທີ 6: ຊຸດເຄື່ອງມືພາກສະໜາມ

**ຂໍ້ຊີ້ນຳຕໍ່ຊຸດຄຳຖາມທັງໝົດ**

ທຸກພາກແມ່ນອ້າງອີງເຖິງ GEDSI - ຄວາມສະເໝີພາບຍິງຊາຍ, ຄວາມພິການ ແລະ ຄວາມກວມລວມໃນສັງຄົມ

ຍ້ອນໜຶ່ງໃນຈຸດປະສົງຂອງປະຕິບັດການພາກສະໜາມ ລວມມີການປະເມີນຄວາມປ່ຽນແປງ ໂດຍສົມທຽບໃສ່ກັບການຈັດຕັ້ງປະຕິບັດ ຂໍ້ແນະນຳຕ່າງໆຈາກບົດຄົ້ນຄວ້າ ລບຕ ແລະ ບົດບາດຍິງຊາຍຄັ້ງທີ່ຜ່ານມາໃນ ສປປ ລາວ, ບາງຊຸດຄຳຖາມແມ່ນຖືກນຳໃຊ້ເຂົ້າໃນບົດຄົ້ນຄວ້າເຫຼົ່ານີ້, ທັງຍັງໄດ້ມີການລວມເອົາຂໍ້ແນະນຳຕ່າງໆ ເຂົ້າໃນຊຸດເຄື່ອງມືຂອງຄູ່ຮ່ວມງານ. ນອກຈາກນັ້ນ, ບາງມາດຕະຖານດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຈາກ UNMAS ແລະ GICHD/GMAP ກໍ່ໄດ້ຖືກລວມເຂົ້ານຳ ເພື່ອໄວ້ປະເມີນຄວາມສອດຄ່ອງກັບມາດຕະຖານຕ່າງໆ. ສິ່ງເຫຼົ່ານີ້ແມ່ນສາມາດລະບຸໄດ້ໂດຍຜ່ານລະຫັດສີດັ່ງຕໍ່ໄປນີ້:

- (brown) ຄວາມສອດຄ່ອງກັບບົດຄວາມຕີພິມຂອງ GMAP/GICHD
- (blue) ຄວາມສອດຄ່ອງກັບຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ UNMAS ສຳລັບວຽກງານເກັບກູ້ລະເບີດ
- (green) ຂໍ້ແນະນຳການສຶກສາດ້ານບົດບາດຍິງຊາຍໃນຂະແໜງການ ລບຕ ຂອງ ອົງການແມັກ ໃນປີ 2008
- (orange) ບົດລາຍງານດ້ານບົດບາດຍິງຊາຍ ແລະ ລບຕ ຂອງ GMAP ແລະ NRA ໃນປີ 2014
- (pink) ຂໍ້ແນະນຳການເຊື່ອມສານບົດບາດຍິງຊາຍ ເຂົ້າໃນຂະແໜງການ ລບຕ ຂອງ ອົງການ ສປຊ ເພື່ອແມ່ຍິງ ແລະ LWU

**ຄູ່ຮ່ວມງານໃນ ນະຄອນຫຼວງວຽງຈັນ**

5.1 **ອົງການ** NRA **ແລະ ກອງຮ້ອຍ 58**

**ສະຖິຕິທົ່ວໄປ**

- ມີວິທີໃນການລວບລວມຂໍ້ມູນກ່ຽວກັບເຫດການເສຍຊີວິດ ແລະ ບາດເຈັບຈາກ ລບຕ ຄືແນວໃດ - ຂໍ້ມູນນີ້ແມ່ນຖືກຈັດແບ່ງຕາມກຸ່ມເພດ, ອາຍຸ ແລະ ຄວາມພິການ ຫຼື ບໍ່?
- ເດັກຊາຍ, ເດັກຍິງ, ແມ່ຍິງ, ຜູ້ຊາຍ, ກຸ່ມຊົນເຜົ່າ, ໂດຍສະເພາະໃນກຸ່ມບ້ານທີ່ຖືກລະບຸໃຫ້ເປັນພື້ນທີ່ລົງຢ້ຽມຢາມນັ້ນ, ມີແນວໂນ້ມໂດຍທົ່ວໄປຄືແນວໃດແດ່?
- ມີການເຄື່ອນໄຫວວຽກໂດຍທົ່ວໄປອັນໃດແດ່ ໃນເວລາເກີດອຸບັດເຫດຕໍ່ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍຈາກກຸ່ມຕ່າງໆ?
- ມີວິທີການແກ້ໄຂບັນຫາ GEDSI ຄືແນວໃດໂດຍຜ່ານ: ຂໍ້ມູນອຸບັດເຫດ (SADD), ການສຳຫຼວດ KAP(B), ແຫຼ່ງຂໍ້ມູນອື່ນໆ ແລະ ການວິເຄາະຂໍ້ມູນ

**ຄວາມຮັບຜິດຊອບ**

- ນະໂຍບາຍ/ຍຸດທະສາດ/ແນວທາງ - ມີການຕິດຕາມຜົນການຈັດຕັ້ງປະຕິບັດ ຂໍ້ແນະນຳພາຍໃຕ້ບົດລາຍງານການຄົ້ນຄວ້າຂອງ GMAP/GICHD ໃນປີ 2013 ແລະ 2014 ຄືແນວໃດແດ່? (ພຽງແຕ່ NRA ເທົ່ານັ້ນ)
- ໄດ້ມີການກຳນົດງົບປະມານສະເພາະໃຫ້ແກ່ບັນຫາ GEDSI ຫຼື ບໍ່?
- ແມ່ນໃຜທີ່ເປັນຜູ້ຮັບຜິດຊອບຂັ້ນສຸດທ້າຍ ສຳລັບການດຳເນີນວຽກງານ GEDSI ແລະ ມີການຕີລາຄາຄືແນວໃດ? ສິ່ງນີ້ແມ່ນໄດ້ຖືກລວມເຂົ້າໄວ້ໃນ ຂອບໜ້າວຽກ ຂອງພວກເຂົາ ຫຼື ບໍ່?
- ຈຸດປະສານງານດ້ານບົດບາດຍິງຊາຍມີບົດບາດຄືແນວໃດ, ພວກເຂົາມີ ຂອບໜ້າວຽກ ຫຍັງແດ່ ແລະ ພວກເຂົາມີການລາຍງານຜົນໄດ້ຮັບຄືແນວໃດ?

- o ມີການຄັດເລືອກເອົາຈຸດປະສານງານດ້ານບົດບາດຍິງຊາຍຄືແນວໃດ - ຜູ້ຊາຍ/ແມ່ຍິງ/ຄົນພິການ/ກຸ່ມຊົນເຜົ່າ?
- o ມີການຈັດສັນເວລາຫຼາຍຊ່ຳໃດເຂົ້າໃນບົດບາດນີ້, ມີການປະເມີນຜົນໃນຂັ້ນຕອນການທົບທວນຄືນຜົນງານແຫ່ງຊາດຄືແນວໃດ?

**ວຽກງານ ລບຕ ຂອງທ່ານ:**

- ອຳນວຍຄວາມສະດວກໃຫ້ແມ່ຍິງ, ຜູ້ຊາຍ, ເດັກຊາຍ, ເດັກຍິງ, ກຸ່ມຊົນເຜົ່າ ແລະ ຄົນທຸກສາມາດເຂົ້າເຖິງຊັບພະຍາກອນ, ໂອກາດ, ການຕັດສິນໃຈ, ບໍລິການຕ່າງໆໄດ້ຄືແນວໃດ?
- ແກ້ໄຂຄວາມຕ້ອງການ/ບຸລິມະສິດອັນສະເພາະໃຫ້ແກ່ກຸ່ມເຫຼົ່ານີ້ຄືແນວໃດ?
- ສົ່ງເສີມຄວາມສະເໝີພາບຍິງຊາຍ ແລະ ຄວາມເປັນຜູ້ນຳໃຫ້ແກ່ແມ່ຍິງຄືແນວໃດ?

**ລະບຽບການປະຕິບັດ**

- ໄດ້ກຳນົດ ແລະ ເກືອດຫ້າມການກົດຂີ່ ແລະ ຂູດຮີດທາງເພດ, ຄວາມຮຸນແຮງບົດພື້ນຖານຂອງບົດບາດຍິງຊາຍ, ການລ່ວງລະເມີດ, ການກັ່ນແກ້ງ ແລະ ການຈຳແນກ ຫຼື ບໍ່?
- ໄດ້ກຳນົດສິ່ງທີ່ຍອມຮັບໄດ້ ແລະ ຍອມຮັບບໍ່ໄດ້ສຳລັບການສື່ສານ ຫຼື ບໍ່?
- ໄດ້ເວົ້າເຖິງສິ່ງທີ່ຍອມຮັບໄດ້ ແລະ ຍອມຮັບບໍ່ໄດ້ສຳລັບສາຍພົວພັນໃນສະຖານທີ່ເຮັດວຽກ ຫຼື ບໍ່?
- ໄດ້ເວົ້າເຖິງພຶດຕິກຳທີ່ຄາດໝາຍໄວ້ ແລະ ຜົນສະທ້ອນຂອງການປະພຶດຜິດ ຫຼື ບໍ່?
- ລະບຸ ແລະ ອະທິບາຍວ່າມີກົນໄກການຮ້ອງທຸກ ທີ່ຮອງຮັບການລະເມີດລະບຽບການປະຕິບັດ ຫຼື ບໍ່?

**ການຈ້າງງານ ແລະ ການຕັດສິນໃຈ**

- ພາຍໃຕ້ກົມກອງຕ່າງໆຂອງ NRA, ມີພະນັກງານ: ຍິງ ແລະ ຊາຍຫຼາຍປານໃດ? ແລະ ມີອັດຕາສ່ວນຮ້ອຍເທົ່າໃດ (ອີງຕາມລະດັບຂອງໜ້າທີ່ຮັບຜິດຊອບ)
- ມີພະນັກງານທີ່ພິການຫຼາຍປານໃດ: ແມ່ຍິງ ແລະ ຜູ້ຊາຍ? ແລະ ມີອັດຕາສ່ວນເທົ່າໃດ (ອີງຕາມລະດັບຂອງໜ້າທີ່ຮັບຜິດຊອບ)
- ພາຍໃນຂັ້ນແຂວງ ແລະ ເມືອງ, ທ່ານພໍຈະຮູ້ໂດຍປະມານບໍ່ວ່າມີພະນັກງານທີ່ພິການຫຼາຍປານໃດ: ແມ່ຍິງ ແລະ ຜູ້ຊາຍ? ແລະ ມີອັດຕາສ່ວນເທົ່າໃດ (ອີງຕາມລະດັບຂອງໜ້າທີ່ຮັບຜິດຊອບ)
- ນະໂຍບາຍຊັບພະຍາກອນມະນຸດທີ່ຄຳນຶງເຖິງບົດບາດຍິງຊາຍ - ແມ່ຍິງໄດ້ຮັບການຊຸກຍູ້ເຂົ້າໃນການຈ້າງງານໂດຍຜ່ານ • ການປະກາດຕຳແໜ່ງຫວ່າງ • ການຮັບເອົາພະນັກງານ • ການຝຶກອົບຮົມ • ການລາພັກເກີດລູກ/ລາພັກລ້ຽງລູກ
- ແມ່ນຫຍັງທີ່ເປັນອຸປະສັກທາງກົງ ແລະ ທາງອ້ອມຕໍ່ການຈ້າງງານແມ່ຍິງ ແລະ ຜູ້ຊາຍໃນບົດບາດອັນສະເພາະ?
- ແມ່ນຫຍັງທີ່ເປັນອຸປະສັກຕໍ່ການຈ້າງງານຄົນທີ່ມາຈາກກຸ່ມຊົນເຜົ່າອັນສະເພາະ?
- ແມ່ນຫຍັງທີ່ເປັນອຸປະສັກຕໍ່ການຈ້າງງານຄົນພິການ?
- ມີການຝຶກອົບຮົມອັນໃດແດ່ໃນລະດັບຊາດ/ຂັ້ນແຂວງ/ຂັ້ນເມືອງ ແລະ ຂັ້ນບ້ານກ່ຽວກັບບັນຫາດ້ານບົດບາດຍິງຊາຍ ພາຍໃຕ້ບັນຫາທີ່ກ່ຽວຂ້ອງກັບ ລບຕ ໂດຍຜ່ານ NRA/PRA. ເມື່ອໃດ? ແມ່ນໃຜເປັນຜູ້ດຳເນີນງານ? ແລະ ແມ່ນໃຜແດ່ທີ່ໄດ້ຮັບການຝຶກອົບຮົມ?
- ມີນະໂຍບາຍປ້ອງກັນການລ່ວງລະເມີດທາງເພດພ້ອມດ້ວຍຊ່ອງທາງການລາຍງານບັນຫາທີ່ເໝາະສົມ ແລະ ປິດລັບ ຫຼື ບໍ່?

**ຫ້ອງການ ລບຕ (ເບິ່ງຕື່ມ ພາກເອກະສານຊ້ອນທ້າຍທີ 5) ແລະ**

- ການຈັດຊື້ອຸປະກອນໄດ້ມີການຄຳນຶງເຖິງຄວາມຕ້ອງການອັນແຕກຕ່າງລະຫວ່າງພະນັກງານຊາຍ ແລະ ຍິງຄືແນວໃດ? ການຈັດຊື້ຊຸດແບບຟອມ, ເກີບໂບກ ແລະ ອຸປະກອນປ້ອງກັນບຸກຄົນ (PPE) ກໍ່ຈະຕ້ອງມຄຳນຶງເຖິງບົດບາດຍິງຊາຍ, ລວມທັງຂະໜາດ ແລະ ປະເພດເຂົ້ານຳ
- ມີຄວາມເປັນໄປໄດ້ຫຼາຍປານໃດ ທີ່ຈະເກີດຜົນກະທົບທາງລົບໂດຍບໍ່ຕັ້ງໃຈ ແລະ ໜ້າທີ່ການເບິ່ງແຍງດູແລຕໍ່ພະນັກງານ ແລະ ຜູ້ໄດ້ຮັບຜົນປະໂຫຍດ, ໂດຍສະເພາະທີ່ກ່ຽວຂ້ອງກັບການລ່ວງລະເມີດທາງເພດ, ການກົດຂີ່ ແລ ຂູດຮີດທາງເພດ ແລະ ຄວາມຮຸນແຮງບົນພື້ນຖານຂອງບົດບາດຍິງຊາຍໃນຮູບແບບອື່ນໆ
- ແມ່ຍິງ ແລະ ຜູ້ຊາຍຕ້ອງພົບພໍ້ກັບບັນຫາອັນໃດແດ່ ໃນການຢູ່ຮ່ວມກັນໃນຄ້າຍ ຫຼື ທີ່ພັກແບບຄ້າງຄືນ
  - o ແມ່ຍິງທີ່ເຮັດວຽກຢູ່ນອກຊຸມຊົນເປັນເວລາຍາວນານ
  - o ແມ່ຍິງທີ່ເດີນທາງໂດຍບໍ່ມີຜູ້ຕິດຕາມມານຳ ເປັນໄລຍະທາງໄກ ຫຼື ໄປໃນພື້ນທີ່ທີ່ຖືວ່າອັນຕະລາຍ

**ສິດທິ ແລະ ກຳມະສິດທີ່ດິນ**

- ມີການນຳໃຊ້ຂັ້ນຕອນໃດແດ່ເພື່ອລະບຸບຸລິມະສິດໃຫ້ແກ່ການເກັບກູ້ເນື້ອທີ່ດິນ? ໄດ້ມີການເກັບກຳຂໍ້ມູນຕາມກຸ່ມເພດ, ອາຍຸ, ຄວາມພິການ ແລະ ກຸ່ມຊົນເຜົ່າຄືແນວໃດ?
- ມີການບັງຄັບໃຊ້ລະບົບສິດທິດ້ານທີ່ດິນໃນຂົງເຂດປະຕິບັດການ, ທັງໃນແບບທາງການ ແລະ ແບບປະຕິບັດໂຕຈິງຄືແນວໃດ?
- ມີຂັ້ນຕອນອັນໃດແດ່ທີ່ນຳໃຊ້ເຂົ້າໃນການພິສູດກຳມະສິດທີ່ດິນ? ແມ່ຍິງ ແລະ ກຸ່ມທີ່ມີຄວາມຫຼາກຫຼາຍຕ່າງໆ ມີອຸປະສັກອັນໃດແດ່ທີ່ກີດຂວາງການເຂົ້າເຖິງຂໍ້ມູນ ແລະ ເອກະສານຢັ້ງຢືນກຳມະສິດຂອງພວກເຂົາ? ສ່ວນໃຫຍ່ແລ້ວ, ແມ່ນໃຜທີ່ເປັນຜູ້ຖືກຳມະສິດທີ່ດິນໃນພື້ນທີ່ຂອງການປະຕິບັດງານ?
- ແມ່ນໃຜທີ່ເປັນຜູ້ນຳໃຊ້ເນື້ອທີ່ດິນຕົ້ນຕໍໃນພື້ນທີ່ຂອງການປະຕິບັດງານ?
- ທີ່ຜ່ານມາມີການນຳໃຊ້ເນື້ອທີ່ດິນດັ່ງກ່າວຄືແນວໃດ? ແມ່ນໃຜເປັນຜູ້ນຳໃຊ້?
- ຄາດໝາຍການນຳໃຊ້ເນື້ອທີ່ດິນດັ່ງກ່າວໃນອະນາຄົດ ທັນທີທີ່ໄດ້ຮັບອານຸຍາດໃຫ້ນຳໃຊ້ແລ້ວ?
- ໄດ້ມີການລະບຸບຸລິມະສິດໃຫ້ແກ່ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍກ່ຽວກັບການນຳໃຊ້ເນື້ອທີ່ດິນຫຼັງການເກັບກູ້ລະເບີດແລ້ວ ຫຼື ບໍ່?
- ມີກຸ່ມໃດໃນຊຸມຊົນທີ່ອາດມີຄວາມສ່ຽງສູງຕໍ່ຂະບວນການກວາດຊື້ເນື້ອທີ່ດິນ?
- ສະມາຊິກພາຍໃນຄອບຄົວມີສິດທິອັນໃດແດ່ໃນກໍລະນີຂອງການແຕ່ງດອງ, ການຢ່າຮ້າງ, ການຖືກປະລະ, ທັງໃນດ້ານປະເພນີ ແລະ ກົດໝາຍ?

**ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ**

- ມີພຶດຕິກຳສ່ຽງອັນໃດແດ່ທີ່ພົບເຫັນໃນສະພາບການ ທີ່ອີງໃສ່ວຽກງານຕ່າງໆໃນເວລາເກີດອຸບັດເຫດ?
- ແມ່ນໃຜເປັນຜູ້ມີພຶດຕິກຳສ່ຽງຕົ້ນຕໍໃນຊຸມຊົນ?
- ແມ່ນຫັຍງທີ່ເປັນເຫດຜົນໃຫ້ພວກເຂົາມີພຶດຕິກຳສ່ຽງ?
- ມີການຊ່ວຍເຫຼືອທາງການເງິນ ແລະ ການຊ່ວຍເຫຼືອອັນໃດອີກແນ່ ທີ່ຜູ້ປະສົບອຸບັດເຫດ ລບຕ ສາມາດຂໍຮັບເອົາໄດ້ຈາກລັດຖະບານ?
  - o ພວກເຂົາຈະຮັບຮູ້ກ່ຽວກັບການຊ່ວຍເຫຼືອໄດ້ຄືແນວໃດ?
  - o ແມ່ນໃຜເປັນຜູ້ໃຫ້ການຊ່ວຍເຫຼືອ ແລະ ບັນດາລູກບ້ານມີການປະເມີນການຊ່ວຍເຫຼືອດັ່ງກ່າວຄືແນວໃດ?
  - o ທ່ານຮູ້ບໍ່ວ່າໂດຍສະເຫຼ່ຍແລ້ວມີຈຳນວນ ຫຼື ອັດຕາສ່ວນຂອງຜູ້ຊາຍ ແລະ ແມ່ຍິງເທົ່າໃດ?
- ແຂວງ/ເມືອງ/ບ້ານໄດ້ສະໜອງແຫຼ່ງສະໜັບສະໜຸນອັນໃດອີກແດ່ ເມື່ອເກີດອຸບັດເຫດ ລບຕ ຂຶ້ນ?
- ແມ່ນໃຜເປັນຜູ້ສະໜອງສິ່ງນີ້? (NGO, ຊຸມຊົນ, ຄອຍຄົວ, ຫ້ອງປົວພະຍາດ, ແລະ ອື່ນໆ)
- ໄດ້ມີການສະໜອງຂໍ້ພິຈາລະນາອັນໃດແດ່ ໃຫ້ແກ່ແມ່ຍິງທີ່ເປັນຫົວໜ້າຄອບຄົວ ແລະ ແມ່ຍິງທີ່ເປັນຜູ້ດູແລສະມາຊິກຄອບຄົວທີ່ພິການ?
- ບັນຫາດັ່ງຕໍ່ໄປນີ້ຈາກຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ UNMAS ໃນຂະແໜງການເກັບກູ້ລະເບີດແມ່ນໄດ້ຮັບການແກ້ໄຂຄືແນວໃດ:
  - o ສະໜອງການຂົນສົ່ງທີ່ປອດໄພໃຫ້ແກ່ຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມໄປຍັງບໍລິການຕ່າງໆ, ແລະ ເພື່ອໃຫ້ພີ່ນ້ອງໄດ້ຕິດຕາມໄປນຳ, ໂດຍສະເພາະເພື່ອບໍ່ໃຫ້ແມ່ຍິງຕ້ອງເດີນທາງພຽງຄົນດຽວ, ຖ້າຈຳເປັນ
  - o ສະໜອງບໍລິການເຄື່ອນທີ່ ແລະ ການລົງຢ້ຽມຢາມຕາມບ້ານ ໃນເວລາທີ່ເປັນໄປໄດ້ເພື່ອໃຫ້ເຂົ້າເຖິງກຸ່ມຄົນທີ່ເຂົ້າເຖິງໄດ້ຍາກ
  - o ຈ້າງແຮງງານສຸຂະພາບ, ທີ່ປຶກສາ, ພະນັກງານສະໜັບສະໜຸນເພື່ອນຮ່ວມງານ, ນັກກາຍະພາບບຳບັດ, ແລະ ອື່ນໆທັງຜູ້ຊາຍ ແລະ ແມ່ຍິງ
  - o ສ້າງຂີດຄວາມສາມາດໃນການປະຖົມພະຍາບານເບື້ອງຕົ້ນ ໃນຂັ້ນທ້ອງຖິ່ນໂດບຜ່ານການຝຶກອົບຮົມສະມາຊິກຊຸມຊົນທັງຍິງ ແລະ ຊາຍໃຫ້ກາຍມາເປັນຜູ້ຕອບສະໜອງເບື້ອງຕົ້ນ
  - o ຈ້າງຜູ້ລອດຊີວິດທັງຍິງ ແລະ ຊາຍ, ຄົນພິການອື່ນໆ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມ ເຂົ້າໃນວຽກງານການສະໜັບສະໜຸນເພື່ອນຮ່ວມງານ
  - o ເສີມຂະຫຍາຍບໍລິການໄປຍັງພີ່ນ້ອງ ແລະ ຄອບຄົວຂອງຜູ້ລອດຊີວິດ ແລະ ຄອບຄົວຂອງຜູ້ທີ່ເສຍຊີວິດ
  - o ອອກແບບບໍລິການທາງດ້ານເສດຖະກິດ-ສັງຄົມ ເພື່ອໃຫ້ຕອບສະໜອງໄດ້ຄວາມຕ້ອງການຂອງພີ່ນ້ອງ ແລະ ຄອບຄົວ

ຂອງຜູ້ລອດຊີວິດ, ລວມທັງວຽກງານຕ່າງໆ ສໍາລັບຜູ້ຊາຍ ແລະແມ່ຍິງ: ທີ່ລວມມີການສຶກສາ, ການຈ້າງງານ/ການປົກປ້ອງທາງສັງຄົມ, ແລະ ຄວາມກວມລວມທາງສັງຄົມ

**ໄດ້ມີການແກ້ໄຂຂໍ້ແນະນໍາຈາກບົດລາຍງານດ້ານບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008:**

4.4.1 ທີມງານຊຸມຊົນທີ່ມີຄວາມຄຸ້ນເຄີຍດ້ານບົດບາດຍິງຊາຍ ຈະຕ້ອງໄດ້ຮັບການຝຶກອົບຮົມໃນບັນດາບໍລິການທີ່ມີພ້ອມສະໜອງໃຫ້ແກ່ຜູ້ປະສົບເຄາະຮ້າຍ/ຜູ້ລອດຊີວິດໃນຂັ້ນທ້ອງຖິ່ນ, ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນແຫ່ງຊາດ ແລະ ຕ້ອງສາມາດສື່ສານຂໍ້ມູນກ່ຽວກັບບໍລິການເຫຼົ່ານີ້ໄປຍັງປະຊາຊົນທີ່ໄດ້ຮັບຜົນກະທົບ, ທັງຍິງ ແລະ ຊາຍໄດ້.

4.4.2 ຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈະຕ້ອງທັງເຂົ້າໃຈ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງກັບສັກສີ ແລະ ຄວາມເຊື່ອໝັ້ນໃນຕົນເອງ ແລະ ຕ້ອງບໍ່ເນັ້ນໜັກໃສ່ພຽງແຕ່ການບາດເຈັບທາງຮ່າງກາຍເທົ່ານັ້ນ (ຍົກຕົວຢ່າງ: ໂດຍທົ່ວໄປແລ້ວ, ຜູ້ຊາຍມັກຈະເປັນກຸ່ມທີ່ປະເຊີນກັບການສູນເສຍຄວາມເຊື່ອໝັ້ນໃນຕົນເອງຫຼາຍກວ່າແມ່ຍິງ).

- ຂໍ້ມູນຈະຕ້ອງຖືກຈັດແບ່ງຕາມກຸ່ມເພດ ແລະ ອາຍຸ.

4.4.3 ຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈະຕ້ອງສະໜອງບໍລິການເພີ່ມເຕີມໃຫ້ແກ່ຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງໂດຍຄໍານຶງເຖິງຄວາມເປັນຈິງທີ່ວ່າ ແມ່ຍິງອາດຕ້ອງການການສະໜັບສະໜູນເປັນໄລຍະຍາວກວ່າ ແລະ ມີແນວໂນ້ມໃນການແຕ່ງດອງຄືນໃໝ່ໜ້ອຍກວ່າ.

**ຂໍ້ແນະນໍາຈາກບົດລາຍງານຂອງ GMAP ໃນປີ 2014 ໃຫ້ແກ່ NRA ແມ່ນໄດ້ຮັບການຈັດຕັ້ງປະຕິບັດຄືແນວໃດ?**

- ດັ່ງທີ່ໄດ້ກ່າວໄວ້ໃນຂໍ້ແນະນໍາສໍາລັບບັນຫາພາຍໃນ, ນະໂຍບາຍດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍ ສໍາລັບຂະແໜງການ ລບຕ ອາດກາຍມາເປັນເອກະສານອ້າງອີງທີ່ມີຄວາມສໍາຄັນຫຼາຍສໍາລັບຍຸດທະສາດ ແລະ ທຸກມາດຕະຖານການເກັບກູ້ລະເບີດແຫ່ງຊາດທີ່ກ່ຽວຂ້ອງ. ນະໂຍບາຍດັ່ງກ່າວອາດຕໍ່ຍອດມາຈາກ ຂໍ້ຊີ້ນໍາດ້ານບົດບາດຍິງຊາຍຂອງ ອົງການ ສປຊ ສໍາລັບແຜນງານການເກັບກູ້ລະເບີດ ແລະ ຕ້ອງໄດ້ຮັບການອອກແບບມາຢ່າງແທດເໝາະກັບສະພາບການຂອງ ສປປ ລາວ. GMAP ແມ່ນພ້ອມແລ້ວທີ່ຈະໃຫ້ຄໍາປຶກສາ ແລະ ມີສ່ວນຮ່ວມເຂົ້າໃນຂັ້ນຕອນການຮ່າງນະໂຍບາຍດັ່ງກ່າວ, ຖ້າຈໍາເປັນ.
- ໂຕຊີ້ວັດດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍຈະຕ້ອງໄດ້ຮັບການລະບຸໂດຍແຕ່ລະຫົວໜ່ວຍຂອງ NRA ເພື່ອໃຫ້ຄອບຄຸມທັງຂະແໜງການ. ຂໍ້ມູນທີ່ຕ້ອງການເພື່ອວັດແທກ ແລະ ຕິດຕາມກວດກາຄວາມຄືບໜ້ານັ້ນ ຈະຕ້ອງໄດ້ຮັບການເຜີຍແຜ່ໂດຍ ຫົວໜ່ວຍຄຸ້ມຄອງຂໍ້ມູນ, ທີ່ຈະພະຍາຍາມຮັບປະກັນໃຫ້ຂໍ້ມູນດັ່ງກ່າວນັ້ນມີພ້ອມສະໜອງໃຫ້.

**ຂໍ້ແນະນໍາກ່ຽວກັບການອານຸຍາດນໍາໃຊ້ ແລະ ການມອບຮັບເນື້ອທີ່ດິນ:**

- ຂໍ້ແນະນໍາອັນສະເພາະສໍາລັບ ລະບຽບຂັ້ນຕອນອັນໃໝ່ໃນການສໍາຫຼວດ ລບຕ ຂອງ ສປປ ລາວ, ທີ່ເນັ້ນໜັກເປັນພິເສດໃສ່ການສໍາຫຼວດແບບບໍ່ແມ່ນວິຊາການ, ແມ່ນມີລາຍລະອຽດດັ່ງຕໍ່ໄປນີ້:
  - o ລວມມີຂໍ້ມູນອ້າງອີງທີ່ວ່າການສໍາຫຼວດ ຈະຕ້ອງໄດ້ຮັບການດໍາເນີນງານໂດຍສອດຄ່ອງກັບ ຂໍ້ຊີ້ນໍາດ້ານບົດບາດຍິງຊາຍຂອງ ສປຊ ສໍາລັບແຜນງານການເກັບກູ້ລະເບີດ
  - o ລວມມີວັກທີ່ກ່ຽວຂ້ອງກັບການຄັດເລືອກ ແລະ ການຝຶກອົບຮົມທີມສໍາຫຼວດແບບບໍ່ແມ່ນວິຊາການ
  - o ກ່ອນລົງຢ້ຽມຢາມບ້ານ, ຈະຕ້ອງເກັບກໍາເອົາຂໍ້ມູນຕາມກຸ່ມເພດ ແລະ ອາຍຸ ໃນບັນຫາທີ່ກ່ຽວຂ້ອງຕ່າງໆ, ເຊັ່ນ: ບັນຫາດ້ານປະຊາກອນ, ຄວາມທຸກຍາກ, ຄວາມເຂົ້າໃຈກ່ຽວກັບການຕົກຄ້າງຂອງ ລບຕ ໃນເຂດບ້ານນັ້ນ
  - o ການວິເຄາະບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍໂດຍລະອຽດ ຈະຕ້ອງຖືກດໍາເນີນການເພື່ອກໍານົດວ່າບັນຫາດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍອັນໃດແດ່ ທີ່ຈໍາເປັນຈະຕ້ອງໄດ້ຮັບການພິຈາລະນາ ເພື່ອ 'ສຸມໃສ່ທຸກຄວາມພະຍາຍາມທີ່ເໝາະສົມ' (IMAS 8.10) ເພື່ອໃຫ້ທີມສໍາຫຼວດສາມາດເຂົ້າເຖິງທຸກແຫຼ່ງຂໍ້ມູນໄດ້ (ຜູ້ຊາຍ, ເດັກຊາຍ, ເດັກຍິງ, ແມ່ຍິງ) ໃນບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ
  - o ຮັບປະກັນໃຫ້ມີການເຜີຍແຜ່ບົດສັງລວມການສໍາຫຼວດບ້ານ, ບົດລາຍງານພື້ນທີ່ຢັ້ງຢືນອັນຕະລາຍ ແລະ ຮ່າງແຜນທີ່ໃຫ້ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍໃນບ້ານນັ້ນຊາບ
  - o ການລວມເອົາຊຸດຄໍາຖາມດັ່ງຕໍ່ໄປນີ້ ເຂົ້າໃນລາຍການກວດສອບວຽກງານຄຸ້ມຄອງຄຸນນະພາບ - ຂັ້ນຕອນການສໍາຫຼວດ ລບຕ ຂອງ NRA:
    - ✓ ການລົງຢ້ຽມຢາມພາກສະໜາມ ໄດ້ມີການກວດສອບທຸກແຫຼ່ງຂໍ້ມູນທີ່ເປັນໄປໄດ້, ທີ່ລວມມີ: ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍແລ້ວ ຫຼື ບໍ່?
    - ✓ ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ ໃນເຂດບ້ານທີ່ໄດ້ຮັບຜົນກະທົບ ໄດ້ຮັບແຈ້ງຂໍ້ມູນໂດຍຫຍໍ້ຢ່າງເໝາະສົມກ່ຽວກັບຜົນໄດ້ຮັບຂອງການສໍາຫຼວດແບບບໍ່ແມ່ນວິຊາການ, ການກໍານົດພື້ນທີ່ຢັ້ງຢືນອັນຕະລາຍ ແລະ ຮ່າງແຜນທີ່ແລ້ວ ຫຼື ບໍ່?

**ຂໍ້ແນະນໍາການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ:**

- ນໍາສະເໜີຂໍ້ມູນຜູ້ປະສົບເຄາະຮ້າຍຕາມກຸ່ມເພດ ແລະ ອາຍຸໃນບົດລາຍງາຍ
- ວິເຄາະລະບົບການຕິດຕາມຜູ້ລອດຊີວິດເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບຄວາມຕ້ອງການດ້ານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຕາມກຸ່ມເພດ ແລະ ອາຍຸ - ນໍາໃຊ້ຜົນໄດ້ຮັບຕ່າງໆນັ້ນເຂົ້າໃນການອອກແບບບໍລິການໃຫ້ແທດເໝາະກັບຄູ່ຮ່ວມມື (ກະຊວງສຶກສາ, ກະຊວງສາທາ, ກະຊວງແຮງງານ)
- ສ້າງຊຸດເຄື່ອງມືການຕິດຕາມກວດກາດ້ານຄຸນນະພາບ/ປະລິມານ ໃຫ້ແກ່ຜົນກະທົບຂອງການຊ່ວຍເຫຼືອຜູ້ລອດຊີວິດ (ຕາມກຸ່ມເພດ ແລະ ອາຍຸ)

**ຂໍ້ແນະນໍາຈາກການປະເມີນບົດບາດຍິງຊາຍໃນຂະແໜງການ ລບຕ ຂອງ ອົງການ ສປຊ ເພື່ອແມ່ຍິງ ແລະ LWU ໃນປີ 2018 ແມ່ນໄດ້ຮັບການຈັດຕັ້ງປະຕິບັດຄືແນວໃດ?**

6.1.1 ອີງຕາມມາດຕະຖານແຫ່ງຊາດ ແລະ ກົດໝາຍຄວາມສະເໝີພາບຍິງຊາຍທີ່ຈະຖືກສ້າງຂຶ້ນ, ແລະ **ດ້ວຍການຊ່ວຍເຫຼືອຈາກ LWU, NRA/ໂຄງການ UXO Lao ເພື່ອສ້າງນະໂຍບາຍດ້ານບົດບາດຍິງຊາຍ ແລະ ຍຸດທະສາດການເຊື່ອມສານບົດບາດຍິງຊາຍ ສໍາລັບການປະຕິບັດວຽກງານຂອງພວກເຂົາໃນອົງກອນໂດຍສະເພາະ.** ສິ່ງນີ້ແນໃສ່ສ້າງຜົນກະທົບທາງບວກຕໍ່ຄວາມສະເໝີພາບຍິງຊາຍ ໃຫ້ແກ່ຜູ້ໄດ້ຮັບຜົນປະໂຫຍດຈາກປະຕິບັດການ ລບຕ. ອາດມີການກະກຽມຮ່າງ, ແລະ ຈັດກອງປະຊຸມສໍາມະນາຂຶ້ນເພື່ອສະຫຼຸບເນື້ອໃນສຸດທ້າຍ. ຮ່າງສະບັບສຸດທ້າຍອາດຖືກນໍາມາເຜີຍແຜ່ກັບອົງການຈັດຕັ້ງ ລບຕ ອື່ນໆເພື່ອສົ່ງເສີມຫຼັກປະຕິບັດທີ່ດີ.

6.1.2 ອອກແບບ ແລະ ຈັດຕັ້ງປະຕິບັດ **ນະໂຍບາຍຊັບພະຍາກອນມະນຸດກ່ຽວກັບບົດບາດຍິງຊາຍພາຍໃນ NRA ແລະ ໂຄງການ UXO Lao.** ສິ່ງນີ້ອາດຊ່ວຍສົ່ງເສີມຄວາມສະເໝີພາບຍິງຊາຍພາຍໃນ NRA ແລະ ໂຄງການ UXO Lao ອັນຈະສົ່ງຜົນເຮັດໃຫ້ເກີດຜົນກະທົບທາງບວກດ້ານຄວາມສະເໝີພາບຍິງຊາຍ ຕໍ່ຜູ້ໄດ້ຮັບຜົນປະໂຫຍດຈາກວຽກງານຂອງ NRA ແລະ ໂຄງການ UXO Lao. ສິ່ງນີ້ອາດກວມເອົາ:

6.1.3 ອອກແບບ ແລະ ຮັບຮອງເອົາ **ຂໍ້ຊີ້ນໍາກ່ຽວກັບລະບຽບຂັ້ນຕອນການພັດທະນາຊັບພະຍາກອນມະນຸດທີ່ຄໍານຶງເຖິງບົດບາດຍິງຊາຍ** ໃຫ້ແກ່ NRA ແລະ ໂຄງການ UXO Lao, ລວມທັງໜ້າທີ່ຮັບຜິດຊອບໃນການເຊື່ອມສານບົດບາດຍິງຊາຍເຂົ້າໃນ **ຄໍາອະທິບາຍວຽກຂອງພະນັກງານໃນຕໍາແໜ່ງວິຊາການ, ຄຸ້ມຄອງ ແລະ ໂຄງການ, ແລະ ແຜນການ:** ອາດມີການກະກຽມຮ່າງ, ແລະ ຈັດກອງປະຊຸມຂຶ້ນເພື່ອສະຫຼຸບຮ່າງສະບັບສຸດທ້າຍ;

6.5.1 ສ້າງເຄືອຂ່າຍບົດບາດຍິງຊາຍໃນກຸ່ມໜ່ວຍງານປະຕິບັດການເກັບກູ້ ລບຕ ເພື່ອສະໜັບສະໜູນຂໍ້ແນະນໍາຂ້າງເທິງນີ້, ເພື່ອເປັນການເຜີຍແຜ່ຫຼັກປະຕິບັດທີ່ດີ ແລະ ການຈັດຕັ້ງປະຕິບັດຍຸດທະສາດເຊື່ອມສານບົດບາດຍິງຊາຍ ໃນທົ່ວທັງຂະແໜງການ ລບຕ. ທາງເລືອກໜຶ່ງອາດໝາຍເຖິງການສ້າງຕັ້ງກຸ່ມວິຊາການເພື່ອປະສານງານດ້ານບົດບາດຍິງຊາຍຂຶ້ນໂດຍ NRA ແລະ ໜຶ່ງໃນບົດບາດຂອງກຸ່ມດັ່ງກ່າວ ແມ່ນການສະໜັບສະໜູນຂັ້ນຕອນການເຊື່ອມສານບົດບາດຍິງຊາຍ ເຂົ້າໃນກຸ່ມວິຊາການອື່ນໆທີ່ປະຕິບັດວຽກງານເກັບກູ້ລະເບີດ, ການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ແລະ ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ.

ໄດ້ຮັບການສະໜັບສະໜູນຢ່າງເຂັ້ມແຂງຈາກຜູ້ຖືກສໍາພາດສ່ວນໃຫຍ່ ແລະ ຜູ້ເຂົ້າຮ່ວມກອງປະຊຸມສໍາມະນາ ທີ່ທີ່ປຶກສາໄດ້ພົບປະນໍາເພື່ອສ້າງເຄືອຂ່າຍຮ່ວມກັນ.

ວຽກງານ EORE

- ທ່ານມີວິທີໃດໃນການຮັບປະກັນໃຫ້ສາມາດເຂົ້າເຖິງທຸກກຸ່ມ, ໃຫ້ພວກເຂົາຖືກຮັບຟັງ ແລະ ຮັບແຈ້ງຂໍ້ມູນກ່ຽວກັບວິທີທາງອັນເໝາະສົມ - ແຕ່ລະກຸ່ມແມ່ນໄດ້ຖືກຈັດຕັ້ງແບບແຍກຕ່າງຫາກສໍາລັບຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງ ຫຼື ບໍ່?
- GEDSI ໄດ້ຮັບການແກ້ໄຂຄືແນວໃດ > ການປະເມີນຄວາມຕ້ອງການ & ຂີດຄວາມສາມາດ > ບຸລິມະສິດ ແລະ ງົບປະມານ > ການອອກແບບໃຫ້ແທດເໝາະ > ຈັດຕັ້ງປະຕິບັດ > ຕິດຕາມກວດກາ ແລະ ປະເມີນຜົນ
- ແມ່ນໃຜມີຄວາມສ່ຽງ ແລະ ຍ້ອນຫຍັງ? GEDSI > ຜູ້ທີ່ບໍ່ມີຄວາມຮັບຮູ້ > ຜູ້ທີ່ບໍ່ໄດ້ຖືກຮັບແຈ້ງ > ຜູ້ທີ່ໄດ້ຮັບຂໍ້ມູນຜິດ > ຜູ້ທີ່ຂາດຄວາມລະມັດລະວັງ > ຜູ້ທີ່ຖືກບັງຄັບ
- ລະບຸໄພຄຸກຄາມທີ່ສໍາຄັນ ແລະ ລະບຸກຸ່ມເປົ້າໝາຍ: > ເດັກຊາຍ ແລະ ໄວໜຸ່ມຊາຍ > ຜູ້ລີ້ໄພ, ຜູ້ພັດຖິ່ນພາຍໃນປະເທດ, ນັກເດີນທາງ > ອະດີດທະຫານ > ຊາວກະສິກອນ & ຜູ້ຫາອາຫານ, ນໍ້າ ແລະ ເຊື້ອໄຟ > ຜູ້ເກັບເສດໂລຫະ
- ແມ່ນໃຜເປັນຈຸດເນັ້ນໜັກຂອງວຽກງານ EORE?

> ຄູຝຶກຍິງ ແລະ ຊາຍ > ບຸກຄົນທີ່ມີອິດທິພົນ/ໜ້າເຊື່ອຖື > ຫ້ອງຮຽນຍິງ/ຊາຍລ້ວນ >

- ມີການນຳໃຊ້ສື່ການຮຽນການສອນອັນໃດແດ່ທີ່ກຸ່ມແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍມີຄວາມກ່ຽວຂ້ອງ, ມີຄວາມລຶ້ງເຄີຍ ແລະ ໄດ້ຮັບການລະບຸ
- ມີການດຳເນີນວຽກງານ EORE ໃນຈຸດໃດແດ່ໃຫ້ແກ່ກຸ່ມ GEDSI > ໂຮງຮຽນ > ໂບດ > ຕະຫຼາດ > ຄົວເຮືອນ > ຈຸດນັດພົບໃນຊຸມຊົນ?
- ອີງຕາມ ພະແນກແຮງງານ, ກອງປະຊຸມໃດແມ່ນເວທີທີ່ດີທີ່ສຸດສຳລັບທີມງານ ໃນການໂອ້ລົມກັບແຕ່ລະກຸ່ມອາຍຸ ແລະ ກຸ່ມເພດ?
- ເວລາໃດແມ່ນໄລຍະທີ່ດີທີ່ສຸດຂອງວັນ ໃນການດຳເນີນກິດຈະກຳຕ່າງໆຮ່ວມກັບແມ່ຍິງ, ເດັກຍິງ, ເດັກຊາຍ ຫຼື ຜູ້ຊາຍໃນຊຸມຊົນທີ່ໄດ້ຮັບຜົນກະທົບ?
- ມີການດຳເນີນງານແນວໃດສຳລັບກຸ່ມ GEDSI > ການນຳສະເໜີໂດຍກົງ (ສະໜອງບໍລິການດູແລເດັກ) > ການເຜີຍແຜ່ສູ່ສາທາລະນະ > ສື່ຂ່າວສານ (ໂທລະພາບ/ວິທະຍຸ/ໜັງສືພິມ) > ຫຼັກສູດໂຮງຮຽນ > ການສົນທະນາກຸ່ມສະເພາະ
- ຄວາມຮ່ວມມືດ້ານລະເບີດລູກຫວ່ານ, ການຕິດຕາມກວດກາລະເບີດລູກຫວ່ານ 2022 ຂອງ ICBL ກ່າວວ່າເຍົາວະຊົນຊາຍໃນ ສປປ ລາວ ແມ່ນກຸ່ມທີ່ຖືກລະບຸວ່າເຂົ້າເຖິງໄດ້ຍາກເປັນພິເສດ. ທ່ານສາມາດອະທິບາຍຕື່ມອີກໄດ້ບໍ່ວ່າຍ້ອນຫຍັງຈຶ່ງເປັນແນວນັ້ນ ແລະ ມີວິທີແກ້ໄຂບັນຫານີ້ຄືແນວໃດ?
- ໃນດ້ານພາສາທີ່ຖືກນຳໃຊ້, ມີອຸປະສັກອັນໃດແດ່ທີ່ກີດຂວາງການສື່ສານກັບກຸ່ມຕ່າງໆ (ຜູ້ຊາຍ/ແມ່ຍິງ, ກຸ່ມຊົນເຜົ່າຕ່າງໆ?) ມີຄວາມແຕກໂຕນກັນລະຫວ່າງຜູ້ຊາຍ ແລະ ແມ່ຍິງ/ຜູ້ທີ່ມາຈາກກຸ່ມທີ່ມີຄວາມຫຼາກຫຼາຍ ຫຼື ບໍ່? ທີມງານສາມາດສື່ສານເປັນພາສາທາງການໄດ້ ຫຼື ບໍ່ ຫຼື ພວກເຂົາຈຳເປັນຈະຕ້ອງໄດ້ມີການສື່ສານໃນພາສາທ້ອງຖິ່ນ ໃຫ້ໄດ້ຫຼາຍກວ່າໜຶ່ງພາສາເພື່ອທີ່ຈະເຂົ້າເຖິງທຸກກຸ່ມ?
- ການຕິດຕາມກວດກາ & ປະເມີນຜົນ: ໂຕຊີ້ວັດ
  - o ສຳລັບໝາກຜົນ (ຫຼື ຜົນໄດ້ຮັບ): ຈຳນວນຂອງຜູ້ໄດ້ຮັບຜົນປະໂຫຍດຈາກການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຕາມກຸ່ມເພດ, ຄວາມພິການ, ກຸ່ມຊົນເຜົ່າ ແລະ ອາຍຸ (ປະສິດທິຜົນ)
  - o ສຳລັບເປົ້າໝາຍຈຸດສຸມ: ຈຳນວນຂອງຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງທີ່ຮູ້ວ່າຕ້ອງເຮັດຫຍັງໃນເວລາພົບພໍ້ກັບ ລບຕ (ປະສິດທິພາບ)
  - o ສຳລັບຜົນກະທົບ: ຈຳນວນ ຫຼື ອັດຕາສ່ວນຮ້ອຍຂອງຜູ້ເສຍຊີວິດຈາກ ລບຕ ທີ່ຫຼຸດລົງ ແລະ ອັດຕາການເຈັບປ່ວຍຕາມກຸ່ມເພດ, ຄວາມພິການ, ກຸ່ມຊົນເຜົ່າ ແລະ ກຸ່ມອາຍຸ

**ໄດ້ມີການແກ້ໄຂຂໍ້ແນະນຳຈາກບົດລາຍງານດ້ານບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008:**

4.3.1 ການປະເມີນຄວາມຕ້ອງການໃນວຽກງານ MRE ຈະຕ້ອງລວບລວມຂໍ້ມູນ, **ຕາມກຸ່ມເພດ, ອາຍຸ ແລະ ກຸ່ມຊົນເຜົ່າ,** ເພື່ອໃຫ້ສາມາດກຳນົດໄດ້ຄວາມຮູ້, ຫຼັກປະຕິບັດ ແລະ ທັດສະນະຄະຕິຂອງ **ແຕ່ລະກຸ່ມສ່ຽງ** ໄດ້ຢ່າງຊັດເຈນ.
4.3.1 ທຸກສື່ການຮຽນການສອນໃນວຽກງານ MRE ຈະຕ້ອງພິຈາລະນານຳສະເໜີ **ບົດບາດຍິງຊາຍ, ວັດທະນະທຳ ແລະ ພາສາ, ກິດຈະກຳ ແລະ ພຶດຕິກຳສ່ຽງທີ່ກ່ຽວຂ້ອງ.**
4.3.2 ຂໍ້ຄວາມ ແລະ ກິດຈະກຳຕ່າງໆພາຍໃຕ້ວຽກງານ MRE ຈະຕ້ອງແນໃສ່ **ກຸ່ມທີ່ມີຄວາມສ່ຽງສູງ** ທີ່ຖືກຈັດແບ່ງອອກເປັນ **ກຸ່ມເພດ, ອາຍຸ, ພຶດຕິກຳ ແລະ ກິດຈະກຳການດຳລົງຊີວິດ.**
4.3.3 ການເຂົ້າຮ່ວມຝຶກອົບຮົມ MRE ແມ່ນສາມາດເຮັດໄດ້ **ທັງໃນແບບເປັນກຸ່ມ ແລະ ແບບບຸກຄົນ, ທັງຊາຍ ແລະ ຍິງ** (ຫຼື ໃນຮູບແບບກຸ່ມຄົວເຮືອນ ຫຼື ກຸ່ມຜູ້ເກັບເສດໂລະຫະຊາຍ, ຍົກຕົວຢ່າງ),
4.3.4 ທີມງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຈະຕ້ອງປະກອບມີ: **ສະມາຊິກທີມທີ່ເປັນແມ່ຍິງ ແລະ ຜູ້ຊາຍ** ເພື່ອຊ່ວຍໃຫ້ເກີດມີການພົວພັນກັນລະຫວ່າງຜູ້ຊາຍ-ຜູ້ຊາຍ ແລະ ແມ່ຍິງ-ແມ່ຍິງ.
4.3.5 ທີມງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ຈະຕ້ອງປະກອບມີສະມາຊິກທີ່ມີຄວາມສາມາດ ໃນການສື່ສານຂໍ້ຄວາມຕ່າງໆໃນ **ບັນດາພາສາຂອງກຸ່ມປະຊາກອນທີ່ເປັນເປົ້າໝາຍ** ຫຼື ຝຶກອົບຮົມນັກສື່ສານທ້ອງຖິ່ນ ໃຫ້ສາມາດຖ່າຍທອດຂໍ້ຄວາມເປັນພາສາທ້ອງຖິ່ນ. ສິ່ງນີ້ອາດຊ່ວຍເພີ່ມທະວີການມີສ່ວນຮ່ວມ ແລະ ຄວາມເຂົ້າໃຈໃຫ້ແກ່ແມ່ຍິງ ພ້ອມທັງຜູ້ຊາຍ, ເດັກຍິງ ແລະ ເດັກຊາຍຜູ້ທີ່ນຳໃຊ້ພາສາອື່ນໆນອກເໜືອໄປຈາກພາສາລາວ.

## 5.2 ໂຄງການ UXO Lao

**ຕາມທີ່ນຳສະເໜີກ່ຽວກັບ NRA ຂ້າງເທິງ, ປັບປຸງໃຫ້ແກ່ ໂຄງການ UXO Lao**

## 5.3 ຄູ່ຮ່ວມງານ EORE ໃນ ນະຄອນຫຼວງວຽງຈັນ

- ທ່ານມີວິທີໃດໃນການຮັບປະກັນໃຫ້ສາມາດເຂົ້າເຖິງທຸກກຸ່ມ, ໃຫ້ພວກເຂົາຖືກຮັບຟັງ ແລະ ຮັບແຈ້ງຂໍ້ມູນກ່ຽວກັບວິທີທາງອັນເໝາະສົມ - ແຕ່ລະກຸ່ມແມ່ນໄດ້ຖືກຈັດຕັ້ງແບບແຍກຕ່າງຫາກສຳລັບຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງ ຫຼ ບໍ່?



- GEDSI ໄດ້ຮັບການແກ້ໄຂຄືແນວໃດ > ການປະເມີນຄວາມຕ້ອງການ & ຂີດຄວາມສາມາດ > ບຸລິມະສິດ ແລະ ງົບປະມານ > ການອອກແບບໃຫ້ແທດເໝາະ > ຈັດຕັ້ງປະຕິບັດ > ຕິດຕາມກວດກາ ແລະ ປະເມີນຜົນ
- ແມ່ນໃຜມີຄວາມສ່ຽງ ແລະ ຍ້ອນຫຍັງ? GEDSI > ຜູ້ທີ່ບໍ່ມີຄວາມຮັບຮູ້ > ຜູ້ທີ່ບໍ່ໄດ້ຖືກຮັບແຈ້ງ > ຜູ້ທີ່ໄດ້ຮັບຂໍ້ມູນຜິດ > ຜູ້ທີ່ຂາດຄວາມລະມັດລະວັງ > ຜູ້ທີ່ຖືກບັງຄັບ
- ລະບຸໄພຄຸກຄາມທີ່ສຳຄັນ ແລະ ລະບຸກຸ່ມເປົ້າໝາຍ: > ເດັກຊາຍ ແລະ ໄວໜຸ່ມຊາຍ > ຜູ້ລີ້ໄພ, ຜູ້ພັດຖິ່ນພາຍໃນປະເທດ, ນັກເດີນທາງ > ອະດີດທະຫານ > ຊາວກະສິກອນ & ຜູ້ຫາອາຫານ, ນ້ຳ ແລະ ເຊື້ອໄຟ > ຜູ້ເກັບເສດໂລຫະ
- ແມ່ນໃຜເປັນຈຸດເນັ້ນໜັກຂອງວຽກງານ EORE? > ຄູຝຶກຍິງ ແລະ ຊາຍ > ບຸກຄົນທີ່ມີອິດທິພົນ/ໜ້າເຊື່ອຖື > ຫ້ອງຮຽນຍິງ/ຊາຍລ້ວນ >


- ມີການນຳໃຊ້ສື່ການຮຽນການສອນອັນໃດແດ່ທີ່ກຸ່ມແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍມີຄວາມກ່ຽວຂ້ອງ, ມີຄວາມລຶ້ງເຄີຍ ແລະ ໄດ້ຮັບການລະບຸ
- ມີການດຳເນີນວຽກງານ EORE ໃນຈຸດໃດແດ່ໃຫ້ແກ່ກຸ່ມ GEDSI > ໂຮງຮຽນ > ໂບດ > ຕະຫຼາດ > ຄົວເຮືອນ > ຈຸດນັດພົບໃນຊຸມຊົນ?
- ອີງຕາມ ພະແນກແຮງງານ, ກອງປະຊຸມໃດແມ່ນເວທີທີ່ດີທີ່ສຸດສຳລັບທີມງານ ໃນການໂອ້ລົມກັບແຕ່ລະກຸ່ມອາຍຸ ແລະ ກຸ່ມເພດ?
- ເວລາໃດແມ່ນໄລຍະທີ່ດີທີ່ສຸດຂອງວັນ ໃນການດຳເນີນກິດຈະກຳຕ່າງໆຮ່ວມກັບແມ່ຍິງ, ເດັກຍິງ, ເດັກຊາຍ ຫຼື ຜູ້ຊາຍໃນຊຸມຊົນທີ່ໄດ້ຮັບຜົນກະທົບ?
- ມີການດຳເນີນງານແນວໃດສຳລັບກຸ່ມ GEDSI > ການນຳສະເໜີໂດຍກົງ (ສະໜອງບໍລິການດູແລເດັກ) > ການເຜີຍແຜ່ສູ່ສາທາລະນະ > ສື່ຂ່າວສານ (ໂທລະພາບ/ວິທະຍຸ/ໜັງສືພິມ) > ຫຼັກສູດໂຮງຮຽນ > ການສົນທະນາກຸ່ມສະເພາະ
- ຄວາມຮ່ວມມືດ້ານລະເບີດລູກຫວ່ານ, ການຕິດຕາມກວດກາລະເບີດລູກຫວ່ານ 2022 ຂອງ ICBL ກ່າວວ່າເຍົາວະຊົນຊາຍໃນ ສປປ ລາວ ແມ່ນກຸ່ມທີ່ຖືກລະບຸວ່າເຂົ້າເຖິງໄດ້ຍາກເປັນພິເສດ. ທ່ານສາມາດອະທິບາຍຕື່ມອີກໄດ້ບໍ່ວ່າຍ້ອນຫຍັງຈຶ່ງເປັນແນວນັ້ນ ແລະ ມີວິທີແກ້ໄຂບັນຫານີ້ຄືແນວໃດ?
- ໃນດ້ານພາສາທີ່ຖືກນຳໃຊ້, ມີອຸປະສັກອັນໃດແດ່ທີ່ກີດຂວາງການສື່ສານກັບກຸ່ມຕ່າງໆ (ຜູ້ຊາຍ/ແມ່ຍິງ, ກຸ່ມຊົນເຜົ່າຕ່າງໆ?) ມີຄວາມແຕກໂຕນກັນລະຫວ່າງຜູ້ຊາຍ ແລະ ແມ່ຍິງ/ຜູ້ທີ່ມາຈາກກຸ່ມທີ່ມີຄວາມຫຼາກຫຼາຍ ຫຼື ບໍ່? ທີມງານສາມາດສື່ສານເປັນພາສາທາງການໄດ້ ຫຼື ບໍ່ ຫຼື ພວກເຂົາຈຳເປັນຈະຕ້ອງໄດ້ມີການສື່ສານໃນພາສາທ້ອງຖິ່ນ ໃຫ້ໄດ້ຫຼາຍກວ່າໜຶ່ງພາສາເພື່ອທີ່ຈະເຂົ້າເຖິງທຸກກຸ່ມ?
- ການຕິດຕາມກວດກາ & ປະເມີນຜົນ: ໂຕຊີ້ວັດ
  - o ສຳລັບໝາກຜົນ (ຫຼື ຜົນໄດ້ຮັບ): ຈຳນວນຂອງຜູ້ໄດ້ຮັບຜົນປະໂຫຍດຈາກການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພຕາມກຸ່ມເພດ, ຄວາມພິການ, ກຸ່ມຊົນເຜົ່າ ແລະ ອາຍຸ (ປະສິດທິຜົນ)
  - o ສຳລັບເປົ້າໝາຍຈຸດສຸມ: ຈຳນວນຂອງຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງທີ່ຮູ້ວ່າຕ້ອງເຮັດຫຍັງໃນເວລາພົບພໍ້ກັບ ລບຕ (ປະສິດທິພາບ)
  - o ສຳລັບຜົນກະທົບ: ຈຳນວນ ຫຼື ອັດຕາສ່ວນຮ້ອຍຂອງຜູ້ເສຍຊີວິດຈາກ ລບຕ ທີ່ຫຼຸດລົງ ແລະ ອັດຕາການເຈັບປ່ວຍຕາມກຸ່ມເພດ, ຄວາມພິການ, ກຸ່ມຊົນເຜົ່າ ແລະ ກຸ່ມອາຍຸ

**ໄດ້ມີການແກ້ໄຂຂໍ້ແນະນຳຈາກບົດລາຍງານດ້ານບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008:**

- o 4.3.1 ການປະເມີນຄວາມຕ້ອງການໃນວຽກງານ MRE ຈະຕ້ອງລວບລວມຂໍ້ມູນ, **ຕາມກຸ່ມເພດ, ອາຍຸ ແລະ ກຸ່ມຊົນເຜົ່າ,** ເພື່ອໃຫ້ສາມາດກຳນົດໄດ້ຄວາມຮູ້, ຫຼັກປະຕິບັດ ແລະ ທັດສະນະຄະຕິຂອງ **ແຕ່ລະກຸ່ມສ່ຽງ** ໄດ້ຢ່າງຊັດເຈນ.
- o 4.3.1 ທຸກສື່ການຮຽນການສອນໃນວຽກງານ MRE ຈະຕ້ອງພິຈາລະນານຳສະເໜີ **ບົດບາດຍິງຊາຍ, ວັດທະນະທຳ ແລະ ພາສາ, ກິດຈະກຳ ແລະ ພຶດຕິກຳສ່ຽງທີ່ກ່ຽວຂ້ອງ.**
- o 4.3.2 ຂໍ້ຄວາມ ແລະ ກິດຈະກຳຕ່າງໆພາຍໃຕ້ວຽກງານ MRE ຈະຕ້ອງແນໃສ່ **ກຸ່ມທີ່ມີຄວາມສ່ຽງສູງ** ທີ່ຖືກຈັດແບ່ງອອກເປັນ **ກຸ່ມເພດ, ອາຍຸ, ພຶດຕິກຳ ແລະ ກິດຈະກຳການດຳລົງຊີວິດ.**
- o 4.3.3 ການເຂົ້າຮ່ວມຝຶກອົບຮົມ MRE ແມ່ນສາມາດເຮັດໄດ້ **ທັງໃນແບບເປັນກຸ່ມ ແລະ ແບບບຸກຄົນ, ທັງຊາຍ ແລະ ຍິງ** (ຫຼື ໃນຮູບແບບກຸ່ມຄົວເຮືອນ ຫຼື ກຸ່ມຜູ້ເກັບເສດໂລະຫະຊາຍ, ຍົກຕົວຢ່າງ),
- o 4.3.4 ທີມງານການສຶກສາເພື່ອຫຼຸດຜ່ອນ

ຄວາມສ່ຽງໄພ ຈະຕ້ອງປະກອບມີ: **ສະມາຊິກທີມທີ່ເປັນແມ່ຍິງ ແລະ ຜູ້ຊາຍ** ເພື່ອຊ່ວຍໃຫ້ເກີດມີການພົວພັນກັນລະຫວ່າງຜູ້ຊາຍ-ຜູ້ຊາຍ ແລະ ແມ່ຍິງ-ແມ່ຍິງ.

- o 4.3.5 ທີມງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ ຈະຕ້ອງປະກອບມີສະມາຊິກທີ່ມີຄວາມສາມາດ ໃນການສື່ສານຂໍ້ຄວາມຕ່າງໆ ໃນ **ບັນດາພາສາຂອງກຸ່ມປະຊາກອນທີ່ເປັນເປົ້າໝາຍ** ຫຼື ຝຶກອົບຮົມນັກສື່ສານທ້ອງຖິ່ນ ໃຫ້ສາມາດຖ່າຍທອດຂໍ້ຄວາມເປັນພາສາທ້ອງຖິ່ນ. ສິ່ງນີ້ອາດຊ່ວຍເພີ່ມທະວີການມີສ່ວນຮ່ວມ ແລະ ຄວາມເຂົ້າໃຈໃຫ້ແກ່ແມ່ຍິງ ພ້ອມທັງຜູ້ຊາຍ, ເດັກຍິງ ແລະ ເດັກຊາຍຜູ້ທີ່ນຳໃຊ້ພາສາອື່ນໆນອກເໜືອໄປຈາກພາສາລາວ.

ຄວາມຮ່ວມມືດ້ານລະເບີດລູກຫວ່ານ, ການຕິດຕາມກວດກາລະເບີດລູກຫວ່ານ 2022 ຂອງ ICBL ກ່າວວ່າ:
ບົດລາຍງານດັ່ງກ່າວໄດ້ອ້າງອີງເຖິງຂໍ້ລິເລີ່ມຫຼາຍອັນທີ່ແນໃສ່ແກ້ໄຂບັນຫານີ້ລວມທັງ ສູນຮັກສາສະຖຽນລະພາບ ແລະ ການຟື້ນຟູສາກົນ (CISR) ທີ່ດຳເນີນການຄົ້ນຄວ້າເພື່ອລະບຸຈຸດປັບປຸງ ແລະ ຫຼັກປະຕິບັດທີ່ດີທີ່ສຸດສຳລັບວຽກງານການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພ; ໂຄງການທົດລອງທີ່ແນໃສ່ໄວໜຸ່ມ ທີ່ໄດ້ຮັບການລິເລີ່ມຂຶ້ນໂດຍ ອົງການ HI ທີ່ລວມເອົາການມີສ່ວນຮ່ວມຂອງຜູ້ລອດຊີວິດເຂົ້ານຳ ແລະ ໂຄງການການສຶກສາເພື່ອຫຼຸດຜ່ອນຄວາມສ່ຽງໄພໄລຍະ 3 ປີຂອງ ອົງການການສຶກສາໂລກປະຈຳ ສປປ ລາວ ທີ່ແນໃສ່ເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນ, ໄວໜຸ່ມ, ແຮງງານໃນພາກການກະສິກຳ, ແລະ ຜູ້ເວົ້າພາສາຂອງຊົນກຸ່ມນ້ອຍ ໂດຍຜ່ານສູນການສຶກສາແບບບໍ່ເປັນທາງການ, ຊ່ອງທາງສື່ຂໍ້ມູນຂ່າວສານ, ແລະ ການນຳໃຊ້ອາສາສະໝັກໄວໜຸ່ມ.[65]
ສິ່ງເຫຼົ່ານີ້ຊ່ວຍແກ້ໄຂບັນຫາ GEDSI ຄືແນວໃດ?

## 5.4 ຄູ່ຮ່ວມງານໃນວຽກງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນ ນະຄອນຫຼວງວຽງຈັນ

- ພຶດຕິກຳສ່ຽງອັນໃດແດ່ທີ່ພົບເຫັນໃນສະພາບການ ທີ່ອີງໃສ່ວຽກງານຕ່າງໆໃນເວລາເກີດອຸບັດເຫດ?
- ແມ່ນໃຜເປັນຜູ້ມີພຶດຕິກຳສ່ຽງຕົ້ນຕໍໃນຊຸມຊົນ?
- ແມ່ນຫຍັງທີ່ເປັນເຫດຜົນໃຫ້ພວກເຂົາມີພຶດຕິກຳສ່ຽງ?
- ມີການຊ່ວຍເຫຼືອທາງການເງິນ ແລະ ການຊ່ວຍເຫຼືອອັນໃດອີກແນ່ ທີ່ຜູ້ປະສົບອຸບັດເຫດ ລບຕ ສາມາດຂໍຮັບເອົາໄດ້ຈາກລັດຖະບານ?
    - o ພວກເຂົາຈະຮັບຮູ້ກ່ຽວກັບການຊ່ວຍເຫຼືອໄດ້ຄືແນວໃດ?
    - o ແມ່ນໃຜເປັນຜູ້ໃຫ້ການຊ່ວຍເຫຼືອ ແລະ ບັນດາລູກບ້ານມີການປະເມີນການຊ່ວຍເຫຼືອດັ່ງກ່າວຄືແນວໃດ?
    - o ທ່ານຮູ້ບໍ່ວ່າໂດຍສະເຫຼ່ຍແລ້ວມີຈຳນວນ ຫຼື ອັດຕາສ່ວນຂອງຜູ້ຊາຍ ແລະ ແມ່ຍິງເທົ່າໃດ?
- ແຂວງ/ເມືອງ/ບ້ານໄດ້ສະໜອງແຫຼ່ງສະໜັບສະໜຸນອັນໃດອີກແດ່ ເມື່ອເກີດອຸບັດເຫດ ລບຕ ຂຶ້ນ?
- ແມ່ນໃຜເປັນຜູ້ສະໜອງສິ່ງນີ້? (NGO, ຊຸມຊົນ, ຄອຍຄົວ, ຫ້ອງປົວພະຍາດ, ແລະ ອື່ນໆ)
- ໄດ້ມີການສະໜອງຂໍ້ພິຈາລະນາອັນໃດແດ່ ໃຫ້ແກ່ແມ່ຍິງທີ່ເປັນຫົວໜ້າຄອບຄົວ ແລະ ແມ່ຍິງທີ່ເປັນຜູ້ດູແລສະມາຊິກຄອບຄົວທີ່ພິການ?
- ບັນຫາດັ່ງຕໍ່ໄປນີ້ຈາກຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ UNMAS ໃນຂະແໜງການເກັບກູ້ລະເບີດແມ່ນໄດ້ຮັບການແກ້ໄຂຄືແນວໃດ:
    - o ສະໜອງການຂົນສົ່ງທີ່ປອດໄພໃຫ້ແກ່ຜູ້ລອດຊີວິດ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມໄປຍັງບໍລິການຕ່າງໆ, ແລະ ເພື່ອໃຫ້ພີ່ນ້ອງໄດ້ຕິດຕາມໄປນຳ, ໂດຍສະເພາະເພື່ອບໍ່ໃຫ້ແມ່ຍິງຕ້ອງເດີນທາງພຽງຄົນດຽວ, ຖ້າຈຳເປັນ
    - o ສະໜອງບໍລິການເຄື່ອນທີ່ ແລະ ການລົງຢ້ຽມຢາມຕາມບ້ານ ໃນເວລາທີ່ເປັນໄປໄດ້ເພື່ອໃຫ້ເຂົ້າເຖິງກຸ່ມຄົນທີ່ເຂົ້າເຖິງໄດ້ຍາກ
    - o ຈ້າງແຮງງານສຸຂະພາບ, ທີ່ປຶກສາ, ພະນັກງານສະໜັບສະໜຸນເພື່ອນຮ່ວມງານ, ນັກກາຍະພາບບຳບັດ, ແລະ ອື່ນໆທັງຜູ້ຊາຍ ແລະ ແມ່ຍິງ
    - o ສ້າງຂີດຄວາມສາມາດໃນການປະຖົມພະຍາບານເບື້ອງຕົ້ນ ໃນຂັ້ນທ້ອງຖິ່ນໂດບຜ່ານການຝຶກອົບຮົມສະມາຊິກຊຸມຊົນທັງຍິງ ແລະ ຊາຍໃຫ້ກາຍມາເປັນຜູ້ຕອບສະໜອງເບື້ອງຕົ້ນ
    - o ຈ້າງຜູ້ລອດຊີວິດທັງຍິງ ແລະ ຊາຍ, ຄົນພິການອື່ນໆ ແລະ ຜູ້ປະສົບເຄາະຮ້າຍທາງອ້ອມ ເຂົ້າໃນວຽກງານການສະໜັບສະໜຸນເພື່ອນຮ່ວມງານ
    - o ເສີມຂະຫຍາຍບໍລິການໄປຍັງພີ່ນ້ອງ ແລະ ຄອບຄົວຂອງຜູ້ລອດຊີວິດ ແລະ ຄອບຄົວຂອງຜູ້ທີ່ເສຍຊີວິດ
    - o ອອກແບບບໍລິການທາງດ້ານເສດຖະກິດ-ສັງຄົມ ເພື່ອໃຫ້ຕອບສະໜອງໄດ້ຄວາມຕ້ອງການຂອງພີ່ນ້ອງ ແລະ ຄອບຄົວຂອງຜູ້ລອດຊີວິດ, ລວມທັງວຽກງານຕ່າງໆສຳລັບຜູ້ຊາຍ ແລະແມ່ຍິງ: ທີ່ລວມມີການສຶກສາ, ການຈ້າງງານ/ການປົກປ້ອງທາງສັງຄົມ, ແລະ ຄວາມກວມລວມທາງສັງຄົມ

ຂໍ້ແນະນຳເຫຼົ່ານີ້ແມ່ນໄດ້ຖືກສະໜອງໄວ້ໃນບົດລາຍງານດ້ານບົດບາດຍິງຊາຍ ແລະ ລບຕ ໃຫ້ແກ່ NRA ໂດຍ GMAP, ມີການແກ້ໄຂຂໍ້ແນະນຳເຫຼົ່ານີ້ຄືແນວໃດແດ່?
**ຂໍ້ແນະນຳການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ:**

- ນຳສະເໜີຂໍ້ມູນຜູ້ປະສົບເຄາະຮ້າຍຕາມກຸ່ມເພດ ແລະ ອາຍຸໃນບົດລາຍງາຍ
- ວິເຄາະ ລະບົບການຕິດຕາມຜູ້ລອດຊີວິດ ເພື່ອໃຫ້ໄດ້ຂໍ້ມູນກ່ຽວກັບຄວາມຕ້ອງການດ້ານການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຕາມກຸ່ມເພດ ແລະ ອາຍຸ - ນຳໃຊ້ຜົນໄດ້ຮັບຕ່າງໆນັ້ນເຂົ້!ໃນການອອກແບບບໍລິການໃຫ້ແທດເໝາະກັບຄູ່ຮ່ວມມື (ກະຊວງສຶກສາ, ກະຊວງສາທາ, ກະຊວງແຮງງານ)
- ສ້າງຊຸດເຄື່ອງມືການຕິດຕາມກວດກາດ້ານຄຸນນະພາບ/ປະລິມານ ໃຫ້ແກ່ຜົນກະທົບຂອງການຊ່ວຍເຫຼືອຜູ້ລອດຊີວິດ (ຕາມກຸ່ມເພດ ແລະ ອາຍຸ)

**ໄດ້ມີການແກ້ໄຂຂໍ້ແນະນຳຈາກບົດລາຍງານດ້ານບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008:**

4.4.1 ທີມງານຊຸມຊົນທີ່ມີຄວາມດຸ່ນດ່ຽງດ້ານບົດບາດຍິງຊາຍ ຈະຕ້ອງໄດ້ຮັບການຝຶກອົບຮົມໃນບັນດາບໍລິການທີ່ມີພ້ອມສະໜອງໃຫ້ແກ່ຜູ້ປະສົບເຄາະຮ້າຍ/ຜູ້ລອດຊີວິດໃນຂັ້ນທ້ອງຖິ່ນ, ຂັ້ນເມືອງ, ຂັ້ນແຂວງ ແລະ ຂັ້ນແຫ່ງຊາດ ແລະ ຕ້ອງສາມາດສື່ສານຂໍ້ມູນກ່ຽວກັບບໍລິການເຫຼົ່ານີ້ໄປຍັງປະຊາຊົນທີ່ໄດ້ຮັບຜົນກະທົບ, ທັງຍິງ ແລະ ຊາຍໄດ້.
4.4.2 ຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍຈະຕ້ອງທັງເຂົ້າໃຈ ແລະ ແກ້ໄຂບັນຫາທີ່ກ່ຽວຂ້ອງກັບສັກສີ ແລະ ຄວາມເຊື່ອໝັ້ນໃນຕົນເອງ ແລະ ຕ້ອງບໍ່ເນັ້ນໜັກໃສ່ພຽງແຕ່ການບາດເຈັບທາງຮ່າງກາຍເທົ່ານັ້ນ (ຍົກຕົວຢ່າງ: ໂດຍທົ່ວໄປແລ້ວ, ຜູ້ຊາຍມັກຈະເປັນກຸ່ມທີ່ປະເຊີນກັບການສູນເສຍຄວາມເຊື່ອໝັ້ນໃນຕົນເອງຫຼາຍກວ່າແມ່ຍິງ).

- ຂໍ້ມູນຈະຕ້ອງຖືກຈັດແບ່ງຕາມກຸ່ມເພດ ແລະ ອາຍຸ.

4.4.3 ຜູ້ໃຫ້ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຈະຕ້ອງສະໜອງບໍລິການເພີ່ມເຕີມໃຫ້ແກ່ຜູ້ຊາຍ, ແມ່ຍິງ, ເດັກຊາຍ ແລະ ເດັກຍິງໂດຍຄຳນຶງເຖິງຄວາມເປັນຈິງທີ່ວ່າ ແມ່ຍິງອາດຕ້ອງການການສະໜັບສະໜຸນເປັນໄລຍະຍາວກວ່າ ແລະ ມີແນວໂນ້ມໃນການແຕ່ງດອງຄືນໃໝ່ໜ້ອຍກວ່າ.

## 5.5 ຊຸດຄຳຖາມສຳລັບພະນັກງານຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ

**ສະຖິຕິທົ່ວໄປ**



- ມີການລວບລວມຂໍ້ມູນກ່ຽວກັບເຫດການເສຍຊີວິດ ແລະ ບາດເຈັບຈາກ ລບຕ ຄືແນວໃດ - ມີການຈັດແບ່ງຂໍ້ມູນຕາມກຸ່ມເພດ, ອາຍຸ ແລະ ຄວາມພິການ ຫຼື ບໍ່?
- ມີປະຊາຊົນໃນແຂວງ/ເມືອງ/ບ້ານຈຳນວນເທົ່າໃດທີ່:

a) ພິການ: ກະລຸນາສະໜອງຂໍ້ມູນຕາມກຸ່ມເພດ, ອາຍຸ, ຄວາມພິການ ແລະ ກຸ່ມຊົນເຜົ່າ

b) ໂດຍສະເຫຼ່ຍແລ້ວ, ມີຈັກຄົນທີ່ພິການຍ້ອນອຸບັດເຫດ ລບຕ

c) ມີການເສຍຊີວິດຈາກ ລບຕ ຫຼື ບໍ່ໃນຊ່ວງ 5 ປີທີ່ຜ່ານມານີ້: ຂໍ້ມູນຕາມກຸ່ມເພດ, ອາຍຸ, ຄວາມພິການ ແລະ ກຸ່ມຊົນເຜົ່າ

**ການຈ້າງງານ ແລະ ການຕັດສິນໃຈ**

- ພາຍໃນກົມກອງ/ຫ້ອງການຂອງທ່ານ, ມີພະນັກງານຍິງ ແລະ ຊາຍຈັກຄົນ ແລະ ມີອັດຕາສ່ວນຮ້ອຍເທົ່າໃດ (ຕາມລະດັບຂອງໜ້າທີ່ຮັບຜິດຊອບ)
- ຈາກພະນັກງານທັງໝົດທີ່ເຮັດວຽກກັບ PRA ຫຼື ທີ່ກ່ຽວຂ້ອງໂດຍສະເພາະກັບຂະແໜງການ ລບຕ, ມີຈັກຄົນທີ່ເປັນຜູ້ຍິງ ແລະ ຜູ້ຊາຍ ແລະ ມີອັດຕາສ່ວນຮ້ອຍເທົ່າໃດ (ຕາມລະດັບຂອງໜ້າທີ່ຮັບຜິດຊອບ)
- ມີພະນັກງານຍິງ ແລະ ຊາຍຈັກຄົນທີ່ພິການ ແລະ ມີອັດຕາສ່ວນເທົ່າໃດ (ຕາມລະດັບຂອງໜ້າທີ່ຮັບຜິດຊອບ)
- ພາຍໃນລັດຖະບານທັງໝົດນັບທັງຂັ້ນແຂວງ/ຂັ້ນເມືອງ/ຂັ້ນບ້ານ, ທີ່ພໍຮູ້ບໍ່ວ່າໂດຍສະເຫຼ່ຍແລ້ວ, ມີພະນັກງານຈັກຄົນທີ່ພິການ: ຍິງຈັກຄົນ ແລະ ຊາຍຈັກຄົນ ແລະ ມີອັດຕາສ່ວນຮ້ອຍເທົ່າໃດ (ຕາມລະດັບຂອງໜ້າທີ່ຮັບຜິດຊອບ)
- ຈາກຜູ້ຊາຍ ແລະ ແມ່ຍິງທັງໝົດທີ່ພິການ ທີ່ຖືກຈ້າງງານໃນທົ່ວແຂວງ/ເມືອງ/ບ້ານ ສ່ວນໃຫຍ່ແລ້ວແມ່ຍິງ ແລະ ຜູ້ຊາຍມັກຈະຖືກຈ້າງງານເຂົ້າໃນຂັ້ນໃດຫຼາຍກວ່າກັນ
- ແມ່ນຫຍັງທີ່ເປັນອຸປະສັກທາງກົງ ແລະ ທາງອ້ອມທີ່ກີດຂວາງການຈ້າງງານແມ່ຍິງ ແລະ ຜູ້ຊາຍເຂົ້າໃນບົດບາດອັນສະເພາະ?
- ແມ່ນຫຍັງທີ່ເປັນອຸປະສັກກີດຂວາງການຈ້າງງານຄົນທີ່ມາຈາກກຸ່ມຊົນເຜົ່າສະເພາະ?
- ແມ່ນຫຍັງທີ່ເປັນອຸປະສັກກີດຂວາງການຈ້າງງານຄົນພິການ?
- ໄດ້ມີການຈັດການຝຶກອົບຮົມໃນຂັ້ນແຂວງ/ຂັ້ນເມືອງ/ຂັ້ນບ້ານ ວ່າດ້ວຍບົດບາດຍິງຊາຍທີ່ກ່ຽວຂ້ອງກັບບັນຫາ ລບຕ ຫຼື ບໍ່?

**ສິດທິ ແລະ ກຳມະສິດທີ່ດິນ**

- ⇦ ມີການບັງຄັບໃຊ້ລະບົບສິດທິດ້ານທີ່ດິນໃນຂົງເຂດປະຕິບັດການ, ທັງໃນແບບທາງການ ແລະ ແບບປະຕິບັດໂຕຈິງຄືແນວໃດ?
- ⇦ ມີຂັ້ນຕອນອັນໃດແດ່ທີ່ນຳໃຊ້ເຂົ້າໃນການພິສູດກຳມະສິດທີ່ດິນ? ແມ່ຍິງ ແລະ ກຸ່ມທີ່ມີຄວາມຫຼາກຫຼາຍຕ່າງໆ ມີອຸປະສັກອັນໃດແດ່ທີ່ກີດຂວາງການເຂົ້າເຖິງຂໍ້ມູນ ແລະ ເອກະສານຢັ້ງຢືນກຳມະສິດຂອງພວກເຂົາ? ສ່ວນໃຫຍ່ແລ້ວ, ແມ່ນໃຜທີ່ເປັນຜູ້ຖືກຳມະສິດທີ່ດິນໃນພື້ນທີ່ຂອງການປະຕິບັດງານ?
- ⇦ ແມ່ນໃຜທີ່ເປັນຜູ້ນຳໃຊ້ເນື້ອທີ່ດິນຕົ້ນຕໍໃນພື້ນທີ່ຂອງການປະຕິບັດງານ?ທີ່ຜ່ານມາມີການນຳໃຊ້ເນື້ອທີ່ດິນດັ່ງກ່າວຄືແນວໃດ? ແມ່ນໃຜເປັນຜູ້ນຳໃຊ້?
- ⇦ ຄາດໝາຍການນຳໃຊ້ເນື້ອທີ່ດິນດັ່ງກ່າວໃນອະນາຄົດ ທັນທີທີ່ໄດ້ຮັບອານຸຍາດໃຫ້ນຳໃຊ້ແລ້ວ?
- ⇦ ໄດ້ມີການລະບຸບຸລິມະສິດໃຫ້ແກ່ແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍກ່ຽວກັບການນຳໃຊ້ເນື້ອທີ່ດິນຫຼັງການເກັບກູ້ລະເບີດແລ້ວ ຫຼື ບໍ່?
- ⇦ ມີກຸ່ມໃດໃນຊຸມຊົນທີ່ອາດມີຄວາມສ່ຽງສູງຕໍ່ຂະບວນການກວາດຊື້ເນື້ອທີ່ດິນ?
- ⇦ ສະມາຊິກພາຍໃນຄອບຄົວມີສິດທິອັນໃດແດ່ໃນກໍລະນີຂອງການແຕ່ງດອງ, ການຢ່າຮ້າງ, ການຖືກປະລະ, ທັງໃນດ້ານປະເພນີ ແລະ ກົດໝາຍ?

5.6 **ທີມສຳຫຼວດແບບບໍ່ແມ່ນວິຊາການ (ແລະ ວຽກງານ** EORE **ສຳລັບ ກອງຮ້ອຍ 58)**

- ອັນທີ່ທ່ານເຫັນວ່າແມ່ນບັນຫາ GEDSI ຕົ້ນຕໍໃນການສຳຫຼວດກ່ອນການເກັບກູ້ລະເບີດ
- ມີການດຳເນີນກອງປະຊຸມປຶກສາຫາລືເບື້ອງຕົ້ນຮ່ວມກັບຊຸມຊົນຄືແນວໃດ - ແມ່ນໃຜເປັນຜູ້ຮຽກປະຊຸມ, ໃຊ້ວິທີການໃດ, ນຳໃຊ້ພາສາໃດ, ແມ່ນໃຜເຂົ້າຮ່ວມ
- ມີການເກັບກຳຂໍ້ມູນອັນໃດແດ່ໂດຍແບ່ງຕາມກຸ່ມເພດ, ອາຍຸ, ຄວາມພິການ ແລະ ກຸ່ມຊົນເຜົ່າ?
- ຂັ້ນຕອນການປະເມີນຜົນກະທົບກ່ອນການເກັບກູ້ລະເບີດ ແລະ ຂັ້ນຕອນການຈັດລຽງບຸລິມະສິດມີຫຍັງແດ່ - ແມ່ນໃຜເປັນຜູ້ຄຸ້ມຄອງຂັ້ນຕອນເຫຼົ່ານີ້, ສະມາຊິກໃນຊຸມຊົນຈະມີສ່ວນຮ່ວມຄືແນວໃດ
- IMAS 08.21 ກ່າວວ່າ - "ນຳໃຊ້ທີມປະສົມເພື່ອເກັບກຳຂໍ້ມູນຈາກແມ່ຍິງ, ເດັກຍິງ, ເດັກຊາຍ ແລະ ຜູ້ຊາຍ" - ມີການຈັດຕັ້ງປະຕິບັດວຽກງານນີ້ຄືແນວໃດ?
- ທັງຜູ້ຊາຍ ແລະ ແມ່ຍິງໄດ້ມີສ່ວນຮ່ວມເຂົ້າໃນການລະບຸບັນຫາ, ການກຳນົດບຸລິມະສິດ ແລະ ການກຳນົດເປົ້າໝາຍ ຫຼື ບໍ່?
- ອີງຕາມ IMAS 12.10, CL ຈະຕ້ອງຮັບປະກັນສິ່ງຕ່າງໆດັ່ງຕໍ່ໄປນີ້ (ສິ່ງເຫຼົ່ານີ້ໄດ້ຮັບການຮັບຮອງເອົາຄືແນວໃດ):
    - o ການແບ່ງປັນຂໍ້ມູນລະຫວ່າງໜ່ວຍປະຕິບັດການເກັບກູ້ລະເບີດ ແລະ ຊຸມຊົນທີ່ໄດ້ຮັບຜົນກະທົບ
    - o ການມີສ່ວນຮ່ວມຂອງສະມາຊິກໃນຊຸມຊົນ (ແມ່ຍິງ, ເດັກຍິງ, ຜູ້ຊາຍ ແລະ ເດັກຊາຍ) ໃນການກຳນົດຄວາມສ່ຽງຂອງຕົນເອງ ແລະ ບຸລິມະສິດດ້ານຄວາມເປັນເຈົ້າການ ແລະ ການຍົກສູງບົດບາດໃຫ້ແກ່ການຊ່ວຍເຫຼືອໃນວຽກງານເກັບກູ້ລະເບີດ
    - o ການເຊື່ອມໂຍງຄວາມຕ້ອງການທີ່ຍັງບໍ່ທັນຕອບສະໜອງໄດ້ຂອງຊຸມຊົນເຂົ້າກັບມາດຕະການແຊກແຊງຂອງຂະແໜງການເກັບກູ້ລະເບີດ ໃນລັກສະນະທີ່ມີຄວາມທັນການ ແລະ ສົ່ງເສີມການມີສ່ວນຮ່ວມເຂົ້າໃນວຽກງານເກັບກູ້ ລບຕ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຍິ່ງຂຶ້ນ

  (ສິ່ງນີ້ແມ່ນສອດຄ່ອງກັບມາດຕະຖານຂອງ GMAP/GICHD)

**ກອງປະຊຸມປຶກສາຫາລືຂັ້ນຊຸມຊົນ**

- ແມ່ຍິງສາມາດມີສ່ວນຮ່ວມຢ່າງຫ້າວຫັນ ເຂົ້າໃນກອງປະຊຸມລວບລວມຂໍ້ມູນ ບ່ອນທີ່ມີແຕ່ຜູ້ຊາຍເຂົ້າຮ່ວມນຳ ໄດ້ ຫຼື ບໍ່?
- ໄວໜຸ່ມສາມາດມີສ່ວນຮ່ວມຢ່າງຫ້າວຫັນ ເຂົ້າໃນກອງປະຊຸມລວບລວມຂໍ້ມູນ ບ່ອນທີ່ມີຜູ້ໃຫຍ່ກຸ່ມອື່ນໆເຂົ້າຮ່ວມນຳ ໄດ້ ຫຼື ບໍ່?
- ເວົ້າສະເພາະ, ໄວໜຸ່ມຍິງມີອຸປະສັກກີດຂວາງການມີສ່ວນຮ່ວມຂອງພວກເຂົາ ຫຼື ບໍ່?
- ປະຊາຊົນຈາກກຸ່ມຊົນເຜົ່າ/ກຸ່ມສາສະໜາທີ່ແຕກຕ່າງກັນນັ້ນ ສາມາດມີສ່ວນຮ່ວມຢ່າງຫ້າວຫັນເຂົ້າໃນກອງປະຊຸມລວບລວມຂໍ້ມູນ ບ່ອນທີ່ມີແຕ່ກຸ່ມຊົນເຜົ່າ/ກຸ່ມສາສະໜາຫຼັກເຂົ້າຮ່ວມ ໄດ້ ຫຼື ບໍ່?
- ຄົນພິການມີອຸປະສັກກີດຂວາງການມີສ່ວນຮ່ວມຂອງພວກເຂົາໃນຊຸມຊົນ ຫຼື ບໍ່?
- ຖ້າຈຳເປັນ, ສາມາດກະກຽມກອງປະຊຸມປຶກສາຫາລືແບບແຍກຕ່າງຫາດໃຫ້ແກ່ແມ່ຍິງ, ໄວໜຸ່ມ ແລະ ກຸ່ມທີ່ມີຄວາມຫຼາກຫຼາຍອື່ນໆ ໄດ້ ຫຼື ບໍ່?

**ການຈ້າງງານ**

- ມີຈຳນວນພະນັກງານຍິງ ແລະ ຊາຍຈັກຄົນ ແລະ ມີອັດຕາສ່ວນເທົ່າໃດ (ໂດຍອີງຕາມລະດັບຂອງຄວາມຮັບຜິດຊອບ)
- ມີຈຳນວນພະນັກງານຍິງ ແລະ ຊາຍຈັກຄົນທີ່ພິການ ແລະ ມີອັດຕາສ່ວນເທົ່າໃດ (ໂດຍອີງຕາມລະດັບຂອງຄວາມຮັບຜິດຊອບ)
- ແມ່ຍິງໄດ້ຮັບການຊຸກຍູ້ເຂົ້າໃນຂັ້ນຕອນການຈ້າງງານໂດຍຜ່ານ • ການປະກາດຕຳແໜ່ງຫວ່າງ • ການຮັບເອົາພະນັກງານ • ການຝຶກອົບຮົມ • ການລາພັກເກີດລູກ/ການລາພັກລ້ຽງລູກ
- ແມ່ນຫຍັງທີ່ເປັນອຸປະສັກທາງກົງ ແລະ ທາງອ້ອມຕໍ່ການຈ້າງງານແມ່ຍິງ ແລະ ຜູ້ຊາຍເຂົ້າໃນຕຳແໜ່ງວຽກອັນສະເພາະ?
- ແມ່ນຫຍັງທີ່ເປັນອຸປະສັກຕໍ່ການຈ້າງງານຄົນຈາກກຸ່ມຊົນເຜົ່າອັນສະເພາະ?
- ແມ່ນຫຍັງທີ່ເປັນອຸປະສັກຕໍ່ການຈ້າງງານຄົນພິການ?
- ມີຄວາມເປັນໄປໄດ້ຫຼາຍປານໃດ ທີ່ຈະເກີດຜົນກະທົບທາງລົບໂດຍບໍ່ຕັ້ງໃຈ ແລະ ໜ້າທີ່ການເບິ່ງແຍງດູແລຕໍ່ພະນັກງານ ແລະ ຜູ້ໄດ້ຮັບຜົນປະໂຫຍດ, ໂດຍສະເພາະທີ່ກ່ຽວຂ້ອງກັບການລ່ວງລະເມີດທາງເພດ, ການກົດຂີ່ ແລ ຂູດຮີດທາງເພດ ແລະ ຄວາມຮຸນແຮງບົນພື້ນຖານຂອງບົດບາດຍິງຊາຍໃນຮູບແບບອື່ນໆ
- ແມ່ຍິງ ແລະ ຜູ້ຊາຍຕ້ອງພົບພໍ້ກັບບັນຫາອັນໃດແດ່ ໃນການຢູ່ຮ່ວມກັນໃນຄ້າຍ ຫຼື ທີ່ພັກແບບຄ້າງຄືນ
    a. ແມ່ຍິງທີ່ເຮັດວຽກຢູ່ນອກຊຸມຊົນເປັນເວລາຍາວນານ
    b. ແມ່ຍິງທີ່ເດີນທາງໂດຍບໍ່ມີຜູ້ຕິດຕາມມານຳ ເປັນໄລຍະທາງໄກ ຫຼື ໄປໃນພື້ນທີ່ທີ່ຖືວ່າອັນຕະລາຍ
- ໄດ້ມີການດຳເນີນການຝຶກອົບຮົມອັນໃດແດ່ ໃນຂັ້ນແຫ່ງຊາດ/ຂັ້ນແຂວງ/ຂັ້ນເມືອງ ແລະ ຂັ້ນບ້ານຕໍ່ບັນຫາດ້ານບົດບາດຍິງຊາຍ ທີ່ກ່ຽວຂ້ອງກັບບັນຫາ ລບຕ ໂດຍຜ່ານທີມສຳຫຼວດແບບບໍ່ແມ່ນວິຊາການ? ມັນໄດ້ຖືກຈັດຂຶ້ນເມື່ອໃດ, ແມ່ນໃຜເປັນຜູ້ດຳເນີນການຝຶກອົບຮົມນີ້ ແລະ ຜູ້ໃດໄດ້ຮັບການຝຶກອົບຮົມ?
- ມີນະໂຍບາຍປ້ອງກັນການລ່ວງລະເມີດທາງເພດພ້ອມດ້ວຍຊ່ອງທາງການລາຍງານບັນຫາທີ່ເໝາະສົມ ແລະ ປິດລັບ ຫຼື ບໍ່?



**ການເກັບກຳຂໍ້ມູນ**

ມີການເກັບກຳຂໍ້ມູນ GEDSI ແລະ SADD ຈາກຜູ້ຕອບບົດສຳຫຼວດດັ່ງຕໍ່ໄປນີ້ຄືແນວໃດ:

- ການສຳຫຼວດດ້ານເສດຖະກິດ-ສັງຄົມ
- ການສຳຫຼວດດ້ານຄວາມຮູ້, ທັດສະນະຄະຕິ, ຫຼັກປະຕິບັດ & ຄວາມເຊື່ອ
- ການສຳຫຼວດແບບບໍ່ແມ່ນວິຊາການ
- ການສຳຫຼວດຜົນກະທົບຂອງລະເບີດທີ່ຕົກຄ້າງ
- ຂໍ້ມູນກ່ຽວກັບຜູ້ເຂົ້າຮ່ວມທີ່ມີສ່ວນພົວພັນ ໂດຍຜ່ານວຽກປະສານງານ ແລະ ການມອບຮັບເນື້ອທີ່ດິນ

**ວຽກງານ** EORE:

**ໄດ້ມີການແກ້ໄຂຂໍ້ແນະນຳຈາກບົດລາຍງານດ້ານບົດບາດຍິງຊາຍ ແລະ ລບຕ ຂອງ ອົງການແມັກ ໃນປີ 2008:**

4.1.1 ທີມງານຊຸມຊົນຈະຕ້ອງມີ **ຄວາມດຸ່ນດ່ຽງລະຫວ່າງຍິງຊາຍ** ເພື່ອຊ່ວຍຮັບປະກັນໃຫ້ເກີດການພົວພັນກັນລະຫວ່າງຜູ້ຊາຍ-ຜູ້ຊາຍ ແລະ ຜູ້ຍິງ-ຜູ້ຍິງ ແລະ ໃຫ້ໄດ້ຮັບ **ການຝຶກອົບຮົມໃນການສ້າງຄວາມຕື່ນໂຕດ້ານບົດບາດຍິງຊາຍ** ແລະ ເຕັກນິກອັນສະເພາະໃນການສຳພາດ **ແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍຈາກກຸ່ມຊົນເຜົ່າທີ່ແຕກຕ່າງກັນ.** ຍ້ອນການເຊື່ອມສານບົດບາດຍິງຊາຍແມ່ນສິ່ງທີ່ຂ້ອນຂ້າງໃໝ່ໃນ ວຽກງານເກັບກູ້ລະເບີດເພື່ອມະນຸດຊະທຳ, ການຝຶກອົບຮົມເພື່ອສ້າງຄວາມຕື່ນໂຕດ້ານບົດບາດຍິງຊາຍນີ້ ດີທີ່ສຸດແມ່ນຕ້ອງໃຫ້ຜູ້ຊ່ຽວຊານດ້ານບົດບາດຍິງຊາຍທ້ອງຖິ່ນເປັນຜູ້ດຳເນີນງານ.

- **ມາດຕະຖານລະບຽບການປະຕິບັດງານ ແລະ ຂອບໜ້າວຽກ** ສຳລັບ, ຍົກຕົວຢ່າງ: ສະມາຊິກທີມງານຊຸມຊົນ, ຈະຕ້ອງກຳນົດໄວ້ລະອຽດວ່າພວກເຂົາຕ້ອງໄດ້ດຳເນີນວຽກງານຂອງຕົນ ຕາມຂໍ້ແນະນຳທີ່ສະແດງໄວ້ຂ້າງລຸ່ມນີ້.

4.1.2 ໜ່ວຍປະຕິບັດງານຈະຕ້ອງດຳເນີນການປະເມີນຜົນກ່ອນ ແລະ ຫຼັງວຽກງານເກັບກູ້ລະເບີດທີ່ແນໃສ່ **ໂຮມເອົາ**

**ມຸມມອງດ້ານບົດບາດຍິງຊາຍ ແລະ ສົ່ງເສີມແນວທາງແບບກວມລວມ.** ສິ່ງຈຳເປັນແມ່ນຕ້ອງຮັບປະກັນໃຫ້ໜ່ວຍປະຕິບັດການ ດຳເນີນການປະເມີນຜົນກ່ອນວຽກງານເກັບກູ້ລະເບີດ ເພື່ອສ້າງຄວາມເຂົ້າໃຈທີ່ດີຂຶ້ນກ່ຽວກັບ **ຜົນກະທົບດ້ານບົດບາດຍິງຊາຍຫຼັງການເກັບກູ້ລະເບີດ** ເພື່ອຮັບປະກັນຜົນປະໂຫຍດອັນເທົ່າທຽມ.

- ສຳລັບການປະເມີນຜົນກະທົບກ່ອນການເກັບກູ້ລະເບີດ, ຊຸດຄຳຖາມຕ່າງໆຈະຕ້ອງສາມາດດຶງເອົາຂໍ້ມູນກ່ຽວກັບ **ຜົນກະທົບອັນສະເພາະສຳລັບແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍ.**
- ສຳລັບການປະເມີນຜົນຫຼັງການເກັບກູ້ລະເບີດ, ຊຸດຄຳຖາມຕ່າງໆຈະຕ້ອງຖືກອອກແບບມາ ເພື່ອໃຊ້ເຂົ້າໃນການວັດແທກ **ຜົນປະໂຫຍດ (ແລະ ຖ້າເປັນໄປໄດ້, ຜົນກະທົບທາງລົບ)** ທີ່ການເກັບກູ້ລະເບີດນັ້ນມີຕໍ່ **ແມ່ຍິງ, ຜູ້ຊາຍ, ເດັກຍິງ ແລະ ເດັກຊາຍ.**
- ຂອບວຽກການວິເຄາະບົດບາດຍິງຊາຍ, ເຊັ່ນ: ຂໍ້ມູນການເຂົ້າເຖິງ ແລະ ການຄວບຄຸມ ແລະ ການເຄື່ອນໄຫວວຽກທີ່ໄດ້ຮັບການເນັ້ນໜັກໄວ້ໃນຂັ້ນຕອນການທົບທວນຄືນບົດຄວາມ, ອາດນຳມາໃຊ້ເພື່ອສ້າງຄວາມເຂົ້າໃຈກ່ຽວກັບຜົນກະທົບດ້ານບົດບາດຍິງຊາຍ ທີ່ເກີດຈາກບັນຫາລບຕ ທີ່ຕົກຄ້າງຢູ່ ແລະ ຫຼັງການເກັບກູ້ລະເບີດ.

4.1.3 ຂໍ້ມູນທີ່ໄດ້ຮັບການລວບລວມ - ພ້ອມກັບຂໍ້ມູນທີ່ໄດ້ຮັບຈາກການປະເມີນກ່ອນ ແລະ ຫຼັງການເກັບກູ້ລະເບີດ - ຈະຕ້ອງ **ຖືກແບ່ງຕາມກຸ່ມເພດ ແລະ ອາຍຸ** ຕາມທີ່ແນະນຳໂດຍຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ ຄະນະກຳມາທິການເອີຣົບ.

### 4.2. ບົດບາດຍິງ-ຊາຍໃນຂັ້ນຕອນການເກັບກູ້ລະເບີດ

4.2.1 ການເຂົ້າຮ່ວມກອງປະຊຸມຂັ້ນຊຸມຊົນຈະຕ້ອງຖືກດຳເນີນການ **ໃນຮູບແບບກຸ່ມຍິງ, ກຸ່ມຊາຍ, ແບບດ່ຽວຍິງ, ຫຼື ແບບດ່ຽວຊາຍ.**

- ເພື່ອຮັບປະກັນໃຫ້ຜູ້ທີ່ບໍ່ຮູ້ໜັງສື ຫຼື ຜູ້ທີ່ມີທັກສະທາງພາສາຕ່ຳສາມາດເຂົ້າຮ່ວມໄດ້, ກອງປະຊຸມຈະຕ້ອງຖືກຈັດຂຶ້ນໂດຍຜ່ານການນຳໃຊ້ພາສາເວົ້າແບບລຽບງ່າຍ (ພ້ອມດ້ວຍການແປເປັນພາສາທ້ອງຖິ່ນຖ້າເປັນໄປໄດ້)
- ໜ່ວຍປະຕິບັດການຈະຕ້ອງຮັບປະກັນໃຫ້ຜູ້ເຂົ້າຮ່ວມກອງປະຊຸມແມ່ນມາຈາກ **ຂະແໜງການອັນກວ້າຂວາງຂອງຊຸມຊົນ, ລວມທັງຂະແໜງການທີ່ທຸກຍາກທີ່ສຸດ,** ບໍ່ແມ່ນແຕ່ສະເພາະຜູ້ທີ່ມີການສຶກສາ ຫຼື ສະມາຊິກຄອບຄົວທີ່ມີສະຖານະສູງ.

4.2.2 ພະນັກງານຊາຍ ແລະ ຍິງຂອງໜ່ວຍປະຕິບັດການເກັບກູ້ ລບຕ **ຕ້ອງລົງຢ້ຽມຢາມບ້ານເພື່ອແຈ້ງໃຫ້ຄົວເຮືອນຕ່າງໆຊາບດ້ວຍຕົນເອງ** ກ່ຽວກັບກອງປະຊຸມທີ່ຈະຖືກຈັດຂຶ້ນ ແລະ ຫົວຂໍ້ຂອງກອງປະຊຸມດັ່ງກ່າວ ພ້ອມທັງເຜີຍແຜ່ຂໍ້ມູນຂ່າວສານຢ່າງຊັດເຈນ ກ່ຽວກັບຈຸດປະສົງຂອງກອງປະຊຸມ ແລະ ວຽກງານຂອງຊຸມຊົນ **ເພື່ອເລືອກເອົາວັນ ແລະ ເວລາທີ່ດີທີ່ສຸດໃນການຈັດກອງປະຊຸມ.** ການນຳສົ່ງຈົດໝາຍໄປຍັງນາຍບ້ານ ແມ່ນບໍ່ຖືວ່າເປັນການແຈ້ງລ່ວງໜ້າກ່ຽວກັບຫົວຂໍ້ຂອງກອງປະຊຸມທີ່ພຽງພໍ ຍ້ອນມີໂອກາດທີ່ຂໍ້ມູນດັ່ງກ່າວນັ້ນຈະບໍ່ໄດ້ຮັບການເຜີຍແຜ່ຢ່າງຄົບຖ້ວນ ເມື່ອຖືກສະໜອງໃຫ້ດ້ວຍວິທີນີ້.

### 5.7 ທີມສຳຫຼວດທາງດ້ານວິຊາການ

**ທີມງານວິຊາການ:**

- ຈຳນວນ ແລະ ອັດຕາສ່ວນຂອງພະນັກງານສຳຫຼວດ ແລະ ເກັບກູ້ລະເບີດຍິງ ແລະ ຊາຍ
- ນະໂຍບາຍການຮັບເອົາພະນັກງານທີ່ຄຳນຶງເຖິງບົດບາດຍິງຊາຍ
- ແມ່ຍິງມີໂອກາດຫຼາຍໜ້ອຍປານໃດກ່ຽວກັບການເລື່ອນຕຳແໜ່ງ?
- ການຝຶກອົບຮົມດ້ານ GEDSI ໃນຂະແໜງການລບຕ/ການສຳຫຼວດທາງດ້ານວິຊາການ
- ທ່ານປະຕິບັດຕາມ ລະບຽບການປະຕິບັດ ຫຼື ບໍ່, ລະບຽບດັ່ງກ່າວເວົ້າກ່ຽວກັບບັນຫາດ້ານບົດບາດຍິງຊາຍຄືແນວໃດ?
- ຊຸມຊົນທ້ອງຖິ່ນມີຄວາມເຂົ້າໃຈກ່ຽວກັບໂຕທ່ານໃນຖານະຂອງຜູ້ຊາຍ ແລະ ແມ່ຍິງຄືແນວໃດ?
- ຜູ້ຊາຍ ແລະ ແມ່ຍິງອາໄສຢູ່ໃນທີ່ພັກດຽວກັນໃນເຂດເມືອງ ຫຼື ບໍ່? ຖ້າແມ່ນ, ບັນຫາຕົ້ນຕໍສຳຫຼັບຜູ້ຊາຍ ແລະ ແມ່ຍິງໃນການອາໄສຢູ່ຮ່ວມກັນແມ່ນຫຍັງ?

**ການກຳນົດບຸລິມະສິດ:**

- ກອງປະຊຸມປຶກສາຫາລືຢ່າງຫ້າວຫັນຮ່ວມກັບທັງຍິງ ແລະ ຊາຍຈາກບັນດາຊຸມຊົນທີ່ໄດ້ຮັບຜົນກະທົບ ມີການດຳເນີນງານຄືແນວໃດ?
- ມີການນຳໃຊ້ໝວດໝູ່ອັນໃດເຂົ້າໃນການກຳນົດບຸລິມະສິດໃຫ້ແກ່ວຽກງານເກັບກູ້ ລບຕ? ສິ່ງນີ້ຊ່ວຍອຳນວຍຄວາມສະດວກໃຫ້ແກ່ວຽກງານການພັດທະນາອັນຫຼາກຫຼາຍຄືແນວໃດ - ນ້ຳ ແລະ ສຸຂາພິບານ, ການເສີມຂະຫຍາຍນາເຂົ້າເປືອກ ຫຼື ການພັດທະນາອາຄານ - ທີ່ຄວາມຕ້ອງການຂອງພວກເຂົາໄດ້ຮັບການຕອບສະໜອງຫຼາຍທີ່ສຸດພາຍໃຕ້ບຸລິມະສິດເຫຼົ່ານີ້.
- ຜົນໄດ້ຮັບຕ່າງໆຊີ້ໃຫ້ເຫັນວ່າວຽກງານການເກັບກູ້ລະເບີດນັ້ນ ມີຜົນກະທົບຕໍ່ບົດບາດຍິງຊາຍແທ້, ໂດຍທີ່ຜູ້ຊາຍ ແລະ ແມ່ຍິງໄດ້ຮັບຜົນປະໂຫຍດແຕກຕ່າງກັນຈາກວຽກງານຕ່າງໆ - ແມ່ນຫຍັງທີ່ທ່ານເຫັນວ່າເປັນບັນຫາດ້ານບົດບາດຍິງຊາຍເຫຼົ່ານີ້?
- ມີການຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍມີສ່ວນຮ່ວມຢ່າງມີຄວາມໝາຍຄືແນວໃດ ເຂົ້າໃນຂັ້ນຕອນການປະເມີນຜົນກະທົບກ່ອນ ແລະ ຫຼັງການເກັບກູ້ລະເບີດ?
- ມີການຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍມີສ່ວນຮ່ວມຢ່າງມີຄວາມໝາຍຄືແນວໃດ ເຂົ້າໃນຂັ້ນຕອນການມອບຮັບເນື້ອທີ່ດິນ?
- ການປະເມີນຜົນກະທົບຫຼັງການເກັບກູ້ລະເບີດ - ມີການປະເມີນຜົນສຳລັບບັນຫາ GEDSI ຄືແນວໃດ?
- ການມອບຮັບເນື້ອທີ່ດິນທີ່ໄດ້ຮັບການເກັບກູ້/ສຳຫຼວດແລ້ວ
- ຄວາມເຂົ້າໃຈຂອງຊຸມຊົນກ່ຽວກັບເງື່ອນໄຂການຄັດເລືອກ ສຳລັບການລະບຸຂົງເຂດພື້ນທີ່ທີ່ຕ້ອງໄດ້ຮັບການເກັບກູ້



**ລະບຽບຂັ້ນຕອນການມອບຮັບເນື້ອທີ່ດິນທີ່ເໝາະສົມ:**

ກຸ່ມໄດ້ຮັບຜົນປະໂຫຍດຊາຍ ແລະ ຍິງທີ່ມີຄວາມຫຼາກຫຼາຍ ໄດ້ຮັບການແຈ້ງບອກຂໍ້ມູນທີ່ຖືກຕ້ອງກ່ຽວກັບເນື້ອທີ່ດິນ ທີ່ສາມາດນຳໃຊ້ໄດ້ຢ່າງປອດໄພແລ້ວໃນຕອນນີ້ ຄືແນວໃດ?
ການປະເມີນຜົນກ່ອນ ແລະ ຫຼັງການເກັບກູ້ລະເບີດ: ມີການຮັບປະກັນໃຫ້ແມ່ຍິງ ແລະ ຜູ້ຊາຍທີ່ໄດ້ຮັບຜົນກະທົບນັ້ນໄດ້ປະໂຫຍດຢ່າງເທົ່າທຽມກັນ ຄືແນວໃດ?

- ການມີສ່ວນຮ່ວມຊຸມຊົນເຂົ້າໃນພິທີມອບຮັບເນື້ອທີ່ດິນ

**ບັນຫາການຈ້າງງານ** ໃນຖານະຂອງທີມສຳຫຼວດແບບບໍ່ແມ່ນວິຊາການ
ການຈັດຕັ້ງປະຕິບັດ **ຂໍ້ແນະນຳຂອງ ອົງການແມັກ** (ຕາມທີ່ລະບຸໄວ້ຂ້າງເທິງ)



## 5.8 ເຄື່ອງມືການສຳພາດຄົວເຮືອນ

ລາຍລະອຽດສຳລັບສະມາຊິກໃນຄອບຄົວທັງໝົດ - ຂໍ້ມູນປະຊາກອນ

| ຊື່ | ເພດ | ສະຖານະການແຕ່ງດອງ | ອາຍຸ | ລະດັບການສຶກສາ | ກຸ່ມຊົນເຜົ່າ | ການຈ້າງງານ/ລາຍຮັບ | ຄວາມຕ້ອງການ, ລະບຸຕາມປະເພດ |
|---|---|---|---|---|---|---|---|
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |
| | | | | | | | |

ຂົງເຂດຕົ້ນຕໍສຳລັບການສອບຖາມຂໍ້ມູນ/ການປຶກສາຫາລື: (ໃຫ້ຈື່ໄວ້ວ່າ, ຖ້າເປັນໄປໄດ້, ໃຫ້ສອບຖາມຫົວໜ້າຄອບຄົວທັງຍິງ ແລະ ຊາຍແບບແຍກຕ່າງຫາກດ້ວຍຊຸດຄຳຖາມແບບດຽວກັນ)

ໂດຍທົ່ວໄປ:

» ຈຳນວນຊົ່ວໂມງທີ່ໃຊ້ໃນການປະຕິບັດວຽກປະຈຳວັນ (ລວມໄປເຖິງຄວາມແຕກຕ່າງຕາມລະດູການ)

ຄວາມຮູ້, ແລະ ການມີສ່ວນຮ່ວມເຂົ້າໃນຂັ້ນຕອນການກຳນົດບຸລິມະສິດ ໃຫ້ແກ່ວຽກງານເກັບກູ້ເນື້ອທີ່ດິນ:

- ມີການຕັດສິນໃຈກ່ຽວກັບການຈັດລຽງບຸລິມະສິດຄືແນວໃດ ແລະ ໂດຍໃຜ; ມີການດຳເນີນການປຶກສາຫາລືກັບຊຸມຊົນຄືແນວໃດ; ຖືກຈັດຂຶ້ນຢູ່ໃສ; ປະຊາຊົນຮັບຮູ້ກ່ຽວກັບການຝຶກສາຫາລືດັ່ງກ່າວໄດ້ຜ່ານທາງໃດ; ແມ່ນໃຜເປັນຜູ້ຕັດສິນໃຈໃຫ້ພວກເຂົາເຂົ້າຮ່ວມ; ພວກເຂົາໄດ້ເຂົ້າຮ່ວມ ຫຼື ບໍ່, ແລະ ຖ້າໄດ້ເຂົ້າຮ່ວມ, ອະທິບາຍຂັ້ນຕອນຂອງກອງປະຊຸມ ແລະ ຂັ້ນຕອນການຕັດສິນໃຈທີ່ກຳລັງດຳເນີນການຢູ່

ຄວາມຮູ້, ແລະ ການມີສ່ວນຮ່ວມເຂົ້າໃນວຽກງານ EORE:

- ແມ່ນໃຜໃນຊຸມຊົນຂອງທ່ານທີ່ທ່ານເຫັນວ່າ ມີຄວາມສ່ຽງເກີດອຸບັດເຫດຈາກລະເບີດຝັງດິນ/ ລບຕ ຫຼາຍທີ່ສຸດ ແລະ ຍ້ອນຫຍັງ? - ຍ້ອນບົດບາດຍິງຊາຍ/ອາຍຸ/ວຽກງານປະຈຳວັນ/ການຈ້າງງານ/ລັກສະນະນິໄສສ່ວນໂຕ?
- ທ່ານ/ຄອບຄົວຂອງທ່ານເຄີຍໄດ້ຮັບການຝຶກອົບຮົມ EORE ມາກ່ອນ ຫຼື ບໍ່; ຖືກຈັດຂຶ້ນຢູ່ໃດ; ປະຊາຊົນຮັບຮູ້ກ່ຽວກັບການຝຶກສາຫາລືດັ່ງກ່າວໄດ້ຜ່ານທາງໃດ; ແມ່ນໃຜເປັນຜູ້ຕັດສິນໃຈໃຫ້ພວກເຂົາເຂົ້າຮ່ວມ; ຂໍ້ມູນດັ່ງກ່າວມີຄວາມກ່ຽວພັນກັບສິ່ງທີ່ພວກເຂົາຕ້ອງການຄືແນວໃດ; ມີການເນັ້ນໜັກໃສ່ຄວາມຕ້ອງການຂອງໃຜເປັນພິເສດ - ຜູ້ຊາຍ/ເດັກຊາຍ/ເດັກຍິງ/ຜູ້ຍິງ - ໄດ້ມີການສະໜອງຂໍ້ຄວາມທີ່ແຕກຕ່າງໃຫ້ແກ່ກຸ່ມເຫຼົ່ານີ້ ຫຼື ບໍ່ໂດຍອີງຕາມລະດັບຄວາມສ່ຽງທີ່ແຕກຕ່າງຂອງພວກເຂົາ; ມີການນຳໃຊ້ຊ່ອງທາງອັນໃດ, ເພື່ອຮັບປະກັນໃຫ້ຄົນພິການສາມາດເຂົ້າເຖິງ ຫຼື ພະຍາຍາມລວມເອົາຄົນພິການເຂົ້ານຳ, ໄດ້ມີການພິຈາລະນາແຖິງຊ່ວງເວລາທີ່ສະດວກ ເພື່ອໃຫ້ແມ່ຍິງໄດ້ເຂົ້າຮ່ວມນຳ ຫຼື ບໍ່; ມີໃຜອີກແດ່ເຂົ້າຮ່ວມ: ກຸ່ມຊົນເຜົ່າໃດ, ອາຍຸ, ລະດັບຄສາມອາວຸໂສໃນບ້ານ ແລະ ອາຍຸ; ມີຂໍ້ແນະນຳກ່ຽວກັບການປັບປຸງ ຫຼື ບໍ່; ມີຄຳເຫັນອື່ນໆອີກບໍ່?

ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ:

- ຈຳເປັນຕ້ອງມີການສະໜັບສະໜຸນອັນໃດ ໃຫ້ແກ່ສະມາຊິກຄອບຄົວທີ່ບາດເຈັບພາຍໃນຄົວເຮືອນ ແລະ ແມ່ນໃຜທີ່ສະໜອງສິ່ງນີ້ໃຫ້ (ຈຳນວນຊົ່ວໂມງໂດຍສະເລ່ຍຕໍ່ມື້/ຕໍ່ອາທິດ); ເພື່ອແກ້ໄຂບັນຫາການສະໜັບສະໜຸນຄົນພິການ; ໄດ້ມີການຮັບຮອງເອົາໜ້າວຽກ ຫຼື ບົດບາດຕ່າງໆໂດຍສະມາຊິກໃນຄອບຄົວຄົນອື່ນໆ ຫຼື ບໍ່; ມີການສະໜອງບໍລິການ ແລະ ການສະໜັບສະໜຸນອັນໃດແດ່ ໃຫ້ແກ່ຊຸມຊົນ/ໝູ່ເພື່ອນ/ຄອບຄົວຂະໜາດໃຫຍ່ ແລະ ພວກເຂົາສາມາດຕອບສະໜອງຕຄໍ່ຄວາມຕ້ອງການອັນສະເພາະໄດ້ດີປານໃດ ໃນຖານະຂອງແມ່ຍິງ/ຜູ້ຊາຍ/ເດັກຍິງ/ເດັກຊາຍ; ແມ່ນຫຍັງທີ່ເປັນຜົນກະທົບຕໍ່ການຈ້າງງານ/ລາຍຮັບ/ການແຕ່ງດອງ/ການເຂົ້າເຖິງການສຶກສາ ໃຫ້ແກ່ສະມາຊິກໃນຄອບຄົວ/ຄວາມສາມາດໃນການດຳເນີນວຽກງານປະຈຳວັນ/ຄວາມເຊື່ອໝັ້ນໃນຕົນເອງ
- ພວກເຂົາຕ້ອງໄດ້ພົບພໍ້ກັບປາກົດການຫຍໍ້ທໍ້ ຫຼື ການຈຳແນກອັນໃດແດ່/ເຊື່ອວ່າຄອບຄົວຂອງພວກເຂົາຕ້ອງປະເຊີນທັງ



ໃນລະດັລສ່ວນໂຕ ແລະ ລະດັບຊຸມຊົນ; ເກີດມີການປ່ຽນແປງດ້ານສະພາບການໃນຄົວເຮືອນ ຫຼື ບໍ່ - ມີການປ່ຽນແປງຄືແນວໃດ ແລະ ມີການຮັບມືກັບການປ່ຽນແປງດັ່ງກ່າວຄືແນວໃດ - ມີບໍລິການສະໜັບສະໜຸນສຳລັບສິ່ງນີ້ ຫຼື ບໍ່?

- ພວກເຂົາ/ສະມາຊິກໃນຄອບຄົວທີ່ພິການ ຕ້ອງໄດ້ພົບພໍ້ກັບຄວາມສ່ຽງສ່ວນບຸກຄົນເພີ່ມເຕີມອີກ ຍ້ອນຄວາມພິການຂອງພວກເຂົາ ຫຼື ບໍ່;
- ມີບໍລິການເພີ່ມເຕີມ ຫຼື ແຫຼ່ງການສະໜັບສະໜຸນອັນໃດແດ່ ທີ່ພວກເຂົາຈະໄດ້ຮັບປະໂຫຍດ; ພວກເຂົາມີບັນຫາເພີ່ມເຕີມທີ່ປາກຍົກຂຶ້ນມາໃຫ້ເຫັນ ຫຼື ບໍ່.

ພະນັກງານເກັບກູ້ ລບຕ:

- ທ່ານຮູ້ຫຍັງແດ່ກ່ຽວກັບທີມງານເກັບກູ້ລະເບີດ ແລະ ວິທີການເຮັດວຽກຂອງພວກເຂົາ; ພວກເຂົາແມ່ນທີມຊາຍລ້ວນ/ຍິງລ້ວນ/ປະສົມ; ທ່ານ/ຄູ່ສົມລົດ/ສະມາຊິກອື່ນໆໃນຊຸມຊົນຄິດແນວໃດ ກ່ຽວກັບການມີທີມປະສົມ/ຍິງລ້ວນ/ຊາຍລ້ວນໃນຊຸມຊົນຂອງທ່ານ? ແມ່ນຫຍັງທີ່ທ່ານເຫັນວ່າເປັນປະໂຫຍດ ແລະ ເປັນຜົນເສຍຕໍ່ທີມງານ ແລະ ຕໍ່ບ້ານຂອງທ່ານ?
- ທ່ານ/ເມຍຂອງທ່ານ/ລູກສາວຢາກເຮັດວຽກເປັນນັກເກັບກູ້ລະເບີດ ຫຼື ບໍ່; ແມ່ນຫຍັງທີ່ຈະເປັນປະໂຫຍດ ແລະ ເປັນຜົນເສຍຂອງວຽກງານນີ້ ຈາກທັດສະນະຄະຕິຂອງທ່ານ ແລະ ຈາກທັດສະນະຄະຕິຂອງສະມາຊິກຄົນອື່ນໆໃນຄອບຄົວ ແລະ ຂອງຊຸມຊົນ; ແມ່ນໃຜທີ່ຈະເປັນຜູ້ຕັດສິນໃຈຂັ້ນສຸດທ້າຍ ໃນຄອບຄົວຂອງທ່ານກ່ຽວກັບການເຮັດວຽກເປັນນັກເກັບກູ້ລະເບີດ?

ແມ່ຍິງໃນຂັ້ນຕອນການຕັດສິນໃຈ:

- ທ່ານ/ແມ່ຍິງໃນຄອບຄົວຂອງທ່ານ ມີບົດບາດການຕັດສິນໃຈອັນໃດແດ່ ທີ່ກ່ຽວຂ້ອງກັບບັນຫາໃນຄົວເຮືອນ; ການມີສ່ວນຮ່ວມຂອງຊຸມຊົນ; ການເຂົ້າເຖິງບົດບາດຂັ້ນນຳພາໂດຍທົ່ວໄປໃນຊຸມຊົນ ລວມໄປເຖິງໂດຍສະເພາະໃນຂັ້ນຕອນການເກັບກູ້ລະເບີດ ທີ່ພວມໄດ້ຮັບການດຳເນີນງານໃນຊູມຊົນຂອງທ່ານໃນປັດຈຸບັນ; ແມ່ນຫຍັງທີ່ເປັນອຸປະສັກຕົ້ນຕໍທີ່ກີດຂວາງທ່ານ/ແມ່ຍິງໃນຄອບຄົວຂອງທ່ານ/ແມ່ຍິງໃນຊຸມຊົນ ຈາກການເຂົ້າເຖິງບົດບາດການຕັດສິນໃຈໃນຫຼາຍລະດັບຂອງສັງຄົມ/ພາຍໃນຂະແໜງການເກັບກູ້ລະເບີດ/ພາຍໃນຂັ້ນຕອນການສ້າງຄວາມຄືບໜ້າສາຍອາຊີບ?

ກຳມະສິດທີ່ດິນ

- ຊື່ຂອງໃຜປາກົດຢູ່ເທິງເອກະສານສະແດງກຳມະສິດທີ່ດິນ; ຖ້າບໍ່ມີຊື່ຂອງທັງສອງຢູ່ເທິງເອກະສານສະແດງກຳມະສິດທີ່ດິນ, ຍ້ອນຫຍັງຈຶ່ງເປັນແນວນັ້ນ: ທ່ານ/ເມຍຂອງທ່ານຮັບຮູ້ກ່ຽວກັບສິດທິການຖືຄອງເນື້ອທີ່ດິນ ຫຼື ບໍ່/ຈະເກີດຫຍັງຂຶ້ນຖ້າຜູ້ເປັນຜົວເສຍຊີວິດ?
- ຖ້າມີລະເບີດຕົກຄ້າງ ຫຼື ປາກົດຢູ່ໃນເນື້ອທີ່ດິນຂອງທ່ານ, ມັນຈະສົ່ງຜົນກະທົບຕໍ່ລາຍຮັບ, ການເຄື່ອນໄຫວ, ການເຂົ້າເຖິງການປູກຝັງ ແລະ ພືດພັນ ຫຼື ບັນຫາອື່ນໆທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງທ່ານ ຄືແນວໃດ?
- ຖ້າເນື້ອທີ່ດິນຂອງທ່ານຈະໄດ້ຮັບການເກັບກູ້, ແມ່ນຫຍັງທີ່ທ່ານເຫັນວ່າເປັນບຸລິມະສິດດ້ານການນຳໃຊ້ເນື້ອທີ່ດິນ; ຜົວ/ເມຍຂອງທ່ານມີມຸມມອງແບບດຽວກັນ ຫຼື ບໍ່; ຖ້າຕ່າງ, ຕ່າງກັນແນວໃດ; ແມ່ນໃຜຈະເປັນຜູ້ຕັດສິນໃຈຂັ້ນສຸດທ້າຍ?

## 5.9 ການສົນທະນາກຸ່ມສະເພາະຮ່ວມກັບແມ່ຍິງ ແລະ ຜູ້ຊາຍໃນເຂດບ້ານ: ເຄື່ອງມືພາກສະໜາມທີ 1 - ຕາຕະລາງເຄື່ອນໄຫວວຽກງານປະຈຳວັນ

ທິດທາງ: ໃນກຸ່ມຊາຍ ແລະ ຍິງລ້ວນ, ຜູ້ເຂົ້າຮ່ວມໄດ້ຖືກຮ້ອງຂໍໃຫ້ລະບຸວຽກງານຕົ້ນຕໍ ທີ່ສະມາຊິກຄົນສຳຄັນໃນຄົວເຮືອນຂອງພວກເຂົາ ຕ້ອງດຳເນີນການຢ່າງເປັນປະຈຳໃນແຕ່ລະວັນ (ມື້ປູກຝັງໂດຍສະເຫຼ່ຍ)

| ກິດຈະກຳ | ແມ່ຕູ້ (ຕາມການລະບຸກຸ່ມ) | ພໍ່ຕູ້ 67 | ພໍ່ 45 | ແມ່ XX | ລູກຊາຍ XX | ລູກສາວ XX | ລູກຊາຍ XX | ລູກຊາຍ XX | ອື່ນໆ XX | ອື່ນໆ XX |
|---|---|---|---|---|---|---|---|---|---|---|
| ເຊົ້າມືດ | | | | | | | | | | |
| ຕອນເຊົ້າ | | | | | | | | | | |
| ຕອນສວຍ | | | | | | | | | | |
| ຕອນແລງ | | | | | | | | | | |




ນອກຈາກນັ້ນ, ຈະຕ້ອງນຳໃຊ້ຊຸດຄຳຖາມດັ່ງຕໍ່ໄປນີ້ໂດຍຜູ້ອຳນວຍຄວາມສະດວກ ເຂົ້າໃນການປຶກສາຫາລືໃນເວລາທີ່ຕື່ມຕາຕະລາງເຄື່ອນໄຫວວຽກປະຈຳວັນແລ້ວ:

- ແມ່ນໃຜໃນຄອບຄົວທີ່ເຂົ້າຮ່ວມກອງປະຊຸມ? ກອງປະຊຸມປະເພດໃດ?
- ແມ່ນໃຜໃນຄອບຄົວໄປຫ້ອງປິ່ນພະຍາດ? ໄປເພື່ອຫຍັງ?
- ແມ່ນຫຍັງທີ່ເປັນແຫຼ່ງລາຍຮັບຫຼັກຂອງຄົວເຮືອນ, ມາຈາກໃສ ແລະ ແມ່ນໃຜເປັນຜູ້ສ້າງລາຍຮັບດັ່ງກ່າວ?
- ແມ່ນໃຜເປັນຜູ້ຕັດສິນໃຈທາງການເງິນເປັນຫຼັກ?
- ຊື່ຂອງໃຜປາກົດເທິງໃບຕາດິນທີ່ທ່ານມີ?

ຕົວຢ່າງການຕື່ມຕາຕະລາງເຄື່ອນໄຫວວຽກປະຈຳວັນ ສຳລັບກຸ່ມຜູ້ຊາຍ ແລະ ແມ່ຍິງ:

**ກຸ່ມແມ່ຍິງໃນ ບ້ານປຸ່ງໜັ້ນ, ເມືອງພູກູດ, ແຂວງຊຽງຂວາງ**



**ກຸ່ມຜູ້ຊາຍໃນ ບ້ານປຸ່ງໜັ້ນ, ເມືອງພູກູດ, ແຂວງຊຽງຂວາງ**





## 5.10 ການສົນທະນາກຸ່ມສະເພາະຮ່ວມກັບແມ່ຍິງ ແລະ ຜູ້ຊາຍໃນເຂດບ້ານ: ເຄື່ອງມືພາກສະໜາມທີ 2 - ການກຳນົດແຜນທີ່ຄົ້ນພົບ ແລະ ເກັບກູ້ ລບຕ

ທິດທາງ: ອີກເທື່ອໜຶ່ງ, ໃນກຸ່ມຊາຍລ້ວນ ແລະ ຍິງລ້ວນ, ຜູ້ເຂົ້າຮ່ວມໄດ້ຖືກຮ້ອງຂໍໃຫ້ແຕ້ມແຜນທີ່ບ້ານຂອງພວກເຂົາ ແລະ ໝາຍຈຸດບ່ອນທີ່:

- ເກີດອຸບັດເຫດ ລບຕ ຂຶ້ນໃນໄລຍະ 5 ປີທີ່ຜ່ານມາ - ແມ່ນໃຜເສຍຊີວິດ ຫຼື ໄດ້ຮັບບາດເຈັບແດ່ - ເພດ, ອາຍຸ, ກຸ່ມຊົນເຜົ່າ ແລະ ປະເພດຂອງການບາດເຈັບຂອງພວກເຂົາ
- ການເກັບກູ້ ລບຕ ທີ່ເກີດຂຶ້ນແລ້ວ (ເປັນສີຟ້າ)
- ລບຕ ທີ່ຍັງຕົກຄ້າງຢູ່ (ເປັນສີແດງ)
- ຈຸດສັງເກດການທີ່ກ່ຽວຂ້ອງຕໍ່ທ່ານ

ຕົວຢ່າງຂອງແຜນທີ່ທີ່ແຕ້ມໂດຍກຸ່ມຜູ້ຊາຍ ແລະ ກຸ່ມແມ່ຍິງຕາມທີ່ສະແດງໄວ້ໃນຮູບພາບລຸ່ມນີ້
ໝາຍເຫດ: ກິດຈະກຳນີ້ກໍ່ບໍ່ໄດ້ຕ້ອງການໃຫ້ຜູ້ເຂົ້າຮ່ວມ ມີທັກສະດ້ານອ່ານອອກຂຽນໄດ້ເລີຍ.




**ກຸ່ມຜູ້ຊາຍຢູ່ ບ້ານໂພນສະອາດ**



**ກຸ່ມແມ່ຍິງຢູ່ ບ້ານໂພນສະອາດ**

ພວກເຂົາຍັງຖືກສອບຖາມດ້ວຍຊຸດຄຳຖາມດັ່ງຕໍ່ໄປນີ້ ພາຍຫຼັງສຳເລັດການແຕ້ມແຜນທີ່ແລ້ວ: ສຳລັບຂັ້ນຕອນການເກັບກູ້ລະເບີດ: ໄດ້ມີໃຜໃນຄົວເຮືອນຂອງທ່ານເຂົ້າຮ່ວມກອງປະຊຸມຂັ້ນຊຸມຊົນ ກ່ຽວກັບວຽກງານການເກັບກູ້ ລບຕ ຫຼື ບໍ່? ແມ່ນໃຜໃນຄົວເຮືອນຂອງທ່ານທີ່ເຂົ້າຮ່ວມ? ພວກເຂົາຮູ້ກ່ຽວກັບກອງປະຊຸມນີ້ໄດ້ຄືແນວໃດ? ແມ່ນໃຜເປັນຜູ້ຕັດສິນໃຈວ່າຈະໃຫ້ໃຜຈາກຄົວເຮືອນຂອງທ່ານເຂົ້າຮ່ວມກອງປະຊຸມ?

## 5. 11 ການປຶກສາຫາລືກຸ່ມສະເພາະຮ່ວມກັບແມ່ຍິງ ແລະ ຜູ້ຊາຍໃນເຂດບ້ານ: ເຄື່ອງມືພາກສະໜາມທີ 3 - ການປຶກສາຫາລືກຸ່ມສະເພາະໃນວຽກງານ EORE ພ້ອມດ້ວຍຮູບພາບ

**ທ່ານເຄີຍໄດ້ຮັບຂໍ້ມູນ/ການຝຶກອົບຮົມກ່ຽວກັບຄວາມສ່ຽງຈາກ ລບຕ ຫຼື ບໍ່?**

- ຖ້າເຄີຍ, ແມ່ນໃຜສະໜອງການຝຶກອົບຮົມນີ້ໃຫ້ ແລະ ທ່ານຮູ້ກ່ຽວກັບການຝຶກອົບຮົບນີ້ໄດ້ຄືແນວໃດ?
- ແມ່ນໃຜໃນຄອບຄົວຂອງທ່ານທີ່ເຂົ້າຮ່ວມກອງປະຊຸມດັ່ງກ່າວ?
- ແມ່ນໃຜເປັນຜູ້ຕັດສິນໃຈໃຫ້ໃຜເຂົ້າຮ່ວມ?

**ທ່ານຈະໃຫ້ຄຳແນະນຳອັນໃດ ຕໍ່ກຸ່ມຄົນດັ່ງຕໍ່ໄປນີ້ໃນຄອບຄົວຂອງທ່ານ ເພື່ອປົກປ້ອງພວກເຂົາຈາກອຸບັດເຫດ ລບຕ:**

- ເມຍ
- ແມ່
- ຜົວ

- ພໍ່
- ລູກຊາຍ
- ລູກສາວ

**ທ່ານຄິດວ່າອຸບັດເຫດ ລບຕ ຈະສົ່ງຜົນກະທົບແນວໃດຕໍ່ຊີວິດການເປັນຢູ່ຂອງເດັກຍິງ ແລະ ເດັກຊາຍ, ໂດຍສະເພາະໃນດ້ານ:**

- ການສຶກສາ
- ການຈ້າງງານ
- ການແຕ່ງດອງ
- ຄວາມເຊື່ອໝັ້ນໃນຕົນເອງ
- ວິທີທີ່ຊຸມຊົນປະຕິບັດຕໍ່ພວກເຂົາ
- ຄວາມສາມາດໃນການເຂົ້າເຖິງບໍລິການຕ່າງໆຂອງພວກເຂົາ



## Endnotes

1 ກຸ່ມຜູ້ຊາຍຈາກ LWU ໄດ້ໃຫ້ຄວາມຊ່ວຍເຫຼືອເຂົ້າໃນການອຳນວຍຄວາມສະດວກ ໃຫ້ແກ່ກອງປະຊຸມຄັ້ງທຳອິດຂອງກຸ່ມຊາຍລ້ວນທັງ 7 ກຸ່ມ ພ້ອມທັງເຂົ້າຮ່ວມສັງເກດການປະຕິບັດຂັ້ນຕອນ ແລະ ການນຳໃຊ້ຊຸດເຄື່ອງມືຕ່າງໆ.

2 ສິ່ງນີ້ແມ່ນຍ້ອນເວລາທີ່ໃຊ້ເຂົ້າໃນການເດີນທາງທີ່ບໍ່ໄດ້ຄາດຄິດມາກ່ອນ ເພື່ອໄປພົບປະກັບທີມເກັບກູ້ລະເບີດຍິງລ້ວນຂອງ ໂຄງການ UXO Lao.

3 ຊຸດຂົງເຂດຄົ້ນຄໍນີ້ແມ່ນໄດ້ຖືກນຳໃຊ້ໂດຍ ອົງການ USAID n.d..

4 ທະນາຄານໂລກ 2020, ໜ້າທີ 16.

5 ທະນາຄານໂລກ 2022.

6 ລັດຖະບານ ສປປ ລາວ 2021, ໜ້າທີ 19.

7 Law Insider. See: www.lawinsider.com/dictionary/four-months#:~:text=More%20Definitions%20of%20Four%20months&text=-Four%20months%20for%20purposes%20of,per%20month%20for%20four%20months.

8 ມາດຕາທີ 83 (ປັບປຸງ).

9 ມາດຕາທີ 8 ແລະ 13.

10 ອົງການ UNICEF 2020, ໜ້າທີ 17.

11 Ironside 2017, ໜ້າທີ 23.

12 ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ 2020.

13 ສູນຂໍ້ມູນຂ່າວສານຂອງທະນາຄານໂລກ. ເບິ່ງຕື່ມ: https://data.worldbank.org/indicator/SG.GEN.PARL.ZS?locations=LA.

14 ບົດບາດຍິງຊາຍ ແລະ ການຈ້າງງານໃນຂະແໜງການເກັບກູ້ລະເບີດຕາມຈຳນວນ, ຂະແໜງການເກັບກູ້ລະເບີດແຫ່ງການາດາ. ເບິ່ງຕື່ມ: https://d3n8a8pro7vhmx.cloudfront.net/minesactioncanada/pages/284/attachments/original/1581427985/Employment_Paper_Final_letter.pdf?1581427985.

15 ReliefWeb 2022.

16 Bini ແລະ Jones 2014, ໜ້າທີ 15.

17 Newton-Small 2016.

18 ສູນສະຖິຕິແຫ່ງຊາດ 2016.

19 ອົງການ USAID 2018, ໜ້າທີ 6.

20 ດັ່ງທີ່ໄດ້ລະບຸໄວ້ໃນພາກສ່ວນກ່ອນໜ້ານີ້, ມາດຕາທີ 27 ກ່າວວ່າ: “ລັດ ແລະ ສັງຄົມຈະຕ້ອງສົ່ງເສີມການຈ້າງງານ ແລະ ພິຈາລະນາໃຫ້ບຸລິມະສິດຕໍ່ຄົນພິການ ໂດຍຜ່ານການຮັບຮອງເອົາກຸ່ມທີ່ຄົບເງື່ອນໄຂການເຮັດວຽກໃນຕຳແໜ່ງນັ້ນ, ກຳນົດໃນແຕ່ລະປີໂດຍໜ່ວຍງານທີ່ກ່ຽວຂ້ອງ.”

21 ອົງການແຄ 2020, ໜ້າທີ 21.

22 Ibid, ໜ້າທີ 22.

23 ອົງການ USAID n.d.

24 ອົງການແຄ 2020.

25 ອົງການ USAID 2022, ໜ້າທີ 18.

26 Nilsson, Rozes ແລະ Garcia 2015.

27 IMAS 07.11 ສະບັບທຳອິດ (ປັບປຸງຄັ້ງທີ 5, ກຸມພາ 2019) ການອານຸຍາດນຳໃຊ້ເນື້ອທີ່ດິນ ຫົວຂໍ້ທີ 5. ຂັ້ນຕອນການອານຸຍາດນຳໃຊ້ເນື້ອທີ່ດິນ: 5.1. ໂດຍທົ່ວໄປ, ຂໍ້ (h).

28 Ibid., ພາກທີ 8.2. ທຸກຄວາມພະຍາຍາມທີ່ສົມເຫດສົມຜົນ.

29 Ibid., ຫົວຂໍ້ທີ 13.2. ອົງການເກັບກູ້ລະເບີດ, ຂໍ້ (f).

30 Kalamar 2017, ໜ້າທີ 46.

31 Ibid.

32 Ibid.

33 ອົງການແຄ 2020, ໜ້າທີ 24.

34 ອົງການ UNICEF 2020, ໜ້າທີ 92

35 GMAP 2013, ໜ້າທີ 5.

36 ອົງການ USAID 2022, ໜ້າທີ 21.

37 ສູນຄົ້ນຄວ້າການພັດທະນາໃນທົ່ວໂລກ. ເບິ່ງຕື່ມ: www.gdrc.org/gender/framework/g-framework.html.

38 ອົງການ UNICEF 2021.

39 ອົງການ ILO 2018.

40 IMAS 13.10 ການຊ່ວຍເຫຼືອຜູ້ປະສົບເຄາະຮ້າຍໃນຂະແໜງການເກັບກູ້ລະເບີດ: ປັບປຸງປີ 2023, ວັກທີ 5.1: 10

41 Ibid., ວັກທີ 5.2: 4

42 ICBL 2021, ໜ້າທີ 2.

43 ບົດລາຍງານສະບັບດຽວກັນນັ້ນ ໄດ້ຊີ້ໃຫ້ເຫັນວ່າການນຳໃຊ້ຂໍ້ມູນແບບແບ່ງຕາມກຸ່ມເພດນັ້ນ ແມ່ນມີຈຳນວນທີ່ຫຼຸດລົງຢ່າງຫຼວງຫຼາຍໃນຊ່ວງຊຸມປີທີ່ຜ່ານມາ ອັນເນື່ອງມາຈາກຂໍ້ຂັດແຍ່ງທີ່ເກີດຂຶ້ນໃນທົ່ວໂລກ, ໂດຍມີຄົນກວມ 33 ສ່ວນຮ້ອຍຈາກປີ 2015 ຫາ 2019 ທີ່ບໍ່ມີການລະບຸເພດ ເມື່ອສົມທຽບກັບສະຖິຕິດຽວກັນຈາກປີ 2010 ຫາ 2014 ທີ່ມີພຽງແຕ່ 12 ສ່ວນຮ້ອຍເທົ່ານັ້ນ. ໃນປີ 2019, ມີການລາຍງານວ່າຜູ້ເສຍຊີວິດນັ້ນປະກອບມີ: ແມ່ຍິງກວມ 43 ສ່ວນຮ້ອຍ ແລະ ຜູ້ຊາຍ 36 ສ່ວນຮ້ອຍ. ຂໍ້ມູນສຳລັບ ສປປ ລາວ ແມ່ນມີຄວາມແຕກຕ່າງຢ່າງໃຫຍ່ຫຼວງ ແຕ່ຍ້ອນກໍລະນີຂອງ 33 ສ່ວນຮ້ອຍນັ້ນບໍ່ມີການລະບຸເພດ, ຂໍ້ມູນສົມທຽບນີ້ຈຶ່ງໄດ້ຮັບການພິຈາລະນາວ່າບໍ່ມີຄວາມຖືກຕ້ອງ.

44 Jones ແລະ Breili 2015.

45 ວຽກງານ EORE ພາຍໃຕ້ IMAS: 12.10, ສະບັບທີສອງ 2020, ວັກທີ 6.

46 ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ 2015, ໜ້າທີ 6.

47 ອົງການອະນາໄມໂລກ 2021.

48 ຄະນະກຳມາທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ 2015, ໜ້າທີ 2 ແລະ 8.

49 Pimhidzai n.d., ໜ້າທີ 3 ແລະ 10.

50 ອົງການແຄ 2020, ໜ້າທີ 13.

51 GMAP 2013, ໜ້າທີ 6.

52 Ibid.

53 Ibid., ໜ້າທີ 17.

54 Lark ແລະ Wolsey 2022, ໜ້າທີ 1.

55 Ibid.

56 GMAP 2013, ໜ້າທີ 10.

57 Duprat ແລະ Pecak 2014, ໜ້າທີ 19.

58 ອົງການ USAID 2018, ໜ້າທີ 11.

59 Ibid, ໜ້າທີ 15.

60 Kalamar 2017, ໜ້າທີ 46.

61 ສູນສະຖິຕິແຫ່ງຊາດ 2016.

62 "NRA ຈະຕ້ອງພິຈາລະນາການຮ່າງ ແລະ ການຮັບຮອງເອົານະໂຍບາຍແບບດ່ຽວກ່ຽວກັບບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍສຳລັບຂະແໜງການ ລບຕ, ເປັນເອກະສານທີ່ຕ້ອງອ້າງອີງເຂົ້າໃນ ມາດຕະຖານແຫ່ງຊາດ ແລະ ນຳໃຊ້ເຂົ້າໃນການສື່ສານ, ຕໍ່ພະນັກງານຈາກພາຍໃນ ແລະ ຕໍ່ຄູ່ຮ່ວມມື, ຄູ່ຮ່ວມງານ ແລະ ຜູ້ໃຫ້ທຶນຈາກພາຍນອກ, ວິໄສທັດ, ຄຸນຄ່າ ແລະ ຫຼັກປະຕິບັດດ້ານບົດບາດຍິງຊາຍ ແລະ ຄວາມຫຼາກຫຼາຍທີ່ NRA ສູ້ຊົນ... ນະໂຍບາຍດັ່ງກ່າວອາດຕໍ່ຍອດມາຈາກ ຂໍ້ຊີ້ນຳດ້ານບົດບາດຍິງຊາຍຂອງ ອົງການ ສປຊ ສຳລັບແຜນງານການເກັບກູ້ລະເບີດ ແລະ ຕ້ອງຖືກອອກແບບໃຫ້ແທດເໝາະກັບສະພາບການຂອງ ສປປ ລາວ. GMAP ແມ່ນພ້ອມແລ້ວທີ່ຈະໃຫ້ຄຳປຶກສາ ແລະ ມີສ່ວນຮ່ວມເຂົ້າໃນຂັ້ນຕອນການຮ່າງນະໂຍບາຍ, ຖ້າຈຳເປັນ" (GMAP 2014).

63 ຫົວຂໍ້ການຝຶກອົບຮົມທັງ 3 ອັນນີ້ໃຊ້ເວລາດຳເນີນງານປະມານ 2 ຊົ່ວໂມງຕໍ່ 1 ຫົວຂໍ້; ເຖິງຢ່າງໃດກໍ່ຕາມ, ຫຼັກສູດການຝຶກອົບຮົມນີ້ແມ່ນສາມາດຢຸດພັກໄດ້ຕະຫຼອດເວລາ ແລະ ໂປຣແກຣມກໍ່ຈະບັນທຶກຄວາມຄືບໜ້າໃຫ້ແກ່ທ່ານໂດຍອັດຕະໂນມັດ. ຫຼັກສູດນີ້ອຳນວຍຄວາມສະດວກໃຫ້ແກ່ຄົນທີ່ມີຄວາມບົກພ່ອງທາງສາຍຕານຳ. ຫຼັກສູດນີ້ປະກອບມີຄຳອະທິບາຍ ແລະ ຄຳບັນຍາຍທີ່ອຸປະກອນເອເລັກໂຕຣນິກ ແລະ ຊອບແວທີ່ກ່ຽວຂ້ອງນັ້ນ ສາມາດອ່ານໃຫ້ຟັງແທນໄດ້. GICHD ໄດ້ອອກໃບຢັ້ງຢືນການສຳເລັດຫຼັກສູດໃຫ້ທາງເອເລັກໂຕຣນິກ. ເອກະສານນີ້ຊ່ວຍຢັ້ງຢືນວ່ານັກຮຽນຜູ້ນັ້ນ ໄດ້ສຳເລັດຫຼັກສູດການຝຶກອົບຮົມໃນທັງ 3 ຫົວຂໍ້ແລ້ວ ແລະ ບັນລຸໄດ້ຄະແນນຢ່າງໜ້ອຍ 70 ສ່ວນຮ້ອຍຈາກບົດສອບເສັງຂອງຫຼັກສູດ.

64 "ອອກແບບ ແລະ ຈັດຕັ້ງປະຕິບັດນະໂຍບາຍຊັບພະຍາກອນມະນຸດກ່ຽວກັບບົດບາດຍິງຊາຍພາຍໃນ NRA ແລະ ໂຄງການ UXO Lao. ສິ່ງນີ້ອາດຊ່ວຍສົ່ງເສີມຄວາມສະເໝີພາບຍິງຊາຍພາຍໃນ NRA ແລະ ໂຄງການ UXO Lao ທັງຍັງຊ່ວຍອອກແບບ ແລະ ຮັບຮອງເອົາຂໍ້ຊີ້ນຳທີ່ກ່ຽວຂ້ອງກັບລະບຽບຂັ້ນຕອນດ້ານຊັບພະຍາກອນມະນຸດທີ່ຄຳນຶງເຖິງບົດບາດຍິງຊາຍໃຫ້ແກ່ NRA ແລະ ໂຄງການ UXO Lao, ລວມທັງໜ້າທີ່ຮັບຜິດຊອບໃນການເຊື່ອມສານບົດບາດຍິງຊາຍເຂົ້າໃນຄຳອະທິບາຍວຽກໃຫ້ແກ່ພະນັກງານວິຊາການ, ພະນັກງານຂັ້ນຄຸ້ມຄອງ, ພະນັກງານໂຄງການໂຄງການ ແລະ ພະນັກງານວາງແຜນວຽກ: ອດາມີການກະກຽມຮ່າງນະໂຍບາຍຂຶ້ນ, ແລະ ຈັດກອງປະຊຸມສຳມະນາເພື່ອສະຫຼຸບຮ່າງສະບັບສຸດທ້າຍ" (ອົງການ ສປຊ ເພື່ອແມ່ຍິງ / LWU 2018: 6.1.2 ແລະ 6.1.3).
"ອົງການຈັດຕັ້ງຕ່າງໆຈະຕ້ອງລວມເອົາຂໍ້ຄວາມທີ່ວ່າ "ຊຸກຍູ້ໃຫ້ແມ່ຍິງສະໝັກຕຳແໜ່ງນີ້," ເຂົ້າໃນທຸກການໂຄສະນາຮັບພະນັກງານຂອງຕົນ ບໍ່ວ່າຈະແມ່ນຕຳແໜ່ງໃດກໍ່ຕາມ ແລະ ຕ້ອງນຳໃຊ້ສື່ຂ່າວສານອັນຫຼາກຫຼາຍໃນການໂຄສະນາ; ໂດຍສະເພາະວິທະຍຸ. ເງື່ອນໄຂການຄັດເລືອກຈະຕ້ອງບໍ່ແຄບເກີນໄປຈົນເປັນການຈຳກັດສິດຂອງຜູ້ສະໝັກຍິງ; ແລະ ອົງການຈັດຕັ້ງຕ່າງໆຈະຕ້ອງຮັບປະກັນໃຫ້ມີທັງຜູ້ຍິງ ແລະ ຜູ້ຊາຍໃນຄະນະສຳພາດ. (ອົງການແມັກ 2008: 4.5.2 ແລະ 4.5.3)"

65 Ibid. ໜ້າທີ 72-73.

**United Nations Development Programme**
Lane Xang Avenue
P.O. Box 345 Vientiane, Lao PDR
http://www.undp.org/laopdr

UNDP 2024